ເລໂອນິດ ບະເລັດຊະເນັບ

ທິດທາງຂອງພວກເຮົາ ແມ່ນທິດທາງ ແຫ່ງການກໍ່ສ້າງຢ່າງສັນຕິ

ບຸນສົ່ງ ແກ້ວບົວສາຍ
ສ. ສາຍບຸນມີ

01 JAN 2009

ຊາວກຳມາຊີບໃນທຸກປະເທດ ຈົ່ງສາມັກຄີກັນເຂົ້າ!

ບຸນສິ່ງ ແກ້ວບົວສາຍ
ສ. ສາຍບຸ[illegible]

ຫໍສະໝຸດ

ບຸນສົ່ງ ແກ້ວບິວສາຍ
ສ. ສາຍບຸນມີ

ເລໂອນິດ ບະເລັດຊະເນັບ

ທິດທາງຂອງພວກເຮົາ ແມ່ນທິດທາງ ແຫ່ງການກໍ່ສ້າງຢ່າງສັນຕິ

ຄຳປາໄສ
ແລະບົດຄວາມ

ສຳນັກພິມ
"ປະໂວກະເລັດ"
ມົດສະກູ
1981

ແປແລະຮຽບຮຽງໂດຍ:
ກິແກ້ວ ສູວັນນະພູມ
ອານາໂຕລີ ມັດວເຢັບ
ຈະວດລານາ ໂຮດິນາ

Л.И.Брежнев
Наш курс - мирное созидание
(На лаосском языке)

© ແປເປັນພາສາລາວ, ສຳນັກພິມ "ປະໂລກະເລັດ", 1981.

ພິມໃນສະຫະພາບໂຊວຽດ

Б $\frac{90201-080}{014(01)-81}$ 855-81 0902010000

ສ າ ລ ະ ບ າ ນ

ໜ້າ

ຄຳປາໄສໃນນະຄອນແບັກແລັງໃນກອງປະຊຸມ ຜູ້ແທນພັກກອມມູນິດ ແລະພັກກຳມະກອນແຫ່ງທະວີບຢູລົບ. ວັນທີ ໒໙ ເດືອນມິຖຸນາປີ ໑໙໗໖ 15

ຄຳປາໄສຢູ່ວັງກະແລມແລັງ ໃນພິທີຮັບ ເຄື່ອງໝາຍ "ດາວຈອມພົນ" ແລະບັດກຽດຕິຍົດຂອງຄະນະບໍລິຫານງານສະພາໂຊວຽດສູງສຸດແຫ່ງສ.ສ.ສ.ຊ..ວັນທີ ໑໐ ເດືອນພຶດສະພາປີ ໑໙໗໖ 51

ຄວາມຂອບໃຈຢ່າງບໍລິສຸດໃຈ 55

ສານເຖິງເລຂາທິການໃຫຍ່ສູນກາງພັກ ກອມມູນິດຫວຽດນາມສະຫາຍ ເລ ຢວນ 58

ຈົດໝາຍເຖິງບັນນາທິການໜັງສືພິມ "ປະລາວະດາ" 60

ສານເຖິງກອງປະຊຸມຂອງບັນດາກຳລັງ ທີ່ຮັກຫອມສັນຕິພາບທົ່ວໂລກ 64

ກຳມະບານໂຊວຽດເປັນກຳລັງຫຸ້ນງແຫ່ງສັງຄົມໂຊວຽດທີ່ມີອິດທິພົນສູງ. ຄຳປາໄສ ທີ່ໄດ້ກ່າວໃນກອງ-ປະຊຸມໃຫຍ່ຄັ້ງທີ XVI ຂອງສະຫະພັນກຳມະບານແຫ່ງ

ຫນ້າ

ສ.ສ.ສ.ຊ.ໃນວັນທີ ໒໑ ເດືອນມີນາປີ ໑໙໗໗ ... 68

ຄຳປາໄສໃນພິທີງານລ້ຽງອາຫານທີ່ວັງກະ ແລມ-ແລັງເພື່ອເປັນກຽດແກ່ ສະຫາຍຟີເດັນກັດສະໂຕຣເລຂາທິການໃຫຍ່ຂອງສູນກາງພັກກອມມູນິດກູຍບາ, ປະທານສະພາແຫ່ງລັດແລະປະທານຄະນະລັດຖະມົນຕີແຫ່ງສາທາລະນະລັດກູຍບາ. ວັນທີ ໔ ເດືອນເມສາ ປີ ໑໙໗໗ 118

ຄຳປາໄສໃນພິທີງານຮັບບັດສະມາຊິກໂກມໂຊມົນ-ນຳເບີຈແລະລາງວັນສູງສຸດຂອງໂກມໂຊມົນແຫ່ງເລນິນ ຄືເຄື່ອງໝາຍດາວຄຳແຫ່ງກຽດຕິຍົດຂອງ ໂກມໂຊມົນເລນິນ. ວັນທີ ໑໔ ເດືອນເມສາ ປີ ໑໙໗໗ 125

ເຖິງບັນດາຜູ້ຄົນທີ່ເຂົ້າຮ່ວມກອງປະຊຸມ ທົ່ວໂລກ-ຂອງນັກກໍ່ສ້າງສັນຕິພາບ ອັນຖາວອນ 128

ເຖິງບັນດາຜູ້ຄົນທີ່ເຂົ້າຮ່ວມ ກອງປະຊຸມສາກົນປຶກສາບັນຫາວ່າດ້ວຍມະຫາປະຕິວັດສັງຄົມນິຍົມເດືອນຕຸລາ ແລະຂະບວນການປົດປ່ອຍຊາດຂອງປະຊາຊາດອາຊີ , ອາຟະລິກາແລະອາເມລິກາລາຕິນ 131

ຕອບຄຳຖາມຂອງຊ.ຣັດຕາຜູ້ບັນນາທິການ ໃຫຍ່-ຫນັງສືພິມ "ອຸະຊຸະຣີ". ວັນທີ ໖ ເດືອນມິຖຸນາປີ໑໙໗໗ 135

ເຖິງຜູ້ທີ່ເຂົ້າຮ່ວມກອງປະຊຸມສາກົນ "ຜູ້ຍິງ ແລະລັດທິສັງຄົມນິຍົມ" 154

ໜ້າ

ຄຳປາໄສ ປູ່ວົງກະແລມແລັງໃນການຕ້ອນຮັບເອກອັກຄະລັດຖະທູດປະຈຳໂມດສະກູ. ວັນທີ ໒ ເດືອນ ກໍລະກົດປີ ໑໙໗໗ 157

ສານເຖິງຜູ້ເຂົ້າຮ່ວມກອງປະຊຸມສາກົນ " ກົດໝາຍ, ການຮ່ວມມືກັນທາງສາກົນແລະການລົດ ຜ່ອນຄວາມເຄັ່ງຕຶງ" 161

ສານເຖິງກອງປະຊຸມສາກົນຜູ້ແທນສະມາຄົມມິດຕະພາບກັບສ.ສ.ສ.ຊ.ແລະປະຊາຊົນໂຊວຽດ 164

ຄຳປາໄສໃນວັງກະແລມແລັງໃນການຕ້ອນຮັບ ບັນດາເອກອັກຄະລັດຖະທູດປະຈຳມົດສະກູ.ວັນທີ໓ ເດືອນພະຈິກປີ ໑໙໗໗ 167

ຄຳປາໄສໃນວັງກະແລມແລັງໃນພິທີມອບຫລຽນໃຊຄຳ ທີ່ໃສ່ຊຶ່ກາກມາກ. ວັນທີ ໑໖ ເດືອນພະຈິກ ປີ ໑໙໗໗ 169

ຕອບຄຳຖາມຂອງນັກໜັງສືພິມ "ປະລາວະດາ". ວັນທີ ໒໔ ເດືອນທັນວາ ປີ ໑໙໗໗ 173

ສານເຖິງກອງປະຊຸມໃຫຍ່ຄັ້ງທີ X ຂອງສະຫະພັນຊາວໜຸ່ມ ປະຊາທິປະໄຕທົ່ວໂລກ 182

ສານເຖິງກອງປະຊຸມກຳມະບານທົ່ວໂລກຄັ້ງທີ IX 185

ຄຳປາໄສໃນກອງປະຊຸມໃຫຍ່ຄັ້ງທີ XVIII ຂອງສະມາຄົມຊາວໜຸ່ມກອມມູນິດເລນິນແຫ່ງ ສ.ສ.ສ.ຊ.

ໜ້າ

(ໂກມໂຊມົນ). ວັນທີ ໒໕ ເດືອນເມສາປີ ໑໙໗໔. 189

ສານເຖິງຜູ້ເຂົ້າຮ່ວມກອງປະຊຸມສະໄຫມສາ ມັນ-ຂອງສະຫະພັນປະຊາທິປະໄຕແມ່ຍິງສາກົນ 225

ສານເຖິງແຂກແລະຜູ້ເຂົ້າຮ່ວມງານບຸນຮູບເງົາສາກົນ ທີ່ຕັດຊະເກັນ ຄັ້ງທີ V ທີ່ຕັດຊະເກັນ 228

ສານອວຍພອນທີ່ສົ່ງເຖິງບັນດາລັດແລະປະຊາຊາດອາຟະລິກາເນື່ອງໃນໂອກາດວັນປົດປ່ອຍອາຟະລິກາ . 230

ສານເຖິງຜູ້ທີ່ເຂົ້າຮ່ວມກອງປະຊຸມຄັ້ງທີ VIII ຂອງສະຫະພັນນັກຮົບຂອງແນວໂຮມຄັດຄ້ານລັດທິຟາຊິດ. 236

ວິລະກຳຂອງນະຄອນມິນຊຸກມີຊີວິດເປັນ ຈົ່ວນິລັນດອນ.ຄຳປາໄສໃນພິທີຊຸມນຸມເພື່ອມອບຫລຽນໄຊ ເລນິນ ແລະ "ດາວຄຳ" ໃຫ້ແກ່ນະຄອນ ມິນຊັກວິລະຊົນ ວັນທີ ໒໕ ເດືອນມິຖຸນາ ປີ ໑໙໗໔ 239

ຄຳປາໄສໃນວົງກະແລມແລ້ງໃນພິທີງານລ້ຽງ ອາຫານເພື່ອເປັນກຽດແກ່ ຣິເຊ ລັດຊິລະກີ ປະທານາທິບໍດີແຫ່ງສາທາລະນະລັດປະຊາທິປະໄຕມາດາກາສະກາ. ວັນທີ ໒໙ ເດືອນມິຖຸນາປີ ໑໙໗໔ 259

ຄຳນຳປຶ້ມປະມວນ "ສັນຕິພາບເປັນສົມບັດອັນ ລ້ຳຄ່າຂອງບັນດາປະຊາຊາດ".(ສຳນັກພິມ ຂອງປະເທດກະເລກ" ອາກາດິໂມດ"ໄດ້ຈັດພິມປຶ້ມປະມວນຫົວນີ້ໃນ ປີ ໑໙໗໔)........................ 266

ໜ້າ

ສານເຖິງບັນດາຜູ້ເຂົ້າຮ່ວມກອງປະຊຸມທົ່ວໂລກຄັ້ງທີ XI ຂອງຊາວໜຸ່ມແລະນັກສຶກສາ" ເພື່ອຄວາມສາມັກຄີຕ້ານພວກຈັກກະພັດ, ເພື່ອສັນຕິພາບແລະ ມິດຕະພາບ" 271

ສານເຖິງກອງປະຊຸມທົ່ວໂລກວ່າດ້ວຍການຕໍ່ສູ້ຕ້ານລັດທິຈຳແນກເຊື້ອຊາດ 274

ສານເຖິງໂຕນດຶກຖາງ, ປະທານາທິບໍດີແຫ່ງ ສາທາລະນະລັດສັງຄົມນິຍົມຫວຽດນາມ 277

ສານເຖິງກອງປະຊຸມສາກົນວ່າດ້ວຍບັນຫາການ-ຊ່ວຍເຫຼືອທາງການແພດ 279

ສານເຖິງຄະນະບັນນາທິການແລະສະພາບັນນາ ທິການຂອງວາລະສານ "ບັນຫາວ່າດ້ວຍສັນຕິພາບ ແລະສັງຄົມນິຍົມ" 282

ສານເຖິງກອງປະຊຸມສາກົນແຫ່ງຄວາມສາມັກຄີກັບ ການຕໍ່ສູ້ຂອງປະຊາຊາດອາຟະລິກາແລະ ອາລັບຕ້ານພວກຈັກກະພັດແລະພວກປະຕິການ 285

ຈາກບົດປາໄສໃນວັງທີ່ໃສ່ຊື່ເລນິນໃນນະຄອນບາກູວັນທີ ໒໒ ເດືອນກັນຍາປີ ໑໙໗໘ 288

ສານເຖິງກອງປະຊຸມນັກປະພັນອາຊີແລະ ອາຟະລິກາໃນນະຄອນຕັດຊະເກັນ 297

ສານເຖິງກອງປະຊຸມໃຫຍ່ຄັ້ງທີ XIII ຂອງນັກ

ໜ້າ

ສະຖາປະນິກທົ່ວໂລກວັນທີ ໒໔ ເດືອນຕຸລາປີ ໑໙໗໘. 300

ຄຳປາໄສຢູ່ວົງກະແລມແລ້ງໃນພິທີງານລ້ຽງ ອາຫານເພື່ອເປັນກຽດແກ່ຄະນະຜູ້ແທນພັກກອມມູນິດຫວຽດນາມແລະລັດຖະບານແຫ່ງສາທາລະນະລັດສັງຄົມນິຍົມ-ຫວຽດນາມໂດຍມີສະຫາຍເລຢວນ, ເລອາທິການ ໃຫຍ່ສູນກາງ ພ.ກ.ວ.ແລະສະຫາຍຟາມວັນດົງ, ສະມາຊິກຄະນະບໍລິຫານງານສູນກາງ ພ.ກ.ວ., ນາຍົກລັດຖະ-ມົນຕີ ແຫ່ງລັດຖະບານສ.ສ.ວ.ເປັນຫົວໜ້າ. ວັນທີ ໓ ເດືອນພະຈິກປີ ໑໙໗໘ 303

ຕອບຄຳຖາມຂອງນັກໜັງສືພິມ "ປະລາວະດາ ". ວັນທີ ໑໘ ເດືອນພະຈິກ ປີ ໑໙໗໘ 309

ຄຳນຳ 311

ຄຳປາໄສໃນວົງກະແລມແລ້ງໃນພິທີງານ ລ້ຽງອາຫານເພື່ອເປັນກຽດແກ່ນຸ່ນມູຫຳມັດຕາລາກີເລອາທິການໃຫຍ່ສູນກາງພັກປະຊາທິປະໄຕປະຊາຊົນອາຟະການນິດສະຖານ, ປະທານສະພາປະຕິວັດ, ນາຍົກລັດຖະມົນ ຕີແຫ່ງສາທາລະນະລັດປະຊາທິປະໄຕອາຟະການິດສະ - ຖານ. ວັນທີ ໕ ເດືອນທັນວາປີ ໑໙໗໘ .... · 316

ຄຳປາໄສຢູ່ວົງກະແລມແລ້ງໃນກອງປະຊຸມຂອງຄະນະບໍລິຫານງານ ແຫ່ງສະພາໂຊວຽດສູງສຸດແຫ່ງສ.ສ. ສ.ຊ..ວັນທີ ໑໓ ເດືອນທັນວາ ປີ ໑໙໗໘. ກ່ຽວກັບ

ໜ້າ

ການສັດຕະຍາບັນສົນທິສັນຍາ ວ່າດ້ວຍມິດຕະພາບ - ແລະການຮ່ວມມືກັນລະຫວ່າງສ.ສ.ສ.ຊ.ກັບສາທາລະ ນະລັດສັງຄົມນິຍົມຫວຽດນາມ 321

ຄຳປາໄສຢູ່ວັງກະແລມແລັງໃນພິທີງານຮັບລາງວັນສູງ ສຸດແຫ່ງປີຕູພູມຄືຫລຽນໄຊເລນິນແລະ "ດາວຄຳ"ດວງທີ ໓ ແຫ່ງວິລະຊົນສ.ສ.ສ.ຊ.. ວັນທີ ໑໙ ເດືອນ ທັນວາທີ ໑໙໗໘ 326

ຕອບຄຳສຳພາດຂອງວາລະສານອາເມລິກາ "ໄທມ໌". ວັນທີ ໑໖ ເດືອນ ມັງກອນ ປີ ໑໙໗໙ (ຈັດພິມ ໃນ ໜັງສືພິມ" ປະລາວະດາ") 329

ສານເຖິງຄະນະກຳມະການປົດອາວຸດ 341

ຄຳປາໄສຂອງບະເລັດຊະເນັບໃນການຊຸມນຸມ ມະ ໂຫລານທີ່ກຸງແບກແລັງເນື່ອງໃນໂອກາດວັນສ້າງຕັ້ງສາ ທາລະນະລັດປະຊາທິປະໄຕເຢຍລະມັນຄົບຮອບ ໓໐ ປີ ວັນທີ ໗ ເດືອນຕຸລາປີ ໑໙໗໙ 345

ສານເຖິງບັນດາຜູ້ເຂົ້າຮ່ວມກອງປະຊຸມສະພາສັນຕິ ພາບຂອງໂລກ. ວັນທີ ໑ ກຸມພາ ປີ ໑໙໗໙ 359

ຂອງສະຫາຍ ລ.ອິ.ບະເລັດຊະເນັບຕອບ ຄຳສຳ ພາດຂອງນັກສື່ຂ່າວໜັງສືພິມ "ປະລາວະດາ". ວັນທີ ໖ ເດືອນພະຈິກປີ ໑໙໗໙ 362

ຂອງ ລ.ອິ.ບະເລັດຊະເນັບຕອບ ຄຳສຳ ພາດ-

ໜ້າ

ຂອງຜູ້ສື່ຂ່າວຂອງໜັງສືພິມ "ປະລາວະດາ". ວັນ ທີ
໑໙ ເດືອນມັງກອນ ປີ ໑໙໘໐ 365

ຄຳປາໄສຂອງສະຫາຍບະເລັດຊະເນັບ. ວັນທີ໒໘
ເດືອນກຸມພາ ປີ ໑໙໘໐ 384

ສານຸເຖິງນັກວິດທະຍະສາດອາເມລິກາຜູ້ ແຕ່ງຄຳ
ປະກາດທີ່ວ່າ "ໄພອັນຕະລາຍແຫ່ງສົງຄາມປະລະມະນູ" 407

ຄຳປາໄສໃນນະຄອນແບັກແລັງໃນກອງປະຊຸມຜູ້ແທນ ພັກກອມມູນິດ ແລະພັກກຳມະກອນແຫ່ງທະວີບ ຢູລົບ ວັນທີ ໒໙ ເດືອນມິຖຸນາປີ ໑໙໗໖

ບັນດາສະຫາຍທີ່ຮັກແພງ !

ຄະນະຜູ້ແທນ ພ.ກ.ສ.ຊ. ສະແດງຄວາມເຄົາລົບ ຕໍ່ບັນດາຜູ້ເຂົ້າຮ່ວມກອງປະຊຸມຜູ້ແທນພັກກອມມູນິດ ແລະພັກກຳມະກອນແຫ່ງຢູລົບ. ພວກເຮົານຳເອົາຄວາມຮູ້ສຶກ ມິດຕະພາບອ້າຍນ້ອງ ແລະຄວາມສາມັກຄີສູ້ຮົບ ຂອງຊາວກອມມູນິດ ໂຊວຽດ(໑໕,໕ ລ້ານຄົນ)ມາຍັງພວກທ່ານ.ພວກເຮົາກໍ່ສະແດງຄວາມຂອບໃຈອັນບໍລິສຸດໃຈ ແກ່ບັນດາສະຫາຍຈາກພັກສັງຄົມນິຍົມເອກະພາບເຢຍລະມັນ ແລະແກ່ສະຫາຍໂຮນເນັກເກລະ ເປັນສ່ວນຕົວ ທີ່ໄດ້ເອົາໃຈໃສ່ການຈັດຕັ້ງທີ່ດີເລີດ ຂອງກອງປະຊຸມຄັ້ງນີ້.

ໃນກອງປະຊຸມນີ້ ມີສະມາຊິກຊັ້ນນຳຂອງພັກກອມມູນິດຢູລົບ ໒໙ ພັກ, ເຊິ່ງແມ່ນຜູ້ຄົນທີ່ໄດ້ອຸທິດຕະຫລອດຊີວິດຂອງຕົນແກ່ການຕໍ່ສູ້ເພື່ອສິດທິຂອງຊາວຜູ້ອອກແຮງງານ, ລະບຽບທາງສັງຄົມແບບໃໝ່ທີ່ເປັນທຳ, ສັນຕິພາບອັນຖາວອນ ລະຫວ່າງປະຊາຊາດຕ່າງໆຢ່າງແທ້ຈິງ. ບັນດາພັກ ພວມໄດ້ປະຕິບັດການ

ໃນສະພາບການທີ່ແຕກຕ່າງກັນ, ພວມແກ້ໄຂບັນຫາ ທີ່ແຕກຕ່າງກັນໂດຍຫມູນໃຊ້ຍຸດທະສາດ ແລະຍຸດໂທບາຍ ທີ່ ອີງໃສ່ເງື່ອນໄຂຕົວຈິງຂອງໃຜລາວ. ເຖິງແມ່ນຢ່າງນັ້ນກໍຕາມພວກເຮົາທຸກຄົນເຂົ້າຮ່ວມການຕໍ່ສູ້ລວມ, ກ້າວເດີນຕາມເສັ້ນທາງອັນດຽວກັນແລະມີຈຸດເລັ່ງຂັ້ນສຸດທ້າຍ ທີ່ສູງສົ່ງ ອັນດຽວກັນ. ດ້ວຍເຫດນັ້ນ, ເພື່ອເປັນຜົນປະໂຫຍດແກ່ພາລະກິດລວມພວກເຮົາ, ຊາວກອມມູນິດຈະໄດ້ຮັບຜົນດີໃນການແລກປ່ຽນຄວາມຄິດເຫັນ, ການພິຈາລະນາບັນຫາອັນສຳຄັນ ແລະຮີບດ່ວນ ຄືບັນຫາວ່າດ້ວຍສັນຕິພາບ, ການຮ່ວມມືກັນ, ຄວາມ ປອດໄພແລະຄວາມກ້າວຫນ້າທາງສັງຄົມໃນຢູລົບ.

ການທີ່ພວກເຮົາໄດ້ຮ່ວມປະຊຸມກັນໃນນະຄອນແບັກແລ້ງນັ້ນມັນມີຄວາມຫມາຍພິເສດ. ນະຄອນແຫ່ງນີ້ ເປັນບ່ອນພັງທະລາຍລັດທິຟາຊິດຂັ້ນສຸດທ້າຍ; ໒໐ ປີກ່ອນຫນ້ານີ້ ແບັກແລ້ງໄດ້ຖືກທຳລາຍ. ແຕ່ວ່າໃນປະຈຸບັນນີ້ ນະຄອນແຫ່ງນີ້ ໄດ້ສະແດງຕົວຢ່າງທີ່ດີແຫ່ງການຟື້ນຟູຊີວິດ, ການເກີດດອກ ອອກຜົນແລະການກ້າວຂ້າງຫນ້າແບບສັງຄົມນິຍົມ. ປະຈຸບັນນີ້ນະຄອນແບັກແລ້ງເປັນເມືອງຫລວງຂອງສາທາລະນະລັດ ປະຊາທິປະໄຕເຢຍລະມັນ, ເຫມືອນດັ່ງທີ່ກອງປະຊຸມພັກສັງຄົມນິຍົມ ເອກະພາບເຢຍລະມັນຄັ້ງທີ IX ໄດ້ຢັ້ງຢືນນັ້ນ ໄດ້ຊຸທິດກຳລັງແຮງຂອງຕົນເພື່ອປະຕິບັດການສ້າງສາຢ່າງສັນຕິ ເພື່ອເປັນຜົນປະໂຫຍດແກ່ລະບົບກອມມູນິດອະນາຄົດ.

ໃນເວລານີ້ ແບັກແລ້ງໄດ້ຕ້ອນຮັບບັນດາຊາວກອມມູນິດ ຢູ

ລົບ ຢ່າງປິຕິຍິນດີ ເຊິ່ງໄດ້ຮ່ວມປະຊຸມກັນໂດຍແນໃສ່ສະເໜີເສັ້ນທາງທີ່ຈະນຳໄປສູ່ສັນຕິພາບ ແລະຄວາມກ້າວໜ້າ ທາງສັງຄົມໃຫ້ແກ່ບັນດາປະຊາຊາດ ຢູລົບ. ອັນນັ້ນ ເປັນເຄື່ອງໝາຍອັນຈະແຈ້ງແຫ່ງການປ່ຽນແປງອັນເປັນປະຫວັດການໃນທະວີບຢູລົບ.

ທະວີບຢູລົບໃນປະຈຸບັນນີ້ ບໍ່ຄ້າຍຄືກັນກັບ ຢູລົບ ໃນເວລາ ໓໐ ປີກ່ອນໜ້ານີ້ ເຊິ່ງໄດ້ຖືກພັງທະລາຍໃນແປວໄຟແຫ່ງສົງຄາມໂລກຄັ້ງທີສອງ ອັນນອງເລືອດທີ່ສຸດ. ທະວີບຢູລົບໃນປະຈຸບັນນີ້ ບໍ່ຄ້າຍຄືກັນກັບຢູລົບໃນເວລາສິບ-ສິບຫ້າປີກ່ອນໜ້ານີ້ແຫ່ງ "ສົງຄາມເຢັນ". ການຊັ່ງຊາກກຳລັງຊົນຊັ້ນ ໄດ້ມີການປ່ຽນແປງທັງທາງດ້ານສາກົນແລະພາຍໃນປະເທດຫລາຍ ປະເທດ. ບົດບາດຂອງຊົນຊັ້ນກຳມະກອນ ແລະ ພັກກອມມູນິດທີ່ເປັນກອງນຳໜ້າຂອງຊົນຊັ້ນນີ້ ກໍໄດ້ຮັບການເພີ່ມທະວີຍິ່ງຂຶ້ນໃນຊີວິດທາງສັງຄົມຢູລົບ.

ຜົນສຳເລັດຂອງບັນດາປະຊາຊາດຢູລົບ ໃນປະຈຸບັນນີ້ ໄດ້ກຳເນີດເກີດຂຶ້ນມາຈາກຜົນງານຂອງການຕໍ່ສູ້ປົດປ່ອຍ ຊາດຕ້ານພວກຟາຊິດຮຸກຮານ. ໃນການຕໍ່ສູ້ດັ່ງກ່າວປະຊາຊົນຫລາຍລ້ານຄົນໄດ້ເສັຍສະລະເລືອດເນື້ອຈົນຮອດຊີວິດຂອງຕົນ.ພວກເຂົາໄດ້ປະກອບສ່ວນຂອງຕົນເຂົ້າໃນພາລະກິດ ແຫ່ງການດັດປ່ຽນຢູລົບເກົ່າ. ເລື່ອງນີ້ ພວກເຮົາຈະບໍ່ລືມຈັກເທື່ອ ໃນອະນາຄົດ.

ຢູລົບສະໄໝນີ້ ເປັນຜົນງານສ່ວນໃດສ່ວນໜຶ່ງ ຂອງການ

ສ້າງສາສັງຄົມນິຍົມແລະກອມມູນິດ ໃນບາງປະເທດຂອງ ທະວີບນີ້, ເປັນຜົນງານຂອງການຕໍ່ສູ້ຢ່າງສຸດກຳສຸດປາຍເພື່ອສັນຕິພາບຂອງບັນດາປະເທດສັງຄົມນິຍົມໃນເອທີສາກົນຈຸ້ນຄຣວກັນ.

ພ້ອມກັນນັ້ນ ໃບໜ້າໃຫ່ມຂອງຢູລົບ ກໍເປັນຜົນງານ ແຫ່ງການຂະຫຍາຍການຕໍ່ສູ້ຈຸ້ນຈຸ້ນຂອງຊາວຜູ້ອອກແຮງງານໃນປະເທດທຶນນິຍົມ ໂດຍມີຈຸ້ນຈຸ້ນກຳມະກອນເປັນຜູ້ນຳ, ການ ຕໍ່ສູ້ຂອງວົງການມະຫາຊົນເພື່ອສັນຕິພາບອັນຖາວອນ.

ຈຸດພິເສດຂອງໄລຍະເວລານີ້ ຢູ່ບ່ອນວ່າ ການປ່ຽນ ແປງດັ່ງກ່າວມາເທິງນັ້ນ ພວມດຳເນີນໄປໃນຢູລົບ ໃນເມື່ອ ວິກິດການຂອງລັດທິທຶນນິຍົມຮ້າຍແຮງຍິ່ງຂຶ້ນຢູ່ເລື້ອຍໆ, ອັນນັ້ນ ບໍ່ພຽງແຕ່ເປັນວິກິດການທາງເສດຖະກິດເທົ່ານັ້ນ ຫາກຍັງເປັນວິກິດການທາງການເມືອງ ແລະທາງດ້ານຈິດໃຈອີກດ້ວຍ.ມັນເຮັດໃຫ້ມະຫາຊົນເຊື່ອວ່າ ລະບອບທຶນນິຍົມເປັນລະບອບທາງສັງຄົມທີ່ບໍ່ມີອະນາຄົດ; ຍ້ອນເຫດນັ້ນສະພາບການແນວນີ້ ຈຶ່ງເພີ່ມທະວີຈຳນວນຜູ້ຄົນທີ່ເລີ່ມສະໜັບສະໜູນເສັ້ນທາງສັງຄົມນິຍົມ. ການເຊີດຊູກຸ່ມທະຫານ-ການເມືອງ ຂອງພວກຈັກກະພັດນິຍົມ, ການແຂ່ງຂັນສ້າງອາວຸດ, ການປະສານສົມທົບກັນລະຫວ່າງບໍລິສັດຜູກຂາດ, ການປະຕິຮູບທາງສັງຄົມ ອັນປອມແປງ, ການປາບປາມທັງໝົດເຫລົ່ານັ້ນ ກໍບໍ່ສາມາດ ຍຸດຕິການຂະຫຍາຍຕົວຂອງວິກິດການດັ່ງກ່າວນັ້ນໄດ້.

ໃນຂຸມນີ້ ເພິ່ນສາມາດເຫັນໄດ້ຢ່າງຈະແຈ້ງ ກວ່າເວລາ

ໃດໝົດວ່າ ພວກຈັກກະພັດບໍ່ອາດສາມາດທີ່ຈະຕັດສິນໂຊກຊາຕາຂອງຢູລົບໄດ້. ໃນປະຈຸບັນນີ້ບັນດາປະເທດສັງຄົມນິຍົມ, ຂະບວນການກຳມະກອນ, ຂະບວນການປະຊາທິປະໄຕ ໃນປະເທດທຶນນິຍົມຕ່າງໆ ຊ້ຳມີບົດບາດທີ່ສຳຄັນໃນການຕັດສິນໂຊກຊາຕາດັ່ງກ່າວ. ການທີ່ທະວີບຢູລົບດຳລົງຊີວິດຢ່າງສັນຕິເປັນໄລຍະເວລາ ໓໐ ປີກວ່ານັ້ນ ກໍເປັນຜົນງານຂອງບັນດາ ກຳລັງເຫລົ່ານັ້ນເຊັ່ນດຽວກັນ.

ໃນສະພາບການໃໝ່ໃນຢູລົບ ເພິ່ນສາມາດແກ້ໄຂບັນຫາທີ່ແຫລມຄົມແລະເຜັດຮ້ອນຫລາຍບັນຫາ ທີ່ກໍ່ໃຫ້ເກີດຄວາມເຄັ່ງຕຶງໃນຢູລົບພາຍຫລັງສົງຄາມໂລກຄັ້ງທີສອງ. ຂໍ້ຕົກລົງໃນສົນທິສັນຍາທີ່ສຳຄັນ ທີ່ບັນດາປະເທດສັງຄົມນິຍົມ ໄດ້ຕົກລົງກັບຝະລັ່ງ, ສາທາລະນະລັດສະຫະພັນເຢຍລະມັນແລະປະເທດ ຕາເວັນຕົກອື່ນໆ ໃນໄລຍະເວລາບາງປີທີ່ຜ່ານມາ, ຂໍ້ຕົກລົງ ສີ່ຝ່າຍກ່ຽວກັບແບັກແລັງຕາເວັນຕົກ ໄດ້ປ່ຽນສະຖານະການ ຢູລົບ ໃຫ້ດີຂຶ້ນກວ່າເກົ່າ.

ຫລັກການ ການຢູ່ຮ່ວມກັນໂດຍສັນຕິ ໄດ້ກາຍມາເປັນ ທ່າອຽງນຳໜ້າໃນການຕິດຕໍ່ພົວພັນກັນລະຫວ່າງປະເທດຕ່າງໆ. ອັນນັ້ນ ກໍໄດ້ຮັບການສະແດງອອກໃນການຈັດຕັ້ງ ຢ່າງດີຂອງກອງປະຊຸມທົ່ວຢູລົບ, ເຊິ່ງແມ່ນສະຫະລັດອາເມລິກາແລະການາດາກໍໄດ້ຮ່ວມປະຊຸມກັນເຊັ່ນດຽວກັນ. ອັນນັ້ນໄດ້ເປັນໄຊຊະນະທາງການເມືອງອັນໃຫຍ່ຫລວງຂອງບັນດາກຳລັງສັນຕິພາບ.

ເອກະສານຂັ້ນສຸດທ້າຍຂອງກອງປະຊຸມຄັ້ງນັ້ນ ໝາຍເຖິງ

ກິດລະບຽບອັນກວ້າງຂວາງແຫ່ງການຕິດຕໍ່ພົວພັນກັນໂດຍສັນຕິ ແລະການຮ່ວມມືກັນລະຫວ່າງປະເທດຕ່າງໆ. ພວກເຮົາພະຍາຍາມເຮັດທຸກລະບຽບການຂອງມັນໃຫ້ປາກົດເປັນຈິງຂຶ້ນ. ພວກເຮົາຖືວ່າຄຸນຄ່າຂອງເອກະສານດັ່ງກ່າວຢູ່ບ່ອນວ່າເອກະສານດັ່ງກ່າວແມ່ນໃສ່ຮັບປະກັນສັນຕິພາບອັນຖາວອນໃນຢູລົບ. ອັນນັ້ນກໍໄດ້ເປັນຈຸດເລັ່ງອັນສຳຄັນກ່ວາໝູ່ ຂອງກອງປະຊຸມທົ່ວຢູລົບຄື ການປັບປຸງສັນຕິພາບແລະຄວາມປອດໄພແຫ່ງບັນດາປະຊາຊາດຢູລົບທັງຫລາຍ.

ຜົນສຳເລັດແຫ່ງພາລະກິດຂອງການລົດຜ່ອນຄວາມເຄັ່ງຕຶງທາງສາກົນໄດ້ເພີ່ມກຳລັງໃຈແລະປັບປຸງບັນດາກຳລັງແຫ່ງສັນຕິພາບແລະຄວາມກ້າວໜ້າ, ໄດ້ຍົກສູງຖານະບົດບາດ ຂອງບັນດາກຳລັງເຫລົ່ານັ້ນ ໃນທ່າມກາງມະຫາຊົນ, ໄດ້ພິສູດໃຫ້ເຫັນເຖິງຄວາມຖືກຕ້ອງຂອງທ່າທີ ທີ່ຜູ້ແທນ ທີ່ມີ ສະຕິດີຂອງວົງການປົກຄອງປະເທດທຶນນິຍົມຕ່າງໆ ໄດ້ຍຶດໝັ້ນຢູ່. ພ້ອມກັນນັ້ນ ຍ້ອນຜົນສຳເລັດເຫລົ່ານັ້ນ ບັນດາກຳລັງ ປະຕິການຊຸນເສິກ, ພັກພວກທີ່ຕ້ອງການແກ້ດຶງທະວີບຢູລົບແລະທົ່ວໂລກກັບຄືນໄປສູ່ "ສົງຄາມເຢັນ" ແລະການດຳເນີນຕາມ ແຄມແຫ່ງໄພອັນຕະລາຍຂອງສົງຄາມນິວເຄຼຍ ໄດ້ພາກັນ ເສີມຂະຫຍາຍການເຄື່ອນໄຫວຂອງມັນ. ພັກພວກທີ່ມີຄວາມລ້ຳລວຍຈາກການຜະລິດອາວຸດສົງຫານຊີວິດ, ພັກພວກ ທີ່ໄຝ່ຝັນເຖິງ "ການດຳເນີນຂະບວນ" ຕ້ານບັນດາປະເທດສັງຄົມນິຍົມ, ຕ້ານພວກກອມມູນິດ, ຜູ້ນຳຈີນແບບເໝົາທີ່ຮຽກຮ້ອງໃຫ້ "ກະກຽມ

ສົງຄາມຄັ້ງໃຫ່ມ" ໂດຍຫວັງຈະໄດ້ຜົນດີ ມາຈາກການປະທະກັນລະຫວ່າງປະຊາຊາດຕ່າງໆ ພວກເຫລົ່ານັ້ນ ກໍໄດ້ຮູ້ສຶກກັງວົນໃຈຫລາຍ ຍ້ອນຜົນສຳເລັດດັ່ງກ່າວມາເທິງນັ້ນ.

ການຕໍ່ຕ້ານຂອງບັນດາກຳລັງປະຕິການຊຸນເສິກ ຕໍ່ການລົດຜ່ອນຄວາມເຄັ່ງຕຶງ ມີຫລາຍຮູບຫລາຍສີ. ຈຸດສຳຄັນທີ່ສຸດ ກໍຄືພວກເຂົາຕັ້ງໃຈທີ່ຈະເສີມຂະຫຍາຍການແຂ່ງຂັນສ້າງ ອາວຸດໃຫ້ສູງຍິ່ງຂຶ້ນ ທີ່ບໍ່ເຄີຍມີມາກ່ອນ.

ເພື່ອເຮັດແນວນັ້ນ ບັນດາກຳລັງຊຸນເສິກ ຂອງລັດທິຈັກກະພັດນິຍົມແລະລູກມືໄດ້ປັ້ນແຕ່ງເລື່ອງວ່າດ້ວຍ " ການຄຸກຄາມຂອງໂຊວຽດ" ຕໍ່ບັນດາປະເທດຕາເວັນຕົກ. ທັງພາຫະນະໂຄສະນາແລະ-ບາງຄັ້ງ-ຜູ້ຄົນທີ່ມີຕຳແຫນ່ງສູງ ພາກັນພິກປັ້ນນະໂຍບາຍແຫ່ງສະຫະພາບໂຊວຽດ ແລະ ປະເທດ ສັງຄົມນິຍົມຕ່າງໆຢ່າງບໍ່ຢຸດຢັ້ງ.

ໂດຍຝືນຕໍ່ມັນສະຫມອງທີ່ຮູ້ຕົວຈິງ ພວກເຂົາເວົ້າ ບໍ່ເຫືອດສົບວ່າ ບັນດາປະເທດສັງຄົມນິຍົມເປັນຜູ້ຮັບຜິດຊອບ ຕໍ່ ເຫດການພາຍໃນປະເທດຕ່າງໆ, ຕໍ່ການກໍ່ສົງຄາມ ກາງເມືອງແລະສົງຄາມປົດປ່ອຍຊາດ; ມັນໄດ້ເຮັດໃຫ້ຜູ້ຄົນທີ່ບໍ່ຮູ້ ການເມືອງຢ້ານກົວ ໂດຍອ້າງວ່າ ສ.ສ.ສ.ຊ. ໄດ້ສະສົມກອງກຳລັງຈຳນວນຫລວງຫລາຍ, ວ່າ ສ.ສ.ສ.ຊ., ບັນດາປະເທດພາຄີສົນທິສັນຍາວໍຊໍໄດ້ເສີມຂະຫຍາຍການສ້າງອາວຸດ, ພວມກະກຽມ "ສົງຄາມຕ້ານຢູລົບຕາເວັນຕົກ" ຢູ່.

ໃນເມື່ອຜູ້ຄົນຄົ້ນຄວ້າວິເຄາະ ຂໍ້ເທັດຈິງແລ້ວ ກໍ່ເຂົ້າໃຈ

ວ່າ ອັນນັ້ນລ້ວນແຕ່ເປັນຂໍ້ເສກສັນປັ້ນແຕ່ງເທົ່ານັ້ນ.

ສ່ວນຢູລົບພາກກາງນັ້ນ ຂະໜາດກຳລັງອາວຸດ ຂອງສົນທິສັນຍາວໍຊໍກັບ ນາໂຕ ບໍ່ແຕກຕ່າງກັນຫລາຍ. ຫລາຍປີ ແລ້ວ ຂະໜາດດັ່ງກ່າວເປັນຄ້າຍຄືກັນ (ຍົກເວັ້ນແຕ່ການແຕກຕ່າງກັນລະຫວ່າງ ເຫລົ່າຣົບບາງຢ່າງ). ເໝືອນດັ່ງ ພວກເຮົາ ຝ່າຍຕາເວັນຕົກກໍຮູ້ເລື່ອງນີ້ຢ່າງດີແລ້ວ.

ດ້ວຍເຫດນັ້ນ ບັນດາປະເທດສັງຄົມນິຍົມ ຈຶ່ງໄດ້ ສະເໜີໃຫ້ຕົກລົງກັນກ່ຽວກັບການລົດຜ່ອນກຳລັງທະຫານ ແລະກຳລັງອາວຸດໃນລະດັບດຽວກັນ (ອາເມລິກາ ແລະ ສ.ສ.ສ.ຊ . ໃນຂັ້ນຕົ້ນຕໍ) ບໍ່ແມ່ນເພື່ອປ່ຽນການຊັ່ງຊາກຳລັງ ຫາກແມ່ນລົດຜ່ອນການໃຊ້ຈ່າຍທາງທະຫານ ແລະ ຫລຸດຜ່ອນໄພອັນຕະລາຍຂອງການປະທະກັນລົງກ່ອນ. ອັນນັ້ນ ເປັນຂໍ້ສະເໜີທີ່ບໍ່ດີ, ບໍ່ເປັນທຳຈັ້ນຫວະ ? ຝ່າຍນາໂຕດ້ານຕ້ອງການໃຫ້ມີການລົດຜ່ອນທີ່ບໍ່ສະເໝີພາບກັນ, ຕ້ອງການປ່ຽນການຊັ່ງຊາກຳລັງເພື່ອເປັນຜົນດີໃຫ້ແກ່ພວກເຂົາ. ແນ່ນອນວ່າພວກເຮົາຈະບໍ່ໄດ້ຮັບຮອງຂໍ້ສະເໜີແນວນີ້ໄດ້ເດັດຂາດ. ເບິ່ງ ຄື ວ່າ ຝ່າຍຕາເວັນຕົກ ເຂົ້າໃຈເລື່ອງນີ້ຢ່າງດີ.ດ້ວຍເຫດນັ້ນ ທ່າທີຂອງພວກເຂົາມີຈຸດເລັງອັນດຽວ ຄືການສະກັດກັ້ນການເຈລະຈາກັນ, ຂັດຂວາງການລົດຜ່ອນກຳລັງທະຫານແລະອາວຸດໃນຢູລົບພາກກາງ.

ສະຫະພາບໂຊວຽດໄດ້ສະເໜີໃຫ້ບັນດາປະເທດ ທີ່ເຂົ້າຮ່ວມໃນການເຈລະຈາກັນກ່ຽວກັບການລົດຜ່ອນກຳລັງທະຫານ

ແລະອາວຸດໃນຢູລົບພາກກາງ ບໍ່ໃຫ້ເພີ່ມທະວີ ຈຳນວນກຳລັງທະຫານຂຶນໃນເວລາມີການເຈລະຈາກັນຢູ່. ຝ່າຍຕາເວັນຕົກບໍ່ໄດ້ຮັບຮອງຂໍ້ສະເໜີນັ້ນ. ກຸ່ມນາໂຕໄດ້ສືບຕໍ່ ເພີ່ມທະວີກຳລັງທະຫານແລະອາວຸດໃນຢູລົບພາກກາງ.

ຄັນເປັນແນວນັ້ນ ແມ່ນໃຜຕ້ອງການລົດຜ່ອນໄພອັນຕະລາຍທາງທະຫານລົງ, ໃຜເຊີດຊູການເສີມຂະຫຍາຍມັນ ?

ສະຫະພາບໂຊວຽດ ເປັນປະເທດດຽວໃນຈຳນວນ ມະຫາອຳນາດ, ເຊິ່ງບໍ່ໄດ້ເພີ່ມທະວີການໃຊ້ຈ່າຍທາງທະຫານແລະໄດ້ຮຽກຮ້ອງໃຫ້ຕົກລົງທີ່ຈະລົດຜ່ອນງົບປະມານ ທາງທະຫານຂອງມະຫາອຳນາດລົງ. ກົງກັນຂ້າມ ອາເມລິກາຊ້ຳພັດເພີ່ມທະວີງົບປະມານທາງທະຫານໃນທຸກໆປີຂຶ້ນ; ງົບປະມານ ດັ່ງກ່າວໄດ້ລື່ນ ໑໐໐ ພັນລ້ານໂດລາແລ້ວ; ໃນໄລຍະເວລາແຕ່ປີ ໑໙໗໑ ໄປຮອດປີ ໑໙໗໕ ບັນດາປະເທດຢູລົບຕາເວັນຕົກພາຄີກຸ່ມນາໂຕໄດ້ເພີ່ມທະວີການໃຊ້ຈ່າຍທາງທະຫານຂຶ້ນ ຕັ້ງ ໔ ເທົ່າກ່ວາ.

ສະພາບການຕົວຈິງເປັນແນວນັ້ນເອງ. ຂໍອ້າງ ຂໍ້ເທັດຈິງບາງຢ່າງອີກ.

ສ.ສ.ສ.ຊ. ໄດ້ຍື່ນຂໍ້ສະເໜີທີ່ສຳຄັນບາງຢ່າງ ຄືໄດ້ສະເໜີໃຫ້ທົ່ວໂລກຕົກລົງເຮັດສົນທິສັນຍາ ວ່າດ້ວຍການຫ້າມໃຊ້ກຳລັງອາວຸດໃນການຕິດຕໍ່ພົວພັນກັນທາງສາກົນ, ໃຫ້ຫ້າມສ້າງອາວຸດໃຫມ່ແບບສັງຫານຊີວິດຂະໜາດໃຫຍ່ (ອາດມີອາວຸດທີ່ຮ້າຍແຮງກ່ວາອາວຸດນິວຄະເລຍກໍໄດ້). ຂໍ້ສະເໜີເຫລົ່ານັ້ນ

ໄດ້ຮັບການຊົມເຊີຍຢ່າງກວ້າງຂວາງໃນທົ່ວໂລກ. ອັນ ເປັນຫນ້າເສຍດາຍ ແຕ່ວ່າພວກເຂົາຍັງບໍ່ທັນເຫັນຄວາມ ປາຖະຫນາອັນແຮງກ້າຂອງລັດຖະບານຂອງບັນດາປະເທດ ຕາເວັນຕົກ (ໂດຍບໍ່ເວົ້າເຖິງປະເທດຈີນ) ທີ່ຈະເຮັດໃຫ້ ຂໍ້ສະເຫນີເຫລົ່ານັ້ນປາກົດເປັນຈິງຂຶ້ນ.

ໃນລະຫວ່າງການເຈລະຈາກັນ ໂຊວຽດ-ອາເມລິກາກ່ຽວກັບການຈຳກັດອາວຸດຍຸດທະສາດນັ້ນ ສ.ສ.ສ.ຊ. ໄດ້ສະເຫນີໃຫ້ຕົກລົງກ່ຽວກັບການປະຕິເສດ ທີ່ຈະສ້າງອາວຸດຊະນິດໃຫມ່ທີ່ຮ້າຍແຮງກວ່າເກົ່າ ເຊັ່ນ ເຮືອດຳນ້ຳ "ໄຕເດີນ" ທີ່ ປະກອບຈະລວດ, ເຮືອບິນ "B-໑" ແບບຍຸດທະສາດ ໃນອາເມລິກາ ແລະ ອາວຸດແບບດຽວກັນໃນ ສ.ສ.ສ.ຊ. ອາເມລິກາບໍ່ໄດ້ຍອມຮັບເອົາຂໍ້ສະເຫນີນັ້ນ ແລະຊ້ຳລົງມືສ້າງອາວຸດສັງຫານຊີວິດຂະຫນາດໃຫຍ່ແບບໃຫມ່.

ສ.ສ.ສ.ຊ. ໄດ້ສະເຫນີໃຫ້ອາເມລິກາຕົກລົງກັນ ທີ່ ຈະຖອນເຮືອລົບ, ເຮືອດຳນ້ຳທັງສອງຝ່າຍ ທີ່ປະກອບອາວຸດນິວຄະເລຍ ອອກຈາກທະເລ ເມດີເຕລະເນ. ອາເມລິກາ ບໍ່ໄດ້ຍອມຮັບເອົາຂໍ້ສະເຫນີນີ້ ເຊັ່ນດຽວກັນ.

ສ.ສ.ສ.ຊ. ໄດ້ສະເຫນີທີ່ຈະເຮັດສົນທິສັນຍາ ວ່າດ້ວຍການຫ້າມປະຕິບັດຢ່າງທົ່ວໄປ ໃນການທົດລອງອາວຸດນິວຄະເລຍ; ຂໍ້ສະເຫນີດັ່ງກ່າວ ໄດ້ຮັບການສະຫນັບສະຫນູນ ຢ່າງກວ້າງຂວາງພາຍໃນອົງການສະຫະປະຊາຊາດ. ແຕ່ວ່າບັນດາປະເທດທີ່ມີອາວຸດນິວຄະເລຍ ບໍ່ຢາກເຈລະຈາກັນກ່ຽວກັບສົນ

ທີ່ສັນຍາດັ່ງກ່າວນັ້ນ.

ບັນດາຂໍ້ສະເຫນີເຫລົ່ານັ້ນ ຍັງມີຊີວິດຢູ່. ຂໍ້ສະເຫນີ ສ່ວນຫລາຍ ພ້ອມກັບຂໍ້ສະເຫນີໃຫມ່ໆ ໄດ້ປະກອບເຂົ້າໃນ "ໂຄງການແຫ່ງການຕໍ່ສູ້ຕໍ່ໄປເພື່ອສັນຕິພາບແລະການຮ່ວມມືກັນທາງສາກົນ, ເພື່ອເສລີພາບແລະເອກະລາດຂອງປະຊາຊາດຕ່າງຕ່າງ" ເຊິ່ງແມ່ນກອງປະຊຸມຄັ້ງທີ XXV ແຫ່ງ ພ.ກ.ສ.ຊ. ໄດ້ຮັບຮອງເອົາ ແລະ ເຊິ່ງແມ່ນພັກເຮົາ, ລັດເຮົາພວມຕໍ່ສູ້ເພື່ອເຮັດໃຫ້ປະກົດ ເປັນຈິງຂຶ້ນ.

ຂ້າພະເຈົ້າຄິດວ່າມັນຈະເປັນການພຽງພໍແລ້ວເພື່ອສາມາດທີ່ຈະຕອບໄດ້ວ່າແມ່ນໃຜເປັນຜູ້ຕ້ອງການສະກັດກັ້ນການ ແຂ່ງຂັນສ້າງອາວຸໃຜເປັນຜູ້ເສີມຂະຫຍາຍການແຂ່ງຂັນສ້າງອາວຸດນັ້ນ? ບົດຮຽນທັງຫຼາຍສອນວ່າການຮັບປະກັນສັນຕິພາບອັນຖາວອນ ບໍ່ແມ່ນເລື່ອງງ່າຍດາຍ, ມັນເປັນພາລະກິດທີ່ຕ້ອງການການອອກແຮງຢ່າງຫລວງຫລາຍ, ສຸດກົກສຸດປາຍ. ພາຍຫລັງການປະຕິວັດເດືອນຕຸລາ ທ່ານເລນິນ ໃນເມື່ອເວົ້າເຖິງຫນ້າທີ່ຂອງລັດໂຊວຽດໃນການຕໍ່ສູ້ເພື່ອສິ້ນສຸດສົງຄາມໂລກ ຄັ້ງ ທີ່ຫນຶ່ງ ໄດ້ກ່າວເນັ້ນວ່າ: "ຜູ້ໃດ ຄິດວ່າສັນຕິພາບເປັນເລື່ອງອັນງ່າຍດາຍ, ຄິດວ່າ ພວກນາຍທຶນຈະໄດ້ມອບສັນຕິພາບໃຫ້ທັນທີນັ້ນ ຜູ້ນັ້ນເປັນຜູ້ມັກໄຝ່ຝັນ".(ວ.ອີ. ເລນິນ ຄົບຊຸດ , ເຫລັ້ມທີ ໓໕ , ຫນ້າ ໑໑໖). ຄຳເວົ້າຂອງທ່ານ ເລນິນ ຖືກຕ້ອງໃນປະຈຸບັນນີ້ ເຊັ່ນດຽວກັນ. ຂ້າພະເຈົ້າຢາກຊັກຊວນບັນດາສະຫາຍວ່າ ພັກເຮົາຈະບໍ່ລົດລະການອອກແຮງໃນການ

ຕໍ່ສູ້ເພື່ອສັນຕິພາບແລະຄວາມປອດໄພ ຂອງປະຊາຊາດຕ່າງໆ ຈັກເທື່ອ.

ດ້ວຍເຫດນັ້ນ ພວກເຮົາເຫມືອນດັ່ງແຕ່ກ່ອນ ພວມໄດ້ເອົາໃຈໃສ່ຢ່າງຫລາຍຕໍ່ບັນຫາວ່າດ້ວຍການເສີມຂະຫຍາຍສາຍສຳພັນໂຊວຽດ–ອາເມລິກາ, ການປະຕິບັດບັນດາສົນທິ ສັນຍາ ແລະຂໍ້ຕົກລົງກັນທີ່ຖືກເຊັນກັນໃນໄລຍະເວລາບໍ່ຫລາຍປີທີ່ຜ່ານມາລະຫວ່າງ ສ.ສ.ສ.ຊ. ກັບອາເມລິກາ, ການເຮັດຂໍ້ຕົກລົງສະບັບໃຫ່ມທີ່ຕ້ອງປັບປຸງ ແລະເສີມຂະຫຍາຍ ພາລະກິດທີ່ພວກເຮົາໄດ້ເລີ່ມປະຕິບັດໃນປີ ໑໙໗໔ ແລະ ປີ ໑໙໗໖.

ມັນເປັນການແນ່ນອນວ່າ ການສຳເລັດການວາງຮ່າງຂໍ້ຕົກລົງກັນກ່ຽວກັບການຈຳກັດອາວຸດຍຸດທະສາດ ອາດຈະ ໄດ້ມີຄວາມຫມາຍສຳຄັນ. ໃນດ້ານນີ້ ສ.ສ.ສ.ຊ. ໄດ້ສະແດງແລະພວມສະແດງຈດຕະນາອັນດີແບບຮູ້ຕົວຈິງ.ອັນແປກ ປະຫລາດໃຈວ່າ ບາງຄັ້ງຄາວ ວົງການນຳອາເມລິກາ ບາງວົງການຮຽກຮ້ອງໃຫ້ປະກອບອາວຸດຢ່າງໄວກ່ວາເກົ່າ ໂດຍອ້າງເຖິງການຊັກຊ້າໃນການເຈລະຈາກັນກັບ ສ.ສ.ສ.ຊ.,ການຊັກຊ້າເປັນຫລາຍເດືອນ ເຊິ່ງຄັນເວົ້າຕາມຄວາມຈິງ–ປາກົດຂຶ້ນມາບໍ່ແມ່ນຍ້ອນການກະທຳຂອງພວກເຮົາ.

ບັນດາສະຫາຍ ! ການປັດກວາດສາງດິນລະເບີດ ຫລືເວົ້າອີກໃນຫນຶ່ງ ສາງອາວຸດປະລະມານູ ຂອງທະວີບຢູໂລບປະຈຸບັນນີ້ ມັນບໍ່ແມ່ນວຽກອັນງ່າຍດາຍ. ໃນດ້ານນີ້ບາດກ້າວທຳອິດ ກໍມີຄວາມຫມາຍອັນສຳຄັນທີ່ສຸດ.ໃນປະຈຸບັນນີ້ ມາດຕະ

ການຕົວຈິງທຸກປະການທີ່ແນໃສ່ປົກປັກຮັກສາ ຈຸດຕົ້ນຕໍ ຂອງຄວາມໄວ້ເນື້ອເຊື່ອໃຈຕໍ່ກັນແລະກັນ ລະຫວ່າງຝ່າຍ ຕາເວັນອອກກັບຝ່າຍຕາເວັນຕົກຕ່າງກໍມີຄຸນຄ່າສູງ.

ໂດຍປະຕິບັດຈິດໃຈແລະຕົວອັກສອນ ຂອງຂໍ້ຕົກລົງທີ່ ເຮັນຊິນກິ ນັ້ນ ສ.ສ.ສ.ຊ. ແຈ້ງຂ່າວໃຫ້ບັນດາປະເທດ ທີ່ເຂົ້າຮ່ວມກອງປະຊຸມທົ່ວຢູລົບຮູ້ເຖິງການຊ້ອມຮົບ ໃນເຂດທີ່ໃກ້ກັບຊາຍແດນ, ເຊີນໃຫ້ຜູ້ສັງເກດການຕ່າງປະເທດໄປເບິ່ງການຊ້ອມຮົບເຫລົ່ານັ້ນ.

ດັ່ງທີ່ຮູ້ກັນວ່າ ບັນດາປະເທດສັງຄົມນິຍົມໄດ້ສະເຫນີຫລາຍຄັ້ງໃຫ້ຍຸບເລີກກຸ່ມນາໂຕ ແລະອົງການສົນທິສັນຍາວໍຊໍ ຫລືໃນຖານະເປັນຂັ້ນຕົ້ນ - ການຍຸບເລີກພະແນກທາງທະຫານຂອງອົງການເຫລົ່ານັ້ນ.

ແນ່ນອນວ່າ ກຸ່ມນາໂຕກັບອົງການສົນທິສັນຍາວໍຊໍແຕກຕ່າງກັນຫລາຍ. ອົງການສົນທິສັນຍາວໍຊໍ ເປັນອົງການ ທີ່ປ້ອງກັນຕົວເອງທໍ່ນັ້ນ. ອົງການນາໂຕໄດ້ຮັບການສ້າງຕັ້ງ ໃນຖານະເປັນເຄື່ອງມືຂອງການຮຸກຮານ ແລະການປາບປາມ ການຕໍ່ສູ້ປົດປ່ອຍຊາດ. ໃນປະຈຸບັນນີ້ ອົງການນີ້ກໍມີລັກສະນະແນວນັ້ນເຊັ່ນດຽວກັນ. ເຖິງແມ່ນວ່າເພິ່ນຜັດແປ້ງ ແຕ່ງກາຍ ຫລາຍປານໃດກໍຕາມ. ພວກເຮົາຄັດຄ້ານ ການແບ່ງແຍກໂລກໃຫ້ເປັນກຸ່ມທະຫານຕ່າງໆ ແລະກຽມພ້ອມທີ່ຈະເຮັດ ທຸກສິ່ງ ທຸກຢ່າງເທົ່າທີ່ຈະສາມາດເຮັດໄດ້ ເພື່ອຍຸດຕິ ການເຄື່ອນໄຫວຂອງອົງການທັງສອງເຫລົ່ານັ້ນ.

ບັນດາສະຫາຍ ! ປະຊາຊົນຢູໂຣບເປັນຜູ້ສືບທອດມູນເຊື້ອ ອັນສູງສົ່ງແຫ່ງວັດທະນະທຳຂອງຫນ່ວຍພິພົບເຮົາ. ດ້ວຍເຫດນັ້ນ ປະຊາຊົນຢູໂຣບຈຶ່ງຈຳຕ້ອງເຮັດວຽກຫລາຍກ່ວາຜູ້ອື່ນ.

ພ້ອມກັນນັ້ນ ຢູໂຣບ ເປັນບໍ່ເກີດສົງຄາມ ອັນຮ້າຍກາດທີ່ສຸດ ໃນປະຫວັດສາດຂອງມະນຸດ. ຈົນຮອດປະຈຸບັນນີ້ ຊາວຢູໂຣບບໍ່ນ້ອຍກ່ວາຫລາຍຮ້ອຍລ້ານຄົນ ໄດ້ເສຍຊີວິດໄປໃນການສູ້ຮົບ. ອັນນັ້ນກໍເປັນການປະກອບ ສ່ວນຂອງຊາວຢູໂຣບເຂົ້າ, ໃນປະຫວັດສາດ ຂອງມະນຸດເຊິ່ງ ເປັນສ່ວນ ອັນຫນ້າຊັງທີ່ ບັງຄັບໃຫ້ມະນຸດ ຄົ້ນຄວ້າອະດີດຕະການ ເພື່ອນຳເອົາບົດ ຮຽນສຳລັບອະນາຄົດ.

ຢູໂຣບໄດ້ກ້າວເຂົ້າສູ່ໄລຍະເວລາອັ້ນໃຫມ່ ທີ່ແຕກຕ່າງກັບໄລຍະແຕ່ກ່ອນ. ຄັນຊາວຢູໂຣບບໍ່ເຂົ້າໃຈເລື່ອງນີ້ແລ້ວ ຊາວຢູໂຣບກໍຈະມຸ່ງຫນ້າໄປສູ່ຄວາມຫາຍະນະ.

ມີຄຳເວົ້າບູຮານ ທີ່ວ່າ "ຜູ້ໃດຍົກດາບ ຜູ້ນັ້ນຈະຖືກ ຕາຍດ້ວຍດາບນັ້ນ". ໃນຢູໂຣບປະຈຸບັນ ຜູ້ໃດທີ່ຍົກດາບ ຜູ້ນັ້ນ ຈະສູນຫາຍໄປ ບໍ່ແມ່ນຜູ້ດຽວທໍ່ນັ້ນ ຫາກຜູ້ອື່ນໆອີກ ທັງເພື່ອນມິດ ແລະສັດຕູທີ່ຢູ່ໃກ້ ຫລືໄກ ເປັນຈຳນວນນັບບໍ່ຖ້ວນກໍຈະສູນຫາຍໄປເຊັ່ນດຽວກັນ.

ຊາວໂຊວຽດຖືການໃຊ້ອາວຸດນິວຄະເລຍວ່າ ເປັນການກະທຳຫລືຄວາມຄິດທີ່ໄຮ້ມະນຸດສະທຳ. ເຮືອນ ຢູໂຣບ ກາຍເປັນເຮືອນທີ່ຄັບແຄບແລະອາດກໍ່ຈູດໄຟໄດ້. ໃນກໍລະນີນັ້ນ ບໍ່ມີກອງດັບໄຟອັນໃດຫນຶ່ງທີ່ສາມາດດັບໄຟນັ້ນໄດ້.

ດ້ວຍເຫດນັ້ນ ສຳລັບຢູລົບ ແລະສຳລັບຊາວຢູລົບນັ້ນ ສັນຕິພາບໄດ້ກາຍເປັນຄວາມຈຳເປັນອັນເປັນຕາຍ. ເພາະສະນັ້ນ ພວກເຮົາ, ຊາວກອມມູນິດທີ່ມີໂລກະທັດແບບມະນຸດ ສະທຳທີ່ສຸດ ຄິດວ່າ ໃນປະຈຸບັນນີ້ ການໄຂເສັ້ນທາງທີ່ຈະນຳໄປສູ່ການລົດຜ່ອນທາງທະຫານ, ການສະກັດກັ້ນ ການແຂ່ງຂັນສ້າງອາວຸດ ເປັນສິ່ງທີ່ສຳຄັນກ່ວາເວລາໃດຫມົດ.

ສິ່ງສຳຄັນພິເສດ ແມ່ນຕ້ອງສ້າງຮູບຮ່າງຕົວຈິງ ແຫ່ງການຮ່ວມມືກັນຢ່າງສັນຕິໃນທະວີບຢູລົບ, ຮູບຮ່າງທີ່ປັບປຸງສາຍສຳພັນກັນລະຫວ່າງປະຊາຊາດ ແລະປະເທດຢູລົບຕ່າງໆ ແລະເຮັດໃຫ້ພວກເຂົາສົນໃຈໃນການປົກປັກຮັກສາສັນຕິພາບໃນໄລຍະເວລາຫລາຍປີຂ້າງຫນ້ານີ້. ຂ້າພະເຈົ້າຫມາຍເຖິງ ການຮ່ວມມືກັນຫລາຍຮູບຫລາຍສີທີ່ເກີດຜົນຕໍ່ກັນແລະກັນ ຄືການຄ້າຂາຍ, ການປະສານງານໃນການຜະລິດ, ການຕິດຕໍ່ ພົວພັນກັນທາງດ້ານວິດທະຍາສາດ-ເຕັກນິກ.

ເພີ່ນສາມາດປະຕິບັດເປົ້າຫມາຍນີ້ໄດ້.ໃນບໍ່ຫລາຍປີທີ່ຜ່ານມາ,ໃນບັນຍາກາດແຫ່ງການຂະຫຍາຍການລົດຜ່ອນ ຄວາມເຄັ່ງຕຶງລົງ, ບັນດາປະເທດຂອງຝ່າຍຕາເວັນອອກ ແລະຕາເວັນຕົກໄດ້ສະສົມບົດຮຽນຫລາຍພໍສົມຄວນ ແຫ່ງການ ຮ່ວມມືກັນເຊັ່ນ ໃນໄລຍະເວລາຫ້າປີທີ່ຜ່ານມາ ການຄ້າຂາຍກັນລະຫວ່າງ ສ.ສ.ສ.ຊ. ກັບບັນດາປະເທດຢູລົບທຶນນິຍົມໄດ້ເພີ່ມທະວີຂຶ້ນຕັ້ງສາມເທົ່າ. ການຮ່ວມມືກັນໃນການປະສານ ງານສ້າງວິສາຫະກິດຂະຫນາດໃຫຍ່ ທີ່ເກີດຜົນຕໍ່ກັນແລະກັນ ກໍໄດ້

ມີບົດບາດສຳຄັນຍິ່ງຂຶ້ນ .

ຂ້າພະເຈົ້າຄິດວ່າ ບັນດາຊາວກອມມູນິດ ມີຄວາມຄິດເປັນເອກະພາບກັນກ່ຽວກັບພົນຂອງການເສີມຂະຫຍາຍສາຍສຳພັນກັນແນວນັ້ນ ເຊິ່ງຊ່ວຍໃຫ້ວາງພື້ນຖານທາງວັດຖຸແກ່ສັນຕິພາບອັນຖາວອນ ແລະຮັບໃຊ້ຜົນປະໂຫຍດ ຂອງຊາວຜູ້ອອກ ແຮງງານ. ຕາມສະຖິຕິຂອງຝ່າຍຕາເວັນຕົກ, ການຕິດຕໍ່ພົວພັນກັນທາງດ້ານເສດຖະກິດກັບບັນດາປະເທດສັງຄົມນິຍົມ ພວມຮັບປະກັນວຽກງານແກ່ກຳມະກອນເປັນແສນໆຄົນ ຫລືເປັນລ້ານໆຄົນຂອງຢູໂລບຕາເວັນຕົກໃນໄລຍະເວລາທີ່ມີວິກິດການ ທາງເສດຖະກິດ .

ເຖິງແມ່ນແນວນັ້ນກໍຕາມ ໃນເສັ້ນທາງດັ່ງກ່າວ ກໍມີອຸປະສັກຈຳນວນບໍ່ນ້ອຍ ເຊິ່ງແມ່ນບັນດາປະເທດທຶນນິຍົມ ເປັນ ຜູ້ສ້າງຂຶ້ນ ໂດຍການໃຊ້ມາດຕະການແບບຈຳແນກຕໍ່ປະເທດສັງຄົມນິຍົມຕ່າງໆ.

ຊີວິດນີ້ເອງພວມຕັ້ງບັນຫາຂຶ້ນມາວ່າ ຕ້ອງ ເສີມຂະຫຍາຍການຮ່ວມມືກັນຫລາຍຝ່າຍລະຫວ່າງບັນດາປະເທດຢູໂລບ ເພື່ອເປັນຜົນປະໂຫຍດແກ່ການປະສານສົມທົບແກ້ໄຂບັນຫາທີ່ສຳຄັນຕ່າງໆ ທີ່ແຕະຕ້ອງເຖິງຜົນປະໂຫຍດລວມ. ດັ່ງທີ່ຮູ້ກັນດີແລ້ວວ່າ ພວກເຮົາໄດ້ສະເຫນີໃຫ້ໄຂກອງປະຊຸມທົ່ວຢູໂລບ ຫລື ລະຫວ່າງຊາດຕ່າງໆ ເພື່ອພິຈາລະນາບັນຫາຕ່າງໆ ຂອງການຮ່ວມມືກັນໃນການແກ້ໄຂບັນຫາວ່າດ້ວຍ ການປົກປັກຮັກສາທຳມະຊາດແວດລ້ອມ, ຄົມມະນາຄົມຂົນສົ່ງ, ພະລັງງານໄຟຟ້າ. ບັນ

ດາປະເທດຕາເວັນຕົກ ຄືຊິເຫັນດີນຳແຕ່ຄຳເວົ້າ, ແຕ່ ຕາມຄວາມເປັນຈິງ ພວກເຂົາບໍ່ຟ້າວປະຕິບັດບາດກ້າວຕົວຈິງແລະຢືນຢູ່ໃນທ່າທີເຄິ່ງໆກາງໆ ເຊິ່ງຝາຝືນຕໍ່ການໃຫ້ຄຳໝັ້ນ ສັນຍາທີ່ຈະສະໜັບສະໜູນບັນດາຂໍ້ຕົກລົງກັນໃນ ເຮັນຊິນກີ.

ສ່ວນ ສ.ສ.ສ.ຊ. ນັ້ນ ພວກເຮົາຕັ້ງໜ້າທີ່ຈະເດີນຕາມເສັ້ນທາງແຫ່ງການຂະຫຍາຍສາຍສຳພັນກັນ ທາງເສດຖະກິດລະຫວ່າງບັນດາປະເທດຢູລົບ ເພື່ອເປັນຜົນປະໂຫຍດແກ່ສັນຕິພາບອັນຖາວອນແລະຜົນປະໂຫຍດທີ່ແທ້ຈິງ ຂອງປະຊາຊາດຢູລົບຕ່າງໆ.

ບັນດາສະຫາຍ ! ການສ້າງບັນຍາກາດແຫ່ງຄວາມ ໄວ້ເນື້ອເຊື່ອໃຈຕໍ່ກັນແລະກັນລະຫວ່າງປະເທດຕ່າງໆ ທີ່ເປັນສິ່ງອັນຈຳເປັນແກ່ສັນຕິພາບທີ່ຖາວອນນັ້ນ ມັນຮຽກຮ້ອງບັນດາປະຊາຊາດຮູ້ຈັກກັນ ແລະເຂົ້າໃຈເຊິ່ງກັນແລະກັນ ໃຫ້ດີຍິ່ງຂຶ້ນ. ພວກເຮົາພວມອີງໃສ່ທັດສະນະແນວນີ້ແຫລະໃນເມື່ອພວກເຮົາຄົ້ນຄວ້າບັນຫາການແລກປ່ຽນທາງດ້ານວັດທະນະທຳແລະການຕິດຕໍ່ພົວພັນກັນລະຫວ່າງມະນຸດ.

ສະພາບການທາງດ້ານນີ້ ເປັນແນວໃດ? ພວກເຮົາ, ຊາວໂຊວຽດຄິດວ່າ ປະຊາຊົນເຮົາຕ້ອງຮູ້ຈັກປະຫວັດສາດ, ວັດທະນະທຳຂອງປະຊາຊາດອື່ນ, ຕ້ອງເຄົາລົບບົດຮຽນ ປະຫວັດສາດແລະຜົນສຳເລັດຂອງປະຊາຊາດຕ່າງໆ.

ດ້ວຍເຫດນັ້ນ ລັດໂຊວຽດຈຶ່ງເຊີດຊູການແລກປ່ຽນ ທາງດ້ານວັດທະນະທຳ, ປັບປຸງມັນດ້ວຍຂໍ້ຕົກລົງທາງລັດ, ເສີມຂະ

ຫຍາຍມັນ ນັບມື້ນັບຫລາຍຍິ່ງຂຶ້ນ. ໃນປະຈຸບັນນີ້ປະເທດເຮົາ ມີການຕິດຕໍ່ພົວພັນກັນທາງດ້ານວັດທະນະທໍາ ກັບປະເທດຕ່າງ ຕ່າງ ໑໔໐ ປະເທດ. ຕາມຂໍ້ຕົກລົງຂັ້ນສຸດທ້າຍຂອງກອງປະ ຊຸມເຮັນຊິນກີ ພວກເຮົາໄດ້ອອກແຮງເພື່ອເພີ່ມທະວີການແລກ ປ່ຽນດ້ວຍປຶ້ມອ່ານ, ຮູບເງົາ, ວັດທະນະທໍາ.ບັນດາປະເທດ ສັງຄົມນິຍົມທີ່ໄດ້ເຂົ້າຮ່ວມໃນກອງປະຊຸມເຮັນຊິນກີ ກໍໄດ້ເດີນ ຕາມເສັ້ນທາງແນວນີ້ ເຊັ່ນດຽວກັນ .

ສ່ວນບັນດາປະເທດທຶນນິຍົມນັ້ນ ພວກເຮົາໄດ້ຍິນໄດ້ຟັງຄໍາ ເວົ້າຫວານໆ ກ່ຽວກັບການແລກປ່ຽນດ້ວຍສົມບັດ ທາງຈິດໃຈ ຢ່າງຫລາຍທີ່ສຸດ ແຕ່ວ່າພວກເຮົາບໍ່ໄດ້ເຫັນການກະທໍາຕົວຈິງ ແມ່ນແຕ່ນ້ອຍດຽວ.

ເຊັ່ນ ໃນອັງກິດ, ຝະລັ່ງ ເພີ່ນພິມຈໍາຫນ່າຍປຶ້ມ ໂຊວຽດ ຫົກ-ເຈັດ ເທົ່ານ້ອຍກ່ວາການພິມຈໍາຫນ່າຍປຶ້ມອັງກິດແລະຝະ ລັ່ງ ໃນ ສ.ສ.ສ.ຊ. ເພີ່ນສາຍຮູບເງົາໂຊວຽດໃນປະເທດ ຕາເວັນຕົກ ສິບເທົ່ານ້ອຍກ່ວາການສາຍຮູບເງົາ ຕາເວັນຕົກ ໃນ ສ.ສ.ສ.ຊ., ລາຍການໂທລະທັດ-ສາມເທົ່ານ້ອຍກ່ວາ ໃນ ສ.ສ.ສ.ຊ. ແລະອື່ນໆຕໍ່ໄປ.

ເວົ້າທົ່ວໆໄປແລ້ວ ປະຊາຊົນຂອງປະເທດ ສັງຄົມນິຍົມ ຮູ້ ກ່ຽວກັບຊີວິດໃນຝ່າຍຕາເວັນຕົກຢ່າງດີກວ່າທີ່ຜູ້ອອກແຮງງານ ໃນປະເທດທຶນນິຍົມຮູ້ກ່ຽວກັບສະພາບຕົວຈິງ ໃນໂລກສັງຄົມນິ ຍົມ. ເຫດຜົນຂອງເລື່ອງນີ້ມັນຢູ່ບ່ອນໃດ? ມັນຢູ່ບ່ອນວ່າ ຊົນ ຊັ້ນປົກຄອງປະເທດທຶນນິຍົມຕ່າງໆ ບໍ່ສົນໃຈຊ່ວຍຊາວ ຜູ້ອອກ

ແຮງງານຮັບຮູ້ຊີວິດຕົວຈິງ ໃນບັນດາປະເທດສັງຄົມນິຍົມ, ຮັບຮູ້ຜົນສຳເລັດທາງດ້ານສັງຄົມ ແລະວັດທະນະທຳ, ການເມືອງ, ສິນທຳຂອງສັງຄົມແບບສັງຄົມນິຍົມ.

ເພື່ອໃສ່ຮ້າຍປ້າຍສີໂລກສັງຄົມນິຍົມນັ້ນ ການ ໂຄສະນາຂອງພວກນາຍທຶນ ໄດ້ເສກສັນປັ້ນແຕ່ງເລື່ອງທີ່ວ່າໂລກສັງຄົມນິຍົມເປັນ "ສັງຄົມແບບປິດລັບ", ປ່າວຮ້ອງວ່າບັນດາປະເທດສັງຄົມນິຍົມ ບໍ່ຢາກສ້າງການພົວພັນກັບປະຊາຊາດຕ່າງໆບໍ່ຢາກທີ່ຈະແລກປ່ຽນດ້ວຍຂ່າວຄາວ ແລະບໍ່ຢາກທີ່ຈະຂະຫຍາຍການຕິດຕໍ່ກັນລະຫວ່າງມະນຸດ.

ຂໍ້ເທັດຈິງກ່ຽວກັບເລື່ອງນີ້ ເປັນແນວໃດ? ໃນປີ ໑໙໗໕ ແຂກຕ່າງປະເທດ ໕໘ ລ້ານຄົນໄດ້ໄປຢ້ຽມຢາມ ປະເທດສັງຄົມນິຍົມພາຄີສະພາການຊ່ວຍເຫລືອທາງເສດຖະກິດ. ຊາວສັງຄົມນິຍົມ ໓໕ ລ້ານຄົນກໍໄດ້ໄປຢ້ຽມຢາມປະເທດຕ່າງໆ. ອັນນີ້ພິສູດໃຫ້ເຫັນເຖິງຄວາມບໍ່ຈິງຂອງເລື່ອງ "ສັງຄົມແບບປິດລັບ"

ດ້ານການຕິດຕໍ່ກັນລະຫວ່າງອົງການຈັດຕັ້ງມະຫາຊົນ ເປັນຕົ້ນແມ່ນສະຫະພັນກຳມະບານເປັນຫລາຍຄັ້ງຄາວແລ້ວ ທີ່ເຈົ້າໜ້າທີ່ອາເມລິກາ ໄດ້ປະຕິເສດບໍ່ໃຫ້ ວີຊາ ແກ່ຄະນະຜູ້ແທນກຳມະບານໂຊວຽດທີ່ໄດ້ຮັບຄຳເຊີນ ມາຈາກສະຫະພັນກຳມະບານອາເມລິກາ. ບາງເທື່ອເຈົ້າໜ້າທີ່ອາເມລິກາ ໄດ້ປະຕິເສດບໍ່ໃຫ້ ວີຊາ ແກ່ຜູ້ແທນກຳມະບານໂຊວຽດທີ່ຕ້ອງການໄປເຂົ້າຮ່ວມກອງປະຊຸມລະຫວ່າງຊາດ ໃນດິນແດນອາເມລິກາ.

ສ່ວນ ສ.ສ.ສ.ຊ. ນັ້ນ ໃນປີກາຍ ຄະນະຜູ້ແທນ ກຳມະ

ບານແລະກຳມະກອນຕ່າງປະເທດ ໙໒໐ ຄະນະໄດ້ໄປ ຢ້ຽມຢາມ ສ.ສ.ສ.ຊ.; ຄະນະຜູ້ແທນໂຊວຽດ ໑໔໐ ຄະນະໄດ້ໄປຢ້ຽມຢາມປະເທດຕ່າງໆ.

ປະເທດສັງຄົມນິຍົມ ບໍ່ແມ່ນ"ສັງຄົມແບບປິດລັບ";ປະເທດສັງຄົມນິຍົມໄຂປະຕູແກ່ທຸກສິ່ງທີ່ບໍລິສຸດໃຈ;ພວກເຮົາກຽມພ້ອມທີ່ຈະເສີມຂະຫຍາຍການຕິດຕໍ່ພົວພັນກັນ ໂດຍອີງໃສ່ເງື່ອນໄຂທີ່ດີ ເຊິ່ງແມ່ນການລົດຜ່ອນຄວາມເຄັ່ງຕຶງກໍ່ສ້າງຢູ່. ໃນຂະນະດຽວກັນນັ້ນ ພວກເຮົາອັດປະຕູປຶ້ມທີ່ໂຄສະນາສົງຄາມ, ການໃຊ້ກຳລັງແຮງ, ການຈຳແນກຜິວຫນັງ,ການຄຽດຊັງມະນຸດ; ພວກເຮົາກໍອັດປະຕູເປັນພິເສດແກ່ຕົວແທນ ຂອງກຸ່ມສືບລັດຖະການລັບແລະອົງການຂອງພັກພວກຕ້ານໂຊວຽດ ທີ່ໄປຊ່ອນຕົວຢູ່ຕ່າງປະເທດທີ່ແມ່ນກົມເຫລົ່ານັ້ນ ໄດ້ສ້າງຕັ້ງຂຶ້ນ. ເມື່ອປ່າວຮ້ອງເຖິງຄວາມຈຳເປັນທີ່ຈະຕ້ອງມີ"ເສລີພາບ"ໃນການຕິດຕໍ່ກັນນັ້ນ ພວກເຂົາໃນຝ່າຍຕາເວັນຕົກ ຕ້ອງການໃຫ້ໄດ້ມີເສລີພາບໃນການກະທຳໃຈດຳອຳມະຫິດ. ພວກເຮົາບໍ່ຕິດພະຍາດ "ນັກສືບສອດແນມ". ແຕ່ວ່າ ພວກເຮົາຈະບໍ່ອະນຸຍາດ ໃຫ້ພວກເຂົາປະຕິບັດການທຳລາຍມ້າງເພຕ້ານສັງຄົມເຮົາ. ຂ້າພະເຈົ້າຄິດວ່າ ພາຍຫລັງການເປີດຫນ້າທີ່ແທ້ຈິງຂອງຊີໄອເອຂອງອາເມລິກາຄັ້ງຫລັງນີ້ ທຸກຄົນຈະໄດ້ເຂົ້າໃຈທ່າທີ ຂອງພວກເຮົາທີ່ມີເຫດມີຜົນ.

ພວກເຮົາຄິດວ່າ ການແລກປ່ຽນທາງວັດທະນະທຳ ແລະທາງໂຄສະນາການ ຕ້ອງຮັບໃຊ້ຜົນປະໂຫຍດ ຂອງອຸດົມຄະຕິ

ແບບມະນຸດຊະທຳ, ພາລະກິດແຫ່ງສັນຕິພາບ, ການປັບປຸງຄວາມໄວ້ເນື້ອເຊື່ອໃຈກັນແລະມິດຕະພາບ ລະຫວ່າງ ປະຊາຊາດຕ່າງໆ. ແຕ່ວ່າໃນດິນແດນຂອງປະເທດບາງປະເທດຍັງມີສະຖານີກະຈ່າຍສຽງອັນມີລັກສະນະທຳລາຍມ້າງເພ ເຊິ່ງໃຊ້ຊື່ວ່າ "ເສລີພາບ", "ຢູລົບເສລີ". ການດຳລົງຕົວຂອງສະຖານີກະຈາຍສຽງເຫລົ່ານັ້ນ ພວມຫວ່ານຢາເບື່ອລົງໃນບັນຍະກາດທາງສາກົນ, ມັນເປັນການທຳລາຍແກ່ຈິດໃຈແລະຕົວອັກສອນຂອງບັນດາຂໍ້ຕົກລົງເຮັນຊິນກີ. ສ.ສ.ສ.ຊ. ຮຽກຮ້ອງໃຫ້ຍຸຕິການເຄື່ອນໄຫວຂອງເຄື່ອງມືແຫ່ງ "ສົງຄາມຈິດຕະສາດ" ເຫລົ່ານັ້ນ.

ບັນດາສະຫາຍ ! ພັກເຮົາທີ່ຍຶດຫມັ້ນໃນແນວຄິດ ສາກົນກຳມາຊີບອັນຍິ່ງໃຫຍ່ ບໍ່ເຄີຍແບ່ງແຍກໂຊກຊາຕາຂອງ ສ.ສ.ສ.ຊ. ໃຫ້ອອກໄປຈາກໂຊກຊາຕາຂອງປະຊາຊາດອື່ນໆຂອງຢູລົບ ແລະທົ່ວໂລກຈັກເທື່ອ. ນະໂຍບາຍຕ່າງປະເທດ ແຫ່ງ ສ.ສ.ສ.ຊ. ທີ່ແນໃສ່ປັບປຸງສັນຕິພາບແລະເສລີພາບຂອງບັນດາປະຊາຊາດ, ນະໂຍບາຍພາຍໃນຂອງພວກເຮົາ ທີ່ແນໃສ່ກໍ່ສ້າງລະບອບກອມມູນິດ ບໍ່ພຽງແຕ່ຮັບໃຊ້ຜົນປະໂຫຍດຂັ້ນພື້ນຖານຂອງປະຊາຊົນໂຊວຽດທໍ່ນັ້ນ ຫາກຍັງເປັນການ ປະກອບສ່ວນເຂົ້າໃນການຕໍ່ສູ້ລວມ ຂອງບັນດາຊາວກອມມູນິດທົ່ວໂລກເພື່ອອະນາຄົດອັນສະງ່າງາມຂອງມະນຸດຊາດ.

ບັນດາສະຫາຍ ອາດຮູ້ກ່ຽວກັບຜົນງານ ຂອງກອງປະຊຸມໃຫຍ່ຄັ້ງທີ XXV ແຫ່ງ ພ.ກ.ສ.ຊ., ກ່ຽວກັບແຜນການພັດ

ທະນາ ສ.ສ.ສ.ຊ. ທີ່ກອງປະຊຸມຄັ້ງນີ້ ໄດ້ກຳນົດໄວ້ແລ້ວ. ເສດຖະກິດຂອງປະຊາຊົນເຮົາ ມີຂະໜາດອັນໃຫ່ຍຫລວງ ທີ່ສຸດ. ມັນເປັນການພຽງພໍທີ່ຈະເວົ້າໄດ້ວ່າ ສ.ສ.ສ.ຊ. ຜະລິດໄດ້ ໔໐% ຂອງຜົນຜະລິດອຸດສາຫະກຳທັງໝົດ ຂອງໂລກ ເຊິ່ງຫລາຍກ່ວາຜົນຜະລິດທັງໝົດຂອງໂລກ ທີ່ໄດ້ຜະລິດໃນປີ ໑໙໕໐. ມັນບໍ່ເປັນການຍາກທີ່ຈະເຂົ້າໃຈໄດ້ວ່າ ທາງດ້ານການວາງແຜນການແລະການຄຸ້ມຄອງກົງຈັກເສດຖະກິດ ອັນໃຫ່ຍຫລວງແນວນີ້ ພວກເຮົາພວມປະເຊີນໜ້າ ກັບບັນຫາອັນສັບສົນຫລາຍຢ່າງ.

ລັກສະນະອັນດີເລີດຂອງລະບອບສັງຄົມນິຍົມ ພວມຊ່ວຍໃຫ້ພວກເຮົາຮັບປະກັນການຂະຫຍາຍຕົວຂອງເສດຖະກິດ ແລະການປັບປຸງສະວັດດີພາບຂອງປວງປະຊາຊົນ ຢ່າງເນື່ອງນິດລຽນຕິດ. ໃນປະຈຸບັນນີ້ ພັກເຮົາໄດ້ເອົາໃຈໃສ່ເປັນພິເສດຕໍ່ບັນຫາວ່າດ້ວຍການເພີ່ມທະວີປະສິດທິພາບ ຂອງການຜະລິດ, ການປັບປຸງຄຸນນະພາບຂອງການຜະລິດໃນທຸກຂົງເຂດ.ອັນນັ້ນຮຽກຮ້ອງໃຫ້ອອກແຮງໃນຫລາຍດ້ານ ຄືຈາກການດັດປຽນພື້ນຖານເຕັກນິກຂອງການຜະລິດ ຈົນຮອດການສ້າງນ້ຳໃຈ ເຮັດວຽກແບບກອມມູນິດຕື່ນຕົວ, ການສ້າງນ້ຳໃຈລິເລີ່ມແກ່ມະຫາຊົນຫລາຍລ້ານຄົນ.

ມັນຄວນກ່າວເນັ້ນວ່າ ການຂະຫຍາຍການຜະລິດແລະການປັບປຸງສະວັດດີພາບຂອງປະຊາຊົນ ບໍ່ແມ່ນວັດຖຸປະສົງ ແບບສ່ວນຕົວ ຫາກມັນແມ່ນ ການຊ່ວຍໃຫ້ແກ່ ການປະຕິບັດ ເປົ້າ

ຫມາຍຂອງການກໍ່ສ້າງລະບອບກອມມູນິດອີກດ້ວຍ.

ມັນຫມາຍເຖິງການເຮັດໃຫ້ຊີວິດການເປັນຢູ່ ຂອງຜູ້ອອກແຮງງານໃນຕົວເມືອງ ຫຍັບເຂົ້າໃກ້ຊິດກັບຊີວິດການເປັນ ຢູ່ຂອງຊາວຜູ້ອອກແຮງງານໃນຊົນນະບົດ; ໃນໄລຍະເວລາບາງປີຫລັງນີ້ ພັກເຮົາໄດ້ວາງນະໂຍບາຍທາງກະສິກຳ ເພື່ອປະຕິບັດເປົ້າຫມາຍນີ້. ມັນຫມາຍເຖິງການລົບລ້າງ ຄວາມ ແຕກຕ່າງກັນເປັນເທື່ອລະກ້າວ ລະຫວ່າງການອອກແຮງງານດ້ວຍມັນສະຫມອງ ແລະດ້ວຍກຳລັງກາຍ; ການປະຕິບັດການສຶກສາຊັ້ນອຸດົມແກ່ປວງປະຊາຊົນ, ການຍົກລະດັບວັດທະນະທຳ-ເຕັກນິກ ແກ່ຊາວກຳມະກອນແລະຊາວນາ ຕ່າງກໍຮັບໃຊ້ແກ່ການປະຕິບັດເປົ້າຫມາຍດັ່ງກ່າວນັ້ນ. ມັນຫມາຍເຖິງການເສີມຂະຫຍາຍກໍການກໍ່ສ້າງເຮືອນຊານເຫມາະສົມແລະທັນສະໄຫມແກ່ຊາວຜູ້ອອກແຮງງານນັບເປັນສິບໆລ້ານຄົນທີ່ເສຍຄ່າເຮືອນໃນລະດັບຕ່ຳທີ່ສຸດ; ພວກເຮົາສືບຕໍ່ປະຕິບັດການກໍ່ສ້າງເຮືອນຊານໃນຂອບເຂດທີ່ບໍ່ເຄີຍມີມາກ່ອນ.

ພວກເຮົາ ສາມາດຍາດເອົາຜົນສຳເລັດທາງສັງຄົມໄດ້ ກໍຍ້ອນການປະດິດສ້າງຢ່າງເສລີແລະຕື່ນຕົວ ຂອງ ມະຫາຊົນ, ການຫມູນໃຊ້ສິດພົນລະເມືອງ ໃຫ້ກວ້າງຂວາງຍິ່ງຂຶ້ນ, ການເຂົ້າຮ່ວມຢ່າງເອົາຈິງເອົາຈັງໃນຊີວິດທາງສັງຄົມ ທຸກດ້ານ. ດ້ວຍເຫດນັ້ນການເດີນໄປຂ້າງຫນ້າຕາມເສັ້ນທາງແຫ່ງ ການກໍ່ສ້າງລະບອບກອມມູນິດ ຈິ່ງຫມາຍເຖິງ ການເສີມຂະຫຍາຍປະຊາທິປະໄຕແບບສັງຄົມນິຍົມ, ອັນນັ້ນເປັນທິດທາງໃຫຍ່ຂອງ

ພັກເຮົາ. ອັນນັ້ນກໍເປັນໜ້າທີ່ປະຈຳວັນຂອງພວກເຮົາ.

ພາຍໃຕ້ລະບອບສັງຄົມນິຍົມ ຊາວໂຊວຽດພວມສ້າງລັກສະນະອັນມີຄຸນຄ່າສູງ ຄື ລັກສະນະເປັນເຈົ້າຂອງປະເທດທີ່ເຂົ້າໃຈການພົວພັນກັນລະຫວ່າງການອອກແຮງງານຂອງຕົນກັບພາລະກິດລວມຂອງປວງປະຊາຊົນ; ຊາວໂຊວຽດຮູ້ແລະຄິດເຖິງຜົນປະໂຫຍດລວມ.

ມັນບໍ່ແມ່ນຄວາມຮູ້ສຶກລ້າໆ, ມັນປາກົດເປັນຈິງໃນການກະທຳຂອງພົນລະເມືອງນັບຫລາຍລ້ານຄົນ. ຂ້າພະເຈົ້າຈະພະຍາຍາມອະທິບາຍເລື່ອງນີ້ໂດຍລະອຽດ.

ຂໍຍົກຕົວຢ່າງ ຄື ໃນໂຮງງານໃດ, ໃນນາລວມໃດ ມີ ຜູ້ອອກແຮງງານທີ່ດີເດັ່ນກ່ວາໝູ່; ຜູ້ນັ້ນສະແດງຄວາມ ຕ້ອງການທີ່ຈະມອບບົດຮຽນຂອງຕົນໃຫ້ແກ່ຜູ້ຄົນອື່ນ. ດ້ວຍເຫດນັ້ນ ຜູ້ອອກແຮງງານທີ່ດີເດັ່ນ ຈຶ່ງໄດ້ຮັບຄວາມນິຍົມຊົມຊອບໃນປະເທດເຮົາຫລາຍກວ່າຜູ້ອື່ນ, ພວກເຂົາມີຊື່ສຽງໃນທົ່ວປະເທດ; ບັນດາໜັງສືພິມລົງພິມບົດຄວາມຊົມເຊີຍຜູ້ຄົນນັ້ນ ທີ່ຮັບການເລືອກຕັ້ງໃຫ້ເປັນສະມາຊິກອົງການປົກຄອງລັດຂອງພວກເຮົາ.

ຜູ້ອອກແຮງງານສອງລ້ານກ່ວາຄົນ ຮັບເລືອກຕັ້ງ ໃຫ້ເປັນຜູ້ແທນສະພາໂຊວຽດ; ຍິ່ງໄປກ່ວານັ້ນ ຊາວໂຊວຽດປະມານ ໒໐ ລ້ານຄົນ ໄດ້ຊ່ວຍວຽກການຂອງສະພາໂຊວຽດຢ່າງເອົາຈິງເອົາຈັງ ໂດຍສະໝັກໃຈແລະໂດຍບໍ່ຮັບຄ່າຈ້າງແຮງງານ; ຜູ້ອອກແຮງງານ໙ລ້ານຄົນ ເຮັດວຽກຢູ່ໃນຄະນະ ກຳມະການກວດກາຂອງປະຊາຊົນທີ່ຮັບເລືອກຕັ້ງ ເພື່ອຕິດຕາມເບິ່ງການ

ເຄື່ອນໄຫວຂອງອົງການຈັດຕັ້ງຕ່າງໆ ແລະ ຕໍ່ສູ້ຕ້ານປາກົດ ການອາດຍາສົດ.

ມັນຍັງມີການເຄື່ອນໄຫວ ອີກຮູບໜຶ່ງຂອງຊາວຜູ້ອອກແຮງ ງານ ຄື ເພີ່ມຈັດຕັ້ງການປະຊຸມປຶກສາຫາລືຜົນງານ ປະຈຳວິ ສາຫະກິດອຸດສາຫະກຳແລະກະສິກຳ ເຊິ່ງແມ່ນມີ ກຳມະກອນ ຮອດ ໗໕% ໃນປີ ໑໙໗໔ ຜູ້ເຂົ້າຮ່ວມກອງປະຊຸມ ເຫລົ່ານັ້ນ ໄດ້ສະເໜີຂໍ້ດັດປັ່ງການຜະລິດ ເຊິ່ງໃນນັ້ນຂໍ້ສະເໜີ ໜຶ່ງ ລ້ານກ່ວາຂໍ້ ໄດ້ຮັບການປາກົດເປັນຈິງຂຶ້ນ.

ອັນນັ້ນ ລ້ວນແຕ່ເປັນຕົວຢ່າງ ບາງປະການທີ່ນັ້ນ. ຕາມ ຄວາມຄິດເຫັນຂອງຂ້າພະເຈົ້າ ບັນດາຕົວຢ່າງເຫລົ່ານັ້ນພິສູດ ໃຫ້ເຫັນວ່າ ວຽກການຂອງອົງການຈັດຕັ້ງປະສານສົມທົບກັນ ກັບປະຊາທິປະໄຕຊັ້ນລຸ່ມຢ່າງແໜ້ນແຟ້ນ.

ໃນຊີວິດທາງສັງຄົມອັນກວ້າງຂວາງແລະສັບສົນຍັງມີຄວາມ ຂາດຕົກບົກພ່ອງ ແລະບັນຫາທີ່ຍັງບໍ່ທັນແກ້ໄຂເທື່ອ.ພວກເຮົາ ເຫັນບັນດາບັນຫາເຫລົ່ານັ້ນ; ພັກເຮົາໄດ້ປຸກລະດົມປະຊາຊົນ ໃຫ້ແກ້ໄຂບັນຫາເຫລົ່ານັ້ນ. ເຖິງເປັນແນວນັ້ນກໍຕາມ ຄວາມ ຂາດຕົກບົກພ່ອງ, ຄວາມຫຍຸ້ງຍາກໃດໆ ບໍ່ອາດຈະປິດບັງໄຊ ຊະນະອັນຍິ່ງໃຫຍ່ເປັນປະຫວັດການທີ່ປະຊາຊົນໂຊວຽດ ໄດ້ ຍາດເອົາໃນໄລຍະເວລາພາຍຫລັງມະຫາການປະຕິວັດເດືອນ ຕຸລາພາຍໃຕ້ການນຳພາຂອງພັກກອມມູນິດເລນິນ, ພວກເຮົາ ໄດ້ສ້າງສັງຄົມທີ່ບໍ່ມີການປົກຄອງໂດຍບໍລິສັດພູກຂາດ,ສັງຄົມທີ່ ບໍ່ຢ້ານກົວວິກິດການ, ບໍ່ຮູ້ການຫວ່າງງານແມ່ນຫຍັງ, ບໍ່ມີພະ

ຍາດທາງສັງຄົມທີ່ຮ້າຍກາດ. ພວກເຮົາໄດ້ສ້າງສັງຄົມຂອງຜູ້ຄົນທີ່ມີສິດເທົ່າທຽມກັນຢ່າງກວ້າງຂວາງ, ບໍ່ຮູ້ ການຈຳແນກຊົນຊັ້ນວັນນະຜິວໜັງແລະອື່ນໆ; ພວກເຮົາໄດ້ສ້າງສັງຄົມທີ່ບໍ່ພຽງແຕ່ໄດ້ປະກາດສິດມະນຸດເທົ່ານັ້ນ ຫາກຍັງຮັບປະກັນການໝູນໃຊ້ສິດໃນພາກຕົວຈິງອີກດ້ວຍ.ພວກເຮົາໄດ້ສ້າງສັງຄົມທີ່ໝັ້ນຄົງ ແລະຂະຫຍາຍຕົວຢ່າງວ່ອງໄວ.

ບັນດາສະຫາຍ ! ພວກເຮົາອາດເວົ້າໄດ້ວ່າ ຜູ້ອອກແຮງງານຂອງປະເທດເຮົາ ມີລະດັບຊີວິດການເປັນຢູ່ສູງ ທີ່ບໍ່ເຄີຍມີມາ ໃນປະຫວັດສາດຂອງປະເທດເຮົາ; ມີລະດັບການສຶກສາວັດທະນະທຳທີ່ບໍ່ເຄີຍມີມາກ່ອນ; ມີຄວາມເຊື່ອໝັ້ນ ໃນມື້ອື່ນ, ໃນອະນາຄົດທີ່ສັນຕິ. ອັນນັ້ນເປັນສາເຫດຂອງການທີ່ປວງປະຊາຊົນໂຊວຽດສະໜັບສະໜູນເປັນເອກະພາບກັບນະໂຍບາຍຂອງ ພ.ກ.ສ.ຊ., ເປັນສາເຫດຂອງຄວາມ ສາມັກຄີເປັນເອກະພາບກັນຂອງພັກ ແລະປະຊາຊົນເຊິ່ງໃຜໆກໍ່ບໍ່ສາມາດມ້າງເພໄດ້.

ບັນດາສະຫາຍ ! ຂະບວນວິວັດຂອງໂລກ ຂຶ້ນຢູ່ກັບກຳລັງທີ່ຕ້ານພວກຈັກກະພັດນິຍົມ, ຕ້ານການກົດຂີ່ຂົ່ມເຫັງ, ການໃຊ້ກຳລັງແຮງຕາມລຳພັງໃຈໃນເວທີສາກົນນັບມື້ນັບຫລາຍຍິ່ງຂຶ້ນ. ມີຫລາຍສິ່ງທີ່ຂຶ້ນຢູ່ກັບຄວາມສາມັກຄີກັນ ແລະ ການປະສານງານລະຫວ່າງບັນດາກຳລັງເຫລົ່ານັ້ນ.

ຄວາມສາມັກຄີແບບອ້າຍນ້ອງ ຂອງບັນດາປະເທດສັງຄົມນິຍົມໄດ້ເພີ່ມທະວີຄວາມເຂັ້ມແຂງຂອງແຕ່ລະປະເທດ; ການ

ຮ່ວມມືກັນທາງເສດຖະກິດຢ່າງມີສິດເທົ່າທຽມກັນ ໄດ້ເພີ່ມທະວີຄວາມອາດສາມາດຂອງແຕ່ລະປະເທດ. ການທີ່ບັນດາ ປະເທດສັງຄົມນິຍົມ ມີການຕິດຕໍ່ພົວພັນກັນຢ່າງເລິກເຊິ່ງແລະຂະຫຍາຍຕົວຢູ່ສະເຫມີ ທາງດ້ານພັກ, ລັດ, ໂຮງຈັກໂຮງງານ, ສະຖາບັນວິທະຍາສາດ, ອົງການຈັດຕັ້ງມະຫາຊົນ ນັບ ເປັນລ້ານໆຄົນນັ້ນ ມັນອຳນວຍເງື່ອນໄຂທີ່ອາດຈະເວົ້າໄດ້ເຖິງປາກົດການອັນໃຫ່ມຄືການຮ່ວມສຳພັນແບບອ້າຍນ້ອງ ທີ່ແທ້ຈິງລະຫວ່າງບັນດາປະຊາຊາດຕ່າງທີ່ມີແນວຄິດແລະເປົ້າຫມາຍລວມດຽວກັນ. ການຮ່ວມມືກັນຖານສູ້ຮົບລະຫວ່າງບັນດາພັກມາກ - ເລນິນເປັນພື້ນຖານທີ່ຫມັ້ນຄົງຂອງການຮ່ວມສຳພັນດັ່ງກ່າວນັ້ນ.

ການປະສານງານກັນລະຫວ່າງຊາວກອມມູນິດຂອງໂລກສັງຄົມນິຍົມກັບຊາວກອມມູນິດ ຂອງປະເທດທຶນນິຍົມຕ່າງໆກໍມີບົດບາດອັນຍິ່ງໃຫ່ຍ. ໕ ປີຜ່ານໄປແລ້ວ ທີ່ຜູ້ແທນພັກ ອ້າຍນ້ອງຕ່າງໆຂອງທັງສອງພາກຂອງທະວີບຢູລົບ ໄດ້ວາງ ໂຄງການແຫ່ງການຕໍ່ສູ້ເພື່ອສັນຕິພາບ ແລະຄວາມປອດໄພໃນຢູລົບ. ໃນປະຈຸບັນນີ້ ທຸກຄົນສາມາດເຫັນໄດ້ວ່າ ໂຄງການນັ້ນ ໄດ້ຮັບການປາກົດເປັນຈິງເປັນສ່ວນຫລາຍແລ້ວ.

ພວກເຮົາ, ຊາວກອມມູນິດໂຊວຽດ ກໍ່ເຫມືອນ ກັບຊາວກອມມູນິດຂອງປະເທດສັງຄົມນິຍົມຕ່າງໆ ຕ່າງກໍຮູ້ສຶກມີຄວາມຍິນດີຕໍ່ບັນດາສະຫາຍຂອງປະເທດທຶນນິຍົມ ທີ່ໄດ້ສາມັກຄີ ກັບພວກເຮົາໃນໄລຍະເວລາອັນສັບສົນ ຂອງປະຫວັດສາດ ຂອງພວກເຮົາແລະໃນໄລຍະເວລາອັນເປັນປົກກະຕິແຫ່ງການອອກ

ແຮງງານຢ່າງສັນຕິ. ໃນຂະນະດຽວກັນນັ້ນ ພວກເຮົາ ພວມ
ສາມັກຄີກັບການຕໍ່ສູ້ຂອງອ້າຍນ້ອງທາງຊົນຊັ້ນໃນປະເທດທຶນນິ
ຍົມ, ພວມພະຍາຍາມໃຫ້ການຊ່ວຍເຫລືອທາງຈິດໃຈ ແລະ
ທາງດ້ານການເມືອງແກ່ພວກເຂົາເຈົ້າເຊັ່ນດຽວກັນ.

ການເຄື່ອນໄຫວຢ່າງເອົາຈິງເອົາຈັງ ຂອງຊາວກອມມູນິດ
ໃນປະເທດຢູໂຣບຕາເວັນຕົກຕ່າງໆ, ການຕໍ່ສູ້ ເພື່ອຍາດແຍ່ງ
ຄວາມນິຍົມຂອງມະຫາຊົນ, ເພື່ອໂຮມຊົນຊັ້ນກຳມະກອນແລະ
ບັນດາກຳລັງທີ່ສາມາດຕໍ່ສູ້ຕ້ານອຳນາດການປົກຄອງ ຂອງບໍລິ
ສັດຜູກຂາດ ໃຫ້ເຂົ້າກັນ, ເພື່ອສ້າງລະບອບປະຊາທິປະໄຕທີ່
ແທ້ຈິງ, ເພື່ອສ້າງເງື່ອນໄຂເບື້ອງຕົ້ນ ແກ່ການຂ້າມຜ່ານຂຶ້ນ
ສູ່ລະບອບສັງຄົມນິຍົມ ພວມກໍ່ໃຫ້ເກີດຜົນດີ ຫລາຍປະການ.
ຍ້ອນການຕໍ່ສູ້ຢ່າງສູດກົກສູດປາຍ ແລະບໍ່ຮູ້ອິດຮູ້ເມື່ອຍເພື່ອຜົນ
ປະໂຫຍດຂັ້ນພື້ນຖານຂອງມະຫາຊົນນັ້ນ ພັກກອມມູນິດອີຕາລີ,
ຝະລັ່ງ, ຟິນແລນ ແລະ ໂປຕຸເກັດ, ເດັນມາກ, ສາທາລະ
ນະລັດສະຫະພັນເຢຍລະມັນ ແລະຂອງປະເທດທຶນນິຍົມ ອື່ນໆ
ໄດ້ກາຍມາເປັນກ້ອນກຳລັງທາງການເມືອງ ທີ່ມີອິດທິພົນສູງ.
ຜົນສຳເລັດອັນຍິ່ງໃຫ່ຍຂອງພັກກອມມູນິດອີຕາລີໃນການເລືອກ
ຕັ້ງສະພາລາດຊະດອນໃນຫມໍ່ໆມານີ້, ຜົນສຳເລັດ ເຊິ່ງແມ່ນ
ພວກເຮົາຮູ້ສຶກດີໃຈທີ່ສຸດແລະຊົມເຊີຍ ສະຫາຍອີຕາລີນັ້ນ ມັນ
ໄດ້ພິສູດໃຫ້ເຫັນເຖິງຄວາມຈິງຂອງເລື່ອງດັ່ງກ່າວມາເທິງນັ້ນ.

ອັນເປັນທີ່ສຳຄັນເປັນພິເສດວ່າ ບັນດາຊາວກອມມູນິດສືບຕໍ່
ຍຶດຫມັ້ນໃນຫລັກການປະຕິວັດ, ຍຶດຫມັ້ນໃນທ່າທີທັດສະນະ ທີ່

ວ່າເພິ່ນຈຳຕ້ອງປ່ຽນລະບອບທຶນນິຍົມ ໂດຍລະບອບ ສັງຄົມນິຍົມ ເຖິງແມ່ນວ່າ ໃນການຕໍ່ສູ້ຕ້ານວົງການ ຈັກກະພັດ ປະຕິການນັ້ນ ບັນດາຊາວກອມມູນິດເຫລົ່ານັ້ນ ຮ່ວມສຳພັນ ກັບຂະບວນການປະຊາທິປະໄຕອັນກວ້າງຂວາງ ນັບລວມທັງພວກນັກສັງຄົມ-ປະຊາທິປະໄຕ ແລະຊາວຖືສາດສະຫນາກະລິດກໍຕາມ.

ພັກກອມມູນິດທຸກພັກ ໄດ້ຖືກກຳເນີດມາຈາກ ຂະບວນການກຳມະກອນຂອງປະເທດໃຜລາວ. ດ້ວຍເຫດນັ້ນ ພັກນັ້ນລາຍງານກ່ອນອື່ນຫມົດແກ່ບັນດາຊາວຜູ້ອອກແຮງງານຂອງປະເທດໃຜລາວ ເຊິ່ງແມ່ນພັກນັ້ນ ເປັນຕົວແທນຂອງຊາວຜູ້ອອກແຮງງານແລະຕໍ່ສູ້ເພື່ອຜົນປະໂຫຍດຂອງຊາວຜູ້ອອກແຮງງານເຫຼົານັ້ນ. ອັນນັ້ນແຫລະ ພວມສ້າງພື້ນຖານແຫ່ງຄວາມສາມັກຄີກັນທາງສາກົນຂອງພວກກອມມູນິດ. ດັ່ງທີ່ເລນິນໄດ້ເວົ້າວ່າພວກຂູດຮີດແຕກຕ່າງກັບຊາວຜູ້ອອກແຮງງານຢູ່ບ່ອນວ່າ ພວກ ຂູດຮີດຊ່ວງຊິງກັນ ເພື່ອຍຶດກຳໄລ, ຕະຫລາດຂາຍສິນຄ້າ, ຂົງເຂດຂອງອິດທິພົນ - ກົງກັນຂ້າມນັ້ນ ຊາວຜູ້ອອກແຮງງານບໍ່ມີຂໍ້ຂັດແຍ່ງກັນແນວນັ້ນ, ພວກເຂົາມີວັດຖຸປະສົງອັນດຽວກັນ. ອີກດ້ານຫນຶ່ງ ພັກກອມມູນິດມີອິດທິພົນຫລາຍສ່ຳໃດໃນປະເທດໃຜລາວ ພັກນັ້ນກໍປະກອບສ່ວນທີ່ສຳຄັນສ່ຳນັ້ນ ເຂົ້າໃນການຕໍ່ສູ້ເພື່ອວັດຖຸປະສົງລວມຂອງຊາວກອມມູນິດ **ໃນເວທີສາກົນ** .

ບາງຄັ້ງມີຜູ້ຄົນທີ່ຖາມວ່າ ລັດທິສາກົນກຳມາຊີບ ບໍ່ແມ່ນສິ່ງທີ່ຫລ້າສະໄຫມແລ້ວບໍ່ ແລະວ່າຄຳຮຽກຮ້ອງໃຫ້ປັບປຸງສາຍສຳພັນກັນລະຫວ່າງຊາວກອມມູນິດນານາຊາດນັ້ນມັນບໍ່ຫມາຍເຖິງ

ຄວາມຕັ້ງໃຈທີ່ຈະສ້າງຕັ້ງສູນກາງແນວໃດໜຶ່ງບໍ່ ?

ຄວາມສົງໃສແນວນັ້ນ ເປັນໜ້າແປກປະຫລາດໃຈ. ດັ່ງທີ່ຮູ້ກັນດີແລ້ວວ່າ ບໍ່ມີຜູ້ໃດທີ່ຮຽກຮ້ອງໃຫ້ສ້າງຕັ້ງສູນກາງແນວນັ້ນຈັກເທື່ອ. ຄັນເວົ້າກ່ຽວກັບລັດທິສາກົນກຳມາຊີບ ເຊິ່ງໝາຍເຖິງຄວາມສາມັກຄີກັນຂອງຊົນຊັ້ນກຳມະກອນ, ຊາວກອມມູນິດຂອງປະເທດຕ່າງໆໃນການຕໍ່ສູ້ຂອງປະຊາຊາດຕ່າງໆ ເພື່ອປົດປ່ອຍຊາດແລະຄວາມກ້າວໜ້າທາງສັງຄົມ, ໝາຍເຖິງການຮ່ວມມືກັນໂດຍສະໝັກໃຈລະຫວ່າງບັນດາພັກ ອ້າຍນ້ອງຕາມຫລັກການຂອງການມີສິດເທົ່າທຽມກັນ ແລະ ຄວາມເປັນເອກະລາດຂອງພູກພັກນັ້ນ ພວກເຮົາຢາກເວົ້າວ່າ ຄວາມສາມັກຄີຖານເພື່ອນມິດແນວນີ້ ເຊິ່ງແມ່ນຊາວກອມມູນິດໄດ້ຍົກສູງຄັນທຸງຂອງຄວາມສາມັກຄີກັນນັ້ນ ເປັນໄລຍະເວລາກ່ວາ໑໐໐ປີແລ້ວນັ້ນ ມັນມີຄວາມໝາຍສຳຄັນອັນໃຫ່ຍຫລວງ ໃນໄລຍະເວລາປະຈຸບັນນີ້ເຊັ່ນດຽວກັນ. ມັນໄດ້ເປັນແລະພວມເປັນອາວຸດທີ່ເຂັ້ມແຂງແລະຜ່ານການທົດສອບ ຂອງບັນດາພັກ ກອມມູນິດແລະຂະບວນການກຳມະກອນທົ່ວໆໄປ.

ໃນຂະນະດຽວກັນນັ້ນ ສັດຕູລວມທາງຊົນຊັ້ນຂອງພວກເຮົາຄື ພວກນາຍທຶນສາກົນ ພວມສະແດງຕົວຢ່າງຫລາຍຮູບຫລາຍສີແຫ່ງການປະສານງານທາງສາກົນ ໃນການຕໍ່ສູ້ ຕ້ານບັນດາກຳລັງປະຕິວັດ. ຕາບໃດລະບອບຂູດຮີດຖືກນາບຂູ່, ຕາບໃດບັນດາກຳລັງປົດປ່ອຍຊາດແລະສັງຄົມ, ກຳລັງປະຊາທິປະໄຕຢືນຢູ່ ໃກ້ກັບການເອົາ ຊະນະນັ້ນ ຕາບນັ້ນ ພວກຈັກກະ-

ພັດນິຍົມກະຍັງຊູ້ນຂ້ຽວປະສານສົມທົບ ການຕໍ່ຕ້ານຂອງພວກເຂົາ. ເລື່ອງນີ້ ມີຂໍ້ພິສູດໃຫ້ເຫັນເຖິງຄວາມຈິງ ຫລາຍປະການໃນປະຈຸບັນນີ້ ທັງໃນຢູໂຣບແລະອາຟະລິກາແລະບ່ອນອື່ນໆ.

ໃນປະຈຸບັນນີ້ ເມື່ອຊາວກອມມູນິດ ຂອງປະເທດຢູໂຣບ ຕາເວັນຕົກບາງປະເທດໄດ້ສ້າງເງື່ອນໄຂ ທີ່ອຳນວຍໂອກາດແກ່ພວກເຂົາທີ່ຈະເຂົ້າຮ່ວມລັດຖະບານ ຂອງປະເທດໃຜລາວນັ້ນ ວົງການປະຕິການ ເປັນຕົ້ນແມ່ນໃນກຸ່ມນາໂຕ ໄດ້ເປີດບັ້ນຣົບແຫ່ງການບີບບັງຄັບ, ການແຊກແຊງເຂົ້າໃນກິດຈະການພາຍໃນຂອງປະເທດເຫລົ່ານັ້ນ. ມັນຕ້ອງກ່າວເນັ້ນວ່າ ພວກເຂົາຕໍ່ສູ້ຕ້ານຜົນສະຫລຸບຂອງການເລືອກຕັ້ງ ຢ່າງທົ່ວໄປ. ອັນ ນີ້ຫມາຍຄວາມວ່າ ນັກການເມືອງຂອງພວກຈັກກະພັດ ທີ່ ປ່າວຮ້ອງເຖິງປະຊາທິປະໄຕ ແລະເສລີພາບນັ້ນ ຕາມຄວາມເປັນຈິງ ພວກເຂົາລ້ວນແຕ່ເຫັນດີນຳປະຊາທິປະໄຕແລະເສລີພາບທີ່ບໍ່ແຕະຕ້ອງອຳນາດການປົກຄອງຂອງພວກເຂົາເທົ່ານັ້ນ.

ໃນສະພາບການແນວນັ້ນ, ອັນເປັນທີ່ສຳຄັນວ່າ ໃນກອງປະຊຸມຄັ້ງນີ້ ພວກເຮົາພາກັນສະແດງຄວາມກຽມພ້ອມຂອງບັນດາພັກຂອງພວກເຮົາທີ່ຈະປະກອບສ່ວນຂອງຕົນ ເຂົ້າໃນການຕໍ່ສູ້ເພື່ອບັນລຸເປົ້າຫມາຍທີ່ໄດ້ຮັບການວາງອອກຮ່ວມກັນ.

ພວກເຮົາຄວນເວົ້າເປັນພິເສດ ກ່ຽວກັບອີກດ້ານຫນຶ່ງຂອງການຮ່ວມມືກັນຂອງພວກເຮົາ ຄື ການຮ່ວມມືກັນ ໃນການສະສົມບົດຮຽນປະຕິວັດ, ການເສີມຂະຫຍາຍທິດສະດີ ກອມມູນິດວິທະຍາສາດ ເຊິ່ງແມ່ນມາກ, ອັງແກນ ແລະ ເລນິນ ເປັນ

ຜູ້ແຕ່ງຂຶ້ນ. ພູກພັກເຂົ້າຮ່ວມໃນການເສີມຂະຫຍາຍ ທິດສະດີ ປະຕິວັດ. ທ່ານເລນິນໄດ້ກ່າວເນັ້ນຢ່າງຖືກຕ້ອງວ່າທິດສະດີນັ້ນ ຈະເຕີບໃຫ່ຍຂະຫຍາຍຕົວມາຈາກການສະສົມບົດຮຽນປະຕິວັດ ແລະຄວາມຄິດປະຕິວັດຂອງບັນດາປະເທດຂອງທົ່ວໂລກ" (ວ. ອີ. ເລນິນ, ລົບຊຸດ, ເຫລັ້ມ ໔ກ, ຫນ້າ ໑໑).

ບັນດາສະຫາຍ ! ຂະບວນການກອມມູນິດ ໄດ້ສະສົມ ບົດຮຽນອັນໃຫ່ຍຫລວງທີ່ສຸດ ຄື ບົດຮຽນແຫ່ງການສ້າງ ສັງຄົມນິຍົມໃນສະພາບການທີ່ແຕກຕ່າງກັນ ເຊິ່ງສະແດງໃຫ້ເຫັນເຖິງກົດເກນອັນຕາຍຕົວ ແລະຮູບການຫລາຍສີ; ບົດຮຽນຂອງການປ້ອງກັນຜົນປະໂຫຍດເປັນຕາຍຂອງມະຫາຊົນ, ການລະດົມກຳລັງປະຕິວັດ, ການຕໍ່ສູ້ເພື່ອສັງຄົມນິຍົມໃນປະເທດ ທີ່ມີລະດັບພັດທະນາທີ່ແຕກຕ່າງກັນ. ພວກເຮົາຄວນຄົ້ນຄວ້າ ວິເຄາະ ແລະສະຫລຸບບັນດາບົດຮຽນເຫລົ່ານັ້ນ. ມັນເປັນແນວນັ້ນກໍຍ້ອນວ່າ ໃນບົດຮຽນຂອງພູກພັກອ້າຍນ້ອງ ນອກຈາກຈຸດພິເສດ ທີ່ກ່ຽວຂ້ອງກັບເງື່ອນໄຂສະເພາະຊາດ ຍັງມີຈຸດລວມທີ່ມີຜົນແກ່ຂະບວນການທັງຫມົດຂອງພວກເຮົາ. ນອກຈາກນັ້ນ ຊີວິດ ຕົວຈິງກໍພວມປະກອບສິ່ງໃຫ່ມໆ ເຂົ້າໃນຂະບວນວິວັດຕົວຈິງທາງດ້ານສັງຄົມ, ການເມືອງ, ເສດຖະກິດໃນແຕ່ລະປະເທດແລະໃນທົ່ວໂລກອີກດ້ວຍ.

ໂດຍເອົາໃຈໃສ່ຕໍ່ຄວາມຄິດປະດິດສ້າງ ຂອງບັນດາຊາວກອມມູນິດອ້າຍນ້ອງນັ້ນ ພວກເຮົາຄິດວ່າ ຄວາມຄິດເຫັນ ພູກຢ່າງຕ້ອງຜ່ານການທົດສອບດ້ວຍພາກຕົວຈິງ; ນອກຈາກນັ້ນຍັງ

ມີຄວາມອາດສາມາດທີ່ຈະກວດກາຄວາມເຫັນນັ້ນ ໂດຍຜ່ານການພິຈາລະນາຖານເພື່ອນມິດ, ການແລກປ່ຽນຄວາມຄິດເຫັນກັນແລະປະສົບການຂອງພັກຕ່າງໆໄປກ່ອນ ການທົດສອບດ້ວຍພາກຕົວຈິງ. ພວກເຮົາຄິດວ່າ ວິທີການແນວນີ້ ເກີດຜົນດີທັງແກ່ທິດສະດີແລະພາກຕົວຈິງອີກດ້ວຍ, ແກ່ພາລະກິດລວມຂອງພວກເຮົາ.

ພວກເຮົາຄິດວ່າ ການພົບປະກັນບາງຄັ້ງເພື່ອແລກປ່ຽນກັນດ້ວຍຂ່າວຄາວ, ເພື່ອແລກປ່ຽນຄວາມຄິດເຫັນກ່ຽວກັບບັນຫາອັນຮີບດ່ວນທາງດ້ານການເມືອງ ກໍຈະໄດ້ກໍ່ໃຫ້ເກີດຜົນດີ ໄດ້ເຊັ່ນດຽວກັນ.

ບັນດາສະຫາຍ ! ບັນດາຊາວກອມມູນິດ ບໍ່ແມ່ນຈຳກັດ ຢູ່ພາຍໃນຂະບວນການກອມມູນິດ. ພວກເຂົາກອມພ້ອມຢູ່ສະເໝີທີ່ຈະຮ່ວມກັນກັບພວກທີ່ຮັກຫອມສັນຕິພາບແລະຜົນປະໂຫຍດ - ຂອງປະຊາຊາດຕ່າງໆ ເອກະສານຂັ້ນສຸດທ້າຍຂອງກອງ ປະຊຸມທົ່ວຢູລົບ ໄດ້ວາງພື້ນຖານທີ່ດີ ແກ່ການຮັບປະກັນສັນຕິພາບແລະຄວາມປອດໄພໃນຢູລົບ. ເພື່ອປະຕິບັດ ເປົ້າໝາຍນີ້ , ເພື່ອເຮັດໃຫ້ການລົດຜ່ອນຄວາມເຄັ່ງຕຶງ ກາຍເປັນຂະບວນວິວັດທີ່ໃຜໆກໍ່ບໍ່ສາມາດກັບຕ່າວປິ້ນໄດ້, ເພື່ອເຮັດສັນຕິພາບໃຫ້ເປັນສິ່ງຖາວອນແລະໝັ້ນຄົງນັ້ນ ການອອກແຮງ ຂອງບັນດາລັດຖະບານບໍ່ເປັນການພຽງພໍ; ມັນຍັງຕ້ອງມີການອອກແຮງຂອງມະຫາຊົນອີກດ້ວຍ.

ມັນຕ້ອງເຮັດໃຫ້ມະຫາຊົນເຂົ້າໃຈວ່າ ຜົນປະໂຫຍດ ເປັນ

ຕາຍຂອງມະຫາຊົນຣຽກຮ້ອງໃຫ້ໄດ້ມີການສະໜັບ ສະໜູນ ຢ່າງເອົາຈິງເອົາຈັງ ຕໍ່ບັນດາການກະທຳທີ່ແນໃສ່ປົບປຸງສັນຕິພາບ, ຄວາມປອດໄພແລະການຮ່ວມມືກັນ. ອັນນັ້ນ - ຕາມຄວາມຄິດເຫັນຂອງພວກເຮົາ - ເປັນໜ້າທີ່ ອັນສຳຄັນກ່ວາໝູ່ໜ້າທີ່ໜຶ່ງຂອງຊາວກອມມູນິດ ພວກເຮົາຄິດວ່າກອງປະຊຸມຄັ້ງນີ້ ອາດແລະຕ້ອງມີບົດບາດທີ່ສຳຄັນໃນພາລະກິດອັນສູງສົ່ງດັ່ງກ່າວມາເທິງນີ້.

ໃນການພົບປະສົນທະນາກັນລະຫວ່າງ ພັກກອມມູນິດ ຢູໂຣບນັ້ນ ມັນເປັນເລື່ອງທຳມະດາວ່າ ເພິ່ນເອົາໃຈໃສ່ ກ່ອນອື່ນໝົດຕໍ່ສະພາບການຢູໂຣບ. ໃນຂະນະດຽວກັນນັ້ນ ບັນຫາ ວ່າດ້ວຍການຕິດຕໍ່ກັນລະຫວ່າງການຕໍ່ສູ້ເພື່ອສັນຕິພາບແລະຄວາມກ້າວໜ້າທາງສັງຄົມໃນຢູໂຣບ ກັບການຕໍ່ສູ້ເພື່ອສັນຕິພາບແລະຄວາມກ້າວໜ້າທາງສັງຄົມໃນພາກພື້ນອື່ນໆ ຂອງໜ່ວຍພິພົບເຮົາ ກໍໄດ້ຮັບການເອົາໃຈໃສ່ຢ່າງຫລາຍ ໃນເອກະສານຂັ້ນສຸດທ້າຍຂອງກອງປະຊຸມຄັ້ງນີ້ ເຊັ່ນດຽວກັນ. ເລື່ອງນີ້ມີລັກສະນະກົດເກນ. ເໝືອນດັ່ງກັບການຄາດຄະເນ ຂອງຜູ້ສ້າງທິດສະດີຂອງພວກເຮົາ ລັດທິສັງຄົມນິຍົມໄດ້ກາຍມາເປັນ ເງື່ອນໄຂຕົວຈິງແລະຄວາມຈຳເປັນອັນຮີບດ່ວນ ແກ່ຄວາມກ້າວໜ້າຂອງມະນຸດຊາດ.

ພວກເຮົາ ຕໍ່ສູ້ເພື່ອສັນຕິພາບແລະຄວາມປອດໄພໃນໜ່ວຍພິພົບຂອງພວກເຮົາ, ຈາກເວທີແຫ່ງນີ້ ພວກເຮົາ ສະແດງຄວາມຊົມເຊີຍຢ່າງອົບອຸ່ນ ຕໍ່ບັນດາຜູ້ຄົນ ທີ່ເຂົ້າຮ່ວມ ໃນຂະ

ບວນການປົດປ່ອຍຊາດ; ພວກເຮົາປະກາດອີກຄັ້ງໃຫມ່ ເຖິງການສະຫນັບສະຫນູນການຕໍ່ສູ້ອັນເປັນທຳ ຂອງພວກເຂົາເພື່ອເສລີພາບ, ເອກະລາດແລະການພັດທະນາ ແບບກ້າວຫນ້າຂອງປະເທດເຫລົ່ານັ້ນ.

ປະຊາຊົນອາຊີ, ອາຟະລິກາ, ອາເມລິກາລາຕິນ ພວມເສີມຂະຫຍາຍການປະກອບສ່ວນຂອງຕົນ ເຂົ້າໃນພາລະ ກິດແຫ່ງສັນຕິພາບແລະຄວາມກ້າວຫນ້າ ນັບມື້ນັບຫລາຍ ຍິ່ງຂຶ້ນ. ລັດທິສັງຄົມນິຍົມ ໄດ້ວາງຮາກຖານອັນເລິກເຊິ່ງ ເຂົ້າໃນປະເທດຕ່າງໆຫລາຍປະເທດ ທີ່ໄດ້ພົ້ນອອກຈາກແອກ ລ່າເມືອງຂຶ້ນຂອງພວກຈັກກະພັດ ແລະໄດ້ກ້າວເຂົ້າສູ່ເສັ້ນທາງ ແຫ່ງການພັດທະນາຢ່າງມີເສລີພາບ ແລະເອກະລາດ. ຂະ ບວນການບໍ່ຮ່ວມກຸ່ມ ກໍໄດ້ມີຖານະບົດບາດທີ່ສຳຄັນໃນຊີວິດທາງສາກົນເຊັ່ນດຽວກັນ.

ເອກະສານຂອງກອງປະຊຸມຄັ້ງນີ້ ທີ່ໄດ້ຮັບຄວາມ ເຫັນ ດີຢ່າງເປັນເອກະສັນກັນ ສະແດງໃຫ້ເຫັນເຖິງຄວາມກຽມພ້ອມຂອງບັນດາຊາວກອມມູນິດ ທີ່ຈະສົ່ງເສີມການສ້າງຕັ້ງລະບຽບການໃຫມ່ທາງດ້ານເສດຖະກິດທີ່ເປັນທຳໃນໂລກ. ການ ຕໍ່ສູ້ເພື່ອສ້າງຕັ້ງການຕິດຕໍ່ພົວພັນກັນທາງດ້ານການເມືອງ ແລະເສດຖະກິດ ແລະການຮ່ວມມືກັນຢ່າງມີສິດ ເທົ່າທຽມກັນ ລະຫວ່າງປະເທດທີ່ຈະເລີນກ້າວຫນ້າກັບປະເທດ ທີ່ເປັນ ເມືອງຂຶ້ນແຕ່ກ່ອນ (ບັນດາປະເທດສັງຄົມນິຍົມ ໄດ້ສ້າງຕັ້ງການພົວພັນກັນແນວນີ້ ຕັ້ງແຕ່ດົນນານແລ້ວ)ກໍເປັນພາກສ່ວນຫນຶ່ງຂອງ

ໜ້າທີ່ສາກົນນິຍົມຂອງບັນດາພັກຂອງພວກເຮົາ.

ບັນດາສະຫາຍ! ຄວາມເຄົາລົບທ່າທີທັດສະນະຂອງຜູ້ເຂົ້າຮ່ວມກອງປະຊຸມ, ບັນຍາກາດປະຊາທິປະໄຕຖານເພື່ອນມິດທີ່ແທ້ຈິງຂອງການພິຈາລະນາບັນຫາຕ່າງໆ, ການແລກປ່ຽນກັນຢ່າງກ້ວາງຂວາງດ້ວຍບົດຮຽນຂອງພັກຕ່າງໆ, ຄວາມເອົາໃຈໃສ່ແບບມີໃຈເພື່ອນມິດຕໍ່ຜົນປະໂຫຍດຂອງຜູ້ຮ່ວມວຽກທັງໝົດເຫລົ່ານັ້ນ ໄດ້ອຳນວຍໂອກາດທີ່ຈະກ້າວເຂົ້າໄປສູ່ ການສະຫລຸບຜົນຢ່າງເປັນເອກະສັນກັນ ກ່ຽວກັບບັນຫາປະຈຸບັນຕ່າງໆທີ່ມີຄວາມໝາຍສຳຄັນອັນໃຫ່ຍຫລວງ ແກ່ປະຊາຊາດຕ່າງໆຂອງຢູໂລບແລະທົ່ວໂລກອີກດ້ວຍ. ພວກເຮົາໄດ້ສາມາດ ແຕ່ງເອກະສານທີ່ສຳຄັນກ່ຽວກັບບັນຫາເຫລົ່ານັ້ນ ເຊິ່ງແມ່ນອີງໃສ່ຫລັກການລັດທິມາກ-ເລນິນ.

ຂ້າພະເຈົ້າຢາກກ່າວເນັ້ນວ່າ ພ.ກ.ສ.ຊ. ຖືເອກະສານສະບັບນີ້ວ່າ ເປັນຂໍ້ຜູກມັດແກ່ພັກເຮົາໃຫ້ດຳເນີນການຕໍ່ສູ້ຢ່າງເອົາຈິງເອົາຈັງແລະສຸດກົກສຸດປາຍ ເພື່ອປະຕິບັດບັນດາເປົ້າໝາຍທີ່ບັນດາຊາວກອມມູນິດຢູໂລບໄດ້ວາງຢ່າງຮ່ວມກັນ.

ພວກເຮົາເຊື່ອໝັ້ນວ່າຜົນສະຫຼຸບຂອງກອງປະຊຸມຄັ້ງນີ້ຂອງພວກເຮົາທີ່ໄດ້ຍົກສູງຄັນທຸງແຫ່ງຄວາມ ສາມັກຄີກັນລະຫວ່າງຊາວກອມມູນິດຢູໂລບ ຈະໄດ້ສົ່ງເສີມ ການຮວມການອອກແຮງຂອງພວກເຮົາ ກາກເສີມຂະຫຍາຍການຕໍ່ສູ້ລວມຂອງພວກເຮົາເພື່ອຜົນປະໂຫຍດອັນພື້ນຖານຂອງຜູ້ອອກແຮງງານເພື່ອປະຊາທິປະໄຕ, ສັງຄົມນິຍົມ, ສັນຕິພາບອັນຖາວອນໃນທະວີບຢູໂລບ.

ຂໍສະແດງຄວາມຂອບໃຈ ຕໍ່ບັນດາສະຫາຍ.

ຄຳປາໄສຢູ່ວັງກະແລມແລັງ ໃນພິທີຮັບເຄື່ອງໝາຍ "ດາວຈອມພົນ" ແລະບັດກຽດຕິຍົດຂອງຄະນະບໍລິຫານງານ ສະພາໂຊວຽດສູງສຸດແຫ່ງສ.ສ.ສ.ຊ.

ວັນທີ ໑໐ ເດືອນພຶດສະພາປີ ໑໙໗໖

ບັນດາສະຫາຍແລະເພື່ອນມິດທີ່ຮັກແພງ !

ມື້ນີ້ຂ້າພະເຈົ້າໄດ້ຮັບຂັ້ນສູງສຸດທາງການທະຫານ ຄື ຈອມພົນແຫ່ງ ສ.ສ.ສ.ຊ. ດ້ວຍຄວາມຮູ້ສຶກ ຕື່ນເຕັ້ນໃຈ ທີ່ສຸດ, ຄວາມຂອບໃຈອັນອົບອຸ່ນ, ຄວາມຮັບຮູ້ໜ້າທີ່ຂອງຕົນທີ່ມີຕໍ່ພັກ, ປິຕຸພູມແລະປວງປະຊາຊົນໂຊວຽດ.

ຂ້າພະເຈົ້າຂໍສະແດງຄວາມຂອບໃຈ ອັນບໍລິສຸດໃຈ ແກ່ສູນກາງພັກ, ກົມການເມືອງ ສູນກາງພັກ, ຄະນະບໍລິຫານງານຂອງສະພາໂຊວຽດສູງສຸດແຫ່ງ ສ.ສ.ສ.ຊ.ທີ່ໄດ້ຕີລາຄາສູງແນວນັ້ນ ຕໍ່ກິດຈະການຂອງຂ້າພະເຈົ້າ ໃນການ ປ້ອງກັນປິຕຸພູມ, ການເສີມຂະຫຍາຍຄວາມເຂັ້ມແຂງ ທາງການປ້ອງກັນຕົວ, ການປັບປຸງຄວາມປອດໄພ ຂອງປະເທດເຮົາແລະສັນຕິພາບຂອງທົ່ວໂລກ.

ຂ້າພະເຈົ້າຄິດວ່າອັນນັ້ນບໍ່ພຽງແຕ່ເປັນການຕີລາຄາສູງ ຕໍ່ການປະກອບສ່ວນຂອງຂ້າພະເຈົ້າເຂົ້າໃນການສູ້ຮົບ ໃນແນວຮົບແຫ່ງມະຫາສົງຄາມປ້ອງກັນປິຕຸພູມເຊິ່ງແມ່ນຂ້າພະເຈົ້າໄດ້

ຜ່ານໄປຕັ້ງແຕ່ວັນເລີ່ມຕົ້ນ ຈົນຮອດວັນສຸດທ້າຍ ຂອງສົງຄາມ ນັ້ນ ທໍ່ນັ້ນ.

ອັນນັ້ນຍັງເປັນການຕີລາຄາສູງ ຕໍ່ວິລະກຳ ຂອງກອງທັບຂອງພວກເຮົາໃນໄລຍະເວລາທີ່ໃຜໆກໍ່ບໍ່ອາດລືມໄດ້, ໃນໄລຍະເວລາ ທີ່ ພວກເຮົາໄດ້ຮັບການເຕົ້າໂຮມກັນ ໂດຍແມ່ນພັກເຮົານຳພາ ໄດ້ພາກັນເສຍສະລະຫມົດກຳລັງແຮງ ຂອງພວກເຮົາ ຈົນຮອດເລືອດເນື້ອ, ແລະ ລົມຫາຍໃຈ ສຸດທ້າຍເພື່ອຕີເອົາຊະນະພວກຟາຊິດຮຸກຮານ, ພວກຍຶດຄອງແລະພວກກົດຂີ່, ເພື່ອຍາດເອົາເສລີພາບແລະເອກະລາດ ແຫ່ງປິຕຸພູມເຮົາ, ເພື່ອປົດປ່ອຍປະຊາຊາດທີ່ຖືກຍຶດຄອງອີກດ້ວຍ.

ຂ້າພະເຈົ້າຄິດວ່າ ອັນນັ້ນບໍ່ພຽງແຕ່ເປັນການຕີລາຄາສູງຕໍ່ກິດຈະການຂອງຂ້າພະເຈົ້າ ເພື່ອຮັບໃຊ້ພັກ, ຮັບໃຊ້ການປັບປຸງການປ້ອງກັນຂອງປະເທດເຮົາທໍ່ນັ້ນ ຫາກຍັງເປັນການ ຕີລາຄາສູງຕໍ່ຄຸນງາມຄວາມດີອັນຍິ່ງໃຫຍ່ ຂອງຊາວໂຊວຽດນັບເປັນລ້ານໆຄົນ ທີ່ໄດ້ທໍລະຫົດອົດທົນອອກແຮງງານ ເພື່ອຟື້ນຟູປະເທດເຮົາທີ່ຖືກພັງທະລາຍໃນແປວໄພ ແຫ່ງສົງຄາມ, ໄດ້ເຮັດໃຫ້ປະເທດເຮົາເຂັ້ມແຂງກ່ວາເກົ່າແລະສວຍງາມ ກ່ວາເກົ່າ, ໄດ້ຮັບປະກັນຄວາມເຂັ້ມແຂງ ທາງດ້ານການປ້ອງກັນຕົວແລະການປ້ອງກັນການອອກແຮງງານຢ່າງສັນຕິ ຂອງປວງປະຊາຊົນເຮົາອີກດ້ວຍ.

ສຸດທ້າຍ, ການມອບຂຸນຈອມພົນແຫ່ງ ສ.ສ.ສ.ຊ.ແກ່ຂ້າພະເຈົ້າບໍ່ເປັນພຽງແຕ່ ການຕີລາຄາສູງ ຕໍ່ການປະກອບສ່ວນ

ຂອງຂ້າພະເຈົ້າທີ່ຮັກຊາດສູງ ທີ່ມີຕ່ຳແຫນ່ງທີ່ຮັບຜິດຊອບຂອງເລຂາທິການໃຫຍ່ສູນກາງພັກເຮົາ ເຂົ້າໃນການປັບປຸງ ສັນຕິພາບແລະຄວາມປອດໄພ ຂອງທົ່ວໂລກຫນັ້ນຫາກຍັງເປັນການຕີລາຄາສູງຕໍ່ການຕໍ່ສູ້ເພື່ອສັນຕິພາບອັນຖາວອນ, ເພື່ອ ການຮ່ວມມືກັນອັນໄດ້ຜົນດີລະຫວ່າງປະເທດຕ່າງໆ, ເພື່ອສັນຕິພາບແລະຄວາມກ້າວຫນ້າ ຂອງປະຊາຊາດຕ່າງໆ ທີ່ພັກ ກອມມູນິດຂອງພວກເຮົາ, ລັດໂຊວຽດຂອງພວກເຮົາ ທີ່ຍຶດຫມັ້ນໃນຄຳສັ່ງສອນອັນສູງສົ່ງຂອງເລນິນ ຜູ້ຫຍິ່ງໃຫຍ່ໄດ້ດຳເນີນຢ່າງສູດກົກສຸດປາຍແລະເຂັ້ມງວດ ເຊິ່ງມີຄວາມຫມາຍອັນໃຫຍ່ຫລວງແກ່ປະເທດເຮົາ, ບັນດາປະເທດສັງຄົມນິຍົມອ້າຍນ້ອງ ແລະບັນດາປະຊາຊາດຕ່າງໆ ຂອງຫນ່ວຍພິພົບເຮົາອີກດ້ວຍ.

ບັນດາສະຫາຍ! ໂດຍໄດ້ຮັບເຄື່ອງຫມາຍ ກຽດຕິຍົດອັນນີ້ຂ້າພະເຈົ້າ ບໍ່ແມ່ນພຽງແຕ່ຮູ້ສຶກ ຂອບອົກ ຂອບໃຈ ອັນໃຫຍ່ຫລວງແລະບໍລິສຸດໃຈຕໍ່ການຕີລາຄາສູງແກ່ກິດຈະການຂອງຂ້າພະເຈົ້າຫນັ້ນ ຫາກຍັງມີຄວາມຮູ້ສຶກຮັບຜິດຊອບຕື່ມອີກ ຍ້ອນວ່າການຕີລາຄາສູງນັ້ນ ພາໃຫ້ຂ້າພະເຈົ້າມີຄວາມຮັບຜິດຊອບເພີ່ມຕື່ມອີກ ໃນການຮັບໃຊ້ຜົນປະໂຫຍດຂັ້ນສູງສຸດຂອງປະຊາຊົນໂຊວຽດ, ຂອງຊາວຜູ້ອອກແຮງງານຂອງປະເທດທັງຫລາຍ, ຂອງຜູ້ຄົນທີ່ຕ້ອງການ ແລະປົກປັກຮັກສາສັນຕິພາບ ໃນຫນ່ວຍພິພົບຂອງພວກເຮົາ.

ຂ້າພະເຈົ້າໄດ້ຮັບເຄື່ອງຫມາຍ ກຽດຕິຍົດອັນນີ້ ໂດຍ ມີຄວາມພາກພູມໃຈອັນຍິ່ງໃຫຍ່ ຕໍ່ກອງທັບອັນມີກຽດສູງ, ຕໍ່ປະ

ຊາຊົນວິລະຊົນໂຊວຽດ, ພັກເລນິນ ຂອງປະຊາຊົນໂຊວຽດ, ປິຕຸພູມໂຊວຽດອັນຍິ່ງໃຫ່ຍຂອງພວກເຮົາ ເຊິ່ງເປັນປ້ອມປັນທີ່ໝັ້ນຄົງແຫ່ງສັນຕິພາບ ແລະຄວາມກ້າວໜ້າໃນທົ່ວໂລກເຊິ່ງໃຜໆກໍ່ບໍ່ສາມາດເອົາຊະນະໄດ້. (ຕົບມືຢ່າງຍືດຍາວ).

ເຫລັ້ມທີ ຝ,

ໜ້າ ໒໐-໒໑

ຄວາມຂອບໃຈຢ່າງບໍລິສຸດໃຈ

ບັນດາຜູ້ນຳຂອງປະເທດສັງຄົມນິຍົມ, ພັກກອມມູນິດ, ລັດຖະບຸລຸດແລະຜູ້ດີເດັ່ນຂອງຂະບວນມະຫາຊົນ ຂອງໂລກ, ອົງການພັກ ໂຊວຽດ,ກຳມາບານກົມໂຊໂມນແລະອື່ນໆ, ຄະນະອອກແຮງງານຂອງວິສາຫະກິດຊຸດສາຫະກຳ,ນາລວມ,ນາລັດ, ສະຖາບັນວິທະຍາສາດໂຮງຮຽນ,ກອງທະຫານ,ພົນລະເມືອງຫລາຍຄົນ, ເພື່ອນມິດສູ້ຮົບ ຕ່າງກໍໄດ້ສົ່ງຄຳອວຍພອນແກ່ຂ້າພະເຈົ້າ ເນື່ອງໃນໂອກາດການຮັບຂັ້ນ ຈອມພົນແຫ່ງ ສ.ສ.ສ.ຊ. ແລະການຮັບ "ດາວຂອງຈອມພົນ".

ຂ້າພະເຈົ້າຄິດວ່າ ການຮັບຂັ້ນຈອມພົນແຫ່ງ ສ.ສ.ສ.ຊ, ການຮັບຄຳອວຍພອນອັນອົບອຸ່ນ ມັນບໍ່ພຽງແຕ່ເປັນການ ຕີລາຄາສູງຕໍ່ການປະກອບສ່ວນຂອງຂ້າພະເຈົ້າ ເຂົ້າໃນການກະທຳສູ້ຮົບຂອງກອງທັບຂອງພວກເຮົາ ໃນແນວຮົບແຫ່ງ ມະຫາສົງຄາມປ້ອງກັນປິຕຸພູມ ແລະໃນການປັບປຸງ ຄວາມສາມາດທາງການປ້ອງກັນຕົວຂອງປະເທດເຮົາ ແລະໃນການ ປັບປຸງສັນຕິພາບແລະຄວາມປອດໄພ ຂອງທົ່ວໂລກຫັ້ນນັ້ນຫາກຍັງເປັນ

ການກິລາຄາສູງ ຕໍ່ຜົນສຳເລັດອັນເປັນປະຫວັດການ ຂອງພັກກອມມູນິດເລນິນແລະລັດໂຊວຽດ ໃນການຕໍ່ສູ້ ເພື່ອສັນຕິພາບອັນຖາວອນເພື່ອເປັນຜົນປະໂຫຍດແກ່ມວນມະນຸດອີກດ້ວຍ; ອັນນັ້ນເປັນການສະແດງຄວາມຂອບໃຈອັນໃຫ່ຍຫລວງ ແກ່ປະຊາຊົນໂຊວຽດທີ່ໄດ້ປະຕິບັດວິລະກຳ ອັນສະງ່າງາມ ເພື່ອຮັບໃຊ້ເສລີພາບແລະເອກະລາດ ແຫ່ງປິຕຸພູມສັງຄົມນິຍົມ ຂອງພວກເຮົາ, ເພື່ອປົດປ່ອຍປະຊາຊາດຕ່າງໆ ທີ່ຖືກພວກຟາຊິດ ຍຶດຄອງ. ປະຊາຊົນໂຊວຽດທີ່ໄດ້ອົດທົນອອກແຮງງານ ແບບຄິດປະດິດສ້າງ ໄດ້ຟື້ນຟູຕົວເມືອງແລະຫມູ່ບ້ານຕ່າງໆ ທີ່ ຖືກສົງຄາມທຳລາຍ, ໄດ້ເຮັດໃຫ້ປິຕຸພູມເຮົາທີ່ເປັນປ້ອມປັນແຫ່ງສັນຕິພາບແລະຄວາມກ້າວຫນ້າໃນຫນ່ວຍພິພົບເຮົາ ໄດ້ກາຍເປັນປະເທດທີ່ສວຍງາມແລະເຂັ້ມແຂງກ່ວາເກົ່າ.

ໂດຍຍຶດຫມັ້ນໃນຄຳສັ່ງສອນຂອງເລນິນຜູ້ຍິ່ງໃຫ່ຍ ພັກກອມມູນິດ, ລັດໂຊວຽດພ້ອມກັບບັນດາປະເທດສັງຄົມນິຍົມ ອ້າຍນ້ອງ, ບັນດາກຳລັງທີ່ກ້າວຫນ້າ ແລະຮັກຫອມສັນຕິພາບຂອງທົ່ວໂລກ ພາກັນສົ່ງເສີມການຂະຫຍາຍ ແລະ ການປັບປຸງມິດຕະພາບຂອງປະຊາຊາດຕ່າງໆ, ການຮ່ວມມືກັນ ອັນໄດ້ຜົນດີເພື່ອເປັນຜົນປະໂຫຍດແກ່ການລົດຜ່ອນຄວາມເຄັ່ງຕຶງທາງສາກົນ, ແກ່ສັນຕິພາບ, ເສລີພາບ ແລະຄວາມກ້າວຫນ້າ. ພັກເຮົາທີ່ເປັນພັກຂອງເລນິນ, ປວງປະຊາຊົນໂຊວຽດ, ກອງທັບອັນມີກຽດສູງຂອງພວກເຮົາຈະໄດ້ຍຶດຫມັ້ນ ໃນອຸດົມຄະຕິ ອັນສູງສົ່ງເຫລົ່ານັ້ນ.

ຂໍສະແດງຄວາມຂອບໃຈຕໍ່ບັນດາທ່ານທີ່ໄດ້ສົ່ງ ຄຳອວຍພອນອັນອົບອຸ່ນຖານເພື່ອນມິດແກ່ຂ້າພະເຈົ້າ ເຊິ່ງເພີ່ມກຳລັງໃຈໃຫ້ຂ້າພະເຈົ້າໃນການເສຍສະລະກຳລັງແຮງແລະເລືອດເນື້ອເພື່ອຮັບໃຊ້ພາລະກິດອັນຍິ່ງໃຫ່ຍ ແຫ່ງການສ້າງສັງຄົມກອມມູນິດໃນປະເທດເຮົາ, ພາລະກິດແຫ່ງສັນຕິພາບ ແລະອະນາຄົດອັນສະຫວ່າງງາມຂອງມວນມະນຸດ.

ລ.ບະເລັດຊະເນັບ

ວັນທີ ໑໔ ເດືອນພຶດສະພາ ປີ ໑໙໗໖
ເຫລັ້ມ ທີ ໖,
ໜ້າ ໔໔-໔໖

ສານເຖິງເລຂາທິການໃຫຍ່
ສູນກາງພັກກອມມູນິດ ຫວຽດນາມ
ສະຫາຍ ເລ ຍວນ

ສະຫາຍເລ ຍວນທີ່ຮັກແພງ !

ຂໍສົ່ງຄຳອວຍພອນແກ່ທ່ານ ເນື່ອງໃນໂອກາດ ການ ຮັບເລືອກຕັ້ງເປັນເລຂາທິການໃຫຍ່ສູນກາງ ພ.ກ.ວ.ທີ່ເປັນຕຳແໜ່ງອັນສູງແລະມີຄວາມຮັບຜິດຊອບ. ຂ້າພະເຈົ້າຢາກອວຍພອນແກ່ທ່ານແລະພ້ອມທັງບັນດາສະຫາຍຫວຽດນາມເນື່ອງໃນໂອກາດກອງປະຊຸມໃຫຍ່ຄັ້ງທີ IV ຂອງຊາວກອມມູນິດຫວຽດນາມ ໄດ້ສົນສຸດຢ່າງໄດ້ຜົນດີ.

ພວກເຮົາໄດ້ຕິດຕາມວຽກງານຂອງກອງປະຊຸມຄັ້ງນີ້ ຢ່າງເອົາໃຈໃສ່ທີ່ສຸດ. ແນ່ນອນວ່າ ກອງປະຊຸມຄັ້ງນີ້ ມີ ຄວາມໝາຍສຳຄັນເປັນປະຫວັດການ. ກອງປະຊຸມຄັ້ງນີ້ພວມເສີມຂະຫຍາຍຜົນງານຂອງໄຊຊະນະອັນສະງ່າງາມ ຂອງປະຊາຊົນຫວຽດນາມ ໃນການຕໍ່ສູ້ເພື່ອເສລີພາບ ແລະເອກະລາດຂອງປິຕຸພູມຕ້ານພວກຈັກກະພັດຮຸກຮານແລະລູກມື; ກອງປະຊຸມຄັ້ງນີ້ກໍຊີ້ໃຫ້ເຫັນເຖິງເສັ້ນທາງທີ່ຖືກຕ້ອງ ຂອງການປະຕິບັດ ຮູດິມ ຣະຕິມາກ-ເລນິນ ແລະຄຳສັ່ງສອນຂອງ ໂຮ ຈິ ມິນ ໃຫ້ປາ

ກົດເປັນຈິງໃນດິນແດນຫວຽດນາມ; ກອງປະຊຸມຄັ້ງນີ້ ກໍໄດ້ໄຂ ສັກກະລາດໃຫມ່ໃນປະເທດຫວຽດນາມ ທີ່ເປັນເອກະພາບກັນ ເຊິ່ງເປັນສັກກະລາດແຫ່ງການກໍ່ສ້າງສັງຄົມນິຍົມ,

ໃນຖານະເປັນຜູ້ຮ່ວມວຽກລວມ, ເປັນເພື່ອນມິດຂອງຊາວກອມມູນິດຫວຽດນາມ, ພວກເຮົາຂໍກ່າວເນັ້ນວ່າ ພັກເຮົາຈະບໍ່ຢ້ານກົວຫຍັງທີ່ຈະອອກແຮງເສຍສະລະ ເພື່ອເຮັດໃຫ້ມິດຕະພາບໂຊວຽດ-ຫວຽດນາມທີ່ຜ່ານການທົດສອບ ຫລາຍປະການເຕີບໃຫຍ່ຂະຫຍາຍຕົວ ນັບມື້ນັບຫລາຍຍິ່ງຂຶ້ນເພື່ອເປັນຜົນປະໂຫຍດແກ່ປະຊາຊົນຂອງທັງສອງປະເທດຂອງພວກເຮົາ, ແກ່ການປັບປຸງຄວາມສາມັກຄີເປັນເອກະພາບກັນ ຂອງບັນດາປະເທດສັງຄົມນິຍົມ ແລະບັນດາກຳລັງປະຕິວັດແຫ່ງຍຸກສະໄຫມ.

ຂໍສະແດງຄວາມນັບຖືແບບກອມມູນິດ

ລ.ບະເລັດຊະເນັບ

ວັນທີ ໒໖ ເດືອນທັນວາ ປີ ໑໙໗໖
ຫລົມ ທີ ໖,
ໜ້າ ໒໕໑

ຈົດໝາຍເຖິງບັນນາທິການໜັງສືພິມ "ປະລາວະດາ"

ເນື່ອງໃນການສະເຫລີມສະຫລອງວັນເກີດ ກ໐ ປີຂອງຂ້າພະເຈົ້າ, ອົງການພັກ, ໂຊວຽດ, ອົງການຈັດຕັ້ງມະຫາຊົນ, ສາທາລະນະລັດຕ່າງໆ, ແຂວງຕ່າງໆ,ຄະນະອອກແຮງງານ, ຜູ້ນຳປະເທດສັງຄົມນິຍົມອ້າຍນ້ອງ, ຜູ້ນຳພັກກອມມູນິດ-ກຳມະກອນ, ລັດຖະບຸລຸດ, ພົນລະເມືອງຂອງສ.ສ.ສ.ຊ.ແລະຕ່າງປະເທດພວມສົ່ງຄຳອວຍພອນອັນອົບອຸ່ນ ໄປຍັງສູນກາງ ພ.ກ.ສ.ຊ, ໜັງສືພິມ "ປະລາວະດາ", ໜັງສືພິມອື່ນໆ, ວາລະສານຕ່າງຕ່າງ, ສະຖານີໂທລະພາບແລະວິທະຍຸ, ແຕ່ເປັນໜ້າເສຍດາຍວ່າ ຂ້າພະເຈົ້າບໍ່ມີຄວາມອາດສາມາດ ທີ່ຈະຕອບ ຈົດໝາຍ, ສານໂທລະເລກທຸກສະບັບໄດ້. ດ້ວຍເຫດນັ້ນ ໂດຍຜ່ານໜັງສືພິມ "ປະລາວະດາ" ຂ້າພະເຈົ້າ ຢາກສະແດງຄວາມຂອບໃຈຕໍ່ບັນດາຜູ້ຄົນທີ່ໄດ້ສົ່ງຄຳອວຍພອນ ແກ່ຂ້າພະເຈົ້າໃນເວລານີ້.

ຂ້າພະເຈົ້າຮູ້ສຶກມີຄວາມຕື່ນເຕັ້ນໃຈທີ່ສຸດ ຕໍ່ຄຳອວຍພອນຂອງບັນດາສະຫາຍທີ່ຂ້າພະເຈົ້າຮູ້ຈັກກັນ ຫລືບໍ່ຮູ້ຈັກກັນ; ຂ້າ

ພະເຈົ້າພ້ອມກັບບັນດາສະຫາຍເຫຼົ່ານັ້ນ ໄດ້ຜ່ານ ຍາມເສິກ ເປັນເວລາ ໔ ປີອັນຍາວນານຢ່າງຄຽງບ່າຄຽງໄຫລ່ກັນ, ໄດ້ເຮັດວຽກ ໃນແນວຮົບ ແຫ່ງ ການກໍ່ສ້າງ ພັກ, ໂຊວຽດ ແລະທາງດ້ານເສດຖະກິດຮ່ວມກັນ.

ບັນດາຈົດໝາຍທີ່ມາຈາກຄະນະອອກແຮງງານ ຂອງໂຮງຈັກໂຮງງານ, ວິສາຫະກິດກໍ່ສ້າງແລະຄົມມະນາຄົມ ຂົນສົ່ງ, ນາລັດ, ນາລວມ, ສຳນັກງານຕ່າງ, ໂຮງຮຽນ, ກອງທະຫານຕ່າງໆ ທັງໝົດເຫຼົ່ານັ້ນ ມີຄຸນຄ່າສູງທີ່ສຸດ. ອັນສຳຄັນກ່ວາໝູ່ໃນຈົດໝາຍເຫຼົ່ານັ້ນ ຄື: ພວກເຂົາເຫັນດີຢ່າງສຸດອົກສຸດໃຈ ແລະສະໜັບສະໜູນທິດທາງຂອງພັກ, ສະໜັບສະໜູນບັນດາມະຕິຂອງກອງປະຊຸມໃຫ່ຍຄັ້ງທີ XXV ຂອງພັກເຊິ່ງໝາຍເຖິງໂຄງການດຳເນີນງານຂອງພັກ, ປວງປະຊາຊົນໃນໄລຍະຂັ້ນນີ້ຂອງການສ້າງລະບອບກອມມູນິດ. ອັນນັ້ນໄດ້ເພີ່ມກຳລັງໃຈ, ເພີ່ມກຳລັງແຮງ, ເພີ່ມຄວາມດຸໝັ່ນພາກພຽນໃນການອອກແຮງງານຕື່ມ.

ການສະໜັບສະໜູນຂອງຊາວ ຜູ້ອອກແຮງງານ ໝາຍຄວາມວ່າພວກເຮົາຕ້ອງເພີ່ມທະວີຄວາມຮູ້ສຶກລັບຜິດຊອບຂອງພວກເຮົາໃນການຕີລາຄາຕໍ່ຜົນສຳເລັດ, ການສຳຫລວດຂອບເຂດຂອງບັນດາບັນຫາທີ່ຕ້ອງແກ້ໄຂ, ການເອົາໃຈໃສ່ ຜົນປະໂຫຍດຂັ້ນພື້ນຖານແລະຄວາມຮຽກຮ້ອງຕ້ອງການ ຂອງຊາວຜູ້ອອກແຮງງານນັບເປັນລ້ານໆຄົນ ໃນເມື່ອພວກເຮົາພວມວາງແຜນການ ຫລືລົງມືປະຕິບັດການກະທຳໃດໜຶ່ງຂອງພວກເຮົາ.

ຂ້າພະເຈົ້າກໍສະແດງຄວາມຂອບໃຈ ຢ່າງສຸດອົກສຸດໃຈແກ່ບັນດາເພື່ອນມິດທັງຫລາຍຂອງບັນດາປະເທດສັງຄົມນິຍົມອ້າຍນ້ອງ, ບັນດາສະຫາຍກອມມູນິດ ຈາກພາກພື້ນຕ່າງໆ ຂອງໂລກ, ບັນດານັກຮົບທີ່ຕໍ່ສູ້ຕ້ານການກົດຂີ່ແລະການຮຸກຮານຂອງພວກຈັກກະພັດ, ຕໍ່ສູ້ເພື່ອເສລີພາບ, ເອກະລາດ ແລະຄວາມກ້າວຫນ້າ, ເພື່ອສັນຕິພາບອັນຖາວອນໃນໂລກຂອງພວກເຮົາ. ຂ້າພະເຈົ້າບໍ່ອາດຈະບໍ່ຖືວ່າ ຄຳອວຍພອນເຫລົ່ານັ້ນ ຫມາຍເຖິງຄວາມເຫັນດີນຳ ແລະຄວາມສະຫນັບສະຫນູນກິດຈະການຕ່າງປະເທດຂອງພັກແລະລັດໂຊວຽດຂອງພວກເຮົາ.

ຂ້າພະເຈົ້າຖືຫນ້າທີ່ ທີ່ຫນ້າພໍໃຈຂອງຂ້າພະເຈົ້າ ທີ່ຈະສະແດງຄວາມຂອບໃຈຢ່າງບໍລິສຸດໃຈແກ່ບັນດາຜູ້ນຳຕ່າງປະເທດ, ນັກການເມືອງ ຕ່າງປະເທດ ທີ່ໄດ້ສົ່ງສານອວຍພອນເນື່ອງໃນໂອກາດວັນເກີດຄົບຮອບ ໗໐ ປີ ຂອງຂ້າພະເຈົ້າ. ຂ້າພະເຈົ້າຄິດວ່າ ມັນເປັນການເຫມາະສົມ ແກ່ກາລະເທສະທີ່ຢາກກ່າວເນັ້ນວ່າ ໃນໄລຍະເວລາຕໍ່ໄປສະຫະພາບໂຊວຽດເຊິ່ງແມ່ນທົ່ວໂລກໄດ້ຕີລາຄາສູງ ຕໍ່ການປະກອບສ່ວນທີ່ສຳຄັນແບບຕົວຈິງເຂົ້າໃນການສ້າງສັນຕິພາບຂອງໂລກ ໂດຍອີງໃສ່ຫລັກການ ການຢູ່ຮ່ວມກັນຢ່າງສັນຕິ ຈະໄດ້ເຮັດທຸກສິ່ງ ທຸກຢ່າງເທົ່າທີ່ຈະເຮັດໄດ້ ເພື່ອເຮັດໃຫ້ການລົດຜ່ອນຄວາມເຄັ່ງຕຶງກາຍເປັນຂະບວນວິວັດຢ່າງກວ້າງຂວາງທີ່ສຸດ ແລະຟື້ນຄືນບໍ່ໄດ້ເດັດຂາດ.

ຄວາມຮັບຮູ້ວ່າ ວຽກງານຂອງຊາວກອມມູນິດທີ່ເຊື່ອມໂຍງ

ກັບວຽກງານຂອງບັນດາເພື່ອນມິດ ແລະຜູ້ຮ່ວມຊາດເປັນການຊ່ວຍເຮັດໃຫ້ອຸດົມຄະຕິ, ວັດຖຸປະສົງຂອງຄັນຫຼວງ ແຫ່ງມະຫາປະຕິວັດສັງຄົມນິຍົມເດືອນຕຸລາ ປາກົດເປັນຈິງຂຶ້ນນັ້ນ ມັນກໍໃຫ້ເກີດຄວາມດີອົກດີໃຈທີ່ສູງກວ່າຫມູ່ ແກ່ຊາວກອມມູນິດ ໂຊວຽດ. ດ້ວຍເຫດນັ້ນ ໃນໄລຍະເວລາ ເມື່ອ ຂ້າພະເຈົ້າໄດ້ຮັບ"ດາວຄຳແຫ່ງວິລະຊົນ", ເມື່ອເພິ່ນໄດ້ປະກາດ ຄຳອວຍພອນຂອງສູນກາງພັກກອມມູນິດ ແຫ່ງ ສ.ສ.ສ.ຊ, ຂອງຄະນະບໍລິຫານງານຂອງສະພາໂຊວຽດສູງສຸດແຫ່ງ ສ.ສ.ສ.ຊ, ຂອງລັດຖະບານໂຊວຽດນັ້ນ ຂ້າພະເຈົ້າຢາກກ່າວເນັ້ນຕື່ມອີກເທື່ອຫນຶ່ງວ່າ ຕະຫລອດຊີວິດຂອງຂ້າພະເຈົ້າຕິດແຫນ້ນກັບພັກເຮົາຢາງແບ່ງອອກບໍ່ໄດ້, ຂ້າພະເຈົ້າຮູ້ບຸນຄຸນຂອງພັກ, ຂ້າພະເຈົ້າໄດ້ອຸທິດແລະຈະໄດ້ອຸທິດຄວາມຮູ້, ບົດຮຽນ,ຫມົດກຳລັງແຮງຂອງຂ້າພະເຈົ້າໃຫ້ແກ່ພັກເຮົາ.ດ້ວຍເຫດນັ້ນ ຂ້າພະເຈົ້າຄິດວ່າ ຄຳອວຍພອນແກ່ຂ້າພະເຈົ້າ ກໍເປັນຄຳອວຍພອນແກ່ພັກຂອງພວກເຮົາ, ພັກທີ່ແມ່ນເລນິນເປັນຜູ້ສ້າງຕັ້ງ,ພັກທີ່ເດີນຕາມເສັ້ນທາງຂອງເລນິນ, ພັກທີ່ນຳພາການສ້າງສັງຄົມແບບກອມມູນິດໂດຍຖືກຕ້ອງຕາມຄຳສັ່ງສອນຂອງເລນິນ.

ລ.ບະເລັດຊະເນັບ

ວັນທີ ໒໑ ເດືອນທັນວາປີ ໑໙໗໖
ເຫລັ້ມ ທີ ໖,
ຫນ້າ ໔໖໗-໔໖໘

ສານເຖິງກອງປະຊຸມຂອງບັນດາ ກຳລັງທີ່ຣັກຫອມສັນຕິພາບທົ່ວໂລກ

ຂໍສະແດງຄວາມນັບຖືຢ່າງບໍລິສຸດໃຈ ຕໍ່ບັນດາຜູ້ແທນທີ່ເຂົ້າຣ່ວມກອງປະຊຸມຂອງບັນດາກຳລັງທີ່ຣັກຫອມສັນຕິພາບທົ່ວໂລກ ເຊິ່ງເປັນຕົວແທນຂອງພັກແລະຂະບວນການຕ່າງໆ, ຕົວແທນມະຫາຊົນຂອງປະເທດແລະທະວີບຕ່າງໆ. ຂ້າພະເຈົ້າຄິດວ່າ ກອງປະຊຸມອັນກວ້າງຂວາງແນວນີ້ ທີ່ສືບທອດມູນເຊື້ອ ຂອງກອງປະຊຸມຂອງບັນດາກຳລັງທີ່ຣັກຫອມສັນຕິພາບທົ່ວໂລກໃນປີ ໑໙໗໓ ນັ້ນ ຈະສົ່ງເສີມການປັບປຸງຄວາມເຂົ້າໃຈ ເຊິ່ງ ກັນແລະກັນ, ຄວາມໄວ້ເນື້ອເຊື່ອໃຈກັນ ແລະການຣ່ວມມືກັນລະຫວ່າງບັນດາກຳລັງມະຫາຊົນແລະກຳລັງທາງການເມືອງ ທີ່ເຂົ້າຣ່ວມໃນການຕໍ່ສູ້ເພື່ອສັນຕິພາບ, ການລົດຜ່ອນຄວາມເຄັ່ງຕຶງ, ຄວາມປອດໄພທາງສາກົນ ແລະເອກະລາດແຫ່ງຊາດ.

ສິ່ງເປັນທີ່ໜ້າພໍໃຈຄື: ກອງປະຊຸມຄັ້ງນີ້ ຈະໄດ້ພິຈາລະນາບັນດາບັນຫາວ່າດ້ວຍການປັບປຸງ ການລົດຜ່ອນຄວາມເຄັ່ງຕຶງຂອງສະພາບການທາງສາກົນລົງ. ການລົດຜ່ອນຄວາມເຄັ່ງຕຶງແລະການເສີມຂະຫຍາຍຄວາມອາດສາມາດ ທີ່ ຈະແກ້ໄຂບັນຫາທີ່ມີຄວາມໝາຍສຳຄັນແກ່ມວນມະນຸດດ້ວຍການໃຊ້ການ

ຮ່ວມມືກັນລະຫວ່າງບັນດາປະຊາຊາດ ແລະປະເທດທັງຫລາຍ ເປັນເຄື່ອງມືບໍ່ແມ່ນດ້ວຍການປະທະກັນຫຼືການປະເຊີນໜ້າກັນ.

ບັນຍາກາດໃຫມ່ທີ່ພວມໄດ້ຮັບການສ້າງຕັ້ງຢູ່ໃນໂລກ ປະຈຸບັນນີ້ໄດ້ອຳນວຍເງື່ອນໄຂແກ່ການບັນລຸເປົ້າຫມາຍດັ່ງກ່າວມາເຖິງນັ້ນ. ໃນໄລຍະເວລາບາງປີທີ່ຜ່ານມາ ເພິ່ນໄດ້ບັນລຸຜົນສຳເລັດບາງປະການໃນການລົບລ້າງ ກໍລະນີພິພາດທາງການທະຫານໃນພາກພື້ນຕ່າງໆຂອງໂລກ. ຜົນສຳເລັດຂອງກອງປະຊຸມເຮັນຊິນກີຂອງທົວປູລົບ ໄດ້ສ້າງເງື່ອນໄຂທີ່ດີ ສຳລັບການປັບປຸງສັນຕິພາບ. ເພິ່ນໄດ້ເລີ່ມໃຊ້ຫລັກການ ການຢູ່ຮ່ວມກັນໂດຍສັນຕິໃນພຶດຕິກຳຕົວຈິງທາງສາກົນໃຫ້ຫລາຍຍິ່ງຂຶ້ນ.

ເຖິງເປັນແນວນັ້ນກໍຕາມ, ການແຂ່ງຂັນສ້າງອາວຸດ ກໍຍັງດຳເນີນຕໍ່ໄປແລະຍິ່ງໄປກ່ວານັ້ນ ຍັງມີການຂະຫຍາຍຕົວແລະຍັງມີການນາບຂູ່ຂະບວນວິວັດແຫ່ງການລົດຜ່ອນຄວາມເຄັ່ງຕຶງຢູ່. ພວກເຮົາບໍ່ລືມກ່ຽວກັບເລື່ອງນີ້ຈັກເທື່ອ. ບັນຫາຢູ່ບ່ອນວ່າການແຂ່ງຂັນສ້າງອາວຸດຈະນາບຂູ່ ການກ້າວຂຶ້ນ ຂອງມະນຸດຕາມເສັ້ນທາງແຫ່ງຄວາມກ້າວຫນ້າ; ຫລືວ່າບັນດາປະຊາຊາດຕ້ອງຮ່ວມກັນອອກແຮງ ເພື່ອສະກັດກັ້ນການແຂ່ງຂັນ ສ້າງອາວຸດແລະຍຸດຕິການກະກຽມທາງວັດຖຸເພື່ອກໍ່ສົງຄາມ. ໂດຍ ບໍ່ເວົ້າເຖິງໄພອັນຕະລາຍໂດຍກົງ ຂອງຄວາມຫາຍະນະນິວຄະເລັຍນັ້ນ ການແຂ່ງຂັນສ້າງອາວຸດ ເປັນການຈ່າຍເສຍສົມບັດທາງວັດຖຸແລະຈິດໃຈຂອງມະນຸດຊາດ ຢ່າງບໍ່ມີຜົນໃດ, ການຈ່າຍເສຍສົມບັດທີ່ມະນຸດຊາດຕ້ອງການໃຫ້ໄດ້ມີ ເພື່ອຕໍ່ສູ້ຕ້ານ

ຄວາມອຶດຢາກ, ພາຍາດ, ຄວາມບໍ່ຮູ້ຫນັງສື, ເພື່ອແກ້ໄຂບັນຫາທາງດ້ານສັງຄົມ, ພະລັງໄຟຟ້າ, ວັດຖຸດິບ, ທຳມະຊາດ.

ໃນກອງປະຊຸມໃຫ່ຍຄັ້ງທີ XXV ຂອງພັກກອມມູນິດແຫ່ງສະຫະພາບໂຊວຽດ ໄດ້ວາງໂຄງການດຳເນີນງານ ແຫ່ງການຕໍ່ສູ້ເພື່ອສັນຕິພາບ, ການຮ່ວມມືກັນທາງສາກົນ, ເພື່ອເສລີພາບ, ເອກະລາດຂອງບັນດາປະຊາຊາດຕໍ່ໄປ. ພັກກອມມູນິດ ຂອງພວກເຮົາໄດ້ປະຕິບັດໂຄງການນີ້ໃຫ້ປາກົດເປັນຈິງຢ່າງເນື່ອງນິດລຽນຕິດ. ໃນເມື່ອພວກເຮົາສະເຫນີຂໍ້ສະເຫນີໃຫ່ມໆກ່ຽວກັບການປູ່ກປຸງສັນຕິພາບນັ້ນ ພວກເຮົາກໍໄດ້ເອົາໃຈໃສ່ ເສີມຄວນແກ່ຂໍ້ສະເຫນີຕົວຈິງອື່ນໆທີ່ແນໃສ່ບັນລຸເປົ້າຫມາຍນີ້ເຊັ່ນດຽວກັນ. ພັກເຮົາ, ປະຊາຊົນໂຊວຽດ ພ້ອມກັບບັນດາ ປະຊາຊາດຂອງໂລກ ພວມຕໍ່ສູ້ແລະຈະໄດ້ຕໍ່ສູ້ຢ່າງບໍ່ຮູ້ອິດຮູ້ເມື່ອຍເພື່ອສະກັດກັ້ນການເພີ່ມທະວີສ້າງອາວຸດ, ເພື່ອຮັບປະກັນສິດສະເຫນີພາບແລະເອກະລາດຂອງບັນດາປະຊາຊາດ, ເພື່ອລົບລ້າງບໍ່ເກີດລັດທິລ່າເມືອງຂຶ້ນແລະລັດທິຈຳແນກເຊື້ອຊາດ,ການໃຊ້ຜະເດັດການແບບອ້າຍດຽວ ແລະການຂູດຮີດທາງສາກົນ.

ສິ່ງທີ່ສຳຄັນໃນສູ່ມນີ້ວ່າ ມັນຕ້ອງປະຕິບັດ ການກະທຳ , ຕ້ອງຊອກຫາວິທີການແກ້ໄຂທີ່ຈະນຳໄປສູ່ການປົດອາວຸດ ທີ່ແທ້ຈິງ, ການເຮັດໃຫ້ການລົດຜ່ອນຄວາມເຄັ່ງຕຶງປາກົດເປັນຈິງ, ການເຮັດໃຫ້ການຜ່ອນຄາຍ ກາຍເປັນຂະບວນວິວັດ ທີ່ປ່ຽນຄືນບໍ່ໄດ້ຢ່າງແທ້ຈິງ. ບັນດາພັກການເມືອງ, ກຳມະບານ,ອົງການຈັດຕັ້ງຜູ້ຍິງ, ຊາວຫນຸ່ມ, ສະພາຜູ້ແທນລາດຊະດອນ ,

ນັກປາດ, ນັກວັດທະນະທຳ, ບັນດາກຳລັງ ທີ່ຮັກຫອມສັນຕິພາບຂອງມະຫາຊົນ ຄື ຜູ້ຄົນທີ່ເຂົ້າຮ່ວມຢ່າງເອົາຈິງເອົາຈັງໃນການຕໍ່ສູ້ຕ້ານໄພອັນຕະລາຍຂອງກໍລະນີພິພາດ ອະຫນາດໂລກຄັ້ງໃຫ່ມ, ບັນດາຜູ້ຄົນທີ່ສ້າງສັນຕິພາບອັນຖາວອນ ແລະປົກປັກຮັກສາຄວາມປອດໄພ ຜູ້ຄົນເຫລົ່ານັ້ນ ພາກັນ ສາມາດເຮັດໄດ້ຫລາຍສິ່ງຫລາຍຢ່າງໃນດ້ານນີ້, ມັນອາດເວົ້າໄດ້ວ່າໃນສູ່ມນີ້ມັນໄດ້ໄຂຄວາມອາດສາມາດໃຫ່ມໆ ທີ່ກ້ວາງຂວາງໃຫ້ແກ່ການເຄື່ອນໄຫວຂອງບັນດາຜູ້ຄົນເຫລົ່ານັ້ນ. ບັນຮົບໃນຂອບເຂດຂອງທົ່ວໂລກ ເພື່ອເປັນການສະຫນັບສະຫນູນ "ຄຳຮຽກຮ້ອງຊະຕົກໂຮມ" ທີ່ຮຽກຮ້ອງໃຫ້ສະກັດກັ້ນການແຂ່ງຂັນສ້າງອາວຸດ, ໃຫ້ປົດອາວຸດ ເຊິ່ງແມ່ນພົນລະເມືອງ໔໐໐ລ້ານຄົນຂອງປະເທດຕ່າງໆ ໄດ້ລົງນາມເຊັນໃນເອກະສານນັ້ນ ກໍພິສູດໃຫ້ເຫັນເຖິງຄວາມຕັ້ງອົກຕັ້ງໃຈ ຂອງບັນດາປະຊາຊາດທີ່ຈະປົກປ້ອງສັນຕິພາບໃຫ້ຫມັ້ນຄົງຍິ່ງຂຶ້ນ.

ສິ່ງສຳຄັນກໍຄືມະຫາຊົນຕ້ອງຕິດຕາມເບິ່ງເຫດການໃນໂລກຢ່າງໃກ້ຊິດ, ຕ້ອງຕ້ານຢັນຢ່າງທັນເວລາ ຕໍ່ການກະທຳຂອງພວກນິຍົມສົງຄາມ, ພວກຈັກກະພັດທີ່ກ້າທ້າທາຍອະນາຄົດອັນສົດໃສຂອງມະນຸດຊາດເພື່ອເປັນຜົນປະໂຫຍດທີ່ເຫັນແກ່ຕົວເອງ.

ຂໍອວຍພອນບັນດາເພື່ອນມິດທີ່ຮັກແພງຈົ່ງໄດ້ຮັບຜົນສຳເລັດອັນໃຫຍ່ຫລວງໃຫມ່ໆໃນກິດຈະການອັນສູງສົ່ງຂອງພວກທ່ານ.

ວັນທີ ໑໔ ເດືອນມັງກອນປີ ໑໙໗໗. ລ.ບະເລັດຊະເນັບ

ເຫລັ້ມທີ ໕, ໜ້າ ໔໗໙-໔໘໑

ກຳມະບານໂຊວຽດເປັນກຳລັງໜຶ່ງ
ແຫ່ງສັງຄົມໂຊວຽດທີ່ມີອິດທິພົນ ສູງ,
ຄຳປາໄສ ທີ່ໄດ້ກ່າວໃນກອງປະຊຸມໃຫຍ່ຄັ້ງທີ XVI ຂອງ
ສະຫະພັນກຳມະບານ ແຫ່ງສ.ສ.ສ.ຊ.
ໃນວັນທີ ໒໑ ເດືອນມີນາປີ໑໙໗໗

ສະຫາຍທີ່ຮັກແພງ !

ແຂກທີ່ເຄົາລົບ !

ຂ້າພະເຈົ້າໄດ້ຖືກມອບໜ້າທີ່ອັນມີກຽດ ແລະໜ້າຍິນດີທີ່ຈະສົ່ງຄວາມອວຍພອນຢ່າງບໍລິສຸດໃຈ ມາຍັງບັນດາ ຜູ້ແທນກອງປະຊຸມໃຫຍ່ຄັ້ງທີ XVI ຂອງສະຫະພັນກຳມະບານ ໃນນາມຂອງສູນກາງພັກກອມມູນິດ ແຫ່ງສະຫະພາບໂຊວຽດ, ຄະນະບໍລິຫານງານສູນກາງພັກ, ຄະນະເລຂາສູນກາງພັກ ແລະລັດຖະບານໂຊວຽດ.(ຕົບມື.)

ຕົວແທນຂອງກ້ອນກຳລັງອັນຍິ່ງໃຫຍ່ ແຫ່ງການ ອອກແຮງງານທີ່ໄດ້ມາຫ້ອງປະຊຸມນີ້ ຈາກໂຮງຈັກໂຮງງານ, ສູນກາງກໍ່ສ້າງ, ທົ່ງນາ, ໂຮງລ້ຽງສັດ, ສຳນັກງານຕ່າງໆ, ສະຖາບັນວິດທະຍາສາດແລະສິລະປະ, ຈາກສາທາລະນະລັດ ແລະແຂວງຕ່າງໆແຫ່ງປະເທດບັນດາຊົນຊາດຂອງພວກເຮົາໄດ້ພາກັນນຳເອົາຄວາມຄິດຄວາມເຫັນ, ບົດຮຽນຂອງພວກເຂົາໃຫ້ເຂົ້າກັນໃນຫ້ອງນີ້.

ໃນທີ່ນີ້ ມີຕົວແທນຂອງຊົນຊັ້ນກຳມະກອນ ອັນເປັນວິລະຊົນ ເຊິ່ງແມ່ນການອອກແຮງງານ ໄດ້ວາງພື້ນຖານ ໃຫ້ແກ່ຄວາມວັດທະນາຖາວອນ ແລະຄວາມເຂັ້ມແຂງ ຂອງປະເທດເຮົາ ແລະມີແນວຄິດມາກຊິດ-ເລນິນນິດ ທີ່ເປັນດວງດາວ ທີ່ ເຍືອງທາງໃຫ້ແກ່ການກ້າວຂຶ້ນສູ່ຄວາມກ້າວໜ້າທາງສັງຄົມ.(ຕົບມື.)

ໃນທີ່ນີ້ ມີຕົວແທນແຫ່ງກ້ອນກຳລັງນັບເປັນຫລາຍລ້ານ ຄົນຂອງຜູ້ອອກແຮງງານໃນຊົນນະບົດ ເຊິ່ງແມ່ນໄດ້ປະກອບສ່ວນອັນປະເສີດເລີດລ້ຳ ເຂົ້າໃນການປັບປຸງເສດຖະກິດແລະຊີວິດການເປັນຢູ່ຂອງຊາວໂຊວຽດ ເຊິ່ງແມ່ນພັກເຮົາ,ປວງປະຊາຊົນເຮົາໄດ້ຕີລາຄາຢ່າງສູງ.

ພັກເຮົາຖືການຈັດຊວນຊາວນາ ໃຫ້ເຂົ້າຮ່ວມ ໃນຂະບວນການກຳມະບານໃຫ້ກວ້າງຂວາງຍິ່ງຂຶ້ນນັ້ນວ່າ ເປັນບັນຫາ ທີ່ສຳຄັນທາງຫລັກການ. ທ່ານເລນິນໄດ້ຊີ້ແຈງວ່າ "ການປັບປຸງວຽກງານຂອງກຳມະບານ ບໍ່ພຽງແຕ່ໝາຍເຖິງ ການແຜ່ຂະຫຍາຍວຽກງານນັ້ນ ໄປສູ່ກຳມາຊີບໃນຊົນນະບົດເທົ່ານັ້ນຫາກຍັງໝາຍເຖິງການແຜ່ຂະຫຍາຍວຽກງານນັ້ນ ໄປສູ່ຊາວນາຜູ້ອອກແຮງງານອີກດ້ວຍ". (ເລນິນ,ຄົບຊຸດ, ເຫລັ້ມ ໔໔ , ໜ້າ ໑໗໐-໑໗໑). ພວກເຮົາພວມເຮັດໃຫ້ຄຳສັ່ງສອນ ດັ່ງກ່າວຂອງເລນິນປາກົດເປັນຈິງຢູ່ເລື້ອຍໆ. (ຕົບມື.)

ໃນທີ່ນີ້ ມີນັກວິດທະຍາສາດ, ເຕັກນິກ, ສິລະປະ,ວັດທະນະທຳ ເຊິ່ງເປັນຜູ້ທີ່ໄດ້ປະກອບສ່ວນອັນດີເລີດ ເຂົ້າໃນການສ້າງຄວາມສາມາດທາງດ້ານມັນສະໝອງ ແລະວັດທະນະທຳ

ຂອງປະເທດເຮົາ.

ໃນທີ່ນີ້ ມີຊົນຊັ້ນຫນຶ່ງອີກຂອງຊາວຜູ້ອອກແຮງງານ ເຊິ່ງ ພວກເຮົາເອີ້ນວ່າ ເປັນພະນັກງານ; ວຽກງານ ຂອງ ພວກເຫລົ່ານັ້ນ ເປັນສິ່ງທີ່ຈຳເປັນແກ່ທຸກດ້ານຂອງຊີວິດທາງສັງຄົມ.

ຂ້າພະເຈົ້າຢາກຊີ້ແຈງ ດ້ວຍຄວາມດີໃຈວ່າ ໃນທີ່ນີ້ ມີຕົວແທນຂອງແມ່ຍິງຜູ້ເຂົ້າຮ່ວມຂະບວນການກຳມະບານ ເຊິ່ງ ມີຫ້າສິບ ກ່ວາລ້ານຄົນ. (ຕົບມື) ຂ້າພະເຈົ້າຢາກເວົ້າຢ່າງຈິງໃຈວ່າ ພວກເຮົາ-ຜູ້ຊາຍ-ຍັງບໍ່ທັນໄດ້ຊຳລະຫນີ້ແກ່ແມ່ຍິງເທື່ອ. (ຕົບມື); ພວກເຮົາຍັງບໍ່ທັນໄດ້ເຮັດທຸກສິ່ງທີ່ສາມາດເຮັດໄດ້ ເພື່ອປົດປ່ອຍຄວາມຫນັກຫນ່ວງທັງສອງດ້ານ ຄືວຽກການເຮືອນ ແລະວຽກການຜະລິດຂອງແມ່ຍິງລົງເທື່ອ. ດ້ວຍເຫດນັ້ນ ພວກຂ້າພະເຈົ້າ ຕັ້ງຮູ້ບຸນຄຸນແກ່ແມ່, ເມັຍ, ເອື້ອຍນ້ອງທີ່ອອກແຮງງານຢ່າງທໍລະຫົດອົດທົນທີ່ສຸດ. (ຕົບມືຢ່າງຍືດຍາວ)

ໃນຫ້ອງປະຊຸມນີ້ ຍັງມີຊາວຫນຸ່ມຫລາຍຄົນແທ້. ອັນນັ້ນເປັນເລື່ອງທຳມະດາ. ຊາວຫນຸ່ມຫມາຍເຖິງມື້ອື່ນ ຂອງປະເທດເຮົາ, ເປັນລຸ້ນຄົນທີ່ຈະໄດ້ນຳພາສັງຄົມໃນອານາຄົດອັນ ມໍ່ງນີ້. ພວກເຮົາເຊື່ອຫມັ້ນວ່າ ຊາວຫນຸ່ມເຮົາຈະປະຕິບັດຫລັອນຫນ້າທີ່ຂອງພວກເຮົາໄດ້. (ຕົບມືຢ່າງຍືດຍາວ.)

ດັ່ງນັ້ນ, ບັນດາສະຫາຍ, ຜູ້ເຂົ້າຮ່ວມກອງປະຊຸມຄັ້ງນີ້ໄດ້ເປັນຕົວແທນຂອງຊັ້ນຄົນທັງຫລາຍ ຂອງກອງກຳລັງ ແບບຄິດປະດິດສ້າງແຫ່ງສັງຄົມໂຊວຽດ, ເຊິ່ງພິສູດໃຫ້ເຫັນເຖິງ ລັກ

ສະນະປະຊາທິປະໄຕ,ປະຊາທິປະໄຕຂອງພວກເຮົາ ຄືປະຊາທິປະໄຕແບບສັງຄົມນິຍົມ ເຊິ່ງແມ່ນຮາກຖານໄດ້ຝັງເລິກຢູ່ໃນໝູ່ມະຫາຊົນ. (ຕົບມືຢ່າງຍືດຍາວ.)

ການສ້າງສັງຄົມນິຍົມທີ່ຈະເລີນກ້າວໜ້າ ໄດ້ຍົກ ບັນຫາຕ່າງໆຂອງການພັດທະນາປະເທດ ທາງດ້ານເສດຖະກິດ,ສັງຄົມ-ການເມືອງແລະທາງຈິດໃຈຂຶ້ນ.ຄວາມສາມາດຂອງພວກເຮົາໄດ້ຮັບການປ່ຽນແປງ; ຍ້ອນເຫດນັ້ນ ຄວາມຕ້ອງການທາງດ້ານສັງຄົມ ກໍໄດ້ຮັບການປ່ຽນແປງເຊັ່ນດຽວກັນ. ວຽກການຕົວຈິງຫລາຍດ້ານຂອງພັກ ແລະປວງປະຊາຊົນ ພວມໄດ້ຮັບການປ່ຽນແປງຢ່າງເລິກເຊິ່ງ.ອັນນັ້ນໝາຍເຖິງວຽກງານຂະໜາດໃຫ່ຍຫລວງທີ່ສຸດ, ວຽກງານທີ່ສັບສົນ,ວຽກງານທີ່ມີຄວາມໝາຍເປັນຕາຍແກ່ສັງຄົມ ແລະແກ່ແຕ່ລະຄົນໂຊວຽດ, ແຕ່ລະຄອບຄົວໂຊວຽດ. ບັນດາມະຕິຂອງກອງປະຊຸມໃຫ່ຍຄັ້ງທີ XXIV ແລະ XXV ຂອງພັກ, ຍຸດທະສາດການສ້າງກອມມູນິດເຊິ່ງເປັນຍຸດທະສາດແຫ່ງການກ້າວຂຶ້ນ ຢ່າງມີໄຊນັ້ນ ທັງໝົດເຫລົ່ານັ້ນ ເຮັດໃຫ້ພວກເຮົາມຸ່ງໜ້າໄປປະຕິບັດ ວຽກການຂະໜາດໃຫ່ຍຫລວງແນວນັ້ນເອງ ! (ຕົບມື.)

ຂັ້ນໄລຍະປະຈຸບັນນີ້ ເປັນຂັ້ນໄລຍະແຫ່ງການພັດທະນາສະຫະພາບໂຊວຽດ ພາເຮົາໃຫ້ມີຄວາມຮູ້ສຶກຮັບຜິດຊອບສູງທີ່ສຸດ, ພາເຮົາໃຫ້ເພີ່ມທະວີການອອກແຮງງານເພື່ອປະກອບສ່ວນອັນສົມຄວນເຂົ້າໃນການແກ້ໄຂບັນດາເປົ້າໝາຍ ທີ່ພັກໄດ້ ວາງໄວ້. ເລື່ອງນີ້ກໍພົວພັນເຖິງກຳມະບານ ເຊັ່ນດຽວກັນ.

ພວກເຮົາອາດເວົ້າດ້ວຍຄວາມຮູ້ສຶກດີໃຈ ໄດ້ວ່າ ພໍແຕ່ກຳເນີດຂຶ້ນ, ກຳມະບານກໍໄດ້ເດີນຄຽງບ່າຄຽງໄຫລ່ກັບພັກເຮົາ. ທ່ານເລນິນໃນເມື່ອກຳນົດຖານະບົດບາດ ຂອງກຳມະບານໃນສັງຄົມໂຊວຽດ ໄດ້ເອີ້ນກຳມະບານວ່າ ເປັນໂຮງຮຽນ ແຫ່ງການຄຸ້ມຄອງໂຮງຮຽນເສດຖະກິດ, ໂຮງຮຽນເພື່ອຮ່ຳຮຽນລະບອບກອມມູນິດ. (ເລນິນ, ຄົບຊຸດ, ເຫລັ້ມ ໔໔, ຫນ້າ ໔໐໓). ຖານະບົດບາດດັ່ງກ່າວນັ້ນ ມັນໄດ້ກາຍເປັນທີ່ຫລ້າຫລັງໃນເງື່ອນໄຂແຫ່ງສັງຄົມນິຍົມທີ່ຈະເດີນກ້າວຫນ້າແລ້ວຊັ້ນບໍ? ບໍ່ແມ່ນແນວນັ້ນດອກ. ກົງກັນຂ້າມ, ຖານະບົດບາດດັ່ງກ່າວຊ້ຳໄດ້ຮັບຄວາມຫມາຍສຳຄັນສູງຂຶ້ນ ຢ່າງກວ້າງຂວາງ ກ່ວາເກົ່າ.

ກຳມະບານໂຊວຽດ ໄດ້ເປັນແລະພວມເປັນໂຮງຮຽນແຫ່ງການຄຸ້ມຄອງເຊິ່ງ-ອັນນັ້ນມີຄວາມສຳຄັນທາງຫລັກການ-ເປັນໂຮງຮຽນຂອງມະຫາຊົນ ເຊິ່ງໃນນັ້ນຊາວໂຊວຽດນັບເປັນສິບສິບລ້ານຄົນ ຮ່ຳຮຽນວິຊາການຄຸ້ມຄອງການຜະລິດ, ການຄຸ້ມຄອງລັດແລະສັງຄົມ.

ກຳມະບານໂຊວຽດ ໄດ້ເປັນແລະພວມເປັນໂຮງຮຽນເສດຖະກິດ ເຊິ່ງ - ອັນນັ້ນມີຄວາມສຳຄັນທາງຫລັກການ ເຊັ່ນດຽວກັນ-ເປັນໂຮງຮຽນເສດຖະກິດແບບສັງຄົມນິຍົມ. ໃນສັງຄົມເຮົາ ການຜະລິດບໍ່ຂັດກັບຜົນປະໂຫຍດ ຂອງຊາວ ຜູ້ອອກແຮງງານ. ດ້ວຍເຫດນັ້ນ ກຳມະບານຈຶ່ງມີຫນ້າທີ່ ສອງດ້ານຄືການຂະຫຍາຍເສດຖະກິດ, ການເພີ່ມພູນຜະລິດຜົນ ແລະ

ການຮັກສາສິດແລະຜົນປະໂຫຍດ ຂອງຊາວຜູ້ອອກ ແຮງງານ, ການປັບປຸງເງື່ອນໄຂແຫ່ງການອອກແຮງງານ ແລະຊີວິດການເປັນຢູ່ຂອງຊາວຜູ້ອອກແຮງງານ. ທັງສອງດ້ານນັ້ນສະໜິດຕິດແໜ້ນກັນ ຍ້ອນວ່າການຂະຫຍາຍແລະການປັບປຸງເສດຖະກິດເປັນເສັ້ນທາງທີ່ດີທີ່ສຸດ ທີ່ຈະນຳໄປສູ່ການປັບປຸງ ຊີວິດ ການເປັນຢູ່ຂອງຊາວຜູ້ອອກແຮງງານ, ຄອບຄົວຂອງເຂົາແລະປວງປະຊາຊົນ. (ຕົບມື).

ກຳມະບານໂຊວຽດ ໄດ້ເປັນແລະພວມເປັນໂຮງງານກອມມູນິດ ເຊິ່ງໃນນັ້ນຜູ້ຄົນຮຽນຊີວິດແລະການອອກແຮງງານແບບກອມມູນິດ. ໂຮງຮຽນນີ້ພວມສ້າງຄົນໃໝ່ ທາງດ້ານຈິດໃຈ, ສ້າງຊາວຜູ້ອອກແຮງງານ ທີ່ຢຶດໝັ້ນໃນຫລັກການສາກົນແລະໃນຄຳຂວັນອັນຈົວບິລັນທີ່ວ່າ ບັນດາຊາວກຳມາຊີບໃນທຸກປະເທດ ຈົ່ງສາມັກຄີກັນ ! (ຕົບມືຢ່າງຟົດຟື້ນ).

ການເວລາພວມຜ່ານໄປຢູ່, ສະພາບການພວມຜັນແປໄປຢູ່, ບັນຫາໃໝ່ໆພວມເກີດຂຶ້ນຢູ່; ນີ້ເປັນເສັ້ນທາງ ທີ່ທ່ານເລນິນໄດ້ ຊີ້ບອກ; ເສັ້ນທາງສາຍນີ້ ສືບຕໍ່ເປັນເສັ້ນທາງທີ່ຖືກຕ້ອງຢູ່ (ຕົບມືຢ່າງຍືດຍາວ).

ບັນດາສະຫາຍ ! ຂ້າພະເຈົ້າບໍ່ຢາກເວົ້າເຖິງບັນຫາຕ່າງຕ່າງກ່ອນການພິຈາລະນາບັນຫາເຫລົ່ານັ້ນ ໃນກອງປະຊຸມຄັ້ງນີ້. ເຖິງເປັນແນວນີ້ກໍຕາມ ໃນນາມຂອງສູນກາງພັກ ຂ້າພະເຈົ້າຢາກສະແດງຄວາມຄິດເຫັນບາງຢ່າງ ກ່ຽວກັບ ບັນຫາທີ່ກ່ຽວຂ້ອງກັບກຳມະບານ, ກ່ຽວກັບເປົ້າໝາຍເຊິ່ງແມ່ນກຳມະ

ບານມີໜ້າທີ່ ທີ່ຈະປະກອບສ່ວນທີ່ສຳຄັນໃນການແກ້ໄຂ.

ເລື່ອງເສດຖະກິດກ່ອນ. ໄລຍະເວລາປະຈຸບັນນີ້ ມີລັກສະນະແນວໃດ? ມັນມີລັກສະນະພິເສດນອນຢູ່ບ່ອນວ່ານະໂຍບາຍເສດຖະກິດແນໃສ່ຮັບປະກັນປະສິດທິພາບ ຂອງການຜະລິດໃນສັງຄົມ, ຮັບປະກັນຈຸນນະພາບສູງຂອງວຽກງານທຸກໆດ້ານໃນເສດຖະກິດຂອງປະຊາຊົນ.

ປະສິດທິພາບແລະຈຸນນະພາບ ເປັນເປົ້າໝາຍອັນສຳຄັນທີ່ສຸດຂອງແຜນການຫ້າປີຊຸດທີສິບ. ເພື່ອປ້ອງກັນບໍ່ໃຫ້ສັບຄຳຫຍໍ້ໆນີ້ ເສຍຄວາມໝາຍຂອງມັນ, ເພື່ອປ້ອງກັນບໍ່ໃຫ້ສັບຄຳຫຍໍ້ໆນີ້ເສຍລັກສະນະປຸກລະດົມປະຊາຊົນນັ້ນ ມັນຕ້ອງຖາມຕົນເອງຢູ່ເລື້ອຍໆວ່າເຈົ້າໄດ້ເຮັດທຸກສິ່ງທຸກຢ່າງເພື່ອເຮັດໃຫ້ສັບຄຳນີ້ປາກົດເປັນຈິງແລ້ວຫລືບໍ່? ໃນດ້ານນີ້ກຳມະບານມີໜ້າທີ່ຮັບຜິດຊອບອັນກວ້າງຂວາງທີ່ສຸດ.

ຂອບເຂດອັນກວ້າງຂວາງ, ຄວາມສັບສົນຂອງເສດຖະກິດປະຊາຊົນເຮົາໄດ້ຕັ້ງບັນຫາວ່າດ້ວຍຄວາມຈຳເປັນ ທີ່ຈະຕ້ອງປັບປຸງການວາງແຜນການແລະການຄຸ້ມຄອງເສດຖະກິດ, ການປັບປຸງກົງຈັກເສດຖະກິດທັງໝົດ. ພວກເຮົາປະຕິບັດການຢ່າງຫລວງຫລາຍໄປຕາມທິດທາງແນວນີ້. ອົງການວາງແຜນການ, ອົງການເສດຖະກິດຂັ້ນສູງພວມວາງຂໍ້ສະເໜີຕົວຈິງໃໝ່ໆຢູ່. ມັນບໍ່ຄວນຈຸກຈຸາໂພດໃນວຽກການນີ້ຍອນວ່າພັກເຮົາຖືວຽກ - ງານນີ້ເປັນວຽກທີ່ມີຄວາມໝາຍສຳຄັນ.

ພ້ອມກັນນັ້ນ ພວກເຮົາຈະບໍ່ລືມໄດ້ ກ່ຽວກັບບັນຫາໜຶ່ງອີກ.

ນອກຈາກການຈຸ້ມຄອງຂັ້ນສູງນັ້ນ ລະບອບສັງຄົມນິຍົມຍັງມີກຳລັງທີ່ເຂັ້ມແຂງກຳລັງໜຶ່ງອີກ ແຫ່ງການຂະຫຍາຍເສດຖະກິດ ຄື ນ້ຳໃຈຄິດປະດິດສ້າງ, ຄວາມຫ້າວຫັນທາງການອອກແຮງງານຂອງຊາວຜູ້ອອກແຮງງານ ນັບເປັນລ້ານໆຄົນ ເຊິ່ງເປັນຕົວແທນຂອງມະຫາຊົນອັນກວ້າງຂວາງທີ່ສຸດ.(ຕົບມື).

ອັນນັ້ນ ເປັນລັກສະນະອັນດີເລີດກວ່າໝູ່ ຂອງລະບອບສັງຄົມນິຍົມ. ອັນນັ້ນ ເປັນ"ຄວາມລັບ"ປະການໜຶ່ງ ຂອງ ລະບອບສັງຄົມນິຍົມ, "ຄວາມລັບ" ທີ່ອຳນວຍເງື່ອນໄຂ ທີ່ຈະເຮັດຫລາຍທີ່ສຸດ ທີ່ເບິ່ງຄືວ່າມັນບໍ່ສາມາດ ທີ່ຈະເຮັດໄດ້ , "ຄວາມລັບ" ທີ່ອຳນວຍເງື່ອນໄຂ ທີ່ຈະເຮັດໃຫ້ທົ່ວໂລກຮູ້ສຶກມະຫັດສະຈັນ ຕໍ່ຈັງຫວະອັນວ່ອງໄວທີ່ສຸດ ຂອງການເຕີບໃຫຍ່ຂະຫຍາຍຕົວຂອງສັງຄົມເຮົາ, ຕໍ່ກຳລັງແຮງອັນໃຫຍ່ ຫລວງອັນແປກປະຫລາດໃຈຂອງສັງຄົມເຮົາ.(ຕົບມື).

ໃນໄລຍະເວລາຕໍ່ໄປ ປັດໃຈດັ່ງກ່າວມາເທິງນັ້ນ ກໍຈະມີຊີວິດຊີວາແລະມີຄວາມໝາຍສຳຄັນເຊັ່ນດຽວກັນ.ຊີວິດນັ້ນເອງເປັນບໍ່ເກີດການລິເລີ່ມໃຫມ່ໆຂອງມະຫາຊົນ. ອັນນັ້ນຂຶ້ນຢູ່ກັບບັນດາສະຫາຍ, ຂຶ້ນຢູ່ກັບວຽກການຂອງກຳມະບານ,ຂຶ້ນຢູ່ກັບຄວາມຮູ້ຈັກວິທີການທີ່ຈະສະໜັບສະໜູນ ການລິເລີ່ມໃນການອອກແຮງງານ, ເຮັດໃຫ້ການລິເລີ່ມດັ່ງກ່າວມຸ່ງໜ້າໄປຕາມເສັ້ນທາງທີ່ຈະນຳໄປສູ່ການແກ້ໄຂບັນຫາຕົວຈິງໃນແຕ່ລະໂຮງຈັກໂຮງງານ, ໃນຂະແໜງການທຸກໆຢ່າງ ແຫ່ງວຽກງານຂອງພວກເຮົາ.

ກ່ອນອື່ນຫມົດ ຂ້າພະເຈົ້າຄິດເຖິງຫນ້າທີ່ ຂອງກຳມະບານ ຕໍ່ການເສີມຂະຫຍາຍການແຂ່ງຂັນສັງຄົມນິຍົມ. ຂ້າພະເຈົ້າ ຢາກເຮັດໃຫ້ບັນດາສະຫາຍຄິດຄືນຫລັງ ເຖິງເລື່ອງທີ່ວ່າໃນປີ ໑໙໔໐ ກອງປະຊຸມໃຫ່ຍຄັ້ງທີ IX. ຂອງພັກເຮົາໄດ້ມອບຫນ້າ ທີ່ແຫ່ງການຈັດຕັ້ງການແຂ່ງຂັນສັງຄົມນິຍົມ ແກ່ກຳມະບານໃນ ປະຈຸບັນນີ້ ກຳມະບານກໍມີຫນ້າທີ່ແນວນັ້ນຈຸ້ມດຽວກັນ.

ມັນເປັນເລື່ອງທຳມະດາວ່າ ໃນຂັ້ນໄລຍະປະຈຸບັນນີ້ ການ ແຂ່ງຂັນສັງຄົມນິຍົມໄດ້ມີລັກສະນະພິເສດຊະນິດໃຫ່ມ. ໃນປະຈຸ ບັນນີ້ ການແຂ່ງຂັນເປັນສິ່ງທີ່ແຍກຕົວອອກຈາກ ການປະຕິວັດ ວິດທະຍາສາດ-ເຕັກນິກບໍ່ໄດ້ເດັດຂາດ. ບັນຫາວ່າດ້ວຍປະສິດ ທິພາບແລະຄູນນະພາບຂອງການອອກແຮງງານພວມກາຍເປັນ ບັນຫາອັນຈູນແຈຂອງການແຂ່ງຂັນນັ້ນ ເຊິ່ງແນໃສ່ການບັນລຸຜົນ ງານອັນດີທີ່ສຸດທາງດ້ານເສດຖະກິດ ແລະຂຶ້ນຢູ່ກັບການ ວາງ ແຜນການໂຕ້ຕອບຂອງຊາວຜູ້ອອກແຮງງານ ເຊິ່ງສ່ອງແສງ ເຖິງນ້ຳໃຈລິເລີ່ມ ແລະນ້ຳໃຈເຮັດວຽກຢ່າງດຸຫມັ່ນຂອງຊາວ ຜູ້ອອກແຮງງານ ນັບເປັນລ້ານໆຄົນ.

ການແຂ່ງຂັນ ບໍ່ພຽງແຕ່ສະແດງໃຫ້ເຫັນເຖິງຊາວ ຜູ້ອອກ ແຮງງານຜູ້ທີ່ດີເດັ່ນທີ່ນັ້ນ ຫາກຍັງສະແດງໃຫ້ເຫັນເຖິງຜູ້ຄົນທີ່ ຊັກຊ້າອີກດ້ວຍ. ຍ້ອນເຫດນັ້ນ ການແຂ່ງຂັນຊ່ວຍໃຫ້ສຸມ ກຳ ລັງແຮງເພື່ອແກ້ໄຂຄວາມຂາດຕົກບົກພ່ອງ, ເພື່ອເຮັດໃຫ້ຜູ້ຄົນ ທີ່ຊັກຊ້າກ້າວຂຶ້ນ, ເພື່ອເລັ່ງລັດການຜະລິດຢ່າງທົ່ວໆໄປ.

ທັງຫມົດເຫລົ່ານັ້ນ ພວມເຮັດໃຫ້ບັນຫາການແຂ່ງຂັນ ກາຍ

ເປັນວຽກທີ່ສັບສົນແລະບໍ່ມັກວິທີການແບບຕາຍຕົວ. ທັງ ໝົດເຫຼົ່ານັ້ນ ພວມຕັ້ງບັນຫາອັນໃຫ່ຍແກ່ກຳມະບານ, ເສີມ ຂະຫຍາຍບົດບາດຂອງກຳມະບານ ໃນການຊຸ້ມຄອງເສດຖະກິດ, ໃນວຽກການທາງດ້ານການຈັດຕັ້ງ ແລະ ດ້ານການເມືອງອີກດ້ວຍ.

ການເສີມຂະຫຍາຍການແຂ່ງຂັນສັງຄົມນິຍົມ ກໍ່ວາງຄວາມຮັບຜິດຊອບໃຫ່ມແກ່ບັນດາຜູ້ນຳອົງການເສດຖະກິດ,ຜູ້ອຳນວຍການຂອງວິສາຫະກິດຕ່າງໆ. ມັນບໍ່ຄວນໃຊ້ນ້ຳໃຈ ເຮັດວຽກຂອງມະຫາຊົນຢ່າງລ້າໆ; ການລິເລີ່ມທີ່ດີ ບໍ່ພຽງແຕ່ຄວນໄດ້ຮັບຄວາມຊົມເຊີຍສັນລະເສີນເທົ່ານັ້ນ ຫາກຍັງຄວນໄດ້ຮັບຄວາມສະໜັບສະໜູນໃນຕົວຈິງ. ພັກເຮົາຮຽກຮ້ອງໃຫ້ ເສີມ ຂະຫຍາຍການລິເລີ່ມທຸກໆຢ່າງໃຫ້ກວ້າງຂວາງຍິ່ງຂຶ້ນ. (ຕົບມື).

ທ່າທີແນ່ນອນ ບໍ່ພຽງແຕ່ຮັບປະກັນການເສີມຂະຫຍາຍ ຂອງການຜະລິດເທົ່ານັ້ນ ຫາກຍັງເສີມຂະຫຍາຍອິດທິພົນ ຂອງການແຂ່ງຂັນທາງດ້ານການຝຶກຝົນອົບຮົມອີກດ້ວຍ ເຊິ່ງເປັນສິ່ງ ທີ່ສຳຄັນທີ່ສຸດ. ການແຂ່ງຂັນເປັນວິທີການທີ່ດີກວ່າໝູ່ ໃນການຝຶກຝົນອົບຮົມຄົນໃຫ່ມໃຫ້ມີລະດັບຄວາມຮູ້ການເມືອງ ແລະສິນທຳ.

ລັກສະນະການເມືອງຂອງການແຂ່ງຂັນ ພວມໄດ້ຮັບ ການສະແດງຕົວຢູ່ໃນຂະບວນການຝຶກຝົນໃຫ້ມີນ້ຳໃຈເຮັດວຽກແບບກອມມູນິດ. ຊາວໂຊວຽດນັບເປັນສິບໆລ້ານຄົນ ໄດ້ເຂົ້າຮ່ວມໃນຂະບວນການນັ້ນ. ແຕ່ວ່າອັນທີ່ສຳຄັນກວ່າໝູ່ ກໍຄື ຊຸມນະ

ພາບ, ບໍ່ແມ່ນປະລິມານ. ດ້ວຍເຫດນັ້ນ ເມື່ອເຈົ້າ ໜ້າທີ່ມອບຊື່ກຽດຍົດ ຄື "ຜູ້ທີ່ເຮັດວຽກແບບກອມມູນິດ" ແກ່ຊາວ ຜູ້ອອກແຮງງານ ຫລືຄະນະຊາວຜູ້ອອກແຮງງານນັ້ນ ເຈົ້າໜ້າທີ່ຄວນຈື່ຈຳຄຳເວົ້າຂອງເລນິນທີ່ວ່າ "ຊື່ກຽດຍົດນີ້ ເປັນຊື່ຊຶ່ງແມ່ນຊາວຜູ້ອອກແຮງງານຍາດເອົາມາໄດ້ ດ້ວຍການ ອອກແຮງງານຢ່າງດຸໝັ່ນພາກພຽນ, ດ້ວຍຜົນງານຕົວຈິງ ໃນການອອກແຮງງານທີ່ມີລັກສະນະກອມມູນິດຢ່າງແທ້ຈິງ". (ເລນິນ, ລືບຊຸດ, ເຫລັ້ມ ໓໙, ໜ້າ ໔໗).

ອັນນັ້ນເປັນຄຳເວົ້າທີ່ມີຄວາມໝາຍອັນເລິກຊຶ້ງທີ່ສຸດ. ຄຳເວົ້າດັ່ງກ່າວສ່ອງແສງເຖິງທ່າທີທາງການເມືອງ ແລະ ພັກທີ່ເພິ່ນຕ້ອງຍຶດໝັ້ນຢູ່ໃນການອອກແຮງງານ. ຄຳເວົ້າເຫລົ່ານັ້ນຝ່າຝືນຕໍ່ຣູບນັຍນິຍົມ(ວິທີເຮັດວຽກແບບຣູບນອກ),ຕໍ່ການເຮັດວຽກແບບມີແຕ່ຮູບຮ່າງພາຍນອກ, ແບບບໍ່ຄິດປະດິດສ້າງ ຊຶ່ງແມ່ນພວກເຮົາ-ຊາວກອມມູນິດ-ບໍ່ອາດຈະບໍ່ຕໍ່ສູ້ຢ່າງເດັດຂາດ, ເດັດຂາດ, ໄດ້.(ຕົບມື)

ອີງເຂດອີກປະການໜຶ່ງແຫ່ງວຽກງານຂອງກຳມະບານ ກໍຄືການປັບປຸງລະບຽບວິໄນແຫ່ງການອອກແຮງງານ.

ຊາວໂຊວຽດເປັນເຈົ້າຂອງປະເທດຂອງຕົນ. ຊາວໂຊວຽດເປັນຜູ້ດຽວທີ່ສ້າງຄວາມເຂັ້ມແຂງແລະຊັບສົມບັດຂອງສັງຄົມ. ມີແຕ່ປະຊາຊົນທັ້ນທີ່ມີສິດທີ່ຈະຊົມໃຊ້ຜົນງານຂອງສັງຄົມໄດ້; ພ້ອມກັນນັ້ນ ບໍ່ມີຜູ້ຄົນອື່ນທີ່ເຮັດວຽກ ເພື່ອຜົນປະໂຫຍດ ຂອງພວກເຂົາ. ດ້ວຍເຫດນັ້ນ ຊາວໂຊວຽດແຕ່ລະຄົນ ຈຶ່ງຕ້ອງ

ເຮັດວຽກຢ່າງດຸໝັ່ນພາກພຽນ ເພື່ອບໍ່ຮູ້ສຶກ ລະອາຍແກ່ໃຈ, ເພື່ອມີສິດທີ່ຈະເບິ່ງໜ້າຂອງເພື່ອນຢ່າງບໍລິສຸດໃຈ. (ຕົບມື).

ດ້ວຍເຫດນັ້ນ ຜູ້ອອກແຮງງານອັນດີເລີດ, ຜູ້ອາວຸໂສແຫ່ງການອອກແຮງງານ, ຄະນະເຮັດວຽກລວມໝູ່ ຈຶ່ງຮຽກຮ້ອງໃຫ້ລົງໂທດຕໍ່ຜູ້ຄົນທີ່ໄດ້ຂາດສິນທຳກຳມະກອນ, ລະເມີດ ລະບຽບວິໄນ, ບໍ່ຮັກສາຊັບສົມບັດ ຂອງປະຊາຊົນ ໃຫ້ເຂັ້ມແຂງກວ່າເກົ່ານັ້ນ ຜູ້ຄົນເຫລົ່ານັ້ນ ພວມຕັ້ງບັນຫາຂຶ້ນຢ່າງຖືກຕ້ອງ. ການສະໜັບສະໜູນຄຳຮຽກຮ້ອງເຫລົ່ານັ້ນຂອງບັນດາຜູ້ອອກແຮງງານຜູ້ບໍລິສຸດໃຈ ເປັນໜ້າທີ່ຂອງບັນດາສະຫາຍ, ໜ້າທີ່ຂອງກຳມະບານພູກອົງການໂດຍກົງ. (ຕົບມື.)

ມັນບໍ່ແມ່ນວ່າພວກເຮົາມີລະບຽບວິໄນທີ່ຊົ່ວຊ້າ. ມັນບໍ່ເປັນເລື່ອງນັ້ນດອກ. ແຕ່ວ່າ ເຕັກນິກໃໝ່, ເຕັກໂນໂລຊີໃໝ່, ການຕິດຕໍ່ກັນລະຫວ່າງຂະແໜງການຕ່າງໆ ຂອງການຜະລິດ, ເສດຖະກິດແບບໃໝ່ ທັງໝົດເຫລົ່ານັ້ນ ຮຽກຮ້ອງໃຫ້ຍົກລະດັບລະບຽບວິໄນໃຫ້ເຂັ້ມງວດຍິ່ງຂຶ້ນ.

ມັນເປັນແນວນັ້ນ ກໍຍ້ອນວ່າ ການລ່ວງລະເມີດ ລະບຽບວິໄນພູກຢ່າງໃນດ້ານການອອກແຮງງານ, ການວາງແຜນການ, ວິຊາການທົ່ວໄປ ກໍໃຫ້ເກີດຄວາມເສຍຫາຍ ອັນໜັກໜ່ວງທີ່ສຸດໃນປະຈຸບັນນີ້. ການທີ່ເລື່ອງກິນຈົກກິນຊຸດດົມ ບໍ່ເຮັດວຽກນັ້ນ ມັນກໍໃຫ້ເກີດຄວາມເສຍຫາຍ ຕັ້ງຫລາຍເທື່ອ ຖ້າປຽບ ກັບຄວາມເສຍຫາຍທີ່ເກີດມາຈາກການທີ່ຄົນຊຸດດົມດ້ວຍສອມບໍ່ໄດ້ໄປເຮັດວຽກ. ການທີ່ຫ້ອງໜຶ່ງໃນໂຮງຈັກ ໂຮງງານບໍ່ເຮັດ

ວຽກນັ້ນ ມັນກໍ່ໃຫ້ເກີດຄວາມເສຍຫາຍ ຫລາຍພັນຮູບແກ່ໂຮງຈັກໂຮງງານແຫ່ງນັ້ນ ແລະໃນທີ່ສຸດແກ່ຂະແຫນງການນີ້ ຂອງອຸດສາຫະກໍາອີກດ້ວຍ.

ການປະຫຍັດເວລາຂອງກໍາມະກອນ ກໍມີຄວາມຫມາຍ ສໍາຄັນ. ຂໍຍົກຕົວຢ່າງອັນດຽວ: ໃນນາທີຫນຶ່ງ ປະເທດເຮົາຜະລິດພະລັງງານໄຟຟ້າໄດ້ ໔ ລ້ານກວ່າກິໂລວັດ, ເຫລັກ ກ້າ ໓໐໐ ໂຕນ, ນ້ຳມັນກາດກວ່າ ໑ ພັນໂຕນ, ຖ່ານຫີນ ໑,໕ ພັນໂຕນ, ອາຍແກດ ໒໕໐ ພັນແມດກ້ອນ. ການເສຍ ນາທີຫນຶ່ງຂອງການອອກແຮງງານຂອງປະເທດເຮົາທໍ່ກັບການເສຍຜົນງານຂອງກໍາມະກອນ ໔ ແສນຄົນໃນມື້ຫນຶ່ງ.

ອັນນັ້ນເປັນຄຸນຄ່າຂອງນາທີຫນຶ່ງ. ອັນເປັນທີ່ຫນ້າເສັຍດາຍວ່າພວກເຮົາບໍ່ຈື່ຈໍາເລື່ອງນີ້ ບາງຄັ້ງບາງຄາວ. ດ້ວຍເຫດນັ້ນຄວາມເສັຍຫາຍທີ່ເກີດມາຈາກການບໍ່ໄປເຮັດວຽກ, ການບໍ່ໃຊ້ເຄື່ອງຈັກ ທໍ່ກັບການເສັຍຫາຍກໍາລັງແຮງຫລາຍລ້ານຄົນຕໍ່ວັນ. ຂ້າພະເຈົ້າບໍ່ຢາກເຮັດໃຫ້ບັນດາສະຫາຍຮູ້ສຶກອຸກໃຈ; ເຖິງເປັນແນວນັ້ນກໍຕາມ ຂ້າພະເຈົ້າຕ້ອງກ່າວເນັ້ນວ່າກໍາມະບານຍັງບໍ່ທັນເຮັດທຸກສິ່ງທຸກຢ່າງ ເພື່ອຮັກສາເວລາເຮັດວຽກ ໃນການຜະລິດເທື່ອ ເຫມືອນດັ່ງທີ່ມັນຕ້ອງເຮັດ.

ພັກເຮົາຖືກໍາມະບານວ່າ ເປັນກໍາລັງແຮງທີ່ເຂັ້ມແຂງທີ່ສາມາດຊ່ວຍໄດ້ໃນການປັບປຸງລະບຽບວິໄນແຫ່ງການອອກ ແຮງງານໃນທຸກດ້ານ. ຍິ່ງໄປກວ່ານັ້ນ ມັນສາມາດເຮັດໄດ້ດ້ວຍວິທີການທີ່ເຫມາະສົມແກ່ລະບອບສັງຄົມນິຍົມຂອງພວກເຮົາ ຄື

ດ້ວຍການສ້າງຄວາມຮູ້ສຶກຮັບຜິດຊອບ, ຄວາມຕື່ນຕົວ, ດ້ວຍປັດໄຈທາງວັດຖຸແລະຈິດໃຈ, ການຕຳນິຕິຊົມຜູ້ອື່ນແລະຕົນເອງ, ດ້ວຍອິດທິພົນຂອງຄະນະເຮັດວຽກລວມຫມູ່.

ບັນດາສະຫາຍ ! ເມື່ອເວົ້າກ່ຽວກັບບັນຫາ ເສດຖະກິດນັ້ນ ຂ້າພະເຈົ້າບໍ່ອາດຈະບໍ່ເວົ້າກ່ຽວກັບບາງບັນຫາ ທີ່ສຳຄັນຂອງການຂະຫຍາຍກະສິກຳ. ອັນນັ້ນເປັນທີ່ເຫມາະສົມແກ່ກາລະເທສະເປັນພິເສດ ຍ້ອນວ່າໃນກອງປະຊຸມໃຫຍ່ຄັ້ງນີ້ ຂອງກຳມະບານມີຕົວແທນຂອງຊາວນາ ຈຳນວນຫລາຍ ທີ່ບໍ່ເຄີຍມີມາ.(ຕົບມື.)

ພວກເຮົາໄດ້ວາງເປົ້າຫມາຍທີ່ສຳຄັນ ຄື ການຮັບ ປະກັນການຕອບສະຫນອງຄວາມຕ້ອງການຂອງພົນລະເມືອງ ທາງດ້ານສະບຽງອາຫານທີ່ມີຄຸນນະພາບສູງ ແລະ ຫລາຍຊະນິດ. ດ້ວຍເຫດນັ້ນ ບັນຫາວ່າດ້ວຍການເພີ່ມທະວີ ການຜະລິດ ຊີ້ນແລະສະບຽງທີ່ມີຊີ້ນ (ຫມາຍເຖິງການຂະຫຍາຍການລ້ຽງສັດ) ໄດ້ມີບົດບາດທີ່ສຳຄັນເປັນພິເສດ.ແນ່ນອນວ່າພວກເຮົາຈະໄດ້ແກ້ໄຂເປົ້າຫມາຍນີ້. ບັນຫານອນຢູ່ບ່ອນວ່າ ພວກເຮົາຕ້ອງແກ້ໄຂມັນໄວເທົ່າໃດຍິ່ງດີເທົ່ານັ້ນ. ຜູ້ຄົນທີ່ອອກແຮງງານໃນກະສິກຳຕ້ອງເຮັດທຸກສິ່ງທຸກຢ່າງ ເພື່ອປະຕິບັດເປົ້າຫມາຍດັ່ງກ່າວມາເທິງນັ້ນ.

ຈຸດເລັ່ງຂອງພວກເຮົາ ເປັນການເຮັດໃຫ້ການລ້ຽງສັດ ມີພື້ນຖານແບບອຸດສາຫະກຳໂດຍອີງໃສ່ ການປະສານງານລະຫວ່າງນາລັດແລະນາລວມ, ການແບ່ງປັນວຽກງານແລະການ

ລວມສູນ. ໃນການເດີນຕາມເສັ້ນທາງນີ້ ພວກເຮົາໄດ້ ຍາດເອົາຜົນສຳເລັດຫລາຍພໍສົມຄວນແລ້ວ.

ໃນຂະນະດຽວກັນນັ້ນ ພວກເຮົາພວມເຫັນວ່າການເຮັດໃຫ້ການລ້ຽງສັດແລະການຜະລິດສະບຽງ ມີພື້ນຖານອຸດສາຫະກຳຢ່າງຄົບຖ້ວນນັ້ນ ມັນຈະຕ້ອງໃຊ້ເວລາອັນດົນນານອີກ.

ສູນກາງພັກຕັກເຕືອນຢູ່ເລື້ອຍວ່າ ໃນບັນຫານີ້ ມັນບໍ່ຄວນຕັດສິນບັນຫາແບບຊ້າຍຈັດຂວາໂພດ, ບໍ່ຄວນຟ້າວກຳຈັດ ໂຮງລ້ຽງສັດໃນນາລວມແລະນາລັດຢ່າງໄວໂພດ ໂດຍຝາກຄວາມຫວັງຕໍ່ສູນກາງລ້ຽງສັດຂະໜາດໃຫຍ່. ອັນເປັນທີ່ໜ້າ ເສຍດາຍວ່າ ມັນບໍ່ໄດ້ຟັງໄດ້ຍິນຄຳຕັກເຕືອນເຫລົ່ານັ້ນ ໃນບາງບ່ອນໃນໄລຍະເວລາຫລັງໆນີ້ ມີນາລວມ ແລະນາລັດຈຳນວນຫລາຍພໍສົມຄວນ ທີ່ໄດ້ຍຸດຕິການລ້ຽງໝູ, ການລ້ຽງເປັດໄກ່. ໃນເງື່ອນໄຂເມື່ອມັນບໍ່ສາມາດຮັບປະກັນ ການຕອບສະໜອງຄວາມຕ້ອງການທາງຊີ້ນ ຂອງພົນລະເມືອງນັ້ນ ພວກ ເຮົາຕ້ອງແກ້ໄຂສະພາບການແນວນັ້ນ. ຖ້າຫາກວ່າ ໂຮງລ້ຽງສັດຂອງນາລວມ, ນາລັດ ມີປະສິດທິພາບສູງ ມັນບໍ່ຄວນກຳຈັດໂຮງລ້ຽງສັດແນວນັ້ນ.

ມັນຄວນເວົ້າບາງຄວາມກ່ຽວກັບບໍ່ເກີດ ຊັບສົມບັດປະການໜຶ່ງອີກ ຄື ເສດຖະກິດສ່ວນຕົວ ເຊິ່ງເປັນສິ່ງ ທີ່ພວກເຮົາຕ້ອງໃຊ້ຢ່າງຄົບຖ້ວນ ເຖິງແມ່ນວ່າການສ້າງຊັບສົມບັດ ຂອງລັດມີການຜະລິດຜົນທາງສັງຄົມເປັນພື້ນຖານກໍຕາມ.

ອີງການປົກຄອງທ້ອງຖິ່ນ, ເຈົ້າໜ້າທີ່ຂອງນາລວມແລະນາ

ລັດ ມີໜ້າທີ່ ທີ່ຈະຊ່ວຍໃຫ້ແກ່ການແກ້ໄຂບັນຫານີ້. ຕານ່າງຂອງອົງການສະຫະກອນອາດຈະປະກອບສ່ວນທີ່ສຳຄັນເຂົ້າໃນການແກ້ໄຂບັນຫານີ້ໄດ້ເຊັ່ນດຽວກັນ ເຊັ່ນ ການຈັດຕັ້ງ ການຂາຍສິນຄ້າທີ່ປະຊາຊົນ ຊົນນະບົດໄດ້ຜະລິດຢ່າງເຫລືອເຟືອ.

ການທີ່ການລ້ຽງສັດ ພວມຂະຫຍາຍຕົວຢູ່ນັ້ນ ມັນຈຶ່ງຕັ້ງບັນຫາໃຫມ່ໆຂຶ້ນ. ພວກເຮົາຖືຢ່າງຖືກຕ້ອງວ່າ ການຜະລິດເຂົ້າເປັນແກ່ນສານຂອງກະສິກຳ. ສ່ວນການຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງພົນລະເມືອງ ໃນດ້ານເຂົ້ານັ້ນ ພວກເຮົາມີເຂົ້າຢ່າງພຽງພໍ. ບັນຫາວ່າດ້ວຍການຜະລິດເຂົ້າ ຍັງມີອີກດ້ານໜຶ່ງ ຄືການຜະລິດເຂົ້າຊະນິດລ້ຽງສັດ; ພວກເຮົາຕ້ອງເພີ້ມທະວີການຜະລິດເຂົ້າຊະນິດນີ້, ຕ້ອງຍົກຄຸນນະພາບຂອງເຂົ້າຊະນິດນີ້ໃຫ້ສູງຂຶ້ນ, ຕ້ອງເພີ້ມທະວີທົ່ງຫຍ້າ ທີ່ມີຊົນລະປະທານ, ທົ່ງຫຍ້າລ້ຽງສັດ, ການປູກຫຍ້າຊະນິດລ້ຽງສັດ.

ການຮັບປະກັນການຕອບສະໜອງ ຄວາມຕ້ອງການ ທາງດ້ານສະບຽງອາຫານຂອງພົນລະເມືອງຮຽກຮ້ອງໃຫ້ປັບປຸງຄົມມະນາຄົມ, ການເກັບຮັກສາ ແລະການປຸງແຕ່ງ ຜົນກະສິກຳອີກດ້ວຍ ການປັບປຸງລະບຽບການຄຸ້ມຄອງການຜະລິດສະບຽງອາຫານໃນຂອບເຂດຂອງທົ່ວປະເທດ ເປັນສິ່ງທີ່ອາດຊ່ວຍໄດ້ແກ່ການແກ້ໄຂບັນຫານີ້; ດ້ວຍເຫດນັ້ນ ມັນຕ້ອງວາງຂໍ້ ສະເໜີໃຫມ່ໆກ່ຽວກັບບັນຫານີ້ ຢ່າງວ່ອງໄວທີ່ສຸດ.

ບັນດາສະຫາຍ ! ກອງປະຊຸມຄັ້ງນີ້ ພວມດຳເນີນໄປຢູ່ໃນເວລາທີ່ສຳຄັນແກ່ການກະເສດ ຄື ເພີ້ມເລີ້ມ ການຫວ່ານ

ກ້າ, ດ້ວຍເຫດນັ້ນ ຂໍສະແດງຄວາມອວຍພອນໃຫ້ບັນດາຊາວ
ນາແລະກຳມະກອນຂອງນາລັດ ຈົ່ງປະສົບຜົນສຳເລັດອັນໃຫຍ່
ຫລວງໃນການຫວ່ານກ້າຂອງລະດູນີ້.(ຕົບມື.)

ບັນດາສະຫາຍ ! ພັກເຮົາໄດ້ວາງເປົ້າຫມາຍ ທີ່ຈະຍົກ
ລະດັບຊີວິດການເປັນຢູ່ທາງດ້ານວັດຖຸ ແລະວັດທະນະທຳຂອງ
ຊາວໂຊວຽດ, ໄດ້ເຮັດໃຫ້ຄຳຂວັນແບບໂຄງການ ຂອງພວກ
ເຮົາທີ່ວ່າ "ທຸກສິ່ງທຸກຢ່າງ ຕ້ອງເພື່ອຜົນປະໂຫຍດ ຂອງມະ
ນຸດ" ກາຍເປັນການປະຕິບັດວຽກງານຕົວຈິງຫລາຍປະການຂຶ້ນ.

ບັນດາສະຫາຍຮູ້ຢ່າງດີວ່າ ພວກເຮົາພວມເຮັດ ຫລາຍສິ່ງ
ຫລາຍຢ່າງໃນດ້ານນີ້. ໃນໄລຍະເວລາບໍ່ຫລາຍເດືອນທີ່ຜ່ານ
ມາ ພວກເຮົາໄດ້ຜ່ານມະຕິໃຫມ່ບາງຢ່າງທີ່ສຳຄັນ ເຊັ່ນມະຕິ
ວ່າດ້ວຍການເພີ່ມທະວີລາຍໄດ້ທາງການເງິນຂອງຊາວຜູ້ອອກ
ແຮງງານໂຊວຽດ ນັບ໑ ລ້ານຄົນຂຶ້ນ, ມະຕິວ່າດ້ວຍການເພີ່ມ
ທະວີການຜະລິດເຄື່ອງຊົປະໂພກບໍລິໂພກ ແລະການຍົກຄຸນນະ
ພາບຂຶ້ນ. ພວກເຮົາຈະສືບຕໍ່ປະຕິບັດວຽກງານແນວນີ້ ຕໍ່ໄປ.
ແນ່ນອນວ່າ ກຳມະບານຈະໄດ້ປະກອບສ່ວນທີ່ສຳຄັນ ເຂົ້າໃນ
ການແກ້ໄຂບັນຫາຕ່າງໆ ທີ່ກ່ຽວຂ້ອງກັບການຍົກລະດັບ ຊີວິດ
ການເປັນຢູ່ຂອງປະຊາຊົນໃຫ້ສູງຂຶ້ນ.ມັນເປັນຍ້ອນວ່າ ກຳມະ
ບານໂຊວຽດ ມີຫນ້າທີ່ທີ່ຈະຮັບໃຊ້ຜົນປະໂຫຍດ ຂອງມະນຸດ.
(ຕົບມື.)

ດ້ວຍເຫດນັ້ນ ມັນຈຶ່ງຕ້ອງເອົາໃຈໃສ່ຢ່າງຫລາຍຕໍ່ການປັບ
ປຸງເງື່ອນໄຂຂອງການອອກແຮງງານ,ການດັດປ່ຽນວຽກງານ

ອັນໜັກໜ່ວງທີ່ໃຊ້ແຕ່ມືເປົ່າ ກາຍເປັນວຽກງານທີ່ໃຊ້ກົນຈັກ, ການກັນພະຍາດປະຈຳວິຊາຊີບ, ການຖືກບາດເຈັບ ໃນການອອກແຮງງານ.

ພັກເຮົາຖືວ່າ ການດັດປ່ຽນອຸດສາຫະກຳກະສິກຳ, ການກໍ່ສ້າງ, ຄົມມະນາຄົມໃຫ້ເປັນແບບທັນສະໄໝ ເຊິ່ງແມ່ນພັກພວມໃຊ້ຈ່າຍເງິນທຶນຢ່າງຫລາຍນັ້ນ ມັນເປັນວິທີການ ອັນດີກ່ວາໝູ່ ເພື່ອປັບປຸງເງື່ອນໄຂຂອງການອອກແຮງງານ, ເພື່ອເຮັດໃຫ້ການຜະລິດມີຄວາມປອດໄພ, ມີຄວາມສະດວກຕ່າງໆແກ່ຊາວຜູ້ອອກແຮງງານ. ພວກເຮົາອາດເວົ້າໄດ້ວ່າ ພວກເຮົາຕ້ອງເດີນແຕ່ວິທີການເຮັດວຽກທີ່ມີຄວາມປອດໄພ ຂຶ້ນ ສູ່ເຕັກນິກທີ່ມີຄວາມປອດໄພ.ພວກເຮົາໄດ້ກ້າວເຂົ້າສູ່ເສັ້ນທາງແນວນີ້ແລ້ວ; ພວກເຮົາຈະສືບຕໍ່ເດີນຕາມເສັ້ນທາງແນວນີ້ ຕໍ່ໄປ.(ຕົບມື.)

ພວກເຮົາບໍ່ພຽງແຕ່ຕ້ອງຄິດເຖິງອະນາຄົດທໍ່ນັ້ນ ຫາກຍັງຕ້ອງເອົາໃຈໃສ່ຕໍ່ບັນຫາສະເພາະໜ້ານີ້ ອີກດ້ວຍ. ມັນອາດເວົ້າໄດ້ບໍ່ວ່າ ບັນຫາວ່າດ້ວຍເງື່ອນໄຂຂອງການອອກ ແຮງງານໄດ້ຮັບການແກ້ໄຂຢ່າງດີແລ້ວ? ບໍ່ແມ່ນແນວນີ້ດອກ. ບາງຄັ້ງບາງຄາວ ເຈົ້າໜ້າທີ່, ອົງການກຳມະບານ ເມີນເສີຍຕໍ່ຄວາມຂາດຕົກບົກພ່ອງ, ຖືວ່າມາດຕະການທີ່ແນໃສ່ ປັບປຸງເງື່ອນໄຂຂອງການອອກແຮງງານ ແລະປັບປຸງຄວາມປອດໄພຂອງການອອກແຮງງານເປັນມາດຕະການ ທີ່ມີຄວາມໝາຍອັນດັບສອງ; ບາງຄັ້ງບາງຄາວ ເພີ່ນບໍ່ຕໍ່ສູ້ຕ້ານການບໍ່ ປະຕິ

ບັດຂໍ້ຜູກມັດທີ່ໄດ້ຕົກລົງກັນແລ້ວ.

ໃນຕົ້ນປີ ນີ້ ຕາມຂໍ້ສະເໜີຂອງສະພາສູງສຸດ ຂອງກຳມະບານທົ່ວປະເທດ ເພິ່ນໄດ້ຜ່ານມະຕິວ່າດ້ວຍການປັບປຸງຄວາມປອດໄພຂອງການອອກແຮງງານ ແລະການປັບປຸງ ເງື່ອນໄຂຂອງການອອກແຮງງານໃນເສດຖະກິດຂອງປະຊາຊົນ.ແຕ່ວ່າການລິເລີ່ມແນວນີ້ ບໍ່ເປັນການພຽງພໍເທື່ອ. ມັນຍັງຕ້ອງເຮັດໃຫ້ການລິເລີ່ມດັ່ງກ່າວ ປາກົດເປັນຈິງຂຶ້ນອີກດ້ວຍ! (ຕົບມື). ອັນນັ້ນເປັນໜ້າທີ່ທີ່ສຳຄັນຂອງບັນດາກະຊວງທະບວງກົມຕ່າງຕ່າງ, ຜູ້ນຳອົງການເສດຖະກິດ.ອັນນັ້ນກໍເປັນໜ້າທີ່ ອັນສຳຄັນຂອງກຳມະບານເຊັ່ນດຽວກັນ.

ເພິ່ນຍັງຕ້ອງເຮັດຫລາຍສິ່ງ ເພື່ອປັບປຸງ ຮ້ານອາຫານ , ການບໍລິການປະຈຳວິສາຫະກິດຕ່າງໆ. ໃນການແກ້ໄຂບັນຫາເຫລົ່ານີ້ ກໍຄືກັບບັນຫາອື່ນໆ ທີ່ກ່ຽວຂ້ອງກັບການຮັບໃຊ້ຜົນປະໂຫຍດຂອງຊາວຜູ້ອອກແຮງງານ ໃນວິສາຫະກິດຕ່າງໆນັ້ນຄະນະກຳມະການກຳມະບານປະຈຳວິສາຫະກິດຕ່າງໆ ຄວນສະແດງຄວາມຫ້າວຫັນຫລາຍກ່ວາເກົ່າ.

ການດູແລເບິ່ງແຍງຊາວກຳມະກອນ ພາຍໃນໂຮງຈັກໂຮງງານຍັງບໍ່ທັນພຽງພໍເທື່ອ; ມັນຍັງຕ້ອງສະແດງຄວາມເອົາໃຈໃສ່ດູແລຕໍ່ຊາວກຳມະກອນທີ່ໄດ້ອອກໄປຈາກປະຕູໂຮງຈັກໂຮງງານອີກດ້ວຍ. ພາກສ່ວນໜຶ່ງທີ່ສຳຄັນຂອງນະໂຍບາຍ ທາງສັງຄົມຂອງພວກເຮົາ ກໍຄືການປັບປຸງຊີວິດການເປັນຢູ່ ຂອງຊາວໂຊວຽດ, ການຮັກສາສຸຂະພາບ, ຄວາມເອົາໃຈໃສ່ ຕໍ່

ການພັກຜ່ອນຂອງຊາວໂຊວຽດ, ການສ້າງເງື່ອນໄຂທີ່ອຳນວຍແກ່ຊາວກຳມະກອນແລະຄອບຄົວຂອງເຂົາທີ່ຈະໃຊ້ເວລາວ່າງເພື່ອເປັນຜົນປະໂຫຍດແກ່ຕົນເອງແລະສັງຄົມ. ການຄິດປະດິດສ້າງທາງດ້ານເຕັກນິກ, ການຫລິ້ນກິລາ, ການສະແດງສິລະປະໂດຍສະຫມັກໃຈ ຕ່າງກໍເປັນສິ່ງທີ່ຊາວໂຊວຽດ ນັບເປັນລ້ານໆຄົນ ຕ້ອງການມີ. ໃນດ້ານນີ້ ກຳມະບານກໍຕ້ອງ ມີບົດບາດອັນກວ້າງຂວາງທີ່ສຸດ ເຊັ່ນດຽວກັນ.

ຂ້າພະເຈົ້າຢາກກ່າວເນັ້ນວ່າ ບໍ່ແມ່ນພຽງແຕ່ອົງການພັກທໍ່ນັ້ນ ຫາກຍັງອົງການກຳມະບານ ຕ່າງກໍບໍ່ຄວນເມີນເສີຍ ຕໍ່ການທີ່ໃນບາງສາທາລະນະລັດ, ແຂວງຕ່າງໆ ເມີນເສີຍຕໍ່ການໃຊ້ຈ່າຍເງິນທຶນອັນໃຫ່ຍຫລວງທີ່ລັດໄດ້ກຳນົດໄວ້ສຳລັບການສ້າງເຮືອນຢູ່, ສະຖາບັນລ້ຽງເດັກນ້ອຍ, ໂຮງຮຽນ , ໂຮງຫມໍ, ສະໂມສອນ, ເດີ່ນກິລາ. ທັງພັກແລະກຳມະບານຕ່າງກໍຕ້ອງເອົາໃຈໃສ່ຕໍ່ບັນຫາວ່າດ້ວຍ ການໃຊ້ຈ່າຍເງິນທຶນເຫລົ່ານັ້ນຢ່າງເຂັ້ມງວດ.(ຕົບມື.)

ການດູແລເບິ່ງແຍງມະນຸດ ບໍ່ພຽງແຕ່ຫມາຍເຖິງການຕອບສະຫນອງຄວາມຕ້ອງການຂອງມະນຸດທາງດ້ານວັດຖຸດ້ານດຽວທໍ່ນັ້ນ. ໃນກອງປະຊຸມຄັ້ງນີ້ ຂ້າພະເຈົ້າຢາກກ່າວເນັ້ນ ເຖິງຄວາມຈົດຈໍ່ດູແລທາງດ້ານຈິດໃຈອີກດ້ວຍ. ໃນການຈົດຈໍ່ດູແລປະການນີ້ ເພິ່ນບໍ່ຈຳເປັນໃຊ້ເງິນທຶນ, ເພິ່ນພຽງແຕ່ຕ້ອງສະແດງຄວາມສົນໃຈແລະຄວາມຮູ້ຈັກກັບຄວາມຮູ້ສຶກຂອງມະນຸດທໍ່ນັ້ນ.

ການເຮັດໃຫ້ຊີວິດຂອງຜູ້ເຖົ້າຢູ່ສະດວກດີ, ການບັນເທົາໂຊກຊາຕາຂອງຜູ້ຄົນທີ່ເສັຍອົງຄະ, ການບັນເທົາຄວາມທຸກໃຈຂອງມະນຸດທີ່ມີເຫດຜົນຫລືບໍ່ມີເຫດຜົນກໍຕາມ–ທັງໝົດເຫຼົ່ານັ້ນເປັນບັນຫາທີ່ເພິ່ນຕ້ອງແກ້ໄຂ. ເພິ່ນສາມາດແກ້ໄຂ ບັນຫາເຫລົ່ານັ້ນໄດ້ກໍຕໍ່ເມື່ອເພິ່ນຮູ້ຈັກສິລະປະ ຂອງການດູແລ ເບິ່ງແຍງຕໍ່ມະນຸດທໍ່ນັ້ນ. ໂຊກຊາຕາກຳ,ຄວາມສຸກຂອງຊາວ ໂຊວຽດຂຶ້ນຢູ່ກັບວຽກງານນັ້ນ ເຊິ່ງແມ່ນກຳມະບານ ທີ່ຢືນຢູ່ທ່າມກາງຊີວິດ ຕ້ອງປະກອບສ່ວນເຂົ້າໃນການແກ້ໄຂຢ່າງເອົາຈິງເອົາຈັງ ! (ຕົບມືຢ່າງຍືດຍາວ.)

ບັນດາສະຫາຍ ! ພັກເຮົາຖືວ່າ ການເສີມຂະຫຍາຍປະຊາທິປະໄຕໃນການຜະລິດ ມີບົດບາດທີ່ສຳຄັນກວ່າໝູ່. ໃນສັງຄົມແບບສັງຄົມນິຍົມນັ້ນ ຊາວຜູ້ອອກແຮງງານບໍ່ພຽງແຕ່ເປັນຜູ້ປະຕິບັດທີ່ບອກໄດ້ໃຊ້ຟັງທໍ່ນັ້ນ; ຊາວຜູ້ອອກແຮງງານບໍ່ພຽງແຕ່ສົນໃຈໃນຜົນງານຂອງການອອກແຮງງານຂອງຕົນທໍ່ນັ້ນ ຫາກຍັງສົນໃຈຢາກຮູ້ວ່າຜົນງານເຫລົ່ານັ້ນ ມີຖານະ ບົດບາດແນວໃດ ໃນການຜະລິດທົ່ວໄປອີກດ້ວຍ. ຄວາມຕັ້ງໃຈແລະຄວາມສາມາດທີ່ຈະປະກອບສ່ວນຂອງຕົນເຂົ້າໃນພາລະກິດລວມເປັນປັດໃຈທີ່ສຳຄັນ ໃນການອອກແຮງງານ,ມັນສັ່ງສອນໃຫ້ຊາວຜູ້ອອກແຮງງານ ຄິດເຖິງພາລະກິດລວມ ຂອງລັດ, ຖືຜົນປະໂຫຍດສ່ວນຕົວວ່າເປັນອັນດຽວກັບຜົນປະໂຫຍດລວມ.

ຊາວກຳມະກອນຈະຮູ້ສຶກຕົວວ່າເປັນເຈົ້າຂອງການຜະລິດ, ເປັນເຈົ້າໂຊກຊາຕາກຳຂອງຕົນກໍຕໍ່ເມື່ອ ເພິ່ນສົນໃຈຕໍ່ຄວາມ

ຄິດຄວາມເຫັນຂອງຊາວກຳມະກອນຄົນນັ້ນ, ເອົາໃຈໃສ່ຕໍ່ທ່າທີ ທັດສະນະຂອງຊາວກຳມະກອນຄົນນັ້ນ ໃນການວາງແຜນການ ທາງດ້ານສັງຄົມແລະເສດຖະກິດ. ອັນນັ້ນສະແດງໃຫ້ເຫັນເຖິງ ການພົວພັນກັນຢ່າງແໜ້ນແຟ້ນລະຫວ່າງເປົ້າໝາຍທາງການ ເມືອງແລະທາງດ້ານການຜະລິດ. (ຕົບມື.)

ການທີ່ກຳມະບານເສີມຂະຫຍາຍການເຂົ້າຮ່ວມຂອງຊາວຜູ້ ອອກແຮງງານໃນການຄຸ້ມຄອງການຜະລິດນັ້ນ ມັນສະແດງໃຫ້ ເຫັນເຖິງລັກສະນະປະຊາທິປະໄຕປະການໜຶ່ງ ຂອງ ສັງຄົມ ແບບສັງຄົມນິຍົມ. ກຳມະບານທີ່ເປັນກຳລັງໜຶ່ງທາງສັງຄົມທີ່ ມີອິດທິພົນສູງ ມີບົດບາດອັນໃຫຍ່ຫລວງໃນລະບົບການ ເມືອງ ຂອງພວກເຮົາ, ໃນການເສີມຂະຫຍາຍປະຊາທິປະໄຕ ແບບ ສັງຄົມນິຍົມຢ່າງທົ່ວໄປ. ບັນຫາຫຼຸມແຈໃນເລື່ອງນີ້ ທີ່ຄ້າຍຄື ກັບເນື້ອໃນຂອງສັບຄຳທີ່ວ່າປະຊາທິປະໄຕ ກໍຄື ອຳນາດຂອງ ປະຊາຊົນເຊິ່ງໝາຍເຖິງການເຂົ້າຮ່ວມຂອງມະຫາຊົນ . ໃນ ການແກ້ໄຂບັນຫາທາງລັດແລະສັງຄົມ ຫລືເວົ້າອີກ ຢ່າງໜຶ່ງ ວ່າການປົກຄອງຂອງປະຊາຊົນ (ຕາມຄຳເວົ້າຂອງເລນິນ) (ເລນິນ, ຄົບຊຸດ, ເຫລັ້ມ ນ໌໔ , ໜ້າ ນ໌໑໖).

ສັງຄົມນິຍົມ ແລະປະຊາທິປະໄຕເປັນສິ່ງທີ່ແຍກຕົວ ອອກ ຈາກກັນບໍ່ໄດ້ເດັດຂາດ. ໃນການກໍ່ສ້າງ ລະບອບກອມມູນິດ ພວກເຮົາຈະໄດ້ເສີມຂະຫຍາຍປະຊາທິປະໄຕຕໍ່ໄປ. ແນ່ນອນ ວ່າພວກເຮົາໝາຍເຖິງປະຊາທິປະໄຕແບບສັງຄົມນິຍົມ ທີ່ປະ ກອບດ້ວຍວຽກການທາງການເມືອງ, ສັງຄົມແລະເສດຖະກິດ,

ປະຊາທິປະໄຕທີ່ຮັບປະກັນ ຄວາມເປັນທຳທາງສັງຄົມ ແລະ ຄວາມມີສິດສະເໝີພາບທາງສັງຄົມ (ຕົບມືຢ່າງຍືດຍາວ).

ບັນດາສະຫາຍ ! ໃນປະຈຸບັນນີ້ ໃນປະເທດເຮົາ ມີອົງການກຳມະບານຂັ້ນພື້ນຖານ ກ໐໐ ພັນອົງການ, ມີຄະນະກຳມະການກຳມະບານປະຈຳໂຮງຮັດວຽກ ປະມານ ໕ ແສນຄະນະ, ມີໜ່ວຍກຳມະບານ ໔,໕ ລ້ານໜ່ວຍ. ອັນ ນັ້ນ ໝາຍເຖິງກຳລັງທີ່ໃຫຍ່ແທ້ ເຊິ່ງປະຕິບັດການໃນແນວ ໜ້າ ຂອງການປະຕິບັດແຜນການ ໕ ປີ, ການປະຕິບັດແຜນການທີ່ແນໃສ່ປັບປຸງປະສິດທິພາບ ແລະຄຸນນະພາບຂອງການຜະລິດ; ກຳລັງດັ່ງກ່າວພວມປະຕິບັດການຢູ່ໃນບັນດາຄະນະ ເຮັດວຽກລວມໝູ່ ເຊິ່ງພວມເຮັດໃຫ້ສັບຄຳທີ່ວ່າ "ການເມືອງ","ເສດຖະກິດ" ກາຍເປັນການກະທຳຕົວຈິງ ແລະ ເຊິ່ງໃນນັ້ນ ທ່າທີທັດສະນະຂອງມະນຸດທີ່ມີຕໍ່ຊີວິດແລະສັງຄົມ ພວມໄດ້ຮັບການສ້າງຂຶ້ນ.

ສຳລັບຊາວຜູ້ອອກແຮງງານນັ້ນ ຄະນະເຮັດວຽກ ລວມໝູ່ຄ້າຍຄືກັບເຮືອນຢູ່, ຄອບຄົວແລະໂຮງຮຽນ.ຄະນະເຮັດວຽກລວມໝູ່ເປັນບ່ອນເຊິ່ງແມ່ນຊາວຜູ້ອອກແຮງງານ ສືບທອດມູນເຊື້ອແຫ່ງວິຊາຊີບ, ຄວາມຊຳນິຊຳນານ, ຄວາມຮູ້ຈັກ ເຮັດວຽກຢ່າງດຸໝັ່ນພາກພຽນ, ເປັນບ່ອນເຊິ່ງໃນນັ້ນ ຊາວໜຸ່ມສືບທອດມູນເຊື້ອແຫ່ງແນວຄິດກອມມູນິດ, ຄວາມຊື່ສັດ ຕໍ່ພັກ, ຄວາມກຽມພ້ອມທີ່ຈະເຮັດວຽກໃນແນວໜ້າ, ໃນບ່ອນທີ່ໜັກໜ່ວງກວ່າໝູ່ ເຊິ່ງເປັນບ່ອນຕັດສິນບັນຫາ.

ຄະນະເຣັດວຽກລວມໝູ່ ໃກ້ຊິດຕິດແທດ ກັບໜ່ວຍກຳມະບານ, ຄະນະກຳມະການກຳມະບານ, ອົງການກຳມະບານ. ຊາວກຳມະບານທີ່ດີເດັ່ນ ນັບເປັນລ້ານໆຄົນ ທີ່ມີຄວາມຫ້າວຫັນແລະນ້ຳໃຈລິເລີ່ມ ພວມນຳເອົາຄວາມດີ, ຄວາມຈົດຈໍດູແລ, ຄວາມຊ່ວຍເຫລືອມາຍັງຊາວຜູ້ອອກແຮງງານທຸກຄົນ, ທຸກຄອບຄົວ ໂດຍສະໝັກໃຈແລະໂດຍບໍ່ເອົາຄ່າຕອບແທນ. ພວກເຮົາຕ້ອງຮູ້ບຸນຄຸນຢ່າງເລິກເຊິ່ງ ຕໍ່ວຽກການອັນໜັກ ແຕ່ມີຜົນດີຂອງຊາວກຳມະບານທີ່ດີເດັ່ນ.(ຕົບມືຢາງຍືດຍາວ .)

ບັນດາສະຫາຍ ! ຂ້າພະເຈົ້າມີຂໍ້ສັງເກດ ຂໍ້ໜຶ່ງອີກ : ທິດທາງຂອງພັກທີ່ຈະນຳໄປສູ່ປະສິດທິພາບແລະຄຸນນະພາບນັ້ນ ມັນຕິດພັນກັນໂດຍກົງກັບວິທີການເຮັດວຽກທາງສັງຄົມນັບລວມທັງວິທີການເຮັດວຽກຂອງກຳມະບານ. ເພິ່ນບໍ່ຄວນ ປະຕິບັດມາດຕະການຫລາຍໂພດ. ພວກເຮົາຈັດຕັ້ງການປະຊຸມອັນຍືດຍາວຫລາຍໂພດ, ຜ່ານມະຕິຕ່າງໆຫລາຍໂພດ, ໃຫ້ ຄຳສັ່ງຕ່າງໆຫລາຍໂພດ; ໃນຂະນະດຽວກັນນັ້ນ ພວກເຮົາລືມກ່ຽວກັບການກວດເບິ່ງວ່າ ບັນດາມາດຕະການ ເຊິ່ງລ້ວນແຕ່ມີຢູ່ໃນເຈັ້ຍນັ້ນ ມັນສາມາດແກ້ໄຂບັນຫາໄດ້ຫລືບໍ່.(ຕົບມືຢ່າງຍືດຍາວ). ປະລິມານຂອງເຈັ້ຍ, ເວລາອັນຍືດຍາວ ຂອງການປະຊຸມຕ່າງໆ ບໍ່ເປັນຫລັກເກນທີ່ສະແດງໃຫ້ເຫັນເຖິງປະສິດທິພາບຂອງວຽກການທາງສັງຄົມ; ຫລັກເກນນັ້ນ ກໍຄື ທິດທາງການເມືອງຢ່າງຈະແຈ້ງ, ຄວາມເອົາຈິງເອົາຈັງ ແລະ ຜົນງານຕົວຈິງ.(ຕົບມືຢ່າງຍືດຍາວ.)

ບັນດາສະຫາຍ ! ກຳມະບານໂຊວຽດ ມີພື້ນຖານທາງວັດຖຸອັນໃຫ່ຍ, ມີຄວາມອາດສາມາດທາງການເງິນ ຢ່າງກວ້າງຂວາງ.

ໃນປະຈຸບັນນີ້, ໂດຍຖືກຕ້ອງຕາມບັນດາມະຕິຂອງກອງປະຊຸມໃຫ່ຍຄັ້ງທີ XXV ຂອງພັກ ເພີ່ມເລີ່ມປະຕິບັດການດັດປ່ຽນຮູບຮ່າງຂອງກຳມະບານປະຈຳອາຊີບ, ເລີ່ມປັບປຸງວິທີ ການເຮັດວຽກຂອງກຳມະບານເຫລົ່ານັ້ນ ເຊິ່ງຈະໄດ້ເກີດຜົນດີແກ່ວຽກງານຂອງກຳມະບານທັງຫລາຍຂອງປະເທດເຮົາ.

ບັນດາກຳມະບານ ສາມາດໃຊ້ວິທີການຫລາຍຮູບ ຫລາຍຢ່າງເພື່ອປະຕິບັດບັນດາສິດທິຂອງຕົນ ຄືການປະຊຸມຂອງຊາວກຳມະບານ, ການປະຊຸມຂອງຊາວຜູ້ອອກແຮງງານ ປະຈຳວິສາຫະກິດ, ຂໍ້ຕົກລົງກັນລະຫວ່າງວິສາຫະກິດຕ່າງໆ. ບັນດາກຳມະບານກໍໄດ້ມີສິດທີ່ຈະຍົກຮ່າງກົດຫມາຍ. ເວົ້າຢ່າງທົ່ວໄປນັ້ນ ກຳມະບານມີສິດແລະຄວາມສາມາດຫລາຍ; ອັນສຳຄັນກ່ວາຫມູ່ນັ້ນ ກໍຄືການໃຊ້ມັນຢ່າງຄົບຖ້ວນ ແລະມີປະສິດທິພາບສູງ.

ບັນດາສະຫາຍ ! ພັກເຮົາຈະໄດ້ສະຫນັບສະຫນູນບັນດາຂໍ້ຮຽກຮ້ອງທີ່ເປັນທຳທີ່ກຳມະບານມີຕໍ່ຜູ້ນຳທາງເສດຖະກິດ , ຜູ້ອຳນວຍການຂອງວິສາຫະກິດຕ່າງໆ.(ຕົບມືຢ່າງຍືດຍາວ). ຂ້າພະເຈົ້າຢາກກ່າວເນັ້ນເຖິງສັບຄຳທີ່ວ່າ "ທີ່ເປັນທຳ" ເປັນພິເສດ.(ຕົນເຕັ້ນ.)

ບັນດາຜູ້ແທນ ! ຍຸກສະໄຫມນີ້ ເປັນຍຸກສະໄຫມ ແຫ່ງ

ການເສີມຂະຫຍາຍບົດບາດອັນເປັນປະຫວັດການ ຂອງຊາວຜູ້ອອກແຮງງານ. ໃນທົ່ວໂລກບັນດາຊາວຜູ້ອອກແຮງງານຍືນຢູ່ໃນແນວຫນ້າແຫ່ງການຕໍ່ສູ້ ເພື່ອສັນຕິພາບແລະຄວາມປອດໄພທາງສາກົນ, ເພື່ອການປົດປ່ອຍຊາດ ແລະ ຄວາມກ້າວຫນ້າທາງສັງຄົມ. ພວກເຂົາພວມຍຶດໂຊກຊາຕາ ຂອງຄວາມສີວິໄລຢູ່ໃນກຳມືຂອງຕົນ ເຊິ່ງເປັນກຳມືທີ່ເຂັ້ມແຂງທີ່ສຸດ. (ຕົບມື).

ກອງປະຊຸມໃຫຍ່ຄັ້ງຫລັງໆນີ້ຂອງພັກເຮົາໄດ້ຕີລາຄາຕໍ່ການປ່ຽນແປງພາຍໃນຂະບວນການກຳມະກອນ ແລະ ກຳມະບານ. ພວກເຮົາຖືວ່າຂະບວນກຳມະກອນ ພວມກາຍເປັນປັດໃຈທີ່ສຳຄັນຂອງຄວາມກ້າວຫນ້າທາງສັງຄົມ. ພ້ອມກັນນັ້ນຄວາມຮັບຜິດຊອບຂອງຂະບວນການທີ່ມີຕໍ່ປະຫວັດສາດນັ້ນ ມັນກໍໄດ້ຮັບການຍົກສູງຂຶ້ນ. ດ້ວຍເຫດນັ້ນ ເພີ່ນຕ້ອງປັບປຸງຄວາມສາມັກຄີກັນຂອງກ້ອນກຳລັງ ແຫ່ງຊາວຜູ້ອອກແຮງງານ ຂອງທົ່ວໂລກ , ຄວາມສາມັກຄີກັນໃນການຕໍ່ສູ້ ເພື່ອຄວາມກ້າວຫນ້າ ທາງສັງຄົມ, ສັນຕິພາບແລະຄວາມປອດໄພ ຂອງບັນດາ ປະຊາຊາດ. (ຕົບມື.)

ກອງປະຊຸມໃຫຍ່ຄັ້ງທີ XVI ຂອງກຳມະບານເຊິ່ງແມ່ນຕົວແທນຂອງບັນດາພາກພື້ນຕ່າງໆຂອງໂລກ ໄດ້ເຂົ້າຮ່ວມນັ້ນໄດ້ສະແດງໃຫ້ເຫັນເຖິງຄວາມມີຊີວິດຊີວາຂອງຄຳຂວັນຊາວ "ກຳມາຊີບຂອງທົ່ວໂລກ ຈົ່ງສາມັກຄີກັນ" , ສະແດງໃຫ້ເຫັນວ່າບັນດາປະເທດຕ່າງໆເຂົ້າໃຈຄວາມຫມາຍສຳຄັນຂອງຄຳຂວັນນັ້ນເປັນຢ່າງດີ. ຂໍສະແດງຄວາມອວຍພອນ ມາຍັງບັນດາ ແຂກ

ຕ່າງປະເທດ.(ຕົບມືຢາງຍືດຍາວ.)

ພວກເຮົາເຊື່ອໝັ້ນວ່າ ໃນປະຈຸບັນນີ້ ມີເງື່ອນໄຂອັນດີແກ່ການຈັດຕັ້ງ ການຮ່ວມມືກັນລະຫວ່າງ ກະແສຕ່າງໆ ຂອງຂະບວນການກຳມະກອນ ທັງທາງດ້ານຊົນຊາດແລະທາງດ້ານສາກົນ. ກຳມະບານຕ່າງໆເສີມຂະຫຍາຍສາຍສຳພັນກັນກັບ ກຳມະບານທີ່ຍຶດໝັ້ນໃນທ່າອຽງ ທີ່ແຕກຕ່າງກັນ, ເສີມຂະຫຍາຍການຮ່ວມມືກັນກັບກຳລັງຕ່າງໆທາງສັງຄົມ.

ພວກເຮົາຊົມເຊີຍ ການກະທຳທຸກຢ່າງ ທີ່ແນໃສ່ ຊອກຫາທ່າທີລວມ ແລະການຮ່ວມມືກັນລະຫວ່າງສູນກາງ ກຳມະບານຂອງໂລກ (ສະຫະພັນກຳມະບານຂອງໂລກ, ສະຫະພັນກຳມະບານເອກະລາດຂອງໂລກ, ສະຫະພັນການອອກ ແຮງງານຂອງໂລກ). (ຕົບມື.)

ແນ່ນອນວ່າ ການຮັບປະກັນຄວາມສາມັກຄີກັນຂອງຂະບວນການກຳມະບານຂອງໂລກນັ້ນມັນບໍ່ແມ່ນວຽກງ່າຍດາຍ. ແຕ່ວ່າ ພວກເຮົາເຊື່ອໝັ້ນວ່າ ຂະບວນວິວັດດັ່ງກ່າວຈະໄດ້ເດີນຕາມເສັ້ນທາງນີ້ເອງ. ຢ່າງໃດກໍຕາມ, ກຳມະບານໂຊວຽດ ໄດ້ເດີນແລະພວມເດີນຕາມເສັ້ນທາງນີ້. (ຕົບມື.)

ສ່ວນບັນຫາວ່າດ້ວຍນະໂຍບາຍຕ່າງປະເທດນັ້ນ ຂ້າພະເຈົ້າຢາກກ່າວເນັ້ນວ່າ ໃນເວທີສາກົນວຽກງານຂອງພັກເຮົາແລະລັດໂຊວຽດ ອັນເປັນວຽກງານທີ່ກວ້າງຂວາງແລະສັບສົນນັ້ນ ມັນໄດ້ຖືກກຳນົດດ້ວຍໂຄງການດຳເນີນການຕໍ່ສູ້ ເພື່ອສັນຕິພາບແລະການຮ່ວມມືກັນທາງສາກົນຕໍ່ໄປ ເຊິ່ງແມ່ນກອງປະ

ຊຸມໃຫຍ່ຄັ້ງທີ XXV ໄດ້ວາງອອກ. ແນ່ນອນວ່າມັນບໍ່ເປັນໂຄງການດຳເນີນງານເປັນໄລຍະໜຶ່ງປີ. ເຖິງເປັນແນວນັ້ນກໍຕາມໃນໄລຍະເວລາໜຶ່ງປີທີ່ຜ່ານໄປ ພວກເຮົາໄດ້ເຮັດຫລາຍສິ່ງຫລາຍຢ່າງພໍສົມຄວນ.

ກ່ອນອື່ນໝົດ ມັນແມ່ນວຽກງານປັບປຸງຄວາມສາມັກຄີຂອງບັນດາປະເທດສັງຄົມນິຍົມອ້າຍນ້ອງ, ການເຮັດໃຫ້ການຮ່ວມມືກັນຢ່າງຮອບດ້ານ ເລິກເຊິ່ງຍິ່ງຂຶ້ນ.

ການຕິດຕໍ່ກັນ, ສາຍສຳພັນກັນລະຫວ່າງຜູ້ນຳ ຂອງບັນດາປະເທດສັງຄົມນິຍົມ ພວມໄດ້ຮັບການຂະຫຍາຍຕົວ ຍິ່ງຂຶ້ນ. ພາຍຫລັງກອງປະຊຸມໃຫຍ່ຄັ້ງທີ XXV ຂອງ ພ.ກ.ສ.ຊ.ບັນດາຜູ້ນຳຂອງບັນດາພັກອ້າຍນ້ອງ ໄດ້ເຂົ້າຮ່ວມ ກອງປະຊຸມສາມຄັ້ງແລ້ວ (ໃນນະຄອນແບັກແລ້ງ, ບູຣາເລດ ແລະ ໃນ ມົດສະກູ) ໂດຍບໍ່ນັບການພົບປະສົນທະນາກັນໃນແຫລມກະລີມ. ໃນນະຄອນ ໂຊເຟຍ ຫາກໍໄດ້ມີກອງປະຊຸມຄັ້ງທີ ໔ ຂອງເລຂາທິການແຫ່ງສູນກາງພັກທີ່ຮັບຜິດຊອບຕໍ່ ບັນຫາຕ່າງປະເທດ ແລະບັນຫາແນວຄິດ, ໃນມໍ່ໆນີ້ ຈະໄດ້ມີກອງປະຊຸມ ຂອງເລຂາທິການສູນກາງພັກທີ່ຮັບຜິດຊອບຕໍ່ບັນຫາການຈັດຕັ້ງ ວຽກການຂອງພັກ, ຈະໄດ້ມີກອງປະຊຸມຄັ້ງທຳອິດຂອງລັດຖະມົນຕີວ່າການຕ່າງປະເທດຂອງບັນດາປະເທດພາຄີສົນທິສັນຍາ ວໍຊໍ.

ໃນປີ ໑໙໑໔ ທີ່ໄດ້ຜ່ານໄປແຕ່ດົນນານແລ້ວ, ເມື່ອ ໂລກເຮົາໄດ້ຖືກແບ່ງແຍກ ດ້ວຍຄວາມອາຄາດ ບາດໝາງແລະຄວາມຄຽດຊັງແຫ່ງສົງຄາມຈັກກະພັດນິຍົມນັ້ນ ທ່ານເລນິນ ທີ່

ໄດ້ຄິດເຖິງອະນາຄົດ ໄດ້ຂຽນໄວ້ວ່າ "ຂະບວນການສັງຄົມນິຍົມ ... ພວມສ້າງຮູບການໃຫ່ມທີ່ສູງສົ່ງ ຂອງການຢູ່ ຮ່ວມກັນລະຫວ່າງມະນຸດ ເຊິ່ງໃນນັ້ນ ຄວາມຕ້ອງການອັນຊອບທຳ ແລະຄວາມມຸ່ງມາດປາຖະໜາທີ່ກ້າວໜ້າ ຂອງມະຫາຊົນ ຜູ້ອອກແຮງງານຂອງທຸກຊົນຊາດຊົນເຜົ່າ ຈະໄດ້ຮັບຄວາມຕອບສະໜອງໃນຂອບເຂດທາງສາກົນ..." (ເລນິນ, ລົບຊຸດ, ເຫລັ້ມ ໔໖, ໜ້າ ๓໙ - ໔໐) ໃນປະຈຸບັນນີ້ ອັນນັ້ນໄດ້ກາຍເປັນການກະທຳຕົວຈິງຂອງຄອບຄົວໃຫ່ຍ ທີ່ສະໜິດສະໜົມຂອງບັນດາປະເທດສັງຄົມນິຍົມ (ຕົບມື). ບໍ່ພຽງແຕ່ອົງການສູນກາງທັ້ນນັ້ນ ຫາກຍັງແມ່ນອົງການທຸກຂັ້ນ ທາງດ້ານພັກ, ໂຊວຽດ, ເສດຖະກິດ, ອົງການຈັດຕັ້ງມະຫາຊົນ ນັບລວມທັງກຳມະບານຕ່າງກໍພວມປະກອບສ່ວນເຂົ້າໃນວຽກການດັ່ງກ່າວມາເທິງນີ້.

ໃນປະຈຸບັນນີ້ ຊາວໂຊວຽດນັບເປັນໝື່ນເປັນແສນຄົນພວມເຮັດວຽກຢູ່ໃນບັນດາປະເທດອ້າຍນ້ອງ ເພື່ອຊ່ວຍເຫລືອແກ່ບັນດາເພື່ອນມິດທີ່ຈະກໍ່ສ້າງສູນກາງເສດຖະກິດ ເຊັ່ນ ໂຮງງານຖະຫລຸງເຫລັກແຫ່ງໃຫ່ຍໃນປະເທດໂປໂລຍ (ໃນເມືອງກາໂຕວິເຊ). ໃນປະເທດເຮົາ ກໍໄດ້ມີຊາວກຳມະກອນແລະຜູ້ຊ່ຽວຊານຫລາຍຄົນ ໄດ້ມາຈາກປະເທດອ້າຍນ້ອງ ຕ່າງໆ. ການກໍ່ສ້າງທາງສິ່ງແກັດ ໂອເລັນບຸກ - ຊາຍແດນ ທາງຕາເວັນຕົກແຫ່ງ ສ.ສ.ສ.ຊ. ເຊິ່ງເປັນການກໍ່ສ້າງຮ່ວມກັນຂອງບັນດາປະເທດສັງຄົມນິຍົມນັ້ນ ມັນໄດ້ກ້າວຂຶ້ນ ๑.໔໐໐ກິໂລແມດ

ໃນປີກາຍນີ້. ອັນນັ້ນໄດ້ເປັນຜົນສຳເລັດອັນໃຫຍ່ ຂອງຄະນະບັນດາຊົນຊາດເຮັດວຽກລວມໝູ່ ຂອງການກໍ່ສ້າງແຫ່ງນັ້ນ ທີ່ມີກຳມະກອນ ໑໔ ພັນຄົນ. ໃນບໍ່ເຫິງມານີ້ການກໍ່ສ້າງແຫ່ງນີ້ເຊິ່ງເປັນທີ່ສົ່ງແກັດຍາວກ່ວາໝູ່ໃນຢູລົບ ຈະໄດ້ເລີ່ມປະຕິບັດການ.(ຕົບມື.)

ບັນດາປະເທດພາຄີສະພາຊ່ວຍເຫລືອກັນ ທາງເສດຖະກິດໄດ້ເຂົ້າຮ່ວມ- ການສ້າງ ຊຸດສາຫະກຳຜະລິດ ນີເກັນ ໃນປະເທດກູຍບາ. ການແບ່ງປັນແລະການປະສານງານກັນຂອງບັນດາປະເທດເຫລົ່ານັ້ນ ໃນການສ້າງເຄື່ອງອຸປະກອນສຳລັບສະຖານີຜະລິດພະລັງງານໄຟຟ້າໃຊ້ປະລະມານູ ເຊິ່ງ ຫາກໍເລີ່ມຕົ້ນນັ້ນ ມັນກໍມີຄວາມໝາຍສຳຄັນຢ່າງຫລວງຫລາຍ.

ພວກເຮົາທຸກຄົນ ໄດ້ລຶ້ງເຄີຍກັບເລື່ອງນີ້ ແລະ ຖືມັນວ່າເປັນເລື່ອງທຳມະດາ. ອັນນັ້ນແມ່ນເລື່ອງດີ. ການທີ່ມີ ການຮ່ວມມືກັນຢ່າງແໜ້ນແຟ້ນ ໄດ້ກາຍເປັນພາກສ່ວນໜຶ່ງ ຂອງຄວາມນຶກຄິດແລະຊີວິດທັງໝົດ ຂອງພວກເຮົານັ້ນອັນນັ້ນເປັນເລື່ອງທີ່ດີແທ້.(ຕົບມື.)

ການລິເລີ່ມທີ່ດີຂອງຄະນະເຮັດວຽກລວມໝູ່ຂອງໂຮງງານອັນມີກຽດສູງຂອງປະເທດ ປະຊາຊົນຮູ່ງກາລີ ຄື ໂຮງງານ "ຈັບເປັນແດງ " ນັ້ນ ມັນພວມສະແດງໃຫ້ເຫັນເຖິງ ຄວາມມີຊີວິດຊີວາແລະຄວາມເຂັ້ມແຂງຂອງສາຍສຳພັນກັນຖານອ້າຍນ້ອງລະຫວ່າງ ປະຊາຊົນຂອງບັນດາປະເທດ ສັງຄົມນິຍົມ . ຊາວກຳມະກອນຂອງ "ຈັບເປັນແດງ" ໄດ້ເລີ່ມປະຕິບັດການ

ແຂ່ງຂັນສັງຄົມນິຍົມ ເພື່ອເປັນກຽດແກ່ວັນຄົບຮອບ ໖໐ປີຂອງການປະຕິວັດເດືອນຕຸລາທີ່ຍິ່ງໃຫຍ່ ແລະໄດ້ໃຫ້ຄຳໝັ້ນສັນຍາທີ່ຈະປະຕິບັດແຜນການຜະລິດຜົນ ສຳລັບ ສ.ສ.ສ.ຊ. ຢ່າງໄວກ່ວາທີ່ກຳນົດໄວ້, ຊາວກຳມະກອນຂອງບຸນກາລີ, ສາທາລະນະລັດປະຊາທິປະໄຕເຢຍລະມັນ, ໂປໂລຍ ແລະເຊັກໂກຊະໂລວາກີ ກໍ່ໄດ້ໃຫ້ຄຳໝັ້ນສັນຍາແນວນີ້ ເຊັ່ນດຽວກັນ.

ຈາກເວທີຂອງກອງປະຊຸມຄັ້ງນີ້ ຂໍສະແດງຄວາມ ຂອບໃຈຢ່າງບໍລິສຸດໃຈ ຕໍ່ຊາວຜູ້ອອກແຮງງານ ຂອງບັນດາ ປະເທດອ້າຍນ້ອງທີ່ໄດ້ສະແດງແບບຢ່າງຕົວຈິງຂອງຄວາມສາມັກຄີກັນກັບພາລະກິດແຫ່ງເດືອນຕຸລາ, ກັບປະເທດເຮົາ, ກັບວົງການກອມມູນິດຂອງພວກເຮົາ. (ຕົບມືຢ່າງຍືດຍາວ). ຂ້າພະເຈົ້າຄິດວ່າ ຂ້າພະເຈົ້າຈະສະແດງຄວາມຄິດເຫັນ ຂອງພວກເຮົາທຸກຄົນວ່າ ຊຸມຊົນກຳມະກອນໂຊວຽດ, ຊາວໂຊວຽດຜູ້ອອກແຮງງານທັງຫລາຍ ຈະໄດ້ຕອບຕໍ່ການລິເລີ່ມອັນສູງສົ່ງຂອງສະຫາຍຕ່າງປະເທດ ຢ່າງເໝາະສົມ ຄື ດ້ວຍການກະທຳໃຫມ່ໆ ໃນການກໍ່ສ້າງລະບອບກອມມູນິດ ແລະໃນການຂະຫຍາຍການຮ່ວມມືກັນຂອງພວກເຮົາໃຫ້ແໜ້ນແຟ້ນຍິ່ງຂຶ້ນ.(ຕົບມືຢ່າງຍືດຍາວ.)

ເວົ້າຢ່າງທົ່ວໄປ ອັນນັ້ນເປັນປາກົດການໃຫມ່ ທາງດ້ານຈຸນລະພາບ ຄື ຂະບວນການເຄື່ອນໄຫວທາງສາກົນຂອງຊາວຜູ້ອອກແຮງງານ ນັບເປັນລ້ານໆຄົນທີ່ພວມກໍ່ສ້າງ ໂລກໃຫມ່ໂດຍມີຈຸດປະສົງອັນດຽວ, ອັນນັ້ນເປັນການລິເລີ່ມທີ່ມີ ຄວາມ

ໝາຍທີ່ສຳຄັນຢ່າງຫລວງຫລາຍ ສຳລັບອະນາຄົດ (ຕົບມື).

ພວກເຮົາແລະພັນທະມິດຂອງພວກເຮົາ ໃນຄ່າຍສັງຄົມນິຍົມ ຕ່າງກໍດຳເນີນນະໂຍບາຍຕ່າງປະເທດ ທີ່ຍຶດໝັ້ນໃນທິດທາງຂອງເລນິນແຫ່ງສັນຕິພາບ. ບັນດາປະເທດສັງຄົມນິຍົມ ທີ່ເສີມຂະຫຍາຍການຮ່ວມມືກັນກັບບັນດາປະເທດ ທີ່ໄດ້ຮັບການປົດປ່ອຍໃຫ້ພົ້ນອອກຈາກການກົດຂີ່ແບບລ່າເມືອງຂຶ້ນ, ປະສານງານ (ຖ້າສາມາດເຮັດໄດ້) ກັບວົງການທີ່ມີ ສະຫມອງດີຂອງບັນດາປະເທດທຶນນິຍົມນັ້ນ ໄດ້ຍື່ນຂໍ້ສະເໜີແບບຕົວຈິງທີ່ແນໃສ່ປັບປຸງບັນຍາກາດ ທາງການເມືອງ ຂອງໂລກ. ໃນເດືອນພະຈິກປີນີ້ ບັນດາປະເທດພາຄີສົນທິສັນຍາ ວໍຊໍ ທີ່ໄດ້ໄຂກອງປະຊຸມຂອງຄະນະກຳມະການປຶກສາການເມືອງໄດ້ຍື່ນຂໍ້ສະເໜີແນວນັ້ນເອງ. ການຕໍ່ສູ້ຢ່າງສຸດກຳລັງສຸດປາຍ ຂອງຄ່າຍສັງຄົມນິຍົມ ເພື່ອສັນຕິພາບແລະຄວາມປອດໄພ ຂອງບັນດາປະຊາຊາດ ພວມໄດ້ຮັບຄວາມເຂົ້າໃຈ ຂອງມະຫາຊົນໃນຢູໂຣບ ແລະທົ່ວໂລກຢ່າງກວ້າງຂວາງ.

ແຕ່ວ່າ ໃນໂລກທຶນນິຍົມ ຍັງມີກຳລັງທາງການເມືອງ ທີ່ມີອິດທິພົນສູງ ເຊິ່ງຕັ້ງໃຈຢາກລ່ວງລະເມີດການສົນທະນາທາງສາກົນ. ບັນດາກຳລັງປະຕິການຂອງໂລກເກົ່າຍັງບໍ່ຢາກຍອມເຫັນດີນຳການຂະຫຍາຍຕົວອັນໃຫ່ມ .

ເຊັ່ນ ພວກເຂົາບໍ່ຍອມເຫັນດີນຳເສລີພາບ, ນະໂຍບາຍເອກະລາດແລະຄວາມກ້າວໜ້າທາງສັງຄົມ ຂອງບັນດາປະເທດອາຟະລິກາ ແລະ ອາຊີ ທີ່ໄດ້ຮັບການປົດປ່ອຍ ໃຫ້ພົ້ນ ຈາກ

ການກົດຂີ່ແບບລ່າເມືອງຂຶ້ນ. ໃນມໍ່ໆມານີ້ ປະເທດພາຄີ ກຸ່ມມາໂຕປະເທດຕ່າງໆໄດ້ແຊກແຊງເຂົ້າໃນກໍລະນີພິພາດ ພາຍໃນປະເທດ ຊາອິນ ໄດ້ເປີດບັ້ນຣົບໃສ່ຮ້າຍປ້າຍສີ ສາທາລະນະລັດປະຊາຊົນ ອັງໂກລາ. ການເຂັ່ນຂ້າ ມາລີອັນ ງູອາບີ, ປະທານາທິບໍດີຂອງສາທາລະນະລັດປະຊາຊົນ ໂກງໂກ, ກະມານ ຊູມບລັດ, ປະທານພັກສັງຄົມນິຍົມທີ່ກ້າວຫນ້າ ຂອງປະເທດ ລີບັງ ເຊິ່ງເປັນຜູ້ທີ່ດີເດັ່ນ ແຫ່ງຂະບວນການປົດປ່ອຍຊາດນັ້ນ ທັງຫມົດເຫລົ່ານັ້ນ ພິສູດໃຫ້ເຫັນເຖິງເລື່ອງນີ້. ປະຊາຊົນໂຊວຽດ ກ່າວປະນາມການຄາຕະກຳ ເຫລົ່ານັ້ນຢ່າງເດັດຂາດ.

ພວກເຂົາກໍສືບຕໍ່ປະຕິບັດ "ບັ້ນຣົບ" ຕ້ານໂລກສັງຄົມນິຍົມອີກດ້ວຍ, ພະຍາຍາມເຮັດໃຫ້ຄ້າຍສັງຄົມນິຍົມອ່ອນເພຍລົງ, ພະຍາຍາມທຳລາຍຄວາມສາມັກຄີກັນແລະລະບອບສັງຄົມນິຍົມ.

ສັດຕູຂອງພວກເຮົາ ພວມຊອກຫາກຳລັງພາຍໃນບັນດາປະເທດສັງຄົມນິຍົມ ທີ່ຄັດຄ້ານລະບອບສັງຄົມນິຍົມ. ແຕ່ວ່າມັນບໍ່ມີກຳລັງແນວນັ້ນດອກ, ຍ້ອນວ່າໃນສັງຄົມແບບສັງຄົມນິຍົມ ບໍ່ມີຊົນຊັ້ນທີ່ກົດຂີ່ ຫລືຖືກກົດຂີ່, ບໍ່ມີຊົນຊາດທີ່ຂູດຮີດ ຫລືຖືກຂູດຮີດ; ດ້ວຍເຫດນັ້ນ ສັດຕູຂອງພວກເຮົາປັ້ນແຕ່ງເລື່ອງອັນປອມແປງກ່ຽວກັບ "ຝ່າຍຄ້ານ" ພາຍໃນປະເທດສັງຄົມນິຍົມ, ປ່າວຮ້ອງກ່ຽວກັບ "ຄົນຜູ້ທີ່ມີແນວຄິດທີ່ຕ່າງກັນ", ກ່ຽວ ກັບ "ການລ່ວງລະເມີດສິດທິຂອງມະນຸດ"ໃນປະເທດສັງຄົມນິຍົມ.

ມັນຈະເວົ້າແນວໃດ ກ່ຽວກັບເລື່ອງນີ້ ? ພວກເຮົາອະນຸ

ຍາດໃຫ້ຜູ້ຄົນມີ "ແນວຄິດທີ່ຕ່າງກັນ" ຖ້າປຽບກັບ ແນວ ຄິດ ຂອງພົນລະເມືອງສ່ວນຫລວງຫລາຍ, ອະນຸຍາດໃຫ້ຜູ້ຄົນຕຳນິຕິຊົມດ້ານຕ່າງໆຂອງຊີວິດທາງສັງຄົມຂອງພວກເຮົາ. ພວກເຮົາສະແດງຄວາມຂອບໃຈຕໍ່ສະຫາຍ ທີ່ຕຳນິຕິຊົມຢ່າງມີເຫດມີຜົນ ແລະພະຍາຍາມຊ່ວຍແກ້ໄຂບັນຫານີ້ ບັນຫານັ້ນ.ຜູ້ຄົນທີ່ຕຳນິຕິຊົມຢ່າງບໍ່ມີເຫດບໍ່ມີຜົນເປັນຜູ້ຄົນທີ່ຫລົງເຊື່ອງົມງວາຍທໍ່ນັ້ນ.

ມັນແມ່ນເລື່ອງຫນຶ່ງອີກທີ່ວ່າ ມີຄົນຜູ້ທີ່ໄດ້ຫ່າງໄກ ຈາກສັງຄົມເຮົາ, ຜູ້ທີ່ຄັດຄ້ານລະບອບສັງຄົມນິຍົມຢ່າງຮ້າຍແຮງ, ຜູ້ທີ່ໄດ້ກ້າວເຂົ້າສູ່ເສັ້ນທາງແຫ່ງການເຄື່ອນໄຫວຕ້ານໂຊວຽດ, ລ່ວງລະເມີດກົດຫມາຍ, ຜູ້ທີ່ບໍ່ມີພື້ນຖານ ຢູ່ພາຍໃນປະເທດ ແລະພະຍາຍາມຊອກຫາການສະຫນັບສະຫນູນ ຈາກຕ່າງປະເທດ, ຈາກສູນກາງຈັກກະພັດ (ທາງດ້ານໂຄສະນາ ແລະ ທາງດ້ານກອງສືບລັດຊະການລັບ). ປະຊາຊົນເຮົາ ຮຽກຮ້ອງໃຫ້ລັດປະພຶດຕໍ່ຄົນພວກນັ້ນ ເຫມືອນກັບສັດຕູຂອງລະບອບສັງຄົມນິຍົມ, ເຫມືອນກັບຜູ້ທໍລະຍົດຕໍ່ປິຕຸພູມ,ລູກມືຫລືສາຍລັບຂອງພວກຈັກກະພັດ.(ຕົບມືຢ່າງຍືດຍາວ ແລະຟົດຟື້ນ).ແນ່ນອນວ່າ ພວກເຮົາໄດ້ປະຕິບັດ ແລະຈະປະຕິບັດ ການກະທຳທີ່ຖືກຕາມກົດຫມາຍເຮົາ ຕ້ານຄົນພວກເຫລົ່ານັ້ນ.(ຕົບມືຢ່າງຍືດຍາວ.)

ເຖິງວ່າ ມີຄົນຜູ້ທີ່ບໍ່ພໍໃຈກໍຕາມ ພວກເຮົາຄິດວ່າການປ້ອງກັນສິດເສລີພາບ, ຄວາມປອດໄພຂອງຊາວໂຊວຽດ໒໘໐ລ້ານ

ຄົນ ຈາກການເຄື່ອນໄຫວຂອງພວກທໍລະຍົດເຫລົ່ານັ້ນ ມັນບໍ່ພຽງແຕ່ເປັນສິດຂອງພວກເຮົາເທົ່ານັ້ນ ຫາກຍັງເປັນຫນ້າທີ່ອັນສັກສິດຂອງພວກເຮົາອີກດ້ວຍ. (ຕົບມື). ຫນ້າທີ່ທີ່ມີຕໍ່ ຫນ້າປະຊາຊົນ ເຊັ່ງ ຜົວ ປີຫລັງນີ້ ພາຍໃຕ້ການນຳພາ ຂອງພັກເລນິນ ໄດ້ກ້າວເຂົ້າສູ່ເສັ້ນທາງແຫ່ງການກໍ່ສ້າງ ສັງຄົມນິຍົມແລະກອມມູນິດ, ເປັນຫນ້າທີ່ທີ່ມີຕໍ່ຫນ້າປະຊາຊົນທີ່ໄດ້ປ້ອງກັນປິ່ຽພູມສັງຄົມນິຍົມ, ປ້ອງກັນສິດທີ່ຈະດຳລົງຊີວິດຂອງຕົນ ໄດ້ເສັຍສະລະເລືອດເນື້ອຂອງລູກຫລານ ໒໐ ລ້ານຄົນໃນມະຫາສົງຄາມຕ້ານພວກຟາຊິດຮຸກຮານ ເພື່ອສິດເສລີພາບ ຂອງບັນດາປະຊາຊາດ, ປະຊາຊົນເຊັ່ງຈະໄດ້ເດີນຕາມເສັ້ນທາງດັ່ງກ່າວຢ່າງເດັດຂາດ. (ຕົບມືຢ່າງຍືດຍາວ.)

ສ່ວນ ສ.ສ.ສ.ຊ. ນັ້ນ ພວກເຮົາບໍ່ແຊກແຊງເຂົ້າໃນກິດຈະການພາຍໃນຂອງປະເທດອື່ນ; ເຖິງເປັນແນວນັ້ນ ກໍຕາມພວກເຮົາມີຄວາມຄິດເຫັນຂອງຕົນກ່ຽວກັບລະບຽບການ ທາງສັງຄົມຂອງຈັກກະພັດ ແລະບໍ່ພະຍາຍາມເຮັດໃຫ້ຄວາມ ຄິດເຫັນນັ້ນກາຍເປັນຄວາມລັບ.ຕາມບັນດາມະຕິຂອງກອງປະຊຸມໃຫຍ່ຄັ້ງທີ XXV ຂອງ ພ.ກ.ສ.ຊ. ພວກເຮົາ ຕັ້ງຫນ້າສ້າງສາຍສຳພັນກັນກັບບັນດາປະເທດ ທຶນນິຍົມ ໂດຍອີງ ໃສ່ການຮ່ວມມືກັນເປັນໄລຍະຍາວໃນດ້ານຕ່າງໆ ເພື່ອເປັນ ພົນແກ່ການປົກປ້ອງສັນຕິພາບໃນທົ່ວໂລກ.

ຂໍເວົ້າບາງຄວາມກ່ຽວກັບເລື່ອງນີ້:

ກ່ອນອື່ນຫມົດ ແມ່ນກ່ຽວກັບສາຍສຳພັນກັບໂຊວຽດ-ອາເມ

ລິກາ ເຊິ່ງພວກເຮົາເອົາໃຈໃສ່ຫລາຍ. ສະພາບການໃນດ້ານ
ນີ້ ຖືກກຳນົດ ດ້ວຍປັດໃຈສາມຢ່າງ: ໜຶ່ງ - ພວກເຮົາ ມີ
ພື້ນຖານທີ່ດີ ຄື ໄດ້ຕົກລົງໃນຂໍ້ຕົກລົງ ແລະສົນທິສັນຍາ ໃນປີ
໑໙໗໒-໑໙໗໔ ກ່ຽວກັບການຮ່ວມມືກັນໃນດ້ານຕ່າງໆ; ສອງ
-ການຍຸດສະງັກໃນການຂະຫຍາຍສາຍສຳພັນກັນ, ຝ່າຍອາເມ
ລິກາໄດ້ອະທິບາຍວ່າ ອັນນັ້ນເປັນຍ້ອນການເລືອກຕັ້ງ ປະທາ
ນາທິບໍດີ. ໒ ເດືອນຜ່ານໄປພາຍຫລັງການເລືອກຕັ້ງ ແລ້ວ
ເຈົ້າໜ້າທີ່ຊຸດໃໝ່ກໍບໍ່ໄດ້ສະແດງຄວາມຕັ້ງໃຈ ທີ່ຈະເລີ່ມປະ
ຕິບັດການໃນດ້ານນີ້ ; ສາມ - ພວກເຮົາມີຄວາມອາດ ສາ
ມາດພາວະວິໄສສຳລັບການເສີມຂະຫຍາຍການຮ່ວມມືກັນຢ່າງ
ມີສິດສະເໝີພາບ ແລະມີຜົນຕໍ່ກັນແລະກັນໃນດ້ານຕ່າງໆເພື່ອ
ເປັນຜົນປະໂຫຍດແກ່ທັງສອງປະເທດແລະທົ່ວໂລກດ້ວຍ.

ສ່ວນເລື່ອງນີ້ ຂ້າພະເຈົ້າຢາກເວົ້າກ່ຽວກັບເປົ້າໝາຍຕົວ
ຈິງບາງປະການທີ່ພວກເຮົາຖືວ່າ ສາມາດເຮັດໄດ້. ກ່ອນອື່ນ
ໝົດ ຄື ເປົ້າໝາຍທີ່ຈະສຳເລັດການກະກຽມ ແລະການລົງ
ນາມ ເຊັນ ຂໍ້ຕົກລົງຂໍ້ໃໝ່ (ທີ່ໄດ້ຮັບການປຶກສາຫາລື ກັນ
ໃນປີ ໑໙໗໔) ກ່ຽວກັບການຈຳກັດອາວຸດຍຸດທະສາດຂະນິດ
ບຸກລຸກ; ການກ້າວຂຶ້ນສູ່ການຫລຸດຜ່ອນກຳລັງອາວຸດ ໂດຍອີງ
ໃສ່ຫລັກການຂອງຄວາມສະເໝີພາບກັນ ແລະຄວາມປອດໄພ
ຢ່າງເທົ່າທຽມກັນ. ການລິເລີ່ມຮ່ວມກັນຄັ້ງໃໝ່ ລະຫວ່າງ
ສ.ສ.ສ.ຊ. ແລະ ອາເມລິກາ ໃນດ້ານການຫ້າມໃຊ້ ແລະ
ການກຳຈັດອາວຸດເຄມີທີ່ຮ້າຍແຮງກວ່າໝູ່ ແລະມາດຕະການ

ອື່ນໆທີ່ສະກັດກັ້ນການແຂ່ງຂັນສ້າງອາວຸດ ແລະປົບປຸງ ຄວາມປອດໄພຂອງບັນດາປະຊາຊາດ. ການເສີມຂະຫຍາຍສາຍສຳພັນກັນທາງດ້ານການຄ້າ-ເສດຖະກິດຢ່າງກວ້າງຂວາງ ໂດຍອີງໃສ່ການລົບລ້າງມາດຕະການແບບຈຳແນກ ຈາກຝ່າຍອາເມລິກາ ແລະການໃຊ້ຂໍ້ຕົກລົງກັນທີ່ໄດ້ເຊັນກັນຕັ້ງແຕ່ດົນນານແລ້ວ. ສຸດທ້າຍ - ການປະສານງານຂອງທັງສອງ ປະເທດເພື່ອຮັບປະກັນການແກ້ໄຂບັນຫາຕາເວັນອອກກາງ ຢ່າງ ມີຄວາມເປັນທຳແລະຄວາມໝັ້ນຄົງ.

ພວກເຮົາຮຽກຮ້ອງໃຫ້ໃຊ້ຄວາມອາດສາມາດເຫຼົ່ານັ້ນ .

ໃນຂະນະດຽວກັນນັ້ນ ຍັງມີເລື່ອງບາງຢ່າງອີກທີ່ຂັດຂວາງການເສີມຂະຫຍາຍສາຍສຳພັນກັບໂຊວຽດ-ອາເມລິກາ! ໜຶ່ງ-ການເປີດບັ້ນຮົບໃສ່ຮ້າຍປ້າຍສີ ກ່ຽວກັບ " ໄພອັນຕະລາຍທາງທະຫານຈາກຝ່າຍໂຊວຽດ." ຂ້າພະເຈົ້າໄດ້ເວົ້າມາກ່ຽວກັບເລື່ອງນີ້ໃນມື້ໆມານີ້ແລ້ວ. ສອງ-ຄວາມພະຍາຍາມ ໂດຍກົງຂອງເຈົ້າໜ້າທີ່ອາເມລິກາ ທີ່ຈະແຊກແຊງເຂົ້າໃນກິດຈະການພາຍໃນແຫ່ງ ສ.ສ.ສ.ຊ.

ຂ້າພະເຈົ້າຄິດວ່າ ປະເທດເອກະລາດບໍ່ອາດຈະຍອມເຫັນດີນຳຄວາມພະຍາຍາມຂອງ ວໍຊິງຕັນ ທີ່ຈະຕີຕົວວ່າເປັນ "ຄູສອນ" ໂດຍບໍ່ວ່າ ສະພາບການພາຍໃນອາເມລິກາ ເອງ , ການກະທຳແລະນະໂຍບາຍທາງສາກົນຂອງອາເມລິກາ ບໍ່ອຳນວຍເງື່ອນໄຂທີ່ຈະຕີຕົວວ່າ ເປັນຄູສອນ.(ຕົບມື.)

ຂ້າພະເຈົ້າຢາກກ່າວເນັ້ນອີກເທື່ອໜຶ່ງວ່າພວກເຮົາຄັດຄ້ານ

ການແຊກແຊງເຂົ້າໃນກິດຈະການພາຍໃນຂອງປະເທດ ເຮົາ ໂດຍບໍ່ວ່າຈາກປະເທດໃດ, ໃຊ້ເຫດຜົນໃດກໍຕາມ. ແນ່ນອນວ່າ ມັນບໍ່ອາດໃຊ້ພື້ນຖານແນວນີ້ ເພື່ອຂະຫຍາຍ ສາຍສຳພັນກັນລະຫວ່າງປະເທດໄດ້.(ຕົບມືຢ່າງຍືດຍາວ.)

ສ.ສ.ສ.ຊ. ໄດ້ປ້ອງກັນ ແລະຈະປ້ອງກັນສິດເອກະລາດ, ກຽດສັກສີ ແລະຜົນປະໂຫຍດຂອງຕົນຢ່າງເດັດຂາດ.(ຕົບມື). ພ້ອມກັນນັ້ນ ທ່າທີແບບຮູ້ສະພາບຕົວຈິງ ຂອງຝ່າຍອື່ນກໍຈະໄດ້ຮັບຄວາມເຂົ້າໃຈກັນ ແລະການກຽມພ້ອມທີ່ຈະຕົກລົງກັນຂອງພວກເຮົາ.

ໃນມື້ນີ້ ທ່ານ ແວນ, ລັດຖະມົນຕີຕ່າງປະເທດ ຂອງອາເມລິກາຈະໄດ້ມາມົດສະກູ ເພື່ອດຳເນີນການເຈລະຈາກັນ . ລອງເບິ່ງດູວ່າ ທ່ານແວນຈະໄດ້ນຳເອົາຫຍັງ ມາມົດສະກູ . ຫມົດສູ່ຄົນເຂົ້າໃຈຢ່າງດີວ່າ ບັນຫາວ່າດ້ວຍການ ຂະ ຫຍາຍສາຍສຳພັນກັບໂຊວຽດ-ອາເມລິກາ ເປັນບັນຫາ ທີ່ ສຳຄັນ. ພວກເຮົາຢາກເຮັດສາຍສຳພັນກັນນັ້ນ ເປັນແບບເພື່ອນ ບ້ານໃກ້ຄຽງ. ເພື່ອເຮັດແນວນັ້ນ ມັນຕ້ອງສະແດງຄວາມເຂົ້າໃຈກັນ ຫລື ຢ່າງນ້ອຍທີ່ສຸດ ກໍມີທ່າທີສຸພາບຕໍ່ກັນແລະກັນ.

ແນ່ນອນວ່າ ພວກເຮົາເຊື່ອຫມັ້ນວ່າ ຜົນປະໂຫຍດຂອງປະຊາຊົນຂອງທັງສອງປະເທດ ແລະສັນຕິພາບຂອງໂລກ ຈະໄດ້ຮັບການຮັບປະກັນແລະວ່າ ສາຍສຳພັນກັບໂຊວຽດ - ອາເມລິກາຈະໄດ້ເປັນປົກກະຕິ. ແຕ່ວ່າໄລຍະເວລາພວມຜ່ານ ໄປເຊິ່ງໃນນັ້ນ ພວກເຮົາອາດໄດ້ເຮັດຫລາຍ ທີ່ມີຜົນແກ່ສາຍສຳ

ພັນກັນດັ່ງກ່າວ.

ສ່ວນສາຍສຳພັນກັບບັນດາປະເທດຢູລົບຕາເວັນຕົກນັ້ນ ມັນດີພໍສົມຄວນ. ໃນໄລຍະເວລາແຕ່ກ່ອນ ສ.ສ.ສ.ຊ. ແລະປະເທດຝະລັ່ງໄດ້ເປັນປະເທດທຳອິດທີ່ບຸກເບີກຫົນທາງ ແຫ່ງການລົດຜ່ອນຄວາມເຄັ່ງຕຶງ, ເພິ່ນເອີ້ນສາຍສຳພັນໂຊວຽດ-ຝະລັ່ງວ່າ ເປັນ "ປະຖົມມະລຶກ". ໃນປະຈຸບັນນີ້ສະພາບການບໍ່ໄດ້ປຽນແປງຫລາຍປານໃດ; ພວກເຮົາຕິດຕໍ່ກັນທາງ ດ້ານເສດຖະກິດແລະວັດທະນະທຳຢ່າງເອົາຈິງເອົາຈັງ, ພວກເຮົາກໍຮ່ວມມືກັນທາງດ້ານນະໂຍບາຍຕ່າງປະເທດ ບາງດ້ານເຊັ່ນດຽວກັນ. ສ.ສ.ສ.ຊ. ຕີລາຄາສູງຕໍ່ການທີ່ຜູ້ນຳ ຝະລັ່ງ , ສາທາລະນະລັດສະຫະພັນເຢຍລະມັນ ອີຕາລີ, ອັງກິດ ສະຫນັບສະຫນູນນະໂຍບາຍແຫ່ງການລົດຜ່ອນຄວາມເຄັ່ງຕຶງ, ນະໂຍບາຍແຫ່ງການຮ່ວມມືກັນຢ່າງສັນຕິ, ສ່ວນສາຍສຳພັນ ໂຊວຽດ-ສ.ສ.ຢ. ນັ້ນ ເພິ່ນອາດແລະຕ້ອງເຮັດຫລາຍຕື່ມອີກ; ມີເງື່ອນໄຂເບື້ອງຕົ້ນບາງຢ່າງສຳລັບການດຳເນີນຕໍ່ໄປ. ດັ່ງທີ່ຮູ້ກັນວ່າ ໃນປີນີ້ຂ້າພະເຈົ້າຈະໄດ້ໄປຢ້ຽມຢາມຝະລັ່ງແລະ ສ.ສ.ຢ. ພວກເຮົາຫວັງວ່າ ການເຈລະຈາກັນຄັ້ງຫນ້ານີ້ ຈະສ້າງເງື່ອນໄຂໃຫ່ມແກ່ການຂະຫຍາຍສາຍສຳພັນກັນ.

ການຟື້ນຟູສາຍສຳພັນກັບໂຊວຽດ-ສະເປັນ ໃນມໍ່ໆມານີ້ໄດ້ກາຍເປັນເຫດການທີ່ສຳຄັນໃນຊີວິດທາງການເມືອງຂອງຢູລົບ. ໃນໄລຍະເວລາຫລັງນີ້ ພວກເຮົາໄດ້ສ້າງການຮ່ວມມືກັນອັນດີກັບປະເທດນີ້ ເປັນຕົ້ນແມ່ນທາງດ້ານເສດຖະກິດ. ພວກເຮົາ

ຄິດວ່າສາຍສຳພັນກັນດັ່ງກ່າວ ຈະໄດ້ຮັບການຂະຫຍາຍຕົວ ຕໍ່ໄປ. ພວກເຮົາພວມເອົາໃຈໃສ່ຕໍ່ການທີ່ຊີວິດທາງການເມືອງໃນປະເທດນີ້ ພວມໄດ້ຮັບຮູບການເປັນປະຊາທິປະໄຕ; ດ້ວຍເຫດນັ້ນພວກເຮົາຂໍອວຍພອນປະຊາຊົນ ຊະເປນ ຈົ່ງໄດ້ຮັບຜົນສຳເລັດໃຫ່ມໃນເສັ້ນທາງດັ່ງກ່າວນີ້. (ຕົບມື.)

ບັນດາສະຫາຍ ! ໔໐ ເດືອນໄດ້ຜ່ານໄປພາຍຫລັງການທີ່ຫົວຫນ້າປະເທດ ແລະຫົວຫນ້າລັດຖະບານຂອງປະເທດ ໓໕ ປະເທດໄດ້ລົງນາມເຊັນເອກະສານຂັ້ນສຸດທ້າຍ ຂອງກອງປະຊຸມກ່ຽວກັບຄວາມປອດໄພ ແລະການຮ່ວມມືກັນໃນຢູໂຣບ. ໃນໄລຍະເວລາດັ່ງກ່າວ ສັນຕິພາບໃນຢູໂຣບ, ສາຍສຳພັນກັນທາງດ້ານເສດຖະກິດ, ວັດທະນະທຳແລະດ້ານອື່ນໆ ໄດ້ຮັບການປັບປຸງໃຫ້ຫມັ້ນຄົງຍິ່ງຂຶ້ນ. ສ.ສ.ສ.ຊ. ຮູ້ສຶກພໍໃຈຕໍ່ຂະບວນວິວັດດັ່ງກ່າວນັ້ນ; ພວກເຮົາສະຫນັບສະຫນູນ ຂະບວນ ວິວັດແຫ່ງການລຶດຜ່ອນຄວາມເຄັ່ງຕຶງ. ພວກເຮົາຈະໄດ້ເຮັດທຸກສິ່ງທຸກຢ່າງ ເພື່ອສະຫນັບສະຫນູນຂະບວນວິວັດນີ້ ທີ່ຮັບໃຊ້ຜົນປະໂຫຍດຂອງບັນດາປະຊາຊາດ.(ຕົບມື.)

ໃນປະຈຸບັນນີ້ ບັນດາປະເທດທີ່ໄດ້ເຂົ້າຮ່ວມກອງປະຊຸມທົ່ວຢູໂຣບ ພວມດຳເນີນການກະກຽມແກ່ກອງປະຊຸມເບັນກາດເຊິ່ງຈະເປັນກອງປະຊຸມທົ່ວຢູໂຣບຄັ້ງທີສອງ ພາຍຫລັງ ກອງປະຊຸມໃນ ເຮັນຊິນກີ. ພວກເຮົາຢາກເຮັດໃຫ້ມີການພົບປະ ສົນທະນາກັນແບບຕົວຈິງ ຂອງຜູ້ແທນຂອງບັນດາປະເທດທີ່ມີອະທິປະໄຕ. ດັ່ງທີ່ຮູ້ກັນວ່າ ກອງປະຊຸມເຮັນຊິນກີໄດ້ໃສ່ຊື່ວ່າກອງປະ

ຊຸມກ່ຽວກັບຄວາມປອດໄພ ແລະການຮ່ວມມືກັນໃນຢູລົບ.ດ້ວຍ ເຫດນັ້ນ ພວກເຮົາຄິດວ່າກອງປະຊຸມເບັນກາດຈະຕ້ອງປຶກສາ ຫາລືບັນຫາວ່າດ້ວຍສັນຕິພາບ, ຄວາມປອດໄພໃນຢູລົບ,ການ ຂະຫຍາຍການຮ່ວມມືກັນລະຫວ່າງປະຊາຊາດຢູລົບ. ກອງປະ ຊຸມໃນ ຢູໂກຊະລາວີ ບໍ່ພຽງແຕ່ຕ້ອງສະຫລຸບພົນ ທີ່ໄດ້ຍາດ ເອົາມາໄດ້ຫນັ້ນ ຫາກຍັງຕ້ອງຕົກລົງ ກ່ຽວກັບ ມາດຕະການ ບາງຢ່າງກ່ຽວກັບການເສີມຂະຫຍາຍການຮ່ວມມືກັນຕໍ່ໄປ ອີກ ດ້ວຍ; ອັນນັ້ນ ເປັນເປົ້າຫມາຍອັນສຳຄັນກວ່າຫມູ່ຂອງ ກອງ ປະຊຸມຄັ້ງຫນ້ານີ້.

ພາກພື້ນຕາເວັນອອກກາງ ເປັນພາກພື້ນຂອງໂລກເຊິ່ງແກ່ ດຶງຄວາມສົນໃຈຢ່າງກວ້າງຂວາງ. ໃນໄລຍະເວລາບາງອາ ທິດທີ່ຜ່ານມາ ເພິ່ນສາມາດເຫັນການຂະຫຍາຍການ ເຄື່ອນ ໄຫວທາງດ້ານການທູດໃນພາກພື້ນຂອງໂລກ. ປາກົດ ການ ຕ່າງໆສະແດງໃຫ້ເຫັນວ່າ ການຟື້ນຟູວຽກການ ຂອງກອງປະ ຊຸມ ເຊີແນວ ອາດຈະກາຍເປັນຄວາມຈິງໄດ້. ແນ່ນອນ ວ່າ ພວກເຮົາສະຫນັບສະຫນູນຂະບວນວິວັດດັ່ງກ່າວນັ້ນ.

ແຕ່ວ່າກອງປະຊຸມ ເຊີແນວ ບໍ່ແມ່ນຈຸດປະສົງດຽວ ຫັ້ນ. ອັນທີ່ສຳຄັນກວ່າຫມູ່ນັ້ນ ກໍຄື ຜົນງານອັນເປັນທຳຂອງກອງປະ ຊຸມນັ້ນ. ແນ່ນອນວ່າການສ້າງເງື່ອນໄຂແກ່ສັນຕິພາບຢ່າງລະ ອຽດ ກ່ອນອື່ນຫມົດແມ່ນວຽກງານຂອງບັນດາປະເທດ ທີ່ເຂົ້າ ຮ່ວມໃນກໍລະນີພິພາດ. ແຕ່ວ່າ ສ.ສ.ສ.ຊ. ໃນຖານະເປັນ ປະທານຜູ້ຫນຶ່ງຂອງກອງປະຊຸມເຊີແນວ ແລະ ໃນຖານະເປັນ

ປະເທດຫນຶ່ງທີ່ຕັ້ງຢູ່ໃກ້ກັບພາກພື້ນນີ້ຂອງໂລກ ກໍມີຄວາມ ຄິດ
ເຫັນຂອງຕົນກ່ຽວກັບຫລັກການ ແລະທິດທາງຂອງການແກ້ໄຂ
ບັນຫາຢ່າງສັນຕິເຊັ່ນດຽວກັນ.

ພວກເຮົາຄິດວ່າ ຫລັກການວ່າດ້ວຍການຫ້າມຍຶດຄອງ ດິນ
ແດນຕ່າງປະເທດດ້ວຍກຳລັງທະຫານ, ສິດຂອງທຸກປະເທດທີ່
ຈະດຳລົງຊີວິດໂດຍມີຄວາມເປັນເອກະລາດ ແລະຄວາມປອດ
ໄພ ທັງຫມົດເຫລົ່ານັ້ນ ຕ້ອງເປັນພື້ນຖານ ຂອງ ເອກະສານ
(ຫລື ບັນດາເອກະສານ) ກ່ຽວກັບສັນຕິພາບ ໃນພາກພື້ນ
ຕາເວັນອອກກາງ. ແນ່ນອນວ່າ ເພິ່ນຕ້ອງຮັບປະກັນ ບັນດາ
ສິດອັນເປັນທຳຂອງຊາວອາລັບ ປາເລັດຊະຕິນ ນັບລວມ ທັງ
ສິດທີ່ຈະຕັດສິນໂຊກຊາຕາຂອງຕົນ ໂດຍຕົນເອງແລະສ້າງຕັ້ງ
ລັດຂອງຕົນເອງ.

ບໍ່ຕ້ອງສົງໃສເລີຍວ່າ ເອກະສານກ່ຽວກັບສັນຕິພາບ ນັ້ນ
ຕ້ອງລະບຸໄວ້ເຖິງການຖອນກອງທະຫານອິດຊະລະແອນ ອອກ
ຈາກດິນແດນອາລັບທີ່ໄດ້ຖືກຍຶດຄອງໃນປີ ໑໙໖໗. ການຖອນ
ກອງທະຫານນັ້ນ ອາດຈະດຳເນີນໄປເປັນເທື່ອລະກ້າວໃນໄລ
ຍະເວລາບາງເດືອນ ຕາມແຜນການທີ່ກຳນົດໄວ້ ຢ່າງເຂັ້ມ
ງວດ. ມັນຕ້ອງກຳນົດຊາຍແດນອິດຊະລະແອນ - ບັນດາ ປະ
ເທດອາລັບທີ່ເຂົ້າຮ່ວມໃນກໍລະນີພິພາດ. ຊາຍແດນເຫລົ່ານັ້ນ
ຕ້ອງປະກາດວ່າ ເປັນທີ່ຫມັ້ນຄົງແລະປຽນແປງບໍ່ໄດ້.

ພວກເຮົາຄິດວ່າ ພາຍຫລັງການຖອນກອງທະຫານ ອິດຊະ
ລະແອນ ນັ້ນ ສະພາບການແບບສົງຄາມລະຫວ່າງບັນດາປະ

ເທດອາລັບທີ່ເຂົ້າຮ່ວມໃນກໍລະນີພິພາດ ກັບປະເທດອິດຊະລະແອນໄດ້ສົ້ນສຸດລົງແລ້ວ ສັນຕິພາບກໍຈະໄດ້ມາເຖິງພາກພື້ນນີ້. ໃນຂະນະດຽວກັນນັ້ນ ບັນດາປະເທດທັງຫລາຍ ຈະໄດ້ໃຫ້ຄຳໝັ້ນສັນຍາທີ່ຈະເຄົາລົບອາທິປະໄຕ, ພື້ນແຜ່ນດິນອັນຄົບຖ້ວນ, ເອກະລາດທາງການເມືອງຂອງກັນແລະກັນ ແລະທີ່ຈະແກ້ໄຂຂໍ້ຖົກຖຽງກັນທາງສາກົນ ດ້ວຍສັນຕິວິທີ.

ຕາມການຕົກລົງກັນຂອງປະເທດທີ່ກ່ຽວຂ້ອງ ເພິ່ນອາດຈະສ້າງເຂດປົດອາວຸດ ໂດຍມີສິດເທົ່າທຽມກັນໄດ້. ໃນເຂດດັ່ງກ່າວທີ່ຕັ້ງຢູ່ໃກ້ກັບຊາຍແດນ ເພິ່ນອາດ ຈະສົ່ງກອງທະຫານຂອງອົງການສະຫະປະຊາຊາດ ຫລື ຜູ້ສັງເກດການ ຂອງອົງການນີ້ ໃນໄລຍະເວລາທີ່ກຳນົດໄວ້ໄດ້.

ເອກະສານຂອງກອງປະຊຸມ ເຊີແນວ ຈະຕ້ອງມີລະບຽບການພິເສດກ່ຽວກັບສິດຂອງທຸກປະເທດນັບລວມທັງປະເທດອິດຊະລາແອນ (ພາຍຫລັງການສົ້ນສຸດສະພາບການແບບສົງຄາມ) ທີ່ຈະໃຊ້ຊ່ອງແຄບ ຕີລານ ແລະ ອ່າວ ອະກັບ ແລະລະບຽບການເຊິ່ງໃນນັ້ນ ປະເທດ ອີຢິບ ຈະອະນຸຍາດ ໃຫ້ໃຊ້ຄອງຊູເອັດທີ່ຢູ່ໃຕ້ອຳນາດການປົກຄອງຂອງອີຢິບ.

ຕາມຄວາມຕ້ອງການຂອງບັນດາຝ່າຍນັ້ນຄະນະມົນຕີຄວາມໝັ້ນຄົງແຫ່ງ ອ.ສ.ປ. ຫລືບາງປະເທດ ເຊັ່ນ ສ.ສ.ສ. ຊ, ອາເມລິກາ, ຝະລັ່ງ, ອັງກິດ ອາດຈະເປັນຜູ້ຮັບປະກັນການປະຕິບັດຂໍ້ຜູກມັດຂອງການແກ້ໄຂບັນຫາຢ່າງສັນຕິ ໄດ້ . ປະເທດເຫລົ່ານັ້ນ ອາດຈະສົ່ງຜູ້ສັງເກດການເຂົ້າຢູ່ໃນ ກອງ

ທະຫານຂອງ ອ.ສ.ປ. ໄດ້ .

ອັນນັ້ນເປັນຄວາມຄິດເຫັນຫຍໍ້ໆຂອງພວກເຮົາ ກ່ຽວກັບພື້ນຖານຂອງສັນຕິພາບອັນຊອບທຳໃນພາກພື້ນຕາເວັນອອກກາງ. ພວກເຮົາບໍ່ຖືຄວາມຄິດເຫັນເຫຼົ່ານັ້ນວ່າເປັນສິ່ງຈຳເປັນແກ່ທຸກຄົນ. ແຕ່ວ່າພວກເຮົາຖືການປະກາດເຖິງຄວາມຄິດເຫັນເຫຼົ່ານັ້ນວ່າ ມີຜົນດີ. ພ້ອມກັນນັ້ນ ພວກເຮົາກໍກຽມພ້ອມ ທີ່ຢາກຮູ້ຄວາມຄິດເຫັນຂອງຝ່າຍອື່ນເຊັ່ນດຽວກັນ.

ພວກເຮົາໄດ້ເວົ້າແລ້ວວ່າ ໃນລະຫວ່າງການແກ້ໄຂບັນຫາພາກພື້ນຕາເວັນອອກກາງນັ້ນ ບັນດາປະເທດທີ່ກ່ຽວຂ້ອງອາດປຶກສາບັນຫາວ່າດ້ວຍການສິ່ງເສີມການສະກັດກັ້ນການສ້າງອາວຸດໃນພາກພື້ນນີ້ອີກດ້ວຍ. ເວົ້າທົ່ວໆໄປ, ບັນຫາວ່າດ້ວຍການຂາຍອາວຸດທາງສາກົນ ອາດເປັນບັນຫາທີ່ພວກເຮົາຄວນແລກປ່ຽນຄວາມຄິດຄວາມເຫັນກັນ.

ບາງຄວາມເຫັນກ່ຽວກັບບັນຫາວ່າດ້ວຍການຈຳກັດ ອາວຸດແລະການປົດອາວຸດເຊິ່ງແມ່ນກອງປະຊຸມໃຫຍ່ຄັ້ງທີ XXV ໄດ້ເອີ້ນວ່າເປັນບັນຫາຂໍ້ກຸນແຈແຫ່ງການຮັບປະກັນສັນຕິພາບແລະຄວາມປອດໄພຂອງບັນດາປະຊາຊາດ.

ຂ້າພະເຈົ້າໄດ້ເວົ້າກ່ຽວກັບການເຈລະຈາກັນ ລະຫວ່າງໂຊວຽດ-ອາເມລິກາ ກ່ຽວກັບການຈຳກັດອາວຸດ ຍຸດທະສາດແລ້ວ. ບັນຫາວ່າດ້ວຍການຫ້າມການທົດລອງອາວຸດປະລະມະນູ ເປັນບັນຫາທີ່ສຳຄັນແລະຮີບດ່ວນ. ອັນນັ້ນຈະໄດ້ເກີດຜົນດີແກ່ຫມ່ອຍພົບເຮົາ ໂດຍກົງ (ທາງດ້ານທຳມະຊາດ) ແລະ

ທາງດ້ານຈິດໃຈ-ການເມືອງອີກດ້ວຍ. ພ້ອມກັນນັ້ນມັນຈະໄດ້ຈຳກັດຄວາມສາມາດທີ່ຈະປັບປຸງອາວຸດ ປະລະມານູ, ຈຳກັດການສ້າງອາວຸດຊະນິດໃຫມ່ອີກດ້ວຍ.

ໄລຍະເວລາອັນດົນນານ ພັກພວກທີ່ບໍ່ຢາກ ຫ້າມການທົດລອງອາວຸດປະລະມານູ ໄດ້ອ້າງເຖິງຄວາມສັບສົນຂອງບັນຫາວ່າດ້ວຍການກວດກາເລື່ອງນີ້. ພວກເຮົາເຊື່ອຫມັ້ນ (ບັນດາຜູ້ຊ່ຽວຊານກໍເຫັນດີນຳ) ວ່າແຕ່ລະປະເທດມີພາຫະນະກວດ ກາຢ່າງພຽງພໍແລ້ວ. ຍິ່ງໄປກວ່ານັ້ນ ສ.ສ.ສ.ຊ. ໄດ້ຍື່ນຂໍ້ສະເຫນີຂໍ້ໃຫມ່ອີກ : ຮ່າງສົນທິສັນຍາຂອງພວກເຮົາ ກ່ຽວກັບການຫ້າມການທົດລອງອາວຸດປະລະມານູ ຢ່າງສົມເຊິງ ນັ້ນເພີ່ມລະບຸໄວ້ເຖິງຄວາມສາມາດ ທີ່ຈະໄປກວດກາ ກັບທີ່ ຖ້າຫາກມີຄວາມສົງໃສປະການໃດຫນຶ່ງກ່ຽວກັບການປະຕິບັດຂໍ້ຜູກມັດຂອງປະເທດໃດຫນຶ່ງ. ອັນນັ້ນເປັນການປະນີປະນອມທີ່ຄິດເຖິງທ່າທີຂອງບັນດາປະເທດ.

ແນ່ນອນວ່າ ມີແຕ່ໃນເມື່ອບັນດາປະເທດທີ່ມີອາວຸດ ປະລະມານູຈະໄດ້ເຂົ້າຮ່ວມໃນສົນທິສັນຍາດັ່ງກ່າວແລ້ວຫມັ້ນເພີ່ມຈຶ່ງສາມາດບັນລຸການຍຸດຕິການທົດລອງອາວຸດປະລະມານູໄດ້. ໃນເວລານັ້ນ ສົນທິສັນຍາດັ່ງກ່າວຈຶ່ງຈະຮັບໃຊ້ຈຸດປະສົງຂອງຕົນໄດ້.

ພວກເຮົາເອົາໃຈໃສ່ຕໍ່ການໂຕ້ຕອບຂອງປະເທດຕ່າງໆທີ່ມີຕໍ່ຂໍ້ສະເຫນີຂອງບັນດາປະເທດພາຄີສົນທິສັນຍາ ວໍຊໍ ທີ່ວ່າບັນດາປະເທດພາຄີກອງປະຊຸມທີ່ວຢູລົບ ບໍ່ຄວນໃຊ້ອາວຸດ ປະລະ

ມານູເປັນຄົນທຳອິດ ເພື່ອບຸກລຸກປະເທດອື່ນທີ່ເປັນພາຄີ ກອງປະຊຸມນັ້ນ. ພວກເຮົາຢາກເຮັດໃຫ້ຜູ້ນຳຂອງບັນດາ ປະເທດຕາເວັນຕົກ ເປັນຕົ້ນແມ່ນ ປະເທດພາຄີ ກຸ່ມນາໂຕ ຄິດຄົ້ນຄວາມໝາຍອັນສຳຄັນຂອງຂໍ້ສະເໜີອັນນັ້ນ ແລະປະລະທ່າທີທີ່ວ່າ ຄັນຫາກຂໍ້ສະເໜີໃດໜຶ່ງ ໄດ້ມາຈາກຝ່າຍເຮົາ ຂໍ້ສະເໜີນັ້ນເປັນອັນຕະລາຍ ແລະຕ້ອງປະຕິເສດເດັດຂາດ.

ມັນຕ້ອງເຂົ້າໃຈວ່າ ນະໂຍບາຍທີ່ມີການຂູກຄາມໃຊ້ອາວຸດປະລະມານູ ແລະຄວາມກຽມພ້ອມທີ່ຈະໃຊ້ອາວຸດ ເປັນພົ້ນນັ້ນມັນເປັນໄພອັນຕະລາຍແກ່ມະນຸດຊາດ.ຕັ້ງແຕ່ວັນທຳອິດນັ້ນ ສ.ສ.ສ.ຊ. ຮຽກຮ້ອງໃຫ້ຫ້າມອາວຸດປະລະມານູ ແລະ ໃຫ້ລົບລ້າງອາວຸດຊະນິດນີ້. ສ.ສ.ສ.ຊ. ໄດ້ປະຕິບັດການ ແນວນີ້ທັງໃນເມື່ອອາເມລິກາໄດ້ເປັນປະເທດດຽວ ທີ່ມີອາວຸດປະລະມານູ ທັງໃນເມື່ອມີຄວາມສະເໝີພາບກັບທາງດ້ານອາວຸດນັ້ນລະຫວ່າງ ສ.ສ.ສ.ຊ. ແລະ ອາເມລິກາ ເຊັ່ນດຽວກັນ.

ໃນລະຫວ່າງການປຶກສາບັນຫາວ່າດ້ວຍ ການປົດອາວຸດນັ້ນເພິ່ນເຄີຍເວົ້າກ່ຽວກັບຜົນດີຂອງການສະແດງຕົວຢ່າງ ແກ່ກັນແລະກັນ ເຊິ່ງໝາຍເຖິງການກະທຳແບບຝ່າຍດຽວໂດຍຫວັງວ່າຝ່າຍອື່ນ ຈະຕອບດ້ວຍການກະທຳອັນດີເຊັ່ນດຽວກັນ.ເບິ່ງຄືວ່າ ມັນເປັນວິທີການທີ່ໃຊ້ໄດ້. ມີແຕ່ໃນເມື່ອມີເຈດຕະນາລົມອັນດີ, ມີຄວາມໄວ້ເນື້ອເຊື່ອໃຈກັນທໍ່ນັ້ນ ການກະທຳແນວນີ້ ຈຶ່ງຈະເກີດຜົນດີໄດ້.

ຂໍຍົກຕົວຢ່າງອີກອັນໜຶ່ງ : ໔ ປີຫລັງນີ້ ເພິ່ນໄດ້ເລີ່ມເຈ

ລະຈາກັນກ່ຽວກັບການຈຳກັດກຳລັງທະຫານ-ອາວຸດ ໃນຢູໂຣບພາກກາງ. ອັນນັ້ນເປັນການເຈລະຈາກ່ຽວກັບ "ການຈຳກັດ", ການປະຕິເສດຂອງບັນດາປະເທດທີ່ເຂົ້າຮ່ວມ ໃນການເຈລະຈາກັນທີ່ຈະເພີ່ມທະວີກຳລັງທະຫານ ໃນພາກພື້ນນີ້ ຂອງໂລກນັ້ນ ມັນເບິ່ງຄືວ່າ ເປັນເລື່ອງທຳມະດາ ທີ່ຖືກຕາມຫລັກການຕັກກະວິທະຍາແມ່ນບໍ່ ? ສ.ສ.ສ.ຊ.ແລະພັນທະມິດໄດ້ສະເຫນີເຮັດແນວນີ້ຫລາຍຄັ້ງແລ້ວ. ເປັນໄລຍະເວລາອັນດົນນານພວກເຮົາບໍ່ໄດ້ເພີ່ມເຕີມຈຳນວນທະຫານ ຂອງພວກເຮົາ ໃນຢູໂຣບພາກກາງ. ບັນດາປະເທດພາຄີກຸ່ມນາໂຕ ໄດ້ຕອບແນວໃດ? ພວກເຂົາຊ້ຳພັດສືບຕໍ່ເພີ່ມທະວີກຳລັງທະຫານຂອງຕົນ.

ພວກເຮົາຈະຕ້ອງເຮັດຫຍັງ? ບາງທີ ສ.ສ.ສ.ຊ.ຄວນເຮັດຕາມແບບຢ່າງຂອງຝ່າຍຕາເວັນຕົກບໍ? ແຕ່ວ່າ ອັນນັ້ນເປັນການກະທຳທີ່ບໍ່ດີ ແລະພວກເຮົາຈຶ່ງບໍ່ຢາກປະຕິບັດ ການກະທຳແນວນັ້ນ.

ໃນມື້ນີ້ ພວກເຮົາປະກາດອີກຄັ້ງຫນຶ່ງວ່າ ໄປເຖິງການຕົກລົງກັນກ່ຽວກັບການຈຳກັດກຳລັງທະຫານ-ອາວຸດໃນຢູໂຣບພາກກາງນັ້ນ ພວກເຮົາກຽມພ້ອມທີ່ຈະບໍ່ເພີ່ມຕື່ມຈຳນວນ ທະຫານຂອງພວກເຮົາໃນພາກພື້ນນີ້ ຂອງໂລກ-ຖ້າຫາກກຸ່ມນາໂຕຈະບໍ່ເພີ່ມຕື່ມກຳລັງທະຫານຂອງເຂົາ. ຂໍ້ສະເຫນີນີ້ ຫມາຍເຖິງບາດກ້າວທຳອິດແບບຕົວຈິງ ໃນເສັ້ນທາງທີ່ຈະນຳໄປສູ່ ການຈຳກັດກຳລັງທະຫານ. ໃຜໆກໍ່ບໍ່ໄດ້ຮັບຄວາມເສຍຫາຍ, ກົງກັນຂ້າມ ອັນນັ້ນຈະໄດ້ເກີດຜົນດີແກ່ພາລະກິດແຫ່ງສັນຕິພາບ,

ຄວາມປອດໄພຂອງບັນດາປະຊາຊາດ (ຕົບມືຍາວຍືດຍາວ).

ບັນດາສະຫາຍ ! ປະຊາຊົນໂຊວຽດໄດ້ຜ່ານຜ່າ ການທົດສອບຫລາຍປະການ, ໄດ້ຜ່ານແປວໄຟແຫ່ງສົງຄາມ, ໄດ້ຮູ້ຈັກໄຊຊະນະແລະການປະລາໄຊ, ຊີວິດທີ່ແຈ້ງສະຫວ່າງ ເຊິ່ງແມ່ນປະຊາຊົນໂຊວຽດໄດ້ສ້າງດ້ວຍມືຕົນເອງນັ້ນມັນເປັນລາງວັນອັນສົມຄວນ.(ຕົບມື). ພາຍຫລັງສົງຄາມ ສາມສິບສອງປີໄດ້ຜ່ານໄປໃນສະພາບການທີ່ສັນຕິແລ້ວ-ອັນນັ້ນກໍເປັນລາງວັນທີ່ສົມຄວນ.(ຕົບມື). ອັນນັ້ນເປັນໄລຍະເວລາທີ່ມີສັນຕິພາບທີ່ຍາວກ່ວາໝູ່ໃນປະຫວັດສາດເປັນຫລາຍສັດຕະວັດ ຂອງ ປະເທດເຮົາ, ອັນເປັນທີ່ໜ້າເສຍດາຍວ່າ ໃນໄລຍະເວລາດັ່ງກ່າວ (ພາຍຫລັງປີ ໑໙໔໕) ສົງຄາມ, ກໍລະນີພິພາດທາງທະຫານຮ້ອຍກ່ວາຄັ້ງ ໄດ້ເກີດມີຂຶ້ນໃນໜ່ວຍພິພົບເຮົາ.

ປະຊາຊົນໂຊວຽດ ຕີລາຄາສູງຕໍ່ນະໂຍບາຍສັນຕິພາບຂອງພັກຂອງຕົນ. ປະຊາຊົນໂຊວຽດກຽມພ້ອມທີ່ຈະເຮັດແລະພວມເຮັດທຸກສິ່ງທຸກຢ່າງ ເພື່ອປົກປັກສັນຕິພາບໃຫ້ໝັ້ນຄົງຍິ່ງຂຶ້ນ. ສຳລັບຂ້າພະເຈົ້າ, ສຳລັບຊາວກອມມູນິດທຸກຄົນ ເຊິ່ງ ແມ່ນພັກ, ປະຊາຊົນໄດ້ມອບໜ້າທີ່ຮັບຜິດຊອບ ຕໍ່ນະໂຍບາຍຕ່າງປະເທດນັ້ນ ມັນບໍ່ມີໜ້າທີ່ແລະຄວາມສຸກທີ່ສູງກວ່າໜ້າທີ່ແລະຄວາມສຸກທີ່ຈະຮັບໃຊ້ເປົ້າໝາຍ ອັນສູງສົ່ງດັ່ງກ່າວນັ້ນ (ຕົບມືຍາວຟົດຟື້ນ).

ບັນດາສະຫາຍ ! ກອງປະຊຸມໃຫຍ່ຄັ້ງທີ XVI ຂອງກຳມະບານໂຊວຽດ ພວມດຳເນີນໄປໃນໄລຍະເວລາ ແຫ່ງການ

ສະເຫລີມສະຫລອງການປະຕິວັດຄົບຮອບ ໕໐ ປີ.໕໐ ປີກ່ອນໜ້ານີ້ ຊາວຜູ້ອອກແຮງງານລັດເຊຍ,ພັກກອມມູນິດ,ພັກຂອງເລນິນ ໄດ້ຍົກສູງຄັນທຸງແຫ່ງເດືອນຕຸລາແລ້ວ.(ຕົບມືຢ່າງຍືດຍາວ).

ປີແຫ່ງການຄົບຮອບ ເປັນປີແຫ່ງການສະຫລຸບຜົນ,ການຄິດຄືນຫລັງກ່ຽວກັບອະດີດຕະການ. ແຕ່ວ່າພວກເຮົາ,ຊາວກອມມູນິດ, ຄິດຄືນຫລັງກ່ຽວກັບອະດີດຕະການ ບໍ່ພຽງແຕ່ ເພື່ອຮູ້ສຶກທະນົງໃຈຕໍ່ຜົນສຳເລັດອັນຍິ່ງໃຫ່ຍ ອັນເປັນປະຫວັດການທີ່ນັ້ນ ຫາກຍັງນຳເອົາອະດີດການມາເປັນບໍ່ເກີດຂອງບົດຮຽນ, ເຄື່ອງມືທີ່ສຳຄັນແກ່ການຄິດຄົ້ນແລະວິໄຈ ບັນດາຂໍ້ຕັດສິນໃຈແລະບັນດາການກະທຳຂອງພວກເຮົາ. ອະດີດຕະການເປັນບໍ່ເກີດກຳລັງໃຈ ສຳລັບການກະທຳທີ່ຮັບໃຊ້ອະນາຄົດ ອີກດ້ວຍ. (ຕົບມື).

ຜົນສະຫລຸບຂອງປີກາຍນີ້ ແລະ ໘ ເດືອນຂອງປີນີ້ສະແດງໃຫ້ເຫັນວ່າປະເທດເຮົາເດີນຕາມທິດທາງ ຂອງກອງປະຊຸມໃຫ່ຍຄັ້ງທີ XXV ຂອງພັກເຮົາຢ່າງສູດກົກສູດປາຍ.ພວກເຮົາຍັງມີວຽກຫລາຍປະການ. ກຳມະບານທີ່ມີໜ້າທີ່ຕົ້ນຕໍທີ່ຈະປຸກລູກຂະບວນແຂ່ງຂັນເພື່ອເປັນກຽດແກ່ວັນປະຕິວັດ ເດືອນຕຸລາຄົບຮອບ ໕໐ ປີ ນັ້ນ ມັນກໍມີວຽກຫລາຍເຊັ່ນດຽວກັນ.

ຂ້າພະເຈົ້າເຊື່ອໝັ້ນວ່າ ສະພາກຳມະບານທົ່ວປະເທດຊຸດໃຫ່ມຈະສາມາດຕອບສະໜອງຄວາມຮຽກຮ້ອງ ທາງ ການເມືອງຂອງຍຸກສະໄໝນີ້, ຊີວິດເຮົາທີ່ສັບສົນ ແຕ່ໜ້າສົນໃຈ

ໄດ້.(ຕົບມືຢ່າງຍືດຍາວ.)

ສຸດທ້າຍຂ້າພະເຈົ້າຢາກປະກາດຂ່າວດີ ຄື ຂໍ້ດຳລັດ ຂອງຄະນະບໍລິຫານງານຂອງສະພາໂຊວຽດສູງສຸດແຫ່ງ ສ.ສ.ສ.ຊ.

(ພາຍໃຕ້ການຕົບມືຢ່າງຟົດຟື້ນຂອງກອງປະຊຸມ ທ່ານບະເລັດຊະເນັບໄດ້ປະກາດຂໍ້ດຳລັດຂອງຄະນະບໍລິຫານງານຂອງສະພາໂຊວຽດສູງສຸດແຫ່ງ ສ.ສ.ສ.ຊ. ກ່ຽວກັບການ ມອບຫລຽນໄຊແຫ່ງການປະຕິວັດເດືອນຕຸລາ ໃຫ້ແກ່ກຳມະບານໂຊວຽດ. ຫມົດທຸກຄົນລຸກຂຶ້ນຍືນ, ຕົບມືຢ່າງຟົດຟື້ນໃນເມື່ອທ່ານບະເລັດຊະເນັບນຳເອົາຫລຽນໄຊໄປຕິດໃສ່ຄັນທຸງແຫ່ງສະພາກຳມະບານທົ່ວປະເທດ).

ຂ້າພະເຈົ້າຂໍສົ່ງຄວາມອວຍພອນຂອງສູນກາງພັກກອມມູນິດແຫ່ງສະຫະພາບໂຊວຽດ ມາຍັງຄະນະປະທານ ຂອງກອງປະຊຸມໃຫຍ່ຄັ້ງທີ XVI ຂອງກຳມະບານແຫ່ງ ສ.ສ.ສ.ຊ.(ຕົບມືຢ່າງຍືດຍາວ).

ຂ້າພະເຈົ້າຂໍສົ່ງຄວາມອວຍພອນໃຫ້ບັນດາສະຫາຍແລະບັນດາຊາວຜູ້ອອກແຮງງານທີ່ໄດ້ເລືອກຕັ້ງບັນດາສະຫາຍ ເປັນຜູ້ແທນກອງປະຊຸມໃຫຍ່ຄັ້ງນີ້ ຈົ່ງໄດ້ຮັບຜົນສຳເລັດອັນໃຫຍ່ ໃນການອອກແຮງງານ, ຈົ່ງມີສຸຂະພາບເຂັ້ມແຂງແລະເບີກບານມ່ວນຊື່ນ.(ຕົບມືຢ່າງຍືດຍາວແລະຟົດຟື້ນ. ຜູ້ເຂົ້າຮ່ວມກອງປະຊຸມໄດ້ລຸກຂຶ້ນຢືນ ເພື່ອສະແດງຄວາມເຄົາລົບ ຕໍ່ສະຫາຍບະເລັດຊະເນັບ).

ຄຳປາໄສໃນພິທີງານລ້ຽງອາຫານທີ່ວັງກະແລມແລ້ງເພື່ອເປັນກຽດແກ່ ສະຫາຍ ຟີເດັນ ກັດສະໂຕ ຣູດ ເລຂາທິການໃຫຍ່ຂອງສູນກາງພັກກອມມູນິດກູຍບາ, ປະທານສະພາແຫ່ງລັດແລະປະທານຄະນະລັດຖະມົນຕີ ແຫ່ງສາທາລະນະລັດກູຍບາ ວັນທີ່໕ເດືອນເມສາປີ ໑໙໗໗

ສະຫາຍ ຟີເດັນ ກັດສະໂຕ ທີ່ ຮັກແພງ !

ສະຫາຍ ກູຍບາ ທີ່ຮັກແພງ !

ພວກເຮົາຮູ້ສຶກມີຄວາມປິຕິຍິນດີ ເນື່ອງໃນໂອກາດ ໄດ້ພົບປະກັນອີກເທື່ອໜຶ່ງ. ສູນກາງພັກ, ຄະນະບໍລິຫານງານຂອງສະພາໂຊວຽດສູງສຸດແຫ່ງ ສ.ສ.ສ.ຊ, ລັດຖະບານໂຊວຽດ, ປວງປະຊາຊົນໂຊວຽດ ຕ່າງກໍສະແດງຄວາມຮູ້ສຶກແຫ່ງມິດຕະພາບ, ຄວາມຮັກແພງແລະຄວາມເຄົາລົບຕໍ່ທ່ານ, ສະຫາຍ ຟີເດັນ ກັດສະໂຕ, ຕໍ່ຊາວຜູ້ອອກແຮງງານກູຍບາອ້າຍນ້ອງ. ຂໍສະແດງຄວາມເຄົາລົບນັບຖືຢ່າງບໍລິສຸດໃຈ ຕໍ່ທ່ານ ທີ່ໄດ້ມາຢ້ຽມນະຄອນຫລວງຂອງປະເທດເຮົາ.

ສະຫາຍ ຟີເດັນ, ໃນມໍ່ໆມານີ້ ທ່ານໄດ້ໄປຢ້ຽມຢາມ ປະເທດອາຟະລິກາບາງປະເທດ. ພວກເຮົາ ໄດ້ຕິດຕາມ ເບິ່ງຢ່າງເອົາໃຈໃສ່ຖານມິດ ຕໍ່ການຢ້ຽມຢາມດັ່ງກ່າວ. ອັນນັ້ນໄດ້ສະແດງໃຫ້ເຫັນເຖິງການທີ່ນະໂຍບາຍຂອງກູຍບາສັງຄົມນິຍົມພວມໄດ້ຮັບຄວາມນິຍົມຊົມຊອບຢ່າງກວ້າງຂວາງ ທາງສາກົນ

ຢ່າງຈະແຈ້ງ. ນະໂຍບາຍນັ້ນ ແມ່ນນະໂຍບາຍ ທີ່ ຕ້ານກັບການແຊກແຊງເຂົ້າໃນກິດຈະການພາຍໃນຂອງປະເທດອື່ນ ໆ ໃນທຸກຮູບການແລະມີລັກສະນະອັນສູງສົ່ງ ຄື ມີຄວາມຕັ້ງໃຈທີ່ຈະປົກປ້ອງສັນຕິພາບ, ທີ່ຈະຊ່ວຍເຫລືອແກ່ບັນດາ ປະຊາຊາດທີ່ໄດ້ລົບລ້າງແອກອັນໜັກຊ້ຳແຫ່ງລັດທິລ່າເມືອງຂຶ້ນທີ່ຈະປ້ອງກັນຜົນສຳເລັດທີ່ຍາດເອົາມາໄດ້, ທີ່ຈະປົກປ້ອງ ເອກະລາດແຫ່ງຊາດ.

ຜົນສຳເລັດຂອງການປະຕິວັດກູຍບາ ໄດ້ເພີ່ມກຳລັງໃຈແກ່ປະເທດຕ່າງໆຫລາຍປະເທດທີ່ໄດ້ພົ້ນອອກຈາກຊຸກໂສ້ຂອງລັດທິລ່າເມືອງຂຶ້ນແລ້ວ. ໃນສະໄໝກ່ອນບໍ່ດົນນານນີ້,ກູຍບາໄດ້ຮູ້ຈັກວ່າ ການກິດຈີ້ຂອງພວກຈັກກະພັດເປັນແນວໃດ,ຮູ້ຈັກວ່າການຄອບຄອງຂອງພວກຂູດຮີດຕ່າງດ້າວ ເປັນແນວໃດ.ການປະຕິວັດໄດ້ປັດກວາດພວກເຫລົ່ານັ້ນ ໃຫ້ອອກຈາກດິນແດນກູຍບາ, ໄດ້ຮັບປະກັນເອກະລາດທີ່ແທ້ຈິງ, ໄດ້ປົດປ່ອຍຜູ້ຄົນໃຫ້ພົ້ນຈາກການຂູດຮີດ, ໄດ້ຮັບປະກັນສິດຕໍ່ການອອກແຮງງານ, ໄດ້ເປີດປະຕູຂອງໂຮງຮຽນທັງຫລາຍ ໃຫ້ແກ່ລູກຫລານ ຂອງຊາວກຳມະກອນແລະຊາວນາຢ່າງກວ້າງຂວາງ, ໄດ້ຮັບປະກັນສິດຂອງຜູ້ຍິງ, ໄດ້ເຮັດໃຫ້ຊາວຜູ້ອອກແຮງງານ ໄດ້ມີຄວາມເຊື່ອໝັ້ນໃນອະນາຄົດ. ອັນນັ້ນເປັນຊັບສົມບັດ ອັນປະເສີດ, ຊັບສົມບັດທາງການເມືອງແລະທາງຈິດໃຈ.

ບັນດາປະເທດທີ່ໄດ້ຮັບເອກະລາດ ຕ່າງກໍຖື ສ.ສ.ສ.ຊ, ກູຍບາ, ປະເທດສັງຄົມນິຍົມອ້າຍນ້ອງ ວ່າເປັນເພື່ອນມິດທີ່ຊື່

ສັດ. ການຢ້ຽມຢາມອາຟະລິກາຂອງສະຫາຍ ຟີເດັນ, ການຢ້ຽມຢາມຂອງສະຫາຍ ໂປດກອກນີຍ ໃນປະເທດຕັນຊານີ, ໂມຊຳບິກ ແລະ ໂຊມາລີ ຕ່າງກໍໄດ້ພິສູດໃຫ້ເຫັນເຖິງຄວາມຖືກຕ້ອງຂອງເລື່ອງດັ່ງກ່າວນັ້ນ.

ສັດຕູຂອງກຸຍບາ, ສັດຕູຂອງລັດທິສັງຄົມນິຍົມ ເສກສັນປັ້ນແຕ່ງເລື່ອງຕ່າງໆກ່ຽວກັບເປົ້າຫມາຍ ແລະ ວັດຖຸປະສົງຂອງບັນດາປະເທດສັງຄົມນິຍົມ ທີ່ມີຕໍ່ປະເທດຕ່າງໆທີ່ໄດ້ຮັບເອກະລາດແລ້ວ. ເລື່ອງເຫລົ່ານັ້ນ ບໍ່ສາມາດຝືນກັບຄວາມຈິງໄດ້.

ຄວາມຈິງນັ້ນ ນອນຢູ່ບ່ອນວ່າ ບັນດາປະເທດ ສັງຄົມນິຍົມຍາມໃດກໍຕາມແມ່ນສະຫນັບສະຫນູນປະຊາຊາດທີ່ປະເຊີນຫນ້າກັບການຮຸກຮານ, ຜະເດັດການ, ການໃຊ້ກຳລັງອັນຮຸນແຮງຂອງພວກຈັກກະພັດ. ຄວາມຈິງນັ້ນນອນຢູ່ບ່ອນວ່າ ບັນດາປະເທດສັງຄົມນິຍົມ ໄດ້ເສີມຂະຫຍາຍການຕິດຕໍ່ພົວພັນກັນຢ່າງມີສິດສະເຫມີພາບກັບບັນດາປະເທດທີ່ຫນຸ່ມນ້ອຍ ແລະຊ່ວຍເຫລືອຕາມຄວາມສາມາດຂອງຕົນ ແກ່ບັນດາປະເທດເຫລົ່ານັ້ນ ໃນການພັດທະນາທາງດ້ານເສດຖະກິດ. ສຸດທ້າຍ,ຄວາມຈິງນັ້ນມັນຢູ່ບ່ອນວ່າ ນະໂຍບາຍຂອງບັນດາປະເທດສັງຄົມນິຍົມ ຮັດແຄບກຳລັງຈັກກະພັດນິຍົມ, ກຳລັງຂອງອະດີດການ ທີ່ພະຍາຍາມຮັກສາລະບຽບການທີ່ຫລ້າຫລັງ, ພະຍາຍາມ ຫວ່ານຢາເບື່ອແຫ່ງຄວາມເປັນປໍລະປັກກັນ,ການປະທະກັນລະຫວ່າງປະເທດຕ່າງໆ ທີ່ໄດ້ຮັບການປົດປ່ອຍແລ້ວ.

ບາງຄັ້ງຄາວ ສັດຕູຂອງພວກເຮົາ, ສັດຕູທີ່ມີ ໂສມຫນ້າ

ຫລາຍຮູບຫລາຍສີ, ອັງວ່າ ທະວີບອາຊີ, ອາຟະລິກາ, ອາເມລິກາລາຕິນ ເປັນບ່ອນຊ່ວງຊິງກັນລະຫວ່າງປະເທດສັງຄົມນິຍົມ ກັບປະເທດທຶນນິຍົມເປັນຕົ້ນແມ່ນລະຫວ່າງ ສ.ສ.ສ.ຊ. ກັບອາເມລິກາ. ເລື່ອງນີ້ເປັນເລື່ອງທີ່ປອມແປງຢ່າງສົມເຊີງ. ແຕ່ດົນນານແລ້ວທີ່ບັນດາປະຊາຊາດຕ່າງໆຂອງທະວີບນີ້ ໄດ້ຍົກເລີກຖານະທີ່ເປັນຜູ້ເມີນເສີຍຕໍ່ພູກເຫດການ. ບັນດາປະຊາຊາດເຫລົ່ານັ້ນ ພວມຕໍ່ສູ້ຢ່າງເອົາຈິງເອົາຈັງເພື່ອຍາດເອົາສິດທິຂອງຕົນ, ພວມຊອກຫາເສັ້ນທາງຂອງຕົນ ທີ່ຈະນຳໄປສູ່ຄວາມກ້າວໜ້າ.

ດ້ວຍເຫດນັ້ນ ມັນເປັນເລື່ອງທຳມະດາວ່າ ບັນດາ ປະຊາຊາດເຫລົ່ານັ້ນ ທີ່ໄດ້ຮູ້ຈັກຄວາມທຸກທໍລະມານ, ຄວາມຕໍ່າຕ້ອຍໃນໄລຍະເວລາຂອງການຄອບຄອງຂອງພວກຈັກກະພັດ, ພວມຫັນຫລັງອອກຈາກເສັ້ນທາງທຶນນິຍົມ ແລະ ພວມມຸ່ງໜ້າໄປສູ່ເສັ້ນທາງສັງຄົມນິຍົມ. ລູກປືນຂອງທະຫານຮັບຈ້າງ, ການທຳລາຍມ້າງແພ, ກົນອຸບາຍຫລອກລວງ, ການໂຄສະຫນາເບື່ອເມົາບໍ່ສາມາດທຳລາຍເຈດຕະນາລົມຂອງມະຫາຊົນ ອັນເປັນພື້ນຖານຂອງການເລືອກເຟັ້ນເສັ້ນທາງດັ່ງກ່າວນັ້ນ.

ພວກເຮົາຕີລາຄາສູງຕໍ່ບົດບາດ ຂອງບັນດາປະເທດ ທີ່ໄດ້ຮັບເອກະລາດນັບລວມທັງບົດບາດຂອງຂະບວນການບໍ່ຮ່ວມກຸ່ມໃນເວທີສາກົນ; ບົດບາດດັ່ງກ່າວ ເປັນສິ່ງທີ່ປັບປຸງເງື່ອນໄຂເບື້ອງຕົ້ນໃຫ້ແກ່ການສ້າງຕັ້ງສັນຕິພາບອັນຖາວອນຍືນ.

ເປົ້າຫມາຍທາງໂຄງການຂອງພວກເຮົາ ກໍຄື ການຮັບປະ

ກັນການຈຳກັດແລະການຢຸດຕິການແຂ່ງຂັນສ້າງອາວຸດ, ເປັນຕົ້ນແມ່ນອາວຸດນິວຄະເລຍ ເຊິ່ງເປັນບັນຫາອັນສຳຄັນກວ່າໝູ່ໃນຍຸກສະໄໝນີ້.

ເວົ້າຢ່າງພາວະວິໄສວ່າ ມັນມີພື້ນຖານດີພໍສົມຄວນ ເປັນຕົ້ນແມ່ນພາຍໃນສາຍສຳພັນໂຊວຽດ-ອາເມລິກາໃນການເຮັດໃຫ້ບາດກ້າວທີ່ຈະເດີນໄປຕາມເສັ້ນທາງດັ່ງກ່າວນັ້ນ. ແນ່ນອນວ່າ ມັນຕ້ອງເສີມຂະຫຍາຍພື້ນຖານນັ້ນ. ເຖິງເປັນແນວນັ້ນກໍຕາມ ການຕິດຕໍ່ກັນແລະການເຈລະຈາກັນ ທີ່ໄດ້ມີ ໃນມໍ່ໆມານີ້ ໄດ້ສະແດງວ່າຝ່າຍອື່ນ ບໍ່ກ້າວຂຶ້ນພໍກ້າວດຽວ, ຊ້ຳບໍ່ ໄດ້ສະແດງທ່າທີຕົວຈິງແບບປະດິດສ້າງອີກດ້ວຍ.

ແນ່ນອນວ່າ ຄວາມຕົກລົງອັນຊອບທຳ ເປັນສິ່ງທີ່ເຮັດໄດ້; ແຕ່ວ່າຝ່າຍອື່ນຕ້ອງເຮັດຄືກັບຝ່າຍເຮົາຕ້ອງເຂົ້າໃຈຄວາມຮັບຜິດຊອບຂອງຕົນ ໃນການສະກັດກັ້ນການແຂ່ງຂັນສ້າງອາວຸດ, ໃນການຊອກຫາວິທີການແກ້ໄຂບັນຫາທີ່ເໝາະສົມແກ່ກັນແລະກັນດ້ວຍການກະທຳຕົວຈິງ, ບໍ່ແມ່ນດ້ວຍຄຳເວົ້າຊື່ໆ.

ສະຫາຍທີ່ເຄົາລົບ !

ໃນມື້ນີ້ ພວກເຮົາໄດ້ມີໂອກາດ ທີ່ຈະແລກປ່ຽນ ຄວາມຄິດຄວາມເຫັນຢ່າງຄົບຖ້ວນ ກ່ຽວກັບບັນຫາວ່າດ້ວຍການ ຮ່ວມມືກັນໂຊວຽດ-ກຸຍບາ, ທີ່ຈະກຳນົດບາດກ້າວອັນສຳຄັນໃນການເສີມຂະຫຍາຍການຮ່ວມມືກັນດັ່ງກ່າວນັ້ນ. ຂ້າພະເຈົ້າຄິດວ່າສະຫາຍຟີເດັນຈະໄດ້ເຫັນດີນຳຄວາມຄິດທີ່ວ່າ ການສົນທະນາກັນຄັ້ງນີ້ ໄດ້ຢັ້ງຢືນເຖິງຄວາມເຂົ້າໃຈກັນ ຢ່າງເລິກເຊິ່ງ,

ເຖິງຄວາມເປັນເອກະພາບກັນທາງທັດສະນະຫລັກຫມັ້ນ ຂອງພັກທັງສອງຂອງພວກເຮົາ.

ໃນເມື່ອມີການເຈລະຈາກັນນັ້ນ ຂ້າພະເຈົ້າໄດ້ມີຄວາມຄິດເກີດຂຶ້ນວ່າ ແນວຄິດມາກ-ເລນິນ, ຫລັກການສາກົນນິຍົມອັນສູງສົ່ງ ມີກຳລັງແຮງອັນມະຫາສານ. ໃນໄລຍະເວລາອັນສັ້ນສັ້ນ ຄື ໄລຍະເວລາປະມານ ໔໐ ປີຜ່ານມາ ພາຍຫລັງ ໄຊຊະນະຂອງການປະຕິວັດກຸຍບານັ້ນ ສາຍສຳພັນກັນ ລະຫວ່າງພວກເຮົາທີ່ບໍ່ເຄີຍມີມາກ່ອນ ໄດ້ມີລັກສະນະ ອັນເລິກເຊິ່ງ, ຮອບດ້ານ; ມິດຕະພາບໂຊວຽດ-ກຸຍບາ ໄດ້ເກີດດອກ ອອກຜົນ, ໄດ້ກາຍເປັນປັດໃຈອັນເຂັ້ມແຂງ ແຫ່ງການປະດິດສ້າງ ແລະການເພີ່ມຄວາມຮັ່ງມີທາງຈິດໃຈເຊິ່ງກັນແລະກັນ.

ມັນບໍ່ແມ່ນວຽກອັນງ່າຍດາຍ. ພັກທັງສອງຂອງພວກເຮົາ, ຊາວກຸຍບາແລະຊາວໂຊວຽດນັບເປັນລ້ານໆຄົນ ໄດ້ອອກແຮງຢ່າງຫລວງຫລາຍ ເພື່ອເຮັດໃຫ້ໄດ້ແນວນີ້.

ມີຄວາມຄິດອັນຫນຶ່ງອີກ ທີ່ເກີດຂຶ້ນ: ໃນການປະຕິບັດບັນດາມະຕິຂອງພັກທັງສອງຂອງພວກເຮົາ ຄື ກອງປະຊຸມ ໃຫຍ່ຄັ້ງທີ XXV ຂອງ ພ.ກ.ສ.ຊ. ແລະກອງປະຊຸມໃຫຍ່ຄັ້ງ ທີ I ຂອງຊາວກອມມູນິດກຸຍບາ ພວກເຮົາ ເລີ່ມເຂົ້າໃຈ ວ່າການປະສານງານຂອງພວກເຮົາພວມກາຍມາເປັນພາກສ່ວນທີ່ສຳຄັນແກ່ການພັດທະນາປະເທດທັງສອງ ຂອງພວກເຮົາ ອີກດ້ວຍ. ດ້ວຍເຫດນັ້ນ ການໃຊ້ທຸກຄວາມສາມາດທີ່ຈະເສີມຂະຫຍາຍການຮ່ວມມືກັນຖານອ້າຍນ້ອງ, ສ້າງການຮ່ວມມືກັນໃຫ້

ມີປະສິດທິພາບສູງກວ່າເກົ່ານັ້ນ ມັນເປັນໜ້າທີ່ລວມຂອງພວກເຮົາ.

ອົບໂກຈອກດື່ມ ເພື່ອພະລາດອນພາບຂອງປະຊາຊົນໂຊວຽດ ແລະປະຊາຊົນກູຍບາທີ່ຕົບໃຫ່ຍເຂັ້ມແຂງຢູ່ເລື້ອຍໆ, ເພື່ອການຮ່ວມມືກັນອັນໄດ້ຜົນແກ່ກັນແລະກັນລະຫວ່າງພັກມາກຊິດ-ເລນິນິດຂອງພວກເຮົາ !

ເພື່ອຜົນສຳເລັດໃຫ່ມແຫ່ງພາລະກິດ ຂອງສັນຕິພາບ ແລະສັງຄົມນິຍົມ !

ເພື່ອສຸຂະພາບຂອງສະຫາຍຟີເດັນ ກັດສະໂຕ, ເພື່ອສຸຂະພາບຂອງບັນດາສະຫາຍກູຍບາ ! (ຕົບມືຢ່າງຍືດຍາວ).

ເຫລັ້ມທີ ຝ,
ໜ້າ ໓໔໘-໓໕໑

ຄຳປາໄສໃນພິທີງານຮັບບັດສະມາຊິກໂກມໂຊມິນ ນຳເບີຈແລະລາງວັນສູງສຸດຂອງໂກມໂຊມິນແຫ່ງເລນິນ ຄືເຄື່ອງໝາຍດາວຄຳແຫ່ງກຽດຕິຍົດຂອງ ໂກມໂຊມິນເລນິນ ວັນທີ ໑໔ ເດືອນເມສາ ປີ ໑໙໘໗

ສະຫາຍທີ່ຮັກແພງ!

ດ້ວຍ ຄວາມຮູ້ສຶກຕື້ນເຕັ້ນໃຈທີ່ສຸດ ແລະດ້ວຍຄວາມ ຂອບໃຈທີ່ສຸດທີ່ຂ້າພະເຈົ້າພວມໄດ້ຮັບບັດສະມາຊິກກົມໂຊໂມນ ນຳເບີ ໑ ແລະເຄື່ອງໝາຍດາວຄຳແຫ່ງກຽດຕິຍົດ ຂອງກົມໂຊໂມນເລນິນ.

ສຳລັບຂ້າພະເຈົ້າທີ່ໄດ້ເປັນສະມາຊິກກົມໂຊໂມນ ໃນທົດສະວັດທີ ໓໐ ນັ້ນ ພິທີງານນີ້ ເປັນທີ່ຕື້ນເຕັ້ນໃຈທີ່ສຸດ ຍ້ອນວ່າມັນພາໃຫ້ຄິດຄືນຫລັງເຖິງໄລຍະເວລາ ອັນເປັນປະຫວັດການທີ່ຜ່ານໄປດົນນານແລ້ວ ແລະກາຍເປັນຄ້າຍຄື ນິທານ ບູຮານແຫ່ງການກໍ່ສ້າງພັນຖານສັງຄົມນິຍົມ ໃນປະເທດ ທີ່ ຍິ່ງໃຫຍ່ຂອງພວກເຮົາ.

ການຄິດຄືນຫລັງເຖິງໄລຍະເວລາ ທີ່ຜ່ານໄປພຽງແຕ່ເປັນເລື່ອງສ່ວນຕົວເທົ່ານັ້ນ.

ຂ້າພະເຈົ້າຖືພິທີງານນີ້ວ່າ ເປັນການພິສູດໃຫ້ເຫັນ ເຖິງການຕິດຕໍ່ພົວພັນກັນອັນແໜ້ນແຟ້ນທີ່ສຸດ ລະຫວ່າງພັກ ເລນິນ

ຂອງພວກເຮົາກັບກົມໂຊໂມນ, ວ່າເປັນການສະແດງໃຫ້ເຫັນເຖິງຄວາມເຄົາລົບທີ່ຊາວໜຸ່ມຂອງພວກເຮົາ ມີຕໍ່ພັກທີ່ເປັນຜູ້ນຳແລະຜູ້ສັ່ງສອນ, ສະແດງໃຫ້ເຫັນເຖິງຄວາມຮັກແພງ ທີ່ມີຕໍ່ປິຕຸພູມສັງຄົມນິຍົມ ແລະພາລະກິດທີ່ຍິ່ງໃຫຍ່ ແຫ່ງການສ້າງລະບອບກອມມູນິດ.

ຂ້າພະເຈົ້າເຊື່ອໝັ້ນວ່າ ກົມໂຊໂມນໄດ້ເປັນແລະຈະເປັນຜູ້ຊ່ວຍເຫລືອທີ່ຊື່ສັດ ແລະຜູ້ຮັບໃຊ້ພັກ ໃນການຕໍ່ສູ້ເພື່ອຄວາມຜາສຸກຂອງປະຊາຊົນ, ເພື່ອເຮັດໃຫ້ອຸດົມຄະຕິອັນສະຫງ່າງາມຂອງພວກເຮົາປາກົດເປັນຈິງ.

ໃນສູ່ມື້ນີ້ ກົມໂຊໂມນເປັນຜູ້ທີ່ໄດ້ເຂົ້າຮ່ວມ ຢ່າງເອົາຈິງເອົາຈັງໃນການສ້າງລະບອບກອມມູນິດ. ຊາວໜຸ່ມກົມໂຊໂມນໄດ້ອອກແຮງງານຢ່າງດຸໝັ່ນພາກພຽນ ໃນບ່ອນກໍ່ສ້າງ "ກະມັດ", "ບາມ" ແລະບ່ອນກໍ່ສ້າງອື່ນໆນັບເປັນຮອຍໆແຫ່ງທັງໃຫຍ່ແລະນ້ອຍ, ໃນດິນນາອັນກວ້າງໃຫຍ່ໄພສານ ຂອງນາລວມແລະນາລັດ. ຊາວກົມໂຊໂມນໄດ້ປະຕິບັດວິລະກຳ ທາງການອອກແຮງງານຢ່າງນັບບໍ່ຖ້ວນ.

ກົມໂຊໂມນ, ຊາວໜຸ່ມໂຊວຽດທີ່ດີເລີດ ຂອງພວກເຮົາພວມໄດ້ປະກອບສ່ວນທີ່ຍິ່ງໃຫຍ່ ເຂົ້າໃນການຂະຫຍາຍວັດທະນະທຳໂຊວຽດ, ວິທະຍາສາດ ແລະ ສິລະປະໂຊວຽດ, ໃນການອົບຮົມລູກຫລານ, ໃນການສາທາລະນະສຸກ. ການອອກແຮງງານແນວນີ້ ມີລັກສະນະແບບໃໝ່ ແລະ ສະແດງຄວາມຫ້າວຫັນຂອງຊາວໜຸ່ມຢູ່ເລື້ອຍໆ. ດ້ວຍເຫດນັ້ນການປະກອບ

ສ່ວນດັ່ງກ່າວນັ້ນ ຈຶ່ງມີຄວາມໝາຍສຳຄັນອັນໃຫ່ຍຫລວງ.

ໃນນາມສ່ວນຕົວ, ໃນນາມກົມການເມືອງສູນກາງພັກ ຂໍສະແດງຄວາມເຊື່ອໝັ້ນວ່າ ກົມໂຊໂມນແລະຊາວກົມໂຊໂມນທັງໝົດ ຈະໄດ້ຍົກສູງຄັນທຸງເລນິນຂອງພວກເຂົາ, ຈະໄດ້ຊື່ສັດຕໍ່ພາລະກິດແຫ່ງພັກ, ຈະໄດ້ຊື່ສັດດ້ວຍມັນສະໝອງ ແລະ ຈິດໃຈ, ດ້ວຍການກະທຳຕົວຈິງ. ຂໍອວຍພອນ ໃຫ້ຊາວ ກົມໂຊໂມນຂອງປະເທດເຮົາ ຈົ່ງມີຜົນສຳເລັດໃຫ່ມໃນດ້ານຕ່າງຕ່າງແຫ່ງການກໍ່ສ້າງເສດຖະກິດ ແລະວັດທະນະທຳ, ການປັບປຸງຄວາມສາມາດປ້ອງກັນຕົວຂອງປະເທດເຮົາທີ່ຮັກແພງ, ໃນດ້ານຕ່າງໆແຫ່ງການຕໍ່ສູ້ເພື່ອລັດທິກອມມູນິດ ເພື່ອຕ້ອນຮັບອັນບຸນອັນສະງ່າງາມ ຄືວັນປະຕິວັດເດືອນຕຸລາທີ່ຍິ່ງໃຫ່ຍຄົບຮອບ ໕໐ ປີ .

ຂໍຂອບໃຈຫລາຍໆ ຕໍ່ບັນດາເພື່ອນມິດທີ່ຮັກແພງ(ຕົບມືຢ່າງຍືດຍາວແລະຟົດຟື້ນ).

ເຫລັ້ມ ທີ ໕,

ໜ້າ ໓໔໔–໓໔໕

ເຖິງບັນດາຜູ້ແທນທີ່ເຂົ້າຮ່ວມກອງປະຊຸມທົ່ວໂລກ ຂອງນັກກໍ່ສ້າງສັນຕິພາບ ອັນຖາວອນ

ຂໍສະແດງຄວາມເຄົາລົບນັບຖືຢ່າງບໍລິສຸດໃຈ ຕໍ່ບັນດາ ຜູ້ແທນທີ່ເຂົ້າຮ່ວມກອງປະຊຸມທົ່ວໂລກ ຂອງນັກສ້າງ ສັນຕິພາບອັນຖາວອນ ເຊິ່ງໂຮມການປະຊຸມໃນວໍຊໍທີ່ເປັນ ເມືອງຫລວງຂອງສາທາລະນະລັດປະຊາຊົນໂປໂລຍ.

ການໄຂກອງປະຊຸມອັນກວ້າງຂວາງແນ່ນອນ ແລະ ມີຊຸ່ສຽງດັງດັງຄືແນວນັ້ນຂອງພວກທ່ານ ສະແດງໃຫ້ເຫັນເຖິງການເສີມຂະຫຍາຍຄວາມຕັ້ງໃຈແຫ່ງວົງການອັນກວ້າງຂວາງ ຂອງມະຫາຊົນທີ່ຮັກຫອມສັນຕິພາບ ທີ່ຈະສົ່ງເສີມການຕໍ່ສູ້ ເພື່ອສັນຕິພາບແລະຄວາມປອດໄພຂອງບັນດາປະຊາຊາດ. ຕາມຄວາມຄິດເຫັນຂອງຂ້າພະເຈົ້າ ຊຸ່ຂອງກອງປະຊຸມດັ່ງນັ້ນໄດ້ສ່ອງແສງເຖິງບົດບາດແບບຄິດປະດິດສ້າງ ຂອງຂະບວນການ ຮັກຫອມສັນຕິພາບທີ່ກວ້າງຂວາງ. ໃນສູ່ມັ້ນ ເມື່ອມີການປະທະກັນລະຫວ່າງບັນດາກຳລັງແຫ່ງສັນຕິພາບ ແລະຄວາມກ້າວໜ້າ ກັບກຳລັງປະຕິການນັ້ນ ໃຜໆກໍບໍ່ອາດເປັນຜູ້ສັງເກດການຊື່ໆໄດ້.

ເພິ່ນໄດ້ບັນລຸຜົນສຳເລັດ ອັນໃຫຍ່ຫລວງໃນການຕໍ່ສູ້ ເພື່ອ

ສັນຕິພາບແລະຄວາມປອດໄພທາງສາກົນ. ອັນສຳຄັນ ຢູ່ບ່ອນວ່າເພິ່ນໄດ້ສາມາດຂັດຂວາງໄພອັນຕະລາຍແຫ່ງສົງຄາມໂລກຄັ້ງໃຫມ່, ລົດຜ່ອນການປະເຊີນຫນ້າກັນລົງ, ປັບປຸງ ນະໂຍບາຍແຫ່ງການຢູ່ຮ່ວມກັນໂດຍສັນຕິລະຫວ່າງ ປະເທດ ທີ່ມີລະບອບທາງສັງຄົມແຕກຕ່າງກັນ.

ສິ່ງສຳຄັນໃນສູ່ມນີ້ ແມ່ນເພິ່ນຕ້ອງປັບປຸງຜົນສຳເລັດທີ່ຍາດເອົາມາໆໄດ້ ແລ້ວກໍ້ກ້າວຂຶ້ນເພື່ອສ້າງເງື່ອນໄຂ ທາງວັດຖຸ , ການເມືອງແລະຈິດໃຈ ເພື່ອເຮັດໃຫ້ຂະບວນວິວັດ ດັ່ງກ່າວນັ້ນກາຍເປັນຂະບວນທີ່ໃຜໆກໍບໍ່ສາມາດຕ່າວປີ້ນມັນໄດ້.

ອັນນັ້ນຫມາຍເຖິງວ່າ ກ່ອນອື່ນຫມົດເພິ່ນຕ້ອງຕໍ່ສູ້ ເພື່ອສະກັດກັ້ນແລະຍຸດຕິການແຂ່ງຂັນສ້າງອາວຸດ. ດ້ວຍເຫດນັ້ນ ເພິ່ນຈຶ່ງຕ້ອງຍົກສູງຄວາມລະມັດລະວັງ ຕໍ່ກົນອຸບາຍ ຂອງພວກຈັກກະພັດ, ,ຕ້ອງເປີດໂປງຄວາມພະຍາຍາມ ຂອງພວກຈັກກະພັດທີ່ພະຍາຍາມປິດບັງຜູ້ລັບຜິດຊອບຕໍ່ການແຂ່ງຂັນສ້າງອາວຸດແລະພະຍາຍາມຫລອກຫລວງມະຫາຊົນ.

ສິ່ງທີ່ສຳຄັນໃນການຕໍ່ສູ້ເພື່ອສັນຕິພາບ ກໍຄືການລົບລ້າງ ບໍ່ເກີດແຫ່ງຄວາມເຄັ່ງຕຶງ, ການປັດກວາດພຶດຕິກຳອັນເປັນຕາຊັງຂອງພວກຈຳແນກເຊື້ອຊາດ, ການສ້າງຕັ້ງການຮ່ວມມືກັນຢ່າງມີສິດສະເຫມີພາບ ແລະເກີດຜົນຕໍ່ກັນແລະກັນ, ການສົ່ງເສີມແກ້ໄຂບັນດາບັນຫາທີ່ມີຄວາມຫມາຍສຳຄັນແກ່ມວນມະນຸດຢ່າງມີຜົນດີ.

ບັນດາເພື່ອນມິດທີ່ຮັກແພງ ! ໃນການຕໍ່ສູ້ເພື່ອບັນລຸ ເປົ້າ

ຫມາຍອັນສູງສົ່ງເຫລົ່ານັ້ນ ຄືດັ່ງພວກເຮົາຮູ້ແລ້ວວ່າເປັນເປົ້າ ຫມາຍທາງໂຄງການດຳເນີນງານຂອງຂະບວນການ ຮັກຫອມສັນຕິພາບນັ້ນ ພວກທ່ານສາມາດອີງໃສ່ ການສະຫນັບສະຫນູນ ແລະການຊ່ວຍເຫລືອຂອງປະຊາຊົນ ຂອງພວກເຮົາ ແລະພັກກອມມູນິດແຫ່ງສະຫະພາບໂຊວຽດຢູ່ເລື້ອຍໆ. ປະເທດໂຊວຽດ ທີ່ເປັນຜົນງານຂອງມະຫາປະຕິວັດສັງຄົມນິຍົມ ເດືອນຕຸລາໄດ້ເດີນໄປເປັນໄລຍະເວລາ ໖໐ ປີແລ້ວ ຕາມເສັ້ນທາງ ເຊິ່ງແມ່ນຂໍ້ດຳລັດເລນິນກ່ຽວກັບສັນຕິພາບ ອັນເປັນເອກະສານອັນມີຄວາມຫມາຍສຳຄັນເປັນປະຫວັດການໄດ້ເຍືອງທາງ. ຕາມເສັ້ນທາງແນວນັ້ນ ພວກເຮົາຈະເດີນຕໍ່ໄປພ້ອມກັບບັນດາຜູ້ຄົນທີ່ກຽມພ້ອມທີ່ຈະປະກອບສ່ວນຂອງຕົນ ເຂົ້າໃນພາລະກິດແຫ່ງການລົດຜ່ອນຄວາມເຄັ່ງຕຶງ, ການປົດອາວຸດ ການຮັບປະກັນເອກະລາດແຫ່ງຊາດ ແລະຄວາມກ້າວຫນ້າທາງສັງຄົມ.

ຂໍອ່ວຍພອນໃຫ້ສະພາສັນຕິພາບຂອງໂລກ, ບັນດາຜູ້ແທນທີ່ເຂົ້າຮ່ວມກອງປະຊຸມທົ່ວຊໍ ຈົ່ງເຮັດວຽກຢ່າງໄດ້ຜົນດີ, ຈົ່ງມີຜົນສຳເລັດໃຫມ່ໃນການຕໍ່ສູ້ເພື່ອອຸດົມຄະຕິອັນສູງສົ່ງແຫ່ງສັນຕິພາບ ແລະມິດຕະພາບລະຫວ່າງປະຊາຊາດຕ່າງໆ.

ລ.ບະເລັດຊະເນັບ

ວັນທີ ໖ ເດືອນພຶດສະພາປີ ໑໙໗໗
ເຫລັ້ມ ທີ ໖,
ຫນ້າ ໓໖໓-໓໖໔

ເຖິງບັນດາຜູ້ຄົນທີ່ເຂົ້າຮ່ວມ ກອງປະຊຸມສາກົນ ປຶກສາບັນຫາວ່າດວຍມະຫາປະຕິວັດສັງຄົມນິຍົມ ເດືອນຕຸລາແລະຂະບວນການປົດປ່ອຍຊາດຂອງ ປະຊາຊາດອາຊີ, ອາຟະລິກາແລະອາເມລິກາລາຕິນ

ຂໍສະແດງຄວາມເຄົາລົບນັບຖືຢ່າງບໍລິສຸດໃຈ ຕໍ່ບັນດາ ຜູ້ແທນທີ່ເຂົ້າຮ່ວມກອງປະຊຸມສາກົນ ທີ່ໄດ້ໄຂຂຶ້ນໃນນະຄອນບາກູທີ່ເປັນນະຄອນອັນມີຊື່ສຽງດ້ວຍມູນເຊື້ອປະຕິວັດ ແລະການອອກແຮງງານຢ່າງດີເລີດ, ເຊິ່ງເປັນນະຄອນແຫ່ງຫນຶ່ງ ທີ່ກອງປະຊຸມປະຊາຊາດຕາເວັນອອກຄັ້ງທຳອິດ ໄດ້ຮັບການໄຂຂຶ້ນ ຕາມຂໍ້ສະເຫນີຂອງທ່ານເລນິນ.

ຊາວຜູ້ອອກແຮງງານທົ່ວໂລກ ເຊື່ອຫມັ້ນນັບມື້ນັບຫລາຍຂຶ້ນ ວ່າມະຫາປະຕິວັດສັງຄົມນິຍົມເດືອນຕຸລາ ໄດ້ມີຄວາມ ຫມາຍສຳຄັນອັນເປັນປະຫວັດການຂອງທົ່ວໂລກ. ການປະຕິວັດນັ້ນໄດ້ລົບລ້າງການຂູດຮີດຄົນດ້ວຍຄົນ, ໄດ້ປະກາດການສ້າງຕັ້ງສັງຄົມສັງຄົມນິຍົມ ຂອງບັນດາຊົນຊາດທີ່ມີສິດສະເຫມີພາບກັນ . ການປະຕິວັດເດືອນຕຸລາທີ່ໄດ້ເປີດສັກກະລາດ ແຫ່ງການດັດປ່ຽນແບບປະຕິວັດນັ້ນ ມັນກໍໄດ້ໄຂເສັ້ນທາງແກ່ການຕໍ່ສູ້ ຂອງມະນຸດຊາດເພື່ອເສລີພາບແລະຄວາມກ້າວຫນ້າຂອງບັນດາປະຊາຊາດ, ເພື່ອສັນຕິພາບ, ປະຊາທິປະໄຕແລະສັງຄົມນິຍົມ.

ການປະຕິວັດເດືອນຕຸລາ ໄດ້ສົ່ງຜົນສະທ້ອນອັນຍິ່ງໃຫຍ່ ຕໍ່ຂະບວນການປົດປ່ອຍຊາດ. ການເສີມຂະຫຍາຍການຕໍ່ສູ້ ຂອງຊົນຊັ້ນກຳມະກອນສາກົນ ແລະປະຊາຊາດ ທີ່ເປັນເມືອງຂຶ້ນທີ່ຖືກກົດຂີ່ ໄດ້ປົດກວາດລະບົບ ລ່າເມືອງຂຶ້ນ ຂອງພວກຈັກກະພັດ; ປະເທດໃຫມ່ນັບເປັນສິບໆປະເທດໄດ້ປາກົດຕົວຂຶ້ນເຊິ່ງໄດ້ກ້າວເຂົ້າສູ່ເສັ້ນທາງຂອງການພັດທະນາ ຢ່າງເປັນເອກະລາດ. ໂດຍຜ່ານຄວາມຫຍຸ້ງຍາກ ແຫ່ງການສະຖາປະນາລັດໃຫມ່ ແລະການຕ້ານຢັນບັນດາກຳລັງປະຕິການ ທັງພາຍໃນແລະນອກປະເທດ ບັນດາປະເທດເຫລົ່ານັ້ນ ໄດ້ອອກແຮງປົບປຸງເອກະລາດແຫ່ງຊາດ ແລະປະຕິບັດການດັດປ່ຽນທາງດ້ານສັງຄົມ, ເສດຖະກິດແລະວັດທະນະທຳ. ບັນດາປະເທດທີ່ຫນຸ່ມນ້ອຍ ພວມໄດ້ເສີມຂະຫຍາຍການຕໍ່ສູ້ ຕ້ານພວກຈັກກະພັດ , ຕ້ານການພະຍາຍາມຂອງພວກຈັກກະພັດ ທີ່ຈະສືບຕໍ່ການຂູດຮີດປະເທດເຫລົ່ານັ້ນ ດ້ວຍວິທີການລ່າເມືອງຂຶ້ນ ແບບໃຫມ່ ແລະຊຸ້ມຄອງຊີວິດທາງເສດຖະກິດແລະທາງການເມືອງໃນປະເທດເຫລົ່ານັ້ນ. ປະເທດທີ່ຫນຸ່ມນ້ອຍເຫລົ່ານັ້ນ ກໍໄດ້ເສີມຂະຫຍາຍການຕໍ່ສູ້ເພື່ອສ້າງຕັ້ງການພົວພັນກັນທາງເສດຖະກິດທີ່ມີສິດເທົ່າທຽມກັນໃນເວທີສາກົນ. ພາຍໃຕ້ການນຳພາຂອງບັນດາກຳລັງປະຊາທິປະໄຕ-ປະຕິວັດ ປະເທດຕ່າງໆ ທີ່ ໄດ້ຮັບການປົດປ່ອຍ, ພວມໄດ້ປະຕິບັດການດັດປ່ຽນ ການພົວພັນກັນທີ່ຫລ້າຫລັງທາງດ້ານສັງຄົມ ແລະເສດຖະກິດເພື່ອເປັນຜົນປະໂຫຍດແກ່ມະຫາຊົນ ໂດຍເຮັດໃຫ້ນະໂຍບາຍພາຍໃນ ແລະ

ພາຍນອກ ມຸ່ງໜ້າໄປສູ່ທິດທາງສັງຄົມນິຍົມ. ບັນດາປະເທດເຫຼົ່ານັ້ນ ພວມໄດ້ເສີມຂະຫຍາຍ ການປະກອບສ່ວນຂອງຕົນເຂົ້າໃນພາລະກິດແຫ່ງສັນຕິພາບຂອງທົ່ວໂລກ ແລະ ການລຶດຜ່ອນຄວາມເຄັ່ງຕຶງທາງສາກົນລົງ. ອຸດົມຄະຕິແຫ່ງສັນຕິພາບ, ຄວາມປອດໄພຂອງປະຊາຊາດຕ່າງໆ, ການປົດອາວຸດ, ເອກະລາດແຫ່ງຊາດ, ປະຊາທິປະໄຕ, ຄວາມກ້າວໜ້າ ທາງສັງຄົມແລະສັງຄົມນິຍົມ ພວມໄດ້ຮັບການຍ້ອງຍໍຢູ່ໃນປະເທດຕ່າງຕ່າງຂອງອາຊີ, ອາຟະລິກາ ແລະອາເມລິກາລາຕິນ.

ປະຊາຊົນໂຊວຽດ ຕ້ອນຮັບວັນບຸນແຫ່ງການປະຕິວັດເດືອນຕຸລາຄົບຮອບ ໖໐ ປີ ໂດຍຜົນສຳເລັດອັນດີງາມ ໃນການ ກໍ່ສ້າງສັງຄົມກອມມູນິດ ແລະໂດຍເຮັດໃຫ້ບັນດາມະຕິ ອັນເປັນປະຫວັດການຂອງກອງປະຊຸມໃຫຍ່ຄັ້ງທີ XXV ແຫ່ງ ພ.ກ.ສ.ຊ. ປາກົດເປັນຈິງຂຶ້ນ.

ຂ້າພະເຈົ້າເຊື່ອໝັ້ນວ່າ ການຄົ້ນຄວ້າແບບວິດທະຍາສາດ, ບັນດາຄວາມຄິດແຫ່ງການປະຕິວັດເດືອນຕຸລາ ແລະ ການສົ່ງຜົນສະທ້ອນຕໍ່ຂະບວນການປົດປ່ອຍຊາດ ຂອງປະຊາຊາດອາຊີ, ອາຟະລິກາ, ອາເມລິກາລາຕິນ ຈະໄດ້ປະກອບສ່ວນອັນໃຫມ່ເຂົ້າໃນການກ້າວຂຶ້ນຂອງການປົດປ່ອຍປະຊາຊາດຕ່າງໆທາງດ້ານສັງຄົມແລະຊາດໃຫ້ພົ້ນອອກຈາກການຂູດຮີດທຸກຮູບ, ການກົດຂີ່ແບບລ່າເມືອງຂຶ້ນແບບໃໝ່ ແລະການດູຖູກທາງຊົນຊາດ.

ຂໍສະແດງ ຄວາມ ອວຍພອນ ໃຫ້ ບັນດາ ຜູ້ແທນ ທີ່ເຂົ້າ

ຮ່ວມ ກອງປະຊຸມ ຈົງມີ ຜົນສຳເລັດ ໃນ ວຽກງານ.

ລ.ບະເລັດຊະເນັບ

ວັນທີ ໔໒ ເດືອນພຶດສະພາ ປີ ໑໙໗໗

ເຫລັ້ມ ທີ ໒,

ໜ້າ ໓໙໐-໓໙໑

<u>ຕອບຄຳຖາມຂອງຊ.ຣັດຕາຜູ້ບັນນາທິການໃຫຍ່</u>
<u>ໜັງສືພິມ "ອະຊະຣີ"</u>
<u>ວັນທີ ໖ ເດືອນມິຖຸນາປີ ໑໙໘໘</u>

<u>ຖາມ</u>: ໗໐ ປີຜ່ານໄປແລ້ວ ພາຍຫລັງການປະຕິວັດເດືອນຕຸລາ. ທ່ານຕີລາຄາແນວໃດ ຕໍ່ຜົນສຳເລັດທີ່ຍາດມາໄດ້ ໃນໄລຍະເວລາດັ່ງກ່າວ ແລະວ່າການພັດທະນາປະເທດໄດ້ເດີນກ້າວຂຶ້ນແນວໃດ, ນັບລວມທັງບັນຫາວ່າດ້ວຍການແຂ່ງຂັນກັບລະບົບທຶນນິຍົມ ?

<u>ຕອບ</u>: ໃນໄລຍະເວລາ ໗໐ ປີທີ່ຜ່ານມາ ປະຊາຊົນ ໂຊວຽດ, ພາຍໃຕ້ການນຳພາຂອງພັກກອມມູນິດ ໄດ້ຜ່ານ ເສັ້ນທາງເຊິ່ງແມ່ນພວກເຮົາຮູ້ສຶກ ມີຄວາມພາກພູມໃຈຫລາຍ. ໃນໄລຍະເວລາແຫ່ງຊີວິດຂອງຜູ້ໜຶ່ງ ມັນສາມາດລົບລ້າງຄວາມຫລ້າຫລັງເປັນຫລາຍສັດຕະວັດໄດ້. ປະເທດເຮົາໄດ້ກ້າວຂຶ້ນສູ່ລະດັບສູງແຫ່ງການພັດທະນາທາງດ້ານເສດຖະກິດວິ ທະຍະສາດ–ເຕັກນິກ, ໃນເວລາກ່ອນປະຕິວັດນັ້ນປະເທດລັດເຊຍໄດ້ຜະລິດທາງຊຸດສາຫະກຳ໔%ຂອງທົ່ວໂລກ; ປະຈຸບັນນີ້ສ.ສ.ສ.ຊ. ພວມຜະລິດ ໑/໕ ຂອງຜະລິດຕະພັນຊຸດສາຫະກຳ ຂອງທົ່ວໂລກ.

ໂດຍໄດ້ວາງເປົ້າໝາຍທີ່ຈະສ້າງສັງຄົມໃໝ່ນັ້ນພວກເຮົາຈຳຕ້ອງເດີນຕາມເສັ້ນທາງທີ່ບໍ່ເຄີຍມີມາກ່ອນໃນປະຫວັດສາດໂລກ. ແນ່ນອນວ່າ ພວກເຮົາໄດ້ຜ່ານຜ່າອຸປະສັກ ນານາປະການ. ໃນສູ່ມື້ນີ້ ພວກເຮົາໄດ້ສ້າງສັງຄົມແບບສັງຄົມນິຍົມ ທີ່ຈະເລີ່ມກ້າວໜ້າ. ອັນນັ້ນ ໝາຍຄວາມວ່າແນວໃດ ? ອັນນັ້ນໝາຍຄວາມວ່າໃນ ສ.ສ.ສ.ຊ. ເພິ່ນໄດ້ລົບລ້າງ ການຂູດຮີດຄົນໂດຍຄົນຢ່າງສົມເຊີງ; ໝາຍຄວາມວ່າເພິ່ນຮັບປະກັນສິດເສລີພາບແລະປະຊາທິປະໄຕທີ່ແທ້ຈິງຂອງພົນລະເມືອງແຕ່ລະຄົນ, ໝາຍຄວາມວ່າ ອັນນັ້ນເປັນສັງຄົມ ທີ່ເຊື່ອໝັ້ນໃນອະນາຄົດອັນສະຫງ່າງາມແລະເປັນສັງຄົມ ທີ່ກ້າວຂຶ້ນ ຕາມເສັ້ນທາງທີ່ຈະນຳໄປສູ່ອະນາຄົດນັ້ນ.

ຂ້າພະເຈົ້າຄິດວ່າ ມັນບໍ່ວ່າເປັນຈະຕ້ອງອ້າງຕົວເລກສະຖິຕິທີ່ສະແດງໃຫ້ເຫັນເຖິງການຂະຫຍາຍຕົວຢ່າງເນື່ອງນິດຂອງເສດຖະກິດຂອງປະຊາຊົນ ສ.ສ.ສ.ຊ. ບັນດາໜັງສືພິມຕ່າງຕ່າງໄດ້ລົງພິມບັນດາຕົວເລກສະຖິຕິເຫລົ່ານັ້ນແລ້ວ. ຂ້າ ພະເຈົ້າຢາກກ່າວເນັ້ນວ່າ ເປົ້າໝາຍອັນສຳຄັນກ່ວາໝູ່ຂອງພັກເຮົາ ຄື ການເສີມຂະຫຍາຍເສດຖະກິດ, ປັບປຸງລະດັບຊີວິດການເປັນຢູ່ທາງວັດຖຸ ແລະວັດທະນະທຳຂອງບັນດາ ຊາວໂຊວຽດ, ພວກເຮົາພວມເຮັດໃຫ້ເປົ້າໝາຍນີ້ ປາກົດເປັນຈິງ.

ພວກເຮົາມີພື້ນຖານທີ່ດີ ທີ່ຈະເຊື່ອໝັ້ນໃນອະນາຄົດອັນສະຫງ່າງາມ. ດັ່ງທີ່ທ່ານຮູ້ແລ້ວວ່າ ກອງປະຊຸມໃຫຍ່ ຄັ້ງທີ **XXV** ຂອງ ພ.ກ.ສ.ຊ. ໄດ້ວາງເປົ້າໝາຍໃໝ່, ຂ້າພະເຈົ້າ

ຍາກເວົ້າເຖິງເລື່ອງດຽວນັ້ນ ຄື ການປະຕິບັດແຜນການຫ້າປີຊຸດທີສິບ (ພວກເຮົາເຊື່ອແນ່ວ່າ ແຜນການເຫລົ່ານັ້ນຈະໄດ້ປາກົດເປັນຈິງເດັດຂາດ) ຈະໄດ້ອຳນວຍເງື່ອນໄຂ ແກ່ພວກເຮົາທີ່ຈະເພີ່ມທະວີຄວາມສາມາດທາງອຸດສາຫະກຳ ຂອງປະເທດເຮົາຕັ້ງຄົບເທົ່າ ປຽບໃສ່ປີ ໑໙໗໐.

ໃນມໍ່ໆມານີ້ ກອງປະຊຸມສະໄຫມສາມັນຂອງສູນກາງ ພ.ກ.ສ.ຊ. ໄດ້ສະແດງຄວາມເຫັນດີນຳ ຮ່າງລັດຖະທຳມະນູນສະບັບໃຫ່ມແຫ່ງສະຫະພາບໂຊວຽດ ແລະໄດ້ສະເຫນີໃຫ້ປວງປະຊາຊົນອະພິປາຍຮ່າງລັດຖະທຳມະນູນສະບັບໃຫ່ມນີ້ກ່ອນ. ພວກເຮົາຄິດວ່າ ການຮັບຮອງລັດຖະທຳມະນູນສະບັບໃຫ່ມຈະກາຍເປັນເຫດການອັນຍິ່ງໃຫ່ຍ ບໍ່ພຽງແຕ່ແກ່ປະເທດເຮົາ ທໍ່ ນັ້ນ ຫາກຍັງຈະໄດ້ຮັບການຕອບສະຫນອງທາງສາກົນຢ່າງ ກວ້າງຂວາງອີກດ້ວຍ.

ໃນໄລຍະຫົກສິບປີແຫ່ງການດຳລົງຊີວິດ ຂອງລັດໂຊວຽດ, ນະໂຍບາຍຕ່າງປະເທດຂອງພວກເຮົາ ໄດ້ມຸ່ງຫນ້າໄປສູ່ການຮັບປະກັນສັນຕິພາບແລະຄວາມປອດໄພຂອງປະເທດເຮົາແລະບັນດາປະຊາຊາດທັງຫລາຍ. ໃນປະຈຸບັນນີ້ ບັນດາຂໍ້ສະເຫນີຂອງ ສ.ສ.ສ.ຊ. ທາງດ້ານສາກົນ ກໍມຸ່ງຫນ້າໄປສູ່ການລົບລ້າງໄພອັນຕະລາຍແຫ່ງສົງຄາມ, ການສະກັດກັ້ນການແຂ່ງຂັນສ້າງອາວຸດ, ການເສີມຂະຫຍາຍການຮ່ວມມືກັນທີ່ເກີດຜົນແກ່ບັນດາປະເທດທັງຫລາຍ. ໃນໄລຍະຕໍ່ໄປ ພວກເຮົາກໍຈະຕັ້ງຫນ້າປະຕິບັດນະໂຍບາຍແຫ່ງການລົດຜ່ອນຄວາມເຄັ່ງຕຶງ, ນະ

ໂຍບາຍແຫ່ງການເຮັດໃຫ້ການລຶດຜ່ອນ ຄວາມເຄັ່ງຕຶງ ຂະຫຍາຍຕົວໄປທົ່ວໂລກ. ຂ້າພະເຈົ້າຄິດວ່າ ມັນເປັນຄວາມຈິງທີ່ຈະເວົ້າໄດ້ວ່າ ຄວາມເອົາຈິງເອົາຈັງຂອງນະໂຍບາຍຂອງພວກເຮົາ, ຄວາມຮູ້ຕົວຈິງ, ການພິຈາລະນາ ຢ່າງຖີ່ຖ້ວນ, ການກຽມພ້ອມທີ່ຈະເອົາໃຈໃສ່ຕໍ່ຜົນປະໂຫຍດອັນເປັນທຳຂອງຝ່າຍອື່ນນັ້ນ ພວມໄດ້ຮັບຄວາມນິຍົມຊົມຊອບໃນທົ່ວໂລກ, ເວັ້ນເສຍແຕ່ໃນວົງການທີ່ຢາກຫລອກລວງມະຫາຊົນ ດ້ວຍການປັ້ນແຕ່ງເລື່ອງທີ່ບໍ່ເປັນຈິງ ກ່ຽວກັບນະໂຍບາຍ ຂອງພວກເຮົາ.

ສ່ວນການແຂ່ງຂັນລະຫວ່າງລະບົບທັງສອງ ຂອງໂລກ ນັ້ນ ກ່ອນອື່ນຫມົດ ຂ້າພະເຈົ້າຢາກເວົ້າວ່າ ພາຍຫລັງ ການປະຕິວັດຂອງເລນິນ ພວກເຮົາໄດ້ມຸ່ງຫນ້າໄປສູ່ການຢູ່ຮ່ວມກັນໂດຍສັນຕິລະຫວ່າງປະເທດ ທີ່ມີລະບອບທາງສັງຄົມແຕກຕ່າງກັນ, ໄປສູ່ການແກ້ໄຂບັນຫາພິພາດກັນ ດ້ວຍການເຈລະຈາ, ບໍ່ແມ່ນດ້ວຍກຳລັງອາວຸດ. ກ່ຽວກັບບັນຫາທີ່ວ່າ ໃຜຈະເອົາ ໄຊຊະນະໃນອະນາຄົດນັ້ນ ພວກເຮົາເຊື່ອຫມັ້ນວ່າ ລະບອບສັງຄົມນິຍົມຈະໄດ້ເປັນຜູ້ຊະນະ.

ຖາມ: ໃນນາມປະຊາຊົນຜູ້ຫນຶ່ງ ທີ່ໄດ້ຮັບເຄາະຮ້າຍຈາກອາວຸດນິວຄະເລຍນັ້ນ ຂ້າພະເຈົ້າຢາກຕັ້ງຄຳຖາມວ່າ ໃນໄລຍະຕໍ່ໄປ ການປົດອາວຸດປະລະມານູ ແລະການເຈລະຈາກັນກ່ຽວກັບການຈຳກັດອາວຸດຍຸດທະສາດຈະດຳເນີນໄປຢ່າງມີຜົນດີ ຫລືບໍ່ ?

ຕອບ: ຊາວໂຊວຽດຍັງຈື່ຈຳ ເລື່ອງອັນຫນ້າເສົ້າສະຫລົດ

ໃຈຂອງ ຮິໂລຊິມາ ແລະ ນາກາຊາກິ ໃນເມື່ອ ມະນຸດຊາດໄດ້ຮູ້ຈັກວ່າອາວຸດປະລະມານູ ແມ່ນຫຍັງ. ພວກເຮົາຮ່ວມຢູ່ໃນຄວາມຮູ້ສຶກຂອງປະຊາຊົນຍີ່ປຸ່ນຜູ້ໄດ້ຮັບເຄາະຮ້າຍ ຢ່າງບໍ່ຈຳເປັນຍ້ອນການຖິ້ມລູກລະເບີດປະລະມານູຄັ້ງທຳອິດ.

ໃນປະຈຸບັນນີ້ ຄວາມເຂັ້ມແຂງຂອງອາວຸດແນວນັ້ນ ໄດ້ຮັບການເພີ່ມຂຶ້ນຕັ້ງຫລາຍເທື່ອ. ໃຜໆກໍເຫັນວ່າ ການແຂ່ງຂັນສ້າງອາວຸດປະລະມານູ ເປັນການຄຸກຄາມ ສັນຕິພາບ ແລະຄວາມປອດໄພຂອງຫນ່ວຍພິພົບເຮົາ. ເບິ່ງແລ້ວ ເຫັນວ່າປະເທດທັງຫລາຍຕ້ອງອອກແຮງເພື່ອສະກັດກັ້ນການແຜ່ຂະຫຍາຍຂອງອາວຸດນິວຄະເລຍ, ຫ້າມການທົດລອງອາວຸດນັ້ນແລະສຸດທ້າຍ, ບໍ່ພຽງແຕ່ສະກັດກັ້ນ ການແຂ່ງຂັນສ້າງອາວຸດ ນິວຄະເລຍທໍ່ນັ້ນ ຫາກຍັງຈະຕ້ອງລົບລ້າງອາວຸດນິວຄະເລຍໂດຍສິ້ນເຊີງອີກດ້ວຍ. ສ.ສ.ສ.ຊ. ມີເປົ້າຫມາຍແນວນີ້ແຫລະ. ປະເທດເຮົາຮຽກຮ້ອງໃຫ້ຫ້າມໃຊ້ອາວຸດນິວຄະເລຍໂດຍສິ້ນເຊີງ, ຮຽກຮ້ອງໃຫ້ເຮັດແນວນີ້ ຕັ້ງແຕ່ການກຳເນີດຂອງລັດໂຊວຽດມາ. ດັ່ງທີ່ຮູ້ກັນດີແລ້ວວ່າ ຕາມຂໍ້ສະເຫນີຂອງ ສ.ສ.ສ.ຊ. ໃນປີ ໑໙໗໒ ກອງປະຊຸມສະມັດຊາໃຫຍ່ຂອງອົງການ ສະຫະປະຊາຊາດໄດ້ຜ່ານມະຕິວ່າດ້ວຍການຫ້າມໃຊ້ກຳລັງ ໃນການຕິດຕໍ່ພົວພັນທາງສາກົນ ແລະການຫ້າມໃຊ້ອາວຸດ ນິວຄະເລຍຕະຫລອດກາລະນານ. ດັ່ງທີ່ຮູ້ກັນແລ້ວວ່າ ໃນປະຈຸບັນນີ້ ອົງການສະຫະປະຊາຊາດພວມອາພິປາຍຮ່າງສົນທິສັນຍາວ່າດ້ວຍການຫ້າມໃຊ້ກຳລັງໃນການພົວພັນກັນທາງສາກົນ ນັບລວມທັງ

ການປະຕິເສດຂອງບັນດາປະເທດທີ່ຈະໃຊ້ອາວຸດທຸກຊະນິດນັບທັງອາວຸດນິວຄະເລຍ. ເປັນໜ້າເສຍດາຍ ວ່າຍ້ອນທ່າທີຄັດຄ້ານຂອງບາງປະເທດ ເລື່ອງນີ້ຈຶ່ງຍັງບໍ່ທັນກ້າວຂຶ້ນ. ຂ້າພະເຈົ້າຢາກເວົ້າຢ່າງຈະແຈ້ງວ່າ ໃນທຸກໆເວລາ ສ.ສ.ສ.ຊ. ກຽມພ້ອມທີ່ຈະເລີ່ມເຈລະຈາກັນກັບປະເທດ ປະລະມານູອື່ນໆ ເພື່ອວາງວິທີການແກ້ໄຂ ບັນຫາວ່າດ້ວຍການປົດອາວຸດນິວຄະເລຍ.

ເປັນເວລາຫລາຍປີແລ້ວ ທີ່ ສ.ສ.ສ.ຊ. ພ້ອມກັບອາເມລິກາ ໄດ້ດຳເນີນການເຈລະຈາກັນກ່ຽວກັບການຈຳກັດອາວຸດຍຸດທະສາດ. ພວກເຮົາຄິດວ່າ ໃນການເຈລະຈາກັນນັ້ນພວກເຮົາໄດ້ຍາດເອົາຜົນສຳເລັດທີ່ສຳຄັນ. ພວກເຮົາພາກັນສືບຕໍ່ດຳເນີນການເຈລະຈາກັນຢູ່ຕໍ່ໄປ ເຊິ່ງມີຂໍ້ຕົກລົງ ໃນວະລະດີວິດຕິກທີ່ຮູ້ກັນ ເປັນພື້ນຖານ. ພວກເຮົາຕັ້ງໜ້າທີ່ຈະເຮັດໃຫ້ການເຈລະຈາກັນສຳເລັດໄດ້ໄວເທົ່າໃດ ຍິ່ງດີເທົ່ານັ້ນ.ມັນມີຄວາມສາມາດເຮັດແນວນີ້ໄດ້, ຖ້າຫາກວ່າ ຝ່າຍອື່ນບໍ່ພະຍາຍາມທີ່ຈະເອົາປຽບເອົາລັດທີ່ສູງກວ່າໝູ່. ແນ່ນອນວ່າ ພວກເຮົາຈະບໍ່ເຊັນຂໍ້ຕົກລົງທີ່ເກີດຜົນເສຍຫາຍ ແກ່ຄວາມປອດໄພຂອງ ສ.ສ.ສ.ຊ. ແລະພັນທະມິດຂອງພວກເຮົາ.

ຖາມ: ເມື່ອຄິດເຖິງສະພາບການໃນທະວີບອາຊີແລ້ວ ກໍ່ເຂົ້າໃຈວ່າ ນະໂຍບາຍອາຊີ ຂອງ ສ.ສ.ສ.ຊ. ມີຄວາມໝາຍສຳຄັນ. ທ່ານມີຄວາມຄິດເຫັນແນວໃດ ກ່ຽວກັບ ສາຍສຳພັນກັບສາທາລະນະລັດປະຊາຊົນຈີນ(ສ.ປ.ຈ.)ສະຖານະ

ການໃນແຫລມເກົາຫລີ, ນະໂຍບາຍຂອງບັພດາປະເທດ ອາຊີ ອາຄະເນ ນັບທັງ ປະເທດຫວຽດນາມ?

ຕອບ: ປະເທດເຣົາ ໄດ້ແລະພວມຕິດຕໍ່ກັບທະວີບອາຊີທັງທາງດ້ານປະຫວັດສາດ, ເສດຖະກິດ, ພູມີສາດ ຢ່າງແຫນ້ນແຟ້ນ. ແນ່ນອນວ່າ ພວກເຮົາສະແດງຄວາມເອົາໃຈໃສ່ ຕໍ່ການປັບປຸງສັນຕິພາບ ໃນພາກພື້ນຂອງໂລກ. ພວກເຮົາຄິດວ່າ ການລົດຜ່ອນຄວາມເຄັ່ງຕຶງທີ່ໄດ້ກາຍເປັນທ່າອຽງຕໍ່ຫນ້າຂອງຂະບວນວິວັດຂອງໂລກ ບໍ່ຄວນເບິ່ງຂ້າມທະວີບອາຊີ ທີ່ມີພົນລະເມືອງທໍ່ກັບເຄິ່ງຫນຶ່ງຂອງພົນລະເມືອງຂອງທົ່ວໂລກ.

ຕາມຄວາມຄິດເຫັນຂອງພວກເຮົາ ໄຊຊະນະອັນເປັນ ປະຫວັດການຂອງປະຊາຊົນ ຫວຽດນາມ, ການສະຖາປະນາລັດໃຫ່ຍທີ່ຮັກຫອມສັນຕິພາບ ຄືສາທາລະນະລັດສັງຄົມນິຍົມຫວຽດນາມ, ການແກ້ໄຂກໍລະນີພິພາດໃນອາຊີອາຄະເນ ແລະການຖອນກອງທະຫານອາເມລິກາອອກຈາກອິນດູຈີນຢ່າງທົ່ວໆໄປ, ທັງຫມົດເຫລົ່ານັ້ນ ໄດ້ສ້າງເງື່ອນໄຂເບື້ອງຕົ້ນ ທີ່ອຳນວຍໃຫ້ແກ່ການຮັບປະກັນສັນຕິພາບອັນຖາວອນ ແລະຄວາມ ປອດໄພໃນອາຊີດ້ວຍການອອກແຮງຮ່ວມກັນລະຫວ່າງ ບັນດາປະເທດອາຊີ. ສ.ສ.ສ.ຊ. ຮຽກຮ້ອງໃຫ້ເດີນຕາມເສັ້ນທາງ ແນວນັ້ນແຫລະ.

ສ່ວນສາຍສຳພັນໂຊວຽດ-ຈີນນັ້ນ ທົ່ວໂລກກໍຮູ້ທ່າທີ ທັດສະນະຂອງພວກເຮົາຢ່າງດີແລ້ວ. ພວກເຮົາຮຽກຮ້ອງໃຫ້ ເຮັດສາຍສຳພັນທາງລັດກັບປະເທດຈີນເປັນປົກກະຕິ. ການ ສ້າງ

ສາຍສຳພັນກັນຖານເພື່ອນບ້ານໃກ້ຄຽງລະຫວ່າງ ສ.ສ.ສ.ຊ. ກັບ ສ.ປ.ຈ. ຈະໄດ້ມີຄວາມໝາຍສຳຄັນ ບໍ່ພຽງແຕ່ໃຫ້ແກ່ ສ.ສ.ສ.ຊ. ແລະ ສ.ປ.ຈ. ທໍ່ນັ້ນ ຫາກຍັງໃຫ້ແກ່ການປັບປຸງສະຖານະການທາງສາກົນອີກດ້ວຍ.

ມາຮອດສູ່ມື້ນີ້, ການທີ່ມັນບໍ່ໄດ້ມີການປ່ຽນແປງໄປໃນທາງທີ່ດີ ໃນສາຍສຳພັນໂຊວຽດ-ຈີນນັ້ນ ມັນຂຶ້ນຢູ່ກັບຄວາມຮັບຜິດຊອບຂອງຝ່າຍອື່ນ. ອັນເປັນໜ້າເສຍດາຍວ່າ ຜູ້ນຳຄົນໃໝ່ຂອງຈີນໄດ້ສືບຕໍ່ເດີນຕາມເສັ້ນທາງອັນເກົ່າ ໂດຍໄດ້ສືບຕໍ່ດຳເນີນການໂຈມຕີນະໂຍບາຍການລົດຜ່ອນຄວາມເຄັ່ງຕຶງ ແລະການຂັດຂວາງການປົດອາວຸດ. ສ່ວນຄຳຂວັນກ່ຽວກັບການຕໍ່ສູ້ຕ້ານ "ນະໂຍບາຍເປັນເຈົ້າອຳນາດ" .ອາດເປັນໄປໄດ້ວ່າມີບາງພັກພວກທີ່ຄິດວ່າ ຄຳຂວັນນີ້ ບໍ່ເປັນ ອັນຕະລາຍ ເລີຍ. ຕາມຄວາມເປັນຈິງແລ້ວ ເຂົາພະຍາຍາມໃຊ້ຄຳຂວັນນີ້ ເພື່ອຫວ່ານຄວາມເປັນປໍລະປັກກັນລະຫວ່າງປະເທດຕ່າງໆຫລືຢ່າງນ້ອຍທີ່ສຸດ ກໍ່ຂັດຂວາງບໍ່ໃຫ້ປະເທດຕ່າງໆປັບປຸງ ສາຍສຳພັນກັນທາງສາກົນ. ເຂົາມີເປົ້າໝາຍແນວນັ້ນ, ມັນບໍ່ແມ່ນເປັນເປົ້າໝາຍທີ່ຝ່າຝືນຕໍ່ຜົນປະໂຫຍດ ຂອງສັນຕິພາບ ແລະການຮ່ວມມືກັນບໍ່ ? ພວກເຮົາມີທ່າທີກ່ຽວກັບບັນຫານີ້ ຢ່າງ ຈະແຈ້ງ; ຊາວຍີ່ປຸ່ນ ຮູ້ເລື່ອງນີ້ແລ້ວ.

ກ່ຽວກັບສະຖານະການໃນແຫລມເກົາຫລີນັ້ນ, ພວກເຮົາສະໜັບສະໜູນຂໍ້ສະເໜີຂອງສາທາລະນະລັດປະຊາທິປະໄຕປະຊາຊົນເກົາຫລີ ກ່ຽວກັບການຖອນກອງທະຫານ ຕ່າງປະເທດ

ອອກຈາກເກົາຫລີພາກໃຕ້ ແລະການສ້າງເງື່ອນໄຂທີ່ດີສຳລັບການທ້ອນໂຮມປະເທດໂດຍອີງໃສ່ຫລັກການ ປະຊາທິປະໄຕຢ່າງສັນຕິ ແລະໂດຍປາສະຈາກການແຊກແຊງຈາກພາຍນອກ. ອັນນັ້ນ ບໍ່ພຽງແຕ່ເປັນທ່າທີຂອງພວກເຮົາຜູ້ດຽວທໍ່ນັ້ນ,ສະມັດຊາໃຫ່ຍຂອງສະຫະປະຊາຊາດ ໄດ້ຜ່ານມະຕິວ່າ ດ້ວຍການສ້າງເງື່ອນໄຂທີ່ດີແກ່ການເຮັດການຢຸດຍິງ ໃນເກົາຫລີ ກາຍເປັນສັນຕິພາບອັນຖາວອນ ແລະ ວ່າດ້ວຍການສົ່ງເສີມ ການທ້ອນໂຮມເກົາຫລີ ດ້ວຍວິທີການອັນສັນຕິນັ້ນ ມັນສະແດງ ໃຫ້ເຫັວ່າ ບັນດາປະເທດພາຄີ ອົງການສະຫະປະຊາຊາດ ເປັນສ່ວນຫລວງຫລາຍ ໄດ້ພາກັນສະໜັບສະໜູນທ່າທີດັ່ງກ່າວນັ້ນເຊັ່ນດຽວກັນ.

ຖາມ: ທ່ານມີຄວາມຄິດເຫັນແນວໃດ ກ່ຽວກັບສັນຕິ ພາບໃນພາກພື້ນຕາເວັນອອກກາງ, ການຕໍ່ສູ້ປົດປ່ອຍຊາດຂອງປະຊາຊາດອາຊີແລະອາຟະລິກາ, ບັນຫາ "ພາກໃຕ້-ພາກເໜືອ"?

ຕອບ: ເປັນເວລາຫລາຍປີແລ້ວ ທີ່ວິກິດການພາກຕາເວັນອອກກາງທີ່ບາງຄັ້ງຢຸດ ບາງຄັ້ງກໍ່ເກີດຂຶ້ນ ເຊິ່ງເປັນບໍ່ເກີດແຫ່ງຄວາມເຄັ່ງຕຶງທາງສາກົນ. ໃຜໆກໍເລີ່ມເຂົ້າໃຈແລ້ວໃນປະຈຸບັນນີ້ ເຖິງຄວາມຈຳເປັນທີ່ຈະຕ້ອງແກ້ໄຂ ວິກິດການ ນີ້ດ້ວຍສັນຕິວິທີ. ຕາມຄວາມຄິດເຫັນຂອງພວກເຮົານັ້ນ ພວກເຮົາຕ້ອງຟື້ນຟູວຽກງານຂອງກອງປະຊຸມເຊີແນວກ່ຽວກັບພາກພື້ນຕາເວັນອອກກາງຢ່າງທັນທີ.

ສ່ວນເນື້ອໃນຂອງວິກິດການ ຕາເວັນອອກກາງນັ້ນ, ຕາມ

ຄວາມຄິດເຫັນຂອງພວກເຮົາ, ມັນຢູ່ບ່ອນວ່າ ມີແຕ່ການຖອນກອງທະຫານອິດສະລະແອນອອກຈາກດິນແດນອາລັບ ທີ່ອິດສະລະແອນໄດ້ຍຶດຄອງໃນປີ ໑໙໖໗, ການເຄົາລົບສິດທິຂອງບັນດາປະເທດ ແລະປະຊາຊາດຕ່າງໆໃນພາກພື້ນນີ້ ຕໍ່ການ ດຳລົງຊີວິດຢ່າງມີຄວາມເປັນເອກະລາດ ແລະຄວາມປອດໄພນັບລວມທັງປະເທດອິດສະລະແອນ ແລະ ປະຊາຊົນຊາວ ອາລັບຂອງປາເລັດສະຕິນ, ການປະຕິບັດສິດອັນຊອບທຳຂອງປະຊາຊົນຊາວອາລັບຂອງປາເລັດສະຕິນ ຕໍ່ການສ້າງຕັ້ງລັດຂອງຕົນເອງນັ້ນ ມັນຈຶ່ງສາມາດຮັບປະກັນສັນຕິພາບອັນໝັ້ນຄົງແລະເປັນທຳໄດ້.

ຝ່າຍ ສ.ສ.ສ.ຊ. ກຽມພ້ອມຢູ່ສະເໝີ ທີ່ຈະເຮັດທຸກສິ່ງທຸກຢ່າງເທົ່າທີ່ຈະເຮັດໄດ້ ເພື່ອເຮັດໃຫ້ສັນຕິພາບນັ້ນ ຫຍັບເຂົ້າໃກ້ຊິດຍິ່ງຂຶ້ນ.

ກ່ຽວກັບພາກສ່ວນທີສອງຂອງຄຳຖາມຂອງທ່ານນັ້ນທົ່ວໂລກພວມເຫັນວ່າ ຂະບວນວິວັດແຫ່ງການລົບລ້າງເສດເຫຼືອຂອງລັດທິລ່າເມືອງຂຶ້ນ, ການກົດຂີ່ ທາງຊົນຊາດ, ການບໍ່ມີສິດທິເທົ່າທຽມກັນ, ການພົວພັນກັນແບບຄົນຂູດຮີດຄົນ ກຳລັງເຕີບໃຫຍ່ຂະຫຍາຍຢ່າງວ່ອງໄວ. ແນ່ນອນວ່າຂະບວນວິວັດດັ່ງກ່າວຈະໄດ້ດຳເນີນຕໍ່ໄປ. ເປັນຫຍັງຂ້າພະເຈົ້າ ຈຶ່ງເວົ້າ ດ້ວຍຄວາມແນ່ນອນແນວນີ້ ? ຍ້ອນວ່າພື້ນຖານຂອງມັນ ຄື ຄວາມຕັ້ງໃຈຂອງບັນດາປະຊາຊາດ ທີ່ຈະຍາດເອົາເອກະລາດ ໃນການພັດທະນາຊາດ, ຍາດເອົາຄວາມກ້າວໜ້າທາງດ້ານສັງ

ລົມແລະທາງຈິນຊາດ. ອັນເປັນທີ່ຮູ້ກັນວ່າ ສ.ສ.ສ.ຊ. ໄດ້ສະໜັບສະໜູນແລະຈະໄດ້ສະໜັບສະໜູນຄວາມຕັ້ງໃຈ ອັນຊອບທຳແນວນັ້ນ.

ທ່ານໄດ້ເວົ້າວ່າ "ພາກໃຕ້-ພາກເໜືອ"; ເບິ່ງແລ້ວອັນນັ້ນແມ່ນໝາຍເຖິງການພົວພັນກັນລະຫວ່າງບັນດາປະເທດ ທີ່ກຳລັງພັດທະນາຢູ່ກັບບັນດາປະເທດທຶນນິຍົມ ທີ່ຈະເລີນ ບໍ່ວ່າຢູ່ໃນພາກພື້ນໃດຂອງໂລກ.

ທ່າທີຂອງພວກເຮົາ ໃນບັນຫານັ້ນ ເປັນອັນຈະແຈ້ງແລ້ວ. ສ.ສ.ສ.ຊ. ສະໜັບສະໜູນຄຳຮຽກຮ້ອງຂອງບັນດາ ປະເທດທີ່ກຳລັງພັດທະນາຢູ່ ໃຫ້ດັດປ່ຽນການພົວພັນກັນທາງເສດຖະກິດໃນເວທີສາກົນ ໂດຍອີງໃສ່ພື້ນຖານ ອັນເປັນທຳ ແລະ ມີປະຊາທິປະໄຕ. ອັນນັ້ນກ່ອນອື່ນໝົດ ໝາຍເຖິງວ່າ ການລົບລ້າງລະບົບລ່າເມືອງຂຶ້ນ ຕ້ອງຮັບການ ຂະຫຍາຍຕົວ ໄປຮອດດ້ານເສດຖະກິດ, ຕ້ອງລົບລ້າງການກົດຂີ່ຂອງບໍລິສັດຈັກກະພັດໂລກ, ຕ້ອງສະກັດກັ້ນການຂູດຮີດຊັບສົມບັດທາງທຳມະຊາດແລະທາງມະນຸດແຫ່ງບັນດາປະເທດທີ່ກຳລັງພັດທະນາ ຢູ່ ໂດຍບັນດາປະເທດທຶນນິຍົມ.

<u>ຖາມ</u>: ເມື່ອທ່ານຕານະກະອະດີດນາຍົກລັດຖະມົນຕີ ແຫ່ງຍີ່ປຸ່ນ ໄດ້ໄປຢ້ຽມຢາມ ສ.ສ.ສ.ຊ. ນັ້ນ ທັງສອງຝ່າຍ ໄດ້ເຫັນດີນຳກັນວ່າ ບັນຫາວ່າດ້ວຍດິນແດນທາງທິດເໜືອ ເປັນບັນຫາທີ່ຍັງບໍ່ທັນໄດ້ຮັບການແກ້ໄຂເທື່ອ ລະຫວ່າງຍີ່ປຸ່ນກັບ ສ.ສ.ສ.ຊ. ທ່າທີທີ່ ສ.ສ.ສ.ຊ. ໄດ້ຍຶດໝັ້ນ ໃນໄລຍະເວ

ລາມໆມານີ້ນ ມັນບໍ່ແມ່ນຝ່າຝືນຕໍ່ຂໍ້ຕົກລົງກັນນັ້ນ ບໍ ?

ຕອບ: ພວກເຮົາຈື່ຈຳການສົນທະນາກັບຜູ້ນຳຍີ່ປຸ່ນໄດ້ຢ່າງດີ. ຕາມຄວາມຄິດເຫັນຂອງພວກເຮົາ ອັນນັ້ນ ເປັນການເຈລະຈາກັນທີ່ມີຜົນດີ; ພວກເຮົາໄດ້ພິຈາລະນາ ບັນຫາ ຕ່າງໆກ່ຽວກັບການຕິດຕໍ່ພົວພັນກັນ ນັບລວມທັງບັນຫາ ວ່າດ້ວຍສົນທິສັນຍາສັນຕິພາບລະຫວ່າງ ສ.ສ.ສ.ຂ. ກັບຍີ່ປຸ່ນ.ດັ່ງທີ່ທ່ານຮູ້ວ່າ ໃນຖະແຫລງການຮ່ວມໂຊວຽດ-ຍີ່ປຸ່ນ ສະບັບລົງ ວັນທີ ໑໐ ເດືອນຕຸລາ ປີ ໑໙໗໓ ທັງສອງຝ່າຍ ໄດ້ຕົກລົງກັນທີ່ຈະສືບຕໍ່ການເຈລະຈາກັນກ່ຽວກັບການຕົກລົງສົນທິສັນຍາ ສັນ ຕິພາບ. ຖ້າຫາກວ່າຝ່າຍຍີ່ປຸ່ນຈະບໍ່ຍື່ນເງື່ອນໄຂ ທີ່ຝ່າຍ ເຮົາບໍ່ອາດຈະຮັບຮອງໄດ້ແລ້ວ ພວກເຮົາກໍກຽມພ້ອມທີ່ຈະເຮັດໃຫ້ເລື່ອງນີ້ປາກົດເປັນຈິງ. ອັນນັ້ນມັນສາມາດເຮັດໄດ້,ເຮັດໄດ້ຢ່າງໄວ, ຍ້ອນວ່າ ຝ່າຍຍີ່ປຸ່ນ ພວມສະແດງທ່າທີ ແບບຮູ້ສະພາບຕົວຈິງທີ່ເກີດຂຶ້ນພາຍຫລັງສົງຄາມໂລກຄັ້ງທີສອງ.

ດັ່ງທີ່ຮູ້ກັນດີວ່າ ສົນທິສັນຍາສັນຕິພາບ ປະກອບດ້ວຍບັນຫາຕ່າງໆຫລາຍບັນຫາ ນັບລວມທັງບັນຫາວ່າດ້ວຍ ຊາຍແດນ . ເລື່ອງນີ້ເປັນທີ່ຖືກຕ້ອງແກ່ບັນຫາ ວ່າດ້ວຍ ສົນທິສັນຍາ ສັນຕິພາບໂຊວຽດ-ຍີ່ປຸ່ນເຊັ່ນດຽວກັນ. ການເວົ້າວ່າ ໃນການພົວພັນກັນລະຫວ່າງປະເທດທັງສອງຂອງພວກເຮົາ ຍັງມີ"ບັນຫາວ່າດ້ວຍຊາຍແດນ ທີ່ຍັງບໍ່ທັນໄດ້ຮັບການແກ້ໄຂເທື່ອ"ນັ້ນເປັນຄຳເວົ້າບໍ່ຖືກຕ້ອງ.

ພວກເຮົາໄດ້ປະກາດທ່າທີຂອງພວກເຮົາ ໃນການ ເຈລະ

ຈາກັນກັບຜູ້ນຳຍີ່ປຸ່ນຫລາຍຄັ້ງແລ້ວ ແລະເປັນທີ່ຮູ້ກັນຢ່າງດີ.

ພວກເຮົາມີຄວາມເຫັນຢ່າງຖືກຕ້ອງວ່າ ຍີ່ປຸ່ນ ຍັງບໍ່ທັນກຽມພ້ອມທີ່ຈະຕົກລົງສົນທິສັນຍາສັນຕິພາບໄດ້ເທື່ອ. ດ້ວຍເຫດນັ້ນ ພວກເຮົາຈຶ່ງໄດ້ສະເໜີວ່າ ພວກເຮົາຄວນສືບຕໍ່ການເຈລະຈາກັນຕໍ່ໄປ; ໃນຂະນະດຽວກັນນັ້ນ ພວກເຮົາ ຄວນແລກປຽນຄວາມຄິດຄວາມເຫັນກັນ ແລະເຊັນສົນທິສັນຍາ ວ່າດ້ວຍຄວາມເປັນເພື່ອນບ້ານໃກ້ຄຽງ ແລະການຮ່ວມມືກັນ; ສົນທິສັນຍາດັ່ງກ່າວຈະໄດ້ປະກອບດ້ວຍບັນຫາຕ່າງໆທີ່ສູກງອມສຳລັບການຕົກລົງສົນທິສັນຍາແນວນັ້ນ. ຕາມຄວາມຄິດເຫັນຂອງພວກເຮົາ ອັນນັ້ນຈະພາພວກເຮົາຫັນໜ້າໄປສູ່ ການລົບລ້າງເສດເຫລືອຂອງຄວາມບໍ່ໄວ້ເນື້ອເຊື່ອໃຈກັນ ແລະ ໄປສູ່ການເສີມຂະຫຍາຍການຮ່ວມມືກັນທາງດ້ານຕ່າງໆອີກດ້ວຍ.

ພວກເຮົາໄດ້ເວົ້າເຖິງ "ສົນທິສັນຍາວ່າດ້ວຍ ຄວາມເປັນເພື່ອນບ້ານໃກ້ຄຽງ ແລະການຮ່ວມມືກັນ". ຊື່ຂອງມັນ ບໍ່ມີຄວາມໝາຍສຳຄັນ, ອັນສຳຄັນແມ່ນເນື້ອໃນ. ພວກເຮົາກຽມພ້ອມທີ່ຈະພິຈາລະນາຂໍ້ສະເໜີຂອງຝ່າຍຍີ່ປຸ່ນ ທີ່ອາດມີຂື້ນໃນທິດທາງນັ້ນໄດ້. ອັນສຳຄັນກໍຄືວ່າ ສົນທິສັນຍາຂັ້ນລັດ ສອງຝ່າຍແນວນັ້ນ ມັນຮັບໃຊ້ຜົນປະໂຫຍດຂອງການສ້າງ ສາຍສຳພັນກັນທີ່ດີຢ່າງແທ້ຈິງ ເພື່ອເປັນຜົນແກ່ປະຊາຊົນໂຊວຽດແລະປະຊາຊົນຍີ່ປຸ່ນ, ແກ່ສັນຕິພາບ ແລະ ຄວາມປອດໄພໃນພາກພື້ນຕາເວັນອອກໄກ ແລະໃນທົ່ວໂລກອີກດ້ວຍ.

<u>ຖາມ</u>: ທ່ານມີຄວາມຄິດເຫັນແນວໃດກ່ຽວກັບ ສາຍສຳພັນ

ຍີ່ປຸ່ນ-ໂຊວຽດທາງດ້ານເສດຖະກິດ, ເປັນຕົ້ນແມ່ນບັນຫາວ່າ ດ້ວຍການຫາປາແລະການຮ່ວມມືກັນ ໃນການຂຸດຄົ້ນພາກ ຊີບີ ລີ ?

ຕອບ: ຫລາຍເທື່ອແລ້ວທີ່ຂ້າພະເຈົ້າໄດ້ມີໂອກາດ ເວົ້າ ເຖິງອະນາຄົດອັນດີຂອງການຂະຫຍາຍຕົວ ແຫ່ງສາຍສຳພັນ ຍີ່ປຸ່ນ-ໂຊວຽດ, ໂດຍນັບລວມທັງການອີງໃສ່ ການຮ່ວມມືກັນ ອັນມີຜົນຕໍ່ກັນແລະກັນ ໃນການຂຸດຄົ້ນຊັບພະຍາກອນ ທຳມະ ຊາດໃນພາກຕາເວັນອອກໄກ ແລະພາກ ຊີບີລີ.

ໃນໄລຍະຊາວປີ ທີ່ຜ່ານມາ ການ ຄ້າຂາຍ ລະຫວ່າງ ປະເທດທັງສອງຂອງພວກເຮົາ ໄດ້ຮັບການເພີ່ມຂຶ້ນ ຕັ້ງ ໗໐ ເທົ່າ. ໃນປີ ໑໙໗໖ ມັນໄດ້ເຖິງ ໔ ພັນລ້ານຮູບແລ້ວ. ຍີ່ປຸ່ນ ໄດ້ກາຍເປັນປະເທດໜຶ່ງໃນ ມີ ປະເທດທຶນນິຍົມ ປະ ເທດ ໃຫຍ່ກວ່າໝູ່ທາງດ້ານການຄ້າກັບ ສ.ສ.ສ.ຊ.

ມັນອາດຫວັງໄດ້ວ່າ ການຄ້າຈະໄດ້ຮັບການຂະຫຍາຍຕົວຕໍ່ ໄປ, ການ ຄ້າຂາຍກັນ ໃນໄລຍະເວລາ ໕ ປີ ຂ້າງ ໜ້ານີ້ ຈະໄດ້ເຖິງ ໑໐ ພັນລ້ານຮູບ : ເມື່ອມໍ່ໆມານີ້ ທີ່ ໂຕ ກຽວ ເພິ່ນໄດ້ເຊັນຂໍ້ຕົກລົງກ່ຽວກັບການຄ້າ ແລະການຊຳລະ ເງິນເປັນໄລຍະເວລາ ໕ ປີ ເຊິ່ງຈະໄດ້ຮັບໃຊ້ການປະຕິບັດ ເປົ້າໝາຍດັ່ງກ່າວນັ້ນເຊັ່ນດຽວກັນ. ພວກເຮົາຄິດວ່າການປະ ຊຸມຄັ້ງທີ ໗ ຂອງຄະນະກຳມະການຮ່ວມມືໂຊວຽດ-ຍີ່ປຸ່ນທາງ ດ້ານເສດຖະກິດ ອາດຈະໄດ້ປຶກສາບັນຫາຕ່າງໆ ໃນຮູບການ ຕົວຈິງກ່ຽວກັບການເສີມຂະຫຍາຍການຄ້າຂາຍກັນ ແລະການ

ຮ່ວມມືກັນທາງເສດຖະກິດ ທີ່ເກີດຜົນຕໍ່ກັນແລະກັນໄດ້.

ຂ້າພະເຈົ້າ ຍັງຈື່ຈຳ ດ້ວຍຄວາມປິຕິຍິນດີ ເຖິງການ ສົນທະນາແບບທຸລະກິດທີ່ຂ້າພະເຈົ້າ ໄດ້ມີໃນເດືອນສິງຫາປີກາຍ ໃນ ກະລຶມ ກັບຄະນະຜູ້ແທນຂອງສະມາຄົມອົງການ ເສດຖະກິດແຫ່ງຍີ່ປຸ່ນ ໂດຍແມ່ນ ໂຕຊີ ໂດໂກ ເປັນຫົວຫນ້າ. ໃນເວລານັ້ນ ຝ່າຍເຮົາໄດ້ຍື່ນຂໍ້ສະເຫນີບາງຢ່າງທີ່ແນໃສ່ການເສີມຂະຫຍາຍສາຍສຳພັນກັນທາງເສດຖະກິດລະຫວ່າງ ສ.ສ.ສ.ຊ. ກັບຍີ່ປຸ່ນ ເປັນຕົ້ນແມ່ນບັນຫາວ່າດ້ວຍການກຳນົດ ໂຄງການ ການຮ່ວມມືທາງເສດຖະກິດ ເປັນໄລຍະ ໑໐-໑໕ ປີ ໂດຍອີງໃສ່ການເສີມຂະຫຍາຍການໃຊ້ຊັບພະຍາກອນ ທຳມະຊາດໃນພາກຊິບີລີ ແລະພາກຕາເວັນອອກໄກເປັນສ່ວນຫລວງຫລາຍ. ໃນຂະນະດຽວກັນນັ້ນ ພວກເຮົາໄດ້ເວົ້າເຖິງຜົນປະໂຫຍດຂອງການເຮັດຂໍ້ຕົກລົງກັນລະຫວ່າງ ສ.ສ.ສ.ຊ. ກັບຍີ່ປຸ່ນ ກ່ຽວກັບຫລັກການການຮ່ວມມືກັນ ທາງເສດຖະກິດໂດຍນຳເອົາຂໍ້ຕົກລົງກັນໂຊວຽດ-ອັງກິດ, ຝະລັ່ງ, ການາດາແລະປະເທດອື່ນໆທີ່ໄດ້ຜ່ານການທົດສອບມາເປັນແບບຢ່າງ. ສ.ສ.ສ.ຊ. ແລະຍີ່ປຸ່ນບໍ່ສາມາດສ້າງສາຍສຳພັນກັນໂດຍອີງໃສ່ພື້ນຖານແນວນັ້ນແມ່ນບໍ ? ຂ້າພະເຈົ້າເຊື່ອຫມັ້ນວ່າ ໄດ້ຢ່າງດີ.

ຂ້າພະເຈົ້າບໍ່ຢາກເຮັດໃຫ້ຜູ້ອ່ານຫນັງສືພິມຂອງທ່ານ ເຂົ້າໃຈໄດ້ວ່າ ສ.ສ.ສ.ຊ. ບໍ່ມີກຳລັງພຽງພໍ ເພື່ອຂຸດຄົ້ນຊັບພະຍາກອນທຳມະຊາດຂອງພາກຊິບີລີ ແລະພາກຕາເວັນອອກໄກ. ແນ່ນອນ, ປະຫວັດສາດຂອງປະເທດເຮົາໄດ້ພິສູດໃຫ້ເຫັນວ່າ

ພວກເຮົາມີຄວາມອາດສາມາດ ທີ່ຈະແກ້ໄຂບັນຫານີ້ ໂດຍຕົນເອງໄດ້. ສ່ວນການຮ່ວມມືກັນກັບປະເທດອື່ນໆນັ້ນ ພວກເຮົາໃຊ້ມັນເພື່ອປະຕິບັດແຜນການພັດທະນາ ພາກພົນເຫລົ່ານັ້ນໃຫ້ວ່ອງໄວກ່ວາທີ່ຄາດຫມາຍ. ຂ້າພະເຈົ້າບໍ່ຮູ້ວ່າສຽງຕ່າງໆໃນປະເທດຍີ່ປຸ່ນທີ່ຄັດຄ້ານການຮ່ວມມືກັນທາງເສດຖະກິດກັບ ສ. ສ.ສ.ຊ. ຢ່າງກວ້າງຂວາງນັ້ນ ມັນຮັບໃຊ້ຜົນປະໂຫຍດຂອງຍີ່ປຸ່ນ ຫລື ບໍ່ ?

ຂໍເວົ້າບາງຄຳ ກ່ຽວກັບບັນຫາວ່າດ້ວຍການຫາປາ. ດັ່ງທີ່ຮູ້ກັນດີແລ້ວວ່າ ບັນຫານີ້ໄດ້ມີບົດບາດທີ່ສຳຄັນ ໃນການສ້າງສາຍສຳພັນກັນໂຊວຽດ-ຍີ່ປຸ່ນ. ອັນນັ້ນ ເປັນເລື່ອງທຳມະດາຍ້ອນວ່າປະເທດທັງສອງຂອງພວກເຮົາໄດ້ຫາປາໃນຂອບເຂດທາງທະເລດຽວ. ການທີ່ປະເທດຕ່າງໆ ໄດ້ປະກາດການຕັ້ງຫນ້ານ້ຳ ໒໐໐ ໄມນັ້ນ ມັນໄດ້ພາໃຫ້ເກີດສະພາບການ ໃຫມ່ໃນການຫາປາໃນທົ່ວໂລກ ແລະໄດ້ພາໃຫ້ມີຄວາມ ຈຳເປັນຕ້ອງທີ່ຈະເຮັດໃຫ້ການຫາປາຂອງຍີ່ປຸ່ນຢູ່ໃກ້ແຄມມະຫາສະມຸດປາຊີຟິກແຫ່ງ ສ.ສ.ສ.ຊ. ເປັນການຖືກຕ້ອງຕາມມະຕິຂອງຄະນະບໍລິຫານງານຂອງສະພາໂຊວຽດສູງສຸດ ທີ່ວ່າດ້ວຍມາດຕະການຊົ່ວຄາວ ເພື່ອປົກປັກຮັກສາຊັບພະຍາກອນທາງທະເລແລະການກຳນົດການຫາປາ.

ຍ້ອນມາດຕະການແບບຈຳກັດຂອບເຂດການຫາປາໂດຍປະເທດຕ່າງໆ, ການຫາປາຂອງກອງເຮືອຫາປາ ສ.ສ.ສ.ຊ. ພວມໄດ້ຮັບຜົນເສຍຫາຍປະການຫນຶ່ງ; ດ້ວຍເຫດນັ້ນພວກເຮົາ

ຈຶ່ງສົນໃຈໃນການຈັບປາໃນໜ້ານ້ຳໂຊວຽດ ໃນປະລິມານ ທີ່ຈັບໄດ້ ໂດຍຖືກຕ້ອງຕາມຫລັກການວິດທະຍາສາດ.

ໃນຂະນະດຽວກັນນັ້ນ ພວກເຮົາເຂົ້າໃຈວ່າ ການຫາປາມີຄວາມໝາຍສຳຄັນເປັນຕາຍແກ່ຍີ່ປຸ່ນ, ເຂົ້າໃຈວ່າຍີ່ປຸ່ນສົນໃຈໃນການສືບຕໍ່ການຫາປາໃນໜ້ານ້ຳ ທີ່ໃກ້ກັບໂຊວຽດ; ດ້ວຍເຫດນັ້ນ ພວກເຮົາຈຶ່ງໄດ້ສະແດງຄວາມກຽມພ້ອມ ທີ່ຈະເຮັດຂໍ້ຕົກລົງກັນທີ່ເໝາະສົມ. ການເຈລະຈາກັນເຖິງແມ່ນໄດ້ດຳເນີນໄປຢ່າງດົນນານກໍຕາມ ແຕ່ມັນໄດ້ສຳເລັດລົງດ້ວຍ ຂໍ້ຕົກລົງກັນທີ່ໄດ້ຮັບການເຊັນກັນໃນມໍ່ໆມານີ້ .

ສ່ວນການເຈລະຈາກັນເຫລົ່ານັ້ນ ຂ້າພະເຈົ້າຢາກເວົ້າວ່າພວກເຮົາໄດ້ສັງເກດເຫັນວ່າ ໃນປະເທດຍີ່ປຸ່ນ ມີພັກພວກ ທີ່-ໄດ້ຖືກການບີບບັງຄັບຈາກພາຍນອກ - ໄດ້ພະຍາຍາມ ໃຊ້ການເຈລະຈາຄັ້ງນັ້ນ ເພື່ອເປີດບັ້ນຮົບຕ້ານ ສ.ສ.ສ.ຊ.ແລະເພື່ອອ້າງສິດເຖິງດິນແດນໂຊວຽດທີ່ບໍ່ເປັນທຳ. ການກະທຳແນວນັ້ນ ມັນອາດມີແຕ່ກໍ່ໃຫ້ເກີດຄວາມເສຍຫາຍແກ່ສາຍ ສຳພັນກັນໂຊວຽດ-ຍີ່ປຸ່ນ ທັ້ນນັ້ນ. ມັນຮັບໃຊ້ຜົນປະໂຫຍດ ແກ່ພັກພວກທີ່ບໍ່ຢາກເປັນເພື່ອນບ້ານໃກ້ຄຽງ ແລະມິດຕະພາບ ລະຫວ່າງປະຊາຊົນໂຊວຽດກັບປະຊາຊົນຍີ່ປຸ່ນ.

<u>ຖາມ</u>: ການຢ້ຽມຢາມຍີ່ປຸ່ນ ໂດຍແມ່ນທ່ານແລະຜູ້ນຳ ໂຊວຽດຄົນອື່ນໆ ມີຄວາມອາດເປັນໄປໄດ້ ຫລື ບໍ່ ?

<u>ຕອບ</u>: ຂ້າພະເຈົ້າໄດ້ຕ້ອນຮັບຄຳເຊີນ ຂອງລັດຖະບານຍີ່ປຸ່ນທີ່ຈະໄປຢ້ຽມຢາມຍີ່ປຸ່ນຢ່າງທາງການແລ້ວ;ຂ້າພະເຈົ້າຈະ

ສວຍໂອກາດນີ້ ຖ້າຫາກສະຖານະການຈະໄດ້ອຳນວຍ.

ຂໍເວົ້າບາງຄຳໃນຕອນສຸດທ້າຍ. ໃນໄລຍະເວລາມື້ງນີ້ໃນສາຍສຳພັນກັນຂອງພວກເຮົາ ບໍ່ແມ່ນທຸກສິ່ງ ທຸກຢ່າງ ດີຫມົດ ແລະເປັນອັນຫນ້າຕ້ອງການແກ່ຜົນປະໂຫຍດ ສ.ສ.ສ.ຊ.ແລະຍີ່ປຸ່ນ. ຂ້າພະເຈົ້າຢາກເວົ້າວ່າ ໃນມື້ງມານີ້ ພວກເຮົາ ໄດ້ຜ່ານໄລຍະເວລາອັນສັບສົນ ເຊິ່ງໃນນັ້ນ ພວກເຮົາ ຈຳຕ້ອງຕັດສິນໃຈວ່າ ສາຍສຳພັນໂຊວຽດ-ຍີ່ປຸ່ນຈະດຳເນີນຕໍ່ໄປຕາມທິດທາງແຫ່ງຄວາມເປັນເພື່ອນບ້ານໃກ້ຄຽງ ແລະການຮ່ວມມືກັນ ຫລື ຕາມທິດທາງເຮັດໃຫ້ມັນເຄັ່ງຮ້ອນຂຶ້ນ. ຕາມຄວາມຄິດເຫັນຂອງຂ້າພະເຈົ້າວ່າ ທັງສອງຝ່າຍສາມາດເລືອກເຟັ້ນເສັ້ນທາງທີ່ຖືກຕ້ອງໄດ້ທາງດຽວ ຄືເສັ້ນທາງແຫ່ງການ ຂະຫຍາຍການຮ່ວມມືກັນ. ຂໍ້ເທັດຈິງດັ່ງກ່າວ ພວມກໍ່ ໃຫ້ເກີດຄວາມຫວັງທີ່ດີ ແລະໄດ້ສ້າງພື້ນຖານ ແກ່ຄວາມຄິດທີ່ວ່າ ໃນອະນາຄົດສາຍສຳພັນກັນຂອງພວກເຮົາ ຈະໄດ້ຮັບການ ສ້າງຂຶ້ນໂດຍອີງໃສ່ທ່າທີ ທີ່ບໍ່ແມ່ນຄິດເຖິງອະດີດຕະການຫາກແມ່ນຄິດເຖິງອະນາຄົດຕ່າງຫາກ.

ຂ້າພະເຈົ້າຢາກເວົ້າຢາງຈະແຈ້ງວ່າ ພວກເຮົາຢາກສ້າງສາຍສຳພັນກັນຢ່າງບໍລິສຸດໃຈ ໂດຍອີງໃສ່ຄວາມເປັນ ເພື່ອນບ້ານໃກ້ຄຽງ ແລະມີຜົນປະໂຫຍດຕໍ່ກັນແລະກັນ.ສ.ສ.ສ.ຊ. ບໍ່ໄດ້ມີແລະຈະບໍ່ມີຄວາມຄິດແນວອື່ນໆ ຕໍ່ປະເທດຂອງທ່ານ , ປະເທດເພື່ອນບ້ານໃກ້ຄຽງຂອງ ສ.ສ.ສ.ຊ.

ໂດຍໃຊ້ໂອກາດນີ້ ຂໍສົ່ງຄວາມອວຍພອນໃຫ້ບັນດາ ຜູ້ອ່ານ

ຫນັງສືພິມຂອງທ່ານແລະປວງປະຊາຊົນຍີ່ປຸ່ນ ຈົ່ງປະສົບ ແຕ່ຄວາມສຸກກາຍແລະສະບາຍໃຈ.

ເຫລັ້ມທີ ຜີ,

ຫນ້າ ໔໐໗-໔໑໘

ເຖິງຜູ້ທີ່ເຂົ້າຮ່ວມກອງປະຊຸມສາກົນ
"ຜູ້ຍິງ ແລະລັດທິສັງຄົມນິຍົມ"

ເພື່ອນມິດທີ່ຮັກແພງ !

ຂໍສະແດງຄວາມເຄົາລົບນັບຖື ຢ່າງບໍລິສຸດໃຈ ຕໍ່ບັນດາຜູ້ທີ່ເຂົ້າຮ່ວມກອງປະຊຸມສາກົນ "ຜູ້ຍິງແລະລັດທິສັງຄົມນິຍົມ".

ການປະຊຸມຄັ້ງນີ້ ພວມໄດ້ດຳເນີນໄປຢູ່ໃນນະຄອນມົດສະກູ ໃນໄລຍະເວລາຂອງການກະກຽມ ສະຫລອງຄົບຮອບ ໗໐ ປີ ແຫ່ງມະຫາປະຕິວັດ ສັງຄົມນິຍົມ ເດືອນຕຸລາ ເຊິ່ງໄດ້ສົ່ງຜົນສະທ້ອນອັນໃຫຍ່ຫລວງ ທີ່ບໍ່ເຄີຍມີມາໃນປະຫວັດສາດ ຕໍ່ຂະບວນວິວັດການ ແຫ່ງມະນຸດຊາດ.

ການປະຕິວັດເດືອນຕຸລາໄດ້ປົດກວາດທ່າທີທັດສະນະອັນຫຼ້າຫລັງ ກ່ຽວກັບບົດບາດທາງສັງຄົມຂອງຜູ້ຍິງ, ຖານະບົດບາດຂອງຜູ້ຍິງໃນຄອບຄົວ ແລະໃນສັງຄົມ.

໗໐ ປີທີ່ຜ່ານມານີ້ພິສູດໃຫ້ເຫັນເຖິງການປະກອບສ່ວນ ອັນສຳຄັນຂອງຜູ້ຍິງ ເຂົ້າໃນການຍາດເອົາໄຊຊະນະ ແຫ່ງການປະຕິວັດ, ສະແດງໃຫ້ເຫັນເຖິງການເຂົ້າຮ່ວມຂອງຜູ້ຍິງ ໃນການພັດທະນາປະເທດໂຊວຽດ, ເຖິງຄວາມອົດທົນ, ຄວາມ

ກໍາຫານໃນມະຫາສົງຄາມ ປ້ອງກັນປິຕຸພູມ ແລະການປະກອບສ່ວນອັນຍິ່ງໃຫຍ່ ເຂົ້າໃນການສ້າງສັງຄົມ ແບບສັງຄົມນິຍົມທີ່ຈະເລີນກ້າວຫນ້າ.

ຖານະບົດບາດຂອງຜູ້ຍິງ ແຫ່ງ ສ.ສ.ສ.ຊ. ແລະບັນດາປະເທດສັງຄົມນິຍົມ ເປັນຕົວຢ່າງອັນດີງາມ ທີ່ເພີ່ມກໍາລັງໃຈແກ່ຜູ້ຍິງນັບເປັນລ້ານໆຄົນ ຂອງຫນ່ວຍພິພົບຂອງພວກເຮົາ.

ປະເທດຕ່າງໆໄດ້ຮັບຜົນສໍາເລັດ ອັນໃຫຍ່ພໍສົມຄວນ ໃນການຕໍ່ສູ້ຂອງບັນດາກໍາລັງທີ່ກ້າວຫນ້າຂອງທົ່ວໂລກເພື່ອສິດສະເຫມີພາບຂອງຜູ້ຍິງ. ບັນດາຜູ້ຍິງພວມກາຍເປັນກໍາລັງ ທີ່ສໍາຄັນ ທີ່ສົ່ງເສີມການກ້າວຂຶ້ນຂອງຄວາມກ້າວຫນ້າ ທາງວັດຖຸ, ສັງຄົມ ແລະຈິດໃຈຂອງມະນຸດຊາດ.ບົດຮຽນຂອງສະຫະພາບໂຊວຽດ ພິສູດໃຫ້ເຫັນວ່າ ການປົດປ່ອຍຜູ້ຍິງ,ການເຂົ້າຮ່ວມຂອງຜູ້ຍິງ ໃນການອອກແຮງງານ ທີ່ເປັນຜົນແກ່ສັງຄົມ ແລະໃນການປົກຄອງລັດທັງຫມົດເຫລົ່ານັ້ນ ເປັນພາກສ່ວນທີ່ສໍາຄັນຂອງຄວາມກ້າວຫນ້າທາງເສດຖະກິດ ແລະສັງຄົມ.

ຜູ້ຍິງ –ຜູ້ເປັນແມ່ອາດຈະເຂົ້າໃຈດີກວ່າຫມູ່ ເຖິງຄວາມຫມາຍສໍາຄັນ ຂອງການປົກປັກຮັກສາສັນຕິພາບ ເຊິ່ງເປັນສິ່ງທີ່ຈໍາເປັນ ແກ່ການຮັບປະກັນອະນາຄົດອັນສວຍງາມ ສໍາຫລັບລູກຫລານຂອງພວກເຮົາ, ແກ່ການກູ້ຊີວິດຂອງລຸ້ນຄົນປະຈຸບັນແລະລຸ້ນຄົນໃນອະນາຄົດ. ດ້ວຍເຫດນັ້ນ ຜູ້ຍິງທັງຫລາຍ ຈິ່ງຕ້ອນຮັບຢ່າງດີອົກດີໃຈ ບັນດາຂໍ້ສະເຫນີຂອງ ສ.ສ.ສ.ຊ., ບັນດາກໍາລັງທີ່ຮັກຫອມສັນຕິພາບເຊິ່ງແນໃສ່ປັບປຸງ ການລົດ

ຜ່ອນຄວາມເຄັ່ງຕຶງທາງສາກົນລົງ, ການສະກັດກັ້ນ ການແຂ່ງຂັນສ້າງອາວຸດ ແລະການຮັບປະກັນສັນຕິພາບອັນຖາວອນ ໃນໜ່ວຍພິພົບຂອງພວກເຮົາ. ບັນດາຜູ້ຍິງກໍໄດ້ປະກອບສ່ວນອັນໃຫຍ່ຫລວງ ເຂົ້າໃນການຕໍ່ສູ້ຂອງປະຊາຊາດຕ່າງໆ ເພື່ອສັນຕິພາບ, ການປົດປ່ອຍຊາດ, ເຂົ້າໃນພາລະກິດແຫ່ງ ຄວາມສາມັກຄີທາງສາກົນ ກັບບັນດາຜູ້ທີ່ຖືກພວກຈັກກະພັດ ຣູກຮານແລະບີບບັງຄັບ ແບບຜະເດັດການ.

ຂໍສະແດງຄວາມອວຍພອນ ໃຫ້ບັນດາຜູ້ທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້ ຈົ່ງເຮັດວຽກຢ່າງໄດ້ຮັບຜົນດີ, ຈົ່ງໄດ້ຮັບຜົນສຳເລັດໃໝ່ ໃນກິດຈະການອັນສູງສົ່ງ ເພື່ອເປັນຜົນແກ່ການເຮັດໃຫ້ອຸດົມຄະຕິ ອັນສະຫງ່າງາມຂອງມະນຸດ, ສັນຕິພາບແລະມິດຕະພາບ ລະຫວ່າງບັນດາປະຊາຊາດ ປາກົດເປັນຈິງຂຶ້ນ.

ລ. ບະເລັດຊະເນັບ

ວັນທີ ໘໙ ເດືອນມິຖຸນາປີ ໑໙໖໗.
(ຫລັ້ມທີ ໖,
ໜ້າ ໔໔໗-໔໔໙

ຄຳປາໄສ ປູ່ວົງກະແລມແລ້ວໃນການຕ້ອນຮັບ

ເອກອັກຄະລັດຖະທູດປະຈຳມົດສະກູ

ວັນທີ ໗ ເດືອນ ກໍລະກົດປີ ໑໙໗໗

ທ່ານ ດຸອາຍເອັນ ທີ່ເຄົາລົບ !

ບັນດາທ່ານ !

ບັນດາສະຫາຍ !

ຂ້າພະເຈົ້າຂໍສະແດງຄວາມອວຍພອນ ມາຍັງ ບັນດາເອກອັກຄະລັດຖະທູດປະຈຳມົດສະກູ. ຂ້າພະເຈົ້າໄດ້ຮູ້ຈັກ ກັນກັບທ່ານບາງຄົນແລ້ວ; ສ່ວນທ່ານຜູ້ອື່ນໆ ພວກເຮົາຈະຕ້ອງຮູ້ຈັກກັນໃນໄລຍະເວລາຕໍ່ໄປ.

ກ່ອນອື່ນໝົດ ຂໍສະແດງຄວາມຂອບອົກຂອບໃຈຢ່າງບໍລິສຸດໃຈຕໍ່ການທີ່ບັນດາທ່ານໄດ້ສົ່ງຄວາມອວຍພອນ ມາຍັງ ຂ້າພະເຈົ້າເນື່ອງໃນໂອກາດທີ່ຂ້າພະເຈົ້າໄດ້ຮັບເລືອກຕັ້ງ ເປັນປະທານຄະນະບໍລິຫານງານຂອງສະພາໂຊວຽດສູງສຸດ. ທ່ານຟອດທີ່ເປັນ ທູດອາວຸ ຂອງນັກການທູດປະຈຳມົດສະກູ ໄດ້ສົ່ງຄວາມອວຍພອນດັ່ງກ່າວ ມາຍັງຂ້າພະເຈົ້າ.

ຂ້າພະເຈົ້າຄິດວ່າ ມັນບໍ່ຈຳເປັນເວົ້າຫລາຍ ກ່ຽວກັບຫລັກການແລະທິດທາງຂອງນະໂຍບາຍຕ່າງປະເທດ ຂອງປະເທດ

ເຮົາ. ພວກທ່ານບໍ່ອາດຈະບໍ່ຮູ້ມັນໄດ້. ຂ້າພະເຈົ້າເຊື່ອ ວ່າພວກທ່ານໄດ້ຄົ້ນຄວ້າມັນ, ຄົ້ນຄ້ວາແຕ່ລະບາດກ້າວ ໃນການສ້າງສາຍສຳພັນກັນກັບປະເທດຕ່າງໆຂອງ ສ.ສ.ສ.ຊ,ເອົາໃຈໃສ່ຕໍ່ການກະທຳຂອງພວກເຮົາໃນເວທີສາກົນທົ່ວໆໄປ.

ພ້ອມກັນນັ້ນ ພວກທ່ານໄດ້ອະທິບາຍນະໂຍບາຍ ຂອງປະເທດຂອງຕົນໃຫ້ພວກເຮົາຮູ້. ອັນນັ້ນເປັນໜ້າທີ່ທີ່ສຳຄັນຂອງນັກການທູດ; ພວກເຮົາຕີລາຄາສູງຕໍ່ໜ້າທີ່ດັ່ງກ່າວນັ້ນ.

ຂ້າພະເຈົ້າຮູ້ຈັກກັບໜ້າທີ່ທົ່ວໄປ ແລະຈຸດປະສົງ ຂອງບັນດາທ່ານ, ດ້ວຍເຫດນັ້ນ ຂ້າພະເຈົ້າຈຶ່ງຢາກກ່າວເນັ້ນວ່າມັນສາມາດວິເຄາະວິໄຈເຫດການຕ່າງໆ, ສາມາດຊອກຫາເສັ້ນທາງທີ່ຈະນຳໄປສູ່ຄວາມຈິງໄດ້ ກໍ່ຕໍ່ເມື່ອມັນມີຄວາມຮູ້ ຢ່າງເລິກເຊິ່ງ ກ່ຽວກັບນະໂຍບາຍຂອງປະເທດທີ່ທ່ານເຮັດວຽກຢູ່, ມີທ່າທີຕີລາຄາຕົວຈິງ ຕໍ່ຂໍ້ສະເໜີ ຫລືການກະທຳ ຂອງ ສ.ສ.ສ.ຊ. ເສຍກ່ອນ.

ນັກການທູດ, ສະຖານທູດເປັນຜູ້ທີ່ຄວນຮູ້ນະໂຍບາຍ ຂອງປະເທດນີ້ຢ່າງດີກວ່າໝູ່. ພວກເຂົາເປັນຜູ້ທີ່ຄວນມີ ຄວາມຮູ້ຕົວຈິງອັນດີ ເພື່ອລົບລ້າງຄວາມບໍ່ເຂົ້າໃຈກັນ,ຄວາມເຂົ້າໃຈຜິດລະຫວ່າງປະເທດຕ່າງໆ. ພວກເຂົາກໍເປັນຜູ້ທີ່ຄວນ ສະແດງຄວາມເອົາໃຈໃສ່ຢູ່ເລື້ອຍໆ ເພື່ອຊ່ວຍໃຫ້ປະເທດຕ່າງໆເຂົ້າໃຈຈຸດປະສົງຂອງປະເທດອື່ນໆຢ່າງຖືກຕ້ອງ, ບໍ່ຖື ຂອງປອມແປງວ່າເປັນຂອງຕົວຈິງ.

ເວົ້າໂດຍຫຍໍ້ໆວ່າ ນັກການທູດມີບົດບາດທີ່ສຳຄັນ ໃນການ

ສ້າງບັນຍະກາດແຫ່ງມິດຕະພາບ ແລະຈິດຕະນາລົມ ອັນດີ, ຄວາມເຂົ້າໃຈກັນອັນໃດໜຶ່ງໃນສາຍສຳພັນກັນລະຫວ່າງ ປະເທດຂອງທ່ານກັບ ສ.ສ.ສ.ຊ. ແນ່ນອນວ່າໃນການປະຕິບັດໜ້າທີ່ຂອງທ່ານພວກທ່ານຈະໄດ້ຮັບຄວາມ ສະໜັບ ສະໜູນຈາກຄະນະບໍລິຫານງານຂອງສະພາໂຊວຽດສູງສຸດແລະລັດຖະບານໂຊວຽດຢູ່ເລື້ອຍໆ .

ສະພາບການທາງສາກົນພວມພັນແປໄປຢ່າງວ່ອງໄວ,ຄວາມອາດສາມາດທີ່ຈະປັບປຸງສັນຕິພາບ ພວມໄດ້ຮັບການເສີມ ຂະຫຍາຍຢູ່ເລື້ອຍໆ. ພ້ອມກັນນັ້ນ ໄພອັນຕະລາຍຕໍ່ສັນຕິພາບ ກໍພວມໄດ້ຮັບການຂະຫຍາຍຕົວເຊັ່ນດຽວກັນ. ໜ້າທີ່ ປະການໜຶ່ງຂອງນະໂຍບາຍ, ວຽກງານທາງການທູດທີ່ຮູ້ສະພາບຕົວຈິງ ກໍຄືການເສີມຂະຫຍາຍຄວາມອາດສາມາດ ແລະການລົດຜ່ອນໄພອັນຕະລາຍດັ່ງກ່າວມາເທິງນັ້ນ. ເອກອັກຄະລັດ ຖະທູດ, ສະຖານທູດ, ຕາມຄວາມຄິດເຫັນຂອງຂ້າພະເຈົ້າ, ມີບົດບາດທີ່ສຳຄັນໃນດ້ານນີ້.

ຂ້າພະເຈົ້າຢາກກ່າວເນັ້ນວ່າ ເອກອັກຄະລັດຖະທູດ ໂຊວຽດຢູ່ຕ່າງປະເທດ ກໍມີໜ້າທີ່ຄືດຽວກັນ;ບໍ່ແມ່ນວ່າພວກເຮົາມອບໜ້າທີ່ແກ່ເອກອັກຄະລັດຖະທູດຂອງຕ່າງປະເທດ ຢ່າງ "ເຂັ້ມແຂງ" ກ່ວາໜ້າທີ່ຂອງເອກອັກຄະລັດຖະທູດ ໂຊວຽດດອກ.

ໂດຍສວຍເອົາໂອກາດນີ້ ຂໍໃຫ້ພວກທ່ານສົ່ງໄປຍັງປະມຸກປະເທດຂອງທ່ານ, ຜູ້ນຳປະເທດຂອງທ່ານວ່າ:

ສ.ສ.ສ.ຊ. ຢາກມີສາຍສຳພັນກັນອັນດີ ກັບທຸກປະເທດ, ທຸກປະຊາຊາດໃນໂລກ;

ສ.ສ.ສ.ຊ. ກຽມພ້ອມທີ່ຈະປະກອບສ່ວນເຂົ້າໃນການແກ້ໄຂບັນຫາສາກົນສຳຄັນທຸກຢ່າງ ;

ສ.ສ.ສ.ຊ. ສົນໃຈຢາກລົບລ້າງບໍ່ເກີດໄພອັນຕະລາຍທາງທະຫານທຸກໆຢ່າງດ້ວຍສັນຕິວິທີ ;

ສ.ສ.ສ.ຊ. ກຽມພ້ອມທີ່ຈະຈຳກັດ, ຫ້າມ (ໂດຍອີງໃສ່ຄວາມຕົກລົງກັນກັບປະເທດອື່ນໆ),ລົບລ້າງອາວຸດທຸກຊະນິດເປັນຕົ້ນແມ່ນອາວຸດສັງຫານຊີວິດ ໃນຂອບເຂດທີ່ກວ້າງຂວາງ.

ສ.ສ.ສ.ຊ. ຈະໄດ້ເປັນຜູ້ເຂົ້າຮ່ວມການເຈລະຈາກັນທຸກປະການ, ການກະທຳທາງສາກົນທີ່ແນໃສ່ປົບປຸງ ການຮ່ວມມືກັນຢ່າງສັນຕິ ແລະຄວາມປອດໄພຂອງບັນດາປະຊາຊາດ.

ພວກເຮົາເຊື່ອໝັ້ນວ່າ ຄວາມຮູ້ຕົວຈິງ ໃນນະໂຍບາຍ , ຄວາມຕັ້ງໃຈທີ່ຈະລຶດຜ່ອນຄວາມເຄັ່ງຕຶງລົງ, ຄວາມຕັ້ງໃຈທີ່ຈະນຳໄປສູ່ຄວາມກ້າວໜ້າ ຈະເອົາຊະນະ;ພວກເຮົາ ເຊື່ອໝັ້ນວ່າ ມະນຸດຊາດຈະກ້າວເຂົ້າສູ່ສະຕະວັດທີ XXI ທີ່ມີສັນຕິພາບອັນຖາວອນທີ່ບໍ່ເຄີຍມີມາກ່ອນ. ພວກເຮົາຈະເຮັດທຸກສິ່ງທຸກຢ່າງ ຕາມຄວາມສາມາດຂອງພວກເຮົາ ເພື່ອເຮັດ ໃຫ້ເລື່ອງນີ້ ປາກົດເປັນຈິງໄດ້.

ເຫຼັ້ມທີ ໕,
ໜ້າ ໔໕໗-໔໕໘

ສານເຖິງຜູ້ເຂົ້າຮ່ວມກອງປະຊຸມສາກົນ "ກົດໝາຍ, ການຮ່ວມມືກັນທາງສາກົນ ແລະການລົດຜ່ອນຄວາມເຄັ່ງຕຶງ"

ເພື່ອນມິດທີ່ເຄົາລົບ !

ກອງປະຊຸມສາກົນຄັ້ງນີ້ ສະແດງໃຫ້ເຫັນເຖິງຄວາມຕັ້ງໃຈຂອງນັກກົດໝາຍທີ່ກ້າວໜ້າຂອງປະເທດຕ່າງໆທີ່ຈະເສີມຂະຫຍາຍການຕໍ່ສູ້ເພື່ອສັນຕິພາບ ແລະຄວາມປອດໄພຂອງບັນດາປະຊາຊາດ, ເພື່ອຄວາມກ້າວໜ້າທາງສັງຄົມ ແລະ ຄວາມເປັນທຳ.

ມັນເປັນທີ່ໜ້າພໍໃຈວ່າ ນັກກົດໝາຍທີ່ມີຊື່ສຽງຂອງ ທົ່ວໂລກໄດ້ຊຸມນຸມກັນໃນກຸງມົດສະກູ ໃນເວລາກ່ອນວັນມະຫາປະຕິວັດສັງຄົມນິຍົມເດືອນຕຸລາຄົບຮອບ ໖໐ ປີ ເຊິ່ງເປັນເຫດການອັນຍິ່ງໃຫຍ່ກວ່າໝູ່ໃນສະຕະວັດທີ XX ເປັນຄັ້ງທຳອິດໃນປະຫວັດສາດ ການປະຕິວັດເດືອນຕຸລາ ໄດ້ເຮັດໃຫ້ກົດໝາຍໄປຮັບໃຊ້ຜົນປະໂຫຍດແຕ່ງພາລະກິດຂອງການສ້າງຕັ້ງ ລະບອບການທາງສັງຄົມທີ່ມີຄວາມເປັນທຳ, ພາລະກິດແຕ່ງການເຮັດໃຫ້ສາຍສຳພັນກັນທາງສາກົນ ມີລັກສະນະປະຊາທິປະໄຕ.

ໃນປະຈຸບັນນີ້ ປະຊາຊົນໂຊວຽດໄດ້ອະພິປາຍຮ່າງ ລັດຖະ

ທຳມະນູນ ສ.ສ.ສ.ຊ. ເຊິ່ງຈະໄດ້ປັບປຸງ ພົນຖານ ທາງ ດ້ານ ກົດໝາຍ ແຫ່ງລະບອບ ທາງການເມືອງ ທີ່ມີປະຊາທິ ປະໄຕຫລາຍກ່ວາໝູ່ ແລະຖານະຂອງພົນລະເມືອງທີ່ມີຄວາມ ສະເໝີພາບກັນທາງສັງຄົມຢ່າງແທ້ຈິງ, ມີສິດທາງດ້ານ ສັງ ຄົມ-ເສດຖະກິດ, ການເມືອງ ແລະສິດສ່ວນບຸກຄົນ ຢ່າງຄົບ ຖ້ວນ. ພ້ອມກັນນັ້ນ ລັດຖະທຳມະນູນສະບັບໃໝ່ ຈະໄດ້ລະບຸ ໄວ້ເຖິງນະໂຍບາຍເລີ່ມທີ່ຮັກຫອມສັນຕິພາບ ສ.ສ.ສ.ຊ.

ພວກເຮົາເຊື່ອໝັ້ນວ່າ ບັນດາຫລັກການ ຂອງສາຍສຳພັນ ກັນລະຫວ່າງປະເທດຕ່າງໆ ທີ່ໄດ້ປະກາດໃນເອກະສານ ອັນ ສຸດທ້າຍຂອງກອງປະຊຸມທົ່ວຢູໂລບ ກ່ຽວກັບຄວາມປອດໄພແລະ ການຮ່ວມມືກັນໃນຢູໂລບ ຕ້ອງກາຍເປັນຫລັກການ ທີ່ ທົ່ວໂລກ ຕ້ອງປະຕິບັດ ແລະຫລັກການທົ່ວໄປຂອງກົດໝາຍສາກົນ.ສິດ ທີ່ສຳຄັນຂອງປະຊາຊົນທີ່ມີຕໍ່ສັນຕິພາບ ແລະ ຄວາມປອດ ໄພ ຕ້ອງເປັນຫລັກການທີ່ຈຳເປັນໃນການສ້າງສາຍສຳພັນກັນ ລະ ຫວ່າງປະເທດຕ່າງໆ.

ພວກເຮົາພວມຕໍ່ສູ້ເພື່ອສິດຂອງມະນຸດ,ສິດທີ່ກົດໝາຍປ້ອງ ກັນແລະຮັບປະກັນ, ສິດທີ່ຮັບປະກັນຖານະອັນສູງສົ່ງ ຂອງມະ ນຸດໃນສັງຄົມ. ສ.ສ.ສ.ຊ. ທີ່ໄດ້ໃຫ້ສັດຕະຍາບັນຕໍ່ບັນດາຂໍ້ ຕົກລົງກັນທາງສາກົນກ່ຽວກັບສິດຂອງມະນຸດ ພວມປະຕິບັດບັນ ດາຂໍ້ຕົກລົງກັນເຫລົ່ານັ້ນ ຢ່າງເຂັ້ມງວດ.

ສັນຕິພາບ, ການຜ່ອນຄາຍຄວາມຕຶງຄຽດ,ການປົດອາວຸດ ບໍ່ພຽງແຕ່ຈະປ້ອງກັນມະນຸດຊາດຈາກແປວໄຟ ຂອງສົງຄາມທໍ່

ນັ້ນ ຫາກຍັງຈະສ້າງເງື່ອນໄຂທີ່ດີແກ່ຄວາມກ້າວໜ້າທາງສັງ ຄົມ, ແກ່ການຮັບປະກັນສິດເສລີພາບຂອງມະນຸດ ໃນດ້ານສັງ ຄົມ, ເສດຖະກິດ, ການເມືອງແລະຄວາມເປັນພົນລະເມືອງ.

ຂໍສະແດງຄວາມອວຍພອນ ໃຫ້ບັນດາຜູ້ເຂົ້າຮ່ວມ ກອງປະ ຊຸມຄັ້ງນີ້. ນັກກົດໝາຍຂອງປະເທດຕ່າງໆ ທີ່ເປັນ ຕົວແທນ ຂອງກົດໝາຍປະຊາທິປະໄຕ ແລະສະມາຄົມສາກົນຂອງ ນັກ ກົດໝາຍປະຊາທິປະໄຕ ຈົ່ງໄດ້ຮັບຜົນສຳເລັດ ໃນການຕໍ່ ສູ້ ເພື່ອສັນຕິພາບ, ເສລີພາບ, ເອກະລາດແຫ່ງຊາດ, ຄວາມ ຕອບສະໜອງຜົນປະໂຫຍດທາງສັງຄົມ ແລະສິດຂອງມະນຸດ.

ລ.ບະເລັດຊະເນັບ

ວັນທີ ໔ ເດືອນກັນຍາປີ ໑໙໗໗
ເຫຼັ້ມທີ ໖,
ໜ້າ ໔໐໐-໔໐໑

ສານເຖິງກອງປະຊຸມສາກົນຜູ້ແທນສະມາຄົມ
ມິດຕະພາບກັບສ.ສ.ສ.ຊ.ແລະປະຊາຊົນໂຊວຽດ

ຂໍສະແດງຄວາມຊົມເຊີຍຢ່າງບໍລິສຸດໃຈ ມາຍັງບັນດາ ຜູ້ເຂົ້າຮ່ວມກອງປະຊຸມສາກົນຂອງຜູ້ແທນສະມາຄົມ ມິດຕະພາບກັບ ສ.ສ.ສ.ຊ. ແລະມະຫາຊົນໂຊວຽດເຊິ່ງໄດ້ໄຂຂຶ້ນເພື່ອເປັນກຽດແກ່ວັນມະຫາປະຕິວັດສັງຄົມນິຍົມເດືອນຕຸລາຄົບຮອບ ຝ໐ ປີ .

ໃນໄລຍະເວລາກ່ອນວັນບຸນອັນຍິ່ງໃຫຍ່,ຊາວໂຊວຽດຍິນດີຕ້ອນຮັບຜູ້ແທນມະຫາຊົນຂອງປະເທດຕ່າງໆ ເປັນແຂກ ທີ່ມີກຽດ, ຕ້ອນຮັບຜູ້ຄົນທີ່ເຂົ້າຮ່ວມຂະບວນການມິດຕະພາບ ກັບ ສ.ສ.ສ.ຊ. ຢ່າງເອົາຈິງເອົາຈັງ.

ຂະບວນການດັ່ງກ່າວທີ່ໄດ້ຮັບການຈັດຕັ້ງຂຶ້ນ ພາຍ ຫລັງການກຳເນີດຂອງລັດເຮົານັ້ນ ໄດ້ມີລັກສະນະມະຫາຊົນໃນປະຈຸບັນນີ້, ໄດ້ກາຍເປັນປັດໃຈທີ່ສຳຄັນ ໃນການຕໍ່ສູ້ ເພື່ອສັນຕິພາບແລະມິດຕະພາບລະຫວ່າງ ບັນດາປະຊາຊາດ. ປວງປະຊາຊົນໂຊວຽດສະແດງຄວາມຂອບໃຈ ແລະຄວາມສະຫນັບສະຫນູນຕໍ່ການເຄື່ອນໄຫວຂອງບັນດາອົງການມິດຕະພາບກັບ ສ.

ສ.ສ.ຊ. ເຊິ່ງແນໃສ່ເຜີຍແຜ່ຄວາມຈິງກ່ຽວກັບ ສ.ສ.ສ.ຊ, ກ່ຽວກັບນະໂຍບາຍພາຍໃນແລະພາຍນອກຂອງປະເທດເຮົາ, ແນໃສ່ເສີມຂະຫຍາຍແລະປັບປຸງການຮ່ວມມືກັນກັບ ປະເທດເຮົາຢ່າງຮອບດ້ານ.

ມະຫາຊົນຂອງປະເທດເຮົາ ຍາມໃດກໍສະໜັບ ສະໜູນການເສີມຂະຫຍາຍການຕິດຕໍ່ພົວພັນກັນຖານເພື່ອນມິດ ກັບປະຊາຊົນຂອງປະເທດຕ່າງໆ. ວຽກງານອັນດຸໝັ່ນ ຂອງບັນດາສະມາຄົມມິດຕະພາບກັບປະຊາຊົນຂອງປະເທດຕ່າງໆແຫ່ງ ສ.ສ.ສ.ຊ. ແລະອົງການຈັດຕັ້ງມະຫາຊົນ ເຊິ່ງແມ່ນຊາວ ໂຊວຽດນັບເປັນລ້ານໆຄົນ ເຂົ້າຮ່ວມນັ້ນ ຕ່າງກໍພິສູດ ໃຫ້ເຫັນເຖິງຄວາມຈິງຂອງເລື່ອງດັ່ງກ່າວມາເທິງນັ້ນ.

ພວກເຮົາຕີລາຄາສູງຕໍ່ກິດຈະການ ຂອງສະມາຄົມ ມິດຕະພາບຂອງ ສ.ສ.ສ.ຊ. ແລະປະເທດຕ່າງໆ ເຊິ່ງສົ່ງເສີມການປັບປຸງຄວາມເຂົ້າໃຈກັນລະຫວ່າງປະເທດຕ່າງໆ, ເຮັດໃຫ້ວັດທະນະທຳມີຄວາມຮັ່ງມີຫລາຍຂຶ້ນແກ່ກັນແລະກັນ, ຊ່ວຍໃຫ້ແກ່ການອົບຮົມມະຫາຊົນອັນກວ້າງຂວາງ ໃຫ້ມີຄວາມຮູ້ສຶກເປັນອ້າຍນ້ອງກັນ ແລະມິດຕະພາບລະຫວ່າງປະຊາຊາດຕ່າງຕ່າງ.

ປະຫວັດສາດຂອງລັດໂຊວຽດ ສ່ອງແສງເຖິງການຕໍ່ສູ້ຢ່າງດຸເດືອດແລະສຸດກຳລັງສຸດປາຍ ເພື່ອສັນຕິພາບ,ສິດສະເໝີພາບທີ່ແທ້ຈິງ, ຄວາມເປັນອ້າຍນ້ອງກັນລະຫວ່າງປະຊາຊາດຕ່າງຕ່າງ, ເພື່ອການສ້າງສັງຄົມທີ່ມີຫລັກການແຫ່ງເສລີພາບທີ່ແທ້

ຈິງ, ປະຊາທິປະໄຕແລະຄວາມມີສິດສະເຫມີພາບກັນທາງສັງ
ຄົມເປັນພົ້ນ. ລັດຖະທຳມະນູນສະບັບໃຫ່ມແຫ່ງ ສ.ສ.ສ.ຊ. ມີຫນ້າທີ່ອັນສຳຄັນ ທີ່ຈະປົບປຸງຫລັກການເຫລົ່ານັ້ນ ແລະເຮັດ
ໃຫ້ຫລັກການເຫລົ່ານັ້ນປາກົດເປັນຈິງ.

ເພິ່ນໄດ້ບັນລຸຜົນສຳເລັດຫລາຍພໍສົມຄວນ ຕາມເສັ້ນທາງ
ແຫ່ງການຮັບປະກັນສັນຕິພາບ ອັນເປັນທຳແລະຖາວອນ. ເຖິງ
ເປັນແນວນັ້ນກໍຕາມ ຊີວິດນັ້ນຂອງຮຽກຮ້ອງພວກເຮົາໃຫ້ກ້າວ
ຂຶ້ນ-ໃຫ້ຕໍ່ສູ້ເພື່ອການສະກັດກັ້ນການແຂ່ງຂັນສ້າງອາວຸດ, ເພື່ອ
ປົບປຸງການລົດຜ່ອນຄວາມເຄັ່ງຕຶງທາງສາກົນ, ເພື່ອເສີມຂະ
ຫຍາຍການຮ່ວມມືກັນລະຫວ່າງປະເທດຕ່າງໆ, ເພື່ອຂັດຂວາງ
ທິດທາງອັນເປັນອັນຕະລາຍຂອງກຳລັງປະຕິການທີ່ຢາກອ່ວາຍ
ຫນ້າໄປສູ່ໄລຍະເວລາແຫ່ງ "ສົງຄາມເຢັນ".

ຂ້າພະເຈົ້າສະແດງຄວາມເຊື່ອຫມັ້ນວ່າ ບັນດາທ່ານຈະໄດ້
ປະກອບສ່ວນອັນສົມກຽດເຂົ້າໃນການແກ້ໄຂບັນດາບັນຫາ ອັນ
ຮີບດ່ວນຂອງຍຸກສະໄຫມນີ້.

ຂໍສະແດງຄວາມອວຍພອນໃຫ້ບັນດາທ່ານ ຈົ່ງໄດ້ຮັບຜົນສຳ
ເລັດອັນໃຫ່ຍຫລວງໃນກິດຈະການອັນສູງສົ່ງຂອງທ່ານ ເພື່ອ
ເປັນຜົນປະໂຫຍດແກ່ສັນຕິພາບ ແລະຄວາມກ້າວຫນ້າ.

ລ.ບະເລັດຊະເນັບ

ວັນທີ ໔໑ ເດືອນກັນຍາປີ ໑໙໑໑
ເຫລັ້ມທີ ໗,
ຫນ້າ ໕໐໘-໕໐໙

ຄໍາປາໄສໃນວັງກະແລມແລັງໃນການຕ້ອນຮັບ
ບັນດາຫົວໜ້າສະຖານທູດປະຈໍາ ມົດສະກູ
ວັນທີ ໓ ເດືອນພະຈິກປີ ໑໙໗໗

ບັນດາທ່ານທີ່ເຄົາລົບ !

ບັນດາສະຫາຍ !

ໃນປີນີ້ພວກເຮົາພົບປະກັນ ເປັນຄັ້ງທີ່ສອງແລ້ວ. ຂໍສະແດງຄວາມອວຍພອນມາຍັງບັນດາທ່ານເອກອັກຄະລັດຖະທູດປະຈໍາມົດສະກູ.

ຂໍສະແດງຄວາມຂອບໃຈຫລາຍຕໍ່ຄໍາອວຍພອນ ອັນອົບອຸ່ນເຊິ່ງແມ່ນທ່ານຟອດ, ເອກອັກຄະລັດຖະທູດການາດາ ປະຈໍາມົດສະກູ ແລະດູອັນເອັນຂອງບັນດານັກການທູດໄດ້ເວົ້າເນື່ອງໃນໂອກາດວັນມະຫາປະຕິວັດສັງຄົມນິຍົມ ເດືອນຕຸລາຄົບຮອບ ໖໐ ປີ.

ບັນດາທ່ານອາດໄດ້ເຂົ້າຮ່ວມໃນກອງປະຊຸມ ອັນຄຶກຄື້ນທີ່ວັງກະແລມແລັງໃນມື້ນີ້ແລະມື້ວານນີ້ແລ້ວ. ໃນກອງປະຊຸມດັ່ງກ່າວ ເພິ່ນໄດ້ເວົ້າກ່ຽວກັບຜົນງານ ຂອງການຕໍ່ສູ້ ແລະການອອກແຮງງານຂອງຊາວໂຊວຽດ ໃນໄລຍະເວລາ ໖໐ ປີ ທີ່ຜ່ານມານີ້, ກ່ຽວກັບວຽກການປະຈຸບັນນີ້ ແລະ ແຜນການສໍາລັບ ໄລຍະອະນາຄົດ. ບັນດາທ່ານ ໄດ້ສັງເກດເຫັນແລ້ວວ່າ ບັນດາປະເທດສັງຄົມນິຍົມອ້າຍນ້ອງ, ບັນດາປະເທດໜຸ່ມນ້ອຍ

ທີ່ໄດ້ເອກະລາດ, ບັນດາຄົນຜູ້ທີ່ຕໍ່ສູ້ເພື່ອສັນຕິພາບ, ເສລີພາບ ແລະຄວາມກ້າວໜ້າ ພວກເຂົາໄດ້ພາກັນຕີລາຄາສູງຕໍ່ນະໂຍບາຍຂອງພວກເຮົາ.

ຕໍ່ໜ້າບັນດາທ່ານ ຂ້າພະເຈົ້າຢາກກ່າວເນັ້ນເຖິງການ ທີ່ນະໂຍບາຍຂອງພວກເຮົາໃນປະຈຸບັນນີ້ ສືບຕໍ່ມູນເຊື້ອຂອງນະໂຍບາຍຂອງເລນິນ ເຊິ່ງໄດ້ເປັນແລະພວມເປັນ ນະໂຍບາຍແຫ່ງສັນຕິພາບແລະການຢູ່ຮ່ວມກັນໂດຍສັນຕິ, ນະໂຍບາຍແຫ່ງມິດຕະພາບລະຫວ່າງບັນດາປະຊາຊາດ ແລະ ຄວາມສາມັກຄີທາງສາກົນ.

ພວກເຮົາເຊື່ອວ່າ ສາຍສຳພັນກັນ ຂອງພວກເຮົາ ກັບປະເທດຕ່າງໆ ບໍ່ວ່າເປັນປະເທດນ້ອຍ, ກາງ ຫລືໃຫຍ່ ກໍ່ຕາມ ອາດເປັນແລະຕ້ອງເປັນສາຍສຳພັນກັນແຫ່ງ ການຮ່ວມມື ກັນຢ່າງມີຜົນຕໍ່ກັນແລະກັນ, ການອອກແຮງຮ່ວມກັນເພື່ອເປັນຜົນປະໂຫຍດແກ່ສັນຕິພາບ, ການລຶດຜ່ອນຄວາມເຄັ່ງຕຶງ ແລະການປົດອາວຸດ. ອັນນັ້ນເປັນຄວາມຈິງໃນກໍລະນີ ສ່ວນຫລວງຫລາຍ. ພວກເຮົາຢາກຫວັງວ່າ ສາຍສຳພັນກັນອັນດີກັບ ບັນດາປະເທດຂອງບັນດາທ່ານຈະໄດ້ຮັບການຂະຫຍາຍຕົວຕໍ່ໄປ.

ຂ້າພະເຈົ້າຢາກກ່າວເນັ້ນອີກຄັ້ງໜຶ່ງວ່າ ສັນຕິພາບ, ອະນາຄົດອັນຸສັນຕິຂອງບັນດາປະຊາຊາດ, ຄວາມກ້າວໜ້າ, ທັງໝົດເຫລົ່ານັ້ນ ເປັນເສັ້ນທາງເຊິ່ງ ສ.ສ.ສ.ຊ. ໄດ້ເດີນ ແລະຈະໄດ້ເດີນໄປຢ່າງ ສຸດກົກສຸດປາຍ.

ເຫລັ້ມທີ ໕, ໜ້າ ໕໐໗–໕໐໘

ຄຳປາໄສໃນວັງກະແລມແລັງໃນ
ພິທີມອບຫລຽນໄຊຄຳ ທີ່ໃສ່ຊື່ກາກມາກ
ວັນທີ ໑໖ ເດືອນພະຈິກປີ໑໙໘໓

ບັນດາສະຫາຍທີ່ຮັກແພງ !

ຂໍສະແດງຄວາມຂອບອົກຂອບໃຈອັນເລິກເຊິງມາຍັງສະພາບັນດິດ ວິທະຍາສາດ ສ.ສ.ສ.ຊ. ທີ່ໄດ້ມອບຫລຽນໄຊຄຳທີ່ໃສ່ຊື່ ກາກມາກ ໃຫ້ແກ່ຂ້າພະເຈົ້າ.

ຂ້າພະເຈົ້າຮູ້ສຶກທະນົງໃຈ ຍ້ອນວ່າຫລຽນໄຊນີ້ ໃສ່ຊື່ຂອງນັກຄິດປະດິດຜູ້ຫຍິ່ງໃຫຍ່, ຜູ້ທີ່ໄດ້ອຸທິດຄວາມປິຊາສາມາດ - ຂອງຕົນແກ່ການຕໍ່ສູ້ ເພື່ອປົດປ່ອຍຊາວຜູ້ອອກແຮງງານ, ເພື່ອເສລີພາບ ແລະຄວາມສຸກຂອງຊາວຜູ້ອອກແຮງງານ.

ເປັນໄລຍະເວລາ ໑໐໐ ກ່ວາປີແລ້ວ ທີ່ຄຳສັ່ງສອນອັນມີຊີວິດຊີວາ ຂອງກາກມາກ ເປັນບໍ່ເກີດກຳລັງແຮງ ແລະຄວາມເຂັ້ມແຂງ ຂອງຊົນຊັ້ນກຳມະກອນ ແລະຊາວຜູ້ອອກແຮງງານໃນການຕໍ່ສູ້ຕ້ານພວກຂູດຮີດ, ໃນການຕໍ່ສູ້ເພື່ອປົດປ່ອຍ ທາງສັງຄົມ ແລະການປົດປ່ອຍຊາດ.

໖໐ ປີຜ່ານໄປ ພາຍຫລັງທີ່ຄຳສັ່ງສອນຂອງມາກ ໄດ້ຮັບການເສີມຂະຫຍາຍຕົວ ດ້ວຍຄວາມປິຊາສາມາດ ແລະນ້ຳໃຈ

ປະຕິວັດຂອງເລນິນແລະໄດ້ຍາດເອົາຄວາມນິຍົມຊົມເຊີຍຂອງຜູ້ຄົນນັບເປັນລ້ານໆຄົນ ໄດ້ພາປະເທດເຮົາຍາດເອົາ ໄຊຊະນະ ໃນມະຫາປະຕິວັດ ສັງຄົມນິຍົມ ເດືອນຕຸລາເຊິ່ງໄດ້ກາຍເປັນຂັ້ນຕົ້ນ ຂອງການສ້າງໂລກໃໝ່ ໃນໜ່ວຍພິພົບ ຂອງພວກເຮົາ ຄື ໂລກສັງຄົມນິຍົມ.

ໃນປະຈຸບັນນີ້, ໃນເງື່ອນໄຂແຫ່ງສັງຄົມ ແບບສັງຄົມນິຍົມທີ່ຈະເລີນກ້າວໜ້າ ພວກເຮົາໄດ້ຮັບກຽດອັນສູງທີ່ຈະສືບຕໍ່ພາລະກິດ ແຫ່ງບັນດາຜູ້ທີ່ສ້າງລັດທິສັງຄົມນິຍົມ ວິທະຍາສາດ,ທີ່ຈະເດີນຕາມເສັ້ນທາງ ແຫ່ງການສ້າງລະບອບກອມມູນິດ.

ຊາວໂຊວຽດທີ່ພວມສ້າງສັງຄົມທີ່ ມີຄວາມເປັນທຳ ແລະມະນຸດສະທຳ ທີ່ບໍ່ເຄີຍມີໃນປະຫວັດສາດຂອງໂລກນັ້ນ ພວກເຮົາມີສິດທີ່ຈະຖືຕົນເອງ ວ່າເປັນຜູ້ສືບທອດແລະຜູ້ສືບຕໍ່ພາລະກິດອັນຍິ່ງໃຫຍ່ ຂອງ ມາກ, ອັງແກນ, ເລນິນ. ດ້ວຍເຫດນັ້ນ ວຽກງານຂອງພວກເຮົາ ບໍ່ພຽງແຕ່ມີຄວາມໝາຍສຳຄັນທາງຊາດທີ່ນັ້ນ ຫາກຍັງມີຄວາມໝາຍທາງສາກົນອີກດ້ວຍ.

ການສະເຫລີມສະຫລອງ ວັນປະຕິວັດເດືອນຕຸລາ ຄົບຮອບ ໖໐ ປີ ໄດ້ພິສູດໃຫ້ເຫັນເຖິງຄວາມຈິງ ຂອງເລື່ອງນີ້ແລ້ວ . ຄະນະຜູ້ແທນຂອງເພື່ອນມິດ, ເພື່ອນຮ່ວມຄິດ,ອ້າຍນ້ອງທາງຈິນຊຸ້ນ, ສະຫາຍໃນການຕໍ່ສູ້ ເພື່ອເສລີພາບ ແລະສັນຕິພາບອັນຖາວອນ ຂອງປະເທດຕ່າງໆ ໑໐໔ ປະເທດຂອງໂລກໄດ້ມາພົດສະກູ ເພື່ອເຂົ້າຮ່ວມໃນການສະເຫລີມສະຫລອງຄັ້ງນີ້. ຊາວຜູ້ອອກແຮງງານ ຂອງປະເທດເກືອບທັງໝົດຂອງໂລກກໍ

ໄດ້ສະເຫລີມສະຫລອງວັນບຸນດັ່ງກ່າວ ເຊັ່ນດຽວກັນ.

ອັນນັ້ນເປັນກຽດອັນສູງທີ່ມອບຫນ້າທີ່ ອັນສູດທີ່ໃຫຍ່ຫລວງແກ່ພວກເຮົາ, ພະນັກງານຊຸນນຳຂອງພັກແລະລັດ, ນັກວິທະຍາສາດ, ບັນດາຊາວຜູ້ອອກແຮງງານ ແຫ່ງປະເທດໂຊວຽດ.

ພວກເຮົາພວມເຫັນອະນາຄົດອັນສະຫງ່າງາມ, ມີເປົ້າຫມາຍອັນຈະແຈ້ງ; ພວກເຮົາຮູ້ຈັກເສັ້ນທາງ ທີ່ຈະນຳໄປສູ່ເປົ້າຫມາຍເຫລົ່ານັ້ນ. ເພື່ອກ້າວຂຶ້ນຕາມເສັ້ນທາງດັ່ງກ່າວ-ນັ້ນ ມັນຕ້ອງອອກແຮງງານ ຢ່າງດຸຫມັ່ນພາກພຽນ, ອອກແຮງງານຢ່າງມີຫົວຄິດປະດິດສ້າງ; ມັນກໍຕ້ອງມີການຈັດຕັ້ງອັນດີ, ຄວາມສາມັກຄີກັນລະຫວ່າງພັກກັບປະຊາຊົນເຊິ່ງແມ່ນແນວຄິດມາກ-ເລນິນແບບຄິດປະດິດສ້າງພວມປັບປຸງໃຫ້ຫມັ້ນຄົງຍິ່ງຂຶ້ນ.

ທ່ານເລນິນໄດ້ເວົ້າວ່າ "ຄຳສັ່ງສອນຂອງມາກມີຄວາມເຂັ້ມແຂງອັນປະເສີດເລີດລ້ຳຍ້ອນວ່າ ມັນເປັນຖືກຕ້ອງ" .ແລະໄດ້ກ່າວເນັ້ນຫລາຍຄັ້ງວ່າ "ລັດທິມາກບໍ່ແມ່ນລັດທິອັນຕາຍ ຕົວ, ຫາກແມ່ນລັດທິທີ່ມີຊີວິດຊີວາແລະຂະຫຍາຍຕົວຢ່າງມີຫົວຄິດປະດິດສ້າງ, ເປັນລັດທິທີ່ນຳເອົາກຳລັງແຮງມາຈາກຊີວິດມັນເອງ, ຈາກບົດຮຽນຕົວຈິງທາງສັງຄົມ" .

ຂໍໃຫ້ນັກວິທະຍາສາດຂອງພວກເຮົາ ບໍ່ວ່າເຮັດວຽກ ຢູ່ໃນບ່ອນໃດ ຈຳຕ້ອງຈື່ຈຳຄຳສັ່ງສອນຂອງເລນິນ ແລະ ປະຕິບັດມັນ. ອັນນັ້ນຈະໄດ້ເປັນຫລັກປະກັນທີ່ດີ ແກ່ຜົນສຳເລັດ ອັນໃຫຍ່ຫລວງ ທີ່ບັນດານັກວິທະຍາສາດໂຊວຽດໄດ້ຮັບ ໃນການເຄື່ອນໄຫວຂອງພວກເຂົາ ເຊິ່ງນັບມື້ນັບມີຄວາມຫມາຍສຳຄັນ

ຫລາຍຂັ້ນສຳຫລັບຊີວິດຂອງປວງປະຊາຊົນແລະການພັດທະນາ
ສັງຄົມຂອງພວກເຮົາ.

ອີກເທື່ອໜຶ່ງ ຂໍສະແດງຄວາມຂອບອົກຂອບໃຈຢ່າງຈິງໃຈ ຕໍ່ການມອບລາງວັນອັນສູງສົ່ງ ໃຫ້ແກ່ຂ້າພະເຈົ້າ. ຂ້າພະເຈົ້າ ຖືອັນນັ້ນວ່າ ເປັນການຕີລາຄາສູງ ຕໍ່ບົດບາດອັນດີເລີດ ຂອງ ມັນສະໝອງລວມຄະນະຂອງພັກເຮົາ, ສູນກາງພັກຂອງ ເລ ນິນ ໃນການເສີມຂະຫຍາຍຍຸດທະສາດແຫ່ງການຕໍ່ສູ້ ເພື່ອໄຊ ຊະນະຂອງພາລະກິດ ແຫ່ງລັດທິກອມມູນິດ (ຕົບມື ຢ່າງຍືດ ຍາວ).

ເຫລັ້ມທີ ຜ,
ໜ້າ ຜ໑໔-ຜ໑໕

ຕອບຄຳຖາມຂອງນັກຫນັງສືພິມ "ປະລາວະດາ" ວັນທີ ໒໔ ເດືອນທັນວາປີ ໑໙໗໗

ຖາມ: ໃນທ້າຍປີ ໑໙໗໗, ຕາມຄວາມຄິດເຫັນຂອງທ່ານ, ສະພາບການທາງສາກົນ ມີລັກສະນະເປັນແນວໃດ, ຖານະທາງສາກົນຂອງປະເທດເຮົາ ແລະການອອກແຮງ ເພື່ອເປັນຜົນປະໂຫຍດແກ່ສັນຕິພາບ ແລະການລົດຜ່ອນ ຄວາມເຄັງ-ຕິງເປັນແນວໃດ ?

ຕອບ: ເມື່ອມໍ່ໆມານີ້ ໃນເວລາທີ່ປະເທດເຮົາໄດ້ສະເຫຼີມສະຫລອງ ວັນບຸນອັນຍິ່ງໃຫຍ່ນັ້ນ ຂ້າພະເຈົ້າໄດ້ສະແດງ - ຄວາມຄິດເຫັນ ຢ່າງລະອຽດ ກ່ຽວກັບດ້ານຕ່າງໆຂອງຖານະທາງສາກົນ ຂອງ ສ.ສ.ສ.ຊ. ແລ້ວ. ດ້ວຍເຫດນັ້ນຂ້າພະເຈົ້າ ຈະເວົ້າລ້ວນແຕ່ກ່ຽວກັບບາງບັນຫາທໍ່ນັ້ນ.

ກ່ອນອື່ນຫມົດ, ການສະເຫລີມສະຫລອງວັນມະຫາປະຕິວັດສັງຄົມນິຍົມ ເດືອນຕຸລາ, ການຮັບຮອງລັດຖະທຳມະນູນ ສະບັບໃຫມ່ ແຫ່ງ ສ.ສ.ສ.ຊ. ໄດ້ກາຍເປັນການສະແດງ ໃຫ້ເຫັນເຖິງຖານະອັນມີກຽດ ແຫ່ງ ສ.ສ.ສ.ຊ. ໃນເວທີສາກົນ ແລະການຂະຫຍາຍອິດທິພົນ ຂອງ ສ.ສ.ສ.ຊ. ຕໍ່ຂະບວນວິ

ວັດແຫ່ງເຫດການໃນທົ່ວໂລກ. ທົ່ວໂລກໄດ້ມີຂໍ້ພິສູດໃຫ້ເຫັນວ່າ ໃນເວທີສາກົນ ລັດຂອງເດືອນຕຸລາ ໄດ້ດຳເນີນໄປ ຢ່າງສູດກົກສູດປາຍ ແລະມີຜົນດີໃນການປະຕິບັດນະໂຍບາຍ ແຫ່ງສັນຕິພາບແລະມິດຕະພາບ ລະຫວ່າງບັນດາປະຊາຊາດ, ນະໂຍບາຍອັນເປັນຊອບທຳ, ນະໂຍບາຍເຊິ່ງແມ່ນປະເທດສັງຄົມນິຍົມ, ບ້ານເກີດເມືອງນອນຂອງທ່ານເລນິນຕ້ອງດຳເນີນໄປ.

ຂໍ້ສະເໜີໃໝ່ໃນເວທີສາກົນເຊິ່ງພວກເຮົາໄດ້ຢືນສະເໜີ ໃນເວລາການສະເຫລີມສະຫລອງວັນບູນນັ້ນ ໄດ້ຮັບການຕ້ອນຮັບເປັນຢ່າງດີ ແລະກ້ວາງຂວາງ. ຂໍ້ສະເໜີບາງຢ່າງ ພວມໄດ້ຮັບການພິຈາລະນາ ໃນກອງປະຊຸມຕ່າງໆ ນັບລວມທັງໃນ ອ.ສ.ປ. ແລະກອງປະຊຸມທີ່ ເບັນກາດ.

ໃນເວລາຕໍ່ໄປນັ້ນ ສ.ສ.ສ.ຊ. ຈະໄດ້ອອກແຮງ ໂດຍມີຈຸດປະສົງ ທີ່ຈະລົບລ້າງໄພອັນຕະລາຍ ແຫ່ງສົງຄາມ ປະລະມະນູ, ເຮັດໃຫ້ການປ່ຽນແປງໄປໃນທາງທີ່ດີ ໃນສາຍສຳພັນກັນທາງສາກົນ ໃຫ້ມີລັກສະນະທີ່ໝັ້ນຄົງ, ຈະເຮັດໃຫ້ຄວາມເຄັ່ງຕຶງລົດຜ່ອນລົງ ເລິກເຊີງຍິ່ງຂຶ້ນ,ຈະເສີມຂະຫຍາຍການຮ່ວມມືກັນ ລະຫວ່າງບັນດາປະເທດ.

ໃນໂອກາດນີ້ ຂ້າພະເຈົ້າຢາກສະແດງຄວາມຫວັງວ່າການຢ້ຽມຢາມສາທາລະນະລັດ ສະຫະພັນເຢຍລະມັນ ຂອງຂ້າພະເຈົ້າໃນມໍ່ໆນີ້, ການເຈລະຈາກັນກັບປະທານາທິບໍດີຊະມິດຈະໄດ້ຮັບໃຊ້ຜົນປະໂຫຍດ ບໍ່ພຽງແຕ່ການເສີມຂະຫຍາຍ ການຮ່ວມມືກັນ ໂຊວຽດ-ເຢຍລະມັນຕາເວັນຕົກ ໃນດ້ານຕ່າງໆທໍ່

ນັ້ນ ຫາກຍັງເປັນຜົນປະໂຫຍດຂອງການຜ່ອນຄາຍ ແລະສັນຕິພາບ ໃນຢູລົບອີກດ້ວຍ.

ໃນມໍ່ໆມານີ້ ສະມັດຊາໃຫຍ່ ອ.ສ.ປ. ໄດ້ຮັບຜ່ານເອກະສານທີ່ສຳຄັນແລະຮີບດ່ວນ ຄື ຄຳຖະແຫລງການ ວ່າດ້ວຍຄວາມຈຳເປັນ ທີ່ຈະຕ້ອງປັບປຸງການລຶດຜ່ອນຄວາມເຄັ່ງ ຕຶງທາງສາກົນລົງ. ບັນດາປະເທດພາຄີ ອ.ສ.ປ.ເວັ້ນເສຍແຕ່ປະເທດຈີນ ແລະອັນບານີ ໄດ້ຮັບຮອງເອກະສານດັ່ງກ່າວນັ້ນເຊິ່ງສະແດງໃຫ້ເຫັນເຖິງ ຄວາມຄິດເຫັນຂອງທົ່ວໂລກ, ສະແດງໃຫ້ເຫັນເຖິງຄວາມຕັ້ງໃຈ ຂອງບັນດາປະຊາຊາດທີ່ຢາກຈະໃຫ້ໄດ້ມີການລຶດຜ່ອນຄວາມເຄັ່ງຕຶງ ແລະສັນຕິພາບ.ນອກຈາກນັ້ນ ສ.ສ.ສ.ຊ. ໄດ້ຢື່ນຂໍ້ສະເໜີຈຳນວນຫລາຍອີກ ທີ່ເພິ່ນສາມາດປະຕິບັດ ໄດ້ນັບລວມທັງໃນດ້ານການປົດອາວຸດ. ອັນນັ້ນພິສູດໃຫ້ເຫັນວ່າ ມະໂຍບາຍຕ່າງປະເທດຂອງພັກກອມມູນິດ ແລະລັດໂຊວຽດ ພວມເຕີບໃຫຍ່ຂະຫຍາຍຕົວ ແລະໄດ້ຮັບຜົນສຳເລັດອັນດີງາມ.

ຖາມ: ທ່ານມີຄວາມຄິດເຫັນແນວໃດ ກ່ຽວກັບ ບັນຫາວ່າດ້ວຍການປົດອາວຸດ ?

ຕອບ: ສູນກາງພັກ, ຄະນະບໍລິຫານງານສູນກາງພັກຍາມໃດກໍເອົາໃຈໃສ່ຫລາຍ ຕໍ່ບັນຫາວ່າດ້ວຍການປົດອາວຸດ ເຊິ່ງເປັນພາກສ່ວນທີ່ສຳຄັນ ຂອງນະໂຍບາຍຕ່າງປະເທດ. ອັນທີ່ເຂົ້າໃຈໄດ້ວ່າ ໃນດ້ານນີ້ ການເຈລະຈາກັນໂຊວຽດ-ອາເມລິກາ ກ່ຽວກັບການຈຳກັດອາວຸດ ຍຸດທະສາດຊະນິດບຸກລຸກ ມີ

ຄວາມໝາຍສຳຄັນ. ພວກເຮົາກຽມພ້ອມ ທີ່ຈະດຳເນີນການເຈລະຈາກັນ ຈົນໄປເຖິງຜົນສຳເລັດຂັ້ນສຸດທ້າຍ.ຕາມຄວາມຄິດເຫັນຂອງພວກເຮົາ, ພວກເຮົາມີຄວາມສາມາດພໍສົມຄວນເພື່ອເຮັດແນວນັ້ນໄດ້. ຍິ່ງໄປກ່ວານັ້ນ ຂ້າພະເຈົ້າຢາກເວົ້າ-ວ່າພວກເຮົາມີຄວາມສາມາດແທ້ໆ.ໃນເມື່ອວິໄຈຄຳຖະແຫລງການ ຂອງຝ່າຍອາເມລິກາ ກໍສາມາດເຫັນໄດ້ວ່າຝ່າຍອາເມລິກາ ມີຄວາມຄິດເຫັນ ໃນແງ່ທີ່ດີເຊັ່ນດຽວກັນ. ແງ່ທີ່ດີນັ້ນຕ້ອງໄດ້ຮັບການປັບປຸງ ດ້ວຍການກະທຳຕົວຈິງຫັ້ນ. ຂ້າພະເຈົ້າຄິດວ່າ ຂໍ້ຕົກລົງກັນສະບັບໃໝ່ ຈະໄດ້ມີຜົນດີທັງແກ່ ສ.ສ.ສ.ຊ. ແລະອາເມລິກາ ທັງແກ່ທົ່ວໂລກອີກດ້ວຍ.

ໃນການເຈລະຈາ ກ່ຽວກັບບັນຫາວ່າດ້ວຍ ການປິດອາວຸດນັ້ນ ພວກເຮົາພິຈາລະນາບັນຫາຕ່າງໆ ຄື: ບັນຫາວ່າດ້ວຍການຫ້າມການທົດລອງອາວຸດ ປະລະມະນູ ແລະການຫ້າມວິທີການເຄມີ ຂອງການດາເນີນສົງຄາມ ຈົນຮອດບັນຫາວ່າດ້ວຍການປັບປຸງ ການຜ່ອນຄາຍທາງທະຫານໃນຢູລົບ ແລະການຈຳກັດການເຄື່ອນໄຫວທາງທະຫານ ໃນເຂດມະຫາສະມຸດອິນເດຍ. ການລິເລີ່ມໃນການແກ້ໄຂບັນຫາເຫລົ່ານັ້ນ ສ່ວນຫລວງຫລາຍ ແມ່ນຂອງ ສ.ສ.ສ.ຊ. ອັນທີ່ສຳຄັນໃນປະຈຸບັນນັ້ນກໍຄືວ່າ ຕັ້ງແຕ່ການເຈລະຈາກັນ ກ່ຽວກັບການປິດອາວຸດນັ້ນພວກເຮົາຕ້ອງກ້າວຂຶ້ນສູ່ ການກະທຳຕົວຈິງຕາມເສັ້ນທາງດັ່ງກ່າວນັ້ນ. ມີແຕ່ອັນນັ້ນຫັ້ນ ທີ່ຈະຮັບໃຊ້ຄວາມມຸ້ງມາດປາຖະໜາຂອງບັນດາປະຊາຊາດ ທີ່ຕ້ອງການໃຫ້ມີສັນຕິພາບ ທີ່ໝັ້ນຄົງ

ແລະກ່າວປະນາມການກະທຳ ທີ່ແນໃສ່ຂະຫຍາຍການແຂ່ງອັນສ້າງອາວຸດ.

ພວກເຮົາຄວນເວົ້າວ່າ ມັນໄດ້ເລີ່ມປະຕິບັດການກະ ທຳແນວນີ້ແລ້ວ ເຊັ່ນ ກຸ່ມນາໂຕ ພວມເສີມຂະຫຍາຍ ການແຂ່ງຂັນສ້າງອາວຸດ. ອັນນັ້ນເປັນທ່າອຽງ ທີ່ເປັນອັນຕະລາຍ ແກ່ມະນຸດຊາດ, ເປັນອັນຕະລາຍເປັນພິເສດ ເມື່ອສ້າງເຄື່ອງມື-ດຳເນີນສົງຄາມ ທີ່ຮ້າຍແຮງກ່ວາເກົ່າ.

ເຊັ່ນ ລູກລະເບີດ ເນີຕຼົງ. ໃນປະຈຸບັນນີ້ ພວກເຂົາພະຍາຍາມບິບບັງຄັບໂລກ ໃຫ້ສ້າງລູກລະເບີດ ທີ່ໄຮ້ມະນຸດຊະ-ທຳ, ລູກລະເບີດທີ່ເປັນອັນຕະລາຍເປັນພິເສດ ຍ້ອນພວກ-ເຂົາອ້າງວ່າ ມັນເປັນອາວຸດ "ຊະນິດຍຸດທະວິທີ" ແລະ ອາວຸດທີ່ບໍ່ "ເປັນອັນຕະລາຍ". ດ້ວຍຂໍ້ອ້າງເຫລົ່ານັ້ນພວກເຂົາພະຍາຍາມລຶບລ້າງຄວາມແຕກຕ່າງກັນ ທີ່ມີລະຫວ່າງ ອາວຸດທຳມະດາ ກັບອາວຸດປະລະມະນູ, ພະຍາຍາມປິດບັງການຂ້າມສູ່ສົງຄາມປະລະມະນູ ມາຈາກສົງຄາມແບບທຳມະດາ. ອັນນັ້ນເປັນການຫລອກລວງປະຊາຊາດຕ່າງໆ.

ພວກເຂົາສະເຫນີໃຫ້ຕັ້ງລູກລະເບີດເນີຕຼົງ ຢູ່ໃນຢູ ລົບຕາເວັນຕົກ. ພວກທີ່ຢູ່ໄກຈາກພາກພື້ນນີ້ຂອງໂລກນັ້ນ ພວກເຂົາຕັດສິນບັນຫານີ້ ຢ່າງງ່າຍດາຍ. ແຕ່ວ່າ ພວກເຮົາ ຄິດວ່າ ຊາວຢູລົບ ທີ່ຢູ່ໃນ "ເຮືອນຫລັງດຽວ" ອາດມີຄວາມຄິດເຫັນທີ່ຕ່າງກັນ. ພວກເຂົາບໍ່ອາດຈະຍອມຮັບລູກລະເບີດນີ້ ໄວ້ໃນເຮືອນຂອງພວກເຂົາ ທີ່ໄດ້ຫາບແບກອາວຸດ ຈຳນວນ ຫລາຍ

ແລ້ວໄດ້.

ສ.ສ.ສ.ຊ. ຄັດຄ້ານການສ້າງລູກລະເບີດ ເນີຕົງ.ພວກ ເຂົາເຂົ້າໃຈຜູ້ຄົນນັບເປັນລ້ານໆຄົນ ທີ່ອາໄສຢູ່ໃນພາກ ພື້ນ ຕ່າງໆຂອງໂລກເຮົາ ແລະກ່າວປະນາມການສ້າງລູກລະເບີດ ຊະນິດນີ້. ເຖິງເປັນແນວນັ້ນກໍຕາມ ຖ້າຫາກຝ່າຍຕາເວັນຕົກ ສ້າງລູກລະເບີດເນີຕົງ (ພວກເຂົາມີຈຸດປະສົງທີ່ຈະໃຊ້ລູກລະ ເບີດນີ້ ເພື່ອໂຈມຕີພວກເຮົາ ອັນນັ້ນເປັນເລື່ອງທີ່ໃຜໆກໍເຂົ້າ ໃຈໄດ້) ໃນກໍລະນີແນວນີ້ ມັນບໍ່ຕ້ອງສົງໄສເລີຍວ່າ ສ.ສ.-ສ.ຊ. ຈະບໍ່ຢືນຢູ່ໃນທ່າທີເປັນນັກສັງເກດການຊື່ໆ.ພວກເຮົາ ຈະຖືກບີບບັງຄັບ ໃຫ້ຈຳຕ້ອງໂຕ້ຕອບ ຕໍ່ການທ້າທາຍເກາະ-ຜິດຕໍ່ຄວາມປອດໄພ ຂອງປະຊາຊົນໂຊວຽດ,ພັນທະມິດ ແລະ ເພື່ອນມິດຂອງພວກເຮົາ. ສຸດທ້າຍ, ອັນນັ້ນຈະໝາຍເຖິງ-ບາດກ້າວໃໝ່ໃນການແຂ່ງຂັນ ສ້າງອາວຸດທັນສະໄໝ.

ພວກເຮົາບໍ່ຢາກເຮັດແນວນັ້ນ; ພວກເຮົາສະເໜີໃຫ້ຕົກລົງກັນ ກ່ຽວກັບຄວາມປະຕິເສດ ທີ່ຈະສ້າງອາວຸດເນີຕົງເພື່ອ ຂັດຂວາງການເກີດຂຶ້ນຂອງອາວຸດສົງຄາມຊະນິດ ໃນຂອບເຂດ ທີ່ກວ້າງຂວາງ ຊະນິດໃໝ່ໃນໂລກ. ອັນນັ້ນເປັນຄວາມຕ້ອງການ ຢ່າງຈິງໃຈຂອງພວກເຮົາ, ອັນນັ້ນເປັນຂໍ້ສະເໜີຂອງ ພວກເຮົາ ທີ່ມີຕໍ່ຝ່າຍຕາເວັນຕົກ.

<u>ຖາມ</u>: ທ່ານມີຄວາມຄິດເຫັນແນວໃດ ກ່ຽວກັບການ ຂະຫຍາຍຕົວ ຂອງສະພາບການ ໃນພາກພື້ນຕາເວັນອອກກາງ?

<u>ຕອບ</u>: ບັນຫາຕາເວັນອອກກາງ ເປັນບັນຫາອັນຄັ່ງຮ້ອນ.

ໃນໄລຍະເວລາຫລັງໆນີ້ສະພາບການໄດ້ຮັບການປ່ຽນແປງໄປໃນທາງທີ່ບໍ່ດີ ອັນເປັນໜ້າເສຍດາຍ. ການປ່ຽນແປງ ດັ່ງກ່າວໄດ້ເກີດຂຶ້ນໃນເມື່ອສະພາບການພວມ ຜັນແປໄປສູ່ທາງທີ່ດີ, ໄປສູ່ການເປີດກອງປະຊຸມເຊີແນວເຊິ່ງໃນນັ້ນສ.ສ.ສ.ຊ. ແລະອາເມລິກາໃນຖານະເປັນປະທານລວມຂອງກອງປະຊຸມນີ້ໄດ້ເຮັດຫຼາຍສິ່ງຢ່າງຮ່ວມກັນ.ແຕ່ວ່າໃນປະຈຸບັນນີ້ ສະພາບການໄດ້ມີຄວາມເຄັ່ງຄຶງຍິ່ງຂຶ້ນ.ການເປີດກອງປະຊຸມເຊີແນວ, ການແກ້ໄຂບັນຫາຕາເວັນ ອອກກາງຈຶ່ງໄດ້ກາຍເປັນ ວຽກງານທີ່ຫຍຸ້ງຍາກກວ່າໝູ່.

ຜູ້ໃດກໍຮູ້ເຫດການຕ່າງໆ ທີ່ເກີດຂຶ້ນໃນພາກພື້ນນີ້ຂອງໂລກໃນໄລຍະເວລາສຸດທ້າຍນີ້.ຂ້າພະເຈົ້າຢາກກ່າວເນັ້ນວ່າ ສ.ສ.ສ.ຊ. ໄດ້ເປັນແລະພວມເປັນຜູ້ທີ່ສະໜັບສະໜູນການແກ້ໄຂບັນຫານີ້ ຢ່າງຮອບດ້ານ ໂດຍມີບັນດາປະເທດທີ່ກ່ຽວຂ້ອງກັນນັບລວມທັງອົງການປົດປ່ອຍປາເລັດຊະຕິນ ເຂົ້າຮ່ວມນຳ. ການແກ້ໄຂເຊິ່ງຈະປະກອບດ້ວຍການຖອນກອງທະຫານອິດຊະລະເອັນ ອອກຈາກດິນແດນອາລັບ ທີ່ຖືກຍຶດຄອງໃນປີ໑໙໖໗, ການປະຕິບັດສິດອັນເປັນທຳຂອງຊາວອາລັບ ປະເລັດຊະຕິນ-ນັບລວມທັງສິດ ທີ່ຈະຕັດສິນໂຊກຊາຕາຂອງຕົນ,ສ້າງລັດຂອງຕົນຂຶ້ນ, ການຮັບປະກັນສິດຂອງບັນດາປະເທດທີ່ເຂົ້າຮ່ວມໃນກໍລະນີພິພາດ ທີ່ຈະມີການດຳລົງຊີວິດ ແບບເອກະລາດ ແລະແບບມີຄວາມປອດໄພ ຄື ບັນດາປະເທດອາລັບ ທີ່ໃກ້ຄຽງກັບອິດຊະລະເອັນ ແລະລັດອິດຊະລະເອັນນັ້ນເອງ,ການຍຸດຕິສະພາບການ ແບບມີສົງຄາມ ລະຫວ່າງບັນດາປະເທດອາລັບກັບ

ປະເທດອິດຊະລະເອັນ. ສັນຕິພາບຈະມີລັກສະນະທີ່ໝັ້ນຄົງໃນພາກພື້ນນີ້ໄດ້ ກໍຕໍ່ເມື່ອມີການປະຕິບັດຫລັກການແຫ່ງການສ້າງສັນຕິພາບ ໃນພາກພື້ນນັ້ນ.

ພວກເຮົາຄິດວ່າ ເສັ້ນທາງແບບການປະນີປະນອມ ຝ່າຍດຽວຕໍ່ອິດຊະລະເອັນ, ການເຈລະຈາກັນສອງຝ່າຍ ເໝືອນກັບການເຈລະຈາກັນ ຢີຊິບ-ອິດຊະລະເອັນ ບໍ່ອາດຈະພາໄປສູ່ເປົ້າໝາຍໄດ້. ກົງກັນຂ້າມ, ມັນເຮັດໃຫ້ເປົ້າໝາຍຫ່າງໄກ, ແບ່ງແຍກໂລກອາລັບ ຢ່າງເລິກເຊິ່ງ. ອັນນັ້ນເປັນເສັ້ນທາງທີ່ຈະທຳລາຍການແກ້ໄຂບັນຫາຢ່າງແທ້ຈິງ, ກ່ອນອື່ນໝົດແມ່ນ ທີ່ຈະ ທຳລາຍກອງປະຊຸມເຊີແນວທີ່ຍັງບໍ່ທັນໄດ້ໄຂຂຶ້ນ.

ການຍ້ອງຍໍສັນລະເສີນ "ຈຸດທີ່ດີເລີດ" ຂອງອັນທີ່ເອີ້ນວ່າການເຈລາຈາກັນໂດຍກົງ ເຊິ່ງໝາຍເຖິງການເຈລາຈາກັນລະຫວ່າງອິດຊະລະເອັນ ກັບແຕ່ລະປະເທດ ທີ່ຖືກອິດຊະລະເອັນບຸກລຸກນັ້ນ ມັນເປັນຄວາມພະຍາຍາມ ທີ່ຈະທຳລາຍກຳລັງແຮງຂອງຊາວອາລັບ ທີ່ປະກອບດ້ວຍຄວາມສາມັກຄີ ກັນແລະການສະໜັບສະໜູນ ພາລະກິດອັນເປັນທຳ ຂອງພວກເຂົາ ຈາກບັນດາປະເທດເພື່ອນມິດ.

ດ້ວຍເຫດນັ້ນ ສ.ສ.ສ.ຊ. ເປັນຜູ້ທີ່ສະໜັບສະໜູນການໄຂກອງປະຊຸມເຊີແນວ ໃນເງື່ອນໄຂທີ່ຂັດຂວາງການເຮັດໃຫ້ກອງປະຊຸມນີ້ ເປັນສາກບັງໜ້າ ທີ່ປິດບັງການເຈລະຈາ ກັນສອງຝ່າຍ ທີ່ກໍ່ຄວາມເສຍຫາຍ ແກ່ຜົນປະໂຫຍດຂອງຊາວອາລັບ ແລະພາລະກິດແຫ່ງສັນຕິພາບອັນເປັນທຳ ແລະຖາວອນ.

ອັນນັ້ນເປັນທ່າທີທັດສະນະຂອງພວກເຮົາ. ປວງປະຊາຊົນໂຊວຽດ, ບັນດາກຳລັງທີ່ຮັກຫອມສັນຕິພາບໃນທົ່ວໂລກພາກັນສະຫນັບສະຫນູນ ທ່າທີດັ່ງກ່າວນັ້ນ ຢ່າງຄົບຖ້ວນ.

ເຫລັ້ມທີ ໒,
ຫນ້າ ໒໔໘

ສານເຖິງກອງປະຊຸມໃຫຍ່ຄັ້ງທີ X ຂອງ
ສະຫະພັນຊາວຫນຸ່ມ ປະຊາທິປະໄຕທົ່ວໂລກ

ບັນດາເພື່ອນມິດທີ່ຮັກແພງ !

ຂ້າພະເຈົ້າ ຂໍສະແດງຄວາມເຄົາລົບ ຕໍ່ບັນດາຜູ້ເຂົ້າຮ່ວມກອງປະຊຸມໃຫຍ່ ຄັ້ງທີ X ຂອງສະຫະພັນຊາວຫນຸ່ມ ປະຊາທິປະໄຕທົ່ວໂລກ ເຊິ່ງເປັນຕົວແທນຂອງບັນດານັກຮົບ ທີ່ຫນຸ່ມນ້ອຍ ທີ່ຕໍ່ສູ້ເພື່ອອຸດົມຄະຕິອັນສູງສົ່ງ ແຫ່ງສັນຕິພາບແລະການປົດປ່ອຍຊາດ ແລະສັງຄົມ.

ມັນເປັນເລື່ອງທໍາມະດາວ່າ ກອງປະຊຸມຄັ້ງນີ້,ກິດຈະການຂອງ ສ.ຊ.ປ.ລ. ທີ່ເປັນອົງການຈັດຕັ້ງຊາວຫນຸ່ມ ທີ່ໃຫຍ່ກວ່າຫມູ່ ແລະມີຊື່ສຽງໃນທົ່ວໂລກ ພວມເອົາໃຈໃສ່ຕໍ່ ບັນຫາອັນຮີບດ່ວນຕ່າງໆ ຂອງຍຸກສະໄຫມນີ້. ອັນນີ້ນສະແດງ ໃຫ້ເຫັນເຖິງຄວາມສຸກງອມ ຂອງຂະບວນການຊາວຫນຸ່ມ ທີ່ກ້າວຫນ້າ ແລະການເສີມຂະຫຍາຍສາຍສໍາພັນກັນ ລະຫວ່າງ ຂະບວນການນີ້ ກັບຂະບວນການຕໍ່ສູ້ຂອງຊາວຜູ້ອອກແຮງງານ , ມະຫາຊົນອັນກ້ວາງຂວາງ ຕ້ານພວກຈັກກະພັດ.

ຍ້ອນມີນະໂຍບາຍຕ່າງປະເທດ ຢ່າງສູດກົກສູດປາຍ ແລະ

ເອົາຈິງເອົາຈັງຂອງບັນດາປະເທດສັງຄົມນິຍົມ, ຍ້ອນມີການກະທຳ ຢ່າງເດັດດ່ຽວ ຂອງບັນດາກຳລັງທີ່ຮັກຫອມສັນຕິພາບນັ້ນ ມັນຈຶ່ງສາມາດປັບປຸງ ສາຍສຳພັນກັນທາງສາກົນໂດຍອີງໃສ່ຫລັກການ ການຢູ່ຮ່ວມກັນໂດຍສັນຕິ ລະຫວ່າງປະເທດທີ່ມີລະບອບທາງສັງຄົມຕ່າງກັນໄດ້. ການປ່ຽນແປງໄປໃນທາງທີ່ດີເຫລົ່ານັ້ນ ພວມເສີມຂະຫຍາຍຄວາມຫວັງ ຂອງບັນດາປະ-ຊາຊາດ ແລະຊາວໜຸ່ມທີ່ມີຕໍ່ອະນາຄົດ ແລະຮັບໃຊ້ ຜົນປະໂຫຍດອັນພື້ນຖານຂອງພວກເຂົາ

ໃນເມື່ອການປະທະກັນກ່ຽວກັບບັນຫາວ່າດ້ວຍການລຶດຜ່ອນຄວາມເຄັ່ງຕຶງ, ການເຄື່ອນໄຫວຂອງສັດຕູພວມມີການຂະຫຍາຕົວເຄັ່ງຮ້ອນຍິ່ງຂຶ້ນນັ້ນການຕໍ່ສູ້ຂອງຊາວໜຸ່ມເພື່ອສັນຕິ ພາບແລະຄວາມປອດໄພຂອງບັນດາປະຊາຊາດເພື່ອລົບລ້າງບໍ່ເກີດຄວາມເຄັ່ງຕຶງທາງທະຫານ, ຕ້ານກົນອຸບາຍຂອງພວກຈັກກະພັດ ແລະພວກປະຕິການ ຈຶ່ງມີຄວາມໝາຍສຳຄັນເປັນພິເສດ. ໃນປະຈຸບັນນີ້ ບັນຫາວ່າດ້ວຍການຕໍ່ສູ້ ເພື່ອຈຳກັດແລະສະກັດກັ້ນ ການແຂ່ງຂັນສ້າງອາວຸດ ອັນເປັນອັນຕະລາຍ ແກ່ມະນຸດຊາດ, ເພື່ອຂັດຂວາງການສ້າງ ແລະການສະສົມກຳລັງອາ-ວຸດ ທີ່ສັງຫານຊີວິດ ໃນຂອບເຂດອັນກວ້າງຂວາງນັ້ນເປັນບັນຫາທີ່ຮີບດ່ວນທີ່ສຸດ. ບໍ່ແມ່ນໂດຍບັງເອີນວ່າ ບັ້ນຮົບກ່າວປະ-ນາມການສ້າງອາວຸດເນີຕຼົງ ແລະການຕັ້ງອາວຸດນັ້ນ ຢູ່ໃນຢູລົບຕາໆ ເວັນຕົກ ໄດ້ຮັບການເຕີບໃຫຍ່ຂະຫຍາຍຕົວ ໃນຂອບເຂດທີ່ກວ້າງຂວາງທີ່ສຸດ.

ພັກກອມມູນິດ ແຫ່ງສະຫະພາບໂຊວຽດ, ປວງປະຊາຊົນ-ໂຊວຽດ ທີ່ປະຕິບັດນະໂຍບາຍເລນິນ ແຫ່ງສັນຕິພາບ ແລະການກໍ່ສ້າງຢ່າງສັນຕິ ຢ່າງສຸດກົກສຸດປາຍ ແລະບໍ່ຮູ້ອິດ ຮູ້ເມື່ອຍນັ້ນ ໄດ້ສະຫນັບສະຫນູນ ແລະພວມສະຫນັບສະຫນູນບັນດາຜູ້ທີ່ຕໍ່ສູ້ເພື່ອປັບປຸງສັນຕິພາບ, ມິດຕະພາບແລະຄວາມເຂົ້າໃຈກັນ ລະຫວ່າງບັນດາປະຊາຊາດ, ເພື່ອເສລີພາບ, ປະຊາທິປະໄຕ ແລະຄວາມກ້າວຫນ້າທາງສັງຄົມ, ອັນເປັນທີ່ຫນ້າພໍໃຈຫລາຍວ່າ ລຸ້ນຄົນໃຫມ່ ນັບມື້ນັບມີຈຳນວນຫລາຍຂຶ້ນ ພວມເສີມຂະຫຍາຍ ການເຄື່ອນໄຫວຮ່ວມກັນ ແລະການຮ່ວມມືກັນຊຸທິດກຳລັງວັງຊາແລະຈິດໃຈຂອງຕົນ ໃຫ້ແກ່ການຮັບໃຊ້ເປົ້າຫມາຍ ອັນສູງສົ່ງເຫລົ່ານັ້ນ.

ຂໍອວຍພອນກອງປະຊຸມຄັ້ງນີ້ ຈົ່ງຮັບຜົນສຳເລັດ; ຂໍອວຍພອນ ສ.ຊ.ປ.ລ. ຈົ່ງໄດ້ຮັບຜົນສຳເລັດໃຫມ່ ອັນໃຫຍ່ຫຼວງໃນການເຄື່ອນໄຫວຂອງຕົນ.

ລ.ບະເລັດຊະເນັບ

ວັນທີ ໒໙ ເດືອນກຸມພາປີ ໑໙໗໕.

ເຫລັ້ມທີ ໗,

ຫນ້າ ໒໙໐-໒໙໑

ສານເຖິງກອງປະຊຸມກຳມະບານທົ່ວໂລກຄັ້ງທີ IX

ເພື່ອນມິດທີ່ຮັກແພງ !

ຂໍສະແດງຄວາມເຄົາລົບ ຕໍ່ບັນດາທ່ານຜູ້ແທນ ຂອງກຳມະບານ ຂອງທະວີບ ທັງຫລາຍ ຂອງໂລກ ທີ່ໄດ້ ເຂົ້າຮ່ວມກອງປະຊຸມຄັ້ງນີ້ ເຊິ່ງສະແດງໃຫ້ເຫັນເຖິງຄວາມ ເຂັ້ມແຂງຂອງຄວາມສາມັກຄີກັນ ຂອງບັນດາຊາວຜູ້ອອກແຮງງານ.

ໃນປະຈຸບັນນີ້ ບົດບາດຂອງຂົບວນກຳມະກອນ, ກຳມະບານພວມໄດ້ຮັບການເຕີບໃຫຍ່ຂະຫຍາຍຕົວ ໃນການຕໍ່ສູ້ ເພື່ອປະຊາທິປະໄຕ, ເສລີພາບຂອງບັນດາປະຊາຊາດ, ຄວາມກ້າວໜ້າທາງສັງຄົມແລະສັນຕິພາບ. ມະຫາຊົນຜູ້ອອກແຮງງານທີ່ນັບມື້ນັບມີຈຳນວນຫລາຍຂຶ້ນ ພວມຖືກຳມະບານວ່າ ເປັນຜູ້ຈັດຕັ້ງການຕໍ່ສູ້ເພື່ອຜົນປະໂຫຍດແລະສິດຂອງຊາວຜູ້ອອກແຮງງານ, ເພື່ອຕ້ານນະໂຍບາຍທີ່ຄັດຄ້ານຂົບວນກຳມະກອນ ຂອງບໍລິສັດຜູກຂາດ, ຕ້ານການຫວ່າງງານແລະເງິນເຟີ້, ຕ້ານການກົດຂີ່ທາງຊົນຊາດແລະສັງຄົມທຸກຢ່າງ, ຕ້ານລັດທິຈຳແນກເຊື້ອຊາດແລະລັດທິຟາຊິດ.

ໃນປະຈຸບັນນີ້ ການເຄື່ອນໄຫວຂອງກຳມະຊານ ແນໃສ່ປະຕິບັດເປົ້າໝາຍອັນສູງສົ່ງແຫ່ງການຕໍ່ສູ້ ເພື່ອປ້ອງກັນມະນຸດຊາດໃຫ້ພົ້ນຈາກໄພອັນຕະລາຍຂອງສົງຄາມຈະລວດປະລະມານູ.

ມັນບໍ່ມີໜ້າທີ່ໃດທີ່ຮີບດ່ວນກ່ວາໜ້າທີ່ຂອງການສະກັດກັ້ນການແຂ່ງຂັນສ້າງອາວຸດ ເຊິ່ງແມ່ນວົງການຈັກກະພັດ ປະຕິການທີ່ກະຫາຍການຮຸກຮານ, ສັດຕຂອງການລົດຜ່ອນຄວາມເຄັ່ງຕຶງທາງສາກົນເປັນຜູ້ເພີ່ມທະວີຍິ່ງຂຶ້ນ. ໃນປະຈຸບັນນີ້ ຊົນຊັ້ນກຳມະກອນແລະຊາວຜູ້ອອກແຮງງານ ພວມຫາບແບກອັນໜັກໜ່ວງແຫ່ງການສ້າງອາວຸດ.

ຊົນຊັ້ນກຳມະກອນ, ບັນດາຜູ້ອອກແຮງງານ ແລະອົງການຈັດຕັ້ງຊາວຜູ້ອອກແຮງງານຕ່າງກໍສົນໃຈໃນການ ສະກັດກັ້ນການເພີ່ມຕື່ມກຳລັງອາວຸດດ້ວຍອາວຸດຊະນິດໃໝ່, ອາວຸດສັງຫານຊີວິດໃນຂອບເຂດທີ່ກວ້າງຂວາງ,ສົນໃຈໃນການຍຸດການເລັ້ນແບບປ່ວງບ້າທີ່ໄປສູ່ຄວາມຫາຍະນະ.

ບັນດານັກການເມືອງ, ລັດຖະບຸລຸດຕ່າງໆມີໜ້າທີ່ ທີ່ຈະຕ້ອງຟັງທາງສຽງປະຊາຊົນທີ່ວ່າ "ຕ້ອງສະກັດກັ້ນ ການແຂ່ງຂັນສ້າງອາວຸດ, ຕ້ອງປະຕິເສດທີ່ຈະສ້າງລູກລະເບີດເນີຕົງ" ການແຂ່ງຂັນສ້າງອາວຸດ ພວມກິນກອງທຶນຢ່າງ ມະຫາສານ. ດ້ວຍເຫດນັ້ນ ການເຮັດໃຫ້ກອງທຶນນັ້ນໄປຮັບໃຊ້ຜົນປະໂຫຍດຂອງການກໍ່ສ້າງ, ການກ້າວຂຶ້ນສູ່ການປົດອາວຸດທັງໝົດເຫຼົ່ານັ້ນ ເປັນຄຳຮຽກຮ້ອງຕ້ອງການຂອງຍຸກສະໄໝນີ້.

ສະຫະພາບໂຊວຽດ ໄດ້ເຮັດແລະພວມເຮັດທຸກສິ່ງທຸກຢ່າງເທົ່າທີ່ຈະເຮັດໄດ້ ເພື່ອຂັດຂວາງ ບໍ່ໃຫ້ສົງຄາມໂລກຄັ້ງໃຫມ່ເກີດຂຶ້ນໄດ້, ເພື່ອສະກັດກັ້ນການກຽມສົງຄາມນັ້ນ.

ຄວາມສາມັກຄີກັນໃນການກະທຳຂອງກອງກຳລັງ ຕ່າງ ໆ ຂອງບັນດາຜູ້ອອກແຮງງານ ແລະກຳມະບານເປັນບໍ່ເກີດແຫ່ງໜຶ່ງທີ່ສຳຄັນຂອງກຳລັງແຮງ ຂອງຊົນຊັ້ນກຳມະກອນ ສາກົນ ແລະການຂະຫຍາຍບົດບາດການນຳພາ ໃນຂະບວນວິວັດການຂອງໂລກປະຈຸບັນນີ້. ຊາວຜູ້ອອກແຮງງານ ສ.ສ.ສ.ຊ.,ບັນດາປະເທດສັງຄົມນິຍົມຫຍຶດຫມັ້ນໃນຫນ້າທີ່ສາກົນນິຍົມ ຍາມໃດກໍສະຫນັບສະຫນູນທິດທາງທີ່ຈະນຳໄປສູ່ ການເຕົ້າໂຮມບັນດາກຳລັງຂອງຂະບວນການກຳມະບານ ແລະກຳມະກອນທີ່ໄດ້ຮັບການຈັດຕັ້ງເພື່ອດຳເນີນການຕໍ່ສູ້.

ກຳມະບານ ສ.ສ.ສ.ຊ. ເປັນອົງການຈັດຕັ້ງ ມະຫາຊົນອັນກວ້າງຂວາງກ່ວາຫມູ່ ໃນປະເທດຂອງພວກເຮົາ. ກຳມະບານໂຊວຽດໄດ້ຮັບຄວາມໄວ້ເນື້ອເຊື່ອໃຈ ແລະການສະຫນັບສະຫນູນຈາກປວງປະຊາຊົນໂຊວຽດ,ພັກກອມມູນິດແລະລັດໂຊວຽດ. ກຳມະບານມີບົດບາດທີ່ສຳຄັນໃນການປ້ອງກັນສິດແລະຜົນປະໂຫຍດຂອງບັນດາຜູ້ອອກແຮງງານ;ກຳມະບານໄດ້ເຂົ້າຮ່ວມຢ່າງເອົາຈິງເອົາຈັງ ໃນຊີວິດທຸກດ້ານ ຂອງສັງຄົມໂຊວຽດ, ໃນການເພີ່ມທະວີການຜະລິດແລະການປັບປຸງສະວັດດີພາບຂອງຊາວໂຊວຽດ, ໃນການຄຸ້ມຄອງເສດຖະກິດຂອງປະຊາຊົນແລະການເສີມຂະຫຍາຍປະຊາທິປະໄຕແບບສັງຄົມນິຍົມ.

ຕັ້ງແຕ່ມື້ທຳອິດແຫ່ງການກຳເນີດ ຂອງສະຫະພັນ ກຳມະບານທົ່ວໂລກ, ກຳມະບານໂຊວຽດໄດ້ຮ່ວມມືກັນກັບອົງການນີ້. ກຳມະບານໂຊວຽດສະໜັບສະໜູນການອອກແຮງຂອງ ສ.ກ.ລ. ທີ່ແນໃສ່ເຕົ້າໂຮມບັນດາກຳມະບານ ຂອງຂະບວນການຕ່າງໆ ໂດຍອີງໃສ່ຫລັກການຊົນຊັ້ນເຊິ່ງມີໃນປະເທດຕ່າງໆທີ່ມີລະບອບທາງສັງຄົມຕ່າງກັນ; ກຳມະບານໂຊວຽດສົ່ງເສີມຕໍ່ການເຕີບໃຫຍ່ຂະຫຍາຍຕົວຂອງຊື່ສຽງກຽດຕິຍົດຂອງ ສ.ກ.ລ. ແລະການເຮັດໃຫ້ ສ.ກ.ລ. ສະໜິດຕິດພັນກັບການຕໍ່ສູ້ຂອງມະຫາຊົນອັນກວ້າງຂວາງ.

ຂໍສະແດງຄວາມອວຍພອນໃຫ້ກອງປະຊຸມກຳມະບານ ທົ່ວໂລກຄັ້ງທີ IX , ບັນດາຜູ້ເຂົ້າຮ່ວມກອງປະຊຸມຄັ້ງນີ້ ຈົ່ງປະສົບແຕ່ຜົນສຳເລັດໃນວຽກການຂອງຕົນ ຢ່າງເປັນເອກະສັນກັນ ເພື່ອເປັນຜົນປະໂຫຍດແກ່ບັນດາຊາວ ຜູ້ອອກ ແຮງງານຂອງບັນດາປະເທດ.

ຫ້າມຈຳໜ່າຍ

ລ.ບະເລັດຊະເນັບ

ວັນທີ ໑໕ ເດືອນເມສາປີ ໑໙໗໘

ເຫລັ້ມທີ ໗,

ໜ້າ ໔໗໙-໔໘໐

ຄຳປາໄສໃນກອງປະຊຸມໃຫຍ່ຄັ້ງທີ XVIII ຂອງ ສະມາຄົມ ຊາວໜຸ່ມກອມມູນິດເລນິນແຫ່ງສ.ສ.ສ.ຊ.(ໂກມໂຊໂມນ) ວັນທີ ໒໕ ເດືອນເມສາ ປີ ໑໙໗໘

ບັນດາສະຫາຍ ຜູ້ແທນ ! ແຂກກອງປະຊຸມທີ່ນັບຖື !

ໃນນາມສູນກາງພັກກອມມູນິດ ແຫ່ງສະຫະພາບ ໂຊວຽດ (ພ.ກ.ສ.ຊ.), ບັນດາສະມາຊິກພັກເລນິນ ຂອງ ພວກເຮົາຂໍສະແດງຄວາມອວຍພອນມາຍັງຜູ້ເຂົ້າຮ່ວມ ກອງປະຊຸມກົມໂຊໂມນອັນສູງສົ່ງນີ້ ແລະໂດຍຜ່ານພວກທ່ານໄປຍັງບັນດາຊາວກົມໂຊໂມນ, ຊາວໜຸ່ມໂຊວຽດ ! (ຕົບມື).

ໃນກອງປະຊຸມກົມໂຊໂມນຄັ້ງທີ III ທີ່ຍັງໜຸ່ມນ້ອຍເມື່ອ ໕໗ ປີກ່ອນໜ້ານັ້ນ ທ່ານເລນິນໄດ້ກ່າວເນັ້ນເຖິງ ຄວາມໝາຍອັນສຳຄັນຂັ້ນພື້ນຖານຂອງບັນຫາທີ່ວ່າ "ພວກເຮົາຕ້ອງສັ່ງສອນອົບຮົມຊາວໜຸ່ມແນວໃດ, ຊາວໜຸ່ມຕ້ອງຮ່ຳຮຽນຫຍັງເພື່ອສົມກຽດທີ່ຊາວໜຸ່ມກອມມູນິດ? ພວກເຮົາ ຕ້ອງເຝິກຝົນຊາວໜຸ່ມແນວໃດ ເພື່ອເຮັດໃຫ້ຊາວໜຸ່ມສາມາດເຮັດຫລ້ອນໜ້າທີ່ໃນການປະຕິບັດການທີ່ພວກເຮົາໄດ້ເປັນຜູ້ເລີ່ມຕົ້ນປະຕິບັດ?"(ເລນິນ, ລົບຊຸດ, ເຫລັ້ມ ໔໑, ໜ້າ ໓໐໑).

ຄຳເວົ້າເຫລົ່ານັ້ນ ຂອງທ່ານເລນິນເປັນສິ່ງເໝາະສົມກັບ

ເວລາປະຈຸບັນນີ້ເຊັ່ນດຽວກັນ. ພວກເຮົາຕ້ອງສັ່ງສອນ ອົບຮົມຊາວໜຸ່ມແນວໃດ, ຊາວໜຸ່ມຕ້ອງຮ່ຳຮຽນຫຍັງ (ບໍ່ພຽງແຕ່ໃນດ້ານໂຮງຮຽນເທົ່ານັ້ນ ຫາກຍັງໃນດ້ານຊີວິດທົ່ວໆໄປ) ເພື່ອກາຍເປັນຜູ້ສືບກຽດໃຫ້ແກ່ຊາວໜຸ່ມທີ່ກໍ່ສ້າງກອມມູນິດທັງໝົດເຫລົ່ານັ້ນ ກໍ່ເປັນຈຸດອັນສຳຄັນກ່ວາໝູ່ໃນວຽກການ ຂອງກົມໂຊໂມນ ແລະວຽກການນຳພາກົມໂຊໂມນ ຂອງອົງການພັກເຊັ່ນດຽວກັນ.

ຂ້າພະເຈົ້າ ຖືວ່າຊາວກອມມູນິດລຸ່ນເກົ່າ ອາດຮູ້ສຶກພໍໃຈຕໍ່ຊາວໜຸ່ມໂຊວຽດໃນປະຈຸບັນນີ້ໄດ້. ຊາວໜຸ່ມ ຍຶດໝັ້ນ ໃນຫລັກການກອມມູນິດ, ສັດຊື່ ຕໍ່ພາລະກິດຂອງພັກ ແລະເລນິນຜູ້ຍິ່ງໃຫຍ່ .(ຕົບມື.) ຊາວໜຸ່ມທັງຍິງແລະຊາຍນັບເປັນລ້ານໆຄົນ ພວມສະແດງຄວາມອົງອາດກ້າຫານ, ຄວາມອົດທົນ, ຄວາມສັດຊື່ຕໍ່ອຸດົມຄະຕິແຫ່ງເດືອນຕຸລາ. ພວກເຂົາ ເຮັດວຽກຢ່າງດຸໝັ່ນພາກພຽນໃນທຸກບ່ອນແຫ່ງການກໍ່ສ້າງ ກອມມູນິດ, ພວມຕໍ່ສູ້ຢ່າງຫ້າວຫັນ ເພື່ອປະຕິບັດແຜນການພັດທະນາ ປະເທດທີ່ໃຫຍ່ຫລວງ. ຂ້າພະເຈົ້າຢາກເວົ້າວ່າ ຊາວໜຸ່ມພວມປະກອບສ່ວນທີ່ມີລັກສະນະພິເສດ ຄື ລັກສະນະ ແຫ່ງຄວາມເປັນໜຸ່ມນ້ອຍຫ້າວຫັນແລະກ້າຫານ ເຂົ້າໃນວຽກການທຸກປະການ. ດ້ວຍເຫດນັ້ນ ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈຕໍ່ກົມໂຊໂມນ, ຕໍ່ຊາວໜຸ່ມທັງຫລາຍ ຂອງປະເທດ ໂຊວຽດ. (ຕົບມືຢ່າງຍືດຍາວ.)

ຂໍອວຍພອນໃຫ້ຊາວໜຸ່ມໂຊວຽດ ຈົ່ງຮັກສານ້ຳໃຈຮັກຊາດ,

ຄວາມຮູ້ສຶກຮັບຜິດຊອບຕໍ່ວຽກການພູກປະການ ທີ່ມີໃນປະເທດ ຂອງພວກເຮົາ (ຕົບມື) .

ກອງປະຊຸມຄັ້ງທີ XXV ຂອງ ພ.ກ.ສ.ຊ. ໄດ້ວາງໂຄງ ການດຳເນີນງານອັນກວ້າງຂວາງ ສຳລັບໄລຍະເວລາ ໕ ປີ ຂ້າງໜ້ານີ້ ແລະໄລຍະຕໍ່ໄປອີກດ້ວຍ, ໂຄງການດັ່ງກ່າວມີຈຸດ ປະສົງອັນດຽວ ຄື ການເຮັດໃຫ້ປະຊາຊົນໂຊວຽດ ມີຊີວິດຊຸດີ ຂຶ້ນກ່ວາເກົ່າ, ມີຄວາມສົມບູນພູນສຸກຫລາຍກ່ວາເກົ່າ, ການ ກ້າວຂຶ້ນສູ່ລະບອບກອມມູນິດ ເຊິ່ງເປັນເປົ້າໝາຍ ທີ່ສູງສົ່ງ ຂອງພວກເຮົາ. ໃນໄລຍະເວລາແຫ່ງການປະຕິບັດແຜນການ ໕ ປີຊຸດປະຈຸບັນນີ້ ເພິ່ນໄດ້ປະຕິບັດຫລາຍສິ່ງຫລາຍຢ່າງ ໃຫ້ ປາກົດເປັນຈິງແລ້ວ; ເຖິງເປັນແນວນັ້ນ ກໍຕາມ ພວກເຮົາ ຍັງມີວຽກການອັນຫລວງຫລາຍ ນັບລວມທັງວຽກງານ ສຳລັບ ພວກຊາວໜຸ່ມເປັນພິເສດ.

I

ລັກສະນະອັນສຳຄັນປະການໜຶ່ງໃນເວລາປະຈຸບັນນີ້ ແຫ່ງ ປິຕູພູມຂອງພວກເຮົາ ກໍຄືການຕໍ່ສູ້ເພື່ອປະສິດທິພາບ ແລະຄຸນ ນະພາບ. ອັນນັ້ນບໍ່ແມ່ນບັນຮົບຊົ່ວຄາວ, ອັນນັ້ນເປັນທິດທາງ ຂອງພັກ ເປັນໄລຍະເວລາອັນຍາວນານ.ອັນນັ້ນບໍ່ພຽງແຕ່ບັນ ຫາກຸນແຈຂອງແຜນການ ໕ ປີຊຸດປະຈຸບັນນີ້ເທົ່ານັ້ນ ຫາກ ຍັງ

ເປັນປັດໄຈທີ່ຕັດສິນການພັດທະນາທາງດ້ານເສດຖະກິດ ແລະສັງຄົມຂອງປະເທດເຮົາເປັນໄລຍະເວລາຫລາຍປີຂ້າງໜ້ານີ້ເຊັ່ນດຽວກັນ. ອັນນັ້ນກໍເປັນໂຄງການອົບຮົມຄົນຮຸ່ນໃໝ່ຂອງຊາວໂຊວຽດ.

ປະເທດເຮົາມີຊັບພະຍາກອນທຳມະຊາດ ທີ່ຫລວງຫລາຍທີ່ສຸດ. ຊາວໂຊວຽດຫລາຍລຸ້ນຄົນໄດ້ສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດ ໃນອຸດສາຫະກຳແລະກະສິກຳ ຂອງປະເທດເຮົາ ພວກເຮົາໄດ້ສ້າງຜູ້ຊ່ຽວຊານ ທີ່ມີລະດັບຄວາມຮູ້ ສູງຈຳນວນຫລາຍ, ໄດ້ຮັບປະກັນຊີວິດການເປັນຢູ່ ໃນລະດັບສູງສົມຄວນ .

ໃນປະຈຸບັນນີ້ ບັນຫາຢູ່ບ່ອນວ່າ ພວກເຮົາຕ້ອງ ຮູ້ຈັກໃຊ້ຄວາມສາມາດເຫລົ່ານັ້ນຢ່າງດີ, ຄວນເຮັດໃຫ້ຄວາມສາມາດທີ່ກວ້າງຂວາງເຫລົ່ານັ້ນ ຮັບໃຊ້ຜົນປະໂຫຍດ ຂອງປວງປະຊາຊົນ ຢ່າງມີຜົນສູງສຸດ.

ບັນຫາວ່າດ້ວຍປະສິດທິພາບແລະຄຸນນະພາບມີຄວາມໝາຍອັນກວ້າງຂວາງທີ່ສຸດ;ບັນຫານີ້ປະກອບດ້ວຍຈຸດຕ່າງໆ ເຊັ່ນການແກ້ໄຂບັນຫາວ່າດ້ວຍການຈັດຕັ້ງກຳລັງຜະລິດ ຢ່າງມີຜົນສູງສຸດ; ການປັບປຸງການວາງແຜນການ ໃນຂອບເຂດຂອງລັດ, ການແກ້ໄຂບັນຫາເສດຖະກິດ ທີ່ໃຫຍ່ດ້ວຍວິທີການຢ່າງຮອບດ້ານ. ໃນດ້ານນີ້ ພັກເຮົາ (ເຊັ່ນ ໃນການປະຊຸມສູນກາງພັກທີ່ມີຂຶ້ນ ໃນເດືອນທັນວາ ປີກາຍນີ້) ໄດ້ຕັ້ງ ບັນຫາຢ່າງຈະແຈ້ງຕໍ່ໜ້າອົງການລັດຕ່າງໆນັບລວມທັງ ກຳມະການ

ວາງແຜນການແລະກະຊວງທະບວງກົມຕ່າງໆແລ້ວ. ພ້ອມກັນນັ້ນ ໂຮງງານ, ຫ້ອງການ, ຄະນະເຮັດວຽກລວມໝູ່, ຊາວຜູ້ອອກແຮງງານ ແຕ່ລະຄະນະ, ແຕ່ລະແຫ່ງ, ແຕ່ລະຄົນຕ່າງກໍຕ້ອງປະກອບສ່ວນຂອງຕົນ ເຂົ້າໃນການແກ້ໄຂບັນຫານີ້ເຊັ່ນດຽວກັນ.

ອັນນັ້ນໝາຍຄວາມວ່າ ແນວໃດ ?

ອັນນັ້ນໝາຍຄວາມວ່າ ມັນຕ້ອງເຮັດວຽກ ບໍ່ພຽງແຕ່ໂດຍຮູ້ລະບຽບວິໄນເທົ່ານັ້ນ; ຫາກຍັງຕ້ອງມີນ້ຳໃຈເຮັດວຽກ ຢ່າງດຸໝັ່ນພາກພຽນ, ຢ່າງມີຜົນສູງ, ຢ່າງດີງາມ, ຕ້ອງເຮັດວຽກເພື່ອເຮັດໃຫ້ຜູ້ອື່ນແລະຕົນເອງເຄົາລົບນັບຖື.

ອັນນັ້ນໝາຍຄວາມວ່າ ມັນຕ້ອງຈັດຕັ້ງການເຮັດວຽກຢ່າງດີ, ຕ້ອງຮັບປະກັນລາງວັນ ແກ່ການຜະລິດຜົນ ຢ່າງສູງແລະມີຄຸນນະພາບດີ .

ອັນນັ້ນ ໝາຍຄວາມວ່າ ມັນຕ້ອງເຮັດໃຫ້ການປະຫຍັດສົມບັດຂອງປະຊາຊົນ ກາຍເປັນຫລັກການໜຶ່ງ ຂອງຊີວິດ ແລະການອອກແຮງງານຂອງຊາວໂຊວຽດ; ມັນຕ້ອງຊອກຫາ ວິທີການເພື່ອລົບພ້ອມການໃຊ້ຈ່າຍທີ່ບໍ່ມີຜົນປະໂຫຍດ.

ອັນນັ້ນໝາຍຄວາມວ່າ ມັນຕ້ອງສ້າງບັນຍາກາດ ທາງຈິດໃຈໃນຄະນະເຮັດວຽກລວມໝູ່ ເຊິ່ງໃນນັ້ນຊາວຜູ້ອອກ ແຮງງານແຕ່ລະຄົນ ຕ້ອງຮູ້ຈັກໜ້າທີ່ (ແລະມີຄວາມອາດສາມາດ) ຈະເຮັດວຽກຢ່າງມີປະສິດທິພາບ; ບັນຍາກາດ ເຊິ່ງໃນນັ້ນຕ້ອງຫລີກເວັ້ນ ປາກົດການແຫ່ງການເຮັດວຽກ ດ້ວຍຄວາມຂີ້

ຄ້ານ, ການບໍ່ໄປເຮັດວຽກ, ການເຮັດວຽກຜິດພາດ, ການຫລັກໂລບ.

ທັງຫມົດເຫລົ່ານັ້ນ ແມ່ນບັນດາເປົ້າຫມາຍຂອງພວກເຮົາ. ພັກເຮົາໄດ້ຕັ້ງບັນດາບັນຫາເຫລົ່ານັ້ນ ຢ່າງຈະແຈ້ງແລະເຂັ້ມງວດ. ຊາວຜູ້ອອກແຮງງານນັບເປັນລ້ານໆຄົນ ໄດ້ສະແດງຄວາມເຫັນດີເຫັນພ້ອມນຳພັກເຮົາ ແລະໄດ້ສະຫນອງມັນດ້ວຍການກະທຳຕົວຈິງ.

ບັນດາສະຫາຍ ອາດຮູ້ມາຈາກຫນັງສືພິມຕ່າງໆວ່າ ເພິ່ນໄດ້ປະຕິບັດວຽກການອັນນີ້ຢ່າງກວ້າງຂວາງ, ເຂັ້ມງວດ, ແບບມີແຜນການ ໃນວິສາຫະກິດຕ່າງໆ ແຫ່ງນະຄອນມົດສະກູ, ເລນິນກະລາດ, ມິນຊຸກ, ລີວົບ, ເຂດອູລານ, ກູດບາດ, ຕັດຊະເກັນ, ກະລະກັນດາ ແລະຄະນະເຮັດວຽກລວມຫມູ່ຄະນະອື່ນໆຂອງປະເທດເຮົາ.

ຊາວຫນຸ່ມໄດ້ເຂົ້າຮ່ວມໃນວຽກການແນວນີ້ ຢ່າງເອົາຈິງເອົາຈັງ. ຊາວຫນຸ່ມໄດ້ຍົກຄຳຂວັນວ່າ "ຊາວຫນຸ່ມ ຕ້ອງສະແດງຄວາມຫ້າວຫັນ ແລະຫົວຄິດປະດິດໃນການປະຕິບັດ ແຜນການ ៥ ປີແຫ່ງປະສິດທິພາບແລະຄຸນນະພາບ." ອັນນັ້ນເປັນຄຳຂວັນທີ່ດີ,ທີ່ຖືກຕ້ອງ. ການເຮັດໃຫ້ຊາວຫນຸ່ມ ບໍ່ວ່າເປັນກຳມະກອນ, ຊາວນາ, ນັກຊ່າງ, ວິສາວະກອນກໍຕາມ ແຕ່ລະຄົນຕ່າງກໍຕ້ອງປະຕິບັດຄຳຂວັນນີ້ ໃຫ້ປາກົດເປັນຈິງນັ້ນ ມັນເປັນຫນ້າທີ່ອັນສູງສົ່ງຂອງຊາວກົມໂຊໂມນທຸກຄົນ.

ໃນວິສາຫະກິດທີ່ກ້າວຫນ້າ ເຊັ່ນ ໃນໂຮງງານສ້າງລົດທີ່ຢູ່

ໃນຂອດແມ່ນ້ຳໂວນກາ ເພິ່ນໄດ້ສະສົມບົດຮຽນທີ່ດີ ໃນການແກ້ໄຂບັນຫາ ວ່າດ້ວຍການຍົກປະສິດທິພາບ ແລະຄຸນນະພາບຂອງການອອກແຮງງານ. ພວກເຮົາຫວັງວ່າ ບົດຮຽນເຫລົ່ານັ້ນ ຄວນໄດ້ຮັບການແຜ່ຂະຫຍາຍຢ່າງກວ້າງຂວາງ ທີ່ສຸດ. ກົມໂຊໂມນກໍຕ້ອງປະກອບສ່ວນຂອງຕົນ ເຂົ້າໃນວຽກການນີ້ເຊັ່ນດຽວກັນ.(ຕົບມື.)

ຂໍນຳເອົາວິທີການເຮັດວຽກແບບ "ເຊັກກິນ" ມາເປັນແບບຢ່າງ; ວິທີການດັ່ງກ່າວອຳນວຍແກ່ການເພີ່ມຜະລິດຜົນ ໂດຍບໍ່ຕ້ອງເພີ່ມຈຳນວນຜູ້ອອກແຮງງານ, ທຸກຄົນກໍເຂົ້າໃຈວ່າອັນນັ້ນແມ່ນດີແທ້. ເຖິງເປັນແນວນັ້ນກໍຕາມ ບົດຮຽນແນວນັ້ນຍັງບໍ່ທັນໄດ້ຮັບການແຜ່ຂະຫຍາຍພໍສົມຄວນ, ຍ້ອນວ່າ ຜູ້ນຳທາງເສດຖະກິດ, ພະນັກງານຂອງບາງກະຊວງທະບວງກົມ,ບາງຄົນເບິ່ງຄືວ່າ ຍັງບໍ່ທັນປະລະຄວາມລຳເຄີຍແບບຫລ້າສະໄໝທາງດ້ານການຄຸ້ມຄອງ ແລະການຈັດຕັ້ງ ການອອກແຮງງານໄດ້ເທື່ອ.

ວັນເວລາໄດ້ມາເຖິງແລ້ວ ພວກເຮົາຕ້ອງຫມູນໃຊ້ບົດຮຽນທີ່ດີຢ່າງມີຜົນ, ຕ້ອງສຳເລັດ ໃນການປະຕິບັດວຽກງານອັນດີທຸກປະການ.(ຕົບມື.)

ການຕໍ່ສູ້ເພື່ອປະສິດທິພາບແລະຄຸນນະພາບ ຂອງເສດຖະກິດຂອງປະຊາຊົນ ມີພາກສ່ວນໃດແດ່ ທີ່ມີຄວາມຫມາຍສຳຄັນກວ່າຫມູ່ ? ອັນນັ້ນ ກໍຄື ການກໍ່ສ້າງພື້ນຖານ ການຜະລິດແລະຄົມມະນາຄົມຂົນສົ່ງທີ່ມີຄວາມຫມາຍຕັດສິນຜົນສຳເລັດໃນ

ແນວຮີບທາງດ້ານເສດຖະກິດຂອງພວກເຮົາ. ກ່ຽວກັບ ບັນຫາ ເຫລົ່ານັ້ນ ກອງປະຊຸມສູນກາງພັກທີ່ 25 ໃນເດືອນທັນວາ ປີ ກາຍນີ້ ແລະຂ້າພະເຈົ້າກໍໄດ້ສະແດງຄວາມເອົາໃຈໃສ່ ຢ່າງ ຫລາຍ (ຂ້າພະເຈົ້າໄດ້ເວົ້າກ່ຽວກັບເລື່ອງນີ້ ໃນລະຫວ່າງ ການໄປທັດສະນາຈອນໃນເຂດຕາເວັນອອກຂອງປະເທດເຮົາ ໃນບໍ່ໆມານີ້).

ບາງຄັ້ງຂ້າພະເຈົ້າໄດ້ກ່າວເນັ້ນວ່າ ພວກເຮົາຈະໄດ້ລົງ ໂທດຢ່າງເຂັ້ມງວດຕໍ່ຜູ້ນຳທາງເສດຖະກິດທີ່ເຮັດວຽກຊັກຊ້າ, ບໍ່ຮູ້ຈັກລະດົມກຳລັງຢ່າງຖືກຕ້ອງ, ບໍ່ຮູ້ຈັກວິທີຫມູນໃຊ້ກອງທຶນ ຂອງປະຊາຊົນຢ່າງຖືກຕ້ອງ. ແຕ່ວ່າວຽກການຂອງຜູ້ນຳ ນັ້ນ ເປັນພາກສ່ວນຫນຶ່ງຂອງບັນຫາທີ່ນັ້ນ, ພາກສ່ວນອີກອັນຫນຶ່ງກໍ ຄື ວຽກງານ ແບບຮູ້ຮັບຜິດຊອບຂອງຄົນຜູ້ທີ່ເຂົ້າຮ່ວມໃນການ ກໍ່ສ້າງແລະຄົ້ນມະນາຄົມຂົນສົ່ງນັບເປັນລ້ານໆຄົນນັບລວມຊາວ ຫນຸ່ມເປັນລ້ານໆຄົນ ກໍຄືຊາວກົມໂຊໂມນ. ການອອກແຮງງານ ຢ່າງມີຫົວຄິດປະດິດສ້າງ, ການອອກແຮງງານ ແບບດີເດັ່ນ, ການແຂ່ງຂັນທີ່ມີຈຸດປະສົງທີ່ຈະຮັບປະກັນຫມາກຜົນອັນສູງ ໃຫ້ ແກ່ເສດຖະກິດຂອງປະຊາຊົນ, ທັງຫມົດເຫລົ່ານັ້ນ ກໍມີ ຄວາມ ຫມາຍສຳຄັນເປັນພິເສດໃນການແກ້ໄຂບັນຫາດັ່ງກ່າວມາເທິງ ນັ້ນ.

ຕາມຄວາມຄິດເຫັນຂອງພວກເຮົານັ້ນ ການແຂ່ງຂັນກັນລະ ຫວ່າງວິສາຫະກິດຕ່າງໆ ທີ່ມີການພົວພັນກັນໃນການສ້າງ ສູນ ກາງຜະລິດຕາມແຜນການ 5 ປີຊຸດປະຈຸບັນນັ້ນ ມັນເປັນວິທີ

ການທີ່ດີ ເຊິ່ງຕ້ອງໄດ້ຮັບການແຜ່ຂະຫຍາຍຢ່າງກວ້າງຂວາງທີ່ສຸດ.

ສ່ວນຄົມມະນາຄົມຂົນສົ່ງນັ້ນ ພວກເຮົາຢາກຈະໃຫ້ເຫັນເຖິງບົດຮຽນທີ່ດີຂອງຊາວເລນິນກະລາດ ທີ່ໄດ້ຈັດຕັ້ງການປະສານງານລະຫວ່າງຊາວຜູ້ອອກແຮງງານ ໃນຄົມມະນາຄົມ ຂົນສົ່ງທາງທະເລ; ແມ່ນ້ຳ, ທາງລົດໄຟ ແລະລົດໂອໂຕ (ຕົບມື).

ບັນດາເພື່ອນມິດທີ່ຮັກແພງ ! ການລິເລີ່ມແນວນັ້ນ ແລະອື່ນໆຕ່າງກໍຕ້ອງການໃຫ້ຊາວໜຸ່ມສະແດງຄວາມສະໜັບ ສະໜູນ, ອອກແຮງ, ສະແດງຄວາມຫ້າວຫັນ ແລະ ກຳລັງວັງຊາຂອງຊາວໜຸ່ມເປັນພິເສດ (ຕົບມື) .

ຍາມໃດ ກົມໂຊໂມນກໍເອົາໃຈໃສ່ຕໍ່ສູນກາງກໍ່ສ້າງ ແຫ່ງໃຫ່ຍຂອງປະເທດເຮົາ. ອັນນັ້ນ ໄດ້ກາຍເປັນປະເພນີ ອັນດີງາມ. ໃນປະຈຸບັນນີ້ສູນກາງກໍ່ສ້າງແຫ່ງໃຫຍ່ໆ ໄດ້ຮັບການແຜ່ຂະຫຍາຍຈົນຮອດເຂດແດນອັນກວ້າງໃຫ່ຍ ຂອງປະເທດເຮົາເຊັ່ນເຂດແດນຊີບີລີພາກຕາເວັນຕົກ ເປັນຕົ້ນແມ່ນເຂດຈຸເມັນເຊິ່ງມີຄວາມໝາຍສຳຄັນນັບມື້ນັບຫລາຍຂຶ້ນແກ່ອະນາຄົດ ປະເທດຂອງພວກເຮົາ.

ໃນໄລຍະເວລາ ໑໐ ປີທີ່ຜ່ານມານີ້ ເຂດທີ່ພູລະ ກັນດານນັ້ນ ໄດ້ກາຍເປັນສູນກາງຜະລິດນ້ຳມັນກາດທີ່ສຳຄັນ ກວ່າໝູ່ໃນປະເທດເຮົາ. ໃນປະຈຸບັນນີ້ ເພີ່ນພວມສ້າງອຸດສາຫະກຳແກັດແລະອຸດສາຫະກຳເຄມີໃນເຂດນີ້ອີກດ້ວຍ. ໂສມໜ້າຂອງແຂວງ ຈຸເມັນ ມີເມືອງແຫ່ງໃຫ່ມ, ບ່ອນຂຸດນ້ຳມັນກາດແລະ

ແກ໊ດ, ໂຮງງານ, ທາງລົດໄຟ, ລົດຍົນ ເປັນລັກສະນະສະເພາະຕົວ. ຂອບເຂດຂອງການກໍ່ສ້າງເປັນທີ່ ແປກປະຫລາດໃຈແທ້ ! ໃນເຂດແມ່ນ້ຳ ໂອບ ພວກເຮົາສ້າງພົນຖານ ແກ່ເສດຖະກິດແລະຊີວິດຂອງມະນຸດໃນດິນແດນ ທີ່ມີເນື້ອທີ່ ໑ ລ້ານ ກິໂລແມັດຕາ ເຊິ່ງທໍ່າກັບເນື້ອທີ່ລວມຂອງສາມປະເທດ-ອິຕາລີ, ສະເປັນ ແລະ ອັງກິດ. (ຕົບມື.)

ພວກເຮົາໄດ້ລົງທຶນອັນໃຫຍ່ເຂົ້າໃນວຽກການນີ້ ຢ່າງຖືກຕ້ອງ. ການໃຊ້ຈ່າຍຂອງພວກເຮົາ ໄດ້ເກີດຜົນດີ. ໃນປະຈຸບັນນີ້ ເຂດຈູເມັນ ຜະລິດເຄິ່ງໜຶ່ງຂອງບໍລິມາດທັງໝົດຂອງການຜະລິດນ້ຳມັນກາດແຫ່ງ ສ.ສ.ສ.ຊ.,ຜະລິດແກ໊ດຫລາຍທີ່ສຸດ. ເມື່ອມໍ່ໆມານີ້ ສູນກາງພັກໄດ້ສົ່ງຄຳອວຍພອນ ໄປຍັງຊາວກຳມະກອນທີ່ຂຸດນ້ຳມັນກາດ ໃນເຂດຊີບີລີ ພາກຕາເວັນຕົກທີ່ໄດ້ບັນລຸຜົນສຳເລັດອັນໃຫຍ່ຫລວງ ຄືໄດ້ຜະລິດ ນ້ຳມັນກາດ ໑ ພັນລ້ານໂຕນ.(ຕົບມື.) ອັນນັ້ນ ເປັນໄຊຊະນະອັນຍິ່ງໃຫຍ່ໃນການອອກແຮງງານ. ຂໍໃຫ້ນັກຂຸດ "ຄຳ ສີດຳ" ຂອງພາກເໜືອຈົ່ງມີກຽດສະງ່າງາມ.(ຕົບມືຢ່າງຍືດຍາວ.)

ສ່ວນຊັບພະຍາກອນທຳມະຊາດຂອງເຂດ ຈູເມັນ ນັ້ນພວກເຮົາຫວັງວ່າ ຈະໃຊ້ຢ່າງດີນານອີກ. ເວົ້າສະເພາະໄລຍະເວລາສິບປີຂ້າງໜ້ານີ້ນັ້ນ ພວກເຮົາຫວັງວ່າ ການເພີ່ມທະວີການຂຸດນ້ຳມັນກາດ, ແກ໊ດ ແລະ ວັດຖຸເຄມີ ທີ່ມີມູນຄ່າ ສູງຈະມີຂຶ້ນກໍ່ຍ້ອນການຂຸດນ້ຳມັນກາດໃນເຂດ ຈູເມັນ ເປັນສ່ວນຫລວງຫລາຍ. ພວກເຮົາຄວນກ່າວເນັ້ນວ່າ ໄລຍະນັ້ນ ໃຫ່ມ

ແຫ່ງການສ້າງຊີບລີພາກຕາເວັນຕົກ ພວມມາເຖິງ ຫລື ອາດຈະເວົ້າໄດ້ວ່າ ໄດ້ມາເຖິງນີ້ແລ້ວ. ພວກເຮົາຄວນເພີ່ມ ທະວີບໍລິມາດວຽກງານຂຶ້ນ ໔-ມື ເທົ່າ ເຊິ່ງຕ້ອງການ ກຳລັງຄົນແລະກຳລັງທາງວັດຖຸ-ເຕັກນິກຢ່າງຫລວງຫລາຍຕື່ມອີກ.

ກົມໂຊໂມນຊ່ວຍເຫລືອຊີບລີພາກຕາເວັນຕົກໄດ້ ແນວ ໃດແດ່ ? ຂ້າພະເຈົ້າຮູ້ວ່າໃນປະຈຸບັນນີ້ຊາວກົມໂຊໂມນ ໄດ້ເອົາໃຈໃສ່ເປັນພິເສດຕໍ່ສູນກາງກໍ່ສ້າງ ໑໓ ແຫ່ງແລ້ວ. ເຖິງເປັນແນວນີ້ກໍຕາມ ຂ້າພະເຈົ້າຂໍໃຫ້ກົມໂຊໂມນເພີ່ມຕື່ມຄວາມເອົາໃຈໃສ່ຂອງຕົນຕໍ່ເຂດນີ້ ຂອງປະເທດເຮົາ.

ສູນກາງກໍ່ສ້າງ ບໍ່ພຽງແຕ່ຕ້ອງການໃຫ້ມີ ມືແຮງງານ - ເທົ່ານັ້ນ ຫາກຍັງຕ້ອງການໃຫ້ມີກຳມະກອນ ທີ່ຮູ້ວິຊາ ການສ້າງ, ການໃຊ້ເຄື່ອງຈັກ, ການຂັບລົດ, ການຂຸດນ້ຳມັນກາດ, ການເປັນຄູສອນ ແລະ ວິຊາອື່ນໆ; ອັນນັ້ນເປັນສິ່ງທີ່ຫນ້າຕ້ອງການແທ້ໆ.

ນັບຕັ້ງແຕ່ການເລີ່ມ "ບຸກເບີກ" ຊີບລີພາກຕາເວັນຕົກນັ້ນ ເພິ່ນໄດ້ຍົກຄຳຂວັນທີ່ວ່າ ຕ້ອງຍາດເອົາຊັບພະຍາກອນ ຊີບລີຕາເວັນຕົກ ໂດຍອີງໃສ່ຄວາມຮູ້, ບໍ່ແມ່ນອີງໃສ່ ກຳລັງແຮງຈຳນວນຫລາຍ; ອັນນັ້ນຫມາຍເຖິງວ່າ ເພິ່ນຕ້ອງໃຊ້ ວິຊາການແລະວິຊາອຸດສາຫະກຳແບບໃຫມ່ ໃຫ້ຫລາຍກວ່າ ເກົ່າ, ໃນດ້ານນີ້ ເພິ່ນໄດ້ບັນລຸຜົນສຳເລັດຢ່າງຫລວງຫລາຍ.

ເຊັ່ນ, ກຳມະກອນຫນຸ່ມ, ວິສາວະກອນຫນຸ່ມ ຂອງ ໂຮງງານ "ຈູເມັນ-ເກັດ ໂມນຕັດ" ໄດ້ຄົ້ນຄວ້າແລະໄດ້ເລີ່ມຕົ້ນ

ໃຊ້ວິທີການຂອງການກໍ່ສ້າງພິເສດ: ຄືວິທີການປະກອບເຄື່ອງອຸປະກອນແກ່ການສ້າງສູນກາງຜະລິດ ເຊິ່ງອຳນວຍເງື່ອນໄຂທີ່ຈະເພີ່ມທະວີປະສິດທິພາບຂອງການອອກແຮງງານຂຶ້ນຕັ້ງ ໔ ເທົ່າ. ອັນນັ້ນໝາຍເຖິງການປະຫຍັດແຮງງານ ຂອງກຳມະກອນເປັນພັນເປັນໝື່ນຄົນ.

ອັນນັ້ນໝາຍຄວາມວ່າ ຊາວຜູ້ອອກແຮງງານທີ່ເຮັດວຽກຢູ່ໃນພາກພື້ນແຫ່ງອື່ນໆແຫ່ງ ສ.ສ.ສ.ຊ.ສາມາດຊ່ວຍແກ່ການສ້າງຊີບີລີພາກຕາເວັນຕົກໄດ້ເຊັ່ນດຽວກັນ. ເພື່ອສ້າງເຂດຈູເມັນດ້ວຍການໃຊ້ຈ່າຍນ້ອຍທີ່ສຸດ ທາງດ້ານກຳລັງແຮງ ນັ້ນ ຊາວກົມໂຊໂມນ ຕ້ອງເອົາໃຈໃສ່ຕໍ່ການປະຕິບັດຄຳສັ່ງ ຈອງຂອງເຂດຈູເມັນ ໃນເຂດອູກະລາອີນາ, ອາເຊີນໄບຊານ , ເຂດແມ່ນ້ຳໂວນກາ, ໃນນະຄອນມົດສະກູ, ໃນທຸກຫົນ ແຫ່ງຂອງປະເທດເຮົາ.

ເພີ່ນສາມາດໃຊ້ວິທີການນີ້ ໃນການສ້າງສູນກາງ ກໍ່ ສ້າງແຫ່ງໃຫຍ່ແຫ່ງອື່ນໆເຊັ່ນດຽວກັນ. ພວກເຮົາ ມີບົດຮຽນແນວນີ້ແລ້ວ - ເຊັ່ນ , ຊາວເມືອງເລນິນກະລາດ ໄດ້ສະແດງຄວາມລິເລີ່ມທີ່ຈະປະຕິບັດຄຳສັ່ງຂອງສູນກາງກໍ່ສ້າງແຫ່ງໃຫ່ມໃຫ່ມຢ່າງໄວກ່ວາຄາດໝາຍ.(ຕົບມື.) ບັນດາສະຫາຍ! ການລິເລີ່ມດັ່ງກ່າວ ຕ້ອງໄດ້ຮັບການແຜ່ຂະຫຍາຍຢ່າງກວ້າງຂວາງໃນທ່າມກາງຊາວໜຸ່ມ; ຊາວໜຸ່ມຄວນເອົາໃຈໃສ່ ຕໍ່ການປະຕິບັດຄຳສັ່ງຈອງຂອງສູນກາງກໍ່ສ້າງແຫ່ງໃຫ່ມໆເປັນພິເສດ. "ໂຄມໄຟ" ຂອງຊາວກົມໂຊໂມນ ຕ້ອງຕຳນິຕິຕຽນ

ຄົນຜູ້ທີ່ປະຕິບັດຄຳສັ່ງຈອງຈຶກຈ້າຢູ່ເລື້ອຍໆ (ຕົບມື) .

ເລື່ອງກະສິກຳ .

ບໍ່ຄວນສົງໃສເລີຍວ່າ ພວກເຮົາໄດ້ບັນລຸຜົນສຳເລັດຫລາຍພໍສົມຄວນໃນການປະຕິບັດນະໂຍບາຍກະເສດ ຂອງພັກເຮົາ. ແຕ່ວ່າ ເພື່ອຕອບສະໜອງຄວາມຕ້ອງການຂອງຊາວໂຊວຽດ, ອຸດສາຫະກຳໂຊວຽດນັ້ນ ພວກເຮົາ ຍັງຈະຕ້ອງ ໄດ້ເຮັດໃຫ້ຫລາຍກ່ວາເກົ່າອີກ. ແຜນການປະຈຸບັນນີ້ຂອງພັກ ແລະແຜນການທີ່ພວມວາງອອກຢູ່ ຕ່າງກໍ່ມີຈຸດປະສົງແນວນີ້ເອງ. ການເພີ່ມປະສິດທິພາບຂອງກະສິກຳເປັນຕົ້ນແມ່ນການລ້ຽງສັດເປັນບັນຫາທີ່ສຳຄັນກ່ວາໝູ່.

ຢາກກ່າວໂດຍກົງໄປກົງມາວ່າ ຄົນປາສະຈາກ ຊາວໜຸ່ມແລ້ວ ການແກ້ໄຂບັນຫານີ້ຈະພົບຄວາມຫຍຸ້ງຍາກຫລາຍທີ່ສຸດ. ໃນດ້ານນີ້ ຊາວໜຸ່ມຊົນນະບົດ ມີບົດບາດສຳຄັນກ່ວາ ໝູ່ ຍ້ອນວ່າຊາວໜຸ່ມຊົນນະບົດ ເປັນກຳລັງແຮງທີ່ຕັດສິນໂຊກຊາຕາປະຈຸບັນນີ້ຂອງໝູ່ບ້ານໂຊວຽດ. ການກະເສດບໍ່ອາດເປັນໄປໄດ້ ໂດຍປາດສະຈາກເຄື່ອງຈັກ, ດ້ວຍເຫດນັ້ນ ຄຳຂວັນທີ່ວ່າ "ຊາວໜຸ່ມຊົນນະບົດ ຕ້ອງຮູ້ເຄື່ອງຈັກ" ມີຄວາມໝາຍສຳຄັນຕາມຫລັກການ. ການສັ່ງສອນຊາວໜຸ່ມຊົນນະບົດໃຫ້ຮູ້ຈັກເຕັກນິກນັ້ນ ຕ້ອງມີລັກສະນະອັນກວ້າງຂວາງຢ່າງແທ້ຈິງ.

ໂສມໜ້າຂອງໝູ່ບ້ານໂຊວຽດ ພວມໄດ້ຮັບການປ່ຽນແປງ. ໃນໄລຍະເວລາ ໑໙ ປີທີ່ຜ່ານມານີ້ ເພິ່ນໄດ້ສ້າງເຮືອນຢູ່ ທີ່ມີພື້ນທີ່ ໔໕໐ ລ້ານແມັດຕາ. ອັນນັ້ນ ບໍ່ແມ່ນຂອງນ້ອຍ, ອັນ

ນັ້ນເທົ່າກັບພື້ນທີ່ຂອງເຮືອນຢູ່ ໃນຕົວເມືອງທັງຫລາຍແຫ່ງສ.ສ.ສ.ຊ. ໃນເວລາກ່ອນສົງຄາມ, ໃນໝູ່ບ້ານມີສະໂມສອນ, ຮ້ານຄ້າ, ຮ້ານອາຫານ ທີ່ດີເໝືອນກັບໃນຕົວເມືອງຕ່າງໆ. ໃນການປ່ຽນແປງເຫລົ່ານັ້ນ ຊາວໜຸ່ມເປັນຕົ້ນ ແມ່ນຊາວກົມໂຊໂມນ ຕ້ອງເປັນກຳລັງດັນທີ່ສຳຄັນ, ຕ້ອງຮ່ຳຮຽນຮູ້ຈັກເຕັກນິກໃໝ່, ສ້າງໝູ່ບ້ານໃໝ່, ສ້າງວັດທະນະທຳອັນສູງ! (ຕົບມື.)

ພວກເຮົາບໍ່ບີບບັງຄັບຊາວໜຸ່ມໃຫ້ຢູ່ໃນໝູ່ບ້ານ, ເພື່ອເຮັດໃຫ້ຊາວໜຸ່ມດຳລົງຊີວິດຢູ່ໃນໝູ່ບ້ານນັ້ນ ພວກ ເຮົາສ້າງເງື່ອນໄຂທີ່ດີໃຫ້ແກ່ຊີວິດການເປັນຢູ່ ແລະ ການ ອອກແຮງງານ, ອົບຮົມໃຫ້ມີນ້ຳໃຈຮັກການກະເສດ, ຮັກທຳມະຊາດ, ຮັກດິນນາ .

ຂ້າພະເຈົ້າຢາກຄິດຄືນຫລັງເຖິງນັກຮຽນ ຂອງແຂວງກົດໂລມມາທີ່ໄດ້ສະແດງຄວາມຕ້ອງການທີ່ຈະໄປເຮັດວຽກ ໃນຊົນນະບົດ. ຂ້າພະເຈົ້າໄດ້ຮັບຂ່າວວ່າ ຊາວໜຸ່ມເຫລົ່ານັ້ນທີ່ໄດ້ເປັນນັກຮຽນ ໄດ້ກາຍເປັນຊາວນາ, ນັກລ້ຽງສັດ, ນັກຂັບລົດກະເສດ, ນັກປູກເຂົ້າທີ່ດີ ແລະ ພວມປະກອບສ່ວນຂອງຕົນເຂົ້າໃນພາລະກິດອັນສູງສົ່ງດັ່ງກ່າວ. ພວກເຂົາໄດ້ຈັດຕັ້ງຄະນະເຮັດວຽກລວມໝູ່ຂອງຊາວໜຸ່ມ, ໄດ້ຮ່ຳຮຽນຮູ້ວິຊາຕ່າງໆ; ມີຫລາຍຄົນທີ່ຍັງສືບຕໍ່ການຮ່ຳຮຽນ. ໃນພາກພື້ນແຫ່ງອື່ນໆຂອງປະເທດເຮົາທີ່ຍິ່ງໃຫຍ່ ມີນັກຮຽນນັບເປັນໝື່ນຄົນ ທີ່ໄດ້ປະຕິບັດຕາມແບບຢ່າງຂອງພວກນັກຮຽນຂອງ

ແຂວງກົດໂລມມາ .

ພັກເຮົາສະແດງຄວາມຂອບໃຈ ຕໍ່ຊາວໜຸ່ມທີ່ເຮັດໃຫ້ໂຊກຊາຕາກຳຂອງພວກເຂົາຕິດແໜ້ນກັບໂຄງການດຳເນີນ ການພັດທະນາກະສິກຳ; ພັກເຮົາຕີລາຄາສູງ ຕໍ່ນ້ຳໃຈລິເລີ່ມຂອງພວກເຂົາ ເຊິ່ງເປັນແບບຢ່າງອັນດີໃຫ້ແກ່ຊາວໜຸ່ມຂອງພວກເຮົາ.(ຕົບມືຢ່າງຍືດຍາວ.) ຂ້າພະເຈົ້າຄິດວ່າຊາວໜຸ່ມໂຊວຽດຫລາຍຄົນ ຈະໄດ້ປະຕິບັດຕາມແບບຢ່າງອັນດີ ຂອງພວກເຂົາ.(ຕົບມື.)

ວຽກການທີ່ຊາວກົມໂຊໂມນ ພວມປະຕິບັດຢູ່ ເພື່ອເຮັດໃຫ້ບັນດາມະຕິຂອງພັກກ່ຽວກັບການດັດປ່ຽນກະສິກຳຂອງເຂດດິນນາທີ່ບໍ່ດີໃນສາທາລະນະລັດ ລັດເຊຍ ໃຫ້ປາກົດເປັນຈິງ ນັ້ນມັນກໍ່ມີຄວາມໝາຍທີ່ສຳຄັນເຊັ່ນດຽວກັນ. ບັນດາເພື່ອນມິດ, ຈົ່ງຍົກສູງຄັນທຸງແຫ່ງກົມໂຊໂມນເລນິນ ໃນວຽກການນີ້ ເຊິ່ງເປັນວຽກການອັນສູງສົ່ງຂອງຊາວໜຸ່ມ.(ຕົບມືຢ່າງຍືດຍາວ).

ໃນຊຸມນີ້ ເພິ່ນໄດ້ເລີ່ມປະຕິບັດການເຮັດນາໃນລະດູໃບໄມ້ປົ່ງ; ຂໍອວຍພອນໃຫ້ຊາວໜຸ່ມໃນຊົນນະບົດ, ບັນດາຊາວ ຜູ້ອອກແຮງງານໃນນາລວມແລະນາລັດ ຈົ່ງປະສົບຜົນ ສຳເລັດໃນວຽກງານນີ້, ແລະໃນຂັ້ນສຸດທ້າຍ ຈົ່ງເກັບກ່ຽວເຂົ້າຢ່າງໄດ້ຜົນດີຫລາຍ ເພື່ອໃຫ້ເປັນຄວາມພໍໃຈແກ່ປວງ ປະຊາຊົນເຮົາ.(ຕົບມື.)

ເມື່ອເວົ້າກ່ຽວກັບບັນຫາຕ່າງໆ ທີ່ກ່ຽວຂ້ອງກັບຊົນນະບົດນັ້ນ ຂ້າພະເຈົ້າຢາກເວົ້າບາງຄຳ ໄປຍັງຊາວໜຸ່ມ ໃນຕົວ

ເມືອງຕ່າງໆ. ຕົວເມືອງກໍໄດ້ປະກອບສ່ວນຂອງຕົນ ເຂົ້າໃນຜົນສຳເລັດໃນການເຮັດນາແລະການລ້ຽງສັດ ເຊັ່ນດຽວກັນ. ຜົນງານຂອງຊາວນາ ແລະຜູ້ລ້ຽງສັດ ແມ່ນຂຶ້ນຢູ່ກັບວຽກງານຂອງກຳມະກອນເຊັ່ນດຽວກັນ. ອັນນັ້ນໝາຍຄວາມວ່າ ຊາວໜຸ່ມໃນຕົວເມືອງຕ່າງໆ ອາດຈະໄດ້ມີບົດບາດ ທີ່ສຳຄັນ ໃນດ້ານນີ້ ຄື ໂດຍການເຂົ້າຮ່ວມການແຂ່ງຂັນ ຮັບປະກັນໃຫ້ຊົນນະບົດມີທຸກສິ່ງທຸກຢ່າງທີ່ຈຳເປັນ – ເຄື່ອງຈັກ,ຝຸ່ນ,ເຄື່ອງກໍ່ສ້າງ, ເຄື່ອງຈັກສຳລັບການລ້ຽງສັດນັບລວມທັງການໃຫ້ການຊ່ວຍເຫລືອແກ່ການກໍ່ສ້າງໃນຊົນນະບົດ.

ບັນດາສະຫາຍ ! ພວກເຮົາຍັງມີອີກບັນຫາໜຶ່ງທີ່ສຳຄັນ. ຍ້ອນວ່າເສດຖະກິດ ແລະຊີວິດການເປັນຢູ່ ຂອງປະຊາຊົນໂຊວຽດພວມໄດ້ຮັບການປັບປຸງຂະຫຍາຍຕົວຢູ່ເລື້ອຍໆນັ້ນ ບັນຫາວ່າດ້ວຍການຈັດຕັ້ງການຄ້າ ແລະການຮັບໃຊ້ ພົນລະເມືອງຈຶ່ງມີຄວາມໝາຍສຳຄັນນັບມື້ ນັບຫລາຍຍິ່ງຂຶ້ນ. ຂ້າພະເຈົ້າເຄີຍໄດ້ເວົ້າມາແລ້ວວ່າ ບັນຫາເຫລົ່ານັ້ນ ມີຄວາມໝາຍສຳຄັນສຳລັບຄວາມພໍໃຈ, ສຸຂະພາບຂອງຊາວໂຊວຽດ ແລະໃນຂັ້ນສຸດທ້າຍ ສຳລັບການອອກແຮງງານ ຢ່າງມີຜົນດີເຊັ່ນດຽວດຽວກັນ. ຊາວໂຊວຽດທຸກຄົນຮູ້ເລື່ອງນີ້ຢ່າງຈະແຈ້ງ.ແຕ່ວ່າບັນດາສະຫາຍຮູ້ດີວ່າ ໃນດ້ານນີ້ຍັງມີຂໍ້ຂາດຕົກບົກພ່ອງ ຢ່າງຫລາຍ ຍ້ອນສາຍເຫດທີ່ມີລັກສະນະຕ່າງກັນ ຄື ທາງດ້ານວັດຖຸ, ການຈັດຕັ້ງ, ທາງດ້ານສິນທຳ. ພວກເຮົາຕ້ອງເຂົ້າໃຈວ່າເດັດຂາດພວກເຮົາຕ້ອງແກ້ໄຂບັນຫາເຫລົ່ານັ້ນ.(ຕົບມື).

ຂ້າພະເຈົ້າຄິດວ່າ ຊາວກົມໂຊໂມນຄວນເອົາໃຈໃສ່ ຕໍ່ບັນຫາວ່າດ້ວຍການລ້າ ແລະການຮັບໃຊ້ພົນລະເມືອງຢ່າງຖີ່ຖ້ວນ; ຊາວໜຸ່ມກົມໂຊໂມນຕ້ອງຄົ້ນຄິດວິໄຈ ສະພາບການ ຕົວຈິງຢ່າງເລິກເຊິ່ງ, ຕ້ອງສົ່ງຊາວໜຸ່ມກົມໂຊໂມນ ໄປເຮັດວຽກໃນຂົງເຂດເຫລົ່ານັ້ນ, ຕ້ອງຊ່ວຍເຫລືອແກ່ການອົບຮົມ ສັ່ງສອນຄົນຜູ້ທີ່ເຮັດວຽກໃນຂົງເຂດເຫລົ່ານັ້ນ, ຕ້ອງປຸກລູກຄວາມຄິດເຫັນຂອງສຽງມະຫາຊົນ, ຕ້ອງສະແດງນ້ຳໃຈລິເລີ່ມ. ຂ້າພະເຈົ້າຄິດວ່າ ອັນນັ້ນຈະເກີດມີຜົນດີໄດ້. ບັນດາເພື່ອນມິດ, ຂໍຈົ່ງລົງມືປະຕິບັດວຽກການນີ້ ! (ຕົບມືຢ່າງຍືດຍາວ.)

ອັນນັ້ນໝາຍຄວາມວ່າ ພວກເຮົາມີວຽກງານຫລາຍທີ່ສຸດ. ບາງຄົນອາດຄິດໄດ້ວ່າ ຂ້າພະເຈົ້າໄດ້ຕັ້ງບັນຫາ ຫລາຍໂພດໃຫ້ຊາວໜຸ່ມຕ້ອງແກ້ໄຂ. ແຕ່ວ່າກົມໂຊໂມນມີສະມາຊິກ ໑໙ ລ້ານຄົນ; ອັນນັ້ນເປັນກຳລັງແຮງທີ່ເຂັ້ມແຂງທີ່ສຸດ(ຕົບມືຢ່າງຍືດຍາວ ແລະຟົດຟື້ນ). ບັນດາສະຫາຍ ສາມາດແກ້ໄຂບັນຫາຫຼາຍຢ່າງໄດ້. (ຕົບມື.)

ສິ່ງທີ່ຮີບດ່ວນກວ່າໝູ່ໃນປະຈຸບັນນີ້ ກໍຄືມັນບໍ່ພຽງແຕ່ ຕ້ອງປະຕິບັດແຜນການທີ່ນັ້ນ ຫາກຍັງຕ້ອງປະຕິບັດ ແຜນການຢ່າງໄວກ່ວາທີ່ຄາດໝາຍອີກດ້ວຍ. ອັນນັ້ນມີຂີດບາດທີ່ສຳຄັນທີ່ສຸດແກ່ການປະຕິບັດແຜນການ ໕ ປີ ຢ່າງທົ່ວໆໄປ. ອັນນັ້ນເປັນຈຸດເລັ່ງຂອງວຽກການຂອງອົງການພັກ, ໂຊວຽດ, ເສດຖະກິດ, ກຳມະບານ, ກົມໂຊໂມນ, ອົງການຈັດຕັ້ງມະຫາຊົນຫຼາກໆອົງການ. ຊາວໜຸ່ມອາດຈະປະກອບສ່ວນທີ່ສຳຄັນຂອງຕົນ ເຂົ້າ

ໃນວຽກງານນີ້ເຊັ່ນດຽວກັນ; ພວກເຮົາຫວັງວ່າຊາວໜຸ່ມຈະບໍ່ເຮັດໃຫ້ພວກເຮົາຜິດຫວັງໄດ້ ! (ຕົບມືຢ່າງຍືດຍາວ).

II

ບັນດາສະຫາຍທີ່ຮັກແພງ ! ການປະຕິບັດແຜນການ ຂອງພວກເຮົາແມ່ນຂຶ້ນຢູ່ກັບຄວາມຮູ້, ລະດັບວັດທະນະທຳ, ລະດັບຄວາມຕື່ນຕົວທາງການເມືອງຂອງຄົນ.

ຄຳສັ່ງສອນຂອງມາກ-ເລນິນ ກ່ຽວກັບຂະບວນວິວັດ ແຫ່ງສັງຄົມເປັນເຂັມທິດຊີ້ທາງແກ່ພວກເຮົາ ທີ່ຈະນຳໄປສູ່ລະບອບກອມມູນິດ. ການຮ່ຳຮຽນວິດທະຍາສາດປະຕິວັດດັ່ງກ່າວຢ່າງເລິກເຊິ່ງແລະສູດກົກສູດປາຍ ມີບົດບາດທີ່ສຳຄັນທີ່ສຸດ. ການຮ່ຳຮຽນຢ່າງມີຄວາມຕື່ນຕົວ, ບໍ່ແມ່ນການທ່ອງບົດຮຽນອັນຕາຍຕົວ. ຄວາມຮູ້ທິດສະດີເປັນສິ່ງທີ່ດີກໍຕໍ່ເມື່ອ ຄວາມຮູ້ ດັ່ງກ່າວສາມາດກາຍເປັນການກະທຳຕົວຈິງໄດ້ທໍ່ນັ້ນ. ຊາວກົມໂຊໂມນເລນິນທຸກຄົນ ຄວນເປັນນັກຮົບທີ່ກ້າຫານທາງດ້ານການເມືອງທີ່ມີຄວາມສາມາດທີ່ຈະປະຕິບັດນະໂຍບາຍຂອງພັກ ແລະ ຕໍ່ສູ້ຢ່າງເດັດຂາດ ຕ້ານແນວຄິດຂອງສັດຕູ.(ຕົບມື.)

ພັກແລະກົມໂຊໂມນພວມເອົາໃຈໃສ່ຫລາຍ ຕໍ່ການຝຶກຝົນອົບຮົມຊາວໜຸ່ມທາງດ້ານສິນທຳ. ຄັນປາສະຈາກການຕໍ່ສູ້ຕ້ານປາກົດການທີ່ຄັດຄ້ານສັງຄົມ-ຈິດໃຈອັນຄັບແຄບ, ການກິນເຫຼົ້າ

ເມົາຢາ, ການລ່ວງລະເມີດລະບຽບວິໄນ ໃນການອອກແຮງງານ-ມັນບໍ່ອາດສາມາດທີ່ຈະຮັບປະກັນສິນທຳກອມມູນິດໄດ້ . ປາກົດການແຫ່ງຄວາມຂາດສິນທຳ-ຄວາມບໍ່ເອົາໃຈໃສ່ ຕໍ່ບັນຫາໃດໜຶ່ງ, ການອາໄສກິນນຳໝູ່, ຄວາມຢາກໄດ້ຮັບຫລາຍກວ່າທີ່ໄດ້ໃຫ້ແກ່ສັງຄົມ ທັງໝົດເຫລົ່ານັ້ນ ຕ້ອງເປັນຈຸດເລັ່ງຂອງການຕໍ່ສູ້ຂອງຊາວແລະມະຫາຊົນອັນກວ້າງຂວາງ.

ນະໂຍບາຍພາຍໃນຂອງພັກເຮົາ ແນໃສ່ປັບປຸງ ຊີວິດການເປັນຢູ່ຂອງປະຊາຊົນ ທາງດ້ານວັດຖຸແລະວັດທະນະທຳ ເຊິ່ງເປັນສິ່ງທີ່ແຍກອອກຈາກກັນບໍ່ໄດ້ເດັດຂາດ.

ພວກເຮົາຄັດຄ້ານການບູຊາຄວາມທຸກຍາກລຳບາກ; ພ້ອມກັນນັ້ນພວກເຮົາກໍຄັດຄ້ານການບູຊາ ຄວາມຮັ່ງມີ ເຊິ່ງໃນນັ້ນລ້ວນແຕ່ເງິນມີຄຸນຄ່າ, ຄັດຄ້ານຄວາມມີຈິດໃຈຄັບແຄບ ເຊິ່ງຖື (ຕາມຄວາມເວົ້າຂອງ ໂກກີ) ເງິນວ່າເປັນພະອາທິດ . ຄວາມຮັ່ງມີ ບໍ່ເປັນຈຸດປະສົງຂອງພວກເຮົາ, ຫາກພຽງແຕ່ເປັນພາຫະນະປະການໜຶ່ງສຳລັບການພັດທະນາມະນຸດທໍ່ນັ້ນ. ດ້ວຍເຫດນັ້ນ ການປັບປຸງສະວັດດີພາບຂອງມະນຸດຄວນສົມທົບກັບການສ້າງຄວາມເຂົ້າໃຈຈຸດປະສົງຂອງຊີວິດຢ່າງຖືກຕ້ອງ, ກັບການເສີມຂະຫຍາຍຄວາມຮັ່ງມີທາງດ້ານຈິດໃຈ ອີກດ້ວຍ.

ຍ້ອນເຫດທີ່ວ່າ ຊາວໂຊວຽດນັບລວມທັງຊາວໜຸ່ມ ມີການສຶກສາແລະມີຄວາມຮູ້ລະດັບສູງນັ້ນ ວຽກການອົບຮົມ ສັ່ງສອນຈຶ່ງຕ້ອງມີລັກສະນະພິເສດ.

ໃນຂົງເຂດນີ້ ຄວາມບໍ່ເອົາຫົວຊາ, ການເຮັດວຽກແບບຮູບ

ນອກເປັນສິ່ງຕ້ອງຄັດຄ້ານຢ່າງເດັດຂາດ; ພະນັກງານ ຂອງແນວຮົບທາງດ້ານແນວຄິດ ຕ້ອງປະຖົມວິທີການ ແບບເວົ້າແຕ່ປາກ, ວິທີການເວົ້າເລື່ອງທີ່ທຸກຄົນຮູ້ຈັກຢ່າງດີແລ້ວ; ພະນັກງານຜູ້ນັ້ນ ຕ້ອງໃຊ້ຄຳເວົ້າອັນງ່າຍໆ, ເຂົ້າໃຈໄດ້, ຄຳເວົ້ານັ້ນຕ້ອງມີຄວາມຄິດແລະຄວາມຮູ້ສຶກທີ່ມີຊີວິດຊີວາ. ອັນນັ້ນແມ່ນກ່ຽວກັບບັນຫາປະສິດທິພາບ ແລະຄຸນນະພາບ ຂອງວຽກງານເຊັ່ນດຽວກັນເປັນຕົ້ນແມ່ນໃນສະໜາມຮົບ ແຫ່ງທີ່ສຳຄັນຂອງການກໍ່ສ້າງລະບອບກອມມູນິດ ຄືໃນສະໜາມຮົບ ແຫ່ງການສ້າງຄົນໃໝ່.

ພັກແລະກົມໂຊໂມນສັ່ງສອນອົບຮົມພົນລະເມືອງ ໜຸ່ມນ້ອຍຂອງສັງຄົມເຮົາໃຫ້ເປັນລູກຫລານທີ່ຊື່ສັດ ຕໍ່ປິຕຸພູມໂຊວຽດ , ເປັນນັກຮົບທີ່ອົງອາດກ້າຫານ ເພື່ອພາລະກິດກອມມູນິດ. ລັກສະນະເຫລົ່ານັ້ນ ພວມກາຍເປັນການກະທຳຕົວຈິງ ຂອງຊາວໂຊວຽດນັບເປັນລ້ານໆຄົນ ເຊິ່ງເພີ່ມທະວີຄວາມ ເຂັ້ມແຂງຂອງປະເທດເຮົາແລະຄວາມຮັ່ງມີຂອງປວງປະຊາຊົນ.

ເມື່ອມໍ່ໆມານີ້ ໃນລະຫວ່າງການຢ້ຽມຢາມເຂດອູລານ, ຊີບີລີ ແລະພາກຕາເວັນອອກນັ້ນ ຂ້າພະເຈົ້າໄດ້ມີຄວາມຮູ້ສຶກປິຕິຍິນດີວ່າ ຊາວໂຊວຽດທີ່ດີເດັ່ນ ນັບລວມທັງຊາວໜຸ່ມ ພວມເຮັດວຽກຢ່າງດຸໝັ່ນ ໃນເຂດເຫລົ່ານັ້ນເຊິ່ງມີຊັບພະຍາກອນຫລາຍທີ່ສຸດ ແຕ່ເປັນເຂດທຸລະກັນດານທີ່ສຸດ. ເພິ່ນອາດເວົ້າໄດ້ວ່າ ຄວາມອົບອຸ່ນຂອງຫົວໃຈ ຂອງຊາວໜຸ່ມໂຊວຽດເຮັດໃຫ້ດິນຟ້າອາກາດໃນເຂດເຫລົ່ານັ້ນ ອົບອຸ່ນເຊັ່ນດຽວກັນ(ຕົບ

ມີຢ່າງຍຶດຍາວແລະຝຶດຝົນ).

ຂ້າພະເຈົ້າຍັງຈື່ຈຳໄດ້ເຖິງການ ພົບປະກັນກັບຄະນະຊາວໜຸ່ມໃນການກໍ່ສ້າງທາງລົດໄຟ ໃບການ-ອາມູນ ແລະ ກັບຊາວໜຸ່ມຂອງເມືອງກົມໂຊໂມນໃນແມ່ນ້ຳ ອາມູນ. ນັ້ນແມ່ນບັນດາຍິງຊາຍຊາວໂຊວຽດທີ່ດີແທ້. ພວກເຂົາໄດ້ເວົ້າກ່ຽວກັບວຽກງານແລະຊີວິດຂອງພວກເຂົາ ໂດຍມີຄວາມຮູ້, ໂດຍສະແດງຄວາມປາຖະໜາທີ່ຈະເຮັດວຽກໃຫ້ດີ; ພວກເຂົາຄິດເຖິງອະນາຄົດອັນສະຫງ່າງາມ. ມີເພງໜຶ່ງທີ່ມີເນື້ອໄນວ່າ "ພວກເຮົາເຮັດໃຫ້ດິນແດນແລະກາລະເວລາໄປຮັບໃຊ້ມະນຸດ, ພວກເຮົາເປັນຊາວໜຸ່ມເຈົ້າຂອງໜ່ວຍໂລກ" -ອັນນັ້ນ ເປັນຄຳເວົ້າທີ່ຖືກຕ້ອງຂອງພວກໜຸ່ມນ້ອຍເຫຼົ່ານັ້ນ. (ຕົບມືຢ່າງຍຶດຍາວ.)

ລັກສະນະອັນດີເດັ່ນຂອງຊາວ ໂຊວຽດ ກໍໄດ້ຮັບ ການສະແດງອອກພາຍໃນກອງທັບທີ່ມີກຽດຂອງພວກເຮົາ. ຊາວໜຸ່ມໂຊວຽດພວມຜ່ານການທົດສອບໃນກອງທັບນັ້ນ, ທຳຄວາມຮູ້ຈັກການຈັດຕັ້ງ, ລະບຽບວິໄນ; ພ້ອມກັນນັ້ນຊາວໜຸ່ມກໍສະແດງຄວາມຕື່ນຕົວ, ຄວາມອົດທົນແລະບາງຄັ້ງຄາວ ຍັງໄດ້ປະຕິບັດວິລະກຳອີກດ້ວຍ. (ຕົບມື.)

ໃນລະຫວ່າງການຢ້ຽມຢາມພາກຕາເວັນອອກນັ້ນ ຂ້າພະເຈົ້າໄດ້ທຳຄວາມຮູ້ຈັກກັບວຽກງານອັນໜັກໜ່ວງ ວ່າ ດ້ວຍການປ້ອງກັນຊາຍແດນ, ໄດ້ທຳຄວາມຮູ້ຈັກກັນກັບ ທະຫານປ້ອງກັນຊາຍແດນ, ເຊິ່ງເປັນທະຫານບົກແລະທະຫານເຮືອ.

ມັນອາດຈະເວົ້າໄດ້ວ່າ ຊາຍແດນຂອງປິຕຸພູມເຮົາ ຖືກປ້ອງກັນຢ່າງເຂັ້ມແຂງ, ຜູ້ທີ່ປ້ອງກັນຊາຍແດນ ເປັນຜູ້ທີ່ມີຄວາມຮູ້ແລະຄວາມຊຳນິຊຳນານຢ່າງແທ້ຈິງ.(ຕົບມືຢ່າງຍືດຍາວ). ພ້ອມກັນນັ້ນ ຂ້າພະເຈົ້າຢາກກ່າວເນັ້ນວ່າ ຊາວໜຸ່ມໂຊວຽດທີ່ປ້ອງກັນສັນຕິພາບ ແລະຄວາມສະຫງົບສຸກຂອງປະເທດເຮົານັ້ນ ພວກເຂົາໄດ້ມີທຸກສິ່ງທຸກຢ່າງ ເພື່ອສາມາດປະຕິບັດໜ້າທີ່ອັນສູງສົ່ງຂອງພວກເຂົາໄດ້.(ຕົບມືຢ່າງຍືດຍາວ.)

ບັນດາສະຫາຍ ! ຊາວໂຊວຽດທີ່ໄດ້ເຕີບໃຫຍ່ ໃນຄອບຄົວປະຊາຊົນບັນດາຊົນຊາດ ທີ່ຍຶດໝັ້ນໃນຫລັກການມາກຊິດ-ເລນີນິດ; ດ້ວຍເຫດນັ້ນ ພວກເຂົາຈຶ່ງເປັນນັກສາກົນນິຍົມ . ໃນວັນເວລາປະຈຸບັນນີ້ ມູນເຊື້ອສາກົນນິຍົມ ພວມກາຍເປັນການກະທຳຕົວຈິງຢ່າງກວ້າງຂວາງ ທີ່ບໍ່ເຄີຍມີມາກ່ອນ. ໃນການປະຕິບັດໜ້າທີ່ສາກົນນິຍົມນັ້ນ ຊາວໜຸ່ມເຮົາ ຢືນຢູ່ແນວໜ້າ ເໝືອນດັ່ງໃນດ້ານອື່ນໆ.

ຕົວແທນຂອງສະມາຄົມກົມໂຊໂມນເລນິນ ພວມເຮັດວຽກໃນປະເທດຕ່າງໆ ໑໐໐ ກ່ວາປະເທດ -ໃນບັນດາ ປະເທດສັງຄົມນິຍົມພາກຢູໂລບ, ໃນປະເທດກູຍບາທີ່ຫ່າງໄກ,ໃນຊາຍແດນ ຈັກກາລະ ແລະໃນປ່າດົງຂອງອາຊີອາຄະເນ, ໃນປະເທດອິນເດຍ, ໃນພາກພື້ນ ອາລັບຕາເວັນອອກ.ໃນພາກພື້ນຕ່າງໆຂອງໜ່ວຍພິພົບເຮົາ ລູກຫລານອັນແສນຮັກ ຂອງປະເທດເຮົາ ພວມປະຕິບັດໜ້າທີ່ອັນສູງສົ່ງ ຄື ກໍ່ສ້າງໂຮງ ຈັກໂຮງງານ, ສະຖານີພະລິດໄຟຟ້າ, ຂຸດຄົ້ນຊັບພະຍາກອນ ,

ເປັນໜໍ, ເປັນຄູສອນ. ບາງຄັ້ງຄາວວຽກການ ຂອງພວກ ເຂົາຍັງໄດ້ເປັນວິລະກຳຢ່າງແທ້ຈິງ, ບໍ່ເຫັນແກ່ຕົວ, ເພື່ອເປັນ ຜົນປະໂຫຍດແກ່ສັນຕິພາບ ແລະຄວາມກ້າວໜ້າພາລະດົນລະ ພາບແລະນິດຕະພາບຂອງບັນດາປະຊາຊາດ.(ຕົບມື). ວິລະ ກຳດັ່ງກ່າວໄດ້ຍົກຖານະຊື່ສຽງຂອງປະເທດເຮົາໃຫ້ສູງຍິ່ງຂຶ້ນ, ຊ່ວຍໃຫ້ເຂົ້າໃຈຄວາມຈິງກ່ຽວກັບລະບອບສັງຄົມນິຍົມ, ສິນທຳ ກອມມູນິດແລະອູດົມຄະຕິຂອງຊາວໂຊວຽດ.

ຂໍສະແດງຄວາມຂອບໃຈແກ່ຕົວແທນອັນດີ ຂອງປະຊາ ຊົນ ຂອງພວກເຮົາ.(ຕົບມື.) ພວກເຂົາຊ່ວຍເຫລືອແກ່ການ ເຮັດໃຫ້ນະໂຍບາຍເລນິນທີ່ຮັກຫອມສັນຕິພາບຂອງພັກ, ລັດໂຊ ວຽດປາກົດເປັນຈິງຂຶ້ນ; ພວກເຂົາພວມເຮັດໃຫ້ໜ້າທີ່ສາກົນ ນິຍົມປາກົດເປັນຈິງໃນພູກມື້, ໜ້າທີ່ສາກົນນິຍົມເຊິ່ງທ່ານເລ ນິນໄດ້ຕີລາຄາສູງທີ່ສຸດ.

ລັດທິສາກົນກຳມາຊີບ, ລັດທິສາກົນສັງຄົມນິຍົມເປັນກຳລັງ ແຮງທີ່ຍິ່ງໃຫ່ຍຂອງພວກເຮົາ. ອັນນັ້ນ ເປັນຜົນງານ ຂອງ ຄວາມເຊື່ອຖືຂອງພວກເຮົາ, ແກ່ນສານໜາກຫົວໃຈ ຂອງ ພວກເຮົາ, ຄັນທູງຂອງພວກເຮົາ. ຂໍຈົ່ງຍົກຄັນທູງອັນນີ້ ໃຫ້ ສູງຂຶ້ນ ! (ຕົບມືຢ່າງຍືດຍາວແລະຟົດຟົນ.)

III

ບັນດາສະຫາຍ ! ພໍ່ຂອງບັນດາສະຫາຍ ໄດ້ເສຍ ສະລະ

ຄວາມເປັນຫນຸ່ມຂອງພວກເຂົາໃຫ້ແກ່ມະຫາສົງຄາມປ້ອງກັນປິ
ຕຸພູມ ເຊິ່ງໄດ້ເປັນ "ການສູ້ຮົບເພື່ອຊີວິດ, ບໍ່ແມ່ນເພື່ອຊື່ສຽງ"
(ຕົບມື). ຫລາຍສິບປີ ໄດ້ຜ່ານໄປແລ້ວ. ໃນສູ່ມື້ນີ້ ເຄິ່ງ
ຫນຶ່ງຂອງພົນລະເມືອງຂອງປະເທດເຮົາ ຮູ້ສົງຄາມ ວ່າແມ່ນ
ຫຍັງ, ເກີດຄວາມທຸກທໍລະມານແນວໃດ ມາຈາກ ຮູບເງົາ,
ຫນັງສືພິມ, ປຶ້ມອ່ານຄຳເລົ່າເລື່ອງຂອງຜູ້ເຖົ້າ. ເຖິງ ເປັນ
ແນວນັ້ນກໍຕາມ ການສູ້ຮົບເພື່ອຊີວິດ ຍັງດຳເນີນຕໍ່ໄປ ຢູ່ ໃນ
ຫນ່ວຍພິພົບຂອງພວກເຮົາ. ຈຸດປະສົງຂອງນະໂຍບາຍ ຕ່າງ
ປະເທດຂອງພວກເຮົາ, ຈຸດປະສົງຂອງບັນດາຫລັກການທີ່ສຳ
ຄັນວ່າດ້ວຍການຢູ່ຮ່ວມກັນໂດຍສັນຕິ, ການລົດຄວາມ ເຄັ່ງຕຶງ
ທາງສາກົນລົງ ກໍຄື ການຮັບປະກັນໃຫ້ສັນຕິພາບຫມັ້ນຄົງ.

ໃນສູ່ມື້ນີ້ ການລົດຜ່ອນຄວາມເຄັ່ງຕຶງ ບໍ່ພຽງແຕ່ເປັນທິດ
ສະດີ ຫລືຄຳຂວັນທໍ່ນັ້ນ ຫາກຍັງໄດ້ກາຍເປັນການກະທຳ ຕົວ
ຈິງຫລາຍຢ່າງອີກດ້ວຍ. ໃນທະວີບຢູລົບ ມັນໄດ້ກາຍເປັນພື້ນ
ຖານຂອງສາຍພົວພັນກັນລະຫວ່າງປະເທດຕ່າງໆໃນດ້ານຕ່າງ
ຕ່າງ. ສາຍສຳພັນກັບໂຊວຽດ-ອາເມລິກາ ກໍໄດ້ຮັບ ການ
ປ່ຽນຮູບການໃຫ່ມ, ດີສຳລັບພາລະກິດແຫ່ງສັນຕິພາບເຖິງວ່າ
ໄດ້ມີອຸປະສັກຫລາຍປະການກໍຕາມ. ບັນດາປະຊາຊາດ ໄດ້ຖື
ເສັ້ນທາງແຫ່ງການລົດຜ່ອນຄວາມເຄັ່ງຕຶງລົງ ວ່າເປັນ ເສັ້ນ
ທາງ ອັນດຽວ ທີ່ຖືກຕ້ອງ ໃນ ຍຸກສະໄຫມ ທີ່ສັບສົນ ຂອງ-
ພວກເຮົາ.

ການລົດຜ່ອນໄພອັນຕະລາຍທາງທະຫານ, ການສະກັດກັ້ນ

ການແຂ່ງຂັນສ້າງອາວຸດ ເປັນສິ່ງທີ່ສຳຄັນແລະຮີບດ່ວນ ກ່ວາ ຫມູ່ໃນສູ່ມື້ນີ້. ບັນດາປະຊາຊາດ, ລັດຖະບານຈຳນວນຫລາຍ ຂອງໂລກຕ່າງກໍຮູ້ເລື່ອງນີ້ຢ່າງດີແລ້ວ. ໃນມໍ່ໆນີ້ ອ.ສ.ປ . ຈະໄດ້ໄຂສະມັດຊາໃຫ່ຍຄັ້ງທຳອິດໃນປະຫວັດສາດ ເຊິ່ງຈະ ໄດ້ພິຈາລະນາບັນຫາວ່າດ້ວຍການຈຳກັດກຳລັງອາວຸດ, ການ ປົດອາວຸດ. ຂໍໃຫ້ສະມັດຊາໃຫ່ຍຄັ້ງໜ້ານີ້ ຈົ່ງປະສົບຜົນສຳ ເລັດ; ພວກເຮົາຈະສົ່ງເສີມການບັນລຸຜົນສຳເລັດເຫລົ່ານັ້ນ.

ພວກເຮົາຮຽກຮ້ອງໃຫ້ປົດອາວຸດຢ່າງສິ້ນເຊີງ. ການເຈລະ ຈາກັນທີ່ໄດ້ດຳເນີນໄປເປັນເວລາ ໔໐ ປີໄດ້ເຂົ້າໃນສະພາບ ບໍ່ມີທາງອອກ–ອັນນັ້ນບໍ່ແມ່ນຍ້ອນການກະທຳ ອັນຜິດພາດຂອງ ພວກເຮົາ. ເຖິງເປັນແນວນັ້ນກໍຕາມ, ໃນໄລຍະ ເວລາດັ່ງ ກ່າວ ເພິ່ນສາມາດຕົກລົງຂໍ້ຕົກລົງກ່ຽວກັບການຈຳກັດ ກຳລັງ ອາວຸດໃນບາງດ້ານ; ນອກຈາກນັ້ນ ເພິ່ນຍັງສືບຕໍ່ ເຈລະຈາ ກັນກ່ຽວກັບບາງບັນຫາຢູ່ .

ໃນສະພາບການປະຈຸບັນນີ້ ການຕໍ່ສູ້ເພື່ອສັນຕິພາບ ມີຈຸດ ປະສົງທີ່ຈະລົດຜ່ອນໄພອັນຕະລາຍແຫ່ງສົງຄາມໂລກຄັ້ງໃຫ່ມ, ແຫ່ງການໃຊ້ອາວຸດປະລະມານູທີ່ສັງຫານຊີວິດ ໃນຂອບເຂດ ອັນກວ້າງຂວາງ. ດ້ວຍເຫດນັ້ນ ສ.ສ.ສ.ຊ. ພວມປະຕິບັດ ມາດຕະການຕ່າງໆ ເຊັ່ນ ດຳເນີນການເຈລະຈາກັນກັບ ອາ ເມລິກາກ່ຽວກັບບັນຫາວ່າດ້ວຍການຈຳກັດອາວຸດ ຍຸດທະສາດ ປະເພດບຸກລຸກ.

ດັ່ງທີ່ພວກເຈົ້າຮູ້ແລ້ວວ່າ ໃນມໍ່ໆມານີ້ ທ່ານແວນ ລັດຖະ

ມົນຕີຕ່າງປະເທດອາເມລິກາ ໄດ້ມາຢາມມົດສະກູຕາມຄຳສັ່ງຂອງປະທານາທິບໍດີ ກັດເຕີ. ພວກເຮົາໄດ້ພົບປະ ສົນທະນາກັນຢ່າງຖີ່ຖ້ວນ. ພວກເຮົາໄດ້ເຮັດບາດກ້າວໃຫ່ມ ປະການໜຶ່ງຕາມເສັ້ນທາງແຫ່ງການກຽມຕົກລົງ ກ່ຽວກັບການຈຳກັດອາວຸດຍຸດທະສາດລົງ. ບໍ່ແມ່ນວ່າບັນຫາທັງຫລາຍ ໄດ້ຖືກແກ້ໄຂແລ້ວ. ພວກເຮົາບໍ່ອາດຈະເຫັນດີນຳທ່າທີ ບາງຢ່າງຂອງຝ່າຍອື່ນ ໄດ້ເດັດຂາດ. ເຖິງເປັນແນວນັ້ນກໍຕາມ, ຂ້າພະເຈົ້າຄິດວ່າ ໂດຍອີງໃສ່ການຜ່ອນສັ້ນຜ່ອນຍາວ ຕໍ່ກັນແລະກັນພວກເຮົາຈະສາມາດສຳເລັດການກຽມຂໍ້ຕົກລົງໄດ້ ເຊິ່ງຈະໄດ້ຮັບປະກັນຄວາມປອດໄພຂອງທັງສອງຝ່າຍ ຢ່າງເທົ່າທຽມກັນໄດ້. ອັນນັ້ນຈະຊ່ວຍໃຫ້ແກ່ການສະກັດກັ້ນການແຂ່ງ ຂັນສ້າງອາວຸດ ແລະໂດຍຜ່ານອັນນັ້ນໄປຮອດ ການປັບປຸງສັນຕິພາບ.

ເປັນໄລຍະເວລາຫລາຍປີແລ້ວທີ່ ສ.ສ.ສ.ຊ. ຕໍ່ສູ້ ເພື່ອເຮັດຂໍ້ຕົກລົງກ່ຽວກັບການຫ້າມການທົດລອງອາວຸດປະລະມານູຢ່າງທົ່ວໄປແລະສິ້ນເຊີງ. ໃນປະຈຸບັນນີ້ ພວກເຮົາ ພວມດຳເນີນການເຈລະຈາກັນກັບອາເມລິກາແລະອັງກິດກ່ຽວກັບການຫ້າມການທົດລອງອາວຸດປະລະມານູໃນທຸກໆດ້ານ(ນັບລວມທັງຢູ່ໃຕ້ດິນ). ອັນເປັນທີ່ໜ້າພໍໃຈວ່າການເຈລະຈາກັນດັ່ງກ່າວໄດ້ບັນລຸຜົນສຳເລັດປະການໜຶ່ງໄດ້ ໃນໄລຍະຫລັງໆນີ້. ພວກເຮົາຫວັງວ່າການເຈລະຈາກັນດັ່ງກ່າວ ຈະໄດ້ຮັບຜົນສຳເລັດຂັ້ນສຸດທ້າຍໄດ້ ແລະວ່າພວກເຮົາຈະລົງນາມເຊັນຂໍ້ຕົກລົງສະ

ບັບໃໝ່ໄດ້ ເຊິ່ງຈະໄດ້ເປັນພົນສຳເລັດທີ່ສຳຄັນ ໃນການຕໍ່ສູ້ ເພື່ອສັນຕິພາບແລະຄວາມປອດໄພຂອງມະນຸດ.

ພ້ອມກັນນັ້ນບັນດາກຳລັງທີ່ຮັກຫອມສັນຕິພາບ ຂອງໜ່ວຍພົບ ເຮົາ ສ.ສ.ສ.ຊ. ພວມອອກແຮງຢ່າງເອົາຈິງເອົາຈັງເພື່ອ ຂັດຂວາງບໍ່ໃຫ້ອາວຸດສັງຫານຊີວິດໃນຂອບເຂດທີ່ກວ້າງຂວາງ - ຄືລູກລະເບີດ ເນີຕະລົງ ໄດ້ຮັບການສ້າງຂຶ້ນໄດ້. ທ່າທີທັດ ສະນະຂອງພວກເຮົາແມ່ນຈະແຈ້ງແລະເຂົ້າໃຈຢ່າງງ່າຍໄດ້- ພວກເຮົາຍັງມີເວລາທີ່ຈະເຮັດຂໍ້ຕົກລົງ ຂອງບັນດາ ປະເທດ ກ່ຽວກັບຄວາມປະຕິເສດທີ່ຈະສ້າງອາວຸດປະເພດນີ້ ເພື່ອເຮັດ ໃຫ້ມະນຸດຊາດພົ້ນອອກຈາກອາວຸດແນວນີ້.

ເປັນທີ່ໜ້າເສຍໃຈວ່າ ອາເມລິກາທີ່ໄດ້ກຽມຕົວເພື່ອສ້າງ ລູກລະເບີດເນີຕະລົງບໍ່ເຫັນດີນຳຂໍ້ສະເໜີຂອງພວກເຮົາ.ແຕ່ ວ່າໃນມື້ນີ້ ປະທານາທິບໍດີກັດເຕີໄດ້ປະກາດວ່າ ອາເມລິ ກາຍັງບໍ່ທັນໄດ້ຕັດສິນວ່າ ຈະສ້າງລູກລະເບີດເນີຕະລົງຫລືບໍ່? ດ້ວຍເຫດນັ້ນ ພວກເຮົາກໍຈະບໍ່ເລີ່ມສ້າງລູກລະເບີດເນີຕະລົງ ພວກເຮົາຈະຕິດຕາມເບິ່ງວໍຊິງຕັນໃນໄລຍະເວລາຕໍ່ໄປ.

ໂດຍອີງໃສ່ຫຼັກການແຫ່ງການປະຕິບັດທິດທາງທີ່ຈະລົດຜ່ອນ ໄພອັນຕະລາຍຂອງສົງຄາມປະລະມານູນັ້ນ ສ.ສ.ສ.ຊ.ກໍໄດ້ ຕົກລົງທີ່ຈະເຂົ້າຮ່ວມໃນສົນທິສັນຍາສາກົນວ່າດ້ວຍ ການຫ້າມ ອາວຸດປະລະມານູໃນອາເມລິກາລາຕິນ. ອັນນັ້ນໝາຍຄວາມ ວ່າ ພວກເຮົາກໍຄືກັບປະເທດອື່ນໆ ທີ່ມີອາວຸດປະລະມານູ ຈະ ໄດ້ຮັບຂໍ້ຜູກມັດວ່າຈະບໍ່ສົ່ງເສີມເຮັດໃຫ້ບັນດາປະເທດອາເມລິ

ກາລາຕິນປະກອບອາວຸດປະລະມານູໄດ້, ຈະບໍ່ໃຊ້ອາວຸດປະລະມານູເພື່ອໂຈມຕີບັນດາປະເທດພາຄີສົນທິສັນຍາສະບັບນັ້ນ.

ບັນດາສະຫາຍ ! ພວກເຮົາສືບຕໍ່ປະຕິບັດວຽກການເພື່ອເປັນຜົນປະໂຫຍດແກ່ສັນຕິພາບ; ປັຖຸພູມຂອງພວກເຮົາ ສືບຕໍ່ອອກແຮງໄປຕາມເສັ້ນທາງດັ່ງກ່າວນີ້.(ຕົບມືຢ່າງຍືດຍາວ).

ພວກເຮົາຈະໄດ້ພະຍາຍາມເຮັດໃຫ້ການປ່ຽນຍາມ ສາທາລະນະລັດສະຫະພັນເຢຍລະມັນຂອງຂ້າພະເຈົ້າ ບໍ່ພຽງ ແຕ່ຊ່ວຍໃຫ້ກຳນົດຮູບການຂອງການຮ່ວມມືກັນ ເຊິ່ງເກີດຜົນຕໍ່ກັນແລະກັນຢ່າງກວ້າງຂວາງທີ່ນັ້ນ(ອັນນັ້ນກໍເປັນເລື່ອງທີ່ສຳຄັນ) ຫາກຍັງຮັບໃຊ້ຜົນປະໂຫຍດ ຂອງການປັບປຸງ ການລຶດຜ່ອນຄວາມເຄັ່ງຕຶງແລະການປັບປຸງສັນຕິພາບ ເປັນຕົ້ນແມ່ນໃນທະວີບຢູລົບອີກດ້ວຍ.

ໃນໄລຍະເວລາຫລັງໆນີ້ ສັດຕູຂອງການລຶດຜ່ອນ ຄວາມເຄັ່ງຕຶງແລະການປົດອາວຸດໃນບັນດາປະເທດພາຄີກຸ່ມນາໂຕ-ບັນດານາຍພົນທີ່ຫລົ້ມການເມືອງແລະນັກການເມືອງທີ່ຫລົ້ມສົງຄາມ ໄດ້ເປີດບັ້ນຮົບເສກສັນປັ້ນແຕ່ງເລື່ອງທີ່ວ່າ ບັນດາປະເທດພາຄີສົນທິສັນຍາວໍຊໍ ມີ ກຳລັງທາງທະຫານສູງ ກວ່າກຸ່ມນາໂຕໃນທະວີບຢູລົບ, ວ່າ ສ.ສ.ສ.ຊ.ມີວຸດປະສົງແບບຮຸກຮານ ຕໍ່ທະວີບຢູລົບແລະອື່ນໆ. ແນ່ນອນວ່າ ອັນນັ້ນ ມັນ ບໍ່ເປັນຄວາມຈິງ. ຍິ່ງໄປກວ່ານັ້ນ ເລື່ອງນີ້ຍັງເປັນຜົນຮ້າຍ ທີ່ສຸດ, ຍ້ອນວ່າມັນໃຊ້ເລື່ອງນີ້ເພື່ອປິດບັງການກະທຳ ອັນເປັນອັນຕະລາຍແລະມີລັກສະນະຮຸກຮານຢ່າງແທ້ຈິງ ຄື ການເສີມ

ຂະຫຍາຍການແຂ່ງຂັນສ້າງອາວຸດ, ການເສີມຂະຫຍາຍ ກຳລັງທາງການທະຫານ, ການຫວ່ານຢາພິດແຫ່ງຄວາມຢ້ານກົວ, ຄວາມສົງໃສ, ຄວາມຄຽດຊັງກັນລົງໃສ່ບັນຍາກາດ ທາງສາກົນ.

ສ.ສ.ສ.ຊ. ໄດ້ຮັບເຄາະຮ້າຍອັນໜັກໜ່ວງກວ່າໝູ່ໃນສົງຄາມໂລກຄັ້ງທີ II; ດ້ວຍເຫດນັ້ນ ສ.ສ.ສ.ຊ. ຕ້ອງການປົກປັກຮັກສາສັນຕິພາບໃນທະວີບຢູໂຣບ, ຕ້ອງການເຮັດໃຫ້ທະວີບຢູໂຣບກາຍເປັນທະວີບແຫ່ງສັນຕິພາບທີ່ໝັ້ນຄົງ ແລະການຮ່ວມມືກັນຢ່າງສັນຕິ. ດ້ວຍເຫດນັ້ນປະເທດເຮົາໄດ້ເຮັດຫລາຍກ່ວາຜູ້ອື່ນເພື່ອເປັນຜົນປະໂຫຍດຂອງພາລະກິດດັ່ງກ່າວມາເທິງນັ້ນ. (ຕົບມືຍາວຍືດຍາວແລະຟົດຟື້ນ.)

ເປັນໄລຍະເວລາຫລາຍປີແລ້ວ ທີ່ໃນການເຈລະຈາກັນ ທີ່ນະຄອນວຽນນັ້ນ ພວກເຮົາຕໍ່ສູ້ເພື່ອຈຳກັດກຳລັງທະຫານຂອງຝ່າຍຕາເວັນຕົກແລະຝ່າຍຕາເວັນອອກລົງ (ໂດຍບໍ່ກໍ່ໃຫ້ເກີດຜົນຮ້າຍແກ່ການຮັບປະກັນຄວາມປອດໄພຂອງທັງສອງຝ່າຍ); ເຖິງເປັນແນວນັ້ນກໍຕາມ ຝ່າຍອື່ນຊ້ຳພັດພະຍາຍາມປ່ຽນ ສະພາບການໃຫ້ເປັນຜົນແກ່ພວກເຂົາ. ໃນມໍ່ໆມານີ້ ຝ່າຍອື່ນໄດ້ຍື່ນຂໍ້ສະເໜີໃໝ່ໆບາງປະການ ໃນການເຈລະຈາກັນ ທີ່ນະຄອນວຽນ. ເຖິງວ່າຂໍ້ສະເໜີເຫລົ່ານັ້ນ ເອົາໃຈໃສ່ຕໍ່ຄວາມຄິດເຫັນບາງຢ່າງຂອງບັນດາປະເທດສັງຄົມນິຍົມກໍຕາມ ຂໍ້ສະເໜີເຫລົ່ານັ້ນ ຍັງຮັກສາທ່າທີທີ່ຈະກໍ່ຜົນຮ້າຍແກ່ຝ່າຍສັງຄົມນິຍົມ. ພວກເຮົາຈະສືບຕໍ່ເຮັດວຽກຕໍ່ໄປ; ພວກເຮົາກຽມພ້ອມ

ທີ່ຈະເຮັດທຸກສິ່ງທຸກຢ່າງເທົ່າທີ່ຈະເຮັດໄດ້ ເພື່ອຊອກຫາຂໍ້ຕົກລົງກັນ ເພື່ອລຶດຜ່ອນຄວາມເຄັ່ງຕຶງທາງການທະຫານໃນພາກພື້ນຂອງໂລກ ເຊິ່ງເປັນໄພອັນຕະລາຍກ່ວາໝູ່ໃນໂລກ.(ຕົບມື.)

ທຸກຄົນຄວນຮູ້ວ່າ ສ.ສ.ສ.ຊ. ບໍ່ມີຈຸດປະສົງ ອັນມີລັກສະນະຮຸກຮານ, ບໍ່ສະສົມ "ກອງບຸກໂຈມຕີ". ເພື່ອບຸກລຸກຝ່າຍຕາເວັນຕົກໃນຢູໂລບ; ກົງກັນຂ້າມອັນນັ້ນ ສ.ສ.ສ.ຊ. ໄດ້ເຮັດແລະພວມເຮັດທຸກສິ່ງເພື່ອລຶດຜ່ອນຄວາມຄຽດ ແລະເພື່ອເຮັດຂໍ້ຕົກລົງກັນ. ເພື່ອເປັນຄວາມແຕກຕ່າງກັນກັບຝ່າຍນາໂຕນັ້ນ ພວກເຮົາບໍ່ເສີມຂະຫຍາຍກຳລັງທະຫານ ຂອງພວກເຮົາໃນຢູໂລບພາກກາງ ແລະ-ຂ້າພະເຈົ້າຢາກກ່າວເນັ້ນ ຢ່າງຈະແຈ້ງ-ບໍ່ມີຄວາມຕັ້ງໃຈທີ່ຈະເພີ່ມທະວີກຳລັງທະຫານຂອງພວກເຮົາແມ່ນແຕ່ຄົນດຽວ ຫລືລົດຖັງຄັນດຽວ. (ຕົບມື.)

ພວກເຮົາຮຽກຮ້ອງໃຫ້ບັນດາປະເທດຝ່າຍຕາເວັນຕົກປະຕິບັດຕາມແບບຢ່າງອັນດີນັ້ນ.

ການໂຄສະນາຂອງຝ່າຍຈັກກະພັດນິຍົມທີ່ໃສ່ຮ້າຍ ປ້າຍ ສີ ເນື້ອໃນແລະຈຸດປະສົງຂອງນະໂຍບາຍຕ່າງປະເທດຂອງ ສ.ສ.ສ.ຊ. ອ້າງວ່າທິດທາງຂອງປະເທດເຮົາ ທີ່ຈະນຳໄປສູ່ການລຶດຜ່ອນຄວາມເຄັ່ງຕຶງ, ການຢູ່ຮ່ວມກັນຢ່າງສັນຕິ ແມ່ນຝ່າຝືນຕໍ່ສາຍສຳພັນກັນກັບບັນດາປະເທດ ທີ່ໄດ້ຮັບການປົດປ່ອຍຈາກແອກລ່າເມືອງຂຶ້ນ,ກ່າວຫາວ່າ ສ.ສ.ສ.ຊ., ປະເທດສັງຄົມນິຍົມຕ່າງໆ ແຊກແຊງເຂົ້າໃນກິດຈະການພາຍໃນ

24/7 ຫ້າມຈຳໜ່າຍ

ຂອງປະເທດໜຸ່ມນ້ອຍ,ກ່າວຫາວ່າ ສ.ສ.ສ.ຊ.ປະຕິບັດ"ນະໂຍບາຍແຫ່ງການແຜ່ຂະຫຍາຍດິນແດນ", "ນະໂຍບາຍແຫ່ງການເຮັດຄວາມຕຶງຄຽດເຄັ່ງຮ້ອນຂຶ້ນ". ອັນນັ້ນລ້ວນແຕ່ເປັນຄວາມບໍ່ຈິງທັງນັ້ນ.

ພວກເຮົາຕ້ອງການສ້າງການຮ່ວມມືກັນຖານເພື່ອນມິດຢ່າງມີສິດເທົ່າທຽມກັນກັບບັນດາປະເທດເຫລົ່ານັ້ນ. ພວກເຮົາສະໜັບສະໜູນເອກະລາດຂອງບັນດາປະເທດເຫລົ່ານັ້ນ, ການເດີນຕາມເສັ້ນທາງແຫ່ງສັນຕິພາບ ແລະຄວາມກ້າວໜ້າທາງສັງຄົມ. ສ.ສ.ສ.ຊ. ຮຽກຮ້ອງໃຫ້ເຄົາລົບສິດ ອະທິປະໄຕຂອງບັນດາປະເທດເຫລົ່ານັ້ນ (ແລະປະເທດ ອື່ນໆ), ບໍ່ແຊກແຊງເຂົ້າໃນກິດຈະການພາຍໃນ, ເຄົາລົບ ຊາຍແດນຂອງປະເທດເຫລົ່ານັ້ນ.(ຕົບມື.)

ປະເທດຈັກກະພັດນິຍົມ ຊ້ຳພັດແຊກແຊງ ເຂົ້າໃນ ກິດຈະການພາຍໃນຂອງປະເທດເອກະລາດ ທີ່ໄດ້ຮັບ ການປົດປ່ອຍແລ້ວ, ແຊກແຊງພາຍໃຕ້ຮູບການທີ່ຖືກປິດບັງ,ແຊກແຊງເພື່ອຂັດຂວາງການພັດທະນາປະເທດ, ລ່ວງລະເມີດ ອະທິປະໄຕເພື່ອຮັບປະກັນຜົນປະໂຫຍດຂອງບໍລິສັດຜູກຂາດ ແລະພວກທະຫານຂອງມັນ.

ການແຊກແຊງດັ່ງກ່າວ ໝາຍເຖິງການໃຊ້ກຳລັງ ອັນຮຸນແຮງ, ການໜີບເຕັງສິດເສລີພາບຂອງປະຊາຊົນ. ການກະທຳແນວນີ້ ມີຫລາຍຮູບຫລາຍສີ-ນັບແຕ່ການກະທຳພາຍໃນປະເທດ (ປະເທດຈີລີ) ຈົນຮອດຮູບການຂອງການ ຮຸກຮານ

ໂດຍກົງ ເຊິ່ງການກະທຳອັນປ່າເຖື່ອນ ຂອງຜູ້ນຳ ອິດຊະລະແອນ ເປັນແບບຢ່າງອັນຈະແຈ້ງ.

ຂໍ້ເທັດຈິງພິສູດໃຫ້ເຫັນວ່າ ປະຊາຊົນຂອງບັນດາ ປະເທດໜຸ່ມນ້ອຍ ຍິ່ງປັບປຸງຄວາມສາມັກຄີກັນ,ປັບປຸງມິດຕະພາບກັບປະເທດສັງຄົມນິຍົມທີ່ສະໜັບສະໜູນພາລະກິດ ອັນເປັນທຳຂອງພວກເຂົາ, ບັນດາປະເທດໜຸ່ມນ້ອຍເຫລົ່ານັ້ນ ຍິ່ງມີຜົນສຳເລັດຫລາຍຂຶ້ນ ໃນການປ້ອງກັນເອກະລາດ ແລະ ຜົນປະໂຫຍດທາງດ້ານຊີວິດຂອງຕົນໄດ້.(ຕົບມື.)

ມີຕົວຢ່າງຫລາຍອັນສຳລັບເລື່ອງນີ້.ຍ້ອນຄວາມສາມັກຄີກັນຂອງບັນດາກຳລັງທີ່ກ້າວໜ້ານັ້ນ ເພິ່ນຈຶ່ງສາມາດ ຜາບແພ້ຄວາມພະຍາຍາມຂອງພວກຈັກກະພັດແລະລູກມື ທີ່ຈະໂຄ່ນລົ້ມອຳນາດປະຊາຊົນໃນປະເທດອັງໂກລາ, ທີ່ຈະແບ່ງແຍກ ປະເທດເອັດຕີໂອປີປະຕິວັດ.

ສັນຕິພາບ, ການບໍ່ແຊກແຊງເຂົ້າໃນກິດຈະການພາຍໃນ,ການເຄົາລົບເອກະລາດ, ພື້ນແຜ່ນດິນອັນຄົບຖ້ວນ, ຄວາມມີສິດເທົ່າທຽມກັນ, ການຮ່ວມມືກັນຢ່າງໄດ້ຜົນຕໍ່ກັນແລະກັນທັງໝົດເຫລົ່ານັ້ນ ເປັນພາກສ່ວນທີ່ຈຳເປັນ ຂອງການ ລົດຜ່ອນຄວາມຕຶງຄຽດແລະສັນຕິພາບທີ່ຖາວອນ. ອັນນັ້ນ ເປັນນະໂຍບາຍຂອງພວກເຮົາໃນທະວີບຢູໂລບ, ໃນອາຟະລິກາ, ອາຊີ,ອາເມລິກາລາຕິນ, ໃນພາກພື້ນອື່ນໆຂອງໂລກ.ຜູ້ໃດທີ່ຄິດວ່າຈະສາມາດເຮັດໃຫ້ ສ.ສ.ສ.ຊ. ຫັນຫລັງໃຫ້ແກ່ທິດທາງດັ່ງກ່າວນັ້ນ ຜູ້ນັ້ນຄິດຢ່າງຜິດພາດ .(ຕົບມື.)

ເມື່ອວິເຄາະສະພາບການໃນທົ່ວໂລກນັ້ນ ພວກເຮົາ ເຊື່ອວ່າວັນເວລາໄດ້ມາເຖິງແລ້ວ ທີ່ພວກເຮົາຕ້ອງຄິດເຖິງ ການຍຸດຕິການເສີມຂະຫຍາຍກຳລັງທະຫານແລະກຳລັງອາວຸດທາງດ້ານຈຳນວນແລະຄຸນນະພາບ ຂອງບັນດາປະເທດ ທີ່ມີກຳລັງທາງການທະຫານຢ່າງຫລວງຫລາຍ ເພື່ອສ້າງເງື່ອນໄຂ ແກ່ການຈຳກັດກຳລັງທາງການທະຫານເຫລົ່ານັ້ນ ໃນໄລຍະເວລາຕໍ່ໄປ. ພວກເຮົາຮຽກຮ້ອງໃຫ້ພິຈາລະນາໂຄງການ ການປະຕິບັດມາດຕະການດັ່ງຕໍ່ໄປນີ້ (ໃນໄລຍະເວລາທີ່ກຳນົດໄວ້):

- ການຍຸດຕິຜະລິດອາວຸດປະລະມານູທຸກປະເພດ ;
- ການຍຸດຕິຜະລິດແລະການຫ້າມອາວຸດທຸກປະເພດ ທີ່ສັງຫານຊີວິດໃນຂອບເຂດອັນກວ້າງຂວາງ ;
- ການຍຸດຕິສ້າງອາວຸດທຳມະດາຊະນິດໃຫ່ມ ທີ່ມີຄວາມເຂັ້ມແຂງອັນໃຫ່ຍ ;
- ການປະຕິເສດທີ່ຈະເພີ່ມທະວີກອງທະຫານ ແລະກຳລັງອາວຸດຂອງບັນດາປະເທດພາຄີ ຄະນະມົນຕີຄວາມ ໝັ້ນຄົງຂອງ ອ.ສ.ປ. ແລະບັນດາປະເທດທີ່ມີຂໍ້ຕົກລົງກັນທາງການທະຫານກັບປະເທດເຫລົ່ານັ້ນ.

ແນ່ນອນວ່າ ການຕົກລົງກ່ຽວກັບເລື່ອງນີ້ ບໍ່ເປັນເລື່ອງອັນງ່າຍດາຍ. ພວກເຮົາໄດ້ສະເຫນີແລ້ວວ່າ ພວກເຮົາ ຕ້ອງເລີ່ມຕົ້ນປະຕິບັດມາດຕະການເຫລົ່ານັ້ນ ໂດຍນຳເອົາ ບັນຫາໜຶ່ງເປັນຕົ້ນຕໍເຊັ່ນ ການຍຸດຕິສ້າງອາວຸດປະລະມານູ, ການປະຕິບັດມາດຕະການເຫລົ່ານັ້ນ ຈະບໍ່ໄດ້ລ່ວງລະເມີດການດຸ່ນ

ດຽວກັນລະຫວ່າງບັນດາປະເທດທີ່ໄດ້ມີແລ້ວ, ຈະບໍ່ໄດ້ ກໍ່ໃຫ້ເກີດຜົນຮ້າຍແກ່ປະເທດໃດໜຶ່ງ.

ພວກເຮົາບໍ່ອາດຈະລືມໄດ້, ແລະກໍ່ບໍ່ຄວນລືມວ່າໂລກເຮົາຍັງຖືກນາບຂູ່ດ້ວຍໄພອັນຕະລາຍແຫ່ງອາວຸດປະລະມານູ, ເຊິ່ງນາບຂູ່ໂຊກຊາຕາຂອງບັນດາປະຊາຊາດ. ເພື່ອລຶບລ້າງໄພອັນຕະລາຍດັ່ງກ່າວ ບັນດາປະເທດທີ່ມີອາວຸດປະລະມານູ ຄວນຮ່ວມກັນອອກແຮງ. ແຕ່ວ່າ ແຕ່ລະປະເທດ ກໍ່ຄວນປະກອບສ່ວນຂອງຕົນເຊັ່ນດຽວກັນ. ສ.ສ.ສ.ຊ. ປະກາດ ຢ່າງຈະແຈ້ງວ່າ ພວກເຮົາຄັດຄ້ານການໃຊ້ອາວຸດປະລະມານູ; ອາວຸດປະລະມານູເປັນອາວຸດປ້ອງກັນຕົວຂັ້ນສຸດທ້າຍ ທີ່ພວກເຮົາໃຊ້ໄດ້ກໍ່ຕໍ່ເມື່ອມີການຮຸກຮານຕໍ່ປະເທດເຮົາຫຼືຕໍ່ປະເທດພັນທະມິດຂອງພວກເຮົາ ໂດຍປະເທດອື່ນທີ່ມີອາວຸດປະລະມານູ ທີ່ນັ້ນ. ສ.ສ.ສ.ຊ. ໄດ້ເຮັດແລະພວມເຮັດທຸກສິ່ງທຸກຢ່າງ ເພື່ອຂັດຂວາງບໍ່ໃຫ້ສົງຄາມປະລະມານູເກີດຂຶ້ນໄດ້ເພື່ອຂັດຂວາງບໍ່ໃຫ້ມະນຸດກາຍເປັນຜູ້ຮັບເຄາະຮ້າຍຍ້ອນລູກລະເບີດປະລະມານູບໍ່ວ່າຂັ້ນທີໜຶ່ງຫຼືຂັ້ນທີສອງກໍ່ຕາມ. ອັນນັ້ນເປັນທິດທາງທີ່ໝັ້ນຄົງຂອງພວກເຮົາ; ພວກເຮົາຈະປະຕິບັດທິດທາງນີ້ໃນໄລຍະເວລາຕໍ່ໄປ. (ຕົບມື ຢ່າງຍືດຍາວ.)

ຕາມຄວາມຄິດເຫັນຂອງພວກເຮົາ, ມະນຸດຊາດຕ້ອງມີຈຸດເລັ່ງທີ່ຈະປົກປັກຮັກສາດິນແດນຂອງພວກເຮົາ, ມອບດິນແດນນັ້ນທີ່ມີຄວາມຮັ່ງມີ, ຄວາມສວຍງາມທີ່ບໍ່ຖືກເຜົາຜານ ດ້ວຍແປວໄພແຫ່ງສົງຄາມປະລະມານູ ໃຫ້ແກ່ລຸ້ນຄົນໃໝ່. ສ.ສ.

ສ.ຊ. ເຮັດທຸກສິ່ງທຸກຢ່າງເທົ່າທີ່ຈະເຮັດໄດ້-ເພື່ອປົກປັກຮັກສາສັນຕິພາບ. ບັນດາເພື່ອນມິດທີ່ໜຸ່ມນ້ອຍ, ພວກເຮົາເຊື່ອໝັ້ນວ່າ ອະນາຄົດຂອງພວກເຈົ້າ ຈະເປັນອະນາຄົດ ແຫ່ງການອອກແຮງງານຢ່າງເສລີ ໃນໜ່ວຍພິພົບ ທີ່ມີເສລີພາບ. (ຕົບມືຢ່າງຍືດຍາວແລະຟົດຟື້ນ.)

X X X

ບັນດາສະຫາຍ ! ກອງປະຊຸມຄັ້ງນີ້ ໄດ້ໄຂຂຶ້ນໃນວັນເວລາເມື່ອກົມໂຊໂມນ ກຽມຕົວເພື່ອສະເຫລີມສະຫລອງ ວັນສະຖາປະນາຄົບຮອບ ໕໐ ປີ (ຕົບມື). ແນ່ນອນວ່າປະເທດເຮົາຈະໄດ້ສະເຫລີມສະຫລອງວັນຄົບຮອບນັ້ນ ຢ່າງສົມກຽດ, ສ່ວນຊາວໜຸ່ມນັ້ນ ຂໍອວຍພອນໃຫ້ຊາວໜຸ່ມ ຈົ່ງຕ້ອນຮັບ ວັນຄົບຮອບດ້ວຍຜົນສຳເລັດໃຫມ່ໃນການອອກແຮງງານ(ຕົບມື).

ສະມາຄົມຊາວໜຸ່ມກອມມູນິດເລນິນ ມີອາຍຸຫລາຍ ພໍສົມຄວນ; ແຕ່ວ່າຈິດໃຈຂອງກົມໂຊໂມນຍັງໜຸ່ມນ້ອຍ ຢູ່ເລື້ອຍໆ. (ຕົບມື.) ກົມໂຊໂມນເລນິນເປັນຜູ້ຊ່ວຍເຫລືອທີ່ຊື່ສັດ ຂອງພັກເຮົາ ກົມໂຊໂມນໄດ້ສືບທອດບົດຮຽນ ຂອງພັກເຮົາ ແລະໝູນໃຊ້ບົດຮຽນເຫລົ່ານັ້ນ ໃນກິດຈະກຳຂອງຕົນ,ອັນນັ້ນເປັນເລື່ອງທຳມະດາ. ພັກແລະສະມາຄົມກົມໂຊໂມນ ມີຈຸດປະສົງອັນດຽວ ຄື ກອມມູນິດ, ມີເສັ້ນທາງສາຍດຽວ ຄື ເສັ້ນທາງ

ແຫ່ງເລນິນ, ເສັ້ນທາງແຫ່ງການຮັບໃຊ້ປະຊາຊົນ(ຕົບມືຢ່າງຍືດຍາວແລະຟົດຟື້ນ).

ພວກເຈົ້າມີໜ້າທີ່ ທີ່ຈະສຳເລັດການປະຕິບັດພາລະກິດອັນຍິ່ງໃຫຍ່ ເຊິ່ງແມ່ນພໍ່ແມ່ປູ່ຍ່າຕາຍາຍ ໄດ້ເປັນຜູ້ເລີ່ມປະຕິບັດ. ພວກເຈົ້າຕ້ອງເປັນຜູ້ສືບທອດມູນເຊື້ອຂອງພວກເພິ່ນ ຢ່າງສົມກຽດ; ພວກເຈົ້າຈົ່ງຍົກສູງຄັນທຸງກອມມູນິດ (ຕົບມືຢ່າງຟົດຟື້ນ).

ກົມໂຊໂມນເລນິນທີ່ເປັນກອງນຳໜ້າຂອງຊາວໜຸ່ມ ໂຊວຽດ ຈົ່ງໝັ້ນຍືນ ! (ຕົບມືຢ່າງຟົດຟື້ນ); ຄົນລຸ່ນໃຫ່ມຂອງປະເທດເຮົາ ຈົ່ງໝັ້ນຍືນ!(ຕົບມືຢ່າງຟົດຟື້ນ ຜູ້ເຂົ້າຮ່ວມກອງປະຊຸມພາກັນລຸກຂຶ້ນຢືນ ແລະຮ້ອງວ່າ "ເລນິນ, ພັກ, ກົມໂຊໂມນ ".)

ພ.ກ.ສ.ຊ., ພັກເລນິນ, ຈົ່ງໝັ້ນຍືນ ! (ຕົບມືຢ່າງຟົດຟື້ນ, ມີຄຳຮ້ອງວ່າ "ພ.ກ.ສ.ຊ. ໝັ້ນຍືນ,")

ປະຊາຊົນໂຊວຽດຜູ້ສ້າງກອມມູນິດ ຈົ່ງໝັ້ນຍືນ ! (ຕົບມືຢ່າງຍືດຍາວແລະຟົດຟື້ນ, ມີຄຳຮ້ອງວ່າ "ພ.ກ.ສ.ຊ, ຄະນະບໍລິຫານງານສູນກາງພັກເລນິນ, ກົມໂຊໂມນເລນິນ,ໝັ້ນຍືນ, "ເລນິນ ຍືນຍົງຢູ່ !") .

ເຫລັ້ມທີ ໗,

ໜ້າ ໒໙໓-໓໐໑

ສານເຖິງ ຜູ້ເຂົ້າຮ່ວມກອງປະຊຸມສະໄຫມສາມັນ ຂອງສະຫະພັນປະຊາທິປະໄຕແມ່ຍິງສາກົນ

ຂໍສະແດງຄວາມເຄົາລົບມາຍັງບັນດາຕົວແທນຂອງອົງການ ຜູ້ຍິງຂອງທະວີບທັງຫລາຍ ທີ່ມາໃນມົດສະກູເມືອງຫລວງຂອງ ລັດສັງຄົມນິຍົມຂອງພວກເຮົາ ເພື່ອເຂົ້າຮ່ວມກອງປະຊຸມ ສະໄຫມສາມັນ ຂອງສະຫະພັນ ປະຊາທິປະໄຕ ແມ່ຍິງສາກົນ.

ເຫມືອນດັ່ງທຸກໆຄົນ ທີ່ສະຫນັບສະຫນູນເສລີພາບ ແລະ ຄວາມກ້າວຫນ້າທາງສັງຄົມ ບັນດາຊາວໂຊວຽດຕີລາຄາສູງຕໍ່ ການເຄື່ອນໄຫວອັນສູງສົ່ງ ຂອງສະຫະພັນ ປະຊາທິປະໄຕແມ່ ຍິງສາກົນ ເຊິ່ງຕໍ່ສູ້ປ້ອງກັນສິດອັນເປັນທຳຂອງຜູ້ຍິງ ແລະລູກ ຫລານທີ່ຈະດຳລົງຊີວິດຢູ່ ຢ່າງສັນຕິ ທີ່ປາສະຈາກ ການກົດຂີ່ ແລະການຂູດຮີດ.

໖໐ ປີກ່ອນຫນ້ານີ້ມະຫາປະຕິວັດ ສັງຄົມນິຍົມ ເດືອນຕຸລາ ໄດ້ຮັບປະກັນສິດສະເຫມີພາບຂອງຜູ້ຍິງ. ລັດຖະທຳມະນູນສະ ບັບໃຫມ່ຂອງ ສ.ສ.ສ.ຊ. ກໍໄດ້ຮັບປະກັນສິດດັ່ງກ່າວ ນັ້ນ. ພວກເຮົາ, ຊາວໂຊວຽດ, ຮູ້ສຶກທະນົງໃຈວ່າ ເປັນເທື່ອທຳ ອິດ ໃນປະຫວັດສາດຂອງມະນຸດ ລັດເຮົາໄດ້ສາມາດຮັດໃຫ້

ບັນດາຜູ້ຍິງເຂົາຮ່ວມຕາມຄວາມອາດສາມາດ ຂອງພວກເຂົາ ຢ່າງຄົບຖ້ວນ ໃນການກໍ່ສ້າງຊີວິດໃຫມ່ ທີ່ສົມຕົສຸກ.

ບັນດາຜູ້ຍິງໂຊວຽດ, ປວງປະຊາຊົນໂຊວຽດ ຕັ້ງໃຈທີ່ຈະ ສະຫນັບສະຫນູນ ການຕໍ່ສູ້ຢ່າງເອົາຈິງເອົາຈັງຂອງສະຫະພັນ ປະຊາທິປະໄຕ ແມ່ຍິງສາກົນ ຕ້ານໄພອັນຕະລາຍ ແຫ່ງສົງ ຄາມ, ເພື່ອສະກັດກັ້ນການແຂ່ງຂັນສ້າງອາວຸດ.ມັນອາດເວົ້າ ໄດ້ວ່າ ໂດຍດຳເນີນການຕໍ່ສູ້ນັ້ນ ສະຫະພັນຂອງຜູ້ຍິງໄດ້ສ່ອງ ແສງເຖິງຄວາມມຸ່ງມາດປາຖະຫນາ ຂອງບັນດາຜູ້ຍິງແລະບັນ ດາຄົນຜູ້ທີ່ຈິງໃຈຂອງຫນ່ວຍພິພົບຂອງພວກເຮົາ.

ໃນສູ່ນັ້ນ ການກະທຳຮ່ວມກັນ ແລະການຮ່ວມມືກັນຂອງບັນ ດາກຳລັງທາງສັງຄົມ ທີ່ຕໍ່ສູ້ເພື່ອການປົດອາວຸດ,ການລົບລ້າງ ບໍ່ເກີດແຫ່ງຄວາມເຄັ່ງຕຶງ ມັນມີບົດບາດທີ່ສຳຄັນເປັນພິເສດ. ການລຶດຜ່ອນງົບປະມານ ທາງການທະຫານ, ການກ້າວຂຶ້ນສູ່ ການປົດອາວຸດ, ການເຮັດໃຫ້ກອງທຶນອັນໃຫຍ່ຫລວງ ທີ່ໃຊ້ ຈ່າຍສຳຫລັບການແຂ່ງຂັນສ້າງອາວຸດ ກ້າວຂຶ້ນສູ່ການປະຕິບັດ ເປົ້າຫມາຍແຫ່ງການກໍ່ສ້າງນັ້ນ ທັງຫມົດເຫລົ່ານັ້ນ ຈະໄດ້ໄຂ ຄວາມອາດສາມາດທີ່ແທ້ຈິງ ໃຫ້ແກ່ການແກ້ໄຂບັນດາບັນຫາທີ່ ເຄັ່ງຮ້ອນ ທາງດ້ານສັງຄົມ ນັບລວມທັງບັນຫາວ່າດ້ວຍ ການ ປັບປຸງຖານະຂອງຜູ້ຍິງ ແລະລູກຫລານ.

ບັນດາຜູ້ຍິງທົ່ວໂລກຄວນເຊື່ອຫມັ້ນວາ ສ.ສ.ສ.ຊ. ໄດ້ ເຮັດແລະພວມເຮັດທຸກສິ່ງທຸກຢ່າງ ເທົ່າທີ່ຈະເຮັດໄດ້ເພື່ອຂັດ ຂວາງ ບໍ່ໃຫ້ສົງຄາມໂລກຄັ້ງໃຫມ່ເກີດຂຶ້ນ, ສະກັດກັ້ນ ການ

ແຂ່ງຂັນສ້າງອາວຸດ, ຮັບປະກັນຊີວິດອັນສັນຕິແກ່ບັນດາປະເທດ ແລະບັນດາປະຊາຊາດ. ຜູ້ຍິງໂຊວຽດຂອງພວກເຮົາພວມປະກອບສ່ວນຂອງຕົນທີ່ສົມກຽດ ເຂົ້າໃນການແກ້ໄຂບັນດາບັນຫາທີ່ສູງສົ່ງເຫລົ່ານັ້ນ.

ຂໍອວຍພອນໃຫ້ບັນດາຜູ້ເຂົ້າຮ່ວມກອງປະຊຸມ ຈົ່ງໄດ້ຮັບຜົນສຳເລັດ ໃນວຽກງານຂອງຕົນ.

ລ. ບະເລັດຊະເນັບ

ວັນທີ ໑໕ ເດືອນພຶດສະພາ
ປີ ໑໙໗໘
ເຫລັ້ມທີ ໗,
ໜ້າ ໓໔໗-໓໔໘

ສານເຖິງແຂກແລະຜູ້ເຂົ້າຮ່ວມ
ງານບຸນຮູບເງົາສາກົນຄັ້ງທີ V ທີຕັດຊະເກັນ

ຂໍສະແດງຄວາມເຄົາລົບຢ່າງບໍລິສຸດໃຈ ມາຍັງບັນດາ ຜູ້ເຂົ້າຮ່ວມແລະແຂກຂອງງານບຸນຮູບເງົາສາກົນ ຄັ້ງທີ V ໃນນະຄອນຕັດຊະເກັນ.

ການຈັດຕັ້ງງານບຸນໃນຕັດຊະເກັນໄດ້ກາຍເປັນປະເພນີອັນດີງາມແລະມີພົນດີ. ດັ່ງທີ່ຮູ້ກັນດີວ່າ ການພົບປະກັນລະຫວ່າງບັນດານັກຮູບເງົາຂອງສາມທະວີບໄດ້ດຳເນີນໄປ ໃນບັນຍາກາດແຫ່ງມິດຕະພາບ ແລະການຮ່ວມມືກັນທາງດ້ານສິລະປະ. ການພົບປະກັນເຫລົ່ານັ້ນ ແນໃສ່ປະຕິບັດການປັບປຸງສັນຕິພາບ ແລະຄວາມປອດໄພໃນໜ່ວຍພິພົບຂອງພວກເຮົາ, ການພັດທະນາທາງສັງຄົມແລະວັດທະນະທຳຂອງບັນດາປະຊາຊາດ, ເສີມຂະຫຍາຍການຕໍ່ສູ້ ເພື່ອເອກະລາດແຫ່ງຊາດແລະປະຊາທິປະໄຕ; ການພົບປະກັນເຫລົ່ານັ້ນ ກໍໄດ້ຮັບໃຊ້ຜົນປະໂຫຍດຂອງການປັບປຸງສາຍພົວພັນກັນລະຫວ່າງນັກສິລະປະ ທີ່ ກ້າວໜ້າຂອງອາຊີ, ອາຟະລິກາ ແລະ ອາເມລິກາລາຕິນ, ລະຫວ່າງນັກຮູບເງົາຂອງບັນດາປະເທດຕ່າງໆ.

ປະເທດເຮົາທີ່ໄດ້ສະເຫລີມສະຫລອງວັນປະຕິວັດ ເດືອນຕຸ

ລາຄົບຮອບ ຜ໐ ປີ ພວມຍຶດໝັ້ນໃນຫລັກການ ແຫ່ງນະໂຍບາຍຂອງເລນິນທາງຊົນຊາດ ທີ່ໄດ້ໄຂເສັ້ນທາງທີ່ຈະນຳໄປສູ່ຄວາມມີສິດສະເໜີພາບ ຂອງບັນດາຊົນຊາດຊົນເຜົ່າ. ລັດຖະທຳມະນູນສະບັບໃຫ່ມຂອງ ສ.ສ.ສ.ຊ. ເປັນເອກະສານທີ່ໄດ້ປັບປຸງຫລັກການເຫລົ່ານັ້ນ ທາງດ້ານກົດໝາຍ. ພວກເຮົາຍຶດໝັ້ນໃນທ່າທີແຫ່ງການສະໜັບສະໜູນ ບັນດາປະຊາຊາດທີ່ຕໍ່ສູ້ຕ້ານການກົດຂີ່ທາງຊົນຊາດ, ຕໍ່ສູ້ເພື່ອສິດທີ່ຈະຕັດສິນ ໂຊກຊາຕາຂອງຕົນໂດຍຕົນເອງ.

ສິລະປະຂອງຮູບເງົາມີໜ້າທີ່ ທີ່ຈະສົ່ງເສີມການແກ້ໄຂບັນດາບັນຫາອັນຮີບດ່ວນ ຂອງຍຸກສະໄໝນີ້. ສິລະປະ ດັ່ງກ່າວອາດກາຍເປັນປັດໃຈທີ່ສຳຄັນແຫ່ງການປັບປຸງ ຄວາມໄວ້ເນື້ອເຊື່ອໃຈກັນ ແລະຄວາມເຂົ້າໃຈກັນລະຫວ່າງບັນດາ ປະຊາຊາດແລະປະເທດຕ່າງໆ. ດ້ວຍເຫດນັ້ນ ນັກຮູບເງົາ ມີໜ້າທີ່ຮັບຜິດຊອບອັນໃຫ່ຍຫລວງໃນວຽກການ ແລະ ໃນການປາກເວົ້າຂອງພວກເຂົາ.

ບັນດາເພື່ອນມິດທີ່ຮັກແພງ, ຂໍສະແດງຄວາມອວຍພອນໃຫ້ການພົບປະກັນຂອງພວກທ່ານໃນຊຸດຊະເບັກກີສະຖານໂຊວຽດຈົ່ງໄດ້ຮັບຜົນສຳເລັດແລະຈົ່ງສົ່ງເສີມການແຕ່ງວັນ ນະຄະດີທີ່ມີຊຸດົມຄະຕິອັນສູງສົ່ງ; ຂໍອວຍພອນໃຫ້ພວກທ່ານຈົ່ງຮັບຜົນສຳເລັດອັນໃຫ່ຍໃນວຽກການທາງສິລະປະຂອງພວກທ່ານ.

ວັນທີ ໒໓ ເດືອນພຶດສະພາປີ ໑໙໗໘. ລ. ບະເລັດຊະເນັບ

ເຫລັ້ມທີ ກ, ໜ້າ ໕໒໑

ສານອວຍພອນທີ່ສົ່ງເຖິງ ບັນດາລັດແລະປະຊາຊາດ ອາຟະລິກາເນື່ອງໃນໂອກາດວັນປົດປ່ອຍອາຟະລິກາ

ໃນນາມຄະນະບໍລິຫານງານຂອງສະພາໂຊວຽດສູງສຸດ ສ. ສ. ສ. ຊ., ລັດຖະບານແຫ່ງສະຫະພາບໂຊວຽດ, ປວງປະຊາຊົນໂຊວຽດ ແລະໃນນາມສ່ວນຕົວ ຂ້າພະເຈົ້າ ຂໍສົ່ງຄຳອວຍພອນ ອັນບໍລິສຸດໃຈ ມາຍັງບັນດາລັດຖະບານແລະປະຊາຊາດ ອາຟະລິກາ ເນື່ອງໃນໂອກາດວັນປົດປ່ອຍ ອາຟະລິກາ.

ຊາວໂຊວຽດຮູ້ສຶກມີຄວາມສາມັກຄີກັນ ຢ່າງເລິກເຊິ່ງ ກັບການຕໍ່ສູ້ຂອງປະຊາຊາດ ອາຟະລິກາ ເພື່ອການປົດປ່ອຍຊາດ. ການຕໍ່ສູ້ດັ່ງກ່າວ ທີ່ໄດ້ຮັບການສະໜັບສະໜູນ ຢ່າງກວ້າງຂວາງ ທາງດ້ານການເມືອງ, ຈິດໃຈແລະວັດຖຸມາຈາກບັນດາກຳລັງທີ່ກ້າວໜ້າຂອງໂລກນັ້ນ ມັນໄດ້ໂຄ່ນລົ້ມລະບອບລ່າເມືອງຂຶ້ນ; ຊາວອາຟະລິກາ ນັບເປັນຮ້ອຍໆລ້ານຄົນໄດ້ຫລຸດພົ້ນຈາກແອກລ່າເມືອງຂຶ້ນແລ້ວ.

ເຖິງມີຄວາມຫຍຸ້ງຍາກຫລາຍປະການກໍຕາມບັນດາປະເທດ ອາຟະລິກາ ທີ່ໄດ້ຮັບການປົດປ່ອຍ ພວມໄດ້ດຳເນີນການປ່ຽນແປງໄປ ໃນທາງທີ່ດີ ໃນຊີວິດພາຍໃນ ແລະນະໂຍບາຍຕ່າງ

ປະເທດ. ບັນດາປະເທດໜຸ່ມນ້ອຍ ຕັ້ງໃຈທີ່ຈະປັບປຸງເອກະລາດ, ຍົກລະດັບການພັດທະນາ ທາງດ້ານສັງຄົມ, ເສດຖະກິດ ແລະວັດທະນາທຳ ຂອງປະຊາຊົນ,ປ້ອງກັນສິດທາງການເມືອງ ແລະເສດຖະກິດຂອງຕົນ ໃນການຕໍ່ສູ້ຕ້ານພວກຈັກກະພັດ ແລະພວກລ່າເມືອງຂຶ້ນ ແບບໃໝ່.ການທີ່ບັນດາປະເທດອາຟະລິກາ ເຂົ້າຮ່ວມຢ່າງເອົາຈິງເອົາຈັງ ໃນກິດຈະການ-ຂອງອົງການສະຫະປະຊາຊາດ ແລະໃນຂະບວນການ ບໍ່ຮ່ວມກຸ່ມນັ້ນ ມັນສະແດງຢ່າງຈະແຈ້ງວ່າ ບົດບາດຂອງບັນດາ ປະເທດເຫລົ່ານັ້ນ ພວມມີການເຕີບໃຫຍ່ຂະຫຍາຍຕົວ ໃນກິດຈະການທາງສາກົນ.

ໃນປີນີ້ ເພິ່ນໄດ້ສະເຫລີມສະຫລອງ ວັນປົດປ່ອຍ ອາຟະລິກາ ພ້ອມກັບວັນສ້າງຕັ້ງອົງການສາມັກຄີອາຟະລິກາ ຄົບຮອບ ໑໕ ປີ ເຊິ່ງປະກອບສ່ວນທີ່ສຳຄັນ ເຂົ້າໃນການຕໍ່ສູ້ ຂອງບັນດາປະຊາຊາດອາຟະລິກາ ຕ້ານລັດທິລ່າເມືອງຂຶ້ນ ທັງແບບໃໝ່ແລະເກົ່າ, ຕ້ານລັດທິຈຳແນກເຊື້ອຊາດແລະນະໂຍບາຍແບບອາປັດຕຽດ. ອົງການສາມັກຄີອາຟະລິກາໄດ້ເຮັດຫລາຍສິ່ງຫລາຍຢ່າງ ເພື່ອເຮັດໃຫ້ບັນດາປະເທດອາຟະລິກາສາມັກຄີກັນ ໃນການຕໍ່ສູ້ຕ້ານພວກຈັກກະພັດນິຍົມແລະລັດທິລ່າເມືອງຂຶ້ນ, ໄດ້ເຮັດຫລາຍສິ່ງຫລາຍຢ່າງ ເພື່ອສ້າງສາຍພົວພັນກັນຖານເພື່ອນບ້ານໃກ້ຄຽງກັນ ແລະການຮ່ວມມືກັນລະຫວ່າງບັນດາປະເທດພາຄີ ອົງການສາມັກຄີອາຟະລິກາ, ເພື່ອແກ້ໄຂຂໍ້ຂັດແຍ່ງກັນທາງຊາຍແດນ ແລະເຂດແດນດ້ວຍສັນຕິວິທີ. ບັນ

ດາຫລັກການວ່າດ້ວຍການຫ້າມໃຊ້ກຳລັງທະຫານ, ການເຄົາລົບອະທິປະໄຕ, ພື້ນແຜ່ນດິນອັນຄົບຖ້ວນ, ການເຄົາລົບຊາຍແດນ, ການປະຕິເສດ ທີ່ຈະແຊກແຊງເຂົ້າໃນກິດຈະການ - ພາຍໃນຂອງປະເທດອື່ນ ເຊິ່ງໄດ້ບົ່ງໄວ້ໃນກົດບັດ ແລະບັນ-ດາມະຕິຂອງອົງການສາມັກຄີ ອາຟະລິການັ້ນທັງໝົດເຫຼົ່ານັ້ນ ພວມສ້າງເງື່ອນໄຂເບື້ອງຕົ້ນທີ່ດີ ແກ່ການຮັກສາບັນຍາກາດ-ທາງການເມືອງທີ່ດີ ໃນທະວີບອາຟະລິກາ.

ສ.ສ.ສ.ຊ. ເຂົ້າໃຈແລະສະໜັບສະໜູນ ການເຄື່ອນໄຫວ ຂອງອົງການສາມັກຄີອາຟະລິກາ.ພວກເຮົາສະໜັບສະໜູນ ບັນດາປະຊາຊາດອາຟະລິກາ ທີ່ຕໍ່ສູ້ຕ້ານການຮັກສາ - ເສດເຫຼືອຂອງລະບອບລ່າເມືອງຂຶ້ນ ແລະລະບອບຈຳແນກ-ເຊື້ອຊາດ ບໍ່ວ່າພາຍໃຕ້ຮູບການໃດ ໃນທະວີບອາຟະລິກາ . ສ.ສ.ສ.ຊ. ໄດ້ສະໜັບສະໜູນ ແລະພວມສະໜັບສະໜູນ ຄຳຮຽກຮ້ອງໃຫ້ລົບລ້າງ ລະບອບຈຳແນກເຊື້ອຊາດໃນໂລເດຊີ ແລະໃຫ້ມອບອຳນາດການປົກຄອງ ແກ່ປະຊາຊົນຊີມບັບເວ ເຊິ່ງແມ່ນແນວໂຮມຮັກຊາດເປັນຕົວແທນ, ສະໜັບສະໜູນ-ຄຳຮຽກຮ້ອງ ໃຫ້ສາທາລະນະລັດອາຟະລິກາໃຕ້ຖອນຕົວອອກຈາກປະເທດນາມີບີ ແລະໃຫ້ມອບອຳນາດການປົກຄອງແກ່ສະຫະພັນປະຊາຊົນ ຂອງອາຟະລິກາຕາເວັນຕົກ ສ່ຽງໃຕ້ທີ່ເປັນຕົວແທນອັນຊອບທຳ ຂອງປະຊາຊົນປະເທດນີ້, ສະໜັບສະໜູນ ຄຳຮຽກຮ້ອງໃຫ້ຍຸດຕິນະໂຍບາຍ ແບບຈຳແນກ ເຊື້ອຊາດ ໃນສາທາລະນະລັດ ອາຟະລິກາໃຕ້.

ສ.ສ.ສ.ຊ. ມີທ່າທີຢ່າງຈະແຈ້ງກ່ຽວກັບບັນດາປະເທດອາຟະລິກາ ແລະບັນດາປະເທດຂອງທະວີບອື່ນໆ ທີ່ໄດ້ຮັບການປົດປ່ອຍແລ້ວ. ປະເທດເຮົາພວມເຮັດທຸກສິ່ງທຸກຢ່າງ ເພື່ອເສີມຂະຫຍາຍການຮ່ວມມືກັນຖານມິດແລະມີຜົນດີ, ສະໜັບສະໜູນ ການຕໍ່ສູ້ຂອງບັນດາປະເທດເຫລົ່ານັ້ນ ເພື່ອປົກປ້ອງເອກະລາດທາງການເມືອງ, ທາງເສດຖະກິດ, ເພື່ອດັດປ່ຽນສາຍພົວພັນກັນທາງສາກົນທາງດ້ານເສດຖະກິດໃຫ້ມີຄວາມເປັນທຳ ສິດສະເໝີພາບ. ພວກເຮົາສະໜັບສະໜູນສິດຂອງປະຊາຊົນທີ່ຈະຄັດເລືອກເສັ້ນທາງແຫ່ງການພັດທະນາປະເທດຂອງຕົນ. ສ.ສ.ສ.ຊ. ຄັດຄ້ານການແຊກແຊງຂອງພວກຈັກກະພັດ ເຂົ້າໃນກິດຈະການພາຍໃນຂອງບັນດາປະເທດອາຟະລິກາຄັດຄ້ານການພະຍາຍາມຂອງພວກປະຕິການ ທີ່ຈະເຮັດໃຫ້ບັນດາ ປະເທດອາຟະລິກາປະທະກັນ ແລະການພະຍາຍາມ ທີ່ຈະກໍ່ໃຫ້ເກີດກໍລະນີພິພາດທາງທະຫານ ລະຫວ່າງອ້າຍນ້ອງ.

ເໝືອນກັບປະຊາຊາດອາຟະລິກາ, ພວກເຮົາຮັກຫອມສັນຕິພາບທີ່ເປັນສິງຈຳເປັນທັງແກ່ພວກເຮົາ ແລະມວນມະນຸດສຳລັບການກໍ່ສ້າງຢ່າງສັນຕິ. ພວກເຮົາສະໜັບສະໜູນ ຄຳຮຽກຮ້ອງ ຂອງບັນດາປະເທດອາຟະລິກາ ທີ່ຈະເຮັດໃຫ້ທະວີບອາຟະລິກາ ເປັນບ່ອນທີ່ບໍ່ມີອາວຸດປະລະມະນູ, ທີ່ຈະຂັດຂວາງບໍ່ໃຫ້ສາທາລະນະລັດ ອາຟະລິກາໃຕ້ໄດ້ຮັບເອົາອາວຸດປະລະມະນູ.

ສ.ສ.ສ.ຊ. ບໍ່ຕ້ອງການສົງຄາມ, ຄັດຄ້ານສົງຄາມຢ່າງ

ເດັດຂາດ. ສ.ສ.ສ.ຊ. ບໍ່ອາດຈະຖືກຄຸກຄາມດ້ວຍກຳລັງທະຫານຕໍ່ພາກພື້ນໃດໜຶ່ງຂອງໂລກໄດ້. ການຮັບປະກັນສັນຕິພາບ ທີ່ຖາວອນເປັນເປົ້າໝາຍທີ່ສຳຄັນ ຂອງນະໂຍບາຍຕ່າງ ປະເທດ ສ.ສ.ສ.ຊ. ລັດຖະທຳມະນູນ ສ.ສ.ສ.ຊ. ເຊິ່ງເປັນກົດໝາຍພື້ນຖານຂອງປະເທດເຮົາກໍໄດ້ລະບຸໄວ້ເຖິງທິດທາງສັນຕິພາບຂອງປະເທດເຮົາ.

ສິ່ງທີ່ຮີບດ່ວນກວ່າໝູ່, ສິ່ງທີ່ສຳຄັນກວ່າໝູ່ໃນປະຈຸບັນນີ້ກໍຄື ການລຶດຜ່ອນໄພອັນຕະລາຍ ທາງທະຫານລົງ, ການສະກັດກັ້ນການແຂ່ງຂັນສ້າງອາວຸດ ທີ່ກິນກອງທຶນຢ່າງມະໂຫລານ - ເຊິ່ງເປັນກອງທຶນທີ່ຈຳເປັນ ແກ່ການພັດທະນາຢ່າງສັນຕິຂອງບັນດາປະເທດ. ສຳລັບການຮັກສາສັນຕິພາບ ໃນໂລກເຮົາມັນບໍ່ມີວິທີການທີ່ດີກວ່າວິທີການ ແຫ່ງການຈຳກັດກຳລັງອາວຸດແລະການກ້າວຂຶ້ນສູ່ການປົດອາວຸດ ຢ່າງແທ້ຈິງ. ກອງປະຊຸມສະໄໝວິສາມັນ ຂອງອົງການສະຫະປະຊາຊາດ ຄັ້ງທຳອິດກ່ຽວກັບບັນຫາວ່າດ້ວຍການປົດອາວຸດ ຈະຕ້ອງມີບົດບາດທີ່ສຳຄັນ ໃນພາລະກິດດັ່ງກ່າວມາເທິງນັ້ນ. ການບັນລຸຜົນດີ ໃນການປະຊຸມຄັ້ງນີ້ ຈະຂຶ້ນຢູ່ກັບການປະກອບສ່ວນແບບຕົວຈິງ - ຂອງບັນດາປະເທດພາຄີ ອົງການສະຫະປະຊາຊາດ ໂດຍບໍ່ມີຂໍ້ຍົກເວັ້ນ.

ຂໍອວຍພອນໃຫ້ ບັນດາປະຊາຊາດ ອາຟະລິກາ ທີ່ຕໍ່ສູ້ຕ້ານພວກຈັກກະພັດ ແລະ ພວກຈຳແນກເຊື້ອຊາດ, ຕ້ານເສດເຫຼືອລ່າເມືອງຂຶ້ນ, ເພື່ອສັນຕິພາບ ແລະ ເສລີພາບ, ເອກະລາດ

ແຫ່ງຊາດ ແລະ ຄວາມກ້າວໜ້າທາງສັງຄົມ ຈົ່ງປະສົບແຕ່ຜົນສຳເລັດ.

ລ.ບະເລັດຊະເນັບ

ວັນທີ ໒໔ ເດືອນພຶດສະພາ
ປີ ໑໙໗໘
ເຫລັ້ມທີ ໗,
ໜ້າ ໓໔໒-໓໔໔.

ສານເຖິງຜູ້ທີ່ເຂົ້າຮ່ວມກອງປະຊຸມຄັ້ງທີ VIII ຂອງ ສະຫະພັນນັກຮົບຂອງແນວໂຮມ ຄັດຄ້ານ ລັດທິຟາຊິດ

ບັນດາເພື່ອນຮ່ວມຮົບແລະເພື່ອນມິດທີ່ເຄົາລົບ !

ຂໍສະແດງຄວາມເຄົາລົບມາຍັງພວກທ່ານ ແລະ ໂດຍຜ່ານພວກທ່ານ ມາຍັງບັນດາຜູ້ອາວຸໂສຂອງການຕໍ່ສູ້ທີ່ເປັນວິລະກຳຂອງບັນດາປະຊາຊາດ ຕ້ານລັດທິຟາ ຊິດ ເພື່ອເສລີພາບ , ເອກະລາດ, ປະຊາທິປະໄຕ.

໑/໓ ຂອງສັດຕະວັດໜຶ່ງ ໄດ້ຜ່ານໄປແລ້ວ ທີ່ບັນດາປະ-ຊາຊາດຕ່າງໆ ໄດ້ຮ່ວມກັນອອກແຮງ ຍາດເອົາໄຊຊະນະ ທີ່ຍິ່ງໃຫຍ່ເປັນປະຫວັດການ ຕໍ່ສັດຕູໂຕປ່າເຖື່ອນທີ່ສຸດຂອງມວນມະນຸດ. ໃນສະໜາມຮົບແຫ່ງສົງຄາມໂລກຄັ້ງທີສອງ ຜູ້ຮຸກຮານທີ່ມີອາວຸດຄົບຖ້ວນ ໄດ້ຖືກພັງທະລາຍລົງ, ລັດທິຟາ ຊິດໄດ້ຖືກປະລາໄຊລົງ ໃນປະເທດເຢຍລະມັນ ແລະປະເທດ ຢູໂລບອື່ນໆ, ລັດທິກະຫາຍສົງຄາມ ຂອງປະເທດຍີ່ປຸ່ນກໍ່ຖືກປະລາໄຊ ໃນພາກພື້ນຕາເວັນອອກໄກຄືກັນ. ປະຊາຊົນບັນດາຊົນຊາດ ຂອງ ສ.ສ.ສ.ຊ. ໄດ້ເສຍສະລະເລືອດເນື້ອລູກຫຼານອັນແສນຮັກຂອງຕົນ ໒໐ ລ້ານຄົນທີ່ໄດ້ເສຍຊີວິດເພື່ອປ້ອງກັນປິຕຸພູມສັງຄົມນິຍົມ, ເພື່ອປົດປ່ອຍປະຊາຊາດໃຫ້ພົ້ນຈາກຄວາມເປັນທາດຂອງພວກຟາ.ຊິດ. ໃນສາທາລະນະລັດ ເບໂລຣູຊີ

ເຊິ່ງເປັນເຈົ້າພາບນັ້ນ ພົນລະເມືອງ ໑/໔ ໄດ້ເສຍຊີວິດໄປໃນສົງຄາມຄັ້ງນັ້ນ. ຊາວໂຊວຽດຕີລາຄາສູງຕໍ່ຄວາມອົງອາດກ້າຫານ ຂອງພວກທະຫານສະຫະພັນຕ້ານຮິດແລທີ່ຕໍ່ສູ້ຕ້ານສັດຕູໂຕດຽວ, ພວກນັກຮົບຂອງແນວໂຮມຄັດຄ້ານລັດທິ ຟາ ຊິດໃນບັນດາປະເທດທີ່ຖືກຍຶດຄອງ ໂດຍພວກຟາ ຊິດ.ບັນດາປະຊາຊາດຕ່າງໆ ໄດ້ປະຕິບັດວິລະກຳ ເພື່ອກອບກູ້ເອົາຄວາມສີວິໄລ ແລະໄຂເສັ້ນທາງແກ່ບັນດາກຳລັງ ແຫ່ງສັນຕິພາບແລະຄວາມກ້າວໜ້າ.

ຄວາມຄຽດຊັງຕໍ່ລັດທິຟາ ຊິດ ທີ່ເກີດຂຶ້ນໃນການຕໍ່ສູ້ ຮ່ວມກັນນັ້ນ, ຄວາມຕັ້ງໃຈທີ່ຈະປົກປັກຮັກສາສັນຕິພາບແລະຄວາມປອດໄພ ຂອງບັນດາປະຊາຊາດ ທັງໝົດນັ້ນເປັນ ພື້ນຖານຂອງກິດຈະກຳແຫ່ງສະຫະພັນນັກຮົບ ຂອງແນວໂຮມຄັດຄ້ານ-ລັດທິຟາ ຊິດ ນັບເປັນລ້ານໆຄົນ. ສະຫະພັນດັ່ງກ່າວແລະບັນດາຄົນຜູ້ທີ່ຮັກຫອມຮູດົມຄະຕິ ຂອງສະຫະພັນນັ້ນ ພວມຕໍ່ສູ້ເພື່ອການລຶດຜ່ອນຄວາມເຄັ່ງຕຶງ, ຕ້ານການແຂ່ງຂັນສ້າງອາວຸດ-ປະລະມະນູ ແລະອາວຸດທຳມະດາ, ເພື່ອການຮ່ວມມືກັນ ລະຫວ່າງບັນດາປະຊາຊາດ. ພວກທີ່ໄດ້ຜ່ານແປວໄຟ ແຫ່ງສົງຄາມ ເຂົ້າໃຈຄວາມໝາຍສຳຄັນ ຂອງການປຸກລະດົມມະຫາຊົນ ໃນການຕໍ່ສູ້ເພື່ອການກະທຳຕົວຈິງ ທີ່ແນໃສ່ສະກັດກັ້ນການແຂ່ງຂັນສ້າງອາວຸດ ເຂົ້າໃຈຄວາມຈຳເປັນ ທີ່ຈະຕ້ອງຕ້ານຢັນການກະທຳຂອງພັກພວກທີ່ຄັດຄ້ານການລຶດຜ່ອນຄວາມເຄັ່ງຕຶງ ແລະຄັດຄ້ານການປົດອາວຸດ, ພັກພວກທີ່ບໍ່ເອົາຫົວ-ຊາຕໍ່ໂຊກຊາຕາກຳ ຂອງບັນດາປະຊາຊາດ.

ສ.ສ.ສ.ຊ. ພວມເຮັດທຸກສິ່ງທຸກຢ່າງຕາມຄວາມສາມາດຂອງຕົນ ເພື່ອປ້ອງກັນໂລກ ໃຫ້ພົ້ນຈາກໄພອັນຕະລາຍ ຂອງການກໍ່ສົງຄາມປະລະມະນູ ທີ່ອາດຈະເກີດຂຶ້ນໄດ້. ພວກເຮົາສະໜັບສະໜູນ ຄຳຮຽກຮ້ອງຂອງມະຫາຊົນທົ່ວໂລກ ທີ່ຮຽກຮ້ອງໃຫ້ຫ້າມອາວຸດ ປະເພດເນີຕົງ ແລະປະເພດອື່ນໆ ທີ່ສັງຫານຊີວິດມະນຸດ ໃນຂອບເຂດທີ່ກ້ວາງຂວາງ.ປະເທດເຮົາຕໍ່ສູ້ໄປພ້ອມກັບບັນດາ ປະເທດສັງຄົມນິຍົມ ເພື່ອລົດຜ່ອນງົບປະມານ ທາງການທະຫານລົງ, ລົດຜ່ອນການຜະລິດອາວຸດ,ລົດຜ່ອນກຳລັງທະຫານ ຂອງບັນດາປະເທດທັງຫລາຍ.ການເສີມຂະຫຍາຍກຳລັງອາວຸດ ບໍ່ສາມາດຮັບປະກັນຄວາມປອດໄພ - ຂອງບັນດາປະຊາຊາດໄດ້; ການລົດຜ່ອນແລະການຈຳກັດກຳລັງອາວຸດ, ການສ້າງບັນຍາກາດ ແຫ່ງຄວາມໄວ້ເນື້ອ ເຊື່ອໃຈກັນ ມັນເອງທີ່ສາມາດເຮັດມັນໄດ້.

ຂໍອວຍພອນໃຫ້ກອງປະຊຸມຄັ້ງນີ້ ຈົ່ງປະສົບແຕ່ຜົນສຳເລັດໃຫມ່; ຂໍອວຍພອນໃຫ້ສະຫະພັນຂອງພວກທ່ານ ຈົ່ງປະສົບຜົນສຳເລັດໃຫມ່ ໃນການປັບປຸງຄວາມສາມັກຄີກັນຂອງບັນດານັກຮົບເກົ່າ ແລະບັນດານັກຮົບຂອງແນວໂຮມ ທີ່ຕ້ານລັດທິ ຟາຊິດ ເພື່ອເປັນຜົນປະໂຫຍດ ແກ່ການປັບປຸງສັນຕິພາບ ແລະຄວາມໄວ້ເນື້ອເຊື່ອໃຈກັນ ລະຫວ່າງບັນດາປະຊາຊາດ.

ລ.ບະເລັດຊະເນັບ

ວັນທີ ໒໔ ພຶດສະພາປີ ໑໙໕໘

ເຫລັ້ມທີ ໗, ໜ້າ ໓໔໔-໓໔໕

ວິລະກຳຂອງນະຄອນມິນຊັກມີຊີວິດເປັນຊົ່ວນິລັນດອນ

ຄຳປາໄສໃນພິທີຊຸມນຸມເພື່ອມອບຫລຽນໄຊເລນິນ

ແລະ "ດາວຄຳ" ໃຫ້ແກ່ນະຄອນ ມິນຊັກວິລະຊົນ

ວັນທີ ໒໔ ເດືອນມິຖຸນາ ປີ ໑໙໗໔

ສະຫາຍທີ່ເຄົາລົບ !

ຊາວນະຄອນມິນຊັກ !

ຂ້າພະເຈົ້າຖືກມອບຫມາຍຫນ້າທີ່ອັນມີກຽດສູງ ແລະປິຕິຊົມຊື່ນເປັນທີ່ສຸດ ທີ່ຈະໄດ້ມອບຫລຽນໄຊຂັ້ນສູງສຸດຂອງ ປິຕຸພູມເຮົາ–ຫລຽນໄຊເລນິນ ແລະ "ດາວຄຳ" ໃຫ້ແກ່ມິນຊັກເມືອງຫລວງແຫ່ງລັດເບໂລຣູຊີໂຊວຽດ ທີ່ຮັບຊື່ວ່າເປັນນະຄອນວິລະຊົນອັນມີກຽດສູງ. (ຕົບມື.)

ເນື່ອງໃນໂອກາດວັນບຸນອັນຄຶກຄື້ນເຊັ່ນນີ້ ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍຕໍ່ບັນດາທ່ານ ແລະບັນດາຊາວຜູ້ອອກແຮງງານທັງຫລາຍ ຂອງສາທາລະນະລັດເບໂລຣູຊີ. (ຕົບມືຢ່າງຍືດຍາວ.)

ຂໍພວກທ່ານຈົ່ງຮັບເອົາຄຳຊົມເຊີຍອັນອົບອຸ່ນ ຂອງສູນກາງ **ພ.ກ.ສ.ຊ.**, ຄະນະບໍລິຫານງານຂອງສະພາໂຊວຽດ–ສູງສຸດ ແລະສະພາລັດຖະມົນຕີ ສ.ສ.ສ.ຊ. (ຕົບມືຢ່າງຍືດຍາວ.)

ໃນມື້ນີ້ ປວງປະຊາຊົນໂຊວຽດກໍ່ສົ່ງຄວາມອວຍພອນມາຍັງປະຊາຊົນເບໂລຣູຊີ ອັນດີງາມ, ອົງອາດກ້າຫານ, ດຸຫມັ່ນອອກແຮງງານ, ມີນ້ຳໃຈສາກົນນິຍົມອັນສູງສົ່ງ, ປະຊາຊົນເບໂລຣູຊີ ໄດ້ຄຽງບ່າຄຽງໄຫລ່ກັບບັນດາຊົນຊາດ ຊົນເຜົ່າແຫ່ງ ປິຕຸພູມເຮົາ.(ຕົບມືຢ່າງຍືດຍາວ).

ການມອບລາງວັນແກ່ນະຄອນໃດຫນຶ່ງຫມາຍເຖິງການມອບລາງວັນ ແກ່ປະຊາຊົນທີ່ສ້າງນະຄອນນັ້ນ,ປ້ອງກັນນະຄອນນັ້ນ, ຟື້ນຟູຊີວິດຂອງນະຄອນນັ້ນຂຶ້ນໃຫມ່, ກໍ່ສ້າງ ແລະ ດັດແປງນະຄອນນັ້ນ.

ນະຄອນຂອງພວກເຈົ້າ ມີມູນເຊື້ອປະຕິວັດຕັ້ງແຕ່ດົນນານ. ກອງປະຊຸມໃຫຍ່ຄັ້ງທຳອິດ ຂອງພັກກຳມະກອນສັງຄົມ ປະຊາທິປະໄຕ ໄດ້ໄຂຂຶ້ນໃນນະຄອນແຫ່ງນີ້. ກອງທະຫານແດງມິນຊັກ ໄດ້ໄປເຂົ້າຮ່ວມໃນການບຸກໂຈມຕີພະລາດຊະວັງ "ລະດູຫນາວ". ບໍ່ວ່າໃນຍາມເສິກ, ໃນຍາມແຫ່ງການ ອອກແຮງງານຢ່າງສັນຕິ ຊາວກອມມູນິດມິນຊັກ ກໍໄດ້ເປັນຜູ້ນຳ, ຜູ້ຈັດຕັ້ງມະຫາຊົນ ຢ່າງແທ້ຈິງ, ໄດ້ເປັນຜູ້ປະຕິບັດທິດທາງ ການເມືອງຂອງພັກເຮົາຢ່າງສຸດກົກສຸດປາຍ. (ຕົບມື.)

ໃນມື້ນີ້ ພວກເຮົາຂໍສົ່ງຄວາມຂອບອົກຂອບໃຈ,ຄວາມຮູ້ບຸນຄຸນ ຢ່າງເລິກເຊິງ ແລະຄວາມເຄົາລົບຢ່າງສູງ ຕໍ່ຊາວນະຄອນມິນຊັກ ນັບເປັນພັນໆຄົນ ທີ່ໄດ້ສະແດງວິລະກຳ ແລະນ້ຳໃຈຕໍ່ສູ້ຕ້ານພວກຟາຊິດ .(ຕົບມື.). ອັນນັ້ນເປັນຄວາມຈິງທີ່ວ່າ ນະຄອນມິນຊັກ ໄດ້ຖືກສັດຕູຍຶດຄອງ;ແຕ່ວ່າມິນຊັກບໍ່ເຄີຍ

ຍອມເປັນຂ້າທາດຈັກເທື່ອ. (ຕົບມື.)

ພາຍໃຕ້ການນຳພາຂອງຄະນະພັກຂັ້ນເມືອງທີ່ປະຕິບັດວຽກທາງລັບ ໃນມິນຊັກ ໄດ້ມີໜ່ວຍທາງລັບຫລາຍໜ່ວຍທີ່ເຄື່ອນໄຫວຕ້ານສັດຕູ. ການສັງຫານຊີວິດ, ການທໍລະມານ ຂອງພວກ ຟາຊິດ ບໍ່ອາດໄປທຳລາຍວິລະຊົນໄດ້ເດັດຂາດ. ມິນຊັກໄດ້ກາຍເປັນໝົ້ນມາຣິກອນແທ້ຈິງ ສຳລັບພວກຍຶດຄອງ ທີ່ຮູ້ສຶກບໍ່ມີບ່ອນໃດຈະມີຄວາມປອດໄພ. ການເຄື່ອນໄຫວທາງທະຫານ-໑໕໐໐ ຄັ້ງ ເປັນຜົນງານອັນດີ ຂອງການຕໍ່ສູ້ທາງລັບເປັນເວລາ ໓ ປີ ຂອງຊາວນະຄອນມິນຊັກ. (ຕົບມື.)

ມິນຊັກ ບໍ່ແມ່ນຜູ້ດຽວທີ່ຕໍ່ສູ້ຕ້ານພວກຟາຊິດ. ຊາວນະຄອນມິນຊັກ ໄດ້ມີການຕິດຕໍ່ພົວພັນກັນ ຢ່າງແໜ້ນແຟ້ນ ກັບກອງຫລອນໃນທົ່ວລັດ ເບໂລຣູຊີອີກດ້ວຍ. ຢູ່ແນວຫລັງຂອງ ສັດຕູນັກຣົບນັບເປັນໝື່ນໆເປັນແສນຄົນ ໄດ້ດຳເນີນການຕໍ່ສູ້ຢ່າງອົງອາດກ້າຫານທີ່ສຸດເຊິ່ງເປັນການຕໍ່ສູ້ຂອງປະຊາຊົນ, ແລະເປັນທຳ. (ຕົບມືຢ່າງຍືດຍາວ.)

ໃນເມືອງຕ່າງໆ, ໝູ່ບ້ານຕ່າງໆ ຂອງລັດເບໂລຣູຊີມີຜູ້ອາວຸໂສ ທີ່ໄດ້ປະຕິບັດໜ້າທີ່ຂອງຕົນ ໃນໜ່ວຍໃຕ້ດິນ, ໃນໜ່ວຍກອງຫລອນ. ໃນຫ້ອງຊຸມນຸມນີ້ ກໍໄດ້ມີຜູ້ອາວຸໂສເຫລົ່ານັ້ນຫລາຍຄົນ. ມັນຊອກຫາຄຳເວົ້າຍາກທີ່ສຸດ ເພື່ອສະແດງຄວາມຮູ້ບຸນຄຸນ ຕໍ່ບັນດາຜູ້ຄົນທີ່ໄດ້ກອບກູ້ປິຕຸພູມເຮົາໃນໄລຍະເວລາ ແຫ່ງການທົດສອບອັນໜັກໜ່ວງທີ່ສຸດ. ຂໍສະແດງຄວາມຂອບໃຈ, ຂໍໃຫ້ບັນດາເພື່ອນມິດທີ່ຮັກແພງ ມີສຸຂະພາບ

ເຂັ້ມແຂງ (ຕົບມືຍາ່ງຍືດຍາວແລະຟົດຟື້ນ).

ລັດເບໂລຣູຊີ ໄດ້ເສຍສະລະເລືອດເນື້ອຂອງລູກຫລານອັນ ແສນຮັກ ໔ ລ້ານກ່ວາຄົນ. ຂໍສະແດງຄວາມເຄົາລົບ ຕໍ່ວິລະ ກຳ ຂອງພວກທີ່ໄດ້ເສຍສະລະເລືອດເນື້ອ ໃນການປ້ອງກັນ ປິຕຸພູມ.

ຂໍສະແດງຄວາມເຄົາລົບຕໍ່ວິລະກຳເຫລົ່ານັ້ນ ດ້ວຍການລຸກ ຂຶ້ນຢືນຫນຶ່ງນາທີ(ຫມົດທຸກຄົນໄດ້ລຸກຂຶ້ນຢືນສະຫງົບຫນຶ່ງນາທີ).

ບັນດາສະຫາຍ ! ການສະເຫລີມສະຫລອງໄຊຊະນະ ອັນ ຍິ່ງໃຫຍ່ນັ້ນ ໄດ້ລ່ວງໄປແລ້ວ. ໄລຍະເວລາແຫ່ງການ ຟື້ນຟູ ໄດ້ມາແທນ. ບາງທີອາດມີຫລາຍຄົນທີ່ຍັງຈື່ຈຳວ່າ ພາຍຫລັງ ສົງຄາມນັ້ນ ນະຄອນມິນຊັກໄດ້ເປັນແນວໃດ ?ໃນເວລານັ້ນ, ໃນທີ່ນີ້ມີພຽງແຕ່ຮ່ອງຮອຍການເຜົາຜານ, ການພັງທະລາຍທີ່ ນັ້ນ. ເວົ້າຕາມຄວາມຈິງ ບໍ່ໄດ້ມີນະຄອນເລີຍ.ດ້ວຍເຫດນັ້ນ ພວກເຮົາຈຶ່ງຈຳຕ້ອງຕໍ່ສູ້ອີກຄັ້ງໃຫມ່,ຕໍ່ສູ້ເພື່ອບໍ່ພຽງແຕ່ຟື້ນຟູຊີ ວິດທີ່ນັ້ນ ຫາກຍັງເພື່ອເຮັດໃຫ້ເມືອງຫລວງ ຂອງເບໂລຣູຊີ ກາຍເປັນເມືອງທີ່ດີງາມກ່ວາເກົ່າອີກດ້ວຍ. ໂດຍອີງໃສ່ການ ຊ່ວຍເຫລືອຂອງສູນກາງພັກ, ລັດຖະບານໂຊວຽດ,ບັນດາສາ ທາລະນະລັດອ້າຍນ້ອງນັ້ນ ຊາວນະຄອນມິນຊັກ ສາມາດຟື້ນຟູ ນະຄອນຂອງຕົນ ໃນໄລຍະເວລາອັນສັ້ນໆ.

ຂໍຊົມເຊີຍຄົນຜູ້ທີ່ເຖິງວ່າຍັງບໍ່ໄດ້ມີເວລາພຽງພໍ ທີ່ຈະ ແກ້ ເສື້ອທະຫານ,ຈັບມືຖາມຂ່າວນຳພີ່ນ້ອງທີ່ຫາກໍໄດ້ກັບມາ ບ້ານ ຈາກແນວຮົບ,ສະແດງຄວາມລະນຶກຄວງວິນຍານຂອງພີ່ນ້ອງທີ່

ໄດ້ເສັຽສະລະເລືອດເນື້ອໃນສົງຄາມກໍຕາມ ພວກເຂົາໄດ້ບຸກເບີກຟື້ນຟູຊີວິດນະຄອນມິນຊັກ(ຕົບມືຢ່າງຍືດຍາວ). ລາງວັນມອບແກ່ນະຄອນມິນຊັກ ກໍຄື ລາງວັນມອບໃຫ້ແກ່ ພວກເຈົ້າເໝືອນກັນ. (ຕົບມື.)

ຂ້າພະເຈົ້າເຄີຍໄດ້ໄປຢ້ຽມຢາມນະຄອນແຫ່ງນີ້ຫຼາຍທີ່ສຸດ. ຂ້າພະເຈົ້າຂໍເວົ້າຄວາມຈິງວ່າ ນະຄອນມິນຊັກ ເປັນນະຄອນອັນດີງາມກວ່າໝູ່ແຫ່ງໜຶ່ງ (ຕົບມືຢ່າງຍືດຍາວ).

ຂ້າພະເຈົ້າຮູ້ສຶກດີອົກດີໃຈຢ່າງເລີດເຊີງ ໃນເມື່ອ ໄດ້ໄປຫລຽວເບິ່ງຖະໜົນຫົນທາງ ໃນນະຄອນແຫ່ງນີ້ ທີ່ໄດ້ຮັບການສ້າງຂຶ້ນຕາມການວາງແຜນການ ທີ່ທັນສະໄໝ, ມີຄວາມສະດວກສະບາຍ, ຄວາມສະອາດ,ມີສວນຕົ້ນໄມ້ອັນງາມຕາແທ້.

ໃນປະຈຸບັນນີ້ ນະຄອນມິນຊັກ ບໍ່ພຽງແຕ່ເປັນສູນກາງ ອຸດສາຫະກຳທີ່ໃຫຍ່ ແຫ່ງລັດເບໂລຣູຊີທີ່ມັ້ນ ຫາກຍັງເປັນ ຂອງທົ່ວປະເທດອີກດ້ວຍ. ນະຄອນມິນຊັກ ພວມສ້າງລົດຕຼັກເຕີ , ລົດໂອໂຕ, ເຄື່ອງກົນຈັກຕ່າງໆ ເຄື່ອງຈັກເອເລັກໂຕນິກ , ເຄື່ອງອົບຕິກ ທີ່ມີຊື່ສຽງຢ່າງກ້ວາງຂວາງ. ນະຄອນມິນຊັກ ຜະລິດສິນຄ້າຕ່າງໆ ຕັ້ງຫລາຍກ່ວາ ກ໔ ເທົ່າ ປຽບໃສ່ ປີ ໑໙໔໐ ເຊິ່ງໃນນັ້ນມີສິນຄ້າ ໑/໓ ຕິດເຄື່ອງໝາຍ ແຫ່ງຄຸນນະພາບສູງ.

ນະຄອນມິນຊັກ ມີສິດທີ່ຈະຮູ້ສຶກພາກພູມໃຈ ຕໍ່ວິທະຍາສາດອັນໜຸ່ມນ້ອຍແຕ່ສູກວອມ ເຊິ່ງໄດ້ບັນລຸຜົນສຳເລັດອັນໃຫຍ່ໃນດ້ານຟີຊິກ, ຄະນິດສາດ, ພະລັງງານປະລະມະນູແລະອື່ນໆ.

ບັນດານັກວິທະຍາສາດຂອງມິນຈັກສະແດງແບບຢ່າງອັນດີຂອງການພົວພັນກັນ ອັນແໜ້ນແຟ້ນລະຫວ່າງ ວິທະຍາສາດ ກັບການຜະລິດ.

ມິນຈັກ ເປັນສູນກາງວັດທະນະທຳເບໂລຣູຊີ, ເປັນນະຄອນແຫ່ງໜຶ່ງທີ່ໄດ້ປະກອບສ່ວນທີ່ສຳຄັນ ເຂົ້າໃນການຂະຫຍາຍ-ວັດທະນະທຳ ບັນດາຊົນຊາດໂຊວຽດ. ນະຄອນມິນຈັກມີໂຮງຣຽນ ທີ່ສ້າງຜູ້ຊ່ຽວຊານຊັ້ນສູງ ບໍ່ພຽງແຕ່ສຳຫລັບລັດເບໂລຣູຊີ ແລະທົ່ວປະເທດໂຊວຽດທັງມວນ ຫາກຍັງສຳຫລັບ ປະເທດເພື່ອນມິດຕ່າງໆອີກດ້ວຍ. ໂຮງລະຄອນ, ຄະນະສິລະປະ - ກອນຂອງພວກເຈົ້າ ກໍມີຊື່ສຽງຢ່າງກ້ວາງຂວາງເຊັ່ນດຽວກັນ.

ຫໍພິພິດທະພັນ, ຊື່ຂອງຖະໜົນຫົນທາງ, ອະນຸສາວະລີຕ່າງຕ່າງ ຂອງນະຄອນມິນຈັກ ພິສູດໃຫ້ເຫັນວ່າ ພວກເຈົ້າລະນຶກເຖິງດວງວິນຍານຂອງຊາວມິນຈັກ ທີ່ເສຍຊີວິດໄປ, ລະນຶກເຖິງອະດີດຕະການອັນເປັນວິລະກຳ ຂອງນະຄອນມິນຈັກເຊິ່ງເປັນບໍ່ເກີດແຫ່ງຄວາມຮູ້ສຶກຮັກຊາດ ແລະຮັກການອອກແຮງ-ງານ (ຕົບມື).

ຜົນສຳເລັດຂອງເບໂລຣູຊີໂຊວຽດ ນັບລວມທັງຜົນສຳເລັດຂອງນະຄອນມິນຈັກ ເປັນການພິສູດໃຫ້ເຫັນເຖິງການ ປະກົດເປັນຈິງ ຂອງນະໂຍບາຍຊົນຊາດຂອງເລນິນ, ການໜູນໃຊ້ກຳລັງທາງຈິດໃຈຂອງປະຊາຊົນ ທີ່ໄດ້ຖືກສັງຄົມນິຍົມປົດປ່ອຍແລ້ວ (ຕົບມື).

ໂດຍສະແດງຄວາມຊົມເຊີຍ ຕໍ່ຊາວກຳມະກອນ, ວິສາວະ

ກອນ, ນັກເຕັກນິກ, ນັກວິທະຍາສາດແລະນັກວັດທະນະທຳ, ຄູ ສອນ, ນາຍໝໍ, ບັນດາຊາວຜູ້ອອກແຮງງານຂອງນະຄອນ-ມິນຊັກນັ້ນ ຂ້າພະເຈົ້າຝາກຄວາມຫວັງໄວ້ວ່າໃນອະນາຄົດບັນດາຊາວນະຄອນມິນຊັກ ຈະໄດ້ຍົກສູງລັນທູວ ແຫ່ງນະຄອນມິນຊັກ, ທູວແຫ່ງວິລະກຳໃນການສູ້ຮົບ ແລະຜົນສຳເລັດອັນໃຫຍ່ຫລວງ ໃນການອອກແຮງງານ ເຊັ່ນດຽວກັນ. (ຕົບມື ຢ່າງຍືດຍາວ.)

ພວກເຮົາຕີລາຄາສູງຕໍ່ໜ້າທີ່ ພາຍໃຕ້ການຊີ້ນຳ ຂອງສູນກາງພັກກອມມູນິດ ເບໂລຣູຊີ ແລະຄະນະພັກປະຈຳ ນະຄອນມິນຊັກ ບັນດາຊາວກອມມູນິດມິນຊັກ ໑ ແສນຄົນ ພວມໄດ້ປັບປຸງດັດແປງວິທີການເຮັດວຽກຂອງພັກ ຢູ່ເລື້ອຍໆ, ໄດ້ສ້າງພະນັກງານອັນດີເດັ່ນທາງດ້ານພັກ, ສະພາໂຊວຽດ, ເສດຖະກິດ, ກຳມະບານ ແລະກົມໂຊມົນ ໃຫ້ຮູ້ຈັກອັນໃຫມ່, ຮູ້ຈັກແກ້ໄຂບັນຫາຕ່າງໆ ທີ່ຊີວິດປະຈຸບັນ ແລະຍຸກສະໄໝ ແຫ່ງສັງຄົມນິຍົມທີ່ຈະເລີນກ້າວໜ້າສ້າງຂຶ້ນ.

ຂໍອວຍພອນໃຫ້ບັນດາເພື່ອນມິດທີ່ຮັກແພງ ຈົ່ງໄດ້ຮັບຜົນສຳເລັດໃໝ່. (ຕົບມື). ຂ້າພະເຈົ້າເຊື່ອໝັ້ນວ່າ ບັນດາຊາວກອມມູນິດ ເບໂລຣູຊີ ຈະໄດ້ປະກອບສ່ວນທີ່ສຳຄັນ ເຂົ້າໃນການປະຕິບັດບັນດາມະຕິ ຂອງກອງປະຊຸມໃຫຍ່ຄັ້ງທີ XXV ພ.ກ.ສ.ຊ. (ຕົບມືຢ່າງຍືດຍາວ)

ໃນຊີວິດຂອງສາທາລະນະລັດ ເບໂລຣູຊີ ມີຫລາຍສິ່ງຫລາຍຢ່າງທີ່ໜ້າສົນໃຈ ແກ່ບັນດາສະຫາຍທີ່ມາຈາກ ສາທາລະນະ

ລັດອື່ນໆເຊັ່ນນ້ຳໃຈລິເລີ່ມ, ຄວາມພາກພຽນເຮັດວຽກໃນການແກ້ໄຂບັນຫາຕ່າງໆ ແຫ່ງການພັດທະນາທາງດ້ານເສດຖະກິດ ແລະ ທາງສັງຄົມ.

ອົງການພັກຂອງເບໂລຣູຊິ ໄດ້ຮັບປະກັນເຮັດໃຫ້ບັນດາຄະນະເຮັດວຽກລວມໝູ່ ພວມເສີມຂະຫຍາຍຄວາມອາດສາມາດທາງດ້ານເສດຖະກິດ ໄປໃນຈັງຫວະທີ່ວ່ອງໄວ. ພວກເຈົ້າໄດ້ສຳເລັດຜົນໃນການປະຕິບັດແຜນການ ໕ ປີຊຸດທີ ໙. ໃນໄລຍະເວລາ ໔ ປີທີ່ຜ່ານມາ ແຫ່ງການປະຕິບັດແຜນການ ໕ ປີຊຸດທີ ໑໐ ພວກເຈົ້າໄດ້ເພີ່ມທະວີປະລິມາດການຜະລິດ ອຸດສາຫະກຳຂຶ້ນ ໑໗,໔% ປຽບໃສ່ ໑໓,໙% ທີ່ເກີນຄາດໝາຍ, ໄດ້ຜະລິດສິນຄ້າທີ່ມີລາຄາ ໕໙໐ ລ້ານຮູບ ຫລາຍກ່ວາທີ່ ຄາດໝາຍ. ຊິເວົ້າແນວໃດກໍເວົ້າ! ກໍເວົ້າໄດ້ພຽງແຕ່ວ່າ ພວກເຈົ້າພວມເຮັດວຽກ ຢ່າງຕັ້ງໜ້າດີແທ້ໆ ! ຊົມເຊີຍ! (ຕົບມືຢ່າງຟົດຟື້ນ).

ລັດເບໂລຣູຊິ ກໍໄດ້ບັນລຸຜົນສຳເລັດທີ່ສຳຄັນ ໃນການຂະຫຍາຍການກະເສດ ເຊັ່ນດຽວກັນ. ແຕ່ກ່ອນເພິ່ນຖືດິນນາ - ຂອງລັດເບໂລຣູຊິວ່າເປັນດິນບໍ່ດີແກ່ການກະເສດ, ເກັບກ່ຽວເຂົ້າໄດ້ແຕ່ ໖໐໐-໗໐໐ ກິໂລກະຣາມ ຕໍ່ໜຶ່ງເຮັກຕາທີ່ນັ້ນ. ເພິ່ນເກັບກ່ຽວເຂົ້າ ໔໑໓໐ ກິໂລ (ຄິດເປັນສະເລັ່ຍ)ໃນການປະຕິບັດແຜນການ ໕ ປີ ຊຸດທີ ໙. ໃນປະຈຸບັນນີ້ ເພິ່ນເກັບກ່ຽວເຂົ້າໄດ້ ໔໕໐໐ ກິໂລ ຕໍ່ໜຶ່ງເຮັກຕາ. ອັນນັ້ນຍ້ອນການໃຊ້ເຕັກນິກການກະເສດ ທີ່ທັນສະໄໝ; ອັນນັ້ນ ເປັນຜົນດີ

ຂອງການປູກຝັງແບບວິທະຍາສາດທັນສະໄໝ.

ບໍ່ພຽງແຕ່ຊາວນາທັ້ນນທາກຍັງທຸກລົ້ນທີ່ເຮັດວຽກກ່ຽວຂ້ອງກັບການກະເສດ ຄື ຊາວກຳມະກອນ ທີ່ສ້າງລົດຕັກເຕີ, ລົດເກັບກ່ຽວເຂົ້າ, ຝຸ່ນ, ເຮັດຈືນລະປະທານ ໄດ້ພາກັນອອກແຮງສູ່ມໃສ່ ເພື່ອເພີ່ມພູນຜະລິດຜົນ ທາງການກະເສດໃຫ້ໄດ້ຫລາຍຂຶ້ນ.

ບັນດາສະຫາຍ ! ໃນປີ ໑໙໗໙–໑໙໘໐ພວກເຮົາຈະຕ້ອງເຮັດວຽກດ້ວຍຄວາມດຸໝັ່ນ. ເພື່ອສຳເລັດຜົນ ໃນການປະຕິບັດແຜນການ ໕ ປີ ຊຸດທີ ໑໐ ຢ່າງລົບຖ້ວນນັ້ນພວກເຮົາຈຳຕ້ອງເພີ່ມທະວີຈັງຫວະຂອງການເສີມຂະຫຍາຍ ການຜະລິດ, ຈຳຕ້ອງເພີ່ມທະວີປະສິດທິພາບ ຂອງການອອກແຮງງານແລະປັບປຸງວຽກງານຫລາຍດ້ານຕື່ມອີກດ້ວຍ.

ການເພີ່ມທະວີປະສິດທິພາບ ເປັນບັນຫາທີ່ສຳຄັນ ກ່ວາໝູ່ເຊິ່ງພັກເຮົາໄດ້ວາງອອກ ແລະປຸກລະດົມມະຫາຊົນ.ອັນເປັນເລື່ອງທີ່ຈຳເປັນແກ່ພວກເຈົ້າ ອີກອັນໜຶ່ງຄື: ການປະຫຍັດ, ການຄິດໄລ່ຢ່າງຖືກຕ້ອງ ແລະກ່ອນອື່ນໝົດ ແມ່ນການຮັກສາລະບຽບວິໄນ ທາງດ້ານແຜນການນັ້ນ ທັງໝົດເຫລົ່ານັ້ນມີບົດບາດອັນສຳຄັນເປັນພິເສດ.

ການຮັກສາລະບຽບວິໄນທາງດ້ານແຜນການ ໝາຍຄວາມວ່າແນວໃດ ?

ອັນນັ້ນໝາຍຄວາມວ່າ ມັນຕ້ອງວາງແຜນການ ໃຫ້ທັນເວລາ, ຕ້ອງວາງແຜນການທີ່ປະສານສົມທົບຢ່າງດີກັບແຜນການ

ອັນອື່ນໆ ຂອງໂຮງຈັກໂຮງງານ, ທົ່ວສາທາລະນະລັດແລະຂັນດາສາທາລະນະລັດຕ່າງໆອີກດ້ວຍ.

ອັນນັ້ນໝາຍຄວາມວ່າ ມັນຕ້ອງປະຕິບັດແຜນການຢ່າງຄົບຖ້ວນ. ບາງເທື່ອຖືວ່າ ຂໍ້ນີ້ໃນແຜນການເປັນ "ອັນດັບສອງ", ຂໍ້ນັ້ນເປັນ "ອັນດັບໜຶ່ງ"; ປະຕິບັດແຜນການປະເພດ "ອັນດັບໜຶ່ງ" ໂດຍບໍ່ເອົາຫົວຊາຕໍ່ "ອັນດັບສອງ". ເຮັດຈັ່ງຊີ້ບໍ່ໄດ້ເດັດຂາດ ! ທຸກແຜນການ ຕ້ອງໄດ້ຮັບການ ປະຕິບັດຢ່າງຄົບຖ້ວນ.

ອັນນັ້ນໝາຍຄວາມວ່າ ມັນຕ້ອງກວດກາເບິ່ງການປະຕິບັດແຜນການ, ຕ້ອງລົງໂທດຕໍ່ຜູ້ທີ່ລະເມີດລະບຽບວິໄນທາງດ້ານແຜນການ.

ການປ່ຽນສະພາບການ ອາດກໍ່ໃຫ້ເກີດການປ່ຽນແຜນການໄດ້, ອັນນັ້ນເປັນເລື່ອງທຳມະດາ, ແຕ່ວ່າ ບາງຄັ້ງຄາວ ຜູ້ນຳທາງດ້ານເສດຖະກິດ ຢາກເຮັດຊີວິດຂອງຕົນໃຫ້ "ງ່າຍກ່ວາ, ງາມກ່ວາ" ແລະສະເໜີໃຫ້ປ່ຽນແຜນການ ທີ່ຄາດໝາຍໄວ້ແລ້ວ. ການປ່ຽນເຫລົ່ານັ້ນ ບໍ່ຂຶ້ນຢູ່ກັບຄວາມ ຈຳເປັນ ແຫ່ງສະພາບການຕົວຈິງ.

ເຫດການຂອງ "ການປ່ຽນແຜນການ" ເຫລົ່ານັ້ນ ກໍ່ຍ້ອນຄວາມບໍ່ຮູ້ຈັກຈັດຕັ້ງ, ບໍ່ຮູ້ຈັກເຮັດວຽກ ຂອງພະນັກງານບາງຄົນ. ຍ້ອນ "ການປ່ຽນ" ເຫລົ່ານັ້ນ ແຜນການກາຍເປັນ - ໜ້າກາກ ທີ່ປິດບັງຄວາມຂາດຕົກບົກພ່ອງທາງດ້ານວຽກງານ.

ການທີ່ຜູ້ນຳຂຶ້ນສູງເຫັນດີນຳ "ການປ່ຽນ" ເຫລົ່ານັ້ນຂອງ

ພະນັກງານທີ່ຢາກມີແຜນການທີ່ເອັດຢ່າງງ່າຍໄດ້ນັ້ນ ສະແດງໃຫ້ເຫັນເຖິງ ຄວາມບໍ່ຍຶດໝັ້ນໃນຫລັກການ ເຊິ່ງພັກຕ້ອງລົງໂທດ ຢ່າງເຂັ້ມງວດ. ອັນນັ້ນເປັນອັນທີ່ເອີ້ນວ່າ "ຄວາມດີ" ທີ່ກໍ່ໃຫ້ເກີດຄວາມເສຍຫາຍແກ່ລັດເຮົາ.

ຂ້າພະເຈົ້າຕັ້ງບັນຫາຂຶ້ນມາ ກໍ່ບໍ່ແມ່ນຍ້ອນວ່າໃນນະຄອນມິນຊັກ, ໃນລັດເບໂລຣູຊີ ມີຂໍ້ຂາດຕົກບົກຜ່ອງຫລາຍໃນດ້ານນີ້. ກົງກັນຂ້າມນັ້ນ ພວກເຈົ້າມີບົດຮຽນທີ່ດີ. ເຂົາໄດ້ເລົ່າໃຫ້ຂ້າພະເຈົ້າຊາບວ່າ ໃນໂຮງຈັກໂຮງງານຂອງພວກເຈົ້າ ມີກໍລະນີລະເມີດລະບຽບວິໄນ ທາງດ້ານແຜນການບໍ່ຫລາຍ ເຊິ່ງເປັນຜົນສຳເລັດຂອງວຽກງານອັນໃຫຍ່ທາງດ້ານພັກແລະການອົບຮົມແນວຄິດການເມືອງ ຂອງອົງການພັກ. ພວກເຈົ້າຕ້ອງປັບປຸງແລະແຜ່ຂະຫຍາຍບົດຮຽນເຫຼົ່ານັ້ນໃຫ້ຫຼາຍຂຶ້ນ.(ຕົບມື).

ແນ່ນອນວ່າການທີ່ ລັດເບໂລຣູຊີ ໄດ້ຍາດເອົາຜົນສຳເລັດອັນໃຫຍ່ລວງ ໃນທຸກຂົງເຂດ ແຫ່ງການສ້າງທາງດ້ານ ເສດຖະກິດ ແລະສັງຄົມນັ້ນ, ພວກເຮົາຕີລາຄາສູງ ຕໍ່ຜົນສຳເລັດເຫລົ່ານັ້ນ. ໃນຂະນະດຽວກັນນັ້ນ ພວກເຮົາ,ພວກກອມມູນິດ, ບໍ່ຄວນປິດອຳຕໍ່ສິ່ງທີ່ຍັງບໍ່ທັນໄດ້ແກ້ໄຂເທື່ອ.

ພ້ອມ ກັນນັ້ນ ຂ້າພະເຈົ້າຢາກຊີ້ບອກວ່າ ໃນລັດຂອງພວກເຈົ້າ, ໃນນະຄອນມິນຊັກ ຍັງມີໂຮງຈັກໂຮງງານ ວິສາຫະກິດກໍ່ສ້າງ ທີ່ເຮັດວຽກຢ່າງຊັກຊ້າ: ມີການໃຊ້ພື້ນຖານຜະລິດ ຢ່າງບໍ່ມີປະສິດທິພາບສູງ, ມີການໃຊ້ຈ່າຍທາງດ້ານເຫຼັກ, ວັດຖຸ,ພະລັງງານໄຟຟ້າ ຢ່າງຟູມເຟືອຍ; ການໃຊ້ເຄື່ອງກົນ

ຈັກ ຢ່າງບໍ່ດີປານໃດ.

ຍັງມີຂໍ້ຂາດຕົກບົກພ່ອງປະເພດອື່ນຫລາຍຢ່າງ; ພວກເຈົ້າຮູ້ສິ່ງເຫລົ່ານັ້ນ ດີກ່ວາຂ້າພະເຈົ້າ, ຮູ້ວ່າມີກຳລັງແຮງ ປະການໃດ ທີ່ຍັງບໍ່ທັນໄດ້ໃຊ້ເທື່ອ. ບັນດາອົງການພັກ ມີໜ້າທີ່ອັນສັກສິດ ທີ່ຈະປູກຈູກມະຫາຊົນໃນຕົວເມືອງ ແລະຊົນນະບົດໄປແກ້ໄຂບັນຫານີ້.

ສູນກາງພັກ ກ.ສ.ຊ. ຫວັງວ່າ ບັນດາຊາວກອມມູນິດ , ຊາວຜູ້ອອກແຮງງານເບໂລຣູຊີ ທີ່ກ້າວຂຶ້ນໃນການ ພັດທະນາສາທາລະນະລັດຂອງຕົນ ຢ່າງວ່ອງໄວ ຈະສາມາດ ປະຕິບັດແຜນການ ៥ ປີ ຊຸດທີ ໑໐ ແລະບັນລຸຜົນສຳເລັດໃໝ່ ທາງດ້ານເສດຖະກິດແລະສັງຄົມໄດ້.(ຕົບມື.)

ບັນດາສະຫາຍ !

ໃນທີ່ນີ້, ໃນດິນແດນຂອງລັດເບໂລຣູຊີທີ່ໄດ້ຍິນສຽງລະຄັງອັນໂສກເສົ້າສະຫລົດໃຈຂອງ "ຮັດຕິນ" ນັ້ນ ເພິ່ນເຂົ້າໃຈຢ່າງດີເປັນພິເສດ ເຖິງຄວາມໝາຍສຳຄັນຂອງການຕໍ່ສູ້ທີ່ສ.ສ.ສ.ຊ. ພວມດຳເນີນໄປ ເພື່ອສັນຕິພາບ, ເພື່ອຂັດຂວາງບໍ່ໃຫ້ສົງຄາມໂລກຄັ້ງໃໝ່ເກີດຂຶ້ນໄດ້.

ໃນປະຈຸບັນນີ້ ໃນນະຄອນນີວຍອກການປະຊຸມສະໄໝວິສາມັນຂອງ ສະມັດຊາໃຫຍ່ຂອງອົງການສະຫະປະຊາຊາດ ກ່ຽວກັບບັນຫາການປົດອາວຸດ ເກືອບຈົບລົງແລ້ວ.ການປະຊຸມຄັ້ງນີ້ ໄດ້ສະແດງອີກຄັ້ງໃໝ່ ເຖິງຄວາມຕັ້ງໃຈຂອງມວນມະນຸດ ທີ່ຈະຢຸດຕິການແຂ່ງຂັນສ້າງອາວຸດ. ປະເທດພາຄີ ສ.ປ.ຊ.

ເປັນສ່ວນຫລວງຫລາຍໄດ້ສະແດງຄວາມສະໜັບສະໜູນທີ່ຈະ ໃຫ້ໄດ້ມີການປົດອາວຸດ.

ໃນການປະຊຸມຄັ້ງນີ້ ສ.ສ.ສ.ຊ. ແລະບັນດາປະເທດສັງຄົມນິຍົມ ໄດ້ຍື່ນໂຄງການອັນກ້ວາງຂວາງ, ກ້າຫານແລະຕົວຈິງ ແຫ່ງການສະກັດກັ້ນການແຂ່ງຂັນສ້າງອາວຸດ ເຊິ່ງຢູ່ໃນທ່າມກາງຄວາມສົນໃຈຂອງກອງປະຊຸມ.

ກອງປະຊຸມຄັ້ງນີ້ ກໍໄດ້ສະແດງໃຫ້ເຫັນວ່າ ຜູ້ນຳຂອງບາງປະເທດໃຫຍ່ແຫ່ງກຸ່ມນາໂຕ ເປັນຕົ້ນແມ່ນອາເມລິກາ ບໍ່ຢາກສະແດງທ່າທີ ແບບລິດປະດິດສ້າງ ຕໍ່ບັນຫາການປົດອາວຸດ.ບໍ່ດັ່ງນັ້ນ ເປັນຫຍັງກອງປະຊຸມຂອງສະພານາໂຕໃນວໍຊິງຕັນຈຶ່ງໄດ້ຜ່ານໂຄງການສ້າງອາວຸດສະບັບໃໝ່ ໃນວັນເວລາທີ່ການປະຊຸມສະໄໝວິສາມັນ ຂອງສະມັດຊາໃຫຍ່ ຂອງ ອ.ສ.ປ. ພວມພິຈາລະນາບັນຫາວ່າດ້ວຍການສະກັດກັ້ນ ການແຂ່ງຂັນສ້າງອາວຸດ ແລະບັນຫາການປົດອາວຸດ. ອັນນັ້ນ ບໍ່ໝາຍຄວາມວ່າ ພວກເຂົາບໍ່ເອົາຫົວຊາ ຕໍ່ຄວາມມຸ່ງມາດ ປາຖະໜາ ຂອງບັນດາປະຊາຊາດ ທີ່ຮັກຫອມສັນຕິພາບ ຊັ້ນຫວະ? ມັນອາດເຂົ້າໃຈໄດ້ວ່າໃນງູວໍຊິງຕັນບັນດາປະເທດພາຄີກຸ່ມ-ນາໂຕໄດ້ວາງ "ນະໂຍບາຍຕົວຈິງ" ; ໃນຂະນະດຽວກັນນັ້ນໃນນິວຢອກປະເທດເຫຼົ່ານັ້ນຊ້ຳເຂົ້າຮ່ວມໃນການອະພິປາຍ ພຽງແຕ່ເພື່ອຫລອກລວງທ່າງສຽງມະຫາຊົນທີ່ນັ້ນ.ຜູ້ນຳປັກກິ່ງ ກໍໄດ້ປະສານສົມທົບກັບທ່າທີແນວນີ້. ໃນອ.ສ.ປ. ນັ້ນຕົວແທນຂອງ ພວກເຂົາໄດ້ກ່າວຄຳປາໄສ ທີ່ບໍ່ເໝາະສົມ ແກ່-

ສະມັດຊາໃຫຍ່ຂອງອົງການນີ້ ຫາກແມ່ນເໝາະສົມແກ່ ກອງ
ປະຊຸມຂອງສະພາມາໂຕ.

ວໍຊິງຕັນ ໄດ້ຕີລາຄາສູງຕໍ່ທ່າທີແນວນີ້ຂອງປັກກິ່ງ. ໃນໄລ
ຍະຫລັງໆນີ້ ພວກອາເມລິກາຊຸ້ນນຳ ດ້ານຫລັງ "ໃບໄພ້ຈີນ"
ເພື່ອຕ້ານ ສ.ສ.ສ.ຊ. ອັນນັ້ນເປັນນະໂຍບາຍທີ່ເປັນອັນຕະ
ລາຍ ແລະອາດຈະເກີດຜົນຮ້າຍແກ່ຜູ້ດຳເນີນນະໂຍບາຍນີ້ໄດ້.

ກອງປະຊຸມຂອງສະມັດຊາໃຫຍ່ ແຫ່ງ ອ.ສ.ປ.ເກືອບຈະ
ສິ້ນສຸດລົງແລ້ວ. ແນ່ນອນວ່າ, ຄວາມຄິດແລະຂໍ້ສະເໜີຕ່າງ
ຕ່າງ ຂອງກອງປະຊຸມຄັ້ງນີ້ ຈະໄດ້ສິ່ງຜົນສະທ້ອນ ຂອງຕົນ
ຢ່າງກ້ວາງຂວາງ. ການຕໍ່ສູ້ເພື່ອການກະທຳຕົວຈິງ ໃນດ້ານ
ການສະກັດກັ້ນ ການແຂ່ງຂັນສ້າງອາວຸດ ແລະການປົດອາວຸດ
ພວມດຳເນີນຕໍ່ໄປ ແລະຕ້ອງໄດ້ຮັບການຂະຫຍາຍຕົວໃຫ້ຫຼາຍ
ຂຶ້ນ.(ຕົບມືຢ່າງຍືດຍາວ).

ໃນດ້ານນີ້ ການເຈລະຈາທີ່ນະຄອນວຽນ ກ່ຽວກັບການຈຳ
ກັດກຳລັງທະຫານ ແລະກຳລັງອາວຸດ ໃນຢູໂລບພາກກາງ ມີ
ບົດບາດສຳຄັນ. ຂ້າພະເຈົ້າໄດ້ເວົ້າກ່ຽວກັບບັນຫານີ້ຫຼາຍຄັ້ງ
ແລ້ວ ກໍບໍ່ຮູ້ສຶກມີຄວາມດີໃຈຫລາຍປານໃດ.ຍ້ອນວ່າ ການເຈ
ລະຈາກັນ ໄດ້ດຳເນີນໄປ ໕ ປີແລ້ວ ແຕ່ຍັງບໍ່ໄດ້ຜົນຕົວຈິງ-
ເທື່ອ. ແຕ່ວ່າບັນຫານີ້ ເປັນບັນຫາທີ່ສຳຄັນທົ່ວແກ່ຢູໂລບ ແກ່
ສະພາບການທາງສາກົນອີກດ້ວຍ.

ພາຍຫລັງການຄົ້ນຄ້ວາສະພາບການຕົວຈິງແລ້ວບັນດາປະ-
ເທດສັງຄົມນິຍົມ ກໍໄດ້ຮັດບາດກ້າວໃໝ່ ເພື່ອເຮັດໃຫ້ການ

ເຈລະຈາກຸງວຽນ ໄດ້ຫລຸດພົ້ນອອກຈາກ ສະພາບຈົນຕາແຈ. ບັນດາປະເທດຂອງພວກເຮົາ ໄດ້ຢືນຂໍ້ສະເໜີຕົວຈິງ ອັນກ້ວາງຂວາງ ທີ່ອີງໃສ່ບົດຮຽນຂອງການເຈລະຈາ ຍາວນານທີ່ກຸງວຽນ.

ເນື້ອໃນຂໍ້ສະເໜີເປັນແນວໃດ ?

ກ່ອນອື່ນໝົດ ໃນຂໍ້ສະເໜີເຫຼົ່ານັ້ນ ພວກເຮົາໄດ້ຊີ້ບອກ-ຕົວເລກຈຳນວນທະຫານອາເມລິກາ ແລະໂຊວຽດທີ່ຕ້ອງຖອນອອກຈາກຢູໂລບພາກກາງ ໃນໄລຍະຂັ້ນທຳອິດ. ສ່ວນຝ່າຍເຮົາ, ສ.ສ.ສ.ຊ. ກຽມພ້ອມທີ່ຈະຖອນກອງພົນໃຫຍ່ ມີ ກອງພ້ອມກັບອາວຸດ ແລະລົດຕັງ ໑໐໐໐ ຄັນໃນໄລຍະເວລາ ໑ ປີ.

ສອງ - ການຈຳກັດກຳລັງທະຫານຂອງກຸ່ມນາໂຕແລະອົງການ ວໍຊໍ ຕ້ອງດຳເນີນໄປ ໂດຍອີງໃສ່ຫລັກໝັ້ນແຫ່ງການດຸນດ່ຽງກັນ. ພາຍຫລັງການຈຳກັດກຳລັງທະຫານຂອງບັນດາປະເທດແລ້ວ ທັງສອງຝ່າຍຈະໄດ້ມີກຳລັງທະຫານທໍ່ກັນ ໃນຢູໂລບພາກກາງ.

ຈຸດນີ້ກໍ່ຄືກັບຈຸດທີ່ຝ່າຍຕາເວັນຕົກໄດ້ສະເໜີແລ້ວ. ແນ່ນອນວ່າ ແຕ່ລະປະເທດບໍ່ຄວນປະຕິເສດ ທີ່ຈະຈຳກັດກຳລັງອາວຸດຂອງຕົນລົງ ຫລືຍິ່ງໄປກວ່ານັ້ນ ຈະເພີ່ມທະວີກຳລັງ ອາວຸດຂອງຕົນຂຶ້ນ.

ບັນດາປະເທດສັງຄົມນິຍົມ ສະເໜີຂໍ້ຜ່ອນສັ້ນຜ່ອນຍາວ ທີ່ເໝາະສົມ ມາຍັງຝ່າຍອື່ນ. ໂດຍການຍື່ນຂໍ້ສະເໜີແນວ ນີ້ ພວກເຮົາໄດ້ຜ່ານເສັ້ນທາງເຄິ່ງໜຶ່ງ ຂອງພວກເຮົາ ແລ້ວ.

ດ້ວຍເຫດນັ້ນ ພວກເຮົາຈຶ່ງຮຽກຮ້ອງໃຫ້ບັນດາປະເທດ ພາຄີກຸ່ມນາໂຕ ລົງມືປະຕິບັດການກະທຳຕົວຈິງ. ມັນມີພື້ນຖານສຳຫລັບຂໍ້ຕົກລົງກັນແລ້ວ; ຝ່າຍຕາເວັນຕົກຕ້ອງເຮັດ ບາດກ້າວທາງການເມືອງຂອງຕົນ.

ການເຮັດຂໍ້ຕົກລົງໃນກຸງວຽນ ຈະໄດ້ສ້າງເງື່ອນໄຂ ທີ່ອຳນວຍແກ່ການເລີ່ມເຈລະຈາກັນ ກ່ຽວກັບບັນຫາອື່ນໆຂອງການຜ່ອນຄາຍທາງທະຫານໃນຢູລົບ.

ການປັບປຸງບັນຍາກາດທາງການເມືອງ ໃນຢູລົບ ເປັນຜົນສຳເລັດທີ່ສຳຄັນຫນຶ່ງ ແຫ່ງການຕໍ່ສູ້ເພື່ອສັນຕິພາບ ໃນໄລຍະເວລາ ໑໐ ປີທີ່ຜ່ານມານີ້. ຂ້າພະເຈົ້າໄດ້ເຂົ້າໃຈ ເລື່ອງນີ້ໃນເມື່ອພວກເຮົາໄດ້ໄປຢ້ຽມຢາມ ສ.ສ.ຍ.ໃນມໍ່ໆມານີ້.

ການສ້າງສາຍສຳພັນກັນກັບສ.ສ.ຍ. ໄດ້ມີອຸປະສັກຫລາຍປະການ ທັງພາວະວິໄສ ແລະອັດຕະວິໄສ;ບາດກ້າວທຸກຢ່າງໃນດ້ານນີ້ ໄດ້ເປັນວຽກທີ່ງ່າຍດາຍ.ເຖິງເປັນແນວນັ້ນກໍຕາມໃນປະຈຸບັນນີ້ (ໂດຍບໍ່ຫລົງບໍ່ລືມກ່ຽວກັບຈຸດບໍ່ດີ) ສາຍສຳພັນກັນ ລະຫວ່າງ ສ.ສ.ສ.ຊ. ກັບ ສ.ປ.ຍ.ໄດ້ກາຍເປັນ - ພາກສ່ວນທີ່ສຳຄັນ ຂອງສະຖຽນລະພາບໃນຢູລົບ ແລະ ການຜ່ອນຄາຍໃນທະວີບຢູລົບ.

ເພິ່ນກໍໄດ້ບັນລຸຜົນສຳເລັດອັນດີ ໃນການສ້າງສາຍສຳພັນ-ລະຫວ່າງ ສ.ສ.ສ.ຊ. ກັບຝະລັ່ງ;ສາຍສຳພັນກັນທາງດ້ານຕ່າງໆ ກັບອີຕາລີ, ຊະວິເດັນ, ໂອຕລິດ (ໂດຍບໍ່ເວົ້າເຖິງປະເທດເພື່ອນບ້ານຂອງພວກເຮົາ ຄື ຟິນແລນ) ກໍດຳເນີນ

ໄປຢ່າງດີ.

ການປັຽມຢາມ ສ.ສ.ສ.ຊ.ຂອງເອັດເຊວິດນາຍົກລັດຖະມົນຕີ ຕຸລະກີ ໄດ້ກາຍເປັນການປະກອບສ່ວນຕົວຈິງ ເຂົ້າໃນການຂະຫຍາຍການຮ່ວມມືກັນ ຢ່າງສັນຕິ ລະຫວ່າງບັນດາປະເທດພາຄີ ກອງປະຊຸມທົ່ວຢູລົບ. ການເຈລະຈາກັນ,ການລົງເຊັນເອກະສານທາງການເມືອງ ກ່ຽວກັບຫລັກການແຫ່ງການຮ່ວມມືກັນ ຖານເພື່ອນບ້ານໃກ້ຄຽງ ລະຫວ່າງ ສ.ສ.ສ.ຊ. ກັບຕຸລະກີນັ້ນ ໄດ້ ເປັນບາດກ້າວທີ່ສຳຄັນ ໃນການເດີນ-ຕາມເສັ້ນທາງ ແຫ່ງການຂະຫຍາຍສາຍສຳພັນກັນເຊິ່ງແມ່ນ-ທ່ານເລນິນ ແລະອາຕາຕຸກ ໄດ້ວາງແຜນການໄວ້ກ່ອນ.

ເວົ້າຢ່າງທົ່ວໆໄປນັ້ນ ຂ້າພະເຈົ້າເຫັນດີນຳຄວາມຄິດເຫັນຂອງປະທານາທິບໍດີຊະມິດທີ່ໄດ້ກ່າວໃນກອງປະຊຸມສະມັດຊາ-ໃຫຍ່ ຂອງ ອ.ສ.ປ. ວ່າ ໃນປະຈຸບັນນີ້ ໃນທະວີບຢູລົບ ມີຄວາມໄວ້ເນື້ອເຊື່ອໃຈກັນແລະກັນ ຫລາຍກ່ວາທີ່ໄດ້ມີ ໃນໄລຍະເວລາ ໑໐ ປີ ກ່ອນຫນ້ານີ້.

ອັນນັ້ນເປັນຜົນສຳເລັດຮ່ວມ ຂອງບັນດາປະເທດຢູລົບທີ່ຮັກຫອມສັນຕິພາບ ເຊິ່ງພວກເຮົາຕ້ອງປົກປ້ອງ, ສະຫນັບສະຫນູນ ແລະເສີມຂະຫຍາຍຢູ່ເລື້ອຍໆ. ອັນນັ້ນມີຄວາມຫມາຍສຳ ຄັນເປັນພິເສດ ໃນເມື່ອສະພາບການທາງສາກົນ ພວມໄດ້ຮັບຄວາມເຄັ່ງຮ້ອງຍິ່ງຂຶ້ນ. ທະວີບຢູລົບສາມາດສະແດງການກະທຳຕົວຈິງ ແຫ່ງການຢູ່ຮ່ວມກັນໂດຍສັນຕິ ແລະ ການຮ່ວມມືກັນໄດ້.

ການຕໍ່ສູ້ເພື່ອສັນຕິພາບ ອັນຖາວອນນັ້ນ ມັນບໍ່ພຽງແຕ່ເປັນວຽກຂອງລັດຖະບານທັ້ງນັ້ນ ຫາກຍັງເປັນວຽກຂອງບັນດາ ປະຊາຊາດອີກດ້ວຍ. ໃນຕອນກາງຂອງສະຕະວັດທີ XIX ການມາກ ໄດ້ຮຽກຮ້ອງ ຈີນຊຸນກຳມະກອນ ໃຫ້ຮ່ຳຮຽນ ການເມືອງທາງສາກົນ, ໃຫ້ຕໍ່ສູ້ເພື່ອສັນຕິພາບລະຫວ່າງບັນດາປະຊາຊາດ. ຄຳສັ່ງສອນດັ່ງກ່າວ ຍັງມີຊີວິດຢູ່ໃນຄວາມຮູ້ສຶກແລະການກະທຳ ຂອງມະຫາຊົນກຳມະກອນ ແລະກອງນຳໜ້າ - ທາງການເມືອງ ຂອງຊົນຊຸນກຳມະກອນ.

ຜົນປະໂຫຍດຂັ້ນພື້ນຖານ ຂອງຊາວຜູ້ອອກແຮງງານ ຂອງບັນດາປະເທດຮຽກຮ້ອງໃຫ້ປົກປັກຮັກສາຜົນສຳເລັດທີ່ໄດ້ບັນລຸໃນເວທີສາກົນ ໃນໄລຍະເວລາບາງປີຫລັງນີ້, ຮຽກຮ້ອງໃຫ້ກ້າວຂຶ້ນສູ່ສັນຕິພາບອັນຖາວອນ ສຳຫລັບບັນດາປະຊາຊາດ . ເພິ່ນສາມາດປະຕິບັດເປົ້າໝາຍນີ້ ດ້ວຍການກະທຳຮ່ວມກັນ- ໄດ້; ພວກເຮົາເຊື່ອໝັ້ນວ່າ ພວກເຮົາຈະໄດ້ປະຕິບັດ ເປົ້າໝາຍນີ້ເດັດຂາດ. (ຕົບມືຢ່າງຍືດຍາວ)

ບັນດາສະຫາຍ ! ການຮ່ວມມືກັນລະຫວ່າງປະຊາຊົນຂອງບັນດາປະເທດສັງຄົມນິຍົມອ້າຍນ້ອງ ໄດ້ກາຍເປັນພາກສ່ວນທີ່ສຳຄັນ ຂອງຊີວິດທາງສາກົນ ໃນຍຸກສະໄໝນີ້.

ເບໂລຣູຊີໂຊວຽດ ເປັນນັກກໍ່ສ້າງສາຍການພົວພັນແຫ່ງມິດຕະພາບ ທີ່ໄດ້ຂ້າມແມ່ນ້ຳບຸກ, ຂ້າມຜ່ານຊາຍແດນໂຊວຽດ- ບັນດາປະເທດສັງຄົມນິຍົມ. ການທີ່ໂຮງຈັກໂຮງງານ ຕ່າງໆຂອງເບໂລຣູຊີ ພວມປະສານງານກັບບັນດາປະເທດ ສັງຄົມນິ

ຍົມ,ສາຍສຳພັນກັນຢ່າງເອົາຈິງເອົາຈັງ ແລະ ຖານມິດກັບ-ແຂວງຕ່າງຂອງໂປໂລຍ, ສາທາລະນະລັດສັງຄົມນິຍົມ ໂຊວຽດ ເຊັກໂກສະໂລວາກີ, ສ.ປ.ຍ., ບຸນກາລີ ແລະ ປະເທດອື່ນໆ ທັງໝົດເຫລົ່ານັ້ນ ພິສູດໃຫ້ເຫັນເຖິງຄວາມ ຈິງຂອງເລື່ອງນີ້. (ຕົບມື)

ການບິນໃນອະວະກາດຂອງຄະນະນັກບິນສາກົນ ໄດ້ກາຍເປັນເຄື່ອງໝາຍທີ່ຈະແຈ້ງ ຂອງໄລຍະອັນໃໝ່ ຂອງການຮ່ວມມືກັນ ຂອງບັນດາປະເທດສັງຄົມນິຍົມ. ໃນມື້ໆມານີ້ພວກເຮົາຊົມເຊີຍນັກບິນອະວະກາດ ຊາວເຊັກໂກສະໂລວາກີ ຄົນທຳອິດ. ໃນມື້ໆມານີ້ ພວກເຮົາອາດຈະຊົມເຊີຍ ການບິນໃນອະວະກາດຂອງຕົວແທນ ຂອງປະເທດສັງຄົມນິຍົມອື່ນໆໄດ້.ຂໍອວຍພອນໃຫ້ວິລະຊົນອະວະກາດ ຈົ່ງໄດ້ຮັບຜົນສຳເລັດໃໝ່ໆພວກເຂົາຍົກສູງຄົນຫູງແຫ່ງສັງຄົມນິຍົມ, ສັນຕິພາບ ແລະມິດຕະພາບ ຂອງບັນດາປະຊາຊາດ.(ຕົບມືຢ່າງຟົດຟື້ນ).

ສຸດທ້າຍ, ຊາວນະຄອນມິນຊຸກ, ຂ້າພະເຈົ້າຢາກກ່າວວ່າຂ້າພະເຈົ້າຮູ້ສຶກມີຄວາມປິຕິຍິນດີຫລາຍ ເນື່ອງໃນໂອກາດ ທີ່ໄດ້ພົບປະກັນກັບນະຄອນອັນສວຍງາມ ແລະບັນດາ ຊາວນະຄອນມິນຊຸກຜູ້ດີເດັ່ນ.(ຕົບມືຢ່າງຍືດຍາວ).

ຂໍໃຫ້ຂ້າພະເຈົ້າປະກາດຂໍ້ດຳລັດ ຂອງຄະນະບໍລິຫານງານຂອງສະພາໂຊວຽດສູງສຸດ ແຫ່ງ ສ.ສ.ສ.ຊ.ກ່ຽວກັບ"ການໃຫ້ຊື່" ນະຄອນວິລະຊົນ "ແກ່ນະຄອນມິນຊຸກ" (ສະຫາຍບະເລັດຊະເນັບ ໄດ້ອ່ານຂໍ້ດຳລັດ; ມີການຕົບມື ຢ່າງຍືດຍາວ

ແລະ ຟົດຟື້ນ).

ໃນນາມສູນກາງ ພ.ກ.ສ.ຊ.ແລະ ຄະນະບໍລິຫານງານຂອງສະພາໂຊວຽດສູງສຸດ ແຫ່ງ ສ.ສ.ສ.ຊ.ຂ້າພະເຈົ້າ ຂໍມອບລາງວັນອັນສູງນີ້ ໃຫ້ແກ່ນະຄອນມິນຊັກ.

(ສະຫາຍບະເລັດຊະເນັບ ຕິດຫລຽນໄຊເລນິນ ແລະ"ດາວຄຳ" ແກ່ທຸງແຫ່ງນະຄອນມິນຊັກ. ບະເລັດຊະເນັບ ສະແດງຄວາມເຄົາລົບຕໍ່ບັນດາຜູ້ນຳ ຂອງລັດເບໂລຣູຊິ ແລະນະຄອນມິນຊັກ, ຜູ້ອາວຸໂສ, ຜູ້ແທນຂອງຊາວຜູ້ອອກແຮງງານ; ມີການຕົບມືຢ່າງຍືດຍາວ ແລະຟົດຟື້ນ).

ບັນດາສະຫາຍ ! ຂໍອວຍພອນໃຫ້ບັນດາທ່ານ ໃນຫ້ອງປະຊຸມນີ້, ບັນດາຊາວຜູ້ອອກແຮງງານຂອງມິນຊັກແລະເບໂລຣູຊິໂຊວຽດ ຈົ່ງບັນລຸຜົນສຳເລັດອັນໃຫຍ່ຫລວງໃນການຕໍ່ສູ້ ເພື່ອປະຕິບັດບັນດາມະຕິ ຂອງກອງປະຊຸມໃຫຍ່ ຄັ້ງທີ **XXV** ແຫ່ງ ພ.ກ.ສ.ຊ., ບັນດາເປົ້າຫມາຍແຫ່ງແຜນການ ໕ ປີຊຸດທີ-໑໐, ຈົ່ງມີຄວາມສົມບູນພູນສຸກ (ຕົບມືຢ່າງຟົດຟື້ນ).

ນະຄອນວິລະຊົນມິນຊັກ ຈົ່ງຫມັ້ນຍືນ! (ຕົບມືຢ່າງຍືດຍາວ ແລະ ຟົດຟື້ນ).

ຫລັ້ມທີ ໗,
ຫນ້າ ໓໗໔-໓໗໘

ຄຳປາໄສໃນວົງກະແລມແລ້ງໃນພິທີງານລ້ຽງອາຫານ ເພື່ອເປັນກຽດແກ່ ດິເດ ລັດຊິລະກີ ປະທານາທິບໍດີແຫ່ງ ສາທາລະນະລັດປະຊາທິປະໄຕມາດາກາສະກາ ວັນທີ ໒໙ ເດືອນມິຖຸນາປີ ໑໙໗໘

ສະຫາຍ ລັດຊິລະກີ ທີ່ເຄົາລົບ !

ແຂກທີ່ເຄົາລົບ !

ບັນດາສະຫາຍ !

ຂ້າພະເຈົ້າຮູ້ສຶກມີຄວາມປິຕິຍິນດີ ເນື່ອງໃນໂອກາດ ທີ່ຈະສະແດງຄວາມເຄົາລົບ ຕໍ່ປະທານາທິບໍດີ ແຫ່ງ ສ.ປ.ມ. ທີ່ເປັນປະເທດ ເຊິ່ງພວກເຮົາມີສາຍສຳພັນກັນດ້ວຍຄວາມເຄົາລົບ, ຄວາມໄວ້ເນື້ອເຊື່ອໃຈກັນແລະມິດຕະພາບ.

ມາດາກາສະກາ ຕັ້ງຢູ່ຫ່າງໄກຈາກ ສ.ສ.ສ.ຊ. ເຖິງເປັນແນວນັ້ນກໍຕາມ ປະຊາຊົນໂຊວຽດ ໄດ້ຕິດຕາມເບິ່ງດ້ວຍຄວາມເອົາໃຈໃສ່ ຕໍ່ການຕໍ່ສູ້ອັນພິລະອາດຫານຂອງປະຊາຊົນມາດາກາສະກາ ເພື່ອເສລີພາບແລະເອກະລາດ ແຫ່ງຊາດ. (ຕົບມື.)

ພວກເຮົາຮູ້ສຶກດີໃຈ ຕໍ່ການທີ່ ມາດາກາສະກາ ພວມ ມີການປ່ຽນແປງອັນເລິກເຊິ່ງ ທາງດ້ານສັງຄົມ-ເສດຖະກິດ . ພວກເຮົາຂໍອວຍພອນໃຫ້ປະຊາຊົນນີ້ ຈົ່ງໄດ້ຮັບຜົນສຳເລັດອັນ

ໃຫ້ຍຫລວງໃນການປະຕິບັດ ໂຄງການດຳເນີນ ການປະຕິວັດສັງຄົມນິຍົມ ເຊິ່ງເປັນໂຄງການ ທາງດ້ານແນວຄິດ, ການເມືອງແລະເສດຖະກິດ ຂອງການຂ້າມຜ່ານຂັ້ນສູ່ ເສັ້ນທາງທີ່ມຸ່ງໜ້າໄປສູ່ສັງຄົມນິຍົມ. ພວກເຮົາຮູ້ຢ່າງດີວ່າໂຄງການດັ່ງກ່າວໄດ້ຮັບການວາງອອກພາຍໃຕ້ການນຳພາຂອງທ່ານປະທານາທິບໍດີເອງ.

ພວກເຮົາເຄົາລົບທິດທາງອັນເອົາຈິງເອົາຈັງ ຕ້ານລັດທິຈັກກະພັດນິຍົມ ເຊິ່ງ ສ.ປ.ນ. ພວມດຳເນີນຢູ່ໃນເວທີ ສາກົນ.

ພວກເຮົາເຫັນດີເຫັນຊອບກັບຄວາມຕັ້ງໃຈ ທີ່ຈະປັບປຸງອົງການສາມັກຄີອາຟະລິກາບົນພື້ນຖານ ຕ້ານລັດທິຈັກກະພັດນິຍົມແລະລ່າເມືອງຂຶ້ນ. ພວກເຮົາຕີລາຄາສູງຕໍ່ທ່າທີອັນສຸດກົກສຸດປາຍຂອງ ມາດາກາສະກາ ທີ່ຕ້ານລະບົບຈຳແນກ ເຊື້ອຊາດແລະລະບົບລ່າເມືອງຂຶ້ນທີ່ຕັ້ງຢູ່ໃນອາຟະລິກາພາກໃຕ້.

ໃນປະຈຸບັນນີ້ ທະວີບອາຟະລິກາ ເປັນບ່ອນທີ່ບັນດາກຳລັງຈັກກະພັດນິຍົມສະແດງຄວາມສົນໃຈນຳຢ່າງຫລາຍ. ເໝືອນກັບໄລຍະເວລາອັນຊົ່ວຮ້າຍຂອງການດຳລົງຊີວິດ ຂອງລະບົບລ່າເມືອງຂຶ້ນນັ້ນ ພວກຝ່າຍຕາເວັນຕົກ ອອກແຮງພິຈາລະນາບັນຫາອາຟະລິກາຕ່າງໆຢູ່ເລື້ອຍໆ. ບໍ່ຮູ້ວ່າແມ່ນໃຜ ໄດ້ມອບໝາຍໜ້າທີ່ຕັດສິນໂຊກຊາຕາກຳຂອງຊາວອາຟະລິກາໃຫ້ແກ່ພວກເຂົາ, ເຮັດໃຫ້ອາຟະລິກາຕົກຢູ່ພາຍໃຕ້ອາລັກຂາ ຂອງກຸ່ມນາໂຕ? ໃຜໄດ້ມອບໝາຍສິດແກ່ພວກເຂົາທີ່ຈະແຊກແຊງ

ເຂົ້າໃນກິດຈະການພາຍໃນຂອງປະເທດ ຊາເອຍ, ສ້າງຕັ້ງອັນທີ່ເອີ້ນວ່າ "ກອງທະຫານອາຟະລິກາ ທີ່ມີຫນ້າທີ່ຂ້າ ຊາວອາຟະລິກາ ດ້ວຍມືຂອງຊາວອາຟະລິກາເອງ !

ໃນຄຳຖະແຫລງການສະບັບນຶ່ງມານີ້ ສ.ສ.ສ.ຊ.ໄດ້ປະກາດທ່າທີທັດສະນະຂອງຕົນທີ່ມີຕໍ່ການກະທຳເຫລົ່ານັ້ນ ໃນອາຟະລິກາ. ຂ້າພະເຈົ້າຢາກເວົ້າຢ່າງສັ້ນໆວ່າ ແຜນການຂອງພວກຈັກກະພັດຕໍ່ອາຟະລິກາ ເປັນແຜນການທີ່ເປັນອັນຕະລາຍ, ເປັນອັນຕະລາຍແກ່ບັນດາປະຊາຊາດອາຟະລິກາ, ແກ່ຄວາມຕັ້ງໃຈຂອງບັນດາປະຊາຊາດອາຟະລິກາ ທີ່ຈະໄປສູ່ຊີວິດ ທີ່ມີເສລີພາບ, ຊີວິດທີ່ດີກ່ວາເກົ່າ, ເປັນອັນຕະລາຍແກ່ສັນຕິພາບແລະການລົດຜ່ອນຄວາມເຄັ່ງຕຶງ.

ສ່ວນ ສ.ສ.ສ.ຊ. ນັ້ນ ພວກເຮົາສະຫນັບສະຫນູນ ຂະບວນການປົດປ່ອຍຊາດໃນອາຟະລິກາ ເຫມືອນດັ່ງ ໃນທະວີບອື່ນໆ. ພວກເຮົາສາມັກຄີກັນກັບການຕໍ່ສູ້ອັນເປັນທຳ ເພື່ອປົດປ່ອຍຊາດ. ອັນນັ້ນບໍ່ຫມາຍຄວາມວ່າ ສ.ສ.ສ.ຊ. ຄັດຄ້ານການອອກແຮງ (ນັບລວມທາງດ້ານການທູດ) ທີ່ແນໃສ່ແກ້ໄຂບັນຫາໂດຍສັນຕິວິທີ ເພື່ອເປັນຜົນປະໂຫຍດຂັ້ນພື້ນຖານແກ່ປະຊາຊາດຕ່າງໆ.

ພວກເຮົາບໍ່ມີຜົນປະໂຫຍດທີ່ເຫັນແກ່ຕົວ ໃນທະວີບອາຟະລິກາ. ພວກເຮົາຄັດຄ້ານການທີ່ບໍລິສັດຜູກຂາດ ຂອງພວກຈັກກະພັດປຸ້ນສະດົມຊັບພະຍາກອນທຳມະຊາດຂອງບັນດາປະເທດອາຟະລິກາ. ພວກເຮົາຄັດຄ້ານ ການແຊກແຊງ ທຸກປະການ

ເຂົ້າໃນກິດຈະການພາຍໃນຂອງປະເທດອາຟະລິກາ ເໝືອນດັ່ງຂອງປະເທດອື່ນໆເຊັ່ນດຽວກັນ.ສ.ສ.ສ.ຊ.ຄັດຄ້ານການສ້າງຕັ້ງກຸ່ມທະຫານ, ການແບ່ງແຍກບັນດາປະເທດ ອາຟະລິກາເປັນພັກເປັນພວກທີ່ປະທະກັນ,ການກໍ່ໃຫ້ເກີດການຖົກຖຽງກັນກ່ຽວກັບບັນຫາດິນແດນ ແລະບັນຫາອື່ນໆ ຂອງສະໄໝລ່າເມືອງຂຶ້ນ.

ຂ້າພະເຈົ້າເຂົ້າໃຈວ່າ ພວກເຮົາ ແລະ ມາດາກາສະກາ ຕ່າງກໍມີຄວາມຄິດເຫັນອັນດຽວກັບການປັບປຸງສັນຕິພາບ ແລະ ຄວາມປອດໄພທາງສາກົນ. ທ່ານປະທານາທິບໍດີ ອາດຮູ້ເຖິງວຽກງານອັນໃຫຍ່ຫລວງຂອງ ສ.ສ.ສ.ຊ.ໃນດ້ານນີ້,ໃນ ອ.ສ.ປ. ພວກເຮົາພວມສະເໜີໂຄງການດຳເນີນງານເພື່ອແກ້ໄຂບັນຫາວ່າດ້ວຍການປົດອາວຸດ.

ພວກເຮົາກຽມພ້ອມທີ່ຈະແກ້ໄຂບັນຫານີ້ ຢ່າງຮອບດ້ານ. ພວກເຮົາເຂົ້າໃຈຄວາມຕັ້ງໃຈຂອງ ມາດາກາສະກາ ທີ່ຮຽກຮ້ອງໃຫ້ເຮັດພາກສ່ວນຂອງມະຫາສະມຸດອິນເດຍ ເຊິ່ງເກາະມາດາກາສະກາຕັ້ງຢູ່ ກາຍເປັນເຂດສັນຕິພາບ ຂ້າພະເຈົ້າຢາກເວົ້າເນັ້ນວ່າ ອັນນັ້ນກໍເປັນຄວາມຕ້ອງການອັນບໍລິສຸດໃຈຂອງພວກເຮົາເຊັ່ນດຽວກັນ.

ການພົບປະກັນຄັ້ງນີ້ ສະແດງໃຫ້ເຫັນເຖິງການທີ່ສາຍ ສຳພັນກັນໂຊວຽດ-ສ.ປ.ມ. ພວມໄດ້ຮັບການປັບປຸງ ໃຫ້ແໜ້ນແຟ້ນຍິ່ງຂຶ້ນ, ພວກເຮົາຖືວ່າສາຍສຳພັນກັນດັ່ງກ່າວ ພວມຂະຫຍາຍຕົວຢ່າງດີ. ແນ່ນອນວ່າ ພວກເຮົາ ຍັງບໍ່ທັນໝູນ ໃຊ້

ຄວາມອາດສາມາດທຸກຢ່າງ ໃນດ້ານການຮ່ວມມືກັນທາງເສດຖະກິດ, ການຄ້າ, ວັດທະນະທຳ ແລະ ດ້ານອື່ນໆໄດ້ເທື່ອ. ເພື່ອຮັບໃຊ້ຜົນປະໂຫຍດຂອງປະຊາຊົນຂອງທັງສອງປະເທດ, ພວກເຮົາຍັງມີວຽກຫລາຍໃນດ້ານນີ້.

ບັນດາສະຫາຍທີ່ຮັກແພງ ! ຂ້າພະເຈົ້າຢາກເວົ້າກ່ຽວກັບເລື່ອງໜຶ່ງອີກ. ໃນຕົ້ນເດືອນກໍລະກົດປະຊາຊົນຂອງປະເທດຫວຽດນາມອ້າຍນ້ອງພ້ອມກັບເພື່ອນມິດນັບເປັນລ້ານໆຄົນ ໃນທົ່ວໂລກ ຈະສະເຫລີມສະຫລອງວັນສະຖາປະນາ ສ.ສ. ຫວຽດນາມຄົບຮອບສອງປີ.

ພວກເຮົາ, ຊາວໂຊວຽດ,ເຄົາລົບແລະຮັກແພງປະຊາຊົນຫວຽດນາມ, ຜູ້ນຳຫວຽດນາມທີ່ໄດ້ຜ່ານການທົດສອບໃນການສູ້ຮົບ ແລະສະແດງຄວາມອົງອາດກ້າຫານ,ຄວາມຍຶດໝັ້ນໃນຫລັກການ, ຄວາມຍຶດໝັ້ນໃນອຸດົມຄະຕິສັງຄົມນິຍົມ. ມິດຕະພາບລະຫວ່າງພວກເຮົາກັບປະເທດຫວຽດນາມໄດ້ຮັບ ການສ້າງຂຶ້ນໃນລະຫວ່າງ ການຕໍ່ສູ້ຂອງປະເທດນີ້ທີ່ພະລະອາດຫານຕ້ານພວກຈັກກະພັດຮຸກຮານ.ມັນພວມໄດ້ຮັບການປ່ຽນຮູບການໃຫ້ເປັນແບບໃຫ່ມທີ່ເລິກເຊິ່ງກ່ວາເກົ່າໃນເງື່ອນໄຂແຫ່ງການກໍ່ສ້າງຢ່າງສັນຕິໃນປະເທດຂອງຫວຽດນາມເອກະພາບທີ່ມີເສລີພາບ.

ໃນຊຸມນີ້ ໃນເມື່ອຕ່າງປະເທດພະຍາຍາມຂົບບັງຄັບຢ່າງບໍ່ເປັນທຳຕໍ່ປະຊາຊົນຫວຽດນາມນັ້ນພວກເຮົາ ຢາກປະກາດຄັ້ງໃຫ່ມອີກວ່າພວກເຮົາສະໜັບສະໜູນປະເທດຫວຽດນາມອ້າຍ

ນ້ອງທີ່ອອກແຮງແນໃສ່ສ້າງສັງຄົມໃໝ່, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ, ປ້ອງກັນສິດອະທິປະໄຕຂອງຕົນ, ປັບປຸງຖານະບົດບາດທາງສາກົນຂອງສາທາລະນະລັດສັງຄົມນິຍົມຫວຽດນາມ ເຊິ່ງເປັນປ້ອມດ່ານໜ້າຂອງລະບົບສັງຄົມນິຍົມ ໃນອາຊີອາຄະເນ.(ຕົບມື.)

ຍາມໃດພວກເຮົາກໍ່ສະໜັບສະໜູນປະເທດຫວຽດນາມ,ພາລະກິດຮ່ວມຂອງພວກເຮົາ ຄື ສັນຕິພາບອັນຖາວອນ, ເອກະລາດແລະຄວາມກ້າວໜ້າທາງສັງຄົມ ຂອງບັນດາປະຊາຊາດຮັບໃຊ້ຜົນປະໂຫຍດອັນພົ້ນຖານຂອງມະນຸດ ເປັນພັນໆລ້ານຄົນໃນໜ່ວຍພິພົບເຮົາ.ສະຫາຍປະທານາທິບໍດີ!ຂໍສະແດງຄວາມເຊື່ອວ່າການຢ້ຽມຢາມຂອງທ່ານໃນສ.ສ.ສ.ຊ,ການເຈລະ-ຈາກັນຂອງພວກເຮົາຈະໄດ້ເສີມການປັບປຸງແລະການ ຂະ-ຫຍາຍຕົວຂອງສາຍສຳພັນກັນຖານເພື່ອນມິດໃນດ້ານຕ່າງ ໆ, ຈະໄດ້ສົ່ງເສີມການອອກແຮງຢ່າງຮ່ວມກັນທາງດ້ານສາ ກົນ-ເພື່ອເປັນຜົນປະໂຫຍດແກ່ສັນຕິພາບແລະຄວາມກ້າວໜ້າ.

ຂໍຍົກຈອກດື່ມເພື່ອ:

ຜົນສຳເລັດອັນໃໝ່ຂອງ ສ.ປ.ມ. ແລະການປະຕິວັດຂອງ ສ.ປ.ມ.!

ມິດຕະພາບອັນໝັ້ນຄົງຂອງທັງສອງປະເທດແລະປະຊາຊົນຂອງພວກເຮົາ !

ສຸຂະພາບຂອງສະຫາຍປະທານາທິບໍດີ ລາ ຊີລັກກີ ແລະພັນລະຍາ !

ສຸຂະພາບຂອງບັນດາແຂກຂອງພວກເຮົາທີ່ມາຈາກ ມາດາ ກາສະກາ ! (ຕົບມືຢ່າງຍຶດຍາວ.)

ເຫລັ້ມທີ ໗,

ໜ້າ ໖໘໘-໖໙໐

ຄຳນຳປຶ້ມປະມວນ "ສັນຕິພາບເປັນ ສົມບັດອັນລ້ຳຄ່າຂອງບັນດາປະຊາຊາດ" (ສຳນັກພິມ ຂອງປະເທດກະເລກ "ອາກາດິໂມດ" ໄດ້ຈັດພິມປຶ້ມປະມວນຫົວນີ້ໃນປີ ໑໙໘໕)

ສຳນັກພິມ "ອາກາດິໂມດ" ຂອງປະເທດກະເລກທີ່ຈັດພິມປຶ້ມ ປະມວນບົດປາໄສແລະບົດຄວາມຂອງຂ້າພະເຈົ້າ ກ່ຽວກັບນະ ໂຍບາຍຕ່າງປະເທດແຫ່ງ ສ.ສ.ສ.ຊ. ໄດ້ຂໍໃຫ້ຂ້າພະເຈົ້າ ສົ່ງຄຳນຳຕໍ່ປຶ້ມຫົວນີ້.

ຂ້າພະເຈົ້າຢາກກ່າວດ້ວຍຄວາມບໍລິສຸດໃຈວ່າ ຂ້າພະເຈົ້າ ຄິດວ່າບາງເລື່ອງໃນປຶ້ມຫົວນີ້ ຄວນກາຍເປັນເລື່ອງທີ່ຫລ້າສະ ໄຫມ, ກາຍເປັນເລື່ອງຂອງປະຫວັດສາດທີ່ລ່ວງໄປແລ້ວ. ອັນ ເປັນທີ່ຫນ້າເສຍໃຈວ່າ ເລື່ອງເຫລົ່ານັ້ນ ຍັງບໍ່ທັນ ກາຍເປັນ ທີ່ຫລ້າສະໄຫມເທື່ອ, ຍັງເປັນເລື່ອງແຫ່ງວັນເວລານີ້ ຂອງ ການເມືອງທາງສາກົນ ເຊັ່ນບັນຫາວ່າດ້ວຍການແຂ່ງຂັນສ້າງ ອາວຸດທີ່ນັບມື້ນັບເຄັ່ງຮ້ອນຍິ່ງຂຶ້ນ.

ຕາມຄວາມເປັນຈິງນັ້ນ ໃນປະຈຸບັນນີ້ ນະໂຍບາຍຕ່າງປະ ເທດສາມາດຕັດສິນໂຊກຊາຕາກຳຂອງມວນມະນຸດໄດ້. ບັນຫາ ວ່າດ້ວຍ "ສົງຄາມໃຫຍ່", "ສັນຕິພາບຖາວອນ" ທັງ ຫມົດ ເຫລົ່ານັ້ນ ເປັນບັນຫາທີ່ກ່ຽວຂ້ອງກັບອະນາຄົດຂອງຄວາມສືວ

ໄລຂອງມະນຸດ, ການດຳລົງຄົງຕົວ ຂອງບັນດາປະຊາຊາດ, ການຮັກສາສົມບັດທາງວັດຖຸແລະຈິດໃຈ ທີ່ມະນຸດ ໄດ້ສ້າງຂຶ້ນດ້ວຍການອອກແຮງງານ ແລະມັນສະຫມອງເປັນເວລາຫລາຍພັນປີ.

ຜູ້ຄົນທີ່ຕ້ອງການທຳຄວາມຮູ້ຈັກກັບປຶ້ມຫົວນີ້ ຈະໄດ້ພົບເຫັນທ່າທີທັດສະນະຂອງພວກເຮົາທີ່ມີຕໍ່ສະພາບການທາງສາກົນ, ຂໍ້ສະເຫນີຕ່າງໆທີ່ແນໃສ່ກອບກູ້ຫນ່ວຍພິພົບເຮົາໃຫ້ພົ້ນຈາກການສັ່ນສະເທືອນ, ການແຂ່ງຂັນສ້າງອາວຸດທີ່ນາບຂູ່ຕໍ່ຫນ່ວຍພິພົບແລະທ້ອງຟ້າຂອງພວກເຮົາໂດຍກົງໄປກົງມາ, ຜູ້ນັ້ນຈະໄດ້ພົບເຫັນທ່າທີໃນແງ່ດີທາງປະຫວັດສາດຂອງພວກເຮົາ, ຄວາມເຊື່ອຫມັ້ນວ່າ ມະນຸດຊາດຈະກ້າວຂຶ້ນສູ່ອະນາຄົດ ອັນສະຫງ່າງາມຢ່າງເດັດຂາດ ຍ້ອນວ່າມະນຸດຊາດນັ້ນເອງໄດ້ສ້າງກ້ອນກຳລັງທີ່ດຳເນີນການຕໍ່ສູ້ອັນໃຫຍ່ ເພື່ອສັນຕິພາບໃນທົ່ວໂລກ.

ຂ້າພະເຈົ້າຄິດວ່າ ປະຊາຊົນກະເລກ ກໍມີຄວາມຄິດເຫັນທີ່ຄ້າຍຄືກັນ.

ປະເທດກະເລກເປັນປະເທດທີ່ເກົ່າແກ່ ທີ່ໄດ້ໃຫ້ກຳເນີດແກ່ນັກຄິດປະດິດ ເຊິ່ງໃນໄລຍະເວລາແຫ່ງຄວາມສີວິໄລທີ່ຍັງຫນຸ່ມນ້ອຍ ໄດ້ຫມູນໃຊ້ມັນສະຫມອງເພື່ອພິສູດວ່າສົງຄາມເປັນສິ່ງທີ່ມະນຸດບໍ່ປາຖະຫນາເດັດຂາດ, ວ່າມະນຸດ ຄວນຄັດຄ້ານສົງຄາມ.

ຂ້າພະເຈົ້າເຊື່ອຫມັ້ນວ່າ ໃນປະຈຸບັນນີ້ ປະຊາຊົນກະເລກກໍເຫມືອນດັ່ງປະຊາຊາດອື່ນໆ ແມ່ນຮັກຫອມສັນຕິພາບ ແລະ

ກຽມພ້ອມທີ່ຈະປ້ອງກັນອຸດົມຄະຕິແຫ່ງສັນຕິພາບ.

ໃນຄຳນຳບົດນີ້ ຂ້າພະເຈົ້າຢາກເວົ້າກ່ຽວກັບບັນຫາທີ່ຊາວກະເລກສົນໃຈຢ່າງເອົາຈິງເອົາຈັງ. ອັນນັ້ນຄືບັນຫາວ່າດ້ວຍເຂດ ເມດິເຕລະເນ.

ພວກເຮົາຕ້ອງການໃຫ້ທະເລ ເມດິເຕລະເນ ໄດ້ກາຍເປັນທະເລແຫ່ງສັນຕິພາບ, ຄວາມເປັນເພື່ອນບ້ານໃກ້ ຄຽງ ແລະການຮ່ວມມືກັນ. ພວກເຮົາເຂົ້າໃຈວ່າ ອັນນັ້ນ ບໍ່ເປັນວຽກອັນງ່າຍດາຍ ຍ້ອນວ່າ ມີບໍ່ເກີດແຫ່ງຄວາມ ເຄັ່ງຕຶງ , ການປະທະກັນລະຫວ່າງຜົນປະໂຫຍດຂອງປະເທດຕ່າງໆ.

ຂ້າພະເຈົ້າຢາກເວົ້າໂດຍກົງໄປກົງມາວ່າ ພວກເຮົາ ສົນໃຈເຮັດໃຫ້ສະພາບການໃນພາກພື້ນຂອງໂລກ ຂະຫຍາຍຕົວໄປໃນທາງທີ່ດີທີ່ສຸດ. ມັນເປັນແນວນັ້ນ ກໍຍ້ອນວ່າ ມັນ ເປັນການລົບລ້າງບໍ່ເກີດແຫ່ງສົງຄາມ, ບໍ່ເກີດແຫ່ງຄວາມເຄັ່ງຕຶງເປັນເງື່ອນໄຂທີ່ຈຳເປັນແກ່ການປົບປຸງສັນຕິພາບໃນທົ່ວໂລກ, ຍ້ອນວ່າ ເສັ້ນທາງທີ່ຕິດທ່າເຮືອຂອງປະເທດເຮົາ ກັບມະຫາສະມຸດ ພວມຜ່ານທະເລເມດິເຕລະເນຢູ່; ຍ້ອນວ່າພາກພື້ນຂອງໂລກຕັ້ງຢູ່ໃຫ້ກັບຊາຍແດນຂອງພວກເຮົາ ເຊິ່ງພວກເຮົາຕ້ອງການເຮັດໃຫ້ມີຄວາມສະຫງົບ.

ດັ່ງທີ່ຮູ້ກັນດີແລ້ວວ່າ ພວກເຮົາບໍ່ແມ່ນພຽງແຕ່ໄດ້ ປະກາດຫລາຍຄັ້ງ ເຖິງຄວາມຕ້ອງການທີ່ຈະເຮັດໃຫ້ເຂດທະເລເມດິເຕລະເນມີການລຶດຜ່ອນຄວາມເຄັ່ງຕຶງລົງເທົ່ານັ້ນ ຫາກຍັງໄດ້ຍື່ນຂໍ້ສະເໜີຕ່າງໆ ເຊັ່ນພວກເຮົາໄດ້ສະເໜີໃຫ້ຖອນເຮືອ

ທຸກປະເພດທີ່ປະກອບອາວຸດປະລະມານູ ຂອງ ສ.ສ.ສ.ຊ. ແລະອາເມລິກາອອກຈາກທະເລເມດິເຕລະເນ. ຜູ້ນຳຂອງກຸ່ມ ນາໂຕຍັງບໍ່ທັນໄດ້ຕອບຕໍ່ຂໍ້ສະເໜີນີ້.

ຕັ້ງແຕ່ບູລານະການ ປະຊາຊົນຂອງທັງສອງປະເທດ ຂອງພວກເຮົາໄດ້ມີສາຍພົວພັນກັນແຕ່ງມິດຕະພາບ, ຄວາມນິຍົມຊົມຊອບທີ່ໄດ້ຜ່ານການທົດສອບດ້ວຍກາລະເວລາໃນໄລຍະເວລາແຫ່ງການຕໍ່ສູ້ຂອງປະຊາຊົນເຮົາ ຕ້ານສັດຕູໂຕດຽວກັນ. ອັນນັ້ນ ເປັນປະຫວັດສາດທີ່ໃຜໆກໍ່ບໍ່ສາມາດລົບລ້າງມັນໄດ້. ຊາວກະເລັກແລະລັດເຊຍຕ່າງກໍຮັກສາປະຫວັດສາດແນວນັ້ນ. ພ້ອມກັນນັ້ນວັນເວລາປະຈຸບັນນີ້ ກໍສ້າງພື້ນຖານທີ່ດີແກ່ການເສີມຂະຫຍາຍການຮ່ວມມື ກັນຢ່າງຮອບດ້ານ ລະຫວ່າງ ປະຊາຊົນຂອງທັງສອງປະເທດຂອງພວກເຮົາເຊັ່ນດຽວກັນ. ສ.ສ.ສ.ຊ. ແລະປະເທດກະເລັກບໍ່ມີຂໍ້ຖົກຖຽງກັນທີ່ອາດເປັນອຸປະສັກແກ່ການຂະຫຍາຍການພົວພັນກັນຖານມິດ. ພວກເຮົາ, ຊາວໂຊວຽດ, ກຽມພ້ອມແລ້ວທີ່ຈະເດີນຕາມເສັ້ນທາງສາຍນີ້. ສາຍສຳພັນກັນຖານເພື່ອນບ້ານໃກ້ຄຽງກັນແລະເພື່ອນມິດຈະໄດ້ຮັບໃຊ້ຜົນປະໂຫຍດຂອງສັນຕິພາບໃນຢູໂລບ ແລະ ໃນທົ່ວໂລກອີກດ້ວຍ.

ການແລກປ່ຽນກັນທາງດ້ານວັດທະນະທຳລະຫວ່າງປະເທດກະເລັກແລະ ສ.ສ.ສ.ຊ. ເປັນພາກສ່ວນໜຶ່ງ ຂອງ ແຜນການທີ່ຈະນຳໄປສູ່ເປົ້າໝາຍດັ່ງກ່າວມາເທິງນັ້ນ. ຂ້າພະເຈົ້າຊົມເຊີຍການທີ່ສຳນັກພິມ "ອາກາດີໂມດ" ວາງແຜນການທີ່ຈະ

ຈັດພິມ "ເອັນຊິກໂລເປດີໂຊວຽດສະບັບໃໝ່"ເປັນພາສາກະເລກ.

ແນ່ນອນວ່າ ການແລກປ່ຽນກັນທາງດ້ານວັດທະນະທຳນັ້ນຍັງບໍ່ທັນພຽງພໍເທື່ອ. ອັນນັ້ນເປັນພາກສ່ວນໜຶ່ງຂອງການຂະຫຍາຍການພົວພັນກັນທາງດ້ານການເມືອງ, ເສດຖະກິດທີ່ສາມາດສ້າງບັນຍາກາດໃໝ່ໄດ້. ການທຳຄວາມຮູ້ຈັກກັນນຳໄປສູ່ຄວາມເຂົ້າໃຈກັນ; ຄວາມເຂົ້າໃຈກັນ ນຳໄປສູ່ຄວາມ ໄວ້ເນື້ອເຊື່ອໃຈກັນ ເຊິ່ງຈະສ້າງເງື່ອນໄຂທີ່ອຳນວຍ ແກ່ ການກ້າວຂຶ້ນສູ່ການຮ່ວມມືກັນ. ການຮ່ວມມືກັນ ເປັນພາກສ່ວນອັນພົ້ນຖານຂອງການປົກປ້ອງສັນຕິພາບ ແລະມິດຕະພາບລະຫວ່າງບັນດາປະຊາຊາດ.

ຂໍອວຍພອນໃຫ້ນັກອ່ານປຶ້ມຫົວນີ້ແລະປວງປະຊາຊົນກະເລກຈົ່ງໄດ້ຮັບແຕ່ຄວາມສົມບູນພູນສຸກ.

ວັນທີ ໑໒ ເດືອນກໍລະກົດປີ ໑໙໗໒ ລ.ບະເລັດຊະເນັບ

ມົດສະກູ

ເຫລັ້ມທີ ໗,

ໜ້າ ໔໔໗-໔໔໙

ສານເຖິງບັນດາຜູ້ເຂົ້າຮ່ວມກອງປະຊຸມທົ່ວໂລກຄັ້ງທີ XI ຂອງຊາວໜຸ່ມແລະນັກສຶກສາ "ເພື່ອຄວາມສາມັກຄີຕ້ານພວກຈັກກະພັດ, ເພື່ອສັນຕິພາບແລະມິດຕະພາບ"

ເພື່ອນມິດທີ່ຮັກແພງ !

ຂໍສະແດງຄວາມເຄົາລົບຢ່າງບໍລິສຸດໃຈຕໍ່ບັນດາຜູ້ເຂົ້າຮ່ວມກອງປະຊຸມທົ່ວໂລກຄັ້ງທີ XI ຂອງຊາວໜຸ່ມ ແລະນັກສຶກສາທີ່ເປັນຕົວແທນຂອງຊາວໜຸ່ມນັບເປັນລ້ານໆຄົນ ທີ່ຕໍ່ສູ້ເພື່ອສັນຕິພາບ, ຄວາມປອດໄພແລະການຮ່ວມມືກັນລະຫວ່າງບັນດາປະຊາຊາດ, ເພື່ອລຶດຜ່ອນຄວາມເຄັ່ງຕຶງລົງ, ເອກະລາດແຫ່ງຊາດ, ປະຊາທິປະໄຕແລະຄວາມກ້າວໜ້າທາງສັງຄົມ.

ການທີ່ຊາວໜຸ່ມທັງຍິງແລະຊາຍ ທີ່ມີແນວຄິດ ທາງການເມືອງແລະປັດຊະຍາທີ່ຕ່າງກັນນັ້ນ ໄດ້ພິສູດອີກຄັ້ງໜຶ່ງ ເຖິງຄວາມຕັ້ງໃຈຂອງຊາວໜຸ່ມທີ່ຈະຮ່ວມກັນອອກແຮງໃນການຕໍ່ສູ້ເພື່ອອະນາຄົດອັນສັນຕິສຸກ ຂອງມວນມະນຸດ.

ໃນປະຈຸບັນນີ້ ຂະບວນການຊາວໜຸ່ມ ແລະ ນັກສຶກສາປະກອບສ່ວນທີ່ສຳຄັນເຂົ້າໃນການຕໍ່ສູ້ຂອງມະຫາຊົນທີ່ຮັກຫອມສັນຕິພາບ ເພື່ອລຶບລ້າງໄພອັນຕະລາຍຂອງສົງຄາມໂລກຄັ້ງໃຫ່ມ, ການປັບປຸງການຜ່ອນຄາຍ, ຄວາມເຂົ້າໃຈເຊິ່ງກັນ ແລະກັນ

ແລະມິດຕະພາບຂອງບັນດາປະຊາຊາດ. ຊາວໜຸ່ມໄດ້ດູໝັ່ນພາກພຽນ ເພີ່ມທະວີຜົນສຳເລັດຂອງນະໂຍບາຍ ແຫ່ງສັນຕິພາບແລະການຮ່ວມມືກັນທາງສາກົນ ແລະພ້ອມກັນນັ້ນກໍໄດ້ສະແດງຄວາມເປັນຫ່ວງໄຍຕໍ່ການພະຍາຍາມອັນເປັນອັນຕະລາຍທີ່ຈະເຮັດ ໃຫ້ໂລກຖອຍໜ້າໄປສູ່ "ສົງຄາມເຢັນ".

ມັນຄວນອອກແຮງຫລາຍຕື່ມອີກ ເພື່ອຕ້ານຢັນວິງການປະຕິການແລະວົງການກະຫາຍສົງຄາມຂອງພວກຈັກກະພັດ ທີ່ ຄັດຄ້ານການປັບປຸງຫລັກການ ການຢູ່ຮ່ວມກັນໂດຍສັນຕິ,ການປັບປຸງສັນຕິພາບ ແລະຄວາມປອດໄພທາງສັງຄົມ,ການສະກັດກັ້ນການແຂ່ງຂັນສ້າງອາວຸດແລະການກ້າວຂຶ້ນສູ່ ການປົດອາວຸດ.

ສ.ສ.ສ.ຊ.ຈະໄດ້ຍຶດໝັ້ນໃນທິດທາງເລນິນ ຂອງນະໂຍບາຍຕ່າງປະເທດທີ່ເຮັດໃຫ້ໂຄງການດຳເນີນການຕໍ່ສູ້ເພື່ອສັນຕິພາບ ແລະການຮ່ວມມືກັນທາງສາກົນ, ເພື່ອເສລີພາບແລະເອກະລາດຂອງບັນດາປະຊາຊາດ ຂອງກອງປະຊຸມໃຫຍ່ຄັ້ງທີ XXV ແຫ່ງ ພ.ກ.ສ.ຊ. ປາກົດເປັນຈິງຂຶ້ນ.

ປະຊາຊົນໂຊວຽດຕັ້ງໃຈທີ່ຈະສະກັດກັ້ນ ການແຂ່ງຂັນສ້າງອາວຸດອັນເປັນອັນຕະລາຍແກ່ໂລກເຮົາ, ຫ້າມສ້າງອາວຸດປະເພດໃຫ່ມທີ່ສັງຫານຊີວິດໃນຂອບເຂດອັນກວ້າງຂວາງ, ເຮັດທຸກສິ່ງທຸກຢ່າງ ເພື່ອປັບປຸງການລຶດຜ່ອນຄວາມເຄັ່ງຕຶງ ທາງສາກົນລົງ.

ປະເທດເຮົາຖືການລົບລ້າງບໍ່ເກີດ ແຫ່ງຄວາມ ເຄັ່ງຕຶງ, ການຄັດຄ້ານນະໂຍບາຍຈັກກະພັດນິຍົມ ແຫ່ງລັດທິ ລ່າເມືອງ

ຂົ້ນແລະລັດທິຈຳແນກເຊື້ອຊາດ, ການໜີບເຕັງສິດ ສະເໜີພາບແລະເອກະລາດຂອງບັນດາປະຊາຊາດອາຊີ, ອາຟະລິກາແລະອາເມລິກາລາຕິນ ວ່າເປັນເປົ້າໝາຍອັນສຳຄັນທີ່ສຸດປະການໜຶ່ງທາງດ້ານສາກົນ.

ບັນດາເພື່ອນມິດທີ່ຮັກແພງ ! ຂ້າພະເຈົ້າເຊື່ອໝັ້ນວ່າ ຜູ້ເຂົ້າຮ່ວມກອງປະຊຸມທົ່ວໂລກຄັ້ງທີ XI ຂອງຊາວໜຸ່ມ ແລະນັກສຶກສາທີ່ໄດ້ໄຂຂຶ້ນໃນດິນແດນຂອງປະເທດກຸຍບາ ສັງຄົມນິຍົມອັນເປັນເກາະວິລະຊົນແຫ່ງເສລີພາບນັ້ນ ຈະໄດ້ ປະກອບສ່ວນທີ່ສຳຄັນເຂົ້າໃນການປັບປຸງຄວາມສາມັກຄີກັນ ຕ້ານພວກຈັກກະພັດນິຍົມ, ຈະໄດ້ວາງແຜນການໃໝ່ ຂອງການກະທຳຮ່ວມກັນ ເພື່ອເປັນຜົນປະໂຫຍດແກ່ການປັບປຸງສັນຕິພາບແລະມິດຕະພາບລະຫວ່າງບັນດາປະຊາຊາດ.

ຂໍອວຍພອນໃຫ້ກອງປະຊຸມຂອງພວກເຈົ້າ ຈົ່ງປະສົບແຕ່ຜົນສຳເລັດອັນໃຫຍ່ຫລວງ.

ວັນທີ ໒໗ ເດືອນກໍລະກົດປີ ໑໙໗໘ ລ.ບະເລັດຊະເນັບ

ເຫລັ້ມທີ ກ,
ໜ້າ ໒໕໐-໒໕໑

ສານເຖິງກອງປະຊຸມທົ່ວໂລກວ່າດ້ວຍ
ການຕໍ່ສູ້ ຕ້ານລັດທິຈຳແນກເຊື້ອຊາດ

ໃນນາມຄະນະບໍລິຫານງານຂອງສະພາໂຊວຽດສູງສຸດແຫ່ງ ສ.ສ.ສ.ຊ, ປວງປະຊາຊົນໂຊວຽດ ແລະ ໃນນາມສ່ວນຕົວ ຂ້າພະເຈົ້າສະແດງຄວາມເຄົາລົບຕໍ່ບັນດາຜູ້ເຂົ້າຮ່ວມກອງປະຊຸມທົ່ວໂລກວ່າ ດ້ວຍການຕໍ່ສູ້ຕ້ານລັດທິຈຳແນກເຊື້ອຊາດ.

ປະຊາຊົນໂຊວຽດເຂົ້າໃຈແລະເຫັນດີນຳບັນດາເປົ້າໝາຍຂອງກອງປະຊຸມຂອງພວກທ່ານ. ເປັນເວລາອີກເທື່ອໜຶ່ງພາຍຫລັງການສະຖາປະນາລັດໂຊວຽດນັ້ນ ລັດໂຊວຽດໄດ້ປະກາດ "ຄຳຖະແຫລງການກ່ຽວກັບສິດຂອງບັນດາຊົນຊາດ ລັດເຊຍ" ເຊິ່ງໃນນັ້ນໄດ້ລະບຸໄວ້ເຖິງພື້ນຖານ ຂອງນະໂຍບາຍຊົນຊາດຂອງອຳນາດໂຊວຽດ ຄືສິດສະເໝີພາບ, ສິດອະທິປະໄຕຂອງບັນດາຊົນຊາດຊົນເຜົ່າຂອງປະເທດລັດເຊຍ, ການລົບລ້າງອະພິສິດທາງດ້ານຊົນຊາດ, ເຊື້ອຊາດ, ສາດສະໜາ, ສິດເສລີພາບໃນການພັດທະນາຊົນຊາດສ່ວນນ້ອຍ.

ໃນ ສ.ສ.ສ.ຊ. ບັນຫາຊົນຊາດໄດ້ຮັບການແກ້ໄຂ ຢ່າງຄົບຖ້ວນ. ສິດສະເໝີພາບຂອງພົນລະເມືອງ ບໍ່ວ່າຊົນຊາດ

ເຊື້ອຊາດໃດ ບໍ່ພຽງແຕ່ໄດ້ຮັບການປະກາດ ໃນລັດຖະທຳມະນູນທໍ່ນັ້ນ ຫາກຍັງໄດ້ຮັບການປັບປຸງ ແລະ ຮັບປະກັນດ້ວຍລະບອບການທາງສັງຄົມສັງຄົມນິຍົມ, ລະບອບ ທາງດ້ານ ການເມືອງແລະເສດຖະກິດຂອງສັງຄົມນິຍົມອີກດ້ວຍ.

ລັດໂຊວຽດດຳເນີນນະໂຍບາຍຊົນຊາດ ຢ່າງສູດກົກ ສູດປາຍ. ລັດຖະທຳມະນູນສະບັບໃຫມ່ແຫ່ງສ.ສ.ສ.ຊ.(ປີ໑໙໗໗) ບໍ່ພຽງແຕ່ປະກາດເຖິງຫລັກການຂອງນະໂຍບາຍຕ່າງປະເທດແຫ່ງ ສ.ສ.ສ.ຊ. ເຊິ່ງໃນນັ້ນມີຫລັກການແຫ່ງສິດ ສະເຫມີພາບແລະສິດຕັດສິນໂຊກຊາຕາກຳຂອງຕົນຂອງບັນດາຊົນຊາດຊົນເຜົ່າທໍ່ນັ້ນ ຫາກຍັງປະກາດເຖິງຫລັກການແຫ່ງ ການສະຫນັບສະຫນູນການຕໍ່ສູ້ຂອງບັນດາປະຊາຊາດເພື່ອປົດປ່ອຍຊາດແລະຄວາມກ້າວຫນ້າທາງສັງຄົມອີກດ້ວຍ.

ປະຊາຊົນໂຊວຽດສະຫນັບສະຫນູນຢ່າງເດັດຂາດບັນດາກຳລັງທີ່ຕໍ່ສູ້ເພື່ອສິດສະເຫມີພາບຂອງບັນດາປະຊາຊາດ,ຕ້ານການຈຳແນກເຊື້ອຊາດແລະຕ້ານການຮັກສາເສດເຫລືອຂອງລະບົບລ່າເມືອງຂຶ້ນ ແລະລັດທິຈຳແນກເຊື້ອຊາດ.ສ.ສ.ສ.ຊ.ຮຽກຮ້ອງໃຫ້ລົບລ້າງລະບອບຈຳແນກເຊື້ອຊາດໃນ ໂລດີຊີ,ເພື່ອມອບອຳນາດທັງຫມົດໃຫ້ແກ່ປະຊາຊົນຊິມບັບເວ, ເພື່ອໃຫ້ສາທາລະນະລັດອາຟະລິກາໃຕ້ຖອນຕົວອອກຈາກ ນາມີບີ, ເພື່ອລົບລ້າງລະບອບການປົກຄອງແບບຈຳແນກເຊື້ອຊາດໃນສາທາລະນະລັດອາຟະລິກາໃຕ້.

ກອງປະຊຸມຂອງພວກເຈົ້າ ພວມດຳເນີນໄປ ໃນໄລຍະເວ

ລາທີ່ການຕໍ່ສູ້ເພື່ອເສີມຂະຫຍາຍການລົດຜ່ອນ ຄວາມເຄັ່ງຕຶງທາງສາກົນ, ເພື່ອລົບລ້າງລະບົບລ່າເມືອງຂຶ້ນ ແລະຈໍາແນກເຊື້ອຊາດ ພວມໄດ້ຮັບການເຕີບໃຫ່ຍຂະຫຍາຍຕົວຢູ່. ໃນໄລຍະເວລາດັ່ງກ່າວນັ້ນ ການດໍາລົງຕົວຂອງລະບອບ ການປົກຄອງແບບຈໍາແນກເຊື້ອຊາດໃນອາຟະລິກາພາກໃຕ້ ທີ່ເຮັດອາຊະຍາກໍາຕໍ່ມວນມະນຸດນັ້ນ ມັນເປັນສິ່ງທີ່ອົດທົນບໍ່ໄດ້ເດັດຂາດ. ບັນດາປະເທດທີ່ຮັກຫອມສັນຕິພາບ ກໍໄດ້ຮູ້ສຶກ ເປັນຫວ່ງ ໄຍເປັນພິເສດຕໍ່ການເຄັ່ງຕຶງໃນທະວີບອາຟະລິກາ ຍ້ອນການກະທໍາແບບແຊກແຊງຂອງບາງປະເທດພາຄີກຸ່ມນາໂຕ. ຜົນ ປະໂຫຍດຂອງການປົບປຸງສັນຕິພາບ ຮຽກຮ້ອງໃຫ້ສະກັດກັ້ນການແຊກແຊງຂອງພວກຈັກກະພັດ ເຂົ້າໃນກິດຈະການ ພາຍໃນຂອງບັນດາປະເທດທີ່ຫນຸ່ມນ້ອຍ, ໃຫ້ເຄົາລົບສິດ ອະທິປະໄຕຂອງບັນດາປະເທດເຫລົ່ານັ້ນ ຕໍ່ການພັດທະນາຢ່າງມີເສລີພາບແລະເອກະລາດ.

ຂໍອວຍພອນໃຫ້ກອງປະຊຸມ ຈົ່ງໄດ້ຮັບຜົນສໍາເລັດ ໃນການຕໍ່ສູ້ອັນເປັນທໍາຕ້ານລັດທິລ່າເມືອງຂຶ້ນ, ເພື່ອເສລີພາບ ແລະເອກະລາດແຫ່ງຊາດ, ຕ້ານລັດທິຈໍາແນກຜິວຫນັງ, ຕ້ານລະບອບການປົກຄອງແບບຈໍາແນກເຊື້ອຊາດຂອງຊົນຊາດ.

ລ.ບະເລັດຊະເນັບ

ວັນທີ ໑໓ ເດືອນສິງຫາປີ ໑໙໗໘

ເຫລັ້ມທີ ໗,

ຫນ້າ ໔໔໔-໔໔໕

ສານເຖິງ ໂຕນ ດຶກ ທັງ, ປະທານາທິບໍດີ ແຫ່ງສາທາລະນະລັດສັງຄົມນິຍົມຫວຽດນາມ

ສະຫາຍໂຕນດຶກທັງ ທີ່ຮັກແພງ !

ໃນນາມສູນກາງ ພ.ກ.ສ.ຊ., ຄະນະບໍລິຫານງານຂອງສະພາໂຊວຽດສູງສຸດ ແລະໃນນາມສ່ວນຕົວ ຂໍສະແດງຄວາມເຄົາລົບ ເນື່ອງໃນໂອກາດ ວັນເກີດຂອງທ່ານ ຄົບຮອບ ໙໐ ປີ.

ສ.ສ.ສ.ຊ. ຮູ້ຢ່າງດີ ຄວາມດີງາມອັນໃຫຍ່ຫລວງ ຂອງທ່ານ ຕໍ່ຫນ້າຂະບວນການປະຕິວັດຂອງໂລກ. ຕະຫລອດຊີວິດຂອງທ່ານ ຕິດພັນຢ່າງແຫນ້ນແຟ້ນກັບການຕໍ່ສູ້ ຂອງກອງນຳຫນ້າ ແຫ່ງຊົນຊັ້ນກຳມະກອນ ແລະບັນດາຜູ້ອອກແຮງ ງານຫວຽດນາມ ກໍຄືພັກກອມມູນິດ ເພື່ອປົດປ່ອຍຊາດ ເພື່ອການສ້າງຫວຽດນາມສັງຄົມນິຍົມ ຮ່ວມກັນທີ່ມີສັນຕິພາບ, ເອກະລາດ. ປະຊາຊົນໂຊວຽດເຄົາລົບທ່ານ ທີ່ເປັນນັກເລນິນ,ນັກສາກົນນິຍົມ, ນັກຮົບເພື່ອໄຊຊະນະ ຂອງອຸດົມຄະຕິສັງຄົມນິ-ຍົມ ໃນທົ່ວໂລກ ຜູ້ຮ່ວມງານທີ່ຊື່ສັດ ຂອງລູກທີ່ປະເສີດ ເລີດລ້ຳ ຂອງປະເທດຫວຽດນາມ ຄືປະທານາທິບໍດີ ໂຮຈິມິນ ,

ເພື່ອນມິດຜູ້ບໍລິສຸດໃຈແຕ່ດົນນານ ຂອງປະເທດເຮົາ.

ສະຫາຍໂຕນດຶກທັ໋ງ ທີ່ຮັກແພງ ຂໍອວຍພອນໃຫ້ທ່ານ ຈົ່ງມີສຸຂະພາບທີ່ເຂັ້ມແຂງ, ປະສົບແຕ່ຜົນສຳເລັດໃຫມ່ ໃນກິດຈະການຂອງທ່ານ ເພື່ອເປັນຜົນໃຫ້ແກ່ປະຊາຊົນຫວຽດນາມ, ແກ່ການປັບປຸງສາຍສຳພັນ ມິດຕະພາບອ້າຍນ້ອງ ແລະການຮ່ວມມືກັນ ຢ່າງມີຜົນຕໍ່ກັນແລະກັນ ລະຫວ່າງປະເທດ ແລະປະຊາຊົນຂອງພວກເຮົາ.

ຂໍສະແດງຄວາມອວຍພອນ ແບບກອມມູນິດ.

ລ.ບະເລັດຈະເນັບ

ວັນທີ ໑໙ ເດືອນສິງຫາປີ ໑໙໗໘

ເຫລັ້ມທີ ໗,
ຫນ້າ ໔໕໖

24/VII
ห้ามจำหน่าย

ສານເຖິງກອງປະຊຸມສາກົນວ່າດ້ວຍ ບັນຫາການຊ່ວຍເຫລືອ ທາງການແພດ

ໃນນາມຄະນະບໍລິຫານງານຂອງສະພາໂຊວຽດສູງສຸດ ສ.ສ.ສ.ຊ., ປວງປະຊາຊົນໂຊວຽດ ແລະໃນນາມສ່ວນຕົວ ຂໍສະແດງຄວາມເຄົາລົບ ຕໍ່ບັນດາຜູ້ເຂົ້າຮ່ວມກອງປະຊຸມສາກົນວ່າດ້ວຍບັນຫາການຊ່ວຍເຫລືອ ທາງການແພດທີ່ໄດ້ໄຂຂຶ້ນໃນປະເທດຂອງພວກເຮົາ ເພື່ອພິຈາລະນາບັນຫາທີ່ສຳຄັນ ວ່າດ້ວຍການວິທີການຮັບປະກັນ ສິດອັນເປັນທຳຂອງມະນຸດທຸກຄົນບໍ່ວ່າສັງກັດໃນເຊື້ອຊາດໃດ, ມີຜິວໜັງໃດ,ສາດສະໜາໃດ, ຊຶ່ງນັບມະໃດມີສິດທີ່ຈະປ້ອງກັນສຸຂະພາບ.

ສ.ສ.ສ.ຊ. ສະໜັບສະໜູນຄວາມມຸ່ງມາດປາຖະ ໜາຂອງບັນດາປະຊາຊາດ ເປັນຕົ້ນແມ່ນປະຊາຊາດທີ່ພວມພັດທະນາຢູ່ ເພື່ອລຶບລ້າງພະຍາດ, ຄວາມອຶດຫິວ, ຄວາມທຸກຈົນ. ພວກເຮົາເຂົ້າຮ່ວມ ຢ່າງເອົາຈິງເອົາຈັງໃນການກະທຳທາງສາກົນ ທີ່ແນໃສ່ແກ້ໄຂບັນຫາ ວ່າດ້ວຍການຊ່ວຍເຫລືອ ທາງການແພດ ແກ່ພົນລະເມືອງຂອງທົ່ວໂລກ. ອັນນັ້ນສອດຄ່ອງກັບເປົ້າໝາຍ ຂອງກິດຈະກຳການສາກົນປ້ອງກັນສຸຂະພາບທີ່

ໄດ້ຕັ້ງເປົ້າໝາຍ ທີ່ຈະຮັບປະກັນລະດັບສູງຂອງການປ້ອງກັນສຸຂະພາບຂອງມະນຸດ.

ການເອົາໃຈໃສ່ປ້ອງກັນສຸຂະພາບຂອງມະນຸດ ຕິດພັນກັນຢ່າງແໜ້ນແຟ້ນ ກັບບັນຫາສຳຄັນກ່ວາໝູ່ ໃນປະຈຸບັນນີ້ຄືບັນຫາວ່າດ້ວຍການປົກປັກຮັກສາ ແລະການປັບປຸງສັນຕິພາບ ການປັບປຸງການລຶດຜ່ອນຄວາມເຄັ່ງຕຶງທາງສາກົນລົງ, ການລົບລ້າງໄພອັນຕະລາຍ ຂອງສົງຄາມປະລະມານູ, ການກ້າວຂຶ້ນສູ່ການປົດອາວຸດ. ສ.ສ.ສ.ຊ. ພ້ອມກັບບັນດາ ປະເທດພາກັນຕໍ່ສູ້ເພື່ອປະຕິບັດເປົ້າໝາຍ ອັນສູງສົ່ງເຫລົ່ານີ້. ຂ້າພະເຈົ້າເຊື່ອໝັ້ນວ່າ ນັກການແພດທີ່ມີໜ້າທີ່ ທີ່ຈະປ້ອງກັນຊີວິດແລະສຸຂະພາບຂອງມະນຸດ ຈະໄດ້ປະກອບສ່ວນທີ່ສຳຄັນ ເຂົ້າໃນພາລະກິດ ແຫ່ງການປັບປຸງສັນຕິພາບ ແລະມິດຕະ ພາບຂອງບັນດາປະຊາຊາດ.

ພວກທ່ານໄດ້ໄຂກອງປະຊຸມຄັ້ງນີ້ ໃນດິນແດນກາຊັກ ສະຖານທີ່ມີໃຈຍິນດີຕ້ອນຮັບແຂກ. ໂດຍນຳເອົາສາທາລະນະລັດກາຊັກສະຖານ ມາເປັນແບບຢ່າງ ພວກທ່ານຈະໄດ້ເຂົ້າ ໃຈວ່າ ບັນດາປະຊາຊາດທີ່ຫລ້າຫລັງ ຂອງປະເທດລັດເຊຍ ສະໄໝພະເຈົ້າຊາ ໄດ້ບັນລຸຜົນສຳເລັດຫລາຍພຽງໃດທາງດ້ານການສ້າງເສດຖະກິດ ຢ່າງສັນຕິ, ທາງດ້ານວິທະຍາສາດ - ເຕັກນິກ, ວັດທະນະທຳ, ສິລະປະ, ທາງດ້ານການປ້ອງກັນສຸຂະພາບ ຂອງປະຊາຊົນ.

ໃນ ສ.ສ.ສ.ຊ. ສິດທີ່ຈະຮັບການຊ່ວຍເຫລືອທາງການ-

ແພດ ໂດຍບໍ່ເສຍຄ່າຢ່າງຮອບດ້ານ ໄດ້ຮັບປະກັນດ້ວຍລັດຖະທຳມະນູນ ແຫ່ງ ສ.ສ.ສ.ຊ. ແລະໄດ້ຮັບປະກັນ ດ້ວຍລະບອບ ສາທາລະນະສຸກອີກດ້ວຍ. ພັກກອມມູນິດ ແລະ ລັດໂຊວຽດ ຍາມໃດກໍເອົາໃຈໃສ່ຕໍ່ບັນຫາ ວ່າດ້ວຍສາທາລະນະສຸກເປັນພິເສດ.

ຂ້າພະເຈົ້າເຊື່ອໝັ້ນວ່າ ວຽກງານຂອງກອງປະຊຸມຄັ້ງ ນີ້ຈະໄດ້ປະກອບສ່ວນທີ່ສຳຄັນ ເຂົ້າໃນການເສີມຂະຫຍາຍການຮ່ວມມືທາງສາກົນ ໃນດ້ານສາທາລະນະສຸກ ແລະໃນການປັບປຸງຄວາມເຂົ້າໃຈກັນ ຂອງບັນດານັກການແພດ ຂອງທົ່ວໂລກອີກດ້ວຍ. ຂໍອວຍພອນໃຫ້ບັນດາຜູ້ເຂົ້າຮ່ວມກອງປະຊຸມຈົ່ງໄດ້ຮັບຜົນສຳເລັດໃນວຽກງານ, ຈົ່ງໄດ້ຮັບຜົນສຳເລັດໃໝ່ ໃນກິດຈະກຳ ທີ່ແນໃສ່ຈັດຕັ້ງລະບຽບການທີ່ດີແຫ່ງການປ້ອງ ກັນສຸຂະພາບ ຂອງປະຊາຊົນ ແລະໃນການແກ້ໄຂບັນດາ ເປົ້າໝາຍອັນສູງສົ່ງຂອງພວກທ່ານ.

ລ.ບະເລັດຊະເນັບ

ວັນທີ ៦ ເດືອນກັນຍາ ປີ ໑໙໗໘

ເຫຼັ້ມທີ ៣,

ໜ້າ ໔໕໘-໔໕໙

ສານເຖິງຄະນະບັນນາທິການແລະສະພາບັນນາທິການຂອງ ວາລະສານ "ບັນຫາວ່າດ້ວຍສັນຕິພາບແລະສັງຄົມນິຍົມ"

ບັນດາສະຫາຍທີ່ຮັກແພງ !

ໃນນາມສູນກາງ ພ.ກ.ສ.ຊ.,ບັນດາຊາວກອມມູນິດ ໂຊວຽດ ຂໍສະແດງຄຳອວຍພອນ ຢ່າງບໍລິສຸດໃຈ ເນື່ອງໃນ ໂອກາດອັນຈັດຕັ້ງ ວາລະສານ "ບັນຫາວ່າດ້ວຍສັນຕິພາບ ແລະ ສັງຄົມນິຍົມ" ຄົບຮອບ ໔໐ ປີ.

ວາລະສານຂອງພວກທ່ານ ໄດ້ດຳເນີນການຕໍ່ສູ້ ເພື່ອສັນຕິພາບ ແລະຄວາມປອດໄພຂອງບັນດາປະຊາຊາດ ຢ່າງສຸດກຳລັງສຸດປາຍ. ຍາມໃດວາລະສານ ກໍໄດ້ເອົາໃຈໃສ່ຕໍ່ບັນຫາທີ່ສຳຄັນ ຂອງຍຸກສະໄໝນີ້, ເອົາໃຈໃສ່ຕໍ່ປາກົດການໃໝ່ ໃນຊີວິດທາງສັງຄົມ, ໃນຂະບວນການກຳມະກອນ ແລະ ປົດປ່ອຍຊາດ, ໃນການຕໍ່ສູ້ປະຕິວັດ. ໃນການຄົ້ນຄ້ວາບັນຫາຫຼາຍບັນຫາເຫຼົ່ານັ້ນ ທີ່ອີງໃສ່ຫຼັກການ ມາກຊິດ-ເລນິນິດ ນັ້ນ ວາລະສານຂອງພວກທ່ານ ໄດ້ມີຜົນສຳເລັດອັນສົມກຽດ.ວາລະສານຂອງພວກທ່ານ ກໍໄດ້ປະກອບສ່ວນອັນໃຫຍ່ຫຼວງເຂົ້າໃນການຕໍ່ສູ້ ຕ້ານລັດທິທີ່ຄັດຄ້ານໂຊວຽດ, ຄັດຄ້ານລັດທິມາກ ທີ່ກາຍ

ເປັນອຸປະສັກຂັດຂວາງເສັ້ນທາງ ແຫ່ງຂະບວນວິວັດຂອງການປະຕິວັດ.

ຕາມຄວາມຄິດເຫັນຂອງພວກເຮົາ ວາລະສານ ຂອງພວກທ່ານ ໄດ້ເຮັດແລະພວມເຮັດວຽກງານທີ່ສຳຄັນ ກ່ຽວກັບການແລກປ່ຽນບົດຮຽນ ຂອງບັນດາພັກກອມມູນິດ ແລະ ພັກກຳມະກອນອ້າຍນ້ອງ ໃນການຕໍ່ສູ້ພາຍໃນປະເທດຂອງໃຜລາວແລະໃນເວທີສາກົນ. ວາລະສານຂອງພວກທ່ານ ຍາມໃດກໍ່ໄດ້ຕໍ່ສູ້ເພື່ອຄວາມສາມັກຄີກັນ ກັບບັນດານັກຮົບ ທີ່ຕໍ່ສູ້ຕ້ານກອງ ທັບແລະພວກປະຕິການ, ຕ້ານລັດທິຈັກກະພັດນິຍົມ, ລັດທິລ່າເມືອງຂຶ້ນ, ລັດທິຈຳແນກເຊື້ອຊາດ ແລະລັດທິຟາຊິດ.

ພວກເຮົາຂໍສະແດງຄວາມຂອບໃຈ ຕໍ່ຄະນະບັນນາທິການທີ່ໄດ້ເອົາໃຈໃສ່ຢ່າງຫລາຍ ຕໍ່ການແຜ່ຂະຫຍາຍບົດຮຽນ ຂອງພັກເຮົາ, ການຄົ້ນຄ້ວາບັນຫາວ່າດ້ວຍການກໍ່ສ້າງ ລະບອບກອມມູນິດ ໃນປະເທດຂອງພວກເຮົາ.

ໂດຍການສະເໜີໃຫ້ໄຂກອງປະຊຸມທິດສະດີຕ່າງໆ, ໂດຍການເສີມຂະຫຍາຍການພົວພັນກັນ ລະຫວ່າງບັນດານັກ ມາກຊິດ ຂອງປະເທດຕ່າງໆນັ້ນ ວາລະສານຂອງພວກທ່ານ ປະກອບສ່ວນທີ່ສຳຄັນ ເຂົ້າໃນການເສີມຂະຫຍາຍ ການປະສານງານ, ການແລກປ່ຽນຄວາມຄິດເຫັນແລະບົດຮຽນ ລະຫວ່າງບັນດາພັກກອມມູນິດ ແລະພັກກຳມະກອນ ເຊິ່ງມີບົດບາດທີ່ສຳຄັນ ໃນເວລາປະຈຸບັນນີ້. ຄະນະເຮັດວຽກລວມໝູ່ ຂອງວາລະສານຂອງພວກທ່ານ ທີ່ມີຊາວກອມມູນິດ ອົນຊາດຕ່າງຕ່າງ

ເປັນແບບຢ່າງອັນດີຂອງການເຮັດວຽກຢ່າງຮ່ວມກັນ ຂອງບັນດາຊາວກອມມູນິດ ທີ່ຢຶດໝັ້ນໃນຫລັກການເອກະລາດ, ສິດສະເໝີພາບ, ຄວາມເປັນເຈົ້າຕົນເອງ ແລະຄວາມສາມັກຄີກັນຂອງບັນດາພັກອ້າຍນ້ອງ.

ຂໍອວຍພອນໃຫ້ວາລະສານທິດສະດີ ແລະແຈ້ງຂ່າວຂອງບັນດາພັກກອມມູນິດ ແລະພັກກຳມະກອນ ຈົ່ງໄດ້ຮັບຜົນສຳເລັດໃໝ່ ໃນການເຜີຍແຜ່ແນວຄິດອັນສູງສົ່ງຂອງ ມາກ, ອັງແກນ, ເລນິນ, ໃນການຄົ້ນຄວ້າບັນຫາທີ່ສຳຄັນ ຂອງທິດສະດີກອມມູນິດ ວິທະຍາສາດ. ຂໍໃຫ້ວາລະສານຂອງພວກທ່ານຮັບໃຊ້ຜົນປະໂຫຍດ ຂອງສັນຕິພາບ, ປະຊາທິປະໄຕ, ເອກະລາດແຫ່ງຊາດ, ສັງຄົມນິຍົມ ໂດຍອີງໃສ່ການຮ່ວມມືກັນຖານເພື່ອນມິດສາກົນນິຍົມ ຂອງບັນດາພັກກອມມູນິດ ແລະກຳມະກອນຕໍ່ໄປ.

ຂໍສະແດງຄວາມເຄົາລົບ ແບບກອມມູນິດ.

ລ.ບະເລັດຊະເນັບ

ວັນທີ ໑໓ ເດືອນກັນຍາປີ ໑໙໗໘

ເຫລັ້ມທີ ໗,

ໜ້າ ໔໒໘-໔໒໓.

ສານເຖິງກອງປະຊຸມສາກົນແຫ່ງ
ຄວາມສາມັກຄີກັບກັບ ການຕໍ່ສູ້ຂອງ
ປະຊາຊາດອາຟະລິກາແລະອາລັບຕ້ານ
ພວກຈັກກະພັດ ແລະພວກປະຕິການ

ຂໍສະແດງຄວາມເຄົາລົບ ຕໍ່ບັນດາຜູ້ເຂົ້າຮ່ວມ ກອງປະຊຸມສາກົນ ແຫ່ງຄວາມສາມັກຄີກັບກັບການຕໍ່ສູ້ ຂອງປະຊາຊາດ-ອາຟະລິກາ ແລະອາລັບ ຕ້ານພວກຈັກກະພັດ ແລະພວກປະຕິການ.

ກອງປະຊຸມຂອງພວກທ່ານໄດ້ໄຂຂຶ້ນ ໃນນະຄອນອັດດິດ - ອັບເບະບາ ເມືອງຫລວງຂອງປະເທດເອຕິໂອປີ ສັງຄົມນິຍົມ ເຊິ່ງແມ່ນປະຊາຊົນໄດ້ກ້າວເຂົ້າສູ່ເສັ້ນທາງແຫ່ງການດັດປຮັ່ນທາງສັງຄົມ-ເສດຖະກິດ ຢ່າງສຸດກົກສຸດປາຍ, ພວມດຳເນີນການຕໍ່ສູ້ ຢ່າງອົງອາດກ້າຫານ ເພື່ອປ້ອງກັນຜົນສຳເລັດປະຕິວັດ, ອະທິປະໄຕ, ຜືນແຜນດິນອັນຄົບຖ້ວນຂອງຕົນ.

ກອງປະຊຸມຄັ້ງນີ້ ພິສູດອີກຄັ້ງໃຫມ່ ເຖິງຄວາມຕັ້ງໃຈຂອງປະຊາຊາດອາຟະລິກາແລະອາລັບ ທີ່ຈະຕໍ່ສູ້ຮ່ວມກັນ ເພື່ອຜົນປະໂຫຍດອັນພື້ນຖານແລະສິດແຫ່ງຊາດ,ຕ້ານພວກ ຈັກກະພັດແລະລ່າເມືອງຂຶ້ນ, ຕ້ານລັດທິປະຕິການ, ຈຳແນກເຊື້ອຊາດແລະຊີໂອນນິດ.

ສ.ສ.ສ.ຊ.ຍາມໃດກໍສະໜັບສະໜູນ ຄວາມມຸ່ງມາດປາຖະໜາ ອັນເປັນທຳຂອງພວກເຂົາ, ສະໜັບສະໜູນ ການຕໍ່ສູ້ເພື່ອສັນຕິພາບ ໃນທົ່ວໂລກ, ຄວາມປອດໄພຂອງ ບັນດາປະຊາຊາດ, ເພື່ອລຶດຜ່ອນຄວາມເຄັ່ງຕຶງທາງສາກົນ ລົງ, ເພື່ອການປົດອາວຸດ, ເພື່ອການປັບປຸງເອກະລາດ ທາງດ້ານການເມືອງ ແລະເສດຖະກິດ ຂອງບັນດາປະເທດທີ່ພວມພັດທະນາຢູ່, ເພື່ອການດັດແປງການພົວພັນກັນທາງສາກົນ ທາງດ້ານເສດຖະກິດ ໃຫ້ມີສິດສະເໝີພາບ ອັນເປັນທຳເປັນພົ້ນ. ພວກເຮົາກ່າວປະນາມການແຊກແຊງ ຂອງພວກປະຕິ ການແລະພວກຈັກກະພັດ ເຂົ້າໃນກິດຈະການພາຍໃນ ຂອງບັນດາປະຊາຊາດອາຟະລິກາແລະອາລັບ, ກ່າວປະນາມການພະຍາຍາມ ທີ່ຈະເຮັດໃຫ້ປະຊາຊາດເຫລົ່ານັ້ນ ປະທະກັນ,ກ່າວປະນາມການກໍ່ລະນີພິພາດອື່ນ.

ປະຊາຊົນໂຊວຽດ ຮຽກຮ້ອງໃຫ້ລົບລ້າງບໍ່ເກີດສຸດທ້າຍ - ແຫ່ງລັດທິຈຳແນກເຊື້ອຊາດ ແລະລັດທິລ່າເມືອງຂຶ້ນ ໃນພາກໃຕ້ ຂອງທະວີບອາຟະລິກາ, ຮຽກຮ້ອງໃຫ້ມອບອຳນາດ ອັນຄົບຖ້ວນ ໃຫ້ແກ່ປະຊາຊົນຊິມບັບແວແລະທີ່ມີຂະບວນຮັກ ຊາດເປັນຕົວແທນ, ຮຽກຮ້ອງໃຫ້ຖອນກອງທະຫານຂອງສາທາລະນະລັດ ອາຟະລິກາໃຕ້ ອອກຈາກນາມີບີ ແລະໃຫ້ມອບສິດເອກະລາດໃຫ້ແກ່ປະເທດນີ້, ຮຽກຮ້ອງໃຫ້ລົບລ້າງລະບອບການທາງສັງຄົມ ແບບຈຳແນກເຊື້ອຊາດ ໃນສາທາລະນະລັດ ອາຟະລິກາໃຕ້. ປະຊາຊົນໂຊວຽດສະແດງຄວາມສາມັກຄີ ອັນ

ແຫນັ້ນແຟ້ນກັບການຕໍ່ສູ້ອັນອົງອາດກ້າຫານຂອງປະຊາຈີນ ປາ ເລັດຊະຕິນ ຊາວອາລັບ ແລະປະຊາຊາດອາລັບອື່ນໆຕ້ານນະ ໂຍບາຍຮຸກຮານແຜ່ຂະຫຍາຍອິດທິພົນ ຂອງອິດສະລະເອັນ , ຕ້ານກົນອຸບາຍພວກປະຕິການ ທັງພາຍໃນແລະນອກປະເທດ, ເພື່ອສ້າງຕັ້ງສັນຕິພາບທີ່ຫມັ້ນຄົງແລະເປັນທຳ ໃນພາກພື້ນຕາ ເວັນອອກກາງ.

ການປະຕິບັດເປົ້າຫມາຍອັນສູງສົ່ງເຫລົ່ານັ້ນຈະໄດ້ປະກອບ ສ່ວນທີ່ສຳຄັນ ເຂົ້າໃນການຕໍ່ສູ້ຂອງບັນດາປະຊາຊາດ ເພື່ອ ການລຸດຜ່ອນຄວາມເຄັ່ງຕຶງທາງສາກົນລົງ ແລະເພື່ອສັນຕິ - ພາບທີ່ຫມັ້ນຄົງໃນທົ່ວໂລກ.

ຂໍອວຍພອນໃຫ້ກອງປະຊຸມຂອງພວກທ່ານ ຈົ່ງປະສົບແຕ່ຜົນ ສຳເລັດ ໃນວຽກງານຂອງພວກທ່ານ.

ລ.ບະເລັດຊະເນັບ

ວັນທີ ໑໓ ເດືອນກັນຍາປີ ໑໙໗໘.

ເຫລັ້ມທີ ໗,

ຫນ້າ ໔໒໔-໔໒໕

ຈາກບົດປາໄສໃນວັງທີ່ໃສ່ຊື່ເລນິນໃນນະຄອນບາກູ
ວັນທີ ໒໘ ເດືອນກັນຍາປີ ໑໙໗໘

ຂ້າພະເຈົ້າ ຂໍອະນຸຍາດເວົ້າກ່ຽວກັບບັນຫາ ທາງສາກົນບາງບັນຫາ.

ດັ່ງທີ່ພວກທ່ານຮູ້ຢ່າງດີແລ້ວວ່າ ໃນມໍ່ໆມານີ້ ໃນລະດູຮ້ອນໃນແຫລມກະລີມ ໄດ້ມີການພົບປະກັນ ທີ່ໄດ້ກາຍເປັນປະເພນີລະຫວ່າງຜູ້ນຳຂອງບັນດາພັກອ້າຍນ້ອງ ຂອງບັນດາ ປະເທດສັງຄົມນິຍົມ-ບຸນກາລີ, ຮຸງກາລີ, ສ.ປ.ຢ.,ມົງໂກລີ, ໂປໂລຍ, ລູມານີ, ເຊັກໂກຊະໂລວາກີ.

ສ.ສ.ສ.ຊ. ມີສາຍສຳພັນກັນກັບບັນດາປະເທດເຫລົ່ານັ້ນທີ່ນັບມື້ນັບຂະຫຍາຍຕົວຂຶ້ນຢ່າງຮອບດ້ານ. ການຮ່ວມມືກັນລະຫວ່າງບັນດາປະເທດອ້າຍນ້ອງ ມີອະນາຄົດອັນສະຫງ່າງາມ. ຊີວິດໄດ້ຕັ້ງບັນຫາໃຫມ່ຂຶ້ນ ເຊິ່ງພວກເຮົາ ຄວນພິຈາ ລະນາແລະແກ້ໄຂ. ອັນນັ້ນເປັນໜ້າທີ່ພັກຂອງພວກເຮົາ ຍ້ອນ ວ່າອັນນັ້ນເປັນບັນຫາທີ່ກ່ຽວຂ້ອງກັບເພື່ອນມິດ ຜູ້ໃກ້ຊິດທີ່ສຸດ,ພັນທະມິດ, ຜູ້ຮ່ວມສູ້ຮົບຂອງພວກເຮົາ ເພື່ອອຸດົມຄະຕິ ອັນດຽວກັນຂອງລະບອບກອມມູນິດ.(ຕົບມືຢ່າງຍືດຍາວ.)

ພວກເຮົາຖືວ່າ ການພົບປະກັນສອງຝ່າຍ ເປັນວິທີການອັນດີທີ່ສຸດ ເພື່ອປະສານສົມທົບທ່າທີທັດສະນະ ຂອງພວກເຮົາ . ການພົບປະກັນເຫລົ່ານັ້ນ ຊ່ວຍໃຫ້ຄາດຫມາຍ ທິດທາງ ລວມເຊິ່ງແມ່ນບັນດາປະເທດພາຄີສົນທິສັນຍາວໍຊໍ ຕ້ອງກຳນົດ ໄວ້ໃນການປະຊຸມຂອງສະພາປຶກສາການເມືອງ.

ໃນລະຫວ່າງການພົບປະກັນພວກເຮົາໄດ້ເອົາໃຈໃສ່ຫຼາຍຕໍ່ບັນຫາທີ່ສຳຄັນຂອງສະຖານະການທາງສາກົນ.

ດັ່ງທີ່ພວກທ່ານຮູ້ແລ້ວວ່າ ສະຖານະການນັ້ນ ມີຄວາມ ສັບສົນຍ້ອນວ່າວົງການຈັກກະພັດດ້ານບໍ່ຢາກຕີລາຄາທີ່ຖືກຕ້ອງຕໍ່ການດຸ່ນດ່ຽງຂອງບັນດາກຳລັງ, ດ້ານວາງແຜນການ ທີ່ຈະສ້າງກຳລັງອາວຸດໃຫ້ຫລາຍກ່ວາບັນດາ ປະເທດ ສັງຄົມນິຍົມເຊິ່ງເປັນແຜນການທີ່ເປັນອັນຕະລາຍແກ່ສັນຕິພາບ ແລະມີຈຸດປະສົງທີ່ຈະບີບບັງຄັບບັນດາປະເທດ ປະຕິບັດຕາມໃຈມັກຂອງພວກເຂົາ.

ກອງປະຊຸມຂອງສະພາກຸ່ມນາໂຕ ທີ່ໄດ້ມີຂຶ້ນໃນວໍຊິງຕັນໄດ້ປະກາດທິດທາງທີ່ຈະເສີມຂະຫຍາຍການສ້າງອາວຸດ ເປັນໄລຍະຫລາຍສິບປີ ເຊິ່ງສະແດງໃຫ້ເຫັນເຖິງເປົ້າຫມາຍ ອັນແທ້ຈິງຂອງພັກພວກທີ່ປາວຮ້ອງເຖິງອັນທີ່ເອີ້ນວ່າ "ໄພອັນຕະລາຍທາງການທະຫານ" ຂອງ ສ.ສ.ສ.ຊ. ແລະສົນທິສັນຍາວໍຊໍຕໍ່ຝ່າຍຕາເວັນຕົກ. ຂໍ້ເສກສັນປັ້ນແຕ່ງເຫລົ່ານັ້ນ ມີຈຸດປະສົງທີ່ຈະປິດບັງຄວາມຕັ້ງໃຈຂອງກຸ່ມນາໂຕ ທີ່ຈະສ້າງອາວຸດ ໃຫ້ຫລາຍຂຶ້ນ ແລະຫັນຫນ້າໄປສູ່ນະໂຍບາຍແຫ່ງ "ການໃຊ້ກຳລັງ

ແຮງ".

ມັນອາດເປັນໄປໄດ້ວ່າ ອັນນັ້ນເປັນສາຍເຫດ ຂອງການທີ່ພວກເຮົາຍັງບໍ່ທັນໄດ້ສຳເລັດໃນການເຮັດຂໍ້ຕົກລົງກັນກັບ ອາເມລິກາກ່ຽວກັບການຈຳກັດກຳລັງອາວຸດຍຸດທະສາດ ປະເພດບຸກລຸກ, ທ່າທີຂອງທັງສອງຝ່າຍກ່ຽວກັບບັນຫານີ້ ແຕກຕ່າງກັນບໍ່ຫລາຍປານໃດ, ຄັນຖ້າຫາກມີ ເຈດຕະນາດີ, ມັນ ສະໝອງອັນດີແລ້ວ ມັນກໍ່ແກ້ໄຂບັນຫານີ້ໄດ້ໂລດ. ເບິ່ງແລ້ວເຫັນວ່າວົງການອາເມລິກາທີ່ຄັດຄ້ານສັນຕິພາບແລະການຮ່ວມມືກັນ ແລະຢາກມີ "ສົງຄາມເຢັນ" ບໍ່ຕ້ອງການເຮັດຄືແນວນີ້.

ບັນຣົບໃສ່ຮ້າຍປ້າຍສີມາດຕະການ ທີ່ສານໂຊວຽດ ໄດ້ໃຊ້ເພື່ອຄັດຄ້ານການເຄື່ອນໄຫວຕ້ານກົດໝາຍໂຊວຽດຂອງຜູ້ຄົນທີ່ໂຈມຕີອຳນາດການປົກຄອງແບບໂຊວຽດ ນັບລວມທັງ ສາຍລັບບາງຄົນຂອງກອງສືບລັດຊະການລັບ ຂອງຝ່າຍຕາເວັນຕົກນັ້ນ ມັນກໍມີຈຸດປະສົງອັນດຽວກັນນີ້.

ບັນຣົບນັ້ນໝາຍເຖິງ ການແຊກແຊງ ເຂົ້າໃນກິດຈະການພາຍໃນຂອງປະເທດເຮົາໂດຍກົງ, ໝາຍເຖິງການລ່ວງລະເມີດຈິດໃຈ ແລະຕົວອັກສອນຂອງເອກະສານອັນສຸດທ້າຍຂອງກອງປະຊຸມເຮັນຊິນກີ. ອາເມລິກາ ພວມປະຕິບັດການກະທຳແບບດຽວກັນ ຕໍ່ບັນດາປະເທດສັງຄົມນິຍົມ.

ສັດຕູພວມພະຍາຍາມເສີມຂະຫຍາຍການຕໍ່ຕ້ານ ການລຶດຜ່ອນຄວາມເຄັ່ງຕຶງລົງ. ໂດຍອ້າງເຫດຜົນ ອັນປອມແປງນັ້ນ ອາເມລິກາ ໄດ້ເລີ່ມສະກັດກັ້ນ ການຂະຫຍາຍ ການຕິດຕໍ່ກັນ

ທາງດ້ານພູລະກິດຈີນຮອດໄດ້ລົບລ້າງ ຂໍ້ຕົກລົງກັນຕ່າງໆ, ໄດ້ເລີ່ມຈຳກັດການພົວພັນກັນທາງດ້ານວິທະຍາສາດ - ເຕັກນິກ ແລະໃນດ້ານອື່ນໆອີກດ້ວຍ. ວໍຊິງຕັນ ກໍໄດ້ບີບບັງຄັບປະເທດພັນທະມິດໃຫ້ປະຕິບັດແບບນີ້ ເຊັ່ນດຽວກັນ ແຕ່ບໍ່ໄດ້ຜົນ.

ເບິ່ງແລ້ວເຫັນວ່າ ວົງການທີ່ມີອິດທິພົນສູງ ໃນອາເມລິກາພວມທ້າທາຍເກາະພິດຕໍ່ ສ.ສ.ສ.ຊ. ໂດຍແນໃສ່ເຮັດໃຫ້ສະຖານະການສາກົນເຄັ່ງຮ້ອນຍິ່ງຂຶ້ນ. ອັນນັ້ນເປັນການກະທຳທີ່ເປັນອັນຕະລາຍ. ພວກເຮົາຈະໄດ້ປ້ອງກັນສິດ ແລະ ຜົນປະໂຫຍດແຫ່ງລັດໂຊວຽດຢ່າງເດັດຂາດ; ກົນອຸບາຍຂອງສັດຕູຈະບໍ່ສາມາດເຮັດໃຫ້ພວກເຮົາຫລົງເຊື່ອໄດ້.(ຕົບມືຢ່າງຍືດຍາວ.)

ນະໂຍບາຍຂອງພວກເຮົາ ຕໍ່ບັນດາປະເທດທຶນນິຍົມ ນັບລວມທັງອາເມລິກາ ເປັນນະໂຍບາຍແຫ່ງສັນຕິພາບ, ການຢູ່ຮ່ວມກັນໂດຍສັນຕິ ແລະການຮ່ວມມືກັນຢ່າງສັນຕິ. ດ້ວຍເຫດນັ້ນ ພວກເຮົາຈິ່ງຄັດຄ້ານເດັດຂາດ ຕໍ່ການແຊກແຊງເຂົ້າໃນກິດຈະການພາຍໃນຂອງປະເທດຕ່າງໆແລະການລ່ວງລະເມີດສິດອະທິປະໄຕຂອງບັນດາປະເທດ.(ຕົບມື.)

ເປົ້າຫມາຍຂັ້ນພື້ນຖານຂອງນະໂຍບາຍຕ່າງປະເທດ ຂອງພວກເຮົາ ກໍຄື ການເຮັດທຸກສິ່ງທຸກຢ່າງ ເພື່ອສະກັດກັ້ນການແຂ່ງຂັນສ້າງອາວຸດ, ເພື່ອປັບປຸງສັນຕິພາບ ແລະຄວາມປອດໄພຂອງບັນດາປະຊາຊາດ. (ຕົບມື.) ພວກເຮົາຄິດວ່າປະເທດທັງຫລາຍ ບໍ່ວ່າເປັນປະເທດນ້ອຍ ຫລືໃຫ່ຍກໍຕາມ, ມີອາວຸດປະລະມານູ ຫລືບໍ່ມີອາວຸດນັ້ນກໍຕາມ ຕ້ອງມີສິດ ຕໍ່ຄວາມ

ປອດໄພທີ່ໝັ້ນຄົງ. (ຕົບມື.)

ໃຜໆກໍເຊື່ອແນ່ວ່າ ສ.ສ.ສ.ຊ, ບັນດາປະເທດ ສັງຄົມນິຍົມຈະໄດ້ປະກອບສ່ວນຢ່າງສົມກຽດ ເຂົ້າໃນການແກ້ໄຂ ບັນຫາເຫລົ່ານັ້ນ ທີ່ມີຄວາມໝາຍສຳຄັນແກ່ມວນມະນຸດ!(ຕົບມືຢ່າງຍືດຍາວ.)

ການແກ້ໄຂບັນຫາຕາເວັນອອກກາງ ດ້ວຍສັນຕິວິທີ ຢ່າງມີຄວາມເປັນທຳນັ້ນ ມັນເປັນບັນຫາທີ່ສຳຄັນ ໃນບັນດາບັນຫາແຫ່ງການສ້າງສັນຕິພາບທີ່ໝັ້ນຄົງ ແລະການສ້າງສະຖຽນລະພາບທາງສາກົນ. ສະພາບການໃນພາກພື້ນນີ້ ຂອງໂລກ ຍັງສັບສົນແລະເປັນອັນຕະລາຍແກ່ປະເທດຕ່າງໆ ໃນເຂດນີ້ແລະໃນທົ່ວໂລກອີກດ້ວຍ.

ສາຍເຫດຂອງບັນຫານີ້ ກໍຄືວ່າ ປະເທດ ອິດຊະລະເອັນ ແລະບັນດາກຳລັງທີ່ອິດຊະລະເອັນອີງໃສ່ນັ້ນບໍ່ເຫັນດີນຳຄວາມເອົາໃຈໃສ່ຕໍ່ສິດອັນເປັນທຳ ແລະຜົນປະໂຫຍດ ຂອງປະຊາຊາດອາລັບ; ນອກຈາກນັ້ນ ອິດຊະລະເອັນໄດ້ພະຍາຍາມໃຊ້ກຳລັງອາວຸດ ຫລືວິທີການທາງການທູດ ແບບໃຊ້ ກຳລັງແຮງເພື່ອບັງຄັບປະຊາຊາດອາລັບ ໃຫ້ເຮັດຕາມໃຈມັກຂອງອິດຊະລະເອັນ.

ເພື່ອປະຕິບັດເປົ້າໝາຍແນວນີ້ ເພິ່ນໄດ້ເລີ່ມໃຊ້ ວິທີການເຈລະຈາແບບສອງຝ່າຍ ກັບພັກພວກທີ່ກຽມພ້ອມທີ່ຈະຂາຍຜົນປະໂຫຍດຂອງປະຊາຊາດອາລັບ ໂດຍມີຈຸດປະສົງ ທີ່ຈະແບ່ງແຍກພວກອາລັບ, ເຮັດໃຫ້ພວກອາລັບປະທະກັນ ແລະບັງຄັບ

ປະເທດອາລັບຕ່າງໆ ຍອມຮັບຂໍ້ຜູກມັດຂອງຜູ້ຮຸກຮານໃນການແກ້ໄຂບັນຫານີ້.

ການບໍ່ເອົາຫົວຊາ ຕໍ່ເງື່ອນໄຂເບື້ອງຕົ້ນ ຂອງການແກ້ໄຂບັນຫາຕາເວັນອອກກາງ, ການບໍ່ເອົາຫົວຊາຕໍ່ປະເທດທີ່ຕ້ອງເຂົ້າຮ່ວມໃນການແກ້ໄຂບັນຫານີ້, ການປະຫມາດຜົນປະໂຫຍດອັນຊອບທຳຂອງປະເທດເຫລົ່ານັ້ນ, ການພະຍາຍາມບັງຄັບປະເທດເຫລົ່ານັ້ນ ປະຕິບັດການຕາມໃຈມັກ ຂອງອິດຊະລະເອັນນັ້ນ ມັນບໍ່ອາດສາມາດແກ້ໄຂບັນຫານີ້ໄດ້ຢ່າງເດັດຂາດ (ຕົບມື). ເຖິງວ່າຂໍ້ຕົກລົງສອງຝ່າຍ ມີຮູບການອັນຈີບງາມກໍຕາມ ມັນກໍປິດບັງການຍອມຈຳນົນຂອງຝ່າຍຫນຶ່ງ ຕໍ່ອີກຝາຍອື່ນ, ມັນປັບປຸງຜົນງານຂອງການຮຸກຮານ, ການຮຸກຮານຂອງປະເທດອິດຊະລະເອັນ. ດ້ວຍເຫດນັ້ນ ຂໍ້ຕົກລົງແນວນີ້ ຈຶ່ງລ້ວນແຕ່ຈະເຮັດໃຫ້ສະຖານະການໃນພາກພື້ນຕາເວັນອອກກາງ ເຄັ່ງຮ້ອນຍິ່ງຂຶ້ນຫມັ່ນ.

ບົດຮຽນຂອງການເຈລະຈາກັນອິດຊະລະເອັນ-ຢີຊິບ ໃນເກັມ ເດວິດ ໃນມໍ່ໆມານີ້ ພິສູດໃຫ້ເຫັນເຖິງຄວາມຈິງ ຂອງເລື່ອງນີ້. ອັນນັ້ນໄດ້ເປັນການຄົບຄິດກັນລະຫວ່າງ ອິດຊະລະເອັນກັບຢີຊິບທີ່ຕ້ານຊາວອາລັບ ແລະທີ່ໄດ້ຖືກເຮັດໂດຍມີວໍຊິງຕັນເປັນຜູ້ເຂົ້າຮ່ວມນຳຢ່າງເອົາຈິງເອົາຈັງ.

ໃນປະຈຸບັນນີ້ ພວກເຂົາພະຍາຍາມບັງຄັບປະເທດ ທີ່ເຂົ້າຮ່ວມກໍລະນີພິພາດໃນພາກພື້ນຕາເວັນອອກກາງ ໃຫ້ຍອມຮັບຕໍ່ຂໍ້ຜູກມັດທີ່ໄດ້ເຮັດຢູ່ເບື້ອງຫລັງ ແລະຝືນຕໍ່ຜົນປະໂຫຍດ ຂອງ

ປະເທດເຫຼົ່ານັ້ນ, ອັນນັ້ນບໍ່ແມ່ນວຽກອັນງ່າຍດາຍ. ໃນສູ່ນີ້, ມັນເຫັນໄດ້ວ່າ ພວກອາລັບກ່າວປະນາມ ການຄົບຄິດກັນໃນເກັມ ເດວິດ. ມັນອາດເຂົ້າໃຈທ່າທີແນ່ນອນຢ່າງງ່າຍໄດ້.

ບົດຮຽນຫຼາຍປີຜ່ານມາ ພິສູດໃຫ້ເຫັນວ່າ ເພື່ອແກ້ໄຂ ກໍລະນີພິພາດໃນພາກພື້ນຕາເວັນອອກກາງນັ້ນ ມັນມີແຕ່ ທາງດຽວຄື ອິດຊະລະເອັນ ຕ້ອງຖອນຕົວອອກຈາກດິນແດນອາລັບທີ່ຖືກຍຶດຄອງໃນປີ ໑໙໖໗, ຕ້ອງເຄົາລົບສິດອັນເປັນທຳຂອງປະຊາຊົນປະເລັດຊະຕິນຊາວອາລັບ ນັບລວມທັງສິດທີ່ຈະສ້າງລັດຂອງຕົນເອງ; ນອກຈາກນັ້ນ ມັນຕ້ອງຮັບປະກັນ ຄວາມປອດໄພຂອງບັນດາປະເທດໃນພາກພື້ນນີ້ ນັບລວມທັງປະເທດອິດຊະລະເອັນ. ມັນອາດສາມາດແກ້ໄຂບັນຫາຢ່າງຮອບດ້ານໄດ້ ກໍຕໍ່ເມື່ອມີບັນດາຝ່າຍທີ່ກ່ຽວຂ້ອງນັບລວມທັງອົງການ ປົດປ່ອຍປະເລັດຊະຕິນ ເຂົ້າຮ່ວມໃນການແກ້ໄຂ. ບັນຫານີ້ໄດ້ຮັບການແກ້ໄຂໄວເທົ່າໃດ ພາກພື້ນຕາເວັນອອກກາງ ກໍຍິ່ງ ຈະໝົດຄວາມເປັນບໍ່ເກີດແຫ່ງຄວາມເຄັ່ງຕຶງ ໄວເທົ່ານັ້ນ. (ຕົບມື.)

ໃນປະຈຸບັນນີ້ ພວກເຮົາອາໄສຢູ່ໃນລັດອາເຊລະໄບຊານ; ດ້ວຍເຫດນັ້ນ ຂ້າພະເຈົ້າຢາກເວົ້າບາງຄຳກ່ຽວກັບເຫດການທາງສາກົນທີ່ມີຄວາມໝາຍສຳຄັນ ທີ່ເກີດຂຶ້ນ ໃນປະເທດອັບການິດສະຖານທີ່ເປັນປະເທດເພື່ອນບ້ານໃກ້ຄຽງ ແລະ ເປັນເພື່ອນມິດຕັ້ງແຕ່ດົນນານແລ້ວ. ດັ່ງທີ່ບັນດາສະຫາຍຮູ້ແລ້ວວ່າໃນປະເທດນີ້ໄດ້ເກີດມີການປະຕິວັດຂອງປະຊາຊົນ, ລະບອບ

ເຄິ່ງສັກດີນາ ໄດ້ຖືກໂຄ່ນລົ້ມ,ສາທາລະນະລັດປະຊາທິປະໄຕອັບການິດສະຖານ ໄດ້ຮັບການປະກາດສະຖາປະນາຂຶ້ນ.(ຕົບມືຢ່າງຍືດຍາວ).

ພວກຈັກກະພັດທີ່ປະຕິເສດສິດຂອງປະຊາຊາດທີ່ຈະຕັດສິນ-ໂຊກຊາຕາກຳຂອງຕົນ, ສິດຕໍ່ຄວາມກ້າວໜ້າທາງສັງຄົມນັ້ນພວກເຂົາໄດ້ປ່າວຮ້ອງເຖິງເລື່ອງອັນເກົ່າແກ່ທີ່ວ່າອັນນັ້ນເປັນຍ້ອນ "ມືມົດສະກູ". ອັນນັ້ນເປັນການໃສ່ຮ້າຍປ້າຍສີ ຕໍ່ ນະໂຍບາຍແຫ່ງ ສ.ສ.ສ.ຊ. ແລະການມິນປະໝາດ ຕໍ່ປະຊາຊົນອັບການິດສະຖານທີ່ຮັກເສລີພາບ ແລະ ມີການພົວພັນແຫ່ງຄວາມເປັນເພື່ອນມິດ ແລະຄວາມເຄົາລົບເຊິ່ງກັນແລະກັນກັບພວກເຮົາ.(ຕົບມື).

ພວກເຮົາອວຍພອນ ສ.ປ.ອ. ໃນຖານະເປັນປະເທດເອກະລາດ, ຮັກຫອມສັນຕິພາບ, ບໍ່ຮ່ວມກຸ່ມໃດ ແລະເຊື່ອໝັ້ນວ່າ ປະເທດນີ້ຈະໄດ້ກາຍເປັນປັດໃຈອັນໜຶ່ງ ແຫ່ງສັນຕິພາບແລະສະຖຽນລະພາບໃນພາກພື້ນນີ້ ຂອງທະວີບອາຊີ(ຕົບມື). ພວກເຮົາເຫັນດີນຳຄວາມຕັ້ງໃຈຂອງປະເທດໜຸ່ມນ້ອຍນີ້ທີ່ຈະເສີມຂະຫຍາຍແລະປັບປຸງສາຍສຳພັນກັນຖານມິດ ກັບປະເທດຂອງພວກເຮົາ.(ຕົບມື).

ໃນປະຈຸບັນນີ້ ສາຍສຳພັນກັນຂອງພວກເຮົາແມ່ນຮັ່ງມີຕາມເນື້ອໃນຂອງມັນ, ພວກເຮົາເຊື່ອໝັ້ນວ່າ ສາຍສຳພັນກັນດັ່ງກ່າວຈະໄດ້ຮັບການຂະຫຍາຍຕົວ ເພື່ອເປັນຜົນປະໂຫຍດ ແກ່ທັງສອງປະເທດ, ແກ່ພາລະກິດແຫ່ງສັນຕິພາບໃນອາຊີ ແລະ

ຈະບໍ່ໄດ້ເກີດຜົນຮ້າຍອັນໃດແກ່ປະເທດອື່ນໆ. ພວກເຮົາຈະໄດ້ເຮັດທຸກສິ່ງທຸກຢ່າງ ເພື່ອປົບປຸງມິດຕະພາບ ແບບປະເພນີກັບປະເທດເພື່ອນບ້ານໃກ້ຄຽງ. (ຕົບມືຢ່າງຍືດຍາວ) ...

ເຫລັ້ມທີ ໗,
ຫນ້າ ໔໗໔-໔໗໙

ສານເຖິງກອງປະຊຸມນັກປະພັນອາຊີ ແລະອາຟະລິກາໃນນະຄອນຕັດຊະເກັນ

ໃນນາມຄະນະບໍລິຫານງານ ຂອງສະພາໂຊວຽດ ສູງສຸດ ສ.ສ.ສ.ຊ, ປວງປະຊາຊົນໂຊວຽດ ແລະໃນນາມສ່ວນຕົວ ຂໍສະແດງຄວາມເຄົາລົບຕໍ່ບັນດານັກປະພັນອາຊີ-ອາຟະລິກາທີ່ໄດ້ມາຊຸມນຸມກັນໃນດິນແດນອຸດຊະເບັກກິດສະຖານທີ່ມີໃຈຍິນດີຕ້ອນຮັບແຂກ ເພື່ອສະຫລອງວັນຈັດຕັ້ງສະມາຄົມ ນັກປະພັນອາຊີ-ອາຟະລິກາ ຄົບຮອບ ໒໐ ປີ .

ສະມາຄົມນີ້ ໄດ້ຕ້ານຈັກກະພັດນິຍົມເປັນພື້ນຖານເພື່ອເຕົ້າໂຮມຕົວແທນຂອງພວກປັນຍາຊົນທີ່ກ້າວໜ້າ ແລະໄດ້ປະກອບສ່ວນທີ່ສຳຄັນເຂົ້າໃນພາລະກິດແຫ່ງສັນຕິພາບ, ການປົດປ່ອຍບັນດາປະຊາຊາດໃຫ້ພົ້ນອອກຈາກແອກລ່າເມືອງຂຶ້ນ ແລະຈຳແນກເຊື້ອຊາດ, ໃນການຕໍ່ສູ້ເພື່ອອຸດົມຄະຕິ ແຫ່ງເສລີພາບ, ມະນຸດສະທຳແລະປະຊາທິປະໄຕ.

ສິລະປະວັນນະຄະດີ ມີບົດບາດອັນສຳຄັນທີ່ສຸດທາງດ້ານສັງຄົມ. ສິລະປະວັນນະຄະດີແມ່ນຮູບແຕ້ມຕົວຈິງ ແຫ່ງຊີວິດຂອງປະຊາຊົນ; ຍ້ອນເຫດນັ້ນ ນັກສິລະປະວັນນະຄະດີຈຶ່ງສົ່ງເສີມ

ໃຫ້ ຄວາມກ້າວໜ້າທາງດ້ານຊົນຊາດແລະສັງຄົມ ຂອງ ປະເທດໃຜລາວ, ສົ່ງເສີມການຂະຫຍາຍການແລກປ່ຽນກັນດ້ວຍສົມບັດທາງຈິດໃຈ ແລະສົ່ງເສີມການຂະຫຍາຍຄວາມເຂົ້າໃຈກັນໃນທົ່ວໂລກ. ປະຊາຊົນໂຊວຽດຮູ້ຢ່າງດີ ແລະຮັກພົນງານຂອງນັກປະພັນອາຊີແລະອາຟະລິກາ ທີ່ສະແດງໃຫ້ເຫັນ ເຖິງຄວາມມຸ່ງມາດປາຖະໜາ ຂອງປະຊາຊົນ ທຳມະດາສາມັນ, ເຖິງນ້ຳໃຈຕໍ່ສູ້ແລະການກໍ່ສ້າງ.

ບັນດາເພື່ອນມິດທີ່ຮັກແພງ ! ກອງປະຊຸມຄັ້ງນີ້ໄດ້ດຳເນີນໄປໃນວັນເວລາທີ່ສັບສົນ ຄືໃນເວລາທີ່ພວກປະຕິການພວມພະຍາຍາມເຮັດໃຫ້ສະຖານະການສາກົນ ເຄັ່ງຮ້ອນຍິ່ງຂຶ້ນ. ພວກຈັກກະພັດແລະລູກມື ໄດ້ໂຈມຕີການລົດຜ່ອນ ຄວາມເຄັ່ງ ຕຶງທາງສາກົນລົງ, ພະຍາຍາມແບ່ງແຍກບັນດານັກຮົບທີ່ຕໍ່ສູ້ເພື່ອເສລີພາບແລະເອກະລາດຂອງບັນດາປະເທດທີ່ໜຸ່ມນ້ອຍ, ພະຍາຍາມກໍ່ໃຫ້ເກີດກໍລະນີພິພາດກັນລະຫວ່າງອ້າຍນ້ອງ ໃນທະວີບອາຊີແລະອາຟະລິກາ, ພະຍາຍາມຮັກສາບໍ່ເກີດແຫ່ງຄວາມເຄັ່ງຕຶງໃນພາກພື້ນຕາເວັນອອກກາງ, ໃນພາກໃຕ້ຂອງອາຟະລິກາແລະໃນອິນໂດຈີນ.

ການເຕົ້າໂຮມບັນດາຜູ້ຄົນທີ່ມີເຈດຕະນາດີ ເພື່ອເສີມຂະຫຍາຍການຕໍ່ສູ້ເພື່ອສັນຕິພາບ, ການສະກັດກັ້ນ ການແຂ່ງຂັນສ້າງອາວຸດ, ຕ້ານແຜນການທີ່ຈະສ້າງອາວຸດເນີຕຼົງ ແລະອາວຸດສັງຫານຊີວິດໃນຂອບເຂດ ທີ່ກວ້າງຂວາງ ນັ້ນ ເປັນເປົ້າໝາຍທີ່ສຳຄັນກວ່າໝູ່ໃນປະຈຸບັນນີ້.

ພວກເຮົາເຊື່ອໝັ້ນວ່າ ໃນຍຸກສະໄໝນີ້ບັນດາກຳລັງແຫ່ງສັນຕິພາບແລະຄວາມກ້າວໜ້າທາງສັງຄົມຈະສາມາດລົບລ້າງແຜນການຮຸກຮານ, ສາມາດອັດຂວາງການແຊກແຊງ ຂອງພວກຈັກກະພັດເຂົ້າໃນກິດຈະການພາຍໃນ ຂອງບັນດາປະຊາຊາດໄດ້. ດ້ວຍການກະທຳຮ່ວມກັນ ມັນສາມາດ ສະກັດກັ້ນການໃຊ້ຈ່າຍສົມບັດຂອງໜ່ວຍພິພົບເຮົາເພື່ອສ້າງອາວຸດ, ສາມາດເຮັດໃຫ້ມັນສະໜອງແລະກຳລັງວັງຊາຂອງມະນຸດຮັບໃຊ້ການຕອບສະໜອງຄວາມຕ້ອງການຂອງຜູ້ຄົນນັບເປັນລ້ານ ໆ ຄົນ, ຮັບໃຊ້ການຂະຫຍາຍຕົວທາງດ້ານຈິດໃຈແລະວັດທະນະທຳໄດ້. ຂໍສະແດງຄວາມເຊື່ອໝັ້ນວ່າ ກອງປະຊຸມ ຄັ້ງນີ້ຈະໄດ້ປະກອບສ່ວນຂອງຕົນເຂົ້າໃນການແກ້ໄຂເປົ້າໝາຍ ທີ່ຍິ່ງໃຫຍ່ເຫຼົ່ານີ້.

ສ.ສ.ສ.ຊ. ທີ່ປະຕິບັດຄຳສັ່ງສອນຂອງເລນິນ ຜູ້ຍິ່ງໃຫຍ່ຍາມໃດກໍສະໜັບສະໜູນປະຊາຊາດອາຊີ ແລະອາຟະລິກາທີ່ດຳເນີນການຕໍ່ສູ້ອັນເປັນທຳ ເພື່ອເອກະລາດແຫ່ງຊາດ, ຕ້ານລັດທິຈັກກະພັດນິຍົມ ແລະລັດທິລ່າເມືອງຂຶ້ນ, ເພື່ອສັນຕິພາບແລະຄວາມກ້າວໜ້າທາງສັງຄົມ.

ຂໍອວຍພອນບັນດາເພື່ອນມິດທີ່ຮັກແພງ ຈົ່ງປະສົບຜົນດີ ໃນວຽກງານຂອງພວກທ່ານ, ຜົນສຳເລັດໃໝ່ ໃນການເຄື່ອນໄຫວຂອງສະມາຄົມຂອງພວກທ່ານ, ຈົ່ງປະສົບຜົນດີ ໃນກິດຈະການສິລະປະວັນນະຄະດີ !

ວັນທີ ໑໐ ເດືອນຕຸລາປີ ໑໙໗໘ ລ.ບະເລັດຊະເນັບ

ເຫຼັ້ມທີ ໗, ໜ້າ ໔໘໖-໔໘໗

ສານເຖິງກອງປະຊຸມໃຫຍ່ຄັ້ງທີ XIII ຂອງນັກສະຖາປະນິກທົ່ວໂລກ

ຂໍສະແດງຄວາມເຄົາລົບຕໍ່ບັນດາຜູ້ແທນແລະແຂກຂອງກອງປະຊຸມໃຫ່ຍຄັ້ງທີ XIII ຂອງສະມາຄົມນັກສະຖາປະນິກສາກົນທີ່ດຳເນີນໄປພາຍໃຕ້ຄຳຂວັນທີ່ວ່າ "ສະຖາປັດຕະຍະກຳແລະການພັດທະນາແຫ່ງຊາດ".

ກິດຈະກຳຂອງນັກສະຖາປະນິກ ມັນພົວພັນໂດຍກົງກັບການແກ້ໄຂບັນຫາທີ່ສຳຄັນຕ່າງໆ ຂອງການພັດທະນາທາງຊົນຊາດແລະທາງສັງຄົມ. ມັນເປັນແນວນັ້ນກໍ່ຍ້ອນວ່ານັກສະຖາປະນິກມີໜ້າທີທີ່ຈະສ້າງເງື່ອນໄຂອັນມີຄວາມສະດວກສະບາຍແກ່ຊີວິດຂອງມະນຸດ. ສະຖາປັດຕະຍະກຳ, ການກໍ່ສ້າງເມືອງຕ້ອງປະກອບສ່ວນທີ່ສຳຄັນເຂົ້າໃນການແກ້ໄຂບັນຫາ ອັນຮີບຮ້ອນຂອງຍຸກສະໄໝນີ້ ຄືການສ້າງເຮືອນຢູ່ໃຫ້ດີ, ການປົກປັກຮັກສາທຳມະຊາດແວດລ້ອມ ແລະບູຮານະສະຖານທີ່ສັກສິດ.

ວິຊາສະຖາປັດຕະຍະກຳເປັນວິຊາແຫ່ງການກໍ່ສ້າງຢ່າງສັນຕິ. ດ້ວຍເຫດນັ້ນ ນັກສະຖາປະນິກ ຍາມໃດກໍເຂົ້າຢູ່ໃນ ຖັນແຖວຂອງນັກຮົບທີ່ຕໍ່ສູ້ເພື່ອສັນຕິພາບ, ຕ້ານສົງຄາມທີ່ກໍ່ໃຫ້ເກີດ

ຄວາມເສຍຫາຍແກ່ຕົວເມືອງແລະໝູ່ບ້ານ, ແກ່ ບູຮານະສະຖານອັນເປັນທີ່ລະນຶກແຫ່ງປະຫວັດສາດແລະວັດທະນະທຳ,ແກ່ທຸກສິ່ງ ເຊິ່ງແມ່ນມະນຸດຫລາຍລຸ້ນຄົນ ໄດ້ກໍ່ສ້າງໄວ້.

ລັດໂຊວຽດທີ່ດຳເນີນນະໂຍບາຍ ທີ່ຮັກຫອມສັນຕິພາບຂອງພັກກອມມູນິດແລະແນໃສ່ປັບປຸງສະວັດດີພາບຂອງຊາວໂຊວຽດໃຫ້ສູງຂຶ້ນ ພວມປະຕິບັດການກໍ່ສ້າງ ໃນຂອບເຂດ ທີ່ ກວ້າງຂວາງ. ໃນໄລຍະເວລາ ໒໕ ປີທີ່ຜ່ານມານີ້ ລັດໂຊວຽດໄດ້ສ້າງເຮືອນຢູ່ ໕໐ ກວ່າລ້ານບ່ອນຢູ່ສຳລັບຄອບຄົວ ໂຊວຽດ; ໃນໄລຍະເວລາດັ່ງກ່າວ ຊາວໂຊວຽດ ໒໐໐ ລ້ານຄົນ ໄດ້ຍ້າຍໄປຢູ່ເຮືອນໃໝ່. ເຖິງເປັນແນວນັ້ນກໍຕາມ ລັດໂຊວຽດຍັງເສີມຂະຫຍາຍການສ້າງເຮືອນຢູ່ ໂດຍເອົາໃຈໃສ່ຕໍ່ບັນຫາວ່າດ້ວຍການປັບປຸງຈູມນະພາບ, ຄວາມສະດວກສະບາຍແຫ່ງ "ສະຖານທີ່ຢູ່ຂອງມະນຸດ". ດ້ວຍເຫດນັ້ນ ປະຊາຊົນເຮົາຈຶ່ງຕີລາຄາສູງຕໍ່ວຽກການຂອງນັກສະຖາປະນິກ.

ຂໍສະແດງຄວາມເຊື່ອໝັ້ນວ່າ ກອງປະຊຸມໃຫຍ່ຄັ້ງທີ XIII ຂອງສະມາຄົມນັກສະຖາປະນິກສາກົນ ຈະສົ່ງເສີມ ການເຕົ້າໂຮມການອອກແຮງຂອງບັນດານັກສະຖາປະນິກ ໃນການເສີມຂະຫຍາຍການກໍ່ສ້າງເຮືອນຢູ່ແລະການຂະຫຍາຍສະຖາປັດຕະຍະກຳ, ການສ້າງຕົວເມືອງແລະໝູ່ບ້ານ ທີ່ສະດວກສະບາຍແລະສວຍງາມໃນໜ່ວຍພິພົບຂອງພວກເຮົາ.

ຂໍອວຍພອນໃຫ້ບັນດາຜູ້ເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງນີ້ ຈົ່ງປະສົບແຕ່ຜົນສຳເລັດໃນກິດຈະກຳ ແບບມີຫົວຄິດ ປະດິດສ້າງ

ຂອງພວກທ່ານ.

ລ.ບະເລັດຊະເນັບ

ວັນທີ ໒໒ ເດືອນຕຸລາປີ ໑໙໓໘

ເຫລັ້ມທີ ໓,

ໜ້າ ໔໙໒-໔໙໘

ຄຳປາໄສຢູ່ວົງກະແລມແລ້ວໃນພິທີງານລ້ຽງອາຫານເພື່ອເປັນກຽດແກ່ຄະນະຜູ້ແທນພັກກອມມູນິດຫວຽດນາມແລະລັດຖະບານແຫ່ງສາທາລະນະລັດສັງຄົມນິຍົມຫວຽດນາມ ໂດຍມີສະຫາຍເລຍ໋ວນ ເລຂາທິການໃຫຍ່ສູນກາງພ.ກ.ວ.ແລະສະຫາຍຟາມວັນດົ່ງ, ສະມາຊິກຄະນະບໍລິຫານງານສູນກາງພ.ກ.ວ., ນາຍົກລັດຖະມົນຕີ ແຫ່ງລັດຖະບານສ.ສ.ວ.ເປັນຫົວໜ້າ

ວັນທີ ໓ ເດືອນພະຈິກປີ ໑໙໗໘

ສະຫາຍ ເລຍ໋ວນ ທີ່ຮັກແພງ !

ສະຫາຍ ຟາມວັນດົ່ງ ທີ່ຮັກແພງ !

ບັນດາຜູ້ແທນທີ່ເຄົາລົບ ໃນຄະນະຜູ້ແທນພັກ ແລະ ລັດຖະບານແຫ່ງສາທາລະນະລັດສັງຄົມນິຍົມຫວຽດນາມ !

ບັນດາສະຫາຍແລະເພື່ອນມິດ !

ພວກເຮົາຮູ້ສຶກມີຄວາມປິຕິຍິນດີ ເນື່ອງໃນໂອກາດ ທີ່ຄະນະຜູ້ແທນພັກແລະລັດຖະບານຂອງຫວຽດນາມອ້າຍນ້ອງ ໂດຍມີຜູ້ນຳທີ່ເຄົາລົບຂອງປະຊາຊົນຫວຽດນາມ, ເພື່ອນມິດທີ່ດີຂອງພວກເຮົາ ຄື ສະຫາຍເລຍ໋ວນ ແລະ ຟາມວັນດົ່ງເປັນຫົວໜ້າໄດ້ມາຢ້ຽມຢາມປະເທດເຮົາ.

ພວກເຮົາໄດ້ພົບປະກັນກັບບັນດາຜູ້ນຳຫວຽດນາມ ໃນວັນເວລາທີ່ຫຍຸ້ງຍາກແຫ່ງການຕໍ່ສູ້ອັນພິລະອາດຫານ ຂອງປະຊາຊົນຫວຽດນາມ ຕ້ານການຮຸກຮານຂອງອາເມລິກາ.ພວກເຮົາກໍໄດ້ພົບປະກັນໃນວັນເວລາພາຍຫລັງໄຊຊະນະ ອັນເປັນປະຫວັດການຕໍ່ພວກຮຸກຮານແລະລູກມື ແລະໃນວັນເວລາ ເຊິ່ງ

ແມ່ນປະເທດຫວຽດນາມໄດ້ປະເຊີນໜ້າກັບເປົ້າໝາຍ ແຫ່ງການກໍ່ສ້າງຢ່າງສັນຕິ. ຍາມໃດພວກເຮົາກໍ ໄດ້ເວົ້າ ພາສາດຽວກັນເພື່ອເປັນຜົນປະໂຫຍດຂອງປະຊາຊົນ ຂອງທັງສອງປະເທດ, ສັນຕິພາບແລະສັງຄົມນິຍົມ.

ຂ້າພະເຈົ້າໄດ້ເວົ້າຫລາຍຄັ້ງວ່າ ສຳລັບຊາວກອມມູນິດໂຊວຽດນັ້ນ ຄວາມສາມັກຄີກັບຫວຽດນາມເປັນຄຳຮຽກຮ້ອງທາງຫົວໃຈແລະມັນສະໝອງ. ມິດຕະພາບໂຊວຽດ - ຫວຽດນາມແມ່ນອີງໃສ່ຜົນປະໂຫຍດ ແລະຈຸດປະສົງຮ່ວມກັນ, ອີງໃສ່ລັດທິມາກ-ເລນິນ ແລະລັດທິສາກົນສັງຄົມນິຍົມ.

ໃນວັນເວລາປະຈຸບັນນີ້ ເມື່ອນະໂຍບາຍຂອງຜູ້ນຳຈີນ ໄດ້ສ້າງຊຸປະສັກອັນໃຫຍ່ຫລວງປະການໃໝ່ ແກ່ການສ້າງສັງຄົມນິຍົມໃນດິນແດນຫວຽດນາມນັ້ນ ກຳລັງແຮງ ຂອງມິດຕະພາບແລະຄວາມສາມັກຄີກັນແຫ່ງບັນດາປະເທດສັງຄົມນິຍົມຍິ່ງມີບົດບາດສຳຄັນເປັນພິເສດ.

ພວກເຮົາເຊື່ອໝັ້ນວ່າ ໂດຍໄດ້ຮັບການຊ່ວຍເຫລືອ ແລະຄວາມສະໜັບສະໜູນຂອງບັນດາປະຊາຊາດອ້າຍນ້ອງປະຊາຊົນຫວຽດນາມ ຈະໄດ້ແກ້ໄຂຄວາມຫຍຸ້ງຍາກປະຈຸບັນນີ້, ພາຍໃຕ້ການນຳພາຂອງພັກກອມມູນິດ ຈະໄດ້ປະຕິບັດ ບັນດາເປົ້າໝາຍທີ່ກອງປະຊຸມໃຫຍ່ຄັ້ງທີ IV ຂອງຊາວກອມມູນິດ ຫວຽດນາມໄດ້ວາງໄວ້, ຈະໄດ້ສ້າງລັດສັງຄົມນິຍົມທີ່ເຂັ້ມແຂງແລະວັດທະນາຖາວອນ.

ພວກເຮົາ ພ້ອມກັບສະຫາຍຫວຽດນາມ ໄດ້ປະຕິບັດ ການ

ແລກປ່ຽນຄວາມຄິດຄວາມເຫັນກັນ ກ່ຽວກັບບັນດາບັນຫາທີ່ສຳຄັນ ທີ່ກ່ຽວຂ້ອງກັບສາຍສຳພັນກັນຂອງພວກເຮົາ ແລະ ກ່ຽວຂ້ອງເຖິງສະຖານະການສາກົນ. ພວກເຮົາໄດ້ບັນລຸຄວາມເຂົ້າໃຈກັນຢ່າງເລິກເຊິ່ງ ແລະໄດ້ຢັ້ງຢືນເຖິງຄວາມ ເປັນເອກະພາບກັນທາງດ້ານທັດສະນະຫລັກໝັ້ນ.

ພາຍຫລັງການເຈລະຈາກັນ ພວກເຮົາຫາກໍ່ໄດ້ລົງເຊັນເອກະສານທີ່ສຳຄັນ ອັນເປັນປະຫວັດການ ຄືສົນທິສັນຍາວ່າດ້ວຍມິດຕະພາບແລະການຮ່ວມມືກັນ ລະຫວ່າງສະຫະພາບ ສາທາລະນະລັດສັງຄົມນິຍົມໂຊວຽດກັບສາທາລະນະລັດ ສັງຄົມນິຍົມຫວຽດນາມ.

ເນື້ອໃນແລະລັກສະນະພິເສດແຫ່ງສົນທິສັນຍາດັ່ງກ່າວເປັນແນວໃດ ?

ສົນທິສັນຍາດັ່ງກ່າວ ກ່ອນອື່ນໝົດ ມີໜ້າທີ່ຮັບໃຊ້ ຜົນປະໂຫຍດແຫ່ງການກໍ່ສ້າງຢ່າງສັນຕິ ຂອງປະຊາຊົນ ທັງສອງປະເທດ, ການກໍ່ສ້າງສັງຄົມນິຍົມແລະກອມມູນິດ ໃນປະເທດທັງສອງຂອງພວກເຮົາ. ອັນນັ້ນເປັນເນື້ອໃນທີ່ສຳຄັນ.

ສົນທິສັນຍາດັ່ງກ່າວ ມີໜ້າທີ່ທີ່ຈະປັບປຸງມິດຕະພາບ ຖານອ້າຍນ້ອງຂອງປະຊາຊົນທັງສອງປະເທດຂອງພວກເຮົາ. ໂດຍອີງໃສ່ການກະທຳຮ່ວມກັນ ພວກເຮົາຈະເພີ່ມທະວີຄວາມເຂັ້ມແຂງທາງດ້ານການເມືອງ, ເສດຖະກິດ ແລະດ້ານອື່ນໆແຫ່ງຊີວິດທາງສັງຄົມຂອງພວກເຮົາ.

ສົນທິສັນຍາດັ່ງກ່າວ ສະແດງໃຫ້ເຫັນເຖິງຄວາມ ເປັນສະ

ທາຍທີ່ແທ້ຈິງ ລະຫວ່າງບັນດາປະເທດສັງຄົມນິຍົມອ້າຍນ້ອງ. ມັນສືບຕໍ່ມູນເຊື້ອອັນດີງາມຂອງຄວາມເປັນເພື່ອນມິດ ສັງຄົມນິຍົມທີ່ສ້າງສາຍສຳພັນກັນ ເຊິ່ງໄດ້ຮັບການລະບຸໄວ້ໃນບັນດາຂໍ້ຕົກລົງກັນທີ່ຫມັ້ນຄົງ. ມັນຮັບໃຊ້ຜົນປະໂຫຍດ ຂອງບັນດາປະເທດອ້າຍນ້ອງ, ຮັບໃຊ້ຜົນປະໂຫຍດ ແຫ່ງການປັບປຸງຖານະບົດບາດທາງສາກົນຂອງພວກເຮົາ.

ໂດຍຜ່ານສົນທິສັນຍາສະບັບນີ້ ສ.ສ.ສ.ຊ. ແລະ ຫວຽດນາມ ຢັ້ງຢືນເຖິງທິດທາງແຫ່ງນະໂຍບາຍ ຕ່າງປະເທດຂອງທັງສອງປະເທດ. ພວກເຮົາສະຫນັບສະຫນູນ ການປັບປຸງສັນຕິພາບໃນອາຊີແລະທົ່ວໂລກ, ສະຫນັບສະຫນູນການສ້າງສາຍພົວພັນກັນທາງສາກົນ ທີ່ເປັນທຳແລະມີສິດສະເຫມີພາບກັນ.

ສົນທິສັນຍາໂຊວຽດ-ຫວຽດນາມໄດ້ຖືກຕົກລົງກັນລະຫວ່າງສອງປະເທດເອກະລາດ, ມີສິດສະເຫມີພາບກັນທີ່ຮັກຫອມສັນຕິພາບ; ບໍ່ມີຈັກຄຳເວົ້າທີ່ບີບບັງຄັບຝ່າຍອື່ນ, ບໍ່ມີຈັກຄຳເວົ້າເຊິ່ງໃນນັ້ນ ມັນລະເມີດຜົນປະໂຫຍດຂອງປະເທດອື່ນ.

ຂ້າພະເຈົ້າເຊື່ອຫມັ້ນວ່າ ຜູ້ໃດທີ່ຮັກຫອມສັນຕິພາບ ຜູ້ນັ້ນຈະຕ້ອນຮັບຂ່າວດ້ວຍຄວາມປິຕິຍິນດີ ກ່ຽວກັບສົນທິສັນຍາ ໂຊວຽດ-ຫວຽດນາມ ວ່າດ້ວຍມິດຕະພາບແລະການຮ່ວມມືກັນ.

ພ້ອມກັນນັ້ນ ມັນອາດຄາດຄະເນໄດ້ວ່າ ຜູ້ໃດທີ່ບໍ່ມັກມິດຕະພາບໂຊວຽດ-ຫວຽດນາມ, ຜູ້ໃດທີ່ຢາກເຮັດ ສະຖານະການທາງສາກົນເຄັ່ງຮ້ອນຍິ່ງຂຶ້ນ, ຢາກແບ່ງແຍກບັນດາປະເທດສັງຄົມນິຍົມ ຜູ້ນັ້ນອາດຈະບໍ່ພໍໃຈ ຕໍ່ສົນທິສັນຍາດັ່ງກ່າວ.

ຢ່າງໃດກໍຕາມ ສົນທິສັນຍາ ໄດ້ກາຍເປັນຂໍ້ເທັດຈິງ ທາງການເມືອງແລ້ວ. ເຖິງວ່າຜູ້ໃດຫນຶ່ງ ບໍ່ມັກສົນທິສັນຍາດັ່ງກ່າວ ຜູ້ນັ້ນຈະຕ້ອງຮູ້ຈັກຂໍ້ເທັດຈິງ.

ບັນດາສະຫາຍທີ່ຮັກແພງ !

ພວກເຮົາເຊື່ອຫມັ້ນໃນອະນາຄົດ ອັນຮຸ່ງເຮືອງ ເຫລືອງເຫລື້ອມຂອງພວກເຮົາ. ປະຊາຊົນຂອງທັງສອງປະເທດຂອງພວກເຮົາທີ່ເປັນສະມາຊິກທີ່ມີສິດເທົ່າທຽມກັນ ໃນຄອບຄົວສັງຄົມນິຍົມທີ່ເຂັ້ມແຂງ ມີອະນາຄົດອັນສະຫວ່າງງາມ. ທ່ານເລນິນ ໃນປະເທດລັດເຊຍໂຊວຽດ ແລະທ່ານໂຮຈີມິນ ໃນປະເທດຫວຽດນາມ ເຊິ່ງເປັນຜູ້ນຳທີ່ຍິ່ງໃຫ່ຍແຫ່ງການປະຕິວັດ ຕ່າງກໍໄດ້ວາງພື້ນຖານແກ່ລັດຂອງພວກເຮົາ, ໄດ້ສ້າງເງື່ອນ ໄຂເບື້ອງຕົ້ນແຫ່ງການພັດທະນາ ແລະ ໄດ້ກຳນົດທິດທາງ ຂອງພວກເຮົາ. ພວກເຮົາພາກພູມໃຈວ່າ ພວກເຮົາເດີນຕາມທິດທາງນີ້ຢ່າງສູດກົກສູດປາຍ.

ຂໍຍົກຈອກດື່ມເພື່ອ :

ມິດຕະພາບທີ່ເຂັ້ມແຂງທີ່ໃຜໆກໍບໍ່ສາມາດທຳລາຍໄດ້ ລະຫວ່າງສະຫະພາບໂຊວຽດ ກັບສາທາລະນະລັດ ສັງຄົມນິຍົມຫວຽດນາມ !

ສັນຕິພາບທີ່ຖາວອນ ແລະຄວາມປອດໄພ ໃນຫນ່ວຍພິພົບຂອງພວກເຮົາ!

ປະຊາຊົນຫວຽດນາມທີ່ເປັນວິລະຊົນ !

ເພື່ອສຸຂະພາບແລະຜົນສຳເລັດຂອງສະຫາຍເລຢວນ, ຟາມ

ວັນຄົງ ແລະບັນດາເພື່ອນມິດທວຽດນາມຂອງພວກເຮົາ! (ຕົບມືຢ່າງຍືດຍາວ.)

ເຫຼັ້ມທີ ໗,
ໜ້າ ៥໐໑-៥໐៣

24 / VII
ຫ້າມຈຳໜ່າຍ

ຕອບ ຄຳຖາມຂອງນັກໜັງສືພິມ "ປະລາວະດາ"
ວັນທີ ໑໗ ເດືອນພະຈິກ ປີ ໑໙໗໗

ຄຳຖາມ: ທ່ານມີຄວາມຄິດຢ່າງໃດ ກ່ຽວກັບການທີ່ໜັງສືພິມຕ່າງປະເທດ ໄດ້ແຈ້ງຂ່າວວ່າ ປະເທດຝ່າຍ ຕາເວັນຕົກ ເປັນຕົ້ນແມ່ນອາເມລິກາ ໄດ້ແຊກແຊງ ເຂົ້າໃນເຫດການ ທີ່ເກີດຂຶ້ນໃນປະເທດອີລານ ແລະຂ່າວກ່ຽວກັບ ຄວາມອາດເປັນໄປໄດ້ຂອງການແຊກແຊງທາງດ້ານທະຫານ ຂອງພວກເຂົາ ?

ຄຳຕອບ: ແມ່ນແລ້ວ ມີຂ່າວແນວນີ້ ນັບລວມຂ່າວ ກ່ຽວກັບຄວາມອາດເປັນໄປໄດ້ຂອງການແຊກແຊງ ດ້ວຍກຳລັງ ອາວຸດຂອງບາງປະເທດຝ່າຍຕາເວັນຕົກ. ອັນເປັນທີ່ໜ້າແປກໃຈວ່າຕາມຄວາມເປັນຈິງ ເຈົ້າໜ້າທີ່ຂອງປະເທດເຫລົ່ານັ້ນບໍ່ໄດ້ປະຕິເສດຂ່າວແນວນີ້ຢ່າງທາງການ. ຫລືວ່າພວກເຂົາໄດ້ປະຕິເສດຂ່າວທີ່ວ່າ ໄດ້ມີການພະຍາຍາມທີ່ຈະແຊກແຊງ ເຂົ້າໃນກິດຈະການພາຍໃນຂອງປະເທດອີລານ (ດັ່ງທີ່ປະທານາທິບໍດີອາເມລິກາໄດ້ປະຕິເສດຂ່າວແນວນີ້ ໃນມໍ່ໆມານີ້) ແລະໃນຂະນະດຽວກັນນັ້ນ ພວກເຂົາໄດ້ປະກາດວ່າ ພວກເຂົາບໍ່ຍົກເວັ້ນ ຄວາມອາດເປັນໄປໄດ້ຂອງການແຊກແຊງແນວນີ້ .

ສ.ສ.ສ.ຊ. ທີ່ມີສາຍສຳພັນກັບເພື່ອນບ້ານໃກ້ຄຽງ ຕາມປະເພນີກັບປະເທດອີລານນັ້ນ ປະກາດຢ່າງຈະແຈ້ງວ່າ ສ.ສ.ສ.ຊ. ຄັດຄ້ານການແຊກແຊງເຂົ້າໃນກິດຈະການ ພາຍໃນຂອງປະເທດອີລານ ບໍ່ວ່າມັນປະຕິບັດໄປໃນຮູບການໃດຫລືໃຊ້ເຫດຜົນໃດ. ເຫດການທີ່ເກີດຂຶ້ນໃນປະເທດອີລານເປັນເຫດການພາຍໃນປະເທດທີ່ຕ້ອງແກ້ໄຂດ້ວຍຊາວອີລານເອງ. ບັນດາປະເທດຕ້ອງປະຕິບັດຫລັກການຂອງກົດບັດຂອງ ອ.ສ.ປ. ແລະເອກະສານທາງສາກົນອື່ນໆ, ຕ້ອງເຄົາລົບ ອະທິປະໄຕ ແລະເອກະລາດຂອງປະເທດອີລານ ແລະປະຊາຊົນອີລານ.

ເພິ່ນຕ້ອງເຂົ້າໃຈວ່າ ສ.ສ.ສ.ຊ. ຖືການແຊກແຊງພາຍໃນທຸກຮູບການເປັນຕົ້ນແມ່ນການແຊກແຊງດ້ວຍກຳລັງທະຫານເຂົ້າໃນກິດຈະການຂອງປະເທດອີລານທີ່ເປັນປະເທດທີ່ມີຊາຍແດນທີ່ຕິດກັບຊາຍແດນຂອງ ສ.ສ.ສ.ຊ. ວ່າເປັນການກະທຳທີ່ແຕະຕ້ອງຜົນປະໂຫຍດຂອງຄວາມປອດໄພແຫ່ງ ສ.ສ.ສ.ຊ.

ເຫລັ້ມທີ ກ,
ໜ້າ ໕໘໗

ຄຳນຳ

ສຳນັກພິມປື້ມການເມືອງ ທີ່ໄດ້ເລີ່ມຈັດພິມບົດປະມວນຂອງຂ້າພະເຈົ້າທີ່ກ່ຽວກັບບັນຫາວ່າດ້ວຍການຂະຫຍາຍຕົວຂອງລະບົບສັງຄົມນິຍົມ ໄດ້ຂໍໃຫ້ຂ້າພະເຈົ້າຂຽນຄຳນຳ ຕໍ່ບົດປະມວນເຫລັ້ມນັ້ນ.

ກ່ອນອື່ນຫມົດ ຂ້າພະເຈົ້າຢາກກ່າວເນັ້ນວ່າ ການຮ່ວມ ມືກັນທີ່ຮັ່ງມີແລະຂະຫຍາຍຕົວຢູ່ເລື້ອຍໆຂອງ ສ.ສ.ສ.ຊ. ກັບບັນດາປະເທດສັງຄົມນິຍົມອ້າຍນ້ອງ ເປັນບັນຫາ ອັນດັບແລກໃນສາຍສຳພັນກັນກັບຕ່າງປະເທດຂອງພັກ ແລະລັດຂອງພວກເຮົາ. ພ້ອມກັນນັ້ນ ບົດຮຽນຂອງເພື່ອນມິດ ແລະປະເທດພັນທະມິດຂອງພວກເຮົາ ເປັນບົດຮຽນທີ່ຊາວກອມມູນິດ, ປະຊາຊົນໂຊວຽດສົນໃຈຢ່າງຫລາຍທີ່ສຸດ.

ໃນປີ ໑໙໔໔-໑໙໔໕ ຂ້າພະເຈົ້າໄດ້ຮັບກຽດ ທີ່ຈະເຂົ້າຮ່ວມໃນການປະຕິບັດພາລະກິດປົດປ່ອຍຊາດ ຂອງກອງທັບໂຊວຽດ; ຂ້າພະເຈົ້າໄດ້ເຫັນຄວາມເບີກບານມ່ວນຊື່ນ ຂອງປະຊາຊົນໂປໂລຍ, ຮຸງກາລີ, ເຊັກໂກຊະໂລວັກກີທີ່ໄດ້ຮັບການ

ປົດປ່ອຍອອກຈາກແອກຟາຊິດ. ແນ່ນອນວ່າໃນວັນເວລາ ນັ້ນ ໄດ້ມີດອກໄມ້, ມີສີໜ້າທີ່ຍິ້ມແຍ້ມແຈ່ມໃສ; ແຕ່ວ່ານອກຈາກ ນັ້ນ ຍັງໄດ້ມີສິ່ງໜຶ່ງອີກ–ຜູ້ຄົນທີ່ໄດ້ຜ່ານຄວາມຫຍຸ້ງຍາກ ລຳບາກແລະການທົດສອບທີ່ຮ້າຍແຮງ ໄດ້ເລີ່ມຄົ້ນຄິດວ່າ ຕ້ອງເຮັດແນວໃດເພື່ອຂັດຂວາງບໍ່ໃຫ້ຄວາມຫຍຸ້ງຍາກ ເຫລົ່າ ນັ້ນເກີດຂຶ້ນຄັ້ງໃໝ່, ເພື່ອເຮັດຊີວິດໃຫ້ເປັນຊີວິດ ທີ່ມີຄວາມສົມບູນພູນສຸກ. ໄລຍະເວລາຕໍ່ມາ ໄດ້ສະແດງໃຫ້ເຫັນວ່າ ແສງແດດແຫ່ງສັນຕິພາບ ທີ່ໄດ້ຂຶ້ນໃນທ້ອງຟ້າ ເໜືອທະວີບຢູໂຣບທີ່ຖືກສົງຄາມພັງທະລາຍ ໄດ້ກາຍເປັນແສງແດດ ແຫ່ງສັງຄົມນິຍົມແກ່ປະເທດຫລາຍປະເທດ.

ໃນໄລຍະເວລາຕໍ່ມາ ຂ້າພະເຈົ້າໄດ້ເຄີຍໄປຢ້ຽມຢາມປະເທດສັງຄົມນິຍົມຕ່າງໆ, ໄດ້ເຂົ້າຮ່ວມ ໃນກອງປະຊຸມ ໃຫຍ່ຂອງພັກກອມມູນິດແລະກຳມະກອນ. ໃນລະຫວ່າງ ການຢ້ຽມຢາມເຫລົ່ານັ້ນ ຂ້າພະເຈົ້າໄດ້ພົບປະສົນທະນາ ກັນກັບ ຜູ້ຄົນຫລາຍຢ່າງເປັນທາງການ ແລະ ບໍ່ເປັນທາງການ. ຖ້າເວົ້າຄວາມຈິງວ່າບໍ່ມີມື້ດຽວທີ່ຂ້າພະເຈົ້າ ບໍ່ມີວຽກການທີ່ກ່ຽວຂ້ອງກັບບັນຫາວ່າດ້ວຍການຮ່ວມມືກັນກັບພັກແລະປະເທດອ້າຍນ້ອງຕ່າງໆ.

ເພິ່ນບໍ່ຄວນລືມວ່າ ປະຫວັດສາດໄດ້ຖ່າຍທອດມໍລະດົກ ອັນຊົ່ວຮ້າຍມາໄວ້ແກ່ຊາວກອມມູນິດ. ບັນດາຊົນຊາດຊູດຣີດທີ່ກຳອຳນາດເປັນຕົ້ນແມ່ນລະບອບການປົກຄອງຂອງພະເຈົ້າຊາໄດ້ຕັ້ງໃຈກໍ່ໃຫ້ເກີດຄວາມຄຽດຊັງກັນລະຫວ່າງບັນດາຊົນຊາດຊົນ

ເຜົ່າເປັນເວລາຫລາຍສັດຕະວັດ. ການທີ່ຊາວກອມມູນິດຂອງບັນດາປະເທດແຫ່ງຄວາມເປັນເພື່ອນມິດ ສັງຄົມນິຍົມ ໄດ້ດັດປ່ຽນການພົວພັນກັນທີ່ອີງໃສ່ຄວາມເປັນປໍລະປັກກັນ, ຄວາມບໍ່ເຊື່ອໃຈກັນ ໃຫ້ເປັນການພົວພັນກັນ ທີ່ອີງໃສ່ມິດຕະພາບແລະການຮ່ວມມືກັນຖານອ້າຍນ້ອງ ລະຫວ່າງບັນດາປະຊາຊາດທີ່ມີສິດເທົ່າທຽມກັນນັ້ນ ມັນເປັນຜົນງານຄວາມດີອັນຍິ່ງໃຫຍ່.

ໃນໄລຍະເວລາ ໖໐ ກ່ວາປີທີ່ຜ່ານມານີ້ ບັນດາປະເທດສັງຄົມນິຍົມໄດ້ຜ່ານເສັ້ນທາງທີ່ຍາວນານ ເຊິ່ງໃນນັ້ນ ບໍ່ພຽງແຕ່ພົບໄຊຊະນະທໍ່ນັ້ນ ຫາກຍັງໄດ້ພົບ ການປະລາໄຊ , ພົບຄວາມຂາດຕົກບົກພ່ອງອີກດ້ວຍ. ພ້ອມກັນນັ້ນ ຊີວິດເອງໄດ້ພິສູດໃຫ້ເຫັນວ່າ ພວກເຮົາໄດ້ຄັດເລືອກເສັ້ນທາງ ທີ່ ຖືກຕ້ອງ ເຊິ່ງແມ່ນການຮ່ວມມືກັນຂອງບັນດາປະເທດສັງຄົມນິຍົມ,ການປະສານງານກັນໃນການແກ້ໄຂບັນຫາທາງຊົນຊາດ ແລະທາງສາກົນ ພວມເຮັດໃຫ້ເສັ້ນທາງສາຍຍາວນານ, ທີ່ຈະນຳໄປສູ່ເປົ້າຫມາຍຂອງພວກເຮົາ ໃຫ້ກາຍເປັນເສັ້ນທາງສາຍສັ້ນໆ.

ການເຕີບໃຫຍ່ຂະຫຍາຍຕົວຂອງລະບົບສັງຄົມນິຍົມ ເປັນວຽກການທີ່ສັບສົນຫຍຸ້ງຍາກ ແຕ່ຫນ້າສົນໃຈຂອງຜູ້ຄົນນັບເປັນຮ້ອຍໆລ້ານຄົນ ທີ່ພວມກໍ່ສ້າງຊີວິດໃຫມ່ ແລະ ສາຍສຳພັນກັນທາງສາກົນແບບສັງຄົມນິຍົມອີກດ້ວຍ.

ສັດຕູຂອງລັດທິກອມມູນິດ ມັກວາດພາບຂອງໂລກ ສັງຄົມນິຍົມວ່າເປັນພາບສີດຽວ, ມີລ້ວນແຕ່ຮູບການແບບດຽວທໍ່ນັ້ນ.ຊີວິດຕົວຈິງສະແດງໃຫ້ເຫັນເຖິງຮູບການຫລາຍຮູບແລະວິທີການ

ຫລາຍວິທີແຫ່ງການດັດສ້າງສັງຄົມໃຫ້ເປັນສັງຄົມນິຍົມ.

ຂ້າພະເຈົ້າຄິດວ່າ ຜົນສຳເລັດລວມກັນ ຂອງຄວາມ ເປັນເພື່ອນມິດສັງຄົມນິຍົມເປັນຜົນງານອັນສູງສຸດແຫ່ງການປະຕິວັດໃນຍຸກສະໄຫມນີ້. ບົດຮຽນແຫ່ງການສ້າງສັງຄົມນິຍົມ (ແນ່ນອນວ່າພວກເຮົາບໍ່ຢາກບັງຄັບຜູ້ອື່ນໃຫ້ນຳເອົາບົດຮຽນເຫລົ່ານັ້ນມາໃຊ້ໃນທັນທີ) ເປັນຜົນສຳເລັດອັນເລີດລ້ຳ ຂອງຊົນຊັ້ນກຳມະກອນສາກົນ. ບົດຮຽນເຫລົ່ານັ້ນ ຊ່ວຍບັນດາກຳລັງປະຕິວັດແຫ່ງຊາດໃຫ້ຊອກຫາເສັ້ນທາງທີ່ດີທີ່ຈະນຳໄປສູ່ການ ປົດປ່ອຍໃຫ້ພົ້ນຈາກແອກພວກນາຍທຶນ, ໄປສູ່ການສ້າງສັງຄົມນິຍົມ.

ໃນເມື່ອຄິດເຖິງບົດຮຽນຂອງການຂະຫຍາຍຕົວຂອງຄວາມເປັນເພື່ອນມິດສັງຄົມນິຍົມນັ້ນ ພວກເຮົາອ້າງຄຳເວົ້າ ຂອງທ່ານເລນິນຄູສອນຜູ້ຍິ່ງໃຫຍ່ທີ່ວ່າ "ລັດທິມາກ ເປັນເຂັ້ມແຂງກ່ວາຫມູ່ຍ້ອນວ່າມັນເປັນທີ່ຖືກຕ້ອງ". ລັດທິມາກ ທີ່ທ່ານເລນິນໄດ້ເສີມຂະຫຍາຍໃຫ້ຮັ່ງມີຍິ່ງຂຶ້ນ ແລະທີ່ແນວຄິດປະຕິວັດຂອງຍຸກສະໄຫມນີ້ ກໍ່ເສີມຂະຫຍາຍໃຫ້ຮັ່ງມີຍິ່ງຂຶ້ນເຊັ່ນດຽວກັນນັ້ນມັນເປັນຄຳສັ່ງສອນທີ່ດີແກ່ການດັດແປງສັງຄົມ ໃຫ້ອີງໃສ່ ພື້ນຖານແຫ່ງຄວາມດີ, ມັນສະຫມອງແລະຄວາມເປັນທຳ.

ໃນບົດປະມວນຫົວນີ້ ມີໃບຫນ້າທີ່ອຸທິດຕໍ່ອະດີດຕະການ, ມີໃບຫນ້າຫລາຍທີ່ອຸທິດຕໍ່ຍຸກສະໄຫມນີ້ ແຫ່ງໂລກສັງຄົມນິຍົມ, ມີໃບຫນ້າທີ່ອຸທິດຕໍ່ອະນາຄົດອີກດ້ວຍ. ພວກເຮົາ, ຊາວກອມມູນິດມີຫນ້າທີ່ອັນສັກສິດທີ່ຈະນຳພາບັນດາປະເທດສັງຄົມນິຍົມໄປສູ່ການສ້າງຕັ້ງສັງຄົມແບບກອມມູນິດ ທີ່ເປັນສັງຄົມດຽວ ທີ່ສາ

ມາດສ້າງເງື່ອນໄຂທີ່ດີແກ່ການຂະຫຍາຍມະນຸດຢ່າງຮອບດ້ານ ແລະການຕອບສະໜອງຄວາມຕ້ອງການຢ່າງຄົບຖ້ວນຂອງມະນຸດໄດ້.

ຂ້າພະເຈົ້າຄິດວ່າ ໄຊຊະນະຂອງລະບອບກອມມູນິດ ໃນໜ່ວຍປະເທດໜ່ວຍໜຶ່ງ ເປັນສິ່ງທີ່ອາດເປັນໄປໄດ້ໃນເມື່ອຍັງມີປະເທດທຶນນິຍົມຕ່າງໆກໍຕາມ. ສ່ວນເງື່ອນໄຂພາຍນອກນັ້ນ ໄຊຊະນະດັ່ງກ່າວເປັນສິ່ງທີ່ອາດເປັນໄປໄດ້ ກໍຕໍ່ເມື່ອ ມີການລົບລ້າງໄພອັນຕະລາຍແຫ່ງສົງຄາມ, ການນຳເອົາເງິນທຶນທາງການທະຫານໄປຮັບໃຊ້ຜົນປະໂຫຍດ ແຫ່ງການກໍ່ສ້າງຢ່າງສັນຕິ, ມີສັນຕິພາບໃນມັ້ນ, ມັ່ນແລະຕະຫລອດ ກາລະນານ. ກອມມູນິດແລະສັນຕິພາບເປັນດວງດາວ ທີ່ເຍືອງທາງແກ່ພວກເຮົາ, ເພື່ອນມິດແລະເພື່ອຮ່ວມຄິດ ຂອງພວກເຮົາທີ່ຈະກ້າວຂຶ້ນມັ່ນ.

"ໂລກສັງຄົມນິຍົມ ໝາຍເຖິງໄຊຊະນະຂອງອຸດົມການອັນສູງສົ່ງ", ລ.ບະເລັດຊະເນັບ

ມົດສະກູ, ໑໙໗໘ ,

" ໂປລິດອິຊະດາດ "

ເຫຼັ້ມ ທີ ກ,

ໜ້າ ໔໔໓-໔໔໔

ຄຳປາໄສໃນ ວັງກະແລມແລັງໃນພິທີງານລ້ຽງອາຫານ ເພື່ອເປັນກຽດແກ່ ນູນ ມູຫຳມັດ ຕາລາກີ ເລຂາທິການໃຫຍ່ ສູນກາງພັກປະຊາທິປະໄຕປະຊາຊົນ ອາຟະການິສະຖານ ປະທານສະພາປະຕິວັດ, ນາຍົກລັດຖະມົນຕີແຫ່ງ ສາທາລະນະລັດປະຊາທິປະໄຕ ອາຟະການິສະຖານ ວັນທີ ໕ ເດືອນທັນວາປີ ໑໙໗໘

ສະຫາຍ ຕາລາກີ ທີ່ຮັກແພງ !

ແຂກອັບການິດສະຖານທີ່ເຄົາລົບ !

ບັນດາສະຫາຍ !

ຂໍສະແດງຄວາມເຄົາລົບຢ່າງບໍລິສຸດໃຈຕໍ່ບັນດາແຂກຊັ້ນສູງ ທີ່ມາຈາກສາທາລະນະລັດປະຊາທິປະໄຕອາຟະການິສະຖານ, ພວກເຮົາຮູ້ສຶກມີຄວາມປິຕິຍິນດີ ທີ່ຈະຕ້ອນຮັບສະຫາຍຕາລາກີ, ຜູ້ນຳທີ່ດີເດັ່ນຂອງປະເທດເພື່ອນມິດ, ແລະບັນດາຜູ້ນຳຄົນອື່ນໆ ທີ່ເຂົ້າຮ່ວມໃນຄະນະຜູ້ແທນທີ່ໄດ້ມາຢ້ຽມຢາມ ປະເທດ ຂອງພວກເຮົາ.

ສ.ສ.ສ.ຊ. ກັບອາຟະການິສະຖານ ເປັນປະເທດເພື່ອນບ້ານໃກ້ຄຽງທີ່ດີອັນເປັນປະເພນີ. ພື້ນຖານແຫ່ງການ ພົວພັນກັນຖານມິດທີ່ມີສິດເທົ່າທຽມກັນ ໄດ້ຖືກທ່ານເລນິນ ຜູ້ຍິ່ງໃຫຍ່ ວາງໄວ້ ໖໐ ປີກ່ອນຫນ້ານີ້. ໄລຍະເວລາດັ່ງກ່າວທີ່ລ່ວງໄປ ໄດ້ພິສູດໃຫ້ເຫັນວ່າ ການພົວພັນກັນແບບນີ້ຮັບໃຊ້ຜົນປະໂຫຍດ ຂັ້ນພື້ນຖານຂອງທັງສອງປະເທດ ຂອງພວກເຮົາຢ່າງໄດ້ຜົນດີ.

ໃນເດືອນເມສາປີ ໑໙໗໘ ການປະຕິວັດປະຊາຊົນ ໄດ້ຫັນປ່ຽນປະຫວັດສາດອັບການິດສະຖານ ເປັນເວລາຫລາຍສັດຕະວັດ. ອັນບໍ່ເປັນທີ່ແປກປະຫລາດໃຈວ່າ ໃນສະພາບການໃຫ່ມແນວນີ້ ການພົວພັນກັນຖານມິດອັນເປັນປະເພນີລະຫວ່າງ ທັງສອງປະເທດຂອງພວກເຮົາ ຈຶ່ງໄດ້ຮັບລັກສະນະປະການໃຫ່ມ.

ໃນປະຈຸບັນນີ້ ອັນນັ້ນບໍ່ພຽງແຕ່ເປັນການພົວພັນກັນ ຖານເພື່ອນບ້ານໃກ້ຄຽງທັ່ນັ້ນ ຫາກຍັງມີລັກສະນະແຫ່ງມິດຕະພາບຢ່າງຈິງໃຈທີ່ຫມັ້ນຄົງທີ່ເຕັມໄປດ້ວຍນ້ຳໃຈເພື່ອນມິດ ແລະນ້ຳໃຈສາມັກຄີປະຕິວັດອີກດ້ວຍ.

ໃນມື້ນີ້ ພວກເຮົາໄດ້ລົງນາມເຊັນສົນທິສັນຍາ ວ່າດ້ວຍມິດຕະພາບ, ຄວາມເປັນເພື່ອນບ້ານໃກ້ຄຽງແລະການຮ່ວມມືກັນເຊິ່ງຢັ້ງຢືນເຖິງລັກສະນະປະການໃຫ່ມ ຂອງການພົວພັນ ກັນລະຫວ່າງ ສ.ສ.ສ.ຊ. ກັບ ສ.ປ.ອ.ເພີ່ນອາດເວົ້າໄດ້ວ່າເອກະສານນີ້ ເປັນເອກະສານ ທາງການເມືອງ ທີ່ ມີຄວາມຫມາຍສຳຄັນທີ່ຍິ່ງໃຫ່ຍ. ມັນບໍ່ພຽງແຕ່ຈະຮັບໃຊ້ ການປົບປຸງມິດຕະພາບໂຊວຽດ-ອັບການິດສະຖານທັ່ນັ້ນ ຫາກຍັງ ຈະຮັບໃຊ້ຜົນປະໂຫຍດແຫ່ງສັນຕິພາບ ແລະຄວາມປອດໄພ ຂອງທະວີບອາຊີແລະໃນທົ່ວໂລກອີກດ້ວຍ.

ປະຊາຊົນໂຊວຽດເອົາໃຈໃສ່ ດ້ວຍຄວາມເຫັນດີເຫັນຊອບຕໍ່ບາດກ້າວທຳອິດຂອງການປະຕິວັດ ອັບການິດສະຖານ ທີ່ໄດ້ລົງມືປະຕິບັດການກໍ່ສ້າງເບື້ອງຕົ້ນ.ພວກເຮົາສາມັກຄີກັນຖານອ້າຍນ້ອງກັບພວກທ່ານ.

ຂໍອວຍພອນໃຫ້ພັກປະຊາທິປະໄຕປະຊາຊົນ ອັບການິດສະຖານ ແລະປວງປະຊາຊົນຈົ່ງຮັບຜົນສຳເລັດ ໃນການປະຕິບັດເປົ້າໝາຍຂອງການປະຕິວັດເດືອນເມສາ.

ສ.ສ.ສ.ຊ. ເຄົາລົບທິດທາງ ທາງສາກົນຂອງອັບການິດສະຖານ, ນະໂຍບາຍແຫ່ງສັນຕິພາບ, ການບໍ່ຮ່ວມກຸ່ມ,ການຂະຫຍາຍສາຍສຳພັນກັນທີ່ມີສິດເທົ່າທຽມກັນ ແລະ ກໍ່ໃຫ້ເກີດຜົນຕໍ່ກັນແລະກັນກັບບັນດາປະເທດ,ການແກ້ໄຂກໍລະນີ ພິພາດດ້ວຍສັນຕິວິທີ.

ເພື່ອນມິດອັບການິດສະຖານ ຮູ້ຈັກຖືງການອອກແຮງຢ່າງຫລາຍຂອງ ສ.ສ.ສ.ຊ. ໃນການປັບປຸງ ສັນຕິພາບ ແລະຄວາມປອດໄພທາງສາກົນ. ພວກເຮົາຄິດວ່າການຂັດຂວາງບໍ່-ໃຫ້ເກີດສົງຄາມໂລກຄັ້ງໃໝ່ທີ່ອາດຈະກໍ່ໃຫ້ເກີດຄວາມ ເສຍຫາຍທີ່ຮ້າຍແຮງທີ່ສຸດແກ່ມວນມະນຸດໄດ້ນັ້ນມັນເປັນບັນຫາທີ່ສຳຄັນທີ່ສຸດຂອງຍຸກສະໄໝນີ້.

ດ້ວຍເຫດນັ້ນ ສ.ສ.ສ.ຊ, ບັນດາປະເທດ ແຫ່ງ ຄວາມເປັນເພື່ອນມິດສັງຄົມນິຍົມຕໍ່ສູ້ເພື່ອຈຳກັດ ແລະສະກັດກັ້ນການແຂ່ງຂັນສ້າງອາວຸດ, ເພື່ອການກ້າວຂຶ້ນສູ່ການປົດອາວຸດ.

ພວກເຮົາຄິດວ່າ ເງິນຮູບ, ໂດນລາ, ມາກ,ຝະລັ່ງຕ້ອງນຳມາໃຊ້ເພື່ອເປົ້າໝາຍທີ່ສັນຕິ. ບັນຫານີ້ອາດຮັບການ ແກ້ໄຂໄດ້ ກໍ່ຕໍ່ເມື່ອມີຂໍ້ຕົກລົງກັນລະຫວ່າງຝ່າຍທັງຫລາຍ.

ທ່າທີແນວນີ້ຂອງ ສ.ສ.ສ.ຊ. ແລະບັນດາປະເທດ ອ້າຍນ້ອງໄດ້ຮັບການສະແດງຕົວອອກໃນບັນດາມະຕິ ຂອງກອງປະ

ຊຸມທີ່ມີດສະກູ ຂອງຄະນະກຳມະການປຶກສາການເມືອງ ຂອງ ອົງການສົນທິສັນຍາວໍຊໍໃນມໍ່ໆມານີ້.

ແນ່ນອນວ່າ ຖ້າບັນດາປະເທດສັງຄົມນິຍົມ ໄດ້ກ້າວເຂົ້າສູ່ ເສັ້ນທາງແຫ່ງການປົດອາວຸດເປັນຝ່າຍດຽວແລ້ວ ພວກຈັກກະ ພັດນິຍົມ ກໍຈະໄດ້ມີໂອກາດທີ່ຈະບັນລຸຄວາມມີກຳລັງແຮງ ສູງ ກ່ວາໝູ່ ເຊິ່ງຈະກໍ່ໃຫ້ເກີດຄວາມເສຍຫາຍແກ່ພາລະກິດສັນຕິ ພາບ.

ຂ້າພະເຈົ້າຢາກກ່າວເນັ້ນວ່າ ພວກເຮົາກຽມພ້ອມທີ່ຈະປະ ຕິບັດມາດຕະການອັນເດັດຂາດ ທີ່ຈະນຳໄປສູ່ການປົດອາວຸດ. ແຕ່ວ່າໃນທຸກໄລຍະອັນຂອງການຕໍ່ສູ້ ເພື່ອເປົ້າໝາຍນີ້ ເພິ່ນ ຕ້ອງຮັກສາຫລັກການແຫ່ງການຮັບປະກັນຄວາມປອດໄພ ຢ່າງ ສະໝ່ຳສະເໝີ. ໃນເມື່ອພວກຈັກກະພັດ ເພີ່ມທະວີ ຄວາມ ເຂັ້ມແຂງທາງການທະຫານ ໂດຍອ້າງເຫດຜົນ ອັນປອມແປງ ຫລາຍປະການນັ້ນ ພວກເຮົາຈະບໍ່ໄດ້ລົດຜ່ອນຄວາມເຂັ້ມແຂງ ທາງການປ້ອງກັນຕົວຂອງຕົນລົງຢ່າງເດັດຂາດ. ຖ້າບໍ່ດັ່ງນັ້ນ ມັນອາດຈະກໍ່ໃຫ້ເກີດຄວາມເສຍຫາຍອັນໃຫຍ່ຫລວງແກ່ພາລະ ກິດແຫ່ງສັງຄົມນິຍົມ, ເສລີພາບແລະເອກະລາດ ຂອງບັນດາ ປະຊາຊາດ.

ສ.ສ.ສ.ຊ. ສະໜັບສະໜູນການເສີມຂະຫຍາຍ ການ ຜ່ອນຄາຍຄວາມຕຶງຄຽດທາງສາກົນ, ສະໜັບສະໜູນ ການ ເຮັດໃຫ້ການຜ່ອນຄາຍນັ້ນ ແຜ່ຂະຫຍາຍໄປໃນທະວີບອາຊີກໍ່ມີ ພົນລະເມືອງຫລາຍກ່ວາໝູ່ໃນໂລກ. ພວກເຮົາເຊື່ອໝັ້ນວ່າ

ສາທາລະນະລັດປະຊາທິປະໄຕ ອັບການິດສະຖານ ຈະໄດ້ປະກອບສ່ວນອັນສົມຄວນເຂົ້າໃນການບັນລຸເປົ້າໝາຍດັ່ງກ່າວມາເທິງນັ້ນ.

ເພື່ອນມິດອັບການິດສະຖານທີ່ຮັກແພງ! ໃນລະຫວ່າງການພົບປະສົນທະນາກັນ ພວກເຮົາບໍ່ພຽງແຕ່ໄດ້ສ້າງການ ພົວພັນກັນຖານສະຫາຍອັນດີແບບສ່ວນຕົວທີ່ໜັ້ນໜາກ(ໂດຍຜ່ານຄວາມເຂົ້າໃຈກັນຢ່າງຈິງໃຈແລະເລິກເຊິ່ງ)ຍັງໄດ້ປັບປຸງທ່າທີເປັນເອກະພາບກັນທີ່ມີຕໍ່ບັນຫາສາກົນຕ່າງໆບັນຫາຕ່າງໆທີ່ກ່ຽວກັບສາຍສຳພັນກັນລະຫວ່າງ ສ.ສ.ສ.ຊ. ກັບ ສ.ປ.ອ., ລະຫວ່າງພັກແລະປະຊາຊົນຂອງທັງສອງປະເທດຂອງພວກເຮົາ.

ທັງໝົດເຫລົ່ານັ້ນ ອຳນວຍໂອກາດທີ່ຈະເວົ້າໄດ້ວ່າ ການຢ້ຽມຢາມຂອງທ່ານ, ສະຫາຍ ຕາລາກີ,ຈະໄດ້ກາຍເປັນອັນໄລຍະທີ່ສຳຄັນໃນການເສີມຂະຫຍາຍສາຍສຳພັນກັນຖານ ມິດແລະການຮ່ວມມືກັນຖານເພື່ອນບ້ານໃກ້ຄຽງລະຫວ່າງ ສ.ສ.ສ.ຊ. ກັບອັບການິດສະຖານ .

ຂໍຍົກຈອກດື່ມເພື່ອການປັບປຸງມິດຕະພາບລະຫວ່າງປະເທດແລະ ປະຊາຊົນທັງສອງຂອງພວກເຮົາ !

ສຸຂະພາບຂອງສະຫາຍ ຕາລາກີ !

ສຸຂະພາບຂອງບັນດາແຂກອັບການິດສະຖານຂອງພວກເຮົາ!

(ການຕົບມືຢ່າງຍືດຍາວ).

ເຫລັ້ມທີ ກ,

ໜ້າ ໕໔໙-໕໕໐

ຄຳປາໄສຢູ່ວັງກະແລມແລັງໃນກອງປະຊຸມ
ຂອງຄະນະບໍລິຫານງານ ແຫ່ງສະພາໂຊວຽດ
ສູງສຸດແຫ່ງສ.ສ.ສ.ຊ.
ວັນທີ ໑໙ ເດືອນທັນວາ ປີ ໑໙໗໘
ກ່ຽວກັບການສັດຕະຍາບັນສົນທິສັນຍາ ວ່າດ້ວຍມິດຕະພາບ
ແລະການຮ່ວມມືກັນລະຫວ່າງສ.ສ.ສ.ຊ.ກັບ
ສາທາລະນະລັດສັງຄົມນິຍົມຫວຽດນາມ

ໃນການສະຫລຸບຜົນຂອງການພິຈາລະນາຄັ້ງນີ້ ຂ້າພະເຈົ້າຢາກກ່າວເນັ້ນວ່າ ກ່ອນອື່ນຫມົດ ພວກເຮົາໄດ້ພິຈາລະນາເອກະສານທີ່ມີຄວາມຫມາຍທາງການເມືອງ. ສົນທິສັນຍາວ່າດ້ວຍມິດຕະພາບແລະການຮ່ວມມືກັນລະຫວ່າງ ສ.ສ.ສ.ຊ.ກັບສາທາລະນະລັດສັງຄົມນິຍົມຫວຽດນາມ ມີຮາກຖານອັນເລິກເຊິ່ງແລະຫນັ້ນຄົງ. ສົນທິສັນຍາດັ່ງກ່າວສະແດງໃຫ້ເຫັນເຖິງ ບົດຮຽນຂອງການຮ່ວມມືກັນທີ່ເກີດຂຶ້ນໃນວັນເວລາ ທີ່ຫຍຸ້ງຍາກຮ້າຍແຮງ. ໃນໄລຍະເວລາແຫ່ງການທົດສອບທີ່ຫນັກຫນ່ວງ, ໃນໄລຍະເວລາທີ່ຫວຽດນາມໄດ້ດຳເນີນການຕໍ່ສູ້ຢ່າງກ້າຫານເພື່ອເສລີພາບນັ້ນ ສ.ສ.ສ.ຊ. ຍາມໃດກໍໄດ້ຢູ່ຄຽງຂ້າງກັບຫວຽດນາມ. ໃນການຕໍ່ສູ້ອັນດຸເດືອດຄັ້ງນັ້ນ ພວກເຮົາ ໄດ້ຮ່ວມມືກັນ. ໃນປະຈຸບັນນີ້ ພວກເຮົາ ກໍພວມຮ່ວມມືກັນ ເຊັ່ນດຽວກັນ.

ດ້ວຍເຫດນັ້ນ ສົນທິສັນຍາດັ່ງກ່າວ ສະແດງໃຫ້ເຫັນ ເຖິງເນື້ອໃນຂອງສາຍສຳພັນກັນລະຫວ່າງພວກເຮົາ ໃນເວລາປະ

ຈຸບັນນີ້ເຊັ່ນດຽວກັນ ເຊິ່ງເປັນສາຍສຳພັນກັນລະຫວ່າງ ອ້າຍນ້ອງທາງຈິນຊັ້ນຢ່າງບໍລິສຸດໃຈ ແລະທາງດ້ານການຕໍ່ສູ້ ຮ່ວມກັນເພື່ອຊູດົມຄະຕິມາກ-ເລນິນ. ໃນປະຈຸບັນນີ້ ພວກເຮົາໄດ້ສ້າງສາຍພົວພັນກັນທາງດ້ານການເມືອງ, ເສດຖະກິດ,ແນວຄິດແລະດ້ານອື່ນໆ ຢ່າງເອົາຈິງເອົາຈັງແລ້ວ.

ສິ່ງທີ່ສຳຄັນທີ່ສຸດຂອງການຮ່ວມມືກັນໂຊວຽດ - ຫວຽດນາມນັ້ນ ມັນບໍ່ແມ່ນການຊອກຫາຜົນປະໂຫຍດສ່ວນຕົວທາງດ້ານວັດຖຸ (ເຖິງວ່າພວກເຮົາໄດ້ເອົາໃຈໃສ່ຕໍ່ຜົນປະໂຫຍດທາງດ້ານເສດຖະກິດຂອງກັນແລະກັນຫລາຍພໍສົມຄວນກໍຕາມ) ແຕ່ ມັນນອນຢູ່ບ່ອນວ່າ ພວກເຮົາເປັນນັກສາກົນນິຍົມ. ພວກເຮົາ ບໍ່ພຽງແຕ່ຮູ້ສຶກມີຄວາມປິຕິຍິນດີ ຕໍ່ຜົນສຳເລັດ ຂອງຫວຽດນາມອ້າຍນ້ອງ, ພຸກປະເທດສັງຄົມນິຍົມທັ້ງນັ້ນ ແຕ່ພວກເຮົາ ຫາກຍັງຖືວ່າມັນເປັນຜົນສຳເລັດສັງລວມແຫ່ງສັນຕິພາບແລະຄວາມກ້າວຫນ້າທາງສັງຄົມອີກດ້ວຍ.

ສົນທິສັນຍາດັ່ງກ່າວ ຍັງມີລັກສະນະພິເສດປະການຫນຶ່ງອີກຄືສົນທິສັນຍາດັ່ງກ່າວມຸ່ງຫນ້າໄປສູ່ອະນາຄົດ; ສົນທິສັນຍາດັ່ງກ່າວໄດ້ລະບຸໄວ້ເຖິງຄວາມຕັ້ງໃຈຂອງ ພ.ກ.ສ.ຊ. ແລະ ພ.ກ.ວ., ທັງສອງປະເທດຂອງພວກເຮົາ ທີ່ຈະເສີມ ຂະຫຍາຍການຮ່ວມມືກັນ, ປັບປຸງມິດຕະພາບ ໂຊວຽດ- ຫວຽດນາມໃຫ້ຫນັ້ນຄົງເປັນຫລາຍສັດຕະວັດ.

ສົນທິສັນຍາດັ່ງກ່າວ ກໍມີຄວາມຫມາຍສຳຄັນອັນໃຫ່ຍຫລວງທາງດ້ານສາກົນອີກດ້ວຍ. ສັນຕິພາບ, ຄວາມສະຫງົບສຸກ ,

ການພົ້ນຈາກການແຊກແຊງຕ່າງປະເທດ ບໍ່ວ່າຢູ່ໃນຮູບ ການໃດ, ການພົວພັນກັນຖານເພື່ອນບ້ານໃກ້ຄຽງກັນ ທັງ ໝົດເຫຼົ່ານັ້ນ ເປັນສິ່ງທີ່ໜ້າຕ້ອງການແກ່ອາຊີອາຄະເນ, ທະວີບອາຊີແລະບັນດາປະເທດໃນທົ່ວໂລກ. ສົນທິສັນຍາດັ່ງກ່າວເປັນສິ່ງທີ່ຮັບໃຊ້ການປະຕິບັດເປົ້າໝາຍເຫຼົ່ານັ້ນ.

ຄະນະລັດຖະມົນຕີ ສ.ສ.ສ.ຊ. ໄດ້ສະເໜີໃຫ້ມີສັດຕະຍາບັນສົນທິສັນຍາໂຊວຽດ-ຫວຽດນາມ. ຄະນະກຳມະການຮັບຜິດຊອບການຕ່າງປະເທດຂອງສະພາສະຫະພາບ ແລະສະພາຊົນຊາດແຫ່ງສະພາໂຊວຽດສູງສຸດ ສ.ສ.ສ.ຊ. ເຫັນດີເຫັນຊອບນຳຂໍ້ສະເໜີດັ່ງກ່າວ. ບັນດາສະຫາຍທີ່ໄດ້ສະເໜີ ຄຳເຫັນຂອງຕົນໃນມື້ນີ້ ຕ່າງກໍໄດ້ເຫັນດີນຳ.

ຂ້າພະເຈົ້າສະເໜີໃຫ້ຮັບຮອງຂໍ້ດຳລັດສັດຕະຍາບັນ ສົນທິສັນຍາວ່າດ້ວຍມິດຕະພາບ ແລະການຮ່ວມມືກັນລະຫວ່າງ ສ.ສ.ສ.ຊ. ກັບສາທາລະນະລັດສັງຄົມນິຍົມຫວຽດນາມທີ່ໄດ້ຮັບການລົງນາມກັນເມື່ອວັນທີ ໓ ເດືອນພະຈິກ ປີ ໑໙໗໘.

ກ່ຽວກັບຮ່າງຂໍ້ດຳລັດວ່າດ້ວຍການຈັດວາງ ແລະການດຳເນີນການເລືອກຕັ້ງ ສະພາໂຊວຽດສູງສຸດຊຸດທີ ໑໐ ສ.ສ.ສ.ຊ.

ບັນດາສະຫາຍ! ພວກເຮົາພວມກ້າວເຂົ້າສູ່ ບັ້ນຮົບ ທາງການເມືອງທີ່ມີຄວາມໝາຍສຳຄັນ. ມັນຕ້ອງເຮັດໃຫ້ ບັ້ນຮົບນີ້ໄດ້ດຳເນີນໄປຢ່າງມີລັກສະນະເຂົ້າໃຈວຽກງານ ແຕ່ກົກເຖິງ

ປາຍ ໂດຍນຳເອົາການປະຕິບັດບັນດາເປົ້າໝາຍ ຂອງກອງປະຊຸມຄັ້ງທີ XXV ແລະກອງປະຊຸມສະໄໝສາມັນ ຂອງ ສູນກາງພັກມາເປັນພື້ນ.

ລັດຖະທຳມະນູນສະບັບໃໝ່ ໄດ້ເຮັດໃຫ້ເນື້ອໃນຂອງວຽກງານຂອງບັນດາອົງການອຳນາດການປົກຄອງ ນັບລວມທັງສະພາໂຊວຽດສູງສຸດ ສ.ສ.ສ.ຊ. ມີຄວາມຮັ່ງມີຫລາຍ ກ່ວາເກົ່າ. ອັນນັ້ນກໍເຮັດໃຫ້ຜູ້ຄົນ ເຊິ່ງແມ່ນປະຊາຊົນເປັນຜູ້ ເລືອກເປັນຜູ້ແທນສະພາໂຊວຽດ ໃຫ້ມີຄວາມຮັບຜິດຊອບ ສູງກ່ວາເກົ່າ.

ມີຄວາມຮັບຜິດຊອບສູງກ່ວາເກົ່າ ກໍຍ້ອນວ່າ ໃນປະຈຸບັນນີ້ ເສດຖະກິດຂອງພວກເຮົາມີຂອບເຂດທີ່ກວ້າງຂວາງ ທີ່ສຸດ,ມີລະບົບການສຶກສາຂອງປະຊາຊົນ,ສາທາລະນະສຸກ,ປະຊາສົງເຄາະທີ່ຈະເລີນກ້າວໜ້າ. ພວກເຮົາຕ້ອງໃຊ້ຊັບສົມບັດ ໃຫ້ຖືກຕ້ອງຢ່າງຖີ່ຖ້ວນ, ຕ້ອງເຫັນຂໍ້ຂາດຕົກບົກພ່ອງ ຢ່າງດີກ່ວາເກົ່າ. ໃນດ້ານນີ້ ສຽງຜູ້ແທນປະຊາຊົນ ຕ້ອງເປັນສຽງ ທີ່ມີບົດບາດອັນສຳຄັນທີ່ສຸດ.

ມີຄວາມຮັບຜິດຊອບສູງກ່ວາເກົ່າ,ກໍຍ້ອນວ່າພັກໄດ້ຕັ້ງເປົ້າໝາຍທີ່ຈະດັດແປງປັບປຸງການຄຸ້ມຄອງໃນທຸກຂົງເຂດ. ພວກເຮົາຕໍ່ສູ້ເພື່ອເຮັດໃຫ້ບັນດາພະນັກງານອອກແຮງງານຢ່າງໄດ້ຜົນດີ, ເພື່ອປະຕິບັດແຜນການຂອງພວກເຮົາ, ເພີ່ມທະວີຄຸນນະພາບ, ປະສິດທິພາບຂອງການຜະລິດຜົນ. ດ້ວຍເຫດ ນັ້ນວຽກງານກວດກາຂອງບັນດາຜູ້ແທນ, ປວງປະຊາຊົນຈຶ່ງຕ້ອງ

ເພີ່ມປະສິດທິພາບຂອງຕົນໃຫ້ສູງກ່ວາເກົ່າ.

ສຸດທ້າຍ, ຄວາມຮັບຜິດຊອບຂອງສະພາໂຊວຽດ, ຜູ້ແທນປະຊາຊົນສູງກ່ວາເກົ່າ ກໍຍ້ອນວ່າ ການປະຕິບັດບັນດາ ແຜນການຂອງພວກເຮົາ ມັນຮຽກຮ້ອງໃຫ້ມີການຈັດຕັ້ງລະດັບສູງ, ການຮັກສາລະບຽບວິໄນ ແລະ ການເພີ່ມທະວີ ຄວາມເອົາຈິງເອົາຈັງໃນການອອກແຮງງານ. ລັກສະນະເຫລົ່ານີ້ແມ່ນເກີດຂຶ້ນໂດຍຕົນເອງ. ມັນຕ້ອງປຸກລະດົມມະຫາຊົນ. ໃນດ້ານນີ້ ບັນດາຜູ້ແທນປະຊາຊົນ ກໍມີບົດບາດທີ່ສຳຄັນທີ່ສຸດເຊັ່ນດຽວກັນ.

ກົດຫມາຍສະບັບໃຫ່ມກ່ຽວກັບການເລືອກຕັ້ງ ໄດ້ຮັບປະກັນການພິຈາລະນາຢ່າງເສລີແລະຖີ່ຖ້ວນ ລັກສະນະນິດໄສຂອງຜູ້ສະມັກຮັບເລືອກຕັ້ງທຸກຄົນ ໂດຍເພີ່ມເວລາພິຈາລະນາກັນ . ພວກເຮົາຕ້ອງຫມູນໃຊ້ລະບຽບການດັ່ງກ່າວ ຢ່າງດີທີ່ສຸດ. ອັນນັ້ນຈະຊ່ວຍໃຫ້ການຄັດເລືອກຜູ້ຄົນທີ່ສົມກຽດ,ມີຊື່ສຽງໃຫ້ເປັນຜູ້ສະມັກຮັບເລືອກຕັ້ງໃນສະພາໂຊວຽດ.

ຂ້າພະເຈົ້າເຊື່ອຫມັ້ນວ່າ ອົງການພັກ, ມະຫາຊົນ ຈະໄດ້ເຮັດທຸກສິ່ງທຸກຢ່າງ ເພື່ອສະເຫນີແລະເລືອກຕັ້ງຕົວແທນ ທີ່ດີເດັ່ນຂອງປະຊາຊົນໃຫ້ເຂົ້າເປັນຜູ້ແທນສະພາໂຊວຽດສູງສຸດ, ເພື່ອເຮັດໃຫ້ສະພາໂຊວຽດສູງສຸດແຫ່ງ ສ.ສ.ສ.ຊ. ສະສົມບົດຮຽນອັນດີເລີດ, ລະດົມກຳລັງແຮງອັນດີເດັ່ນ ຂອງສັງຄົມຂອງພວກເຮົາທີ່ພວມກໍ່ສ້າງອະນາຄົດກອມມູນິດຂອງຕົນ.

ເຫລັ້ມທີ ໗, ຫນ້າ ໕໕໗-໕໕໘

ຄຳປາໄສຢູ່ວັງກະແລມແລັງໃນພິທີງານຮັບລາງວັນ
ສູງສຸດແຫ່ງປິຕຸພູມຄືຫລຽນໄຊເລນິນແລະ
"ດາວຄຳ"ດວງທີ ໓ ແຫ່ງວິລະຊົນສ.ສ.ສ.ຊ.
ວັນທີ ໑໙ ເດືອນທັນວາທີ ໑໙໗໖

ບັນດາສະຫາຍແລະເພື່ອນມິດທີ່ຮັກແພງ !

ດ້ວຍຄວາມຂອບໃຈຢ່າງເລິກເຊິ່ງແລະດ້ວຍຄວາມຕື່ນເຕັ້ນໃຈ ຂ້າພະເຈົ້າໄດ້ຮັບຮູ້ຄຳຕັດສິນ ຂອງອົງການ ສູນກາງພັກແລະລັດຂອງພວກເຮົາ ກ່ຽວກັບການມອບ ຫລຽນໄຊ ເລນິນແລະ "ດາວຄຳ" ດວງທີສາມແຫ່ງວິລະຊົນ ສ.ສ.ສ.ຊ.ແກ່ຂ້າພະເຈົ້າ ເນື່ອງໃນວັນເກີດຂອງຂ້າພະເຈົ້າ.ຂ້າພະເຈົ້າຮູ້ສຶກຕື່ນເຕັ້ນໃຈຕໍ່ການທີ່ເພິ່ນໄດ້ຕີລາຄາສູງຕໍ່ວຽກການຂອງຂ້າພະເຈົ້າເພື່ອເປັນຜົນດີແກ່ປິຕຸພູມ, ປວງປະຊາຊົນໂຊວຽດ ແລະຕໍ່ການທີ່ທ່ານມິກກະອິນ ອັນດະເລເຢວິດໄດ້ກ່າວຄຳເວົ້າທີ່ອົບອຸ່ນ ເນື່ອງໃນໂອກາດນີ້.

ໃນມໍ່ໆມານີ້ ຂ້າພະເຈົ້າໄດ້ສັງເກດວ່າ ຂ້າພະເຈົ້າ ໄດ້ເຮັດວຽກງານຂັ້ນນຳທາງພັກແລະໂຊວຽດເປັນເວລາ ໔໐ ປີແລ້ວ, ຍ້ອນເຫດນັ້ນ ຂ້າພະເຈົ້າຈຶ່ງຄິດວ່າໄດ້ມີພື້ນຖານຫາຍພໍສົມຄວນສຳລັບການສະຫລຸບຜົນ ແລະການຕີລາຄາ ຕໍ່ ເສັ້ນທາງທີ່ຂ້າພະເຈົ້າໄດ້ຜ່ານໄປແລ້ວ.

ເມື່ອມໍ່ໆມານີ້, ໃນການສົນທະນາກັບຊາວຕ່າງປະເທດຄົນໜຶ່ງ ຂ້າພະເຈົ້າໄດ້ເວົ້າຂຶ້ນຢ່າງບໍລິສຸດໃຈວ່າ ໄດ້ມີສອງສິ່ງທີ່ຍາມໃດກໍຕິດແໜ້ນກັບຫົວໃຈຂອງຂ້າພະເຈົ້າ ແລະເປັນສິ່ງທີ່ຂ້າພະເຈົ້າຍາມໃດກໍເອົາໃຈໃສ່ເປັນພິເສດ. ອັນນັ້ນ ກໍຄືບັນຫາເຂົ້າແລະບັນຫາຄວາມປອດໄພຂອງປະເທດເຮົາ.

ໃນຊີວິດຂອງຕົນ ຂ້າພະເຈົ້າໄດ້ເຫັນໄລຍະເວລາ ທີ່ປະເທດເຮົາໄດ້ຖືກພັງທະລາຍ, ປະຊາຊົນເປັນລ້ານໆຄົນດຳລົງຊີວິດຢູ່ໃນຄວາມທຸກຍາກລຳບາກ, ການອຶດເຂົ້າ, ຄວາມໜາວ. ພ້ອມກັບກອງທະຫານອັນດີເດັ່ນຂອງພວກເຮົາ ຂ້າພະເຈົ້າ ກໍໄດ້ຜ່ານຂ້າມແປວໄພແຫ່ງມະຫາສົງຄາມປ້ອງກັນປິຕຸພູມ, ໄດ້ເຫັນຄວາມຕາຍແລະວັນນະໂລກ ດ້ວຍຕາ ຂອງຕົນເອງ, ໄດ້ເຫັນການເຜົາຜານພັງທະລາຍຂອງດິນແດນສັງຄົມນິຍົມທີ່ສັນຕິຂອງພວກເຮົາເນື່ອງຈາກການຮຸກຮານ.

ໂດຍໄດ້ຜ່ານການທົດສອບເຫຼົ່ານັ້ນ ຂ້າພະເຈົ້າໄດ້ໃຫ້ຄຳໝັ້ນສັນຍາວ່າ ຂ້າພະເຈົ້າຕ້ອງເຮັດທຸກສິ່ງ ທຸກຢ່າງ ຕາມຄວາມສາມາດເພື່ອຂັດຂວາງບໍ່ໃຫ້ເຫດການເຫຼົ່ານັ້ນເກີດຂຶ້ນໄດ້ອີກຄັ້ງໃໝ່, ເພື່ອໄຊຊະນະແຫ່ງນະໂຍບາຍເລນິນ ຂອງພັກເຮົາເຊິ່ງເປັນນະໂຍບາຍ ແຫ່ງການປັບປຸງ ສະວັດດີພາບຂອງປະຊາຊົນ, ການປ້ອງກັນສັນຕິພາບແລະຄວາມປອດໄພ, ການກໍ່ສ້າງອະນາຄົດກອມມູນິດທີ່ສົມບູນພູນສຸກຂອງພວກເຮົາ.

ໃນຂະນະທີ່ຂ້າພະເຈົ້າໄດ້ຮັບຕຳແໜ່ງສູງຈາກພັກແລະປະຊາຊົນ ຂ້າພະເຈົ້າໄດ້ພະຍາຍາມປະຕິບັດຄຳໝັ້ນສັນຍາຂອງ

ຂ້າພະເຈົ້າ.

ອັນນັ້ນເປັນເປົ້າໝາຍສູງສຸດຂອງຂ້າພະເຈົ້າ.

ຂ້າພະເຈົ້າ ໃນມື້ນີ້ ກໍຄືໃນມື້ອື່ນ ຈະເຮັດທຸກສິ່ງ ທຸກຢ່າງ ຕາມຄວາມສາມາດ ເພື່ອເຮັດໃຫ້ປະຊາຊົນໂຊວຽດດຳລົງ ຊີວິດຢ່າງສັນຕິສຸກ, ເພື່ອປັບປຸງຄວາມເຂັ້ມແຂງດ້ານການປ້ອງກັນຕົວແຫ່ງ ສ.ສ.ສ.ຊ. ທີ່ແນໃສ່ຂັດຂວາງ ບໍ່ໃຫ້ສົງຄາມຄັ້ງໃຫ່ມເກີດຂຶ້ນ, ເພື່ອຜົນສຳເລັດໃຫ່ມຂອງນະໂຍບາຍຕ່າງປະເທດແຫ່ງ ສ.ສ.ສ.ຊ. ຊຶ່ງເປັນນະໂຍບາຍແຫ່ງສັນຕິພາບ, ຄວາມກ້າວໜ້າ, ການຮ່ວມມືກັນຂອງບັນດາປະເທດ, ມິດຕະພາບລະຫວ່າງບັນດາປະຊາຊາດ.

ອັນນັ້ນເປັນຄຳຕອບຂອງຂ້າພະເຈົ້າ ຕໍ່ການມອບລາງ ວັນແກ່ຂ້າພະເຈົ້າ.

ຂອບໃຈຫລາຍໆອີກເທື່ອໜຶ່ງ.(ຕົບມືຢ່າງຍືດຍາວ).

ເຫລັ້ມທີ ໗,

ໜ້າ ໕໖໕-໕໖໖

24/VII
ຫ້າມຈຳໜ່າຍ

ຕອບຄຳສຳພາດຂອງວາລະສານອາເມລິກາ "ໄທມ໌"

ວັນທີ ໑໙ ເດືອນມັງກອນປີ ໑໙໗໙

(ຈັດພິມໃນໜັງສືພິມ "ປະລາວະດາ")

ຖາມ: ໃນຂະນະທີ່ໄດ້ມີບາດກ້າວໜ້າ ໃນການເຈລະຈາ ກ່ຽວກັບການຈຳກັດອາວຸດຍຸດທະສາດ, ໄດ້ມີຄວາມອາດເປັນໄປໄດ້ຂອງການພົບປະກັນຂັ້ນສູດຍອດນັ້ນ ທ່ານຕີລາຄາ ແນວໃດຕໍ່ສາຍສຳພັນກັນໂຊວຽດ-ອາເມລິກາ ?

ຕອບ: ກ່ອນອື່ນໝົດ ຂ້າພະເຈົ້າຂໍສົ່ງຄຳອວຍພອນແກ່ປະຊາຊົນອາເມລິກາ ເນື່ອງໃນໂອກາດບຸນປີໃໝ່ທີ່ຜ່ານໄປນີ້ . ປີນີ້ແລະປີຕໍ່ໄປ ຈະເປັນປີທີ່ດີແລະສັນຕິຫລືບໍ່ ມັນກໍແລ້ວແຕ່ທັງສອງປະເທດຂອງພວກເຮົາສ່ວນຫລາຍ. ຂ້າພະເຈົ້າຢາກກ່າວເນັ້ນວ່າ ສ.ສ.ສ.ຊ. ຍາມໃດກໍປະຕິບັດການ ຕາມຈິດໃຈແຫ່ງການຮ່ວມມືກັນ ແລະຄວາມເປັນເພື່ອນຮ່ວມວຽກຢ່າງບໍລິສຸດໃຈ.

ເພິ່ນອາດເວົ້າໄດ້ວ່າ ພວກເຮົາໄດ້ກ້າວເຂົ້າສູ່ ປີໃໝ່ ນີ້ ໂດຍໄດ້ມີພື້ນດີໃນເບື້ອງຕົ້ນແລ້ວ. ວຽກງານກ່ຽວກັບຂໍ້ ຕົກລົງກັນວ່າດ້ວຍການຈຳກັດອາວຸດຍຸດທະສາດປະເພດບຸກຮຸກໃກ້ຈະສຳເລັດລົງແລ້ວ ເຖິງແມ່ນວ່າມັນຕ້ອງການໄລຍະເວລາພໍສົມ

ຄວນເພື່ອປະສານສົມທົບທ່າທີຢ່າງຖືກຕ້ອງກໍຕາມ. ພວກເຮົາຄິດວ່າຫລັກການຮັບປະກັນຄວາມສະເຫມີພາບກັນ ແລະຮັບປະກັນຄວາມປອດໄພ ເຊິ່ງທັງ ສ.ສ.ສ.ຊ. ແລະ ອາເມລິກາຮັບຮອງວ່າເປັນຫລັກການພື້ນຖານ ຈະຊ່ວຍໃຫ້ພວກເຮົາ ແກ້ໄຂບັນຫາຢ່າງຖືກຕ້ອງໄດ້. ດັ່ງນັ້ນ ຂ້າພະເຈົ້າ ພ້ອມກັບປະທານາທິບໍດີກາເຕີອາດຈະລົງນາມ ອໍ້ຕົກລົງກັນໄດ້ໃນມື້ນີ້. ເປົ້າຫມາຍເຊິ່ງຊີວິດຂອງໄດ້ຍົກຂຶ້ນນັ້ນ ຄືການສະກັດກັ້ນການແຂ່ງຂັນສ້າງອາວຸດ, ການຮັບປະກັນຄວາມປອດໄພ ຂອງທັງສອງປະເທດ, ການລຶດຜ່ອນການປະເຊີນຫນ້າກັນ ທາງດ້ານການທະຫານໃນທົ່ວໂລກນັ້ນ ມັນບໍ່ແມ່ນວຽກງານອັນງ່າຍດາຍ.

ມັນເປັນຄວາມຈິງວ່າ ໃນໄລຍະເວລາ ໔-໖ ປີທີ່ຜ່ານມານີ້ ເພີ່ນບໍ່ມີຈຸດດີຫຍັງຈັກນ້ອຍ ພາຍໃນສາຍສຳພັນກັນໂຊວຽດອາເມລິກາ. ຂ້າພະເຈົ້າຢາກເວົ້າຢ່າງຈິງໃຈວ່າພວກເຮົາບໍ່ສາມາດເຂົ້າໃຈວໍຊິງຕັນ ໃນບາງຄັ້ງບາງຄາວ ເຊິ່ງ ພະຍາຍາມຊອກຫາຜົນປະໂຫຍດ ທີ່ເກີດມາຈາກ ຜົນເສຍຫາຍຂອງຜູ້ອື່ນ. ໃນໄລຍະເວລາ"ສົງຄາມເຢັນ"ນັກການເມືອງອາເມລິກາໄດ້ພະຍາຍາມໃຊ້ວິທີການແນວນີ້ ຫລາຍຄັ້ງແລ້ວ. ຢ່າງໃດກໍຕາມ ສະພາບການຕົວຈິງໄດ້ບັງຄັບໃຫ້ອາເມລິກາ ຕ້ອງຕົກລົງຮ່ວມມືກັນກັບ ສ.ສ.ສ.ຊ. ເປັນຕົ້ນແມ່ນໃນການ ຂັດຂວາງບໍ່ໃຫ້ສົງຄາມປະລະມານູເກີດຂຶ້ນ ແລະການແກ້ໄຂກໍລະນີພິພາດໃນພາກພື້ນຕ່າງໆຂອງໂລກ. ຄວາມຕັ້ງໃຈຂອງພວກເຮົາທັງສອງຝ່າຍ ໄດ້ລະບຸໄວ້ຢູ່ໃນເອກະສານຕ່າງໆ ເຊິ່ງ

ພວກເຮົາຝ່າຍໂຊວຽດຕີລາຄາສູງແລະຖືວ່າ ເປັນພື້ນຖານອັນດີແກ່ການຫັນໄປສູ່ສາຍສຳພັນກັນທີ່ດີລະຫວ່າງ ສ.ສ.ສ.ຊ. ແລະອາເມລິກາເປັນໄລຍະຍາວນານ ແລະຢ່າງໝັ້ນຄົງ.

ຖ້າຖືຝ່າຍອື່ນວ່າ ມັນລ້ວນແຕ່ເປັນ "ສັດຕູ"ນັ້ນ(ດັ່ງທີ່ເພິ່ນມັກເວົ້າໃນວໍຊິງຕັນ) ມັນກໍຈະພົບຄວາມຫຍຸ້ງຍາກ ໃນການເຮັດວຽກງານທີ່ແນໃສ່ໄປສູ່ການເສີມຂະຫຍາຍການຮ່ວມມືກັນ. ໃນກໍລະນີດັ່ງກ່າວ ການຕົກລົງກັນເປັນວຽກງານທີ່ສັບສົນ,ຊັກຊ້າ; ຍິ່ງໄປກ່ວານັ້ນ ສາຍສຳພັນກັນຢ່າງທົ່ວໆໄປກໍບໍ່ອາດສາມາດກ້າວໄປຂ້າງໜ້າ, ກົງກັນຂ້າມ ມັນຊໍ້າພັດກັບຄືນ ຫລັງເໝືອນກັບທີ່ພວກເຮົາໄດ້ເຫັນໃນໄລຍະເວລາ ໔ ປີ ທີ່ຜ່ານມານີ້. ການເຄົາລົບສິດອະທິປະໄຕແລະຜົນປະໂຫຍດຂອງກັນແລະກັນ ອາດຈະກໍ່ໃຫ້ເກີດຜົນປະໂຫຍດ ຕໍ່ກັນແລະກັນໄດ້ . ນອກຈາກນັ້ນ ທົ່ວໂລກກໍຈະໄດ້ຮັບຜົນປະໂຫຍດເຊັ່ນດຽວກັນ.

ບົດຮຽນໃນຕະຫລອດຊີວິດຂອງຂ້າພະເຈົ້າພິສູດໃຫ້ເຫັນວ່າ ຄວາມເປັນເພື່ອນບ້ານໃກ້ຄຽງ ບໍ່ວ່າ ມີລະບອບ ທາງການເມືອງແລະທ່າທີທັດສະນະແນວໃດກໍຕາມ ແຕ່ມັນກໍ່ເປັນ ທິດທາງທີ່ດີກ່ວາໝູ່ໃນສາຍສຳພັນກັນລະຫວ່າງ ບັນດາປະເທດ. ຂ້າພະເຈົ້າເຊື່ອໝັ້ນວ່າ ສາຍສຳພັນກັນໂຊວຽດ-ອາເມລິກາບໍ່ພຽງແຕ່ອາດເປັນປົກກະຕິໄດ້ທໍ່ນັ້ນ ຫາກຍັງອາດກໍເປັນດີຂຶ້ນໄດ້, ອັນນັ້ນບໍ່ແມ່ນຄວາມໃຝ່ຝັນ. ໃນເວລາແຕ່ກ່ອນເພິ່ນໄດ້ສ້າງພື້ນຖານສຳລັບການບັນລຸເປົ້າໝາຍນີ້ແລ້ວ;ໃນໄລຍະເວລາຕໍ່ມາ ມັນໄດ້ສ້າງອຸປະສັກອັນປອມແປງ ເຊິ່ງພວກເຮົາສາ

ມາດແລະຕ້ອງແກ້ໄຂ.

ຖາມ: ການທີ່ກອງທະຫານກອງໃຫຍ່ ຂອງບັນດາປະເທດສົນທິສັນຍາວໍຊໍ ໄດ້ໄປຕັ້ງຢູ່ໃກ້ກັບຊາຍແດນ ທາງທິດຕາເວັນຕົກຂອງປະເທດເຫຼົ່ານັ້ນ ພວມກໍ່ໃຫ້ເກີດຄວາມເປັນ ຫ່ວງເປັນໄຍຂອງຊາວອາເມລິກາຫລາຍຄົນ ນັບລວມທັງຜູ້ຄົນທີ່ສະໜັບສະໜູນການປັບປຸງສາຍສຳພັນກັນກັບ ສ.ສ.ສ.ຊ.ພວກເຂົາໝາຍເຖິງເລື່ອງນີ້ເອງ ໃນເມື່ອເວົ້າກ່ຽວກັບ "ໄພອັນຕະລາຍໂຊວຽດ". ທ່ານມີຄວາມຄິດເຫັນແນວໃດ ກ່ຽວ ກັບເລື່ອງນີ້ ແລະກ່ຽວກັບຂະບວນວິວັດແຫ່ງການລົດຜ່ອນ ຄວາມເຄັ່ງຕຶງໃນທະວີບຢູລົບ ?

ຕອບ: ເລື່ອງປອມແປງອັນທີ່ເອີ້ນວ່າ "ໄພອັນຕະລາຍໂຊວຽດ" ເປັນເລື່ອງທີ່ເກົ່າແກ່. ໃນເດືອນຕຸລາປີ ໑໙໑໘ພວກຣຸກຣານຕ່າງປະເທດ ໑໔ ປະເທດນັບລວມທັງອາເມລິກາໄດ້ບຸກໂຈມຕີລັດຊຽຍໂຊວຽດ ໂດຍມີຈຸດປະສົງ ທີ່ຈະດັບສູນການປະຕິວັດແລະຟື້ນຟູລະບອບເກົ່າ, ກໍ່ໄດ້ອ້າງເຫດຜົນແນວນີ້ . ເຊັມເບີກເລັນ, ນາຍົກລັດຖະມົນຕີອັງກິດ ກໍໄດ້ອ້າງເຫດຜົນນີ້ ໃນເມື່ອເຂົາເຮັດຂໍ້ຕົກລົງກັນກັບ ຮິດເລ ໃນມູນິກ ໂດຍຫວັງເຮັດໃຫ້ຮິດເລມຸ່ງໜ້າໄປສູ່ ສ.ສ.ສ.ຊ. ຢ່າງມີລັກສະນະຣຸກຣານ. ພວກນາຊີກໍໄດ້ອ້າງເຫດຜົນແນວນີ້ ເພື່ອປິດບັງການບຸກໂຈມຕີ ສ.ສ.ສ.ຊ.ພັກພວກທີ່ໄດ້ສ້າງກຸ່ມທະຫານມາໂຕທີ່ຕ້ານປະເທດໂຊວຽດທີ່ໄດ້ເສຍຜູ້ຄົນ໒໐ ລ້ານຄົນໃນການຕໍ່ສູ້ຕ້ານພວກຣຸກຣານນັ້ນພັກພວກເຫຼົ່ານັ້ນກໍໄດ້ອ້າງເຫດຜົນ-

ອັນປອມແປງແນວນີ້ເຊັ່ນດຽວກັນ. ເມື່ອວໍຊິງຕັນໄດ້ປະ ກາດ-ການປະຕິບັດນະໂຍບາຍ"ຢູ່ໃນແຄມແຫ່ງສົງຄາມ"ທີ່ຕ້ານ ສ.ສ.ສ.ຊ.ນັ້ນວໍຊິງຕັນກໍໄດ້ໃຊ້ເຫດຜົນອັນປອມແປງນີ້.

ໃນປະຈຸບັນນີ້, ໃນເມື່ອການລົດຜ່ອນຄວາມເຄັ່ງຕຶງ ໄດ້ຮັບຜົນພໍສົມຄວນໃນທະວີບຢູລົບ, ໃນເມື່ອກອງປະຊຸມທົ່ວຢູລົບໃນເຮັນຊິນກິ ໄດ້ຊີ້ໃຫ້ເຫັນເຖິງເສັ້ນທາງ ທີ່ຈະນຳໄປສູ່ການເສີມຂະຫຍາຍການຮ່ວມມືກັນຢ່າງສັນຕິ, ໃນເມື່ອມີການເຈລະຈາກັນໃນກຸງວຽນ ກ່ຽວກັບການລົດຜ່ອນການປະເຊີນໜ້າກັນທາງການທະຫານນັ້ນ ເຂົາຊ້ຳເລີ່ມປ່າວຮ້ອງເຖິງ"ໄພອັນຕະລາຍທາງທະຫານຂອງໂຊວຽດ" ຕໍ່ຢູລົບ ພາກຕາເວັນຕົກ ! ເບິ່ງແລ້ວເຫັນວ່າ ພັກພວກໃນຝ່າຍຕາເວັນຕົກ ບາງພັກບໍ່ມັກບໍ່ຢາກມີການລົດຜ່ອນຄວາມເຄັ່ງຕຶງທາງການເມືອງລົງ ເປັນຕົ້ນແມ່ນຄວາມຕັ້ງໃຈທີ່ຈະເພີ່ມການລົດຜ່ອນດັ່ງກ່າວດ້ວຍການລົດຜ່ອນຈຳນວນກຳລັງທະຫານຂອງທັງສອງຝ່າຍໃນຢູລົບພາກກາງ.

ຕັ້ງແຕ່ດົນນານແລ້ວ ໃນພາກພື້ນນີ້ມີກຳລັງທະຫານແລະອາວຸດຈຳນວນຫລາຍ ຂອງກຸ່ມທະຫານ-ການເມືອງທັງສອງກຸ່ມທີ່ປະເຊີນໜ້າກັນ. ກຳລັງຂອງທັງສອງຝ່າຍແຕກຕ່າງກັນໃນຮູບຮ່າງຂອງໃຜລາວ ແຕ່ວ່າມີບໍລິມາດປະມານທໍ່ກັນ. ການ ດຸ່ນດຽງກຳລັງທະຫານ ໄດ້ມີຢູ່ໃນຢູລົບເປັນຫລາຍສິບປີແລ້ວ.

ການຕັ້ງກອງທະຫານແລະກຳລັງອາວຸດເປັນໄພອັນຕະລາຍ. ຖ້າຈະລົດຜ່ອນບໍລິມາດຂອງທັງສອງຝ່າຍ ມັນຈະສາມາດສ້າງ

ສາຍສຳພັນກັນຢ່າງສັນຕິໄດ້ງ່າຍກ່ວາເກົ່າ ໂດຍບໍ່ລະ ເມີດການດຸ່ນດ່ຽງທີ່ມີຢູ່ແລ້ວ. ອັນນັ້ນເປັນເປົ້າຫມາຍ ຂອງ ພວກເຮົາໃນການເຈລະຈາກັນໃນກຸງວຽນ.

ຝ່າຍອື່ນຕອບວ່າ ບັນດາປະເທດພາຄີສົນທິສັນຍາວໍຊໍ ຕ້ອງລຶດຜ່ອນກຳລັງທະຫານໃຫ້ຫລາຍກ່ວາທີ່ກຸ່ມນາໂຕຈະລຶດຜ່ອນ. ຖ້າບໍ່ດັ່ງນັ້ນ ມັນຈະມີ "ໄພອັນຕະລາຍ ທາງທະຫານຂອງໂຊວຽດ"! ກຸ່ມນາໂຕໄດ້ເພີ່ມທະວີກຳລັງທະຫານຂອງຕົນ ໃນຢູລົບ, ບັນດາປະເທດພາຄີກຸ່ມນາໂຕ ໄດ້ເພີ່ມທະວີງົບປະມານທາງການທະຫານຂອງຕົນ ພ້ອມໆກັບປ່າວຮ້ອງເຖິງ "ໄພອັນຕະລາຍ" ດັ່ງກ່າວມາເທິງນັ້ນ !

ເປັນຫຍັງການດູນດ່ຽງກຳລັງ ທີ່ໄດ້ມີຢູ່ໃນ ຢູລົບ ໄດ້ກາຍເປັນ"ໄພອັນຕະລາຍ"? ອັນນັ້ນເປັນ"ໄພອັນຕະລາຍ ຂອງພວກເຮົາຕໍ່ຜູ້ໃດ ? ພວກເຮົາບໍ່ຕ້ອງການ ຍຶດຄອງ ດິນແດນຕ່າງປະເທດຈັກກິໂລແມັດ. ສ.ສ.ສ.ຊ.ໄດ້ສ້າງສາຍສຳພັນກັນອັນເປັນປົກກະຕິ ຫລືມີພົນດີຢ່າງສັນຕິ ກັບບັນດາປະເທດຢູລົບຕາເວັນຕົກເກືອບທັງຫມົດ. ສ.ສ.ສ.ຊ.ໄດ້ເປັນຜູ້ລິເລີ່ມຜູ້ຫນຶ່ງແລະຜູ້ເຂົ້າຮ່ວມການປະຕິບັດມາດຕະການທັງຫລາຍ ທີ່ແນໃສ່ປົບປຸງສັນຕິພາບແລະການຮ່ວມມືກັນຢ່າງສັນຕິໃນຢູລົບ.

ຖ້າເປັນແນວນີ້ ເປັນຫຍັງເຂົາຈຶ່ງຫລອກລວງ ປະຊາຊົນໂດຍອ້າງເຖິງ"ໄພອັນຕະລາຍທາງທະຫານຂອງໂຊວຽດ"?

ຂ້າພະເຈົ້າຢາກກ່າວເນັ້ນເຖິງເລື່ອງທີ່ຂ້າພະເຈົ້າໄດ້ເວົ້າຫລາຍຄັ້ງແລ້ວວ່າ ພວກເຮົາບໍ່ຕ້ອງການໃຫ້ມີຄວາມ ເຫນືອ

ກ່ວາທາງການທະຫານ ຕໍ່ຝ່າຍຕາເວັນຕົກ, ພວກເຮົາບໍ່ຕ້ອງການມັນຢ່າງໃດເລີຍ. ສິ່ງທີ່ພວກເຮົາຕ້ອງການນັ້ນກໍຄືຄວາມປອດໄພທີ່ໝັ້ນຄົງ. ແນ່ນອນວ່າ ການສະກັດກັ້ນການແຂ່ງຂັນສ້າງອາວຸດ, ການລຶດຜ່ອນການກະກຽມ ທາງການ ທະຫານລົງ, ການເຮັດໃຫ້ບັນຍະກາດທາງການເມືອງສາກົນ ກາຍເປັນປົກກະຕິ ທັງໝົດເຫລົ່ານັ້ນ ຈະໄດ້ຊ່ວຍໃຫ້ປັບປຸງຄວາມປອດໄພຂອງທັງສອງຝ່າຍໃຫ້ໝັ້ນຄົງຍິ່ງຂຶ້ນ.

ຖາມ: ພາຍຫລັງການປະກາດຂ່າວທີ່ວ່າ ວໍຊິງຕັນ ແລະປັກກິ່ງໄດ້ເຮັດໃຫ້ສາຍສຳພັນກັນກາຍເປັນປົກກະຕິແລ້ວ ເຂົາສະເໜີໃຫ້ໃຊ້ "ໄປໄພ້ຈີນ". ຈີນອາດຈະໃຊ້"ໄປໄພ້ອາເມລິກາ"ກໍໄດ້. ທ່ານມີຄວາມຄິດແນວໃດກ່ຽວກັບເລື່ອງນີ້ ແລະກ່ຽວກັບສາຍສຳພັນກັນໂຊວຽດ-ຈີນໃນອະນາຄົດ ?

ຕອບ: ໃນສະຫະລັດອາເມລິກາແລະປະເທດຕາເວັນ ຕົກອື່ນໆ ມີພັກພວກທີ່ມັກທິດທາງນະໂຍບາຍ ຂອງຜູ້ນຳຈີນທີ່ຕ້ານ ສ.ສ.ສ.ຊ.; ພັກພວກເຫລົ່ານັ້ນ ຈິ່ງຢາກເຮັດໃຫ້ ປັກກິ່ງກາຍເປັນເຄື່ອງມື ທີ່ຈະບີບບັງຄັບໂລກສັງຄົມນິຍົມ. ຂ້າ ພະເຈົ້າຄິດວ່າ ນະໂຍບາຍແນວນີ້ ເປັນນະໂຍບາຍແບບສ່ຽງໄພທີ່ເປັນອັນຕະລາຍແກ່ພາລະກິດແຫ່ງສັນຕິພາບ ໃນທົ່ວໂລກ.

ມັນບໍ່ແມ່ນນອນຢູ່ບ່ອນວ່າ ອາເມລິກາ ໄດ້ສ້າງສາຍສຳພັນກັນທາງການທູດກັບຈີນດອກ. ມັນນອນຢູ່ບ່ອນວ່າ ມີພັກພວກທີ່ດ້ວຍການໃຊ້ເຫຍື່ອລໍ້ ອັນມີລັກສະນະເສດຖະກິດ, ດ້ວຍການຂາຍອາວຸດທີ່ທັນສະໄໝ, ເຕັກນິກ ແລະ ເຕັກໂນໂລຊີທາງ

ການທະຫານ ພວມພະຍາຍາມໜູນຫລັງແກ່ຜູ້ນຳຂອງປະເທດໃຫຍ່ຂອງໂລກ ທີ່ໄດ້ປະກາດ ຢ່າງເປັນທາງການ ກ່ຽວກັບຄວາມຕັ້ງໃຈທີ່ຈະຄັດຄ້ານການລົດຜ່ອນຄວາມເຄັ່ງຕຶງ, ການປົດອາວຸດ, ການຂັດຂວາງສະຖຽນລະພາບໃນໂລກ, ອ້າງສິດເຖິງດິນແດນຕ່າງປະເທດ, ກໍ່ການທ້າທາຍເກາະຜິດ, ໄດ້ປະກາດວ່າ ສົງຄາມເປັນສິ່ງທີ່ຫລີກລ້ຽງບໍ່ໄດ້ເດັດຂາດ, ໄດ້ເລີ່ມການກະກຽມທີ່ຈະເຂົ້າຮ່ວມໃນສົງຄາມຢ່າງເອົາຈິງເອົາຈັງ.

ການກະທຳແນວນີ້ ເປັນການຫລິ້ນກັບໄຟແທ້ໆ; ມັນ ເປັນການຍາກທີ່ຈະເຂົ້າໃຈເລື່ອງນີ້ບໍ່ ?

ສ່ວນຄວາມຫວັງທີ່ຈະເຮັດໃຫ້ອຳນາດການປົກຄອງ ປັກກິ່ງກາຍເປັນເຄື່ອງມືແຫ່ງນະໂຍບາຍຂອງກຸ່ມນາໂຕ, ການພະຍາຍາມທີ່ຈະເຮັດໃຫ້ຄວາມຕັ້ງໃຈແບບຊຸນເສິກ ມຸ່ງໜ້າໄປຕາມທິດທາງທີ່ຝ່າຍຕາເວັນຕົກຕ້ອງການນັ້ນ ທັງໝົດ ເຫລົ່ານັ້ນລ້ວນແຕ່ເປັນຄວາມໃຝ່ຝັນລ້າງ. ມັນຈະເປັນການພຽງພໍທີ່ຈະຄິດຫລັງກ່ຽວກັບຜົນງານຂອງນະໂຍບາຍແບບມູນິກ ຂອງບັນດາປະເທດຕາເວັນຕົກ. ມັນໄດ້ລືມບົດຮຽນທາງປະຫວັດສາດໄວປານນີ້ບໍ່?

ສ່ວນສາຍສຳພັນກັນລະຫວ່າງ ສ.ສ.ສ.ຊ. ກັບສາທາລະນະລັດປະຊາຊົນຈີນນັ້ນ ຂ້າພະເຈົ້າຢາກກ່າວເນັ້ນວ່າ ພວກເຮົາບໍ່ອ້າງເຖິງສິດໃດ ບໍ່ວ່າໃນດ້ານດິນແດນ ຫລືດ້ານອື່ນໆ, ບໍ່ເຫັນອຸປະສັກພາວະວິໄສທີ່ຈະຟື້ນຟູສາຍສຳພັນກັນ ບໍ່ພຽງແຕ່ເປັນປົກກະຕິທໍ່ນັ້ນ ຫາກຍັງເປັນເພື່ອນມິດອີກດ້ວຍ, ຖ້າຫາກ

ວ່າທ່າທີຂອງສາທາລະນະລັດປະຊາຊົນຈີນ ມີລັກສະນະ ຮູ້ສະພາບຕົວຈິງແລະຮັກຫອມສັນຕິພາບ.

ປັກກິ່ງ ເຄີຍປະກາດວ່າ ສົນທິສັນຍາໂຊວຽດ-ຈີນວ່າດ້ວຍມິດຕະພາບ, ການຮ່ວມສາມັກຄີກັນ,ການຊ່ວຍເຫລືອເຊິ່ງກັນແລະກັນສະບັບປີ ໑໙໕໐ "ໄດ້ເສຍຄວາມໝາຍ","ໄດ້ກາຍເປັນໃບເຈ້ຍ" ແລະອື່ນໆ. ເບິ່ງແລ້ວເຫັນວ່າ ຜູ້ນຳຈີນໄດ້ທ້າທາຍເກາະຜິດພວກເຮົາເພື່ອລົບລ້າງສົນທິສັນຍາສະບັບນີ້. ພວກເຮົາຈະບໍ່ເຮັດແນວນີ້.ພວກເຮົາຈະບໍ່ລົບລ້າງເອກະສານທີ່ເປັນເຄື່ອງໝາຍແຫ່ງມິດຕະພາບລະຫວ່າງ ປະຊາຊົນຂອງ ສ.ສ.ສ.ຊ. ແລະປະຊາຊົນຈີນ. ຖ້າຜູ້ນຳຈີນຈະເຮັດແນວນີ້ ພວກເຂົາກໍຈະເປັນຜູ້ຮັບຜິດຊອບຕໍ່ໜ້າປະຊາຊົນຈີນ, ຕໍ່ໜ້າບັນດາກຳລັງແຫ່ງສັນຕິພາບ ແລະຄວາມກ້າວໜ້າຂອງໂລກ.

ຖາມ: ໃນອາເມລິກາຄຳສັບທີ່ວ່າ "ເດັດຕັນ" ("ການລົດຜ່ອນ") ມີຄວາມໝາຍຫລາຍຢ່າງ. ຕາມຄວາມຄິດເຫັນຂອງທ່ານ ຄຳສັບນີ້ ມີຄວາມໝາຍທາງດ້ານການເມືອງເປັນແນວໃດ ເປັນຕົ້ນແມ່ນໃນເມື່ອຄຳສັບນີ້ ກ່ຽວຂ້ອງກັບ ບັນຫາພາກພື້ນ ເຊັ່ນບັນຫາອາຟະລິກາ ແລະ ບັນຫາຕາເວັນ ອອກກາງ ?

ຕອບ: ຄຳສັບທີ່ວ່າ "ການລົດຜ່ອນຄວາມເຄັ່ງຕຶງລົງ"ຫລືການລົດຜ່ອນເວົ້າຫຍໍ້ໆ ໝາຍເຖິງສາຍສຳພັນກັນທາງສາກົນທີ່ກົງກັນຂ້າມກັບອັນທີ່ເອີ້ນວ່າ "ສົງຄາມເຢັນ",ເຊິ່ງມີຄວາມເຄັ່ງຕຶງທີ່ອາດຈະກາຍເປັນກໍລະນີພິພາດ ຢ່າງເປີດເຜີຍໄດ້.

ມັນອາດເວົ້າໄດ້ວ່າ ການລົດຜ່ອນໝາຍເຖິງ ການລົບລ້າງ "ສົງຄາມເຢັນ", ການເຮັດໃຫ້ສາຍສຳພັນກັນລະຫວ່າງບັນດາປະເທດກາຍເປັນປົກກະຕິ. ການລົດຜ່ອນໝາຍເຖິງການກຽມພ້ອມທີ່ຈະແກ້ໄຂຂໍ້ຖົກຖຽງກັນດ້ວຍສັນຕິວິທີ ໃນການເຈລະຈາກັນ, ບໍ່ຈຳເປັນຕ້ອງໃຊ້ກຳລັງຮຸນແຮງ, ບໍ່ນາບຂູ່ດ້ວຍອາວຸດ. ການລົດຜ່ອນໝາຍເຖິງຄວາມໄວ້ເນື້ອເຊື່ອໃຈກັນ, ຄວາມເອົາໃຈໃສ່ຕໍ່ຜົນປະໂຫຍດຂອງກັນແລະກັນ. ອັນນັ້ນເປັນຄວາມໝາຍຂອງຄຳສັບທີ່ວ່າ ການລົດຜ່ອນ.

ພວກເຮົາພວມເຮັດທຸກສິ່ງຢ່າງເອົາຈິງເອົາຈັງ ເພື່ອເຮັດໃຫ້ຂະບວນວິວັດແຫ່ງການລົດຜ່ອນ ໄດ້ຮັບການແຜ່ຂະຫຍາຍໄປໃນພາກພື້ນທັງຫລາຍຂອງໂລກ ນັບລວມທັງທະວີບອາຟະລິກາແລະພາກຕາເວັນອອກກາງ. ຖ້າຫາກມີຜູ້ໃດເອົາໃຈຄຳສັບນີ້ຢ່າງບໍ່ຖືກຕ້ອງມັນອັນນັ້ນບໍ່ໝາຍຄວາມວ່າປະຊາຊາດຕ່າງໆທີ່ອາໄສຢູ່ໃນພາກພື້ນນີ້ ຫລືພາກອື່ນໆຂອງໂລກຄວນຍຸດຕິການຕໍ່ສູ້ເພື່ອສິດອັນເປັນທຳຂອງຕົນ.

ສ່ວນພາກພື້ນຕາເວັນອອກກາງນັ້ນ ການຕໍ່ສູ້ ຂອງ ປະຊາຊາດອາລັບ ເພື່ອຍາດເອົາດິນແດນ ທີ່ປະເທດອິດຊະລະເອັນໄດ້ຍຶດຄອງ, ການຕໍ່ສູ້ເພື່ອສິດຂອງຊາວປາເລັດຊະຕິນ ທີ່ຈະສ້າງລັດຂອງຕົນເອງ, ບັນດາກຳລັງທີ່ສະໜັບ ສະໜູນ ຄຳຮຽກຮ້ອງອັນເປັນທຳຂອງປະຊາຊາດອາລັບ ທັງໝົດ ເຫລົ່ານັ້ນ ບໍ່ຝ່າຝືນຕໍ່ຜົນປະໂຫຍດຂອງການລົດຜ່ອນ. ພັກພວກທີ່ສະໜັບສະໜູນພວກຮຸກຮານ ສົ່ງເສີມຍຸແຍ່ຄວາມຕັ້ງໃຈ ທີ່ມີລັກ

ສະນະຣຸກຣານແຜ່ຂະຫຍາຍອິດທິພົນນັ້ນເອງ ທີ່ເປັນການ ກະທຳທີ່ຝ່າຝືນຕໍ່ຜົນປະໂຫຍດຂອງການລຶດຜ່ອນ.

ໃນພາກໃຕ້ອາຟະລິກາ ມີເລື່ອງຄືດຽວກັນນີ້. ບໍ່ແມ່ນການຕໍ່ສູ້ຂອງປະຊາຊາດຕ່າງໆເພື່ອສິດຂອງຕົນ ຫາກແມ່ນ ນະໂຍບາຍທີ່ແນໃສ່ຄັດຄ້ານປະຊາຊາດທີ່ຕໍ່ສູ້ ເພື່ອການປົດປ່ອຍຊາດໃຫ້ພົ້ນຈາກແອກແຫ່ງການກົດຂີ່ແບບລ່າເມືອງຂຶ້ນ, ຈຳ ແນວເຊື້ອຊາດ, ຕ້ານລັດທິລ່າເມືອງຂຶ້ນແບບໃຫມ່ເພື່ອເອກະລາດແລະຄວາມກ້າວຫນ້າທາງສັງຄົມນັ້ນເອງ ທີ່ເປັນບໍ່ເກີດໄພອັນຕະລາຍແກ່ການລຶດຜ່ອນຄວາມເຄັ່ງຕຶງ ທາງສາກົນລົງ ຕ່າງຫາກ.

ຖາມ: ຕົວແທນຂອງອຳນາດການປົກຄອງຂອງກາເຕີເຄີຍຕິຕຽນນະໂຍບາຍພາຍໃນຂອງ ສ.ສ.ສ.ຊ. ໂດຍອ້າງເຖິງເອກະສານຂັ້ນສຸດທ້າຍຂອງກອງປະຊຸມເຮັນຊິນກີ. ເພິ່ນອາດໃຈ້ເອກະສານດັ່ງກ່າວໃນກໍລະນີທີ່ກ່ຽວຂ້ອງກັບ ນະໂຍ ບາຍພາຍໃນຂອງ ສ.ສ.ສ.ຊ. ແມ່ນບໍ່ ?

ຕອບ: ມັນອາດກຳນົດທ່າທີຂອງພວກເຮົາທີ່ມີຕໍ່ເອກະສານເຮັນຊິນກີ ຢ່າງສັ້ນໆແລະຈະແຈ້ງໄດ້ວ່າ ສ.ສ.ສ.ຊ. ສະຫນັບສະຫນູນການປະຕິບັດເອກະສານຂັ້ນສຸດທ້າຍຢ່າງຄົບຖ້ວນ ຂ້າພະເຈົ້າຢາກເວົ້າຕື່ມວ່າ ສ.ສ.ສ.ຊ. ເປັນປະເທດດຽວໃນໂລກ ເຊິ່ງແມ່ນລັດຖະທຳມະນູນໄດ້ລະບຸໄວ້ເຖິງຫລັກການສິບຂໍ້ຂອງສາຍສຳພັນກັນທາງສາກົນ ທີ່ມີໃນເອກະສານຂັ້ນສຸດທ້າຍດັ່ງກ່າວມາເທິງນັ້ນ.

ມັນບໍ່ຄວນລືມວ່າ ເອກະສານອັ້ນສຸດທ້າຍ ເປັນເອກະສານທີ່ກຳນົດຫລັກການແຫ່ງສາຍສຳພັນກັນທາງສາກົນ; ຫລັກການຂອງເອກະສານດັ່ງກ່າວ ບໍ່ເຮັດໃຫ້ປະເທດໃດຫນຶ່ງມີສິດທີ່ຈະແຊກແຊງເຂົ້າໃນຊີວິດພາຍໃນຂອງປະເທດອື່ນ. ຍິ່ງໄປກ່ວານັ້ນ ບັນດາປະເທດທີ່ໄດ້ລົງນາມເຊັນເອກະສານອັ້ນສຸດ ທ້າຍໄດ້ໃຫ້ຄຳຫມັ້ນສັນຍາວ່າ "ຈະເຄົາລົບສິດຂອງກັນແລະກັນ ທີ່ຈະເລືອກເຟັ້ນ, ເສີມຂະຫຍາຍລະບອບການທາງການເມືອງ, ສັງຄົມ, ເສດຖະກິດ, ວັດທະນະທຳຂອງຕົນ ແລະສິດ ທີ່ຈະເຮັດກົດຫມາຍແລະລະບຽບການທາງສັງຄົມຂອງຕົນ".

ດຽວນີ້ຂ້າພະເຈົ້າບໍ່ຢາກພິຈາລະນາທິດທາງຂອງເຈົ້າຫນ້າທີ່ອາເມລິກາໃນບັນຫານີ້. ຢ່າງໃດກໍຕາມ ທ່ານອາດເຊື່ອໄດ້ວ່າ ມັນອາດຈະເວົ້າກ່ຽວກັບບັນຫານີ້ຫລາຍໄດ້ ແລະ ຈະຕັ້ງຄຳຖາມໃດຫນຶ່ງກໍໄດ້ ເປັນຕົ້ນແມ່ນຄຳຖາມທີ່ຫມາຍເຖິງການແຊກແຊງຂອງອາເມລິກາ ເຂົ້າໃນກິດຈະການພາຍໃນ ຂອງປະເທດອື່ນໆຢ່າງເປີດເຜີຍ.

ເຫລັ້ມທີ ໒,
ຫນ້າ ໔໙໖-໔໗໘

<u>ສານເຖິງຄະນະກຳມະການປົດອາວຸດ</u>

ເນື່ອງໃນໂອກາດເປີດການເຮັດວຽກ ຂອງຄະນະ ກຳມະການປົດອາວຸດ ເຊິ່ງແມ່ນອົງປະກອບ ໄດ້ຮັບການເພີ່ມຕື່ມນັ້ນ ຂໍສະແດງຄວາມເຄົາລົບ ຕໍ່ບັນດາຜູ້ເຂົ້າຮ່ວມກອງປະຊຸມ, ຂໍອວຍພອນໃຫ້ໄດ້ຮັບຜົນສຳເລັດໃນການແກ້ໄຂບັນຫາ ທີ່ສັບສົນຫມື່ນຕໍ່ຫນ້າອົງການນີ້ ຂອງການເຈລະຈາກັນຫລາຍຝ່າຍ ກ່ຽວກັບການສະກັດກັ້ນການແຂ່ງຂັນສ້າງອາວຸດ ແລະ ການປົດອາວຸດ.

ບັນດາປະເທດ ແລະ ປະຊາຊົນ,ລັດຖະບຸລຸດຜູ້ຮັບຜິດຊອບຕໍ່ຊີວິດ ແລະ ສະວັດດີພາບຂອງປະເທດຂອງໃຜລາວ ຄວນເຂົ້າໃຈຄວາມຫມາຍ ອັນສຳຄັນທີ່ສຸດຂອງການເລືອກເຟັ້ນ ທີ່ມະນຸດຊາດຕ້ອງເຮັດໃນປະຈຸບັນນີ້: ການແຂ່ງຂັນ ສ້າງອາວຸດຕ້ອງໄດ້ຮັບການສະກັດກັ້ນແລະການຫັນຄືນຫລັງ; ຫລັກການຮັກຫອມສັນຕິພາບຈຶ່ງຈະໄດ້ຮັບການວາງຕັ້ງຂຶ້ນຢ່າງຫມັ້ນຄົງ ໃນສາຍສຳພັນກັນລະຫວ່າງບັນດາປະເທດຫລືວ່າໂລກຈະ ກ້າວເດີນ ຕາມແຄມແຫ່ງໄພອັນຕະລາຍຂອງສົງຄາມ ທີ່ຈະກໍ ໃຫ້

ເກີດຜົນຮ້າຍ ແກ່ການລຶດຜ່ອນຄວາມເຄັ່ງຕຶງ, ການປັບປຸງສາຍສຳພັນກັນລະຫວ່າງບັນດາປະເທດ, ການແກ້ໄຂ ບັນຫາ-ເສດຖະກິດຂອງໂລກ. ມັນຕ້ອງເລືອກເຟັ້ນເສັ້ນທາງອັນດຽວ-ຕ້ອງເພີ່ມທະວີອອກແຮງເຖິງສອງ, ສາມ, ສິບທົບໄປ ໃນການພະຍາຍາມບັນລຸຂັ້ນຕັດສິນແຫ່ງການຕໍ່ສູ້ເພື່ອສະກັດກັ້ນ ການແຂ່ງຂັນສ້າງອາວຸດ.

ໃນບັນຫານີ້ ຄະນະກຳມະການປົດອາວຸດມີບົດບາດສຳຄັນ. ຄະນະກຳມະການດັ່ງກ່າວພິຈາລະນາບັນຫາຂັ້ນພື້ນຖານຫລາຍບັນຫາເຊັ່ນມາດຕະການທີ່ແນໃສ່ປົດອາວຸດປະລະມານູ, ການຫ້າມທົດລອງອາວຸດປະລະມານູຢ່າງທົ່ວໄປ ແລະ ຮອບດ້ານ, ການຫ້າມໃຊ້ແລະການລຶບລ້າງອາວຸດເຄມີ, ການຫ້າມສ້າງອາວຸດສັງຫານຊີວິດໃນຂອບເຂດອັນກວ້າງຂວາງປະເພດໃຫມ່ນັບລວມທັງອາວຸດເນີຕຼົງ, ການຈຳກັດກອງທະຫານ ແລະກຳລັງອາວຸດ, ການຈຳກັດງົບປະມານທາງການທະຫານ. ພວກເຮົາອາດຈະເວົ້າໄດ້ວ່າ ອະນາຄົດຂອງບັນດາປະຊາຊາດ, ການຂະຫຍາຍຕົວຂອງໂລກເຮົາ ແມ່ນຂຶ້ນຢູ່ກັບການແກ້ໄຂ ບັນຫາເຫລົ່ານັ້ນ ເປັນສ່ວນຫລາຍ.

ໃນການເຄື່ອນໄຫວຂອງຕົນໃນຫລາຍໆປີ ຄະນະ ກຳມະການປົດອາວຸດ ໄດ້ສະສົມບົດຮຽນອັນເລິກເຊິ່ງແລະຮອບດ້ານແຫ່ງການພິຈາລະນາບັນດາບັນຫາທີ່ສັບສົນທີ່ສຸດ, ການເຮັດຂໍ້ຕົກລົງກັນແບບຫລາຍຝ່າຍທີ່ໄດ້ຈຳກັດການແຂ່ງຂັນສ້າງອາວຸດໃນບາງດ້ານແລ້ວ. ພວກເຮົາຕ້ອງຫມູນໃຊ້ບົດຮຽນເຫລົ່ານີ້.

ໃນປີນີ້ອົງປະກອບຂອງຄະນະກຳມະການ ໄດ້ຮັບການເພີ່ມຕື່ມຂຶ້ນ ໂດຍແມ່ນບັນດາປະເທດ ບໍ່ວ່າເປັນປະເທດທີ່ມີອາວຸດປະລະມານູຫລືບໍ່ມີ ຕັ້ງຢູ່ທະວີບໃດ, ພາກພື້ນໃດ ຂອງໂລກ, ເປັນປະເທດທີ່ເຂົ້າຮ່ວມກຸ່ມທະຫານ ຫລື ປະເທດທີ່ບໍ່ຮ່ວມກຸ່ມໃດຫນຶ່ງ ກໍໄດ້ເຂົ້າຮ່ວມໃນວຽກການຂອງຄະນະກຳມະການນີ້. ອັນນັ້ນພວມເພີ່ມທະວີຄວາມອາດສາມາດທີ່ຈະແລກປ່ຽນຄວາມຄິດຄວາມເຫັນກັນກ່ຽວກັບບັນຫາຕ່າງໆເຊິ່ງຄະນະກຳມະການພວມພິຈາລະນາເພື່ອຊອກຫາຄວາມຄິດແບບຄິດປະດິດຕົວຈິງ, ເລືອກເອົາຄວາມຄິດເຫັນທີ່ສົ່ງເສີມຄວາມກ້າວຫນ້າໃນພາລະກິດແຫ່ງການສະກັດກັ້ນການແຂ່ງຂັນສ້າງອາວຸດ. ພວກເຮົາກໍຕ້ອງຫມູນໃຊ້ຄວາມອາດສາມາດເຫລົ່ານັ້ນ ຢ່າງຄົບຖ້ວນ.

ສ່ວນ ສ.ສ.ສ.ຊ. ນັ້ນ ປະເທດເຮົາຕັ້ງໃຈທີ່ຈະເຮັດທຸກສິ່ງທຸກຢ່າງ ຕາມຄວາມສາມາດຂອງຕົນ ເພື່ອຊ່ວຍໃຫ້ຄະນະກຳມະການປົດອາວຸດ ໄດ້ຮັບຜົນສຳເລັດໃຫມ່. ພວກທ່ານໄດ້ຮູ້ຈັກບັນດາຂໍ້ສະເຫນີກ່ຽວກັບການສະກັດກັ້ນ ການແຂ່ງຂັນສ້າງອາວຸດ ເຊິ່ງພວກເຮົາໄດ້ສະເຫນີໃນປີກາຍແກ່ກອງປະຊຸມສະໄຫມວິສາມັນຂອງ ອ.ສ.ປ. ກ່ຽວກັບການປົດອາວຸດແລະໃນໄລຍະຕໍ່ໄປ, ໄດ້ສະເຫນີແກ່ສະຫມັດຊາໃຫຍ່ຄັ້ງທີ XXXIII ຂອງ ອ.ສ.ປ. ພ້ອມກັບບັນດາປະເທດສັງຄົມນິຍົມທີ່ເປັນພາຄີສົນທິສັນຍາວໍຊໍ. ປະເທດເຮົາໄດ້ປະກາດຄຳຖະແຫລງການນົດສະກູສະບັບລົງວັນທີ ໒໕ ເດືອນພະຈິກປີ ໑໙໗໘ ເຊິ່ງໃນນັ້ນ ໄດ້ຮຽກຮ້ອງໃຫ້ກ້າວຂຶ້ນຢ່າງໄວໄປສູ່ການແກ້ໄຂບັນຫາທີ່

ສຳຄັນຂອງການປົດອາວຸດ ເປັນຕົ້ນແມ່ນອາວຸດ ປະລະມານູ. ພວກເຮົາໄດ້ເດີນແລະຈະເດີນຕາມເສັ້ນທາງນີ້ ຢ່າງເອົາຈິງເອົາຈັງແລະສຸດກົກສຸດປາຍ.

ຂໍອວຍພອນໃຫ້ຄະນະກຳມະການປົດອາວຸດ ໄດ້ຮັບຜົນສຳເລັດໃຫ່ມ; ຂໍສະແດງຄວາມຫວັງວ່າ ປີ ໑໙໘໙ ຈະເປັນ ປີແຫ່ງຜົນຕົວຈິງໃນກິດຈະການຂອງຄະນະກຳມະການດັ່ງກ່າວ, ຜົນຕົວຈິງ ເຊິ່ງແມ່ນບັນດາປະຊາຊາດຂອງໂລກ ຄອຍຖ້າຢູ່ ແລະຕິດພັນກັບຄວາມຫວັງຂອງຄົນຕໍ່ສັນຕິພາບ ທີ່ຖາວອນແລະໝັ້ນຄົງກ່ວາເກົ່າ.

ລ.ບະເລັດຊະເນັບ

ວັນທີ ໒໔ ເດືອນມັງກອນປີ ໑໙໘໙

ເຫຼັ້ມທີ ໓,

ໜ້າ ໕໐໐-໕໐໑

ຄຳປາໄສຂອງບຸະເລັດຈະເນັບໃນການຊຸມນຸມມະໂຫລານ ທີ່ກຸງແບັກແລັງເນື່ອງໃນໂອກາດວັນສ້າງຕັ້ງສາທາລະນະລັດ ປະຊາທິປະໄຕເຢຍລະມັນ ຄົບຮອບ ໓໐ ປີ

ວັນທີ ໗ ເດືອນຕຸລາປີ ໑໙໗໙

ສະຫາຍ ໂຮນເນັກເກີນທີ່ຮັກແພງ !

ເພື່ອນມິດທີ່ຮັກແພງ !

ພວກເຮົາຮູ້ສຶກມີຄວາມປິຕິຍິນດີເປັນຢ່າງຍິ່ງທີ່ໄດ້ມີໂອກາດມາຢູ່ນຳພວກທ່ານ ໃນເວລາອັນຄຶກຄື້ນນີ້. ເພື່ອນມິດທີ່ຊື່ສັດແລະພັນທະມິດຂອງພວກທ່ານ ຄືຊາວກອມມູນິດ ໑໗ ລ້ານຄົນທີ່ເປັນສະມາຊິກພັກຂອງເລນິນ, ປວງປະຊາຊົນໂຊວຽດ ພາກັນສະແດງຄວາມອວຍໄຊໃຫ້ພອນ ຢ່າງບໍລິສຸດໃຈ ແກ່ສາທາລະນະລັດ ປະຊາທິປະໄຕ ເຢຍລະມັນເນື່ອງໃນໂອກາດການສະເຫລີມສະຫລອງ ວັນສ້າງຕັ້ງຄົບຮອບ ໓໐ ປີ! (ຕົບມື).

ຂໍສະແດງຄວາມຂອບໃຈ ແກ່ເພື່ອນມິດທີ່ຮັກແພງຂອງພວກເຮົາ ຄື ເອັນລິກໂຮນເນັກເກີນ ເລຂາທິການໃຫຍ່ ສູນກາງພັກສັງຄົມນິຍົມ ເອກະພາບເຢຍລະມັນ,ປະທານສະພາລັດຖະມົນຕີ ແຫ່ງ ສ.ປ.ຢ.,ນັກຮົບທີ່ດີເດັ່ນ ຂອງຂະບວນການກຳມະກອນສາກົນ ທີ່ໄດ້ກ່າວຢ່າງອົບອຸ່ນ ກ່ຽວກັບສະຫະພາບໂຊ

ວຽດແລະນະໂຍບາຍຂອງສະຫະພາບໂຊວຽດ (ຕົບມື).ພ້ອມກັນນັ້ນ ຂ້າພະເຈົ້າຢາກກ່າວເນັ້ນວ່າ ພວກເຮົາຖືປະຊາຊົນຂອງ ສ.ປ.ຢ. ວ່າເປັນຜູ້ຮ່ວມວຽກລວມກັນທີ່ຍຶດໝັ້ນໃນຊົດີນຕະຕີອັນສູງສົ່ງ, ຜູ້ມີຄວາມຊຳນິຊຳນານ ໃນການອອກ - ແຮງງານ, ຜູ້ສາມາດທົນທານຕໍ່ການທົດສອບ ທຸກຢ່າງໄດ້. (ຕົບມື).

ທຸກໆປີໃນໄລຍະເວລາ ໖໐ ປີທີ່ຜ່ານມານີ້ ສະຫະພາບໂຊວຽດ, ບັນດາປະເທດຮ່ວມສຳພັນ ສັງຄົມນິຍົມອັນໃຫຍ່ຫລວງໄດ້ຄຽງບ່າຄຽງໄຫລ່ກັບ ສາທາລະນະລັດ ປະຊາທິປະໄຕ - ເຢຍລະມັນ. ພວກເຮົາເດີນຮ່ວມກັນໄປຂ້າງໜ້າໂດຍໄດ້ຮັບຄວາມເຊື່ອໝັ້ນແລະຄວາມກ້າຫານມາຈາກການສະໜັບ ສະໜູນ ຕໍ່ກັນແລະກັນ ແລະຈາກຄວາມສາມັກຄີຖານອ້າຍນ້ອງ. ເຄື່ອງມືທີ່ ໑໘ ເຂັ້ມແຂງ ຂອງການຮັບປະກັນຄວາມປອດ ໄພຂອງພວກເຮົາ ແລະການຕໍ່ສູ້ລວມ ເພື່ອສັນຕິພາບກໍຄືອົງການສົນທິສັນຍາ ວໍຊໍ ເຊິ່ງແມ່ນພວກເຮົາຈະສະເຫລີມ ສະຫລອງ ວັນສ້າງຕັ້ງຄົບຮອບ ໒໕ ປີ ຂອງອົງການນີ້ໃນມື້ນີ້. ສະພາ ການຊ່ວຍເຫລືອກັນ ທາງດ້ານເສດຖະກິດ ກໍເປັນເຄື່ອງມືທີ່ ໑ດີ ແກ່ການຮ່ວມມືກັນທາງເສດຖະກິດ ຢ່າງກ້ວາງຂວາງ.

ປະສົບການຂອງການປະສານງານຂອງພວກເຮົາ ໃນດ້ານຕ່າງໆ ພິສູດໃຫ້ເຫັນເຖິງຄວາມເຂັ້ມແຂງ ຂອງຄວາມສາມັກຄີ ແບບສັງຄົມນິຍົມ ທີ່ໃຜໆກໍບໍ່ສາມາດເອົາຊະນະໄດ້, ພວກ

ເຮົາຕ່າງກໍຕັ້ງໃຈ ທີ່ຈະປົກປັກຮັກສາສະຖານະການແນວນີ້ໃນໄລຍະຕໍ່ໄປ. (ຕົບມືຢ່າງຟົດຟື້ນ).

ເມື່ອວານນີ້ ພວກເຮົາໄດ້ເຊັນເອກະສານອັນສຳຄັນ ຂອງການຮ່ວມມືກັນ ຄື ໂຄງການຂອງການແບ່ງປັນ ການຜະລິດ ແລະການປະສານການຜະລິດ ລະຫວ່າງ ສ.ສ.ສ.ຊ. ກັບ ສ.ປ.ຢ. ຈົນເຖິງປີ ໑໙໙໐. (ຕົບມື). ຄັນເວົ້າໂດຍຫຍໍ້ກ່ຽວກັບເນື້ອໃນຂອງໂຄງການນັ້ນ ມັນກໍຄືວ່າໃນທຸກຂົງເຂດທີ່ເຮັດໄດ້ແລະກໍໃຫ້ເກີດຜົນດີ ພວກເຮົາຮ່ວມຄວາມອາດ ສາມາດທາງ ການຜະລິດຂອງພວກເຮົາ ເພື່ອແກ້ໄຂບັນຫາ ເສດຖະກິດ ທີ່ສັບສົນໃຫ້ດີ ແລະໄວກ່ວາເກົ່າ. (ຕົບມື).

ສຳຫລັບພັກຂອງພວກເຮົາ, ອົງການລັດ ແລະອົງການຈັດຕັ້ງມະຫາຊົນ, ວິສາຫະກິດອຸດສາຫະກຳ, ສະຖາບັນຄົ້ນຄ້ວາວິທະຍາສາດນັ້ນ ຕ້ອງມີການຕິດຕໍ່ພົວພັນກັນ ຢ່າງເນື່ອງນິດລຽນຕິດ ຈົນກາຍເປັນການກະທຳປະຈຳວັນ ຫຼື- ຂ້າພະເຈົ້າຢາກເວົ້າວ່າ ກາຍເປັນຄວາມຮຽກຮ້ອງຕ້ອງການ ທາງດ້ານຊີວິດ. ຜູ້ອອກແຮງງານນັບເປັນພັນໆຄົນ ແຫ່ງ ສ.ສ.ສ.ຊ. ແລະ ສ.ປ.ຢ.ຮູ້ຈັກກັນຢ່າງດີ, ຊາວຜູ້ອອກແຮງງານນັບຫຼາຍລ້ານຄົນໄດ້ ຕິດຕໍ່ພົວພັນກັນ ໂດຍຜ່ານອົງການຈັດຕັ້ງຕ່າງໆ. ອັນນັ້ນແມ່ນດີຫລາຍ. ມິດຕະພາບຂອງປະຊາຊາດຕ່າງໆເປັນຊຸມສົມບັດອັນຍິ່ງໃຫຍ່ ເຊິ່ງແມ່ນພວກເຮົາຕ້ອງປົກປັກຮັກສາ-ແລະເພີ່ມທະວີຢູ່ເລື້ອຍໆ! (ຕົບມືຢ່າງຍືດຍາວ).

ໃນໄລຍະເວລາອັນຄິດຄົ້ນນີ້ ມັນຈະບໍ່ເປັນການເຫຼືອເຟືອທີ່

ຈະຄຶດຄືນຫຼັງເຖິງເສັ້ນທາງທີ່ຜ່ານໄປແລ້ວ. ໃນລະດູໃບໄມ້ລົ່ນ ປີ ໑໙໔໙, ເມື່ອ ສ.ປ.ຢ. ໄດ້ຮັບການສ້າງຕັ້ງຂຶ້ນນັ້ນ ສະພາບການທາງການເມືອງ ໃນທະວີບຢູໂຣບ ແລະບໍ່ພຽງແຕ່ ຢູໂຣບເທົ່ານັ້ນ ໄດ້ເຄັ່ງຮ້ອນເປັນພິເສດ. ກຸ່ມນາໂຕ ເຊິ່ງເປັນເຄື່ອງມືທາງທະຫານ ຂອງພວກຈັກກະພັດນິຍົມໄດ້ຖືກສ້າງຕັ້ງຂຶ້ນ. ນັກການເມືອງບາງຄົນ ໃນຝ່າຍຕາເວັນຕົກ ນາບຂູ່ວ່າຈະຫັນປ່ຽນ "ສົງຄາມເຢັນ" ໃຫ້ເປັນ "ສົງຄາມຮ້ອນ"ໄດ້. ການເດີນ "ຕາມແຄມແຫ່ງສົງຄາມ" ໄດ້ຖືກປະກາດວ່າເປັນຫລັກການຫນຶ່ງທີ່ສຳຄັນ ຂອງນະໂຍບາຍຕ່າງປະເທດ ຂອງຝ່າຍຈັກກະພັດ.

ເຖິງເປັນແນວນັ້ນກໍຕາມ ແສງສະຫວ່າງຂອງລະບອບ ສັງຄົມນິຍົມ ທີ່ຂຶ້ນສູ່ທ້ອງຟ້າ ເທິງປະເທດຫລາຍປະເທດ ໃນທິດສະວັດທີ ໔ ໄດ້ສືບຕໍ່ສ່ອງແສງສະຫວ່າງຫລາຍຍິ່ງຂຶ້ນ. ການສະຖາປະນາ ສ.ປ.ຢ. ໄດ້ກາຍເປັນໄຊຊະນະທີ່ຍິ່ງ ໃຫຍ່ຂອງພາລະກິດສັງຄົມນິຍົມ ແລະສັນຕິພາບ ແລະ ໄດ້ມີຄວາມຫມາຍສຳຄັນ ອັນເປັນປະຫວັດການທີ່ແທ້ຈິງ . (ຕົບມື ຢ່າງຍືດຍາວ.)

ປີ ໑໙໔໕ ເມື່ອສົງຄາມທີ່ນອງເລືອດທີ່ສຸດໃນປະຫວັດສາດຂອງໂລກ ໄດ້ສິ້ນສຸດລົງ ໃນກຸງແບັກແລັງ ປີນັ້ນໄດ້ຜ່ານໄປ-ຢ່າງຫ່າງໄກແລ້ວ. ໃນປະຈຸບັນນີ້ ນະຄອນແບັກແລັງ ທີ່ເປັນເມືອງຫລວງແຫ່ງ ສ.ປ.ຢ. ມີຊື່ສຽງກຽດຍົດອັນສູງສົ່ງ(ຕົບມື).ບັນດາປະຊາຊາດ ບໍ່ອາດຈະບໍ່ຮູ້ສຶກບຸນຄຸນແກ່ ພັກສັງຄົມ

ນິຍົມເອກະພາບເຢຍລະມັນ, ລັດຖະບານແລະຊາວຜູ້ອອກແຮງ ງານ ແຫ່ງ ສ.ປ.ຢ. ຍ້ອນວ່າພວກເຂົາຕໍ່ຕ້ານລັດທິຟາ ຊິດ ແລະລັດທິຊຸນເສິກຢ່າງເດັດຂາດ, ແລະຍ້ອນວ່າພວກເຂົາໄດ້ ເຮັດໃຫ້ຄວາມຫວັງຂອງແນວໂຮມ ທີ່ຕ້ານຮິດແລ ປະກົດເປັນ ຈິງ. (ຕົບມືຢ່າງຟົດຟື້ນ).

ເພິ່ນເຂົ້າໃຈເນື້ອໃນຂອງນະໂຍບາຍ ຂອງທຸກໆ ປະເທດ ໄດ້ ເມື່ອຮູ້ຕອບຄຳຖາມທີ່ວ່າ ນະໂຍບາຍນັ້ນນຳເອົາຫຍັງມາ ສູ່ພົນລະເມືອງ, ເພື່ອນບ້ານໃກ້ຄຽງ ແລະທົ່ວໂລກ.

ສາທາລະນະລັດ ປະຊາທິປະໄຕ ເຢຍລະມັນ ເໝືອນກັບ ປະເທດສັງຄົມນິຍົມອື່ນໆໄດ້ເອົາໃຈໃສ່ຢ່າງຈິດຈໍ່ເຖິງສະຫວັດ ດີພາບ ຂອງຊາວຜູ້ອອກແຮງງານ ເພື່ອເຮັດໃຫ້ສະມາຊິກສັງ ຄົມທຸກຄົນ ເຊື່ອໝັ້ນໃນອະນາຄົດ ອັນງົດງາມຂອງຕົນ. ສ. ປ.ຢ. ໄດ້ປົກປັກຮັກສາ ແລະເສີມຂະຫຍາຍມູນເຊື້ອອັນ ດີ ງາມ ຂອງຂະບວນການກຳມະກອນເຢຍລະມັນ, ເຮັດໃຫ້ຊູຄຸນ ຄະຕິຂອງນັກປະຕິວັດ, ນັກຄິດປະດິດສ້າງ ຊາວເຢຍລະມັນ-ອັນດີເດັ່ນ ຫລາຍຄົນປາກົດເປັນຈິງ.

ສາທາລະນະລັດ ປະຊາທິປະໄຕ ເຢຍລະມັນ ໄດ້ສະແດງ ເຈດຕະນາລົມອັນດີ, ຄວາມກຽມພ້ອມທີ່ຈະຮ່ວມມືກັນ, ເຂົ້າ ໃຈເຊິ່ງກັນແລະກັນ ກັບບັນດາປະເທດເພື່ອນບ້ານໃກ້ຄຽງ . ພ້ອມກັບບັນດາປະເທດສັງຄົມນິຍົມ ສ.ປ.ຢ.ພວມເຮັດທຸກສິ່ງ ທຸກຢ່າງ ເພື່ອສະກັດກັ້ນບໍ່ໃຫ້ມະນຸດຊາດ ຕົກຢູ່ໃນຄວາມ ຫາ ຍະນະ ແຫ່ງສົງຄາມຄັ້ງໃໝ່.

ອັນນັ້ນຄວນໄດ້ຮັບຄວາມເຄົາລົບນັບຖືຢ່າງສູງ. ອັນນັ້ນເປັນພື້ນຖານຂອງຊື່ສຽງກຽດຍົດອັນສູງ ຂອງ ສ.ປ.ຢ. ໃນເວທີສາກົນ. (ຕົບມື).

ການຮັບຮອງທາງກົດໝາຍສາກົນ ສ.ປ.ຢ. ໄດ້ກາຍເປັນບາດກ້າວໃໝ່ ໃນການປັບປຸງຄວາມປອດໄພແຫ່ງທະວີບຢູລົບ. ດັ່ງທີ່ພວກທ່ານຮູ້ຢ່າງດີວ່າ ມັນບໍ່ແມ່ນວຽກອັນງ່າຍດາຍ: ບັນດາປະເທດສັງຄົມນິຍົມ ໄດ້ຕໍ່ສູ້ເປັນເວລາຫລາຍສິບປີ ເພື່ອການຮັບຮອງ ສ.ປ.ຢ., ການເຊັນຂໍ້ຕົກລົງກັນ ໃນທິດສະວັດທີ ໆ ທີ່ຮູ້ກັນດີ, ການເຄົາລົບສະພາບຕົວຈິງພາຍຫລັງສົງຄາມໂລກຄັ້ງທີ 2, ເພື່ອໄຂກອງປະຊຸມທົ່ວຢູລົບຂຶ້ນ.

ກອງປະຊຸມທົ່ວຢູລົບ ໄດ້ຜ່ານເອກະສານອັນສຸດທ້າຍ ເຊິ່ງໝາຍເຖິງການປົກປັກຮັກສາຄວາມປອດໄພ ຂອງປະຊາຊາດຢູລົບ, ຊີວິດອັນສະຫງົບສຸກ, ສາຍສຳພັນກັນລະຫວ່າງ ປະຊາຊາດຕ່າງໆ ຢ່າງສັນຕິ. ພວກເຮົາຢາກເຮັດໃຫ້ ເອກະສານດັ່ງກ່າວ ໄດ້ປະກົດເປັນຈິງຂຶ້ນຢ່າງຄົບຖ້ວນ. (ຕົບມື).

ບັນດາລັດຖະບຸລຸດຂອງຝ່າຍຕາເວັນຕົກ ຄື ຊິຕ້ອງການແນວນັ້ນເຊັ່ນດຽວກັນ. ມັນເປັນໜ້າເສຍດາຍວ່າການກະທຳຕົວຈິງຂອງພວກເຂົາ ຊໍ້າພັດຝ່າຝືນທິດທາງແນວນັ້ນ. ພວກເຮົາບໍ່ອາດຈະບໍ່ເຫັນໄດ້ວ່າ ພັກພວກທີ່ສະໜັບສະໜູນ ການແຂ່ງຂັນສ້າງອາວຸດ ພວມໃຊ້ທຸກວິທີການ, ທຸກເຫດຜົນທີ່ປອມແປງ ເພື່ອເຮັດໃຫ້ສະຖານະການເຄັ່ງຮ້ອນຍິ່ງຂຶ້ນ, ເພື່ອຊຸກຍູ້ການກະກຽມທາງການທະຫານ. ສ່ວນທະວີບຢູລົບນັ້ນ ເພິ່ນ

ພວມພະຍາຍາມນຳເອົາລູກລະເບີດວາງລົງໃສ່ພື້ນຖານ ແຫ່ງສັນຕິພາບ ຂອງທະວີບຢູລົບ.

ແຜນການອັນເປັນອັນຕະລາຍ ທີ່ຈະຕິດຕັ້ງອາວຸດ ຈະລວດນິວຄະເລັຍຊະນິດໃໝ່ ຂອງອາເມລິກາລົງໃນດິນແດນ ຢູລົບຕາເວັນຕົກ ເຊິ່ງເປັນເລື່ອງການໂຄສະນາທີ່ຝ່າຍຕະເວັນຕົກພວມປ່າວຮ້ອງ ຢ່າງບໍ່ເຫືອດສີ້ນນັ້ນ ມັນກໍ່ໃຫ້ເກີດຄວາມ ກັງວົນໃຈຫລາຍສົມຄວນ. ຄັນເວົ້າໂດຍກົງໄປກົງມາແລ້ວ, ການປະຕິບັດແຜນການເຫລົ່ານັ້ນ ຈະໄດ້ຫັນປ່ຽນສະພາບການ ຍຸດທະສາດ ໃນທະວີບຢູລົບ. ເປົ້າໝາຍຂອງແຜນການເຫລົ່ານັ້ນ ກໍຄືການລ່ວງລະເມີດການຊັ່ງຊາກຳລັງໃນຢູລົບ ໂດຍແນ່ໃສ່ຮັບປະກັນການມີກຳລັງແຮງທາງທະຫານສູງກ່ວາໝູ່ໃຫ້ແກ່ກຸ່ມນາໂຕ.

ສ່ວນການມີກຳລັງແຮງທາງທະຫານສູງກ່ວາໝູ່ນັ້ນມັນເປັນເລື່ອງທີ່ໜ້າສົງໄສ (ຕົບມື ແລະຫົວ).ບັນດາປະເທດສັງຄົມນິຍົມ ບໍ່ອາດຈະເມີນເສີຍຕໍ່ການອອກແຮງ ຂອງພວກຊຸນເສິກຂອງກຸ່ມນາໂຕ. ໃນກໍລະນີນັ້ນ ພວກເຮົາຈະຕ້ອງປະຕິບັດ - ມາດຕະການທີ່ຈຳເປັນ ເພື່ອປັບປຸງຄວາມປອດໄພ ຂອງພວກເຮົາເຊັ່ນດຽວກັນ. ມັນຈະແຈ້ງແລ້ວວ່າ ການປະຕິບັດ ແຜນການຂອງກຸ່ມນາໂຕ ຈະໄດ້ເຮັດໃຫ້ສະຖານະການຢູລົບ ເຄັ່ງຮ້ອນຂຶ້ນ ແລະ ຈະໄດ້ຫວ່ານຢາເບື່ອ ລົງໃສ່ບັນຍາກາດ ສາກົນທົ່ວໄປ.

ມັນບໍ່ເປັນຄວາມລັບວ່າເໝືອນກັບອາເມລິການັ້ນສາທາລະ

ນະລັດສະຫະພັນເຢຍລະມັນ (ສ.ສ.ຢ.) ກໍໄດ້ມີບົດບາດ ບໍ່ນ້ອຍ ໃນການວາງແຜນການອັນເປັນອັນຕະລາຍເຫຼົ່ານັ້ນ.

ຄົນເວົ້າຢ່າງຈິງໃຈວ່າ ພັກພວກທີ່ກຳນົດນະໂຍບາຍ ຂອງ ສ.ສ.ຢ. ໄດ້ປະເຊີນໜ້າກັບການເລືອກເຟັ້ນທີ່ສຳຄັນ.ພວກເຂົາຈະຕັດສິນໃຈວ່າ ເສັ້ນທາງໃດເປັນເສັ້ນທາງທີ່ດີກວ່າໃຫ້ແກ່ ສ.ສ.ຢ.: ເສັ້ນທາງແຫ່ງການປັບປຸງສັນຕິພາບໃນຢູລົບ, ການເສີມຂະຫຍາຍການຮ່ວມມືກັນ ທີ່ກໍ່ໃຫ້ເກີດຜົນຕໍ່ກັນ ແລະກັນ ລະຫວ່າງບັນດາປະເທດຢູລົບ ໃນບັນຍາກາດເພື່ອນບ້ານໃກ້ຄຽງ ແລະຄວາມໄວ້ເນື້ອເຊື່ອໃຈຕໍ່ກັນແລະກັນ ທີ່ພວມໄດ້ຮັບການປັບປຸງໃຫ້ສູງຂຶ້ນ ຫລື ເສັ້ນທາງແຫ່ງການເຮັດສະຖານະການໃນຢູລົບ ແລະໃນທົ່ວໂລກເຄັ່ງຮ້ອນຂຶ້ນ ໂດຍນຳເອົາອາວຸດຈະລວດນິວຄະເລັຍ ຂອງອາເມລິກາມາຕັ້ງໃນດິນແດນຂອງຕົນ ເພື່ອເລັງໃສ່ ສ.ສ.ສ.ຊ. ແລະປະເທດພັນທະມິດ. ແນ່ນອນວ່າ ໃນກໍລະນີອັນທີ່ສອງ ຖານະຂອງ ສ.ສ.ຢ.ກໍ່ຈະໄດ້ຮັບການອ່ອນເພຍລົງ: ໃຜໆກໍຄາດຄະເນໄດ້ວ່າ ສ.ສ.ຢ. ຈະຖືກຜົນສະທ້ອນແນວໃດ ໃນກໍລະນີ ເມື່ອເຈົ້າຂອງອາວຸດເຫລົ່ານັ້ນ ໄດ້ລົງມືໃຊ້ອາວຸດນັ້ນ.

ເລື່ອງນີ້ກໍມີຄວາມໝາຍສຳຄັນ ແກ່ບັນດາປະເທດຢູລົບ ທີ່ເປັນພາຄີກຸ່ມນາໂຕ, ທີ່ໄດ້ວາງແຜນການທີ່ຈະມອບ " ໂຊກລາບ" ໃຫ້ແກ່ປະເທດເຫລົ່ານັ້ນ ໂດຍການຕັ້ງອາວຸດຈະຫລວດນິວຄະເລັຍຊຸນກາງ ຂອງອາເມລິກາ ລົງໃນດິນແດນຂອງປະເທດເຫລົ່ານັ້ນ.

ສ່ວນສະຫະພາບໂຊວຽດນັ້ນ ຂ້າພະເຈົ້າຢາກກ່າວເນັ້ນວ່າ ພວກເຮົາບໍ່ຕ້ອງການ ຢາກມີກຳລັງແຮງທາງທະຫານ ເໜືອກ່ວາໝູ່. ເວລາໃດໆ ພວກເຮົາກໍບໍ່ຢາກນາບຂູ່ປະເທດໃດຫຼືກຸ່ມປະເທດໃດໜຶ່ງ. ທິດສະດີຍຸດທະສາດຂອງພວກເຮົາ ແມ່ນໃສ່ການປ້ອງກັນຕົວ. ຄຳເວົ້າທີ່ວ່າ ສະຫະພາບໂຊວຽດພວມເສີມຂະຫຍາຍຄວາມເຂັ້ມແຂງທາງທະຫານຂອງຕົນໃນທະວີບຢູລົບ ໃນຂອບເຂດທີ່ບໍ່ຈຳເປັນຕ້ອງການນັ້ນມັນຝ່າຝືນຕໍ່ຄວາມຈິງ; ຄຳເວົ້າເຫລົ່ານັ້ນ ແມ່ນໃສ່ຫລອກຫລວງມະຫາຊົນ ອັນກ້ວາງຂວາງ.

ເໝືອນກັບພາກພື້ນແຫ່ງອື່ນໆຂອງໂລກພວກເຮົາຕ້ອງການໃຫ້ໄດ້ມີສັນຕິພາບອັນຖາວອນ ໃນທະວີບຢູລົບ.(ຕົບມືຢ່າງຍືດຍາວ). ອັນນັ້ນເປັນພື້ນຖານຂອງນະໂຍບາຍຕ່າງປະເທດ - ຂອງພວກເຮົາ, ເປັນແກ່ນແທ້ຂອງມັນ. ພວກເຮົາປະຕິບັດ-ນະໂຍບາຍແນວນີ້ ຢ່າງສຸດກົກສຸດປາຍ ແລະເຂັ້ມງວດ.

ໃນຖານະເປັນປະທານສະພາປ້ອງກັນປະເທດ ຂ້າພະເຈົ້າຢາກເວົ້າຢ່າງຈະແຈ້ງວ່າ ໃນໄລຍະເວລາ ໑໐ ປີທີ່ຜ່ານມາ ຈຳນວນອາວຸດນິວຄະເລັຍຊັ້ນກາງ ທີ່ຕັ້ງຢູ່ໃນພາກຢູລົບ ແຫ່ງ ສ.ສ.ສ.ຊ. ບໍ່ໄດ້ມີການເພີ່ມຕື່ມຈັກລູກເລີຍບໍ່ວ່າເປັນຈະ-ຫລວດຫລືເຮືອບິນກໍຕາມ. ກົງກັນຂ້າມນັ້ນ ຈຳນວນທີ່ຕັ້ງ ຈະຫລວດຊັ້ນກາງ, ຄວາມເຂັ້ມແຂງທາງດ້ານນິວຄະເລັຍ ຂອງຈະຫລວດເຫລົ່ານັ້ນ ຊ້ຳໄດ້ມີການລຶດຜ່ອນລົງ. ຈຳນວນເຮືອບິນຖິ້ມລະເບີດຊັ້ນກາງ ກໍໄດ້ມີການຫລຸດລົງ.ຄັນເວົ້າກ່ຽວກັບ

ດິນແດນຂອງປະເທດອື່ນໆນັ້ນ ສ.ສ.ສ.ຊ. ບໍ່ເຄີຍຕັ້ງອາວຸດເຫລົ່ານັ້ນ ລົງໃສ່ດິນແດນຕ່າງປະເທດຈັກເທື່ອ. ໃນໄລຍະເວລາຫລາຍປີທີ່ຜ່ານມາ ພວກເຮົາກໍບໍ່ໄດ້ເພີ່ມຕື່ມ ຈຳນວນທະຫານຂອງພວກເຮົາ ໃນດິນແດນຢູລົບພາກກາງ.

ຍິ່ງໄປກວ່ານັ້ນ ພວກເຮົາກຽມພ້ອມທີ່ຈະລົດຜ່ອນ ຈຳນວນອາວຸດນິວຄະເລັຍຊັ້ນກາງ ທີ່ຕັ້ງຢູ່ໃນພາກຕາເວັນຕົກຂອງສ.ສ.ສ.ຊ. ຖ້າຫາກວ່າ ພວກເຂົາຈະບໍ່ຕັ້ງອາວຸດ ນິວຄະເລັຍຊັ້ນກາງຕື່ມອີກ ໃນຢູລົບພາກຕາເວັນຕົກ. (ຕົບມື.)

ຂ້າພະເຈົ້າຢາກປະກາດວ່າ ສ.ສ.ສ.ຊ. ຈະບໍ່ໄດ້ໃຊ້ອາວຸດນິວຄະເລັຍ ເພື່ອໂຈມຕີປະເທດຕ່າງໆ ທີ່ໄດ້ປະຕິເສດ ທີ່ຈະຜະລິດຫລືຊື້ອາວຸດແນວນັ້ນ ແລະບໍ່ໄດ້ມີອາວຸດແນວນັ້ນ ຕັ້ງຢູ່ໃນດິນແດນຂອງຕົນ (ຕົບມື).

ໂດຍຕັ້ງໃຈຢ່າງຈິງບໍລິສຸດໃຈ ທີ່ຈະໄຂເສັ້ນທາງ ແກ່ການຮັບປະກັນການລົດຜ່ອນທາງທະຫານໃນຢູລົບ,ທີ່ຈະສະແດງຕົວຢ່າງທີ່ດີ ໃນການກະທຳຕົວຈິງນັ້ນ, ພາຍຫລັງການປຶກສາຫາລືກັນກັບຜູ້ນຳຂອງ ສ.ປ.ຢ. ແລະບັນດາປະເທດພາຄີ ສົນທິສັນຍາວໍຊໍນັ້ນ. ພວກເຮົາໄດ້ຕົກລົງ ທີ່ຈະລົດຜ່ອນ ຈຳນວນທະຫານໂຊວຽດລົງແຕ່ຝ່າຍດຽວ ໃນຢູລົບພາກກາງ. ໃນໄລຍະເວລາ ໑໒ ເດືອນຕໍ່ມາ ພວກເຮົາຈະໄດ້ຖອນກອງທະຫານໂຊວຽດ ໒໐ ພັນຄົນ, ລົດຕັ້ງ ໑ ພັນຄັນ ແລະອາວຸດຍຸໂທພັນອື່ນໆ ອອກຈາກດິນແດນຂອງ ສາທາລະນະລັດ ປະຊາທິປະໄຕ ເຢຍລະມັນ.

ພວກເຮົາເຊື່ອໝັ້ນວ່າ ການສະແດງເຈດຕະນາລົມ ທີ່ຮັກ
ຫອມສັນຕິພາບ ຂອງ ສ.ສ.ສ.ຊ. ແລະປະເທດພັນທະ ມິດ
ຈະໄດ້ຮັບການສະໜັບສະໜູນ ຈາກປະຊາຊາດຕ່າງໆ ຂອງ
ທະວີບຢູລົບ ແລະທົ່ວໂລກອີກດ້ວຍ (ຕົບມືຢ່າງຟົດຟື້ນ).ພວກ
ເຮົາສະເໜີໃຫ້ລັດຖະບານ ຂອງບັນດາປະເທດພາຄີ ກຸ່ມນາ
ໂຕ ຄວນຕີລາຄາໃຫ້ເໝາະສົມຕໍ່ຂໍ້ສະເໜີນີ້ ຂອງບັນດາປະ
ເທດສັງຄົມນິຍົມ ແລະປະຕິບັດຕາມຕົວຢ່າງອັນດີນັ້ນ. (ຕົບມື
ຢ່າງຍືດຍາວ).

ປະເທດຂອງພວກເຮົາຮຽກຮ້ອງຕ້ອງການ ໃຫ້ເສີມຂະ
ຫຍາຍມາດຕະການຕ່າງໆ ແຫ່ງຄວາມໄວ້ເນື້ອເຊື່ອໃຈ ຕໍ່ກັນ
ແລະກັນ ໃນທະວີບຢູລົບ. ເຊັ່ນ ພວກເຮົາກຽມພ້ອມທີ່ຈະຕົກ
ລົງກັນ ກ່ຽວກັບເລື່ອງທີ່ວ່າ ມັນຄວນແຈ້ງຂ່າວກ່ຽວກັບ ການ
ຊ້ອມລົບໃນໄລຍະກ່ອນ ທີ່ຍາວກ່ວາທີ່ກຳນົດໄວ້ ໃນຂໍ້ຕົກລົງ
ເຮັນຊິນກີ, ແຈ້ງຂ່າວກ່ຽວກັບການຊ້ອມລົບ ຂອງກອງທະ -
ຫານທີ່ປະກອບ ໒໐ ພັນຄົນ (໒໕ ພັນຄົນ ຕາມຂໍ້ຕົກລົງເຮັນ
ຊິນກີ). ພວກເຮົາກຽມພ້ອມ (ທັງສອງຝ່າຍ , ບໍ່ແມ່ນຝ່າຍ
ດຽວ) ທີ່ຈະຕົກລົງກັນ ທີ່ຈະບໍ່ປະຕິບັດການຊ້ອມລົບຂອງກອງ
ທະຫານຂະໜາດ ໔໐-໕໐ ພັນຄົນ.

ແນ່ນອນວ່າ ຂໍ້ສະເໜີຂອງບັນດາປະເທດສັງຄົມນິຍົມກ່ຽວ
ກັບການແຈ້ງຂ່າວກ່ອນ ກ່ຽວກັບການຊ້ອມລົບ ທາງອາກາດ
ແລະທາງທະເລ ທີ່ດຳເນີນໄປໃກ້ກັບນ່ານນ້ຳ ຂອງປະເທດ
ຕ່າງໆ ທີ່ເຂົ້າຮ່ວມໃນກອງປະຊຸມທົ່ວຢູລົບນັ້ນມັນຍັງມີຊີວິດຢູ່.

ນອກຈາກນັ້ນພວກເຮົາຢາກສະເໜີໃຫ້ຝ່າຍຕາເວັນຕົກວ່າ ໃນຂອບເຂດທີ່ກຳນົດໄວ້ ໂດຍອໍ້ຕົກລົງເຮັນຊິນກີ ມັນຄວນຈະແຈ້ງຂ່າວກ່ອນ ບໍ່ພຽງແຕ່ກ່ຽວກັບການຊ້ອມຮົບທີ່ນັ້ນ ຫາກຍັງກ່ຽວກັບການເຄື່ອນໄຫວຂອງກອງທະຫານ ໒໐ ພັນຄົນຂຶ້ນໄປ.

ພວກເຮົາກຽມພ້ອມທີ່ຈະປຶກສາຫາລື ມາດຕະການອື່ນໆ ທີ່ແນ່ໃສ່ປັບປຸງຄວາມໄວ້ເນື້ອເຊື່ອໃຈ ຕໍ່ກັນແລະກັນ ລະຫວ່າງປະເທດຕ່າງໆ, ແນໃສ່ການລຶດຜ່ອນໄພອັນຕະລາຍຂອງການກໍ່ສົງຄາມຂຶ້ນໃນຢູລົບ. ຕາມຄວາມຄິດເຫັນຂອງ ພວກເຮົາບ່ອນທີ່ດີກ່ວາໝູ່ ແກ່ການພິຈາລະນາມາດຕະການຕ່າງໆຂອງການລຶດຜ່ອນຄວາມເຄັ່ງຕຶງ ທາງທະຫານໃນຢູລົບກໍຄືກອງປະຊຸມທົ່ວຢູລົບ ໃນລະດັບທາງການເມືອງ.ພວກເຮົາຄິດວ່າ ບັນຫາວ່າດ້ວຍການກຽມ ແລະການໄຂກອງປະຊຸມນັ້ນເປັນບັນຫາທີ່ສຳຄັນ ແລະ ຮີບດ່ວນ.

ດັ່ງທີ່ຮູ້ກັນດີແລ້ວວ່າ ຍັງຈະມີການເຈລະຈາກັນ ກ່ຽວກັບການຈຳກັດອາວຸດຍຸດທະສາດ ໄລຍະທີສາມ. ພວກເຮົາສະເໜີໃຫ້ເລີ່ມເຈລະຈາກັນ ພາຍຫລັງມີການສັດຕະຍາບັນສົນທິສັນຍາ ກ່ຽວກັບການຈຳກັດອາວຸດຍຸດທະສາດ ໄລຍະທີສອງ. ໃນການເຈລະຈາກັນຄັ້ງນີ້ ພວກເຮົາກຽມພ້ອມທີ່ຈະພິຈາລະນາ ມາດຕະການຕ່າງໆ ຂອງການຈຳກັດອາວຸດແບບຂ້າມທະວີບ ແລະອາວຸດຊະນິດອື່ນໆ–ໂດຍອີງໃສ່ສະພາບຕົວຈິງ ແລະອີງໃສ່ການປະຕິບັດຫລັກການສະເໝີພາບກັນ ທາງດ້ານການປ້ອງກັນຄວາມປອດໄພ ຂອງປະເທດໃຜລາວ.

ສ.ສ.ສ.ຊ.,ສ.ປ.ຢ.,ປະເທດສັງຄົມນິຍົມອື່ນໆຂອງທະວີບຢູໂຣບ ພາກັນສະເໜີໃຫ້ເດີນຕາມເສັ້ນທາງ ອັນສະຫວ່າງແຈ້ງ ຄື ການຮັບປະກັນຊີວິດສະຫງົບສຸກ ແລະຄວາມປອດໄພແກ່ບັນດາປະຊາຊາດຢູໂຣບ (ຕົບມືຢ່າງຍືດຍາວ). ບັນດາປະເທດຝ່າຍຕາເວັນຕົກຄວນຕອບຄຳສະເໜີດັ່ງກ່າວ ເຊິ່ງ ຈະສ່ອງແສງໃຫ້ເຫັນວ່າ ພວກເຂົາຕ້ອງການເອົາໃຈໃສ່ ຕໍ່ເຈດຕະນາລົມ ແລະຜົນປະໂຫຍດອັນພົ້ນຖານຂອງບັນດາປະຊາ - ຊາດຫລືບໍ່. ພວກເຮົາຫວັງວ່າ ຄວາມຮູ້ສະພາບຕົວຈິງ,ມັນສະໝອງອັນດີທາງດ້ານລັດ, ມັນສະໝອງອັນດີຂອງມະນຸດ ຈະຕ້ອງເອົາຊະນະ.(ຕົບມືຢ່າງຍືດຍາວ).

ບັນດາສະຫາຍທີ່ຮັກແພງ !

ໃນໂລກອັນຝົດຟື້ນປະຈຸບັນນີ້ ພວກເຮົາ, ການຮ່ວມສຳພັນສັງຄົມນິຍົມ, ພວມມີພື້ນຖານທີ່ໝັ້ນຄົງ ເຊິ່ງແມ່ນພວກເຮົາ-ເອງໄດ້ສ້າງຕັ້ງຂຶ້ນ ໂດຍການຂະຫຍາຍເສດຖະກິດ, ປະຊາທິປະໄຕ ສັງຄົມນິຍົມ, ການປັບປຸງສະວັດດີພາບ ຂອງປະຊາຊົນ, ການປັບປຸງຄວາມເຂັ້ມແຂງທາງດ້ານການປ້ອງກັນ ຕົວຢ່າງເນື່ອງນິດລຽນຕິດ. ພວກເຮົາມີສາຍສຳພັນອັນເລິກເຊິ່ງແລະຫລາຍຮູບຫລາຍສີ; ພວກເຮົາຖອດຖອນບົດຮຽນ ນຳກັນໃນການຮ່ວມມືກັນ ໃຫ້ມັນນັບມື້ນັບດີຍິ່ງຂຶ້ນ.

ລັດທິສາກົນສັງຄົມນິຍົມ ເປັນກຳລັງທາງການເມືອງ ແລະທາງຈິດໃຈທີ່ສ້າງເງື່ອນໄຂແກ່ພວກເຮົາທີ່ຈະຍາດເອົາໄຊຊະນະຫລາຍຢ່າງ ໃນການຕໍ່ສູ້ເພື່ອສັນຕິພາບ ແລະ ຄວາມກ້າວ

ໜ້າທາງສັງຄົມ. (ຕົບມືຢ່າງຍືດຍາວ).

ມັນດີວ່າ ງານບຸນຂອງ ສ.ປ.ຢ. ພວມດຳເນີນໄປໃນບັນຍາກາດ ແຫ່ງນ້ຳໃຈສາກົນນິຍົມທີ່ແທ້ຈິງ.(ຕົບມືຢ່າງຍືດຍາວ).

ສາທາລະນະລັດ ປະຊາທິປະໄຕ ເຢຍລະມັນ ທີ່ເປັນປ້ອມປືນທີ່ໝັ້ນຄົງ ຂອງສັນຕິພາບ ແລະສັງຄົມນິຍົມໃນທະວີບຢູໂລບ ຈົ່ງໝັ້ນຍືນ. (ຕົບມືຢ່າງຟົດຟື້ນ).

ມິດຕະພາບລະຫວ່າງ ສ.ສ.ສ.ຊ. ກັບສາທາລະນະລັດ-ປະຊາທິປະໄຕ ເຢຍລະມັນ, ລະຫວ່າງພັກ ມາກ - ເລນິນ ຂອງພວກເຮົາ ຈົ່ງໄດ້ຮັບການປັບປຸງ ໃຫ້ແໜ້ນແຟ້ນຍິ່ງຂຶ້ນ! (ຕົບມືຢ່າງຟົດຟື້ນ).

ການຮ່ວມສຳພັນຂອງບັນດາປະເທດ ສັງຄົມນິຍົມ ອັນຮຸ່ງເຮືອງເຫລືອງເຫລືອມ ຈົ່ງໝັ້ນຍືນ! (ຕົບມືຢ່າງຟົດຟື້ນ).

ສັນຕິພາບແລະລັດທິກອມມູນິດ ຈົ່ງໝັ້ນຍືນ! (ຕົບມືຢ່າງຟົດຟື້ນ; ບັນດາຜູ້ເຂົ້າຮ່ວມປະຊຸມ ລຸກຂຶ້ນຢືນ.).

ໜັງສືພິມ "ປະລາວະດາ",
ວັນທີ ໗ ເດືອນຕຸລາ ໑໙໗໔

2K/VIII
ຫ້າມຈຳໜ່າຍ

ສານເຖິງບັນດາຜູ້ເຂົ້າຮ່ວມກອງປະຊຸມ
ສະພາສັນຕິພາບຂອງໂລກ

ບັນດາເພື່ອນມິດທີ່ເຄົາລົບ !

ຂໍສະແດງຄວາມເຄົາລົບຕໍ່ບັນດາທ່ານ ທີ່ໄດ້ອຸທິດກຳລັງວັງຊາຂອງຕົນ ເພື່ອເປັນຜົນປະໂຫຍດແຫ່ງພາລະກິດ ອັນສູງສົ່ງທີ່ໜ້າປາຖະໜາ ຄືການຕໍ່ສູ້ເພື່ອສັນຕິພາບອັນເປັນທຳ ແລະ ຖາວອນໃນທົ່ວໂລກ. ຂະບວນການຂອງພວກທ່ານ ເຊິ່ງ ສະຫລອງວັນຈັດຕັ້ງຄົບຮອບ ໜ໐ ປີໃນປີນີ້ໄດ້ປະກອບສ່ວນອັນ ດີເດັ່ນເຂົ້າໃນການຕໍ່ສູ້ດັ່ງກ່າວມານັ້ນ.

ບັນດາທ່ານໄດ້ໂຮມກັນຢູ່ເມືອງຫລວງ ແຫ່ງ ສາທາລະນະລັດປະຊາທິປະໄຕເຢຍລະມັນ ເພື່ອແລກປ່ຽນຄວາມຄິດຄວາມເຫັນກ່ຽວກັບບັນຫາອັນຮີບດ່ວນ ຂອງຊີວິດ ທາງສາກົນ, ເພື່ອຄົ້ນຄ້ວາທ່າອຽງທີ່ສຳຄັນຂອງການຜັນແປທາງດ້ານການເມືອງສາກົນ ແລະເພື່ອກຳນົດຖານະບົດບາດ ແລະເປົ້າໝາຍຂອງພວກທ່ານໃນການຕໍ່ສູ້ຂອງກຳລັງຕ່າງໆໃນທົ່ວໂລກ. ອັນ ນັ້ນເປັນສິ່ງທີ່ສຳຄັນເປັນພິເສດ ຍ້ອນວ່າໃນປະຈຸບັນນີ້ ຂະບວນວິວັດແຫ່ງການລຶດຜ່ອນຄວາມເຄັ່ງຕຶງຖືກກົ້ນກາງ. ການກະທຳ

ຕອບຂອງສະຫາຍລ.ອີ.ບະເລັດຊະເນັບຄຳສຳພາດ ຂອງນັກສື່ຂ່າວໜັງສືພິມ "ປະລາວະດາ" ວັນທີ ໖ ເດືອນພະຈິກປີ ໑໙໗໙

ຖາມ: ໃນຄຳປາໄສຂອງທ່ານໃນວັນທີ ໖ ເດືອນຕຸລາປີນີ້ ໃນນະຄອນແບັກແລັງນັ້ນ ທ່ານໄດ້ປະກາດເຖິງຄວາມ ກຽມພ້ອມຂອງສະຫະພາບໂຊວຽດ ທີ່ຈະລົດຜ່ອນຈຳນວນອາວຸດນິວຄະເລຍຂະໜາດກາງທີ່ຕັ້ງຢູ່ໃນພາກຕາເວັນຕົກແຫ່ງ ສ.ສ. ສ.ຊ. ລົງ ຖ້າຫາກອາວຸດນິວຄະເລຍ ຂະໜາດກາງ ບໍ່ໄດ້ຕິດຕັ້ງຢູ່ໃນຢູໂຣບຕາເວັນຕົກອີກຕໍ່ໄປ. ທ່ານມີຄວາມ ຄິດເຫັນແນວໃດກ່ຽວກັບເລື່ອງທີ່ວ່າ ມັນສາມາດລົງມືແກ້ໄຂບັນຫາ ນີ້ດ້ວຍວິທີການແນວໃດ ?

ຕອບ: ຂໍ້ສະເໜີຂອງພວກເຮົາໃນນະຄອນແບັກແລັງ ແນໃສ່ຊຸກຍູ້ການແກ້ໄຂບັນດາບັນຫາທັງຫລາຍ ທີ່ກ່ຽວຂ້ອງກັບບັນຫາການລົດຜ່ອນຄວາມເຄັ່ງຕຶງທາງດ້ານທະຫານ ແລະ ການລົດຜ່ອນອາວຸດລົງໃນພາກພື້ນຢູໂຣບ. ຄວາມຄິດເຫັນບາງຢ່າງກ່ຽວກັບຂໍ້ສະເໜີດັ່ງກ່າວ ເຊິ່ງໄດ້ຖືກປະກາດອອກ ໃນໝໍ່ໆມານີ້ນັ້ນ ສະແດງໃຫ້ເຫັນວ່າ ບັນດາຜູ້ຄົນທີ່ຮັກຫອມສັນຕິພາບ ແລະຄວາມປອດໄພໃນຢູໂຣບຕ່າງກໍໄດ້ເຂົ້າໃຈ ຂໍ້ສະເໜີ ນັ້ນ

ຢ່າງຖືກຕ້ອງເໝາະສົມ. ໄປພ້ອມໆກັນນັ້ນ ພັກພວກ ທີ່ ມຸ່ງໜ້າໄປຕາມເສັ້ນທາງແຫ່ງການຂະຫຍາຍການສ້າງອາວຸດໃນຢູລົບ ເປັນຕົ້ນແມ່ນໃນດ້ານອາວຸດນິວຄະເລັຍ ຂະໜາດກາງ ບໍ່ພໍໃຈນຳຂໍ້ສະເໜີດັ່ງກ່າວນັ້ນ.

ສ່ວນວິທີການແກ້ໄຂບັນຫາກ່ຽວກັບອາວຸດຊະນິດນັ້ນ ມັນມີແຕ່ເສັ້ນທາງອັນດຽວທີ່ນັ້ນ ຄື ການເຈລະຈາກັນ.ສະຫະພາບໂຊວຽດຄິດວ່າ ພວກເຮົາຄວນເລີ່ມເຈລະຈາກັນ ໃນທັນທີ . ພວກເຮົາກຽມພ້ອມທີ່ຈະເຈລະຈາກັນ ແລະລໍຖ້າຄຳຕອບຂອງຝ່າຍຕາເວັນຕົກ. ສິ່ງສຳຄັນທີ່ສຸດແມ່ນບໍ່ຄວນປະຕິບັດການກະທຳທີ່ອາດເຮັດໃຫ້ສະຖານະການຮ້າຍແຮງຂຶ້ນ, ມັນອາດ ຂັດຂວາງຜົນປະໂຫຍດນີ້ໄດ້. ຖ້າຫາກວ່າ ບໍ່ມີການຕັດສິນໃຈ ທີ່ຈະຜະລິດແລະຕິດຕັ້ງອາວຸດຊະນິດນັ້ນ ຢູ່ໃນຢູລົບພາກຕາເວັນຕົກ ກ່ອນການເຈລະຈາກັນນັ້ນແລ້ວ ພວກເຮົາ ກໍ່ຈະໄດ້ ມີຄວາມສາມາດທີ່ຈະໄດ້ຮັບຜົນດັ່ງກ່າວມາເທິງນັ້ນ ຫລາຍກ່ວາ; ກົງກັນຂ້າມນັ້ນ ຖ້າຫາກວ່າ ໄດ້ມີການຕັດສິນໃຈເລື່ອງນີ້ຢູ່ໃນກຸ່ມນາໂຕແລ້ວ ພວກເຮົາກໍ່ຈະບໍ່ມີຄວາມສາມາດ ທີ່ຈະໄດ້ຮັບຜົນເຊັ່ນນັ້ນ.

ມັນຕ້ອງເວົ້າກ່ຽວກັບບັນຫາໜຶ່ງອີກ.

ສະຫະພາບໂຊວຽດ, ບັນດາປະເທດຕ່າງໆ ຂອງສົນທິສັນຍາວໍຊໍ ໄດ້ສະເໜີແກ່ບັນດາປະເທດພາຄີ ກອງປະຊຸມທົ່ວຢູລົບ ໃຫ້ປະຕິເສດໃຊ້ອາວຸດນິວຄະເລັຍ ແລະ ອາວຸດທີ່ບໍ່ແມ່ນນິວຄະເລັຍກ່ອນຜູ້ອື່ນ. ພວກເຮົາຍັງບໍ່ທັນໄດ້ຮັບຄຳຕອບ

ຕໍ່ຂໍ້ສະເໜີນີ້ເທື່ອ. ຂ້າພະເຈົ້າຢາກກ່າວເນັ້ນ ດ້ວຍຄວາມຮູ້ສຶກລັບຜິດຊອບຄັ້ງໃໝ່ອີກວ່າ ເຖິງແມ່ນແນວນັ້ນກໍ່ຕາມ ສະຫະພາບໂຊວຽດຈະບໍ່ໃຊ້ອາວຸດນິວຄະເລັຍ ເພື່ອຕ້ານປະເທດຕ່າງໆທີ່ປະຕິເສດຜະລິດ ຫຼືຊື້ອາວຸດຊະນິດນັ້ນ ແລະ ບໍ່ມີອາວຸດຊະນິດນັ້ນ ຕັ້ງຢູ່ໃນດິນແດນຂອງປະເທດນັ້ນ. ພວກເຮົາກຽມພ້ອມທີ່ຈະເຮັດຂໍ້ຕົກລົງແນວນັ້ນກັບປະເທດໃດໜຶ່ງທີ່ສົນໃຈໃນບັນຫານີ້ ເຊັ່ນດຽວກັນ.

ໜັງສືພິມ "ປະລາວະດາ"
ວັນທີ ໙ ເດືອນພະຈິກ
ປີ ໑໙໗໙

ຕອບຂອງລ.ອີ.ບະເລັດຈະເນັບຄຳສຳພາດ ຂອງຜູ້ສື່ຂ່າວຂອງໜັງສືພິມ "ປະລາວະດາ"

ວັນທີ ໑໓ ເດືອນມັງກອນ ປີ ໑໙໘໐

ຖາມ: ທ່ານເລໂອນິດ ອີລິດ, ທ່ານມີຄວາມຄິດເຫັນແນວໃດ ກ່ຽວກັບສະຖານະການທາງສາກົນ ໃນປະຈຸບັນນີ້ພາຍຫລັງການກະທຳຄັ້ງສຸດທ້າຍ ຂອງລັດຖະບານອາເມລິກາ.

ຕອບ: ການປະຕິບັດທິດທາງຂອງພັກເຮົາ ຢ່າງສຸດກົກສຸດປາຍ ແລະຢ່າງມີຫົວຄິດປະດິດສ້າງ ເຊິ່ງແນ່ໃສ່ປັບປຸງ ສັນຕິພາບ, ການຜ່ອນຄາຍຄວາມເຄັ່ງຕຶງ ແລະການປົດອາວຸດ , ແນ່ໃສ່ເຮັດໃຫ້ໂຄງການສັນຕິພາບ ຂອງກອງປະຊຸມພັກ ຄັ້ງທີ XXIV ແລະ XXV ນັ້ນ ໄດ້ກໍ່ໃຫ້ເກີດຜົນດີຫລາຍປະການແລ້ວ. ເວົ້າຢ່າງຫຍໍ້ໆ ຫລືເວົ້າກ່ຽວກັບສິ່ງທີ່ສຳຄັນກວ່າໝູ່ນັ້ນກໍຄືວ່າ ພວກເຮົາ ສາມາດສະກັດກັ້ນ ການວິວັດທະນາເຫດການໄປຕາມເສັ້ນທາງ ທີ່ຮ້າຍແຮງເປັນປະຈຳ: ໃນສະໄໝກ່ອນໜ້ານີ້ ພວກເຮົາລ້ວນແຕ່ໄດ້ປະເຊີນໜ້າກັບການຕໍ່ເນື່ອງກັນ ລະຫວ່າງສົງຄາມໂລກ ກັບຍາມສັນຕິທີ່ຊົ່ວຄາວແລ້ວກໍປະເຊີນໜ້າກັບສົງຄາມໂລກຄັ້ງໃໝ່ອີກ. ອັນນີ້ເປັນຜົນດີ ອັນເປັນປະຫວັດ

ການເຊິ່ງແມ່ນພວກເຮົາ, ປະຊາຊົນໂຊວຽດ, ບັນດາເພື່ອນມິດຂອງພວກເຮົາ, ບັນດາປະຊາຊົນ ຂອງປະເທດສັງຄົມນິຍົມ - ອ້າຍນ້ອງ, ບັນດາຜູ້ຄົນທີ່ໄດ້ຕໍ່ສູ້ ແລະພວມຕໍ່ສູ້ເພື່ອສັນຕິ - ພາບ, ການລຶດຜ່ອນຄວາມເຄັ່ງຕຶງ, ການຢູ່ຮ່ວມກັນ ລະຫວ່າງປະເທດທີ່ມີລະບອບທາງສັງຄົມແຕກຕ່າງກັນຕ່າງກໍຮູ້ສຶກພາກພູມໃຈເປັນຢ່າງຍິ່ງ.

ມັນເປັນທີ່ໜ້າເສຍດາຍແຕ່ວ່າ ໃນລະຫວ່າງທົດສະວັດ ທີ ໗ ແລະທີ ໘ ສະຖານະການສາກົນໄດ້ຮ້າຍແຮງຂຶ້ນ. ບັນດາປະຊາຊາດຕ້ອງຮູ້ວ່າ ແມ່ນໃຜເປັນຜູ້ທີ່ຮັບຜິດຊອບຕໍ່ເລື່ອງນີ້. ຂ້າພະເຈົ້າຢາກເວົ້າຢ່າງຈະແຈ້ງວ່າ ບັນດາກຳລັງຈັກກະພັດນິຍົມ ເປັນຕົ້ນແມ່ນວົງການທີ່ຮູ້ຈັກກັນ ຂອງສະຫະລັດອາເມລິກາ ເປັນຜູ້ທີ່ຮັບຜິດຊອບຕໍ່ເລື່ອງນີ້. ພັກພວກທີ່ຖືການລຶດຜ່ອນຄວາມເຄັ່ງຕຶງ ວ່າເປັນການຂັດຂວາງຕໍ່ແຜນການ ຮຸກຮານຂອງພວກເຂົາ, ຂັດຂວາງຕໍ່ການກໍ່ບັນຍາກາດນິຍົມສົງຄາມ, ການແຊກແຊງເຂົ້າໃນວຽກງານພາຍໃນ ຂອງບັນດາປະຊາຊາດຕ່າງໆ, ພັກພວກທີ່ລັງເຄີຍບໍ່ເອົາຫົວຊາ ຕໍ່ໂຊກຊາຕາຂອງປະເທດອື່ນໆ, ພັກພວກທີ່ຄິດວ່າ ພວກເຂົາສາມາດປະຕິບັດການ ໃນເວທີສາກົນຕາມໃຈມັກນັ້ນ ພວກເຫຼົ່ານັ້ນ ຈະຕ້ອງເປັນຜູ້ຮັບຜິດຊອບຕໍ່ເລື່ອງນີ້.

ມັນເປັນທີ່ຈະແຈ້ງວ່າ ໃນເວລາມໍ່ໆມານີ້ ວົງການປົກຄອງຂອງສະຫະລັດອາເມລິກາ ແລະປະເທດອື່ນໆ ຂອງກຸ່ມນາໂຕໄດ້ມຸ່ງໜ້າໄປຕາມເສັ້ນທາງ ທີ່ຝືນຕໍ່ການລຶດຜ່ອນຄວາມເຄັ່ງ

ຕຶງ, ເສັ້ນທາງຂອງການຂະຫຍາຍການສ້າງອາວຸດ ເຊິ່ງໄດ້ເພີ່ມທະວີໄພອັນຕະລາຍ ທາງທະຫານຂຶ້ນ. ຂັ້ນຕົ້ນຕໍ ຂອງເລື່ອງນີ້ ກໍຄືການຜ່ານມະຕິວ່າດ້ວຍການເພີ່ມທະວີງົບປະມານທາງທະຫານ ຂອງບັນດາປະເທດພາຄີກຸ່ມນາໂຕຈົນຮອດປາຍສັດຕະວັດທີ XX ໃນການປະຊຸມສະໄໝສາມັນຂອງກຸ່ມນາໂຕໃນເດືອນພຶດສະພາ ປີ ໑໙໗໘ ໃນກຸງວໍຊິງຕັນ. ທ່າອຽງໄປຕາມເສັ້ນທາງນິຍົມສົງຄາມ ແຫ່ງແນວທາງນະໂຍບາຍ ແຫ່ງສະຫະລັດອາເມລິກາ ກໍໄດ້ສະແດງອອກໃນການປະຕິບັດໂຄງການສ້າງອາວຸດ ໄລຍະຍາວຢ່າງວ່ອງໄວ, ໃນການສ້າງຖານທັບແຫ່ງໃໝ່ໆ ທີ່ຕັ້ງຢູ່ຫ່າງໄກຈາກດິນແດນອາເມລິກາ ມັນລວມທັງໃນພາກພື້ນຕາເວັນອອກກາງ ແລະມະຫາສະມຸດ ອິນເດຍ, ໃນການສ້າງຕັ້ງອັນທີ່ເອີ້ນວ່າ "ກອງທັບໂຕ້ຕອບຢ່າງໄວ" ເຊິ່ງເປັນເຄື່ອງມືອັນໜຶ່ງ ຂອງນະໂຍບາຍແຊກແຊງ-ທາງດ້ານທະຫານ.

ສ່ວນສົນທິສັນຍາວ່າດ້ວຍການຈຳກັດອາວຸດ ຍຸດທະສາດຂັ້ນ II ເຊິ່ງເປັນເອກະສານທີ່ສຳຄັນໆນັ້ນ ການເຮັດໃຫ້ສົນທິສັນຍາດັ່ງກ່າວ ປາກົດເປັນຈິງ ຈະໄດ້ເປີດກ້ວາງເສັ້ນທາງກ້າວໄປສູ່ການປົດອາວຸດ. ດັ່ງທີ່ຮູ້ກັນແລ້ວວ່າ ສົນທິສັນຍາດັ່ງກ່າວໄດ້ຮັບການສະໜັບສະໜູນຈາກທົ່ວໂລກ ນັບລວມທັງຈາກປະເທດພັນທະມິດຂອງສະຫະລັດອາເມລິກາ ໃນກຸ່ມນາໂຕ, ປະເທດຕ່າງໆ ແລະວົງການມະຫາຊົນອັນກ້ວາງຂວາງ ທາງສາກົນອີກດ້ວຍ. ລັດຖະບານຂອງຊີມີ ກາເຕີ ໄດ້ມີທ່າທີແນວໃດ

ຊາຊົນອາຟະການິສະຖານທີ່ໄດ້ຕົກຢູ່ໃນສະພາບການ ທີ່ຮ້າຍ-ແຮງ. ທຸກຄົນຮູ້ດີແລ້ວວ່າ ຄຳເວົ້າຂອງພວກເຂົາ ບໍ່ໄກຈາກການກະທຳຂອງພວກເຂົາຈັກເທື່ອ.

ການກະທຳຂອງອາມິນ ໄດ້ຊຸກຍູ້ໃຫ້ມີການຮຸກຮານຕ້ານປະເທດອາຟະການິສະຖານ. ອາມິນໄດ້ຍຶດອຳນາດແລ້ວກໍ່ໄດ້ເປີດຂັ້ນລົບປາບປາມຊົນຈຸ້ມຕ່າງໆ ອັນກວ້າງຂວາງຂອງສັງຄົມອາຟະການິສະຖານ, ປາບປາມພະນັກງານຂອງພັກ ແລະ ທະຫານ, ພວກປັນຍາຊົນ, ພະສົງ ເຊິ່ງໄດ້ເປັນຈຸ້ມຄົນພື້ນຖານຂອງການປະຕິວັດເດືອນເມສາ. ດ້ວຍເຫດນັ້ນ ປະຊາຊົນອາຟະການິສະຖານ ພາຍໃຕ້ການນຳພາຂອງພັກ ປະຊາທິປະໄຕປະຊາຊົນ ໂດຍແມ່ນ ບົບລັກ ກາມານ ເປັນຫົວໜ້າ ໄດ້ລຸກຂຶ້ນຕໍ່ສູ້ຕ້ານອຳນາດຜະເດັດການຂອງອາມິນແລ້ວກໍ່ໄດ້ໂຄ່ນລົ້ມອຳນາດນັ້ນ. ໃນປະຈຸບັນນີ້ ມີພັກພວກໃນກຸງວໍຊິງຕັນແລະນະຄອນຫລວງອື່ນໆ ພາກັນອິດູສົງສານອາມິນ ເຊິ່ງໄດ້ເປີດໜ້າກາກອັນແທ້ຈິງຂອງພວກເຂົາ. ພັກພວກເຫລົ່ານັ້ນໄດ້ຢູ່ໃສໃນເມື່ອອາມິນປະຕິບັດການປາບປາມມະຫາຊົນ, ໄດ້ບັງຄັບໃຫ້ຕາລາກີ ອອກຈາກອຳນາດແລ້ວ ກໍໄດ້ຂ້າຕາລາກີຕາຍເຊິ່ງໄດ້ເປັນຜູ້ສ້າງຕັ້ງສັດອາຟະການິສະຖານ ລັດໃໝ່ຂຶ້ນ.

ການຮຸກຮານຕ່າງປະເທດອັນເນື່ອງນິດ, ການຄົບຄິດກັນຂອງບັນດາກຳລັງປະຕິການພາຍນອກ ຕ່າງກໍໄດ້ເກີດ ໄພ-ອັນຕະລາຍທີ່ແທ້ຈິງ ແກ່ເອກະລາດຂອງປະເທດອາຟະການິ-ສະຖານ, ໄພອັນຕະລາຍ ຂອງການເຮັດໃຫ້ປະເທດອາຟະ-

ການີສະຖານ ກາຍເປັນປ້ອມໜັ້ນຈັກກະພັດນິຍົມທີ່ຕັ້ງຢູ່ໃກ້ກັບ ຊາຍແດນພາກໃຕ້ຂອງປະເທດເຮົາດ້ວຍເຫດນັ້ນເຫດການໄດ້ ມາຮອດບ່ອນວ່າ ພວກເຮົາບໍ່ອາດທີ່ຈະບໍ່ຕອບຕໍ່ຄຳຮ້ອງຂໍການ ຊ່ວຍເຫລືອຂອງລັດຖະບານ ແຫ່ງອາຟະການີສະຖານ ທີ່ເປັນ ປະເທດເພື່ອນມິດຂອງພວກເຮົາໄດ້. ຄັນບໍ່ເຮັດແນວນີ້ໝາຍ ເຖິງວ່າ ພວກເຮົາຈະປະຖິ້ມປະເທດອາຟະການີສະຖານ ໃຫ້ ຖືກປາບປາມດ້ວຍກຳລັງຈັກກະພັດນິຍົມ,ໝາຍເຖິງວ່າ ອະນຸ ຍາດໃຫ້ບັນດາກຳລັງຣຸກຮານ ເຮັດເໝືອນກັບປະເທດ ຊີລີ ເຊິ່ງໃນນັ້ນ ເສລີພາບຂອງປະຊາຊົນ ໄດ້ຖືກຈົມຢູ່ໃນເລືອດ- ຂອງປະຊາຊົນ. ຄັນບໍ່ເຮັດແນວນີ້ ໝາຍເຖິງວ່າ ພວກເຮົາ ບໍ່ເອົາຫົວຊາຕໍ່ການທີ່ບໍ່ເກີດໄພອັນຕະລາຍ ແກ່ຄວາມປອດໄພ ຂອງປະເທດໂຊວຽດ ເຊິ່ງໄດ້ກຳເນີດຂຶ້ນ ໃນຊາຍແດນພາກ ໃຕ້ ຂອງປະເທດເຮົາ.

ໃນເມື່ອຂໍການຊ່ວຍເຫລືອນຳພວກເຮົານັ້ນ ປະເທດອາຟະ ການີສະຖານ ໄດ້ອີງໃສ່ຂໍ້ມາດຕາທີ່ຈຸດແຈ້ງ ຂອງສົນທິສັນຍາ ວ່າດ້ວຍມິດຕະພາບ, ຄວາມເປັນເພື່ອນບ້ານທີ່ດີ ແລະ ການ ຮ່ວມມືກັນ ເຊິ່ງ ສ.ສ.ສ.ຊ. ແລະອາຟະການີສະຖານ ໄດ້ ເຮັດໃນເດືອນທັນວາ ປີ ໑໙໗໘ , ໄດ້ອີງໃສ່ສິດຂອງທຸກປະ ເທດ–ໂດຍຖືກຕ້ອງຕາມກົດບັດຂອງອົງການສະຫະປະຊາຊາດ –ທີ່ຈະຈັດຕັ້ງການປ້ອງກັນຕົວແບບຝ່າຍດຽວ ຫລືແບບລວມຄະ ນະ ເຊິ່ງໄດ້ເປັນສິດໜຶ່ງທີ່ປະເທດຕ່າງໆ ໄດ້ນຳໃຊ້ຫລາຍ ຄັ້ງແລ້ວ .

ການຕັດສິນໃຈວ່າ ຕ້ອງສົ່ງກອງທະຫານໂຊວຽດເຂົ້າສູ່ດິນແດນອາຟະການິສະຖານ ອັນນັ້ນມັນບໍ່ແມ່ນເລື່ອງ ທີ່ງ່າຍດາຍສຳຫລັບພວກເຮົາ. ສູນກາງພັກ, ລັດຖະບານໂຊວຽດ ເຂົ້າໃຈຄວາມຮັບຜິດຊອບຂອງຕົນ, ຄິດຄົ້ນສະພາບການທົ່ວໆ ໄປຢ່າງຖີ່ຖ້ວນກ່ອນ. ກອງທະຫານໂຊວຽດ ມີເປົ້າຫມາຍອັນ - ດຽວທີ່ນັ້ນ ຄືການຊ່ວຍເຫລືອປະຊາຊົນ ອາຟະການິສະ ຖານໃນການຕ້ານການຮຸກຮານຕ່າງປະເທດ. ໃນເມື່ອບັນດາສາຍເຫດທີ່ບັງຄັບໃຫ້ເຈົ້າຫນ້າທີ່ອາຟະການິສະຖານ ຂໍການຊ່ວຍ-ເຫລືອ ຫມົດຄວາມຈຳເປັນໄປແລ້ວ ກອງທະຫານໂຊວຽດ ກໍຈະຖືກຖອນອອກຈາກອາຟະການິສະຖານ ໂດຍສົມເຊີງ.

ໂຄສະນາການຂອງພວກຈັກກະພັດນິຍົມ ແລະພວກປັກກິ່ງ-ຕັ້ງຫນ້າໃສ່ຮ້າຍປ້າຍສີຖານະບົດບາດ ຂອງສະຫະພາບ ໂຊວຽດ ໃນເລື່ອງອາຟະການິສະຖານ ຢ່າງຊົ່ວຮ້າຍທີ່ສຸດ.

ແນ່ນອນວ່າ ບໍ່ມີ "ການແຊກແຊງຂອງໂຊວຽດ", ບໍ່ມີ "ການຮຸກຮານ"; ຄວາມຈິງຢູ່ບ່ອນວ່າ ຕາມຄຳຮ້ອງຂໍ ຂອງລັດຖະບານອາຟະການິສະຖານ ພວກເຮົາພວມຊ່ວຍເຫລືອອາຟະການິສະຖານ ໃນການປ້ອງກັນເອກະລາດແຫ່ງຊາດ,ເສລີພາບແລະກຽດສັກສີຂອງອາຟະການິສະຖານ ຕ້ານການກະທຳແບບຮຸກຮານຈາກພາຍນອກ.

ຕໍ່ໄປນັ້ນ, ເຫດການອາຟະການິສະຖານ ບໍ່ແຕະຕ້ອງຜົນ-ປະໂຫຍດຂອງຊາດ ຫລືຄວາມປອດໄພ ຂອງສະຫະລັດອາເມລິກາ ແລະປະເທດອື່ນໆຈັກເທື່ອ.ຄວາມພະຍາຍາມ ທີ່ນຳເອົາ

ເລື່ອງອື່ນໆຂຶ້ນມາເວົ້າ ຫມາຍເຖິງຄວາມບໍ່ຈິງໃຈເຊິ່ງແນ່ໃສ່ປົກປິດແຜນການຈັກກະພັດນິຍົມ.

ຄຳເວົ້າວ່າສະຫະພາບໂຊວຽດ ມີແຜນການແບບຂະຫຍາຍອິດທິພົນກ່ຽວກັບປະເທດປະກິດສະຖານອິລານແລະປະເທດອື່ນອື່ນ ຂອງພາກພື້ນນີ້ຂອງໂລກນັ້ນ ທັງຫມົດເຫລົ່ານັ້ນ ລ້ວນແຕ່ເປັນຄວາມບໍ່ຈິງຈັກນ້ອຍ, ພວກເຮົາຕ້ານກັບນະໂຍບາຍ,ຈິດໃຈຂອງພວກລ່າເມືອງຂຶ້ນ. ພວກເຮົາບໍ່ຢາກຍຶດດິນແດນຕ່າງປະເທດ, ບໍ່ຢາກຍຶດຊັບສົມບັດຂອງປະເທດອື່ນໆ.ອັນນັ້ນເປັນຂອງພວກລ່າເມືອງຂຶ້ນທີ່ຢາກກຳເອົານ້ຳມັນກາດ ຂອງປະເທດອື່ນໆ.

ພັກພວກທີ່ໄດ້ກໍ່ "ສົງຄາມເປິະເປື້ອນ" ຕ້ານຫວຽດນາມ, ບໍ່ໄດ້ເອົາຫົວຊາຕໍ່ການທີ່ພວກຈີນໄດ້ຮຸກຮານດ້ວຍກຳລັງອາວຸດເຂົ້າໃນຫວຽດນາມສັງຄົມນິຍົມ,ຮັກສາຖານທັບເປັນຫລາຍສິບປີ ໃນດິນແດນກູບາ ເຊິ່ງເປັນການກະທຳ ທີ່ຝືນຕໍ່ຄວາມມຸ່ງ-ມາດປາຖະຫນາຂອງປະຊາຊົນ ແລະລັດຖະບານກູບາ, ສະແດງກຳລັງອາວຸດ, ນາບຂູ່ດ້ວຍການຈັດຕັ້ງການປິດລ້ອມ,ບີບບັງຄັບທາງດ້ານທະຫານ ແກ່ປະຊາຊົນ ປະຕິວັດຂອງປະເທດອີລັງ ໂດຍໄດ້ສົ່ງກອງເຮືອລົບຂະຫຍາດໃຫຍ່ທີ່ປະກອບອາວຸດນິວຄະເລັຍ ນັບລວມທັງໄດ້ສົ່ງເຮືອບັນທຸກຍົນລົບຫຼາຍລຳເຂົ້າໄປໃນຫນ້ານ້ຳອີລັງ ພັກພວກເຫລົ່ານັ້ນ ເວົ້າປິ້ນຄວາມ ຈິງແລະປ່າວຮ້ອງເຖິງ "ໄພອັນຕະລາຍໂຊວຽດ" ທີ່ມີຕໍ່ສັນຕິ-ພາບແລະພວກເຂົາພະຍາຍາມຕີຕົວວ່າ ພວກເຂົາເປັນພວກ

ທີ່ປົກປັກຮັກສາຄວາມເປັນທຳ ໃນເວທີສາກົນ.

ມີເລື່ອງໜຶ່ງອີກທີ່ຄວນເວົ້າເຖິງນັ້ນກໍຄືວ່າ ການແຊກແຊງເຂົ້າໃນວຽກງານພາຍໃນຂອງປະເທດອາຟະການິສະຖານໄດ້ປາກົດເປັນຈິງແລ້ວ. ອົງການທີ່ນັບຖືຢ່າງສູງສົງຄືອົງການສະຫະປະຊາຊາດ ກໍໄດ້ຖືກນຳໃຊ້ ເພື່ອຊຸກຍູ້ການແຊກແຊງ ດັ່ງກ່າວນັ້ນ. ການທີ່ອົງການສະຫະປະຊາຊາດ ໄດ້ພິຈາລະນາ-ອັນທີ່ເອີ້ນວ່າ "ບັນຫາອາຟະການິສະຖານ" ໂດຍຝືນຕໍ່ການຕ້ານຄືນຂອງລັດຖະບານ ອາຟະການິສະຖານນັ້ນ ມັນບໍ່ເປັນການລ່ວງລະເມີດສິດເອກະລາດ ຂອງປະເທດອາຟະການິສະຖານບໍ່ ?

ລັດຖະບານອາຟະການິສະຖານ, ຜູ້ແທນທີ່ມີອຳນາດ ເຕັມຂອງປະເທດອາຟະການິສະຖານ ປະກາດຢ່າງຈະແຈ້ງວ່າ ຂໍໃຫ້ປະປ່ອຍພວກເຮົາ; ກອງທະຫານໂຊວຽດໄດ້ເຂົ້າໃນ ປະເທດເຮົາ ໂດຍຖືກຕ້ອງຕາມຄຳຮ້ອງຂໍຂອງພວກເຮົາ ຕາມສົນທິສັນຍາ ອາຟະການິສະຖານ-ໂຊວຽດ, ຕາມມາດຕາ ທີ ໕໑ ຂອງກົດບັດຂອງອົງການສະຫະປະຊາຊາດ.

ໂດຍໃຊ້ຄຳໂຄສະນາດັ່ງກ່າວມາເທິງນັ້ນ ໃຫ້ເປັນສາກບັງໜ້ານັ້ນ ພວກເຂົາພວມເພີ່ມທະວີການຊ່ວຍເຫລືອແກ່ພັກພວກທີ່ແຊກແຊງເຂົ້າໃນປະເທດອາຟະການິສະຖານ,ປະຕິບັດການກະທຳຮຸກຮານ ຕ້ານອຳນາດການປົກຄອງທີ່ຖືກຕາມກົດໝາຍ. "ທຳນຽບຂາວ" ຂອງວໍຊິງຕັນ ໄດ້ປະກາດໃນມໍ່ໆມານີ້ ເຖິງຄວາມຕົກລົງ ທີ່ຈະເພີ່ມທະວີການສົ່ງອຸປະກອນທາງທະຫານທີ່

ຈຳເປັນແກ່ການກະທຳແນວນັ້ນ.ບັນດາໜັງສືພິມຕ່າງໆ ຂອງຝ່າຍຕາເວັນຕົກ ໄດ້ແຈ້ງຂ່າວວ່າ ໃນລະຫວ່າງການ ຢ້ຽມຢາມປັກກິ່ງ ໃນມໍ່ໆມານີ້ ລັດຖະມົນຕີວ່າການປ້ອງກັນປະເທດແຫ່ງສະຫະລັດອາເມລິກາ ໄດ້ຄົບຄິດກັບຜູ້ນຳປັກກິ່ງ ກ່ຽວກັບການຮ່ວມມືກັນ ໃນການປະຕິບັດການກະທຳເຫລົ່ານັ້ນ.

ສຸດທ້າຍ,ພວກເຂົາເວົ້າໄດ້ວ່າການໂຕ້ຕອບຂອງພວກຈັກ-ກະພັດປະຕິການ ຕໍ່ເຫດການໃນອາຟະການິສະຖານ ບໍ່ເປັນທີ່ແປກປະຫລາດໃຈ; ອັນນັ້ນສະແດງໃຫ້ເຫັນວ່າແຜນການຂອງພວກຈັກກະພັດ ແລະລູກສະໝູນຂອງພວກເຂົາ ໄດ້ຖືກລົ້ມລະລາຍ ຢ່າງສິ້ນເຊີງ.

ດ້ວຍເຫດນັ້ນ ຈິ່ງຄວນເວົ້າຕື່ມອີກວ່າ ເຫດການໃນອາຟະການິສະຖານ ບໍ່ເປັນສາຍເຫດທີ່ແທ້ຈິງ ຂອງຄວາມຮ້າຍແຮງໃນສະຖານະການທາງສາກົນ.ຄັນບໍ່ມີເຫດການໃນອາຟະການິສະຖານ, ວົງການທີ່ຮູ້ກັນ ໃນສະຫະລັດອາເມລິກາ ແລະກຸ່ມນາໂຕ ກໍຈະໄດ້ຊອກຫາສາຍເຫດປະການອື່ນໆ ເພື່ອຈະເຮັດໃຫ້ສະຖານະການສາກົນ ຮ້າຍແຮງຍິ່ງຂຶ້ນ.

ເວົ້າລວມແລ້ວ, ບັນດາການກະທຳຂອງເຈົ້າໜ້າທີ່ອາເມລິກາ ທີ່ກ່ຽວຂ້ອງກັບເຫດການໃນ ອາຟະການິສະຖານຄືການງົດສົນທິສັນຍາ ວ່າດ້ວຍການຈຳກັດອາວຸດ ຍຸໂທສາດຂັ້ນ ໒, ການປະຕິເສດທີ່ຈະຂາຍສິ່ງຂອງຕ່າງໆ ນັບລວມທັງເຂົ້າບະ-ເລ ແກ່ ສ.ສ.ສ.ຊ. ຕາມຂໍ້ຕົກລົງບາງຢ່າງທີ່ໄດ້ເຮັດແລ້ວ, ການຍຸດຕິການເຈລາຈາກັນກັບ ສ.ສ.ສ.ຊ. ກ່ຽວກັບບັນຫາ

ຕ່າງໆທີ່ກ່ຽວຂ້ອງກັບສາຍສຳພັນກັນລະຫວ່າງສະຫະລັດອາເມລິກາ ກັບ ສ.ສ.ສ.ຊ. ແລະອື່ນໆ ທັງຫມົດເຫລົ່ານັ້ນ ພິສູດໃຫ້ເຫັນວ່າ ເຫມືອນກັບໄລຍະເວລາສິບປີກ່ອນຫນ້ານີ້ວໍຊິງຕັນພວມພະຍາຍາມໃຊ້ວິທີການແບບ "ສົງຄາມເຢັນ"ຄັ້ງໃຫມ່ອີກ. ໃນຂະນະດຽວກັນນັ້ນ ເຈົ້າຫນ້າທີ່ຂອງກາເຕີ, ພວມສະແດງຄວາມບໍ່ເອົາຫົວຊາຕໍ່ບັນດາເອກະສານສາກົນທີ່ສຳຄັນລ່ວງລະເມີດສາຍສຳພັນກັນ ທາງດ້ານວິທະຍາສາດ, ວັດທະນະທຳ, ສາຍສຳພັນກັນ ລະຫວ່າງມະນຸດ.

ໃນໄລຍະມໍ່ໆມານີ້ ລັດຖະບານຂອງປະທານາທິບໍດີ ກາເຕີຝ່າຍດຽວໄດ້ລ່ວງລະເມີດສົນທິສັນຍາ, ຂໍ້ຕົກລົງກັນຂັ້ນລັດຖະບານ, ຄວາມເຂົ້າໃຈເຊິ່ງກັນແລະກັນ ລະຫວ່າງ ສ.ສ.ສ.ຊ. ກັບສະຫະລັດອາເມລິກາ ກ່ຽວກັບບັນຫາວ່າດ້ວຍສາຍສຳພັນກັນ ທາງດ້ານຕ່າງໆ ຢ່າງນັບບໍ່ຖ້ວນ. ພວກເຂົາສາມາດປະຕິບັດການຕໍ່ໄປ ໂດຍປາສະຈາກສາຍສຳພັນກັນ ບາງປະການ ກັບສະຫະລັດອາເມລິກາ; ພວກເຂົາຍາມໃດ ກໍ່ບໍ່ເປັນຜູ້ທີ່ຂໍໃຫ້ສະຫະລັດອາເມລິກາ ຈັດຕັ້ງສາຍສຳພັນເຫລົ່ານັ້ນ ; ແຕ່ວ່າ ພວກເຂົາຖືບັນຫານີ້ ວ່າເປັນບັນຫາທີ່ເກີດຜົນເຊິ່ງກັນແລະກັນ ແລະຮັບໃຊ້ຜົນປະໂຫຍດຂອງປະຊາຊົນຂອງທັງສອງປະເທດ ກ່ອນອື່ນຫມົດ ແມ່ນເພື່ອປັບປຸງສັນຕິພາບ.

ການທີ່ວໍຊິງຕັນ ໄດ້ກຳ "ສິດ" ທີ່ຈະ "ລົງໂທດ"ຫຼື "ຍົກຍໍສັນລະເສີນ" ປະເທດເອກະລາດຕ່າງໆນັ້ນ ມັນກໍໃຫ້ຕັ້ງບັນຫາຫນຶ່ງທີ່ສຳຄັນທາງຫລັກການ ຄືວ່າລັດຖະບານຂອງສະຫະ-

ລັດອາເມລິກາ ພວມລ່ວງລະເມີດລະບົບສິດສາກົນ ແຫ່ງສາຍສຳພັນກັນ ລະຫວ່າງປະເທດຕ່າງໆ ທີ່ໄດ້ຮັບການວາງອອກ-ຢ່າງເປັນລະບຽບແລ້ວ.

ການກະທຳເຫລົ່ານັ້ນ ຂອງເຈົ້າໜ້າທີ່ກາເຕີ ເຮັດໃຫ້ຜູ້-ຄົນຖືສະຫະລັດອາເມລິກາ ວ່າເປັນຜູ້ຮ່ວມວຽກທີ່ເຊື່ອຖືບໍ່ໄດ້-ໃນການຕິດຕໍ່ກັນທາງສາກົນ, ເປັນລັດໜຶ່ງເຊິ່ງແມ່ນເຈົ້າ -ໜ້າທີ່-ໂດຍອີງໃສ່ໃຈມັກຂອງຕົນ ຫລືອີງໃສ່ຜົນ ປະໂຫຍດສ່ວນຕົວ ໄລຍະອັນສັ້ນໆ-ອາດລ່ວງລະເມີດຂໍ້ຜູກພັນ ທາງສາກົນ, ລ່ວງລະເມີດສົນທິສັນຍາ ຫລືຂໍ້ຕົກລົງກັນໄດ້. ມັນບໍ່ຈຳເປັນຈະຕັກເຕືອນວ່າ ການກະທຳແນວນີ້ ຂອງປະເທດໃຫຍ່ທີ່ມີອິດທິພົນສູງ ເຊິ່ງແມ່ນບັນດາປະຊາຊາດຫວັງວ່າ ລັດນັ້ນຈະໄດ້ປະຕິບັດນະໂຍບາຍ ທີ່ຮູ້ຄວາມຮັບຜິດຊອບນັ້ນ ການກະທຳເຫລົ່ານັ້ນ ລ່ວງລ້ຳຄວາມໝັ້ນທ່ຽງ ຂອງສະຖານະການສາກົນຫລາຍປານໃດ.

ແນ່ນອນວ່າ ການກະທຳເຫລົ່ານັ້ນ ຂອງເຈົ້າໜ້າທີ່ອາເມລິກາ ບໍ່ອາດຈະກໍໃຫ້ເກີດຜົນຮ້າຍແກ່ພວກເຮົາ ໃນລະດັບ ທີ່ພວກວໍຊິງຕັນ ໄດ້ຫວັງໄວ້ກ່ອນ. ການໃສ່ຮ້າຍປ້າຍສີກ່ຽວກັບ "ຄວາມຂາດທາງດ້ານອາຫານການກິນ" ໃນ ສ.ສ.ສ.ຊ.ທີ່ເກີດຂຶ້ນຍ້ອນການປະຕິເສດ ຂອງສະຫະລັດອາເມລິກາ ທີ່ຈະຂາຍເຂົ້າບະເລັນນັ້ນ ມັນອີງໃສ່ຄວາມຄິດເຫັນທີ່ບໍ່ເປັນຈິງກ່ຽວກັບຄວາມສາມາດທາງດ້ານເສດຖະກິດຂອງພວກເຮົາ.ປະຊາຊົນໂຊວຽດມີຄວາມສາມາດຢ່າງພຽງພໍ ເພື່ອດຳລົງຊີວິດແລະ

ອອກແຮງງານໃນເງື່ອນໄຂອັນສັນຕິ, ເພື່ອປະຕິບັດແຜນການທີ່ຄາດໝາຍ, ເພື່ອປັບປຸງສະຫວັດດີພາບຂອງຕົນ. ເວົ້າໂດຍສະເພາະແລ້ວວ່າ ລັດໂຊວຽດຈະບໍ່ໄດ້ຈຳກັດແຜນການທາງດ້ານການຕອບສະໜອງ ຄວາມຕ້ອງການຂອງປະຊາຊົນ ໂຊວຽດທາງດ້ານເຂົ້າຈີ່ ລົງຈັກກິໂລກຣາມ.

ພວກເຮົາບໍ່ອາດຈະບໍ່ຖືການກະທຳ ຂອງເຈົ້າໜ້າທີ່ອາເມລິກາວ່າ ເປັນການພະຍາຍາມແບບບໍ່ຄິດຄົ້ນ ຢ່າງຖີ່ຖ້ວນທີ່ຈະໃຊ້ເຫດການ ໃນອາຟະການິສະຖານ ເພື່ອສະກັດກັ້ນການ - ອອກແຮງງານທາງສາກົນ ທີ່ຈະລຶດຜ່ອນໄພອັນຕະລາຍ ທາງທະຫານ, ທີ່ຈະປັບປຸງສັນຕິພາບ, ຈຳກັດການສ້າງອາວຸດ - ເວົ້າລວມ ສະກັດກັ້ນທຸກສິ່ງທຸກຢ່າງ ເຊິ່ງແມ່ນມວນມະນຸດສົນໃຈນຳຫລາຍທີ່ສຸດ.

ການກະທຳທີ່ສະຫະລັດອາເມລິກາປະຕິບັດແຕ່ຝ່າຍດຽວ - ໝາຍເຖິງຄວາມຂາດຕົກບົກຜ່ອງ ທີ່ຮ້າຍແຮງໃນນະໂຍບາຍທົ່ວໆໄປ. ບໍ່ຕ່າງຫຍັງກັບຫວ່ານຂີ້ຊາຍຂຶ້ນເໜືອລົມ ມັນກໍປິວມາໂພະໃສ່ຕາໂຕເອງ ການກະທຳເຫລົ່ານັ້ນບໍ່ໄວກໍຊ້າຈະໄດ້ກັບຄືນໄປຕີໃສ່ຕົນເອງ.

ຖ້າຫາກວ່າ ຄວາມພະຍາຍາມທີ່ຕ້ານນະໂຍບາຍຂອງພວກເຮົາ ແນ່ໃສ່ທົດສອບຄວາມໝັ້ນຄົງຂອງພວກເຮົານັ້ນ ອັນນັ້ນກໍຈະໝາຍເຖິງຄວາມບໍ່ເອົາຫົວຊາ ຕໍ່ບົດຮຽນທາງປະຫວັດ-ສາດ. ໃນປີ໑໙໑໗ ໃນເມື່ອລັດສັງຄົມນິຍົມລັດທຳອິດໄດ້ເກີດຂຶ້ນນັ້ນໃນເວລານັ້ນປະຊາຊົນເຮົາບໍ່ໄດ້ຂໍອະນຸຍາດມາຈາກໃຜເພື່ອ

ເຮັດການປະຕິວັດ. ໃນເວລານີ້ກໍເໝືອນກັບເວລານັ້ນ ປະຊາ
ຊົນເຮົາດຳລົງຊີວິດຕາມກົດໝາຍ ທີ່ປະຊາຊົນເລືອກເຟັ້ນ -
ໂດຍຕົນເອງ. ໃນປີ ໑໙໑໗ ພວກຈັກກະພັດນິຍົມກໍໄດ້ພະຍາ
ຍາມ ທີ່ຈະທົດສອບຄວາມໝັ້ນຄົງຂອງພວກເຮົາ; ທຸກຄົນຮູ້
ຢ່າງດີວ່າ ຜົນຂອງການທົດສອບໄດ້ເປັນແນວໃດ. ໃນສົງຄາມ
ອັນນອງເລືອດທີ່ສຸດ ໃນປະຫວັດສາດຂອງມະນຸດຊາດ ພວກ
ຟາຊິດ ຮຸກຮານກໍໄດ້ພະຍາຍາມທຳລາຍພວກເຮົາ; ແຕ່ວ່າ
ພວກເຂົາໄດ້ຮັບການປະລາໄຊ ຢ່າງສິ້ນເຊີງ. ໃນຍາມ "ສົງ
ຄາມເຢັນ" ມັນກໍໄດ້ທົດສອບພວກເຮົາ. ໂດຍການແກ່ດຶງໂລກ
ໃຫ້ຕົກຢູ່ໃນຄວາມຫາຍະນະ ແລະໂດຍການກໍ່ວິກິດການ ທີ່ຕິດ
ຕໍ່ໜໍ່ເນື່ອງກັນ. ຍາມໃດກໍຈະບໍ່ມີຜູ້ໃດທີ່ສາມາດສັ່ນສະເທືອນ
ພວກເຮົາໄດ້. ໃຜໆກໍຄວນຈື່ຈຳເລື່ອງນີ້ໃຫ້ມັ້ນຄັກ.

ຖາມ: ທ່ານມີຄວາມຄິດເຫັນແນວໃດ ກ່ຽວກັບ ອະນາຄົດ
ແຫ່ງການວິວັດ ຂອງສະພາບການໃນຢູໂລບ.

ຕອບ: ໃນຊຸ່ມື້ນີ້ ສະພາບການໃນຢູໂລບ ແມ່ນດີກວ່າສະ -
ພາບການທີ່ໄດ້ມີໃນຕົ້ນທົດສະວັດທີ ໘ ຕັ້ງຫລາຍເທື່ອ. ແນ່
ນອນວ່າ ການກະທຳຄັ້ງສຸດທ້າຍ ຂອງວໍຊິງຕັນ ທີ່ບໍ່ຮູ້ຄວາມ-
ຮັບຜິດຊອບ ກໍໄດ້ສົ່ງຜົນສະທ້ອນຕໍ່ສະພາບການໃນຢູໂລບ ເຊັ່ນ
ດຽວກັນ. ສະຫະລັດອາເມລິກາ ບໍ່ພຽງແຕ່ເຮັດທຸກສິ່ງ ທຸກ
ຢ່າງທີ່ອາດເຮັດຕາມຄວາມສາມາດໄດ້ ເພື່ອກໍ່ໃຫ້ເກີດຄວາມ
ເສັຽຫາຍ ແກ່ສາຍສຳພັນກັນໂຊວຽດ-ອາເມລິກາທໍ່ນັ້ນ ຫາກ
ຍັງຢາກກໍໃຫ້ເກີດຄວາມເສັຽຫາຍແກ່ສາຍສຳພັນກັນລະຫວ່າງ

ສ.ສ.ສ.ຊ.ກັບບັນດາປະເທດຢູໂຣບຕາເວັນຕົກອີກດ້ວຍ ເຊິ່ງແມ່ນໄດ້ສ້າງຜົນດີຫລາຍຢ່າງ ໃນເວລາສິບປີທີ່ຜ່ານມານ.ສະຫະລັດອາເມລິກາ ກໍໄດ້ພະຍາຍາມທີ່ຈະທຳລາຍຈິດໃຈ ແລະເນື້ອໃນຂອງຂໍ້ຕົກລົງຂັ້ນສຸດທ້າຍ ຂອງກອງປະຊຸມ ເຮັນຊິນກິເຊິ່ງແມ່ນໃຜໆກໍຮັບຮອງວ່າ ເປັນຜົນອັນສູງສົ່ງ ຂອງການປົບປຸງຄວາມປອດໄພ ແລະການຂະຫຍາຍການຮ່ວມມືກັນຢ່າງສັນຕິ ໃນທະວີບຢູໂຣບ. ນອກຈາກນັ້ນ ການກະທຳຂອງ ວໍຊິງຕັນທີ່ແນ່ໃສ່ເຮັດໃຫ້ສະຖານະການສາກົນ ຮ້າຍແຮງຍິ່ງຂຶ້ນນັ້ນ ກໍໄດ້ມີຈຸດປະສົງ ທີ່ຈະເຮັດໃຫ້ບັນດາປະເທດຢູໂຣບເປັນຕົ້ນແມ່ນປະເທດພັນທະມິດ ຕົກຢູ່ໃຕ້ອິດທິພົນຂອງສະຫະລັດອາເມລິກາ.

ເຖິງຢ່າງນັ້ນກໍຕາມ ຜົນປະໂຫຍດຂັ້ນພື້ນຖານ ຂອງປະຊາຊາດຕ່າງໆໃນຢູໂຣບ ຕິດພັນກັບການລຶດຜ່ອນຄວາມເຄັ່ງ ຕຶງຢ່າງແຍກອອກບໍ່ໄດ້. ປະຊາຊາດຢູໂຣບໄດ້ຮູ້ຈັກຜົນ ຂອງການລຶດຜ່ອນນັ້ນແລ້ວ. ພວກເຮົາເຊື່ອໝັ້ນວ່າ ບັນດາປະຊາຊາດຕ່າງໆ ຂອງທະວີບຢູໂຣບ ບໍ່ຢາກກ້າວເຂົ້າສູ່ເສັ້ນທາງ ແບບສ່ຽງໄພຕາມໃຈມັກ ຂອງນັກການເມືອງວໍຊິງຕັນ; ມັນເປັນແນວນັ້ນກໍຍ້ອນວ່າ ປະຊາຊາດເຫລົ່ານັ້ນ ພວມອາໄສຢູ່ໃນທະວີບ ທີ່ຖືກເຜົາຜານດ້ວຍສົງຄາມ ຫລາຍຄັ້ງຄາວແລ້ວ. ມັນບໍ່ອາດເຊື່ອໄດ້ວ່າ ຈະໄດ້ມີປະເທດໃດໜຶ່ງໃນຢູໂຣບ ເຊິ່ງຢາກນຳເອົາຜົນດີ ຂອງການລຶດຜ່ອນຄວາມເຄັ່ງຕຶງ ໄປຖີ້ມໃຫ້ແກ່ພັກພວກທີ່ກຽມພ້ອມ ທີ່ຈະຢຽບຢ່ຳຜົນດີເຫລົ່ານັ້ນ. ການລຶດຜ່ອນຄວາມເຄັ່ງຕຶງໃນຢູໂຣບ ອາດກໍໃຫ້ເກີດຜົນດີທາງແກ່ບັນດາ

ປະເທດສັງຄົມນິຍົມ,ແກ່ ສ.ສ.ສ.ຊ. ແລະທັງແກ່ບັນດາປະເທດຝ່າຍຕາເວັນຕົກ ແລະສະຫະລັດອາເມລິກາ ຢ່າງເທົ່າທຽມກັນ.

ຍ້ອນວ່າໃນມໍ່ໆ ນີ້ ຈະໄດ້ໄຂກອງປະຊຸມທີ່ມັດລິດ, ຍ້ອນວ່າ ບັນດາປະເທດພາຄີສົນທິສັນຍາວໍຊໍໄດ້ສະເໜີໃຫ້ໄຂກອງປະຊຸມກ່ຽວກັບບັນຫາວ່າດ້ວຍການລຶດຜ່ອນ ທາງດ້ານທະຫານແລະການປົດອາວຸດນັ້ນ ມັນຈຶ່ງມີຄວາມອາດສາມາດຫຼາຍຢ່າງເພື່ອສ້າງຜົນດີແກ່ການປັບປຸງສັນຕິພາບໃນມໍ່ໆນີ້.ພວກເຮົາຕັ້ງໜ້າອອກແຮງເພື່ອປັບປຸງ ແລະເສີມຂະຫຍາຍ ຜົນດີທຸກຢ່າງເຊິ່ງແມ່ນບັນດາປະເທດ ບໍ່ວ່າເປັນປະເທດໃຫຍ່ຫລືນ້ອຍ ໄດ້ສ້າງຕັ້ງຮ່ວມກັນ ໃນທະວີບຢູໂລບແລ້ວ.ໃນອະນາຄົດພວກເຮົາກໍຈະສືບຕໍ່ດຳເນີນນະໂຍບາຍແຫ່ງສັນຕິພາບ ແລະມິດຕະພາບລະຫວ່າງບັນດາປະຊາຊາດຕ່າງໆ. ກົງກັນຂ້າມກັບທ່າທີແບບຈ້າຍຈັດຂອງໂພດ ຂອງວໍຊິງຕັນ ພວກເຮົາຕັ້ງໜ້າສືບຕໍ່ ເຈລະຈາກັນ ເຊິ່ງເພິ່ນໄດ້ເລີ່ມເຈລາຈາກັນໃນບາງປີຫຼັງນີ້ກ່ຽວກັບບັນຫາຕ່າງໆ ທີ່ກ່ຽວຂ້ອງກັບການສະກັດກັ້ນ ການແຂ່ງຂັນສ້າງອາວຸດ. ອັນນັ້ນກໍແຕະຕ້ອງບັນຫາວ່າດ້ວຍການ ລຶດຜ່ອນການປະເຊີນໜ້າກັນທາງດ້ານທະຫານ ໃນທະວີບຢູໂລບ.

ຂ້າພະເຈົ້າຢາກກ່າວເນັ້ນອີກເທື່ອໜຶ່ງວ່າ ພວກເຮົາກຽມພ້ອມທີ່ຈະດຳເນີນການເຈລະຈາກັນ; ແຕ່ວ່າ ການເຈລະຈາກັນດັ່ງກ່າວ ຕ້ອງດຳເນີນໄປຢ່າງເອົາຈິງເອົາຈັງ, ມີສິດສະເໝີກັນ, ຕາມຫລັກການເທົ່າທຽມກັນ ທາງດ້ານຄວາມປອດ

ໄພ. ໃນມື້ໆມານີ້ ພວກເຮົາໄດ້ສະເໜີໃຫ້ເລີ່ມການເຈລະຈາກັນແນວນີ້ ກ່ຽວກັບບັນຫາວ່າດ້ວຍພາຫະນະນິວຄະເລຍ ຊັ້ນກາງ. ໃຜໆກໍບໍ່ອາດຫວັງໄດ້ວ່າ ສະຫະພາບໂຊວຽດຈະຍອມຮັບຂໍ້ຜູກມັດຕ່າງໆ ຂອງກຸ່ມນາໂຕ ທີ່ຄິດຝັນເຖິງການດຳເນີນການເຈລະຈາກັນ ໂດຍອີງໃສ່ທ່າທີແບບໃຊ້ກຳລັງ. ທ່າທີຂອງກຸ່ມນາໂຕໃນປະຈຸບັນນີ້ ບໍ່ອຳນວຍເງື່ອນໄຂແກ່ການເຈລະຈາກັນ ກ່ຽວກັບບັນຫາດັ່ງກ່າວມາເທິງນັ້ນ; ໃນມື້ໆມານີ້ ພວກເຮົາໄດ້ສະແດງຄວາມຄິດເຫັນດັ່ງກ່າວ ໃຫ້ລັດຖະບານອາເມລິກາຮູ້ແລ້ວ.

ພວກເຮົາພວມມອງເຫັນອະນາຄົດ ໃນແງ່ທັດສະນະ ທີ່ດີໂດຍມີພື້ນຖານທີ່ໝັ້ນຄົງ. ພວກເຮົາເຂົ້າໃຈຢ່າງດີວ່າ ການທີ່ພວກຈັກກະພັດອາເມລິກາ ໄດ້ເຮັດໃຫ້ສະຖານະການສາກົນ ເຄັ່ງຕຶງຂຶ້ນນັ້ນ ມັນພວມສະແດງໃຫ້ເຫັນເຖິງຄວາມບໍ່ພໍໃຈຂອງພວກເຂົາ ຕໍ່ການທີ່ລະບອບສັງຄົມນິຍົມໄດ້ປັບປຸງທ່າທີຂອງຕົນໃຫ້ໝັ້ນຄົງຍິ່ງຂຶ້ນ, ຕໍ່ການຂະຫຍາຍຕົວຂອງຂະບວນການປົດປ່ອຍຊາດ, ຕໍ່ການປັບປຸງບັນດາກຳລັງທີ່ຕໍ່ສູ້ເພື່ອການລົດຜ່ອນຄວາມເຄັ່ງຕຶງ ແລະເພື່ອສັນຕິພາບ. ພວກເຮົາຮູ້ຢ່າງດີວ່າ ປະຊາຊາດຕ່າງໆ ໄດ້ຜ່ານອຸປະສັກຫລາຍປະການເພື່ອໄຂຫົນທາງທີ່ດີ ໃນວິວັດທະນາການຂອງໂລກ ຄືເສັ້ນທາງທີ່ມີຊື່ວ່າ "ການລົດຜ່ອນຄວາມເຄັ່ງຕຶງ". ເສັ້ນທາງດັ່ງກ່າວ ພວມມີພື້ນຖານທີ່ໝັ້ນຄົງ, ເສັ້ນທາງນີ້ໄດ້ອີງໃສ່ບັນດາກຳລັງທີ່ເຂັ້ມແຂງທີ່ສຸດ; ຍ້ອນເຫດນັ້ນ ເສັ້ນທາງດັ່ງກ່າວ ຈິ່ງຕ້ອງ

ເປັນເສັ້ນທາງອັນກ້ວາງໃຫຍ່ໃນດ້ານສາຍສຳພັນກັນລະຫວ່າງ ປະເທດຕ່າງໆ.

ປະຊາຊົນເຮົາ, ປະເທດເຮົາເດີນໄປດ້ວຍບາດກ້າວ ທີ່ໝັ້ນຄົງຕາມເສັ້ນທາງ ແຫ່ງການສ້າງສາກອມມູນິດ, ການປະຕິບັດແຜນການ ໕ ປີ ຊຸດທີ ໑໐ ທີ່ຄາດໝາຍໂດຍພັກເຮົາ. ປະຊາຊົນໂຊວຽດ, ບັນດາເພື່ອນມິດຕ່າງປະເທດ ຂອງພວກເຮົາ ຕ້ອງເຊື່ອໝັ້ນວ່າ ໃຜໆກໍ່ບໍ່ສາມາດທຳລາຍທິດທາງນະໂຍບາຍຕ່າງປະເທດ ແບບເລນິນໄດ້. ທິດທາງນະໂຍບາຍ-ດັ່ງກ່າວ ໄດ້ກຳນົດດ້ວຍບັນດາມະຕິຂອງກອງປະຊຸມ ຕ່າງໆ ຂອງ ພ.ກ.ສ.ຊ. ແລະໄດ້ຮັບການສະແດງອອກໃນ ນະໂຍບາຍຕ່າງປະເທດຂອງພວກເຮົາ. ທິດທາງນະໂຍບາຍດັ່ງ - ກ່າວ ພວມປະສານສົມທົບລະຫວ່າງການຮັກຫອມສັນຕິ ພາບຢ່າງສຸດກົກສຸດປາຍ ກັບການໂຕ້ຕອບຕໍ່ການຮຸກຮານຢ່າງເດັດຂາດ. ທິດທາງນະໂຍບາຍດັ່ງກ່າວ ໄດ້ພິສູດໃຫ້ເຫັນ ເຖິງຄວາມຖືກຕ້ອງຂອງມັນ ໃນໄລຍະເວລາສິບໆປີ ທີ່ຜ່ານມາ ; ດ້ວຍເຫດນັ້ນ ໃນໄລຍະເວລາຕໍ່ໄປ ພວກເຮົາກໍຈະສືບຕໍ່ ດຳເນີນທິດທາງນະໂຍບາຍແນວນັ້ນເອງ. ໃຜໆກໍ່ບໍ່ສາມາດ ທີ່ຈະເຮັດໃຫ້ພວກເຮົາຫ່າງໄກຈາກທິດທາງນະໂຍບາຍນີ້ໄດ້.

ໜັງສືພິມ "ປະລາວະດາ"
ວັນທີ ໑໓ ເດືອນມັງກອນ
ປີ ໑໙໘໐

ຄຳປາໄສຂອງສະຫາຍຂະເລັດຂະເນັບ
ວັນທີ ໒໒ ເດືອນກຸມພາ ປີ ໑໙໘໐

ສະຫາຍທີ່ນັບຖື !

ຊາວນະຄອນມິດສະກູທີ່ຮັກແພງ !

ຂ້າພະເຈົ້າຮູ້ສຶກມີຄວາມປິຕິຍິນດີ ເນື່ອງໃນໂອກາດ ການພົບປະກັນກັບຊາວນະຄອນມິດສະກູ ເຊິ່ງເປັນຜູ້ເລືອກຕັ້ງເອົາຜູ້ແທນເມືອງບາອູມັນສະກີແຫ່ງນະຄອນມິດສະກູ ທັງເປັນຜູ້ຄົນທີ່ຂ້າພະເຈົ້າຮູ້ຈັກກັນຕັ້ງແຕ່ດົນແລ້ວ (ຕົບມື).ອັນເປັນທີ່ໜ້າຊົມເຊີຍວ່າ ບັນດາທ່ານໄດ້ຍາດເອົາຜົນງານອັນດີງາມຫລາຍຢ່າງໃນໄລຍະເວລາກ່ອນການເລືອກຕັ້ງ. ຜູ້ອອກແຮງງານຊາວເມືອງບາອູມັນສະກີຫລາຍພັນຄົນ ເໝືອນດັ່ງກັບ ຜູ້ອອກແຮງງານຂອງເມືອງອື່ນໆຂອງມິດສະກູ ໄດ້ປະຕິບັດແຜນການ ໕ ປີສຳເລັດແລ້ວ. ຊາວນະຄອນມິດສະກູ ຫລາຍແສນຄົນໄດ້ຕັ້ງໜ້າປະຕິບັດແຜນການ ໕ ປີສຳເລັດກ່ອນວັນເກີດຄົບຮອບ ໑໑໐ ປີ ຂອງ ວ.ອີ.ເລນິນ.ຂໍອວຍພອນໃຫ້ພວກສະຫາຍຈົ່ງໄດ້ຮັບຜົນສຳເລັດໃໝ່ (ຕົບມືຍາວຍືດຍາວ).

ປະເທດເຮົາ, ບັນດາສາທາລະນະລັດທັງຫລາຍແຫ່ງ ສ.

ສ.ສ.ຊ. ພວມຕ້ອນຮັບວັນເກີດຄົບຮອບ ໑໑໐ ປີຂອງເລນິນ ດ້ວຍການເສີມຂະຫຍາຍການແຂ່ງຂັນສັງຄົມນິຍົມຂອງປວງປະຊາຊົນຢ່າງມີຫົວຄິດປະດິດສ້າງ. ເຫມືອນກັບໄລຍະເວລາແຕ່ກ່ອນນັ້ນ ນະຄອນມົດສະກູຢືນຢູ່ແຖວຫນ້າ ເຊິ່ງເປັນ ນະຄອນຂອງຜູ້ລິເລີ່ມໃນການແຂ່ງຂັນສັງຄົມນິຍົມ, ນະຄອນແຫ່ງຜູ້ອອກແຮງງານ, ນະຄອນແຫ່ງວິລະກຳ, ນະຄອນແຫ່ງຜູ້ຄິດປະດິດສ້າງ. (ຕົບມື.)

ການເລືອກຕັ້ງຄັ້ງນີ້ ຈະໄດ້ດຳເນີນໄປໃນໄລຍະ ທີ່ທົດສະວັດທີ ໗ ໄດ້ຜ່ານສູ່ທົດສະວັດທີ ໘. ພວກເຮົາທຸກຄົນພວມຄິດນຶກວ່າ ທົດສະວັດທີ ໘ ຈະເປັນແນວໃດ ? ໂຊກຊາຕາຂອງພວກເຮົາ, ໂຊກຊາຕາຂອງປະຊາຊາດ ແລະລັດຕ່າງໆ ຈະເປັນແນວໃດ ? ມັນແນ່ນອນວ່າຜູ້ຄົນບໍ່ສາມາດຄາດຄະເນທຸກສິ່ງໃນອະນາຄົດໄດ້. ເຖິງເປັນແນວນັ້ນ ກໍຕາມ ພວກເຮົາ-ຊາວກອມມູນິດ-ບໍ່ພຽງແຕ່ຖືທີ່ນັ້ນ ຫາກ ເຊື່ອຫມັ້ນວ່າ ທົດສະວັດທີ ໘ ຈະໄດ້ເປັນທົດສະວັດ ແຫ່ງຜົນສຳເລັດໃຫມ່ ແຫ່ງການສ້າງສາລະບອບກອມມູນິດ (ຕົບມືຢ່າງຍືດຍາວ), ຈະໄດ້ເປັນທົດສະວັດແຫ່ງການເສີມຂະຫຍາຍລະບົບ ສັງຄົມນິຍົມ , ການເດີນໄປຂ້າງຫນ້າໃນພາລະກິດແຫ່ງການຕໍ່ສູ້ເພື່ອສັນຕິ - ພາບອັນຫມັ້ນຄົງ. (ຕົບມື.)

ຄວາມເຊື່ອຫມັ້ນດັ່ງກ່າວ ແມ່ນອີງໃສ່ການຄົ້ນຄ້ວາ ຜົນສະຫລຸບຂອງວິວັດທະນາການຂອງປະເທດເຮົາ ທັງວິວັດທະນາການຂອງໂລກ, ອີງໃສ່ທ່າອຽງ ຂອງວິວັດທະນາການ ທາງ

ດ້ານເສດຖະກິດ, ສັງຄົມແລະການເມືອງ.

ທົດສະວັດທີ ໘ ໄດ້ມີລັກສະນະແນວໃດ ?

ທົດສະວັດທີ ໘ ໄດ້ມີລັກສະນະແຫ່ງການເພີ່ມທະວີ ຄວາມສາມາດທາງດ້ານເສດຖະກິດ, ວິດທະຍາສາດ - ເຕັກນິກຂອງປະເທດເຮົາ, ຄວາມສາມາດທາງດ້ານອຸດສາຫະກຳແລະກະສິກຳຢ່າງເນື່ອງນິດ. ອັນນັ້ນໄດ້ອຳນວຍໂອກາດ ໃນການຍົກລະດັບສະວັດດີພາບຂອງປວງປະຊາຊົນອັນ ເຊິ່ງໄດ້ເປັນແລະພວມເປັນເປົ້າໝາຍອັນພົ້ນຖານຂອງກິດຈະກຳທາງດ້ານເສດຖະກິດຂອງພວກເຮົາ. ໃນລະຫວ່າງທົດສະວັດທີ ໘ ລາຍໄດ້ທີ່ແທ້ຈິງຂອງປະຊາຊົນ (ຄິດສະເລັ່ຍຕໍ່ຫົວຄົນ) ໄດ້ຮັບ ການເພີ່ມຂຶ້ນ ໑,໕ ເທົ່າ. ພົນລະເມືອງໂຊວຽດ ໑໐໘ ລ້ານກ່ວາຄົນ ໄດ້ຍ້າຍໄປຢູ່ເຮືອນໃຫ່ມທີ່ດີກ່ວາເກົ່າ, ເຊິ່ງກວມ ໔໐% ຂອງພົນລະເມືອງທັງໝົດແຫ່ງ ສ.ສ.ສ.ຊ. (ຕົບມື)

ພວກເຮົາສືບຕໍ່ຮັກສາຄວາມສາມາດ ທາງດ້ານ ການປ້ອງກັນຕົວໃນລະດັບສູງສົມຄວນ. ໃນເວລາກ່ອນວັນກອງທັບ ໂຊວຽດ ສູນກາງພັກສາມາດກ່າວໄດ້ເນັ້ນວ່າ ປະຊາຊົນໂຊວຽດໄດ້ມີທຸກສິ່ງທຸກຢ່າງທີ່ຈຳເປັນ ເພື່ອສະກັດກັ້ນ ການທ້າທາຍເກາະພິດທາງທະຫານທຸກຢ່າງໄດ້(ຕົບມືຢ່າງຍືດຍາວ).ພວກເຮົາຮັບປະກັນອະນາຄົດອັນສັນຕິ ຂອງປະເທດໂຊວຽດ ຢ່າງໝັ້ນຄົງ.(ຕົບມືຢ່າງຍືດຍາວ.)

ໃນມື້ນີ້ ພວກເຮົາຈະໄດ້ສະເຫລີມສະຫລອງ ໄຊຊະນະຂອງປະຊາຊົນໂຊວຽດຕໍ່ພວກຟາຊິດຄົບຮອບ ໓໕ ປີ. ຂ້າພະ

ເຈົ້າດີໃຈຫລາຍ ຂໍແຈ້ງໃຫ້ພວກທ່ານຮູ້ວ່າ ສູນກາງພັກ ແລະ ຄະນະລັດຖະມົນຕີແຫ່ງ ສ.ສ.ສ.ຊ. ໄດ້ຜ່ານມະຕິວ່າ "ດ້ວຍການປັບປຸງສະວັດດີພາບຂອງພວກທະຫານຜູ້ອາວຸໂສແຫ່ງກອງທັບໂຊວຽດ ແລະຄອບຄົວຂອງພວກເຂົາຕໍ່ໄປ" (ຕົບມື)ເຊິ່ງເປັນການພິສູດໃຫ້ເຫັນເຖິງຄວາມເອົາໃຈໃສ່ຂອງພັກແລະລັດເຮົາ ກ່ຽວກັບຜູ້ທີ່ເຂົ້າຮ່ວມມະຫາສົງຄາມປ້ອງກັນປິຕຸພູມ.(ຕົບມື).

ໃນລະຫວ່າງທົດສະວັດທີ ໘ ພວກເຮົາໄດ້ເລີ່ມ ເຮັດໃຫ້ເສດຖະກິດເຮົາຫັນໜ້າໄປສູ່ການເພີ່ມທະວີປະສິດທິພາບແລະຄຸນນະພາບໃນກິດຈະກຳທາງດ້ານເສດຖະກິດ. ໃນລະຫວ່າງທົດສະວັດທີ ໙ ພວກເຮົາຕ້ອງສຳເລັດວຽກງານ ອັນສຳຄັນນີ້ເຊິ່ງເປັນແກ່ນສານຂອງຍຸດທະສາດທາງດ້ານເສດຖະກິດຂອງພັກເຮົາ.

ກອງປະຊຸມສະໄໝສາມັນ ຂອງສູນກາງພັກໃນເດືອນ ພະຈິກໄດ້ພິຈາລະນາຢ່າງຕິດຕາມຜົນງານຂອງການຂະຫຍາຍເສດຖະກິດຂອງປະຊາຊົນ. ບໍ່ແມ່ນທຸກຂະແໜງຂອງເສດຖະກິດ, ບໍ່ແມ່ນທຸກກິດຈະການສາມາດປະຕິບັດແຜນການໄດ້.ພວກເຮົາຍັງມີຄວາມຂາດຕົກທາງດ້ານສະບຽງອາຫານ ແລະສິນຄ້າອຸດສາຫະກຳບາງຢ່າງ; ຍັງມີຄວາມຫຍຸ້ງຍາກ ທາງດ້ານ ການເຮືອນຢູ່, ການຈັດຕັ້ງການຮັບໃຊ້ພົນລະເມືອງອີກດ້ວຍ.

ເພື່ອແກ້ໄຂຄວາມຂາດຕົກເຫລົ່ານັ້ນ ກອງປະຊຸມ ໄດ້ຜ່ານມະຕິວ່າດ້ວຍຄວາມຈຳເປັນທີ່ຈະຕ້ອງເສີມຂະຫຍາຍການປະຕິ

ບັດນະໂຍບາຍເສດຖະກິດຂອງພັກຢ່າງເອົາຈິງເອົາຈັງ ກ່ວາເກົ່າ. ເສັ້ນທາງທີ່ຈະນຳໄປສູ່ເປົ້າໝາຍນັ້ນ ກໍຄືການຍົກລະດັບການຊຸ້ມຄອງໃນທຸກຂະແໜງໃຫ້ສູງຂຶ້ນ, ການປັບປຸງກົງຈັກເສດຖະກິດ, ການຍົກຄວາມຮູ້ຮັບຜິດຊອບ, ການປັບປຸງ ລະບຽບວິໄນ ໃນທຸກໂຮງຈັກໂຮງງານແລະກິດຈະການທັງຫລາຍ.

ກະຊວງທະບວງກົມຕ່າງໆ ຕ່າງກໍມີບົດບາດອັນສຳຄັນ ໃນດ້ານນີ້. ດ້ວຍເຫດນັ້ນ ກອງປະຊຸມພັກໄດ້ຮຽກຮ້ອງ ໃຫ້ກະຊວງທະບວງກົມຕ່າງໆ ຈົ່ງເພີ່ມທະວີປະສິດທິພາບ ຂອງວຽກການ. ພ້ອມກັນນັ້ນ ນ້ຳໃຈລິເລີ່ມປະຈຳທ້ອງຖິ່ນ ກໍມີ ຄວາມໝາຍອັນສຳຄັນເຊັ່ນດຽວກັນ. ມັນເປັນແນວນັ້ນ ກໍຍ້ອນ ວ່າມັນບໍ່ມີແຕ່ວິທີການອັນດຽວເທົ່ານັ້ນ ສຳລັບທຸກຂະແໜງ ການເສດຖະກິດແລະສຳລັບທຸກແຫ່ງ ຂອງປະເທດເຮົາ ທີ່ ກ້ວາງ ຂວາງ ໄພສານ. ທຸກຄົນຕ້ອງເຂົ້າໃຈວ່າ ບ່ອນໃດ ຜູ້ຄົນບໍ່ເຮັດຫຍັງ ມີແຕ່ຖ້າຄຳສັ່ງຈາກຂັ້ນສູງ ບ່ອນນັ້ນ ບໍ່ອາດມີຜົນສຳເລັດໄດ້ຈັກເທື່ອ. ບ່ອນໃດຜູ້ຄົນກ້າເຮັດວຽກ,ສະແດງນ້ຳໃຈລິເລີ່ມ ບ່ອນນັ້ນຈະຍາດເອົາໄຊຊະນະໄດ້ຢ່າງເດັດຂາດ.

ບັນດາສະຫາຍ ! ປະເທດເຮົາເປັນປະເທດ ອັນດີ ງາມແລະກ້ວາງຂວາງ. ພວກເຮົາສາມາດເຮັດກິດຈະກຳ ອັນຍິ່ງໃຫຍ່ໄດ້. ໃນປະຈຸບັນນີ້,ໃນຕອນຕົ້ນທົດສະວັດທີ ໝ,ໃນເມື່ອພວກເຮົາພວມເສີມຂະຫຍາຍການກະກຽມຕ້ອນຮັບກອງປະຊຸມພັກຄັ້ງທີ XXVI ພວກເຮົາມີພື້ນຖານທຸກຢ່າງ ເພື່ອເຊື່ອໝັ້ນໃນອະນາຄົດອັນຮຸ່ງເຮືອງເຫລືອງເຫລື້ອມ. (ຕົບມື),ທິດທາງ

ຂອງພວກເຮົາເປັນທິດທາງແຫ່ງການສ້າງສາຢ່າງສັນຕິ, ການດັດປ່ຽນປະເທດເຮົາທີ່ກວ້າງຂວາງ, ການເພີ່ມທະວີຈັບສິນບັດທາງດ້ານວັດຖຸແລະຈິດໃຈຂອງປະຊາຊົນໂຊວຽດໃຫ້ຫລາຍຍິ່ງຂຶ້ນ. ໃພງກໍບໍ່ສາມາດແກ່ດຶງພວກເຮົາໃຫ້ຫັນຫລັງແກ່ທິດທາງນັ້ນໄດ້.(ຕົບມືຢ່າງຍືດຍາວ).

ມັນແນ່ນອນວ່າ ເມື່ອຄົ້ນຄວ້າບັນຫາທາງດ້ານ ເສດຖະກິດນັ້ນ ພັກເຮົາພວມອີງໃສ່ທ່າທີທັດສະນະທາງດ້ານສັງຄົມ ໂດຍຖືວ່າເສດຖະກິດເປັນສິ່ງທີ່ແຍກຕົວອອກຈາກ ການພົວພັນ ກັນທາງດ້ານສັງຄົມບໍ່ໄດ້ເດັດຂາດ. ໃນທິດສະວັດທີ ໘ ການພົວພັນກັນທາງດ້ານສັງຄົມ ໄດ້ມີທ່າອຽງອັນສຳຄັນກ່ວາໝູ່ ເປັນແນວໃດ ? ຂ້າພະເຈົ້າຄິດວ່າທ່າອຽງອັນສຳຄັນກ່ວາໝູ່ກໍໄດ້ເປັນການປັບປຸງຄວາມເປັນກ້ອນເປັນໜ່ວຍກັນ, ຄວາມສາມັກຄີກັນຂອງສັງຄົມໂຊວຽດ.(ຕົບມື.)

ຂ້າພະເຈົ້າໝາຍເຖິງຄວາມສາມັກຄີກັນ ທາງດ້ານແນວຄິດການເມືອງ ເຊິ່ງພວມໄດ້ຮັບການສະແດງອອກຢູ່ໃນຄວາມເປັນກ້ອນເປັນໜ່ວຍກັນລະຫວ່າງພັກກັບປວງປະຊາຊົນ, ລະຫວ່າງຊາວກອມມູນິດກັບຊາວໂຊວຽດ ທີ່ບໍ່ເປັນຊາວກອມມູນິດ; ມັນພວມໄດ້ຮັບການສະແດງອອກຢູ່ໃນການ ທີ່ ປວງປະຊາຊົນເຫັນດີນຳໂຄງການດຳເນີນງານຂອງພັກ ກ່ອນການເລືອກຕັ້ງ, ໂຄງການທີ່ປະກອບດ້ວຍບັນດາມະຕິຕ່າງໆ ຂອງກອງປະຊຸມໃຫຍ່ ແລະກອງປະຊຸມສະໄໝສາມັນຂອງສູນກາງພັກ ສ.ສ.ສ.ຊ.

ຂ້າພະເຈົ້າຫມາຍເຖິງຄວາມສາມັກຄີກັນທາງດ້ານ ສັງຄົມອີກດ້ວຍ. ມັນພວມໄດ້ຮັບການສະແດງອອກ ຢູ່ໃນພັນທະພາບກຳມະກອນ-ຊາວນາ-ປັນຍາຊົນ, ໃນພົນປະໂຫຍດ ອັນດຽວກັນຂອງຊັ້ນຄົນທັງຫລາຍ, ໃນການລົບລ້າງ ຄວາມແຕກຕ່າງກັນລະຫວ່າງຕົວເມືອງກັບຊົນນະບົດ, ລະຫວ່າງ ການອອກແຮງງານດ້ວຍມັນສະຫມອງ ກັບການອອກແຮງງານ ດ້ວຍກຳລັງກາຍ.

ສຸດທ້າຍ, ຂ້າພະເຈົ້າຫມາຍເຖິງຄວາມສາມັກຄີກັນ ທາງດ້ານຊົນຊາດຊົນເຜົ່າທັງຫລາຍຂອງປະເທດເຮົາເຊັ່ນດຽວກັນ. ມັນພວມໄດ້ຮັບການສະແດງອອກຢູ່ໃນການສົມທົບກັນລະຫວ່າງນ້ຳໃຈຮັກຊາດແບບໂຊວຽດກັບນ້ຳໃຈສາກົນນິຍົມ, ໃນ ການສ້າງຕັ້ງເສດຖະກິດຂອງປວງປະຊາຊົນ, ການສົມທົບກັນ ລະຫວ່າງວັດທະນະທຳແຫ່ງຊາດຕ່າງໆ.

ຂ້າພະເຈົ້າຢາກເວົ້າເປັນພິເສດ ກ່ຽວກັບບົດບາດ ສຳຄັນຂອງສະຫະພັນລັດເຊຍ ໃນບັນດາເລື່ອງເຫລົ່ານັ້ນ. ສະຫະພັນລັດເຊຍໄດ້ປະກອບສ່ວນອັນປະເສີດເລີດລ້ຳເຂົ້າໃນການສ້າງການພົວພັນກັນທີ່ມີສິດເທົ່າທຽມກັນລະຫວ່າງ ບັນດາ ຊົນຊາດຕ່າງໆຂອງປະເທດເຮົາ ແລະໃນການສ້າງຕັ້ງ ສະຫະພາບແບບສະຫມັກໃຈຂອງບັນດາສາທາລະນະລັດໂຊວຽດທັງຫລາຍ. (ຕົບມື.)

ຄວາມສາມັກຄີກັນ, ຄວາມເປັນກ້ອນເປັນຫນ່ວຍກັນ ທາງສັງຄົມ ເປັນພົນສຳເລັດອັນດີງາມທີ່ບໍ່ເຄີຍມີມາກ່ອນ ແຫ່ງລະ

ບອບສັງຄົມນິຍົມ, ເປັນກຳລັງແຮງທີ່ເຂັ້ມແຂງກ່ວາໝູ່. ມັນແນ່ນອນວ່າ ພວກຈັກກະພັດນິຍົມມີຈະລອດ, ມີຈັບສົມບັດຫລາຍ; ພວກເຂົາກໍມີນັກວິທະຍາສາດ, ວິສາວະກອນ, ນັກວັນນະຄະດີທີ່ດີເຊັ່ນດຽວກັນ. ແຕ່ວ່າພວກເຂົາ ບໍ່ອາດມີສັງຄົມແນວນັ້ນໄດ້. ສັດຕູຂອງພວກເຮົາຄວນຈື່ຈຳບົດຮຽນ ທາງປະຫວັດສາດ; ພວກເຂົາຄວນຈື່ວ່າ ຄວາມສາມັກຄີ ຂອງບັນດາຊາວໂຊວຽດ ກາຍມາເປັນກຳລັງແຮງ ທີ່ເຂັ້ມແຂງທີ່ສຸດ ໂດຍສະເພາະໃນເມື່ອເພິ່ນພະຍາຍາມໃຊ້ "ຄຳເວົ້ານາບຂູ່". (ຕົບມືຢ່າງຍືດຍາວ.)

ຄວາມສາມັກຄີຂອງປະຊາຊົນໂຊວຽດ ເປັນພື້ນຖານທີ່ໝັ້ນຄົງຂອງຄວາມເຂັ້ມແຂງຂອງລັດສັງຄົມນິຍົມ ຂອງພວກເຮົາ. ໃນໄລຍະເວລາຂອງສັດຕະວັດທີ ໒ ການເປັນລັດ, ພື້ນຖານທາງດ້ານເສດຖະກິດ, ສັງຄົມແລະການເມືອງ ຂອງປະເທດເຮົາ ໄດ້ຮັບການປັບປຸງໃຫ້ໝັ້ນຄົງຍິ່ງຂຶ້ນ. ປະຊາທິປະໄຕແບບສັງຄົມນິຍົມກໍໄດ້ຮັບການເສີມຂະຫຍາຍໃຫ້ສູງຂຶ້ນ. ລັດຖະທຳມະນູນສະບັບໃໝ່ ເປັນລັດຖະທຳມະນູນ ແຫ່ງລະບອບສັງຄົມນິຍົມທີ່ຈະເລີນກ້າວໜ້າ. ລະບົບກົດໝາຍ ພວມໄດ້ຮັບການດັດປ່ຽນໃຫ້ເປັນແບບໃໝ່ຢ່າງວ່ອງໄວ.

ໃນໄລຍະເວລາ ໑໐ ປີທີ່ຜ່ານມານີ້ ບັນດາສະພາໂຊວຽດໄດ້ເສີມຂະຫຍາຍບົດບາດຂອງຕົນໃຫ້ກວ້າງຂວາງຍິ່ງຂຶ້ນເຊິ່ງພິສູດໃຫ້ເຫັນເຖິງຄວາມສາມາດອັນໃຫຍ່ຫລວງຂອງບັນດາສະພາໂຊວຽດ. ບັນດາສະພາໂຊວຽດກາຍມາເປັນ ຜູ້ລິເລີ່ມໃນ

ການແກ້ໄຂບັນຫາຕ່າງໆທາງດ້ານເສດຖະກິດ, ວັດທະນະທຳ, ການຮັບໃຊ້ພົນລະເມືອງ, ການຜະລິດສິນຄ້າ ອຸປະໂພກ ບໍລິໂພກ, ການກວດກາກົງຈັກຄຸ້ມຄອງໂຮງຈັກໂຮງງານແລະກິດຈະການຕ່າງໆ, ການປັບປຸງການພົວພັນກົມກັບ ມະຫາຊົນ , ການປະຕິບັດຄຳສະເໜີ ຂອງບັນດາຜູ້ເລືອກຕັ້ງ. ຂ້າພະເຈົ້າຄິດວ່າວຽກການຂອງສະພາໂຊວຽດສູງສຸດຊຸດໃໝ່ແຫ່ງສະຫະພັນລັດເຊຍ, ສາທາລະນະລັດຕ່າງໆແຫ່ງ ສ.ສ.ສ.ຊ. ຈະໄດ້ດຳເນີນໄປຕາມທິດທາງແນວນັ້ນເອງ. (ຕົບມື.)

ບັນດາສະຫາຍຮູ້ດີແລ້ວວ່າ ລະບົບສະພາໂຊວຽດ ພວມໄດ້ຮັບການຈັດຕັ້ງຂຶ້ນໃນການເລືອກຕັ້ງຄັ້ງທີ່ຈະມາເຖິງນີ້. ພັກເຮົາຄິດວ່າ ບົດບາດຂອງສະພາໂຊວຽດ ຕ້ອງໄດ້ຮັບການຍົກໃຫ້ສູງຍິ່ງຂຶ້ນ ເປັນຕົ້ນແມ່ນສະພາປະຈຳແຂວງແລະເຂດ. ສະພາໂຊວຽດເຫລົ່ານັ້ນ ຕ້ອງເປັນກຳລັງແຮງທີ່ສຳຄັນ ກ່ວາໝູ່ໃນການຂະຫຍາຍເສດຖະກິດແລະສັງຄົມ. ຄວາມສາມາດທາງດ້ານວັດຖຸຂອງບັນດາສະພາໂຊວຽດເຫລົ່ານັ້ນ ຄວນຕິດແໜ້ນກັບຜົນງານຂອງບັນດາໂຮງຈັກໂຮງງານປະຈຳທ້ອງຖິ່ນ. ບັນດາສະພາໂຊວຽດຄວນເສີມຂະຫຍາຍການກວດກາຕໍ່ການປະຕິບັດແຜນການຕ່າງໆ, ຕໍ່ການປະຕິບັດກົດໝາຍ. ໃນຖານະເປັນປະທານຄະນະບໍລິຫານງານ ຂອງສະພາໂຊວຽດ ສູງສຸດແຫ່ງ ສ.ສ.ສ.ຊ. ຂ້າພະເຈົ້າຢາກແຈ້ງໃຫ້ທ່ານຮູ້ວ່າ ພວກເຮົາກຽມເຮັດກົດໝາຍພິເສດ ວ່າດ້ວຍສິດຂອງບັນດາສະພາໂຊວຽດປະຈຳແຂວງ, ເຂດ. ການປະຊຸມສະໄໝ ສາມັນ

ຂອງສະພາໂຊວຽດສູງສຸດຄັ້ງໜ້ານີ້ ຈະໄດ້ພິຈາລະນາ ຣ່າງກົດໝາຍດັ່ງກ່າວນັ້ນ.

ໃນປະຈຸບັນນີ້ ບັນດາສະພາໂຊວຽດປະກອບດ້ວຍຜູ້ແທນປະຊາຊົນໂຊວຽດ ນັບເປັນລ້ານໆຄົນແລະພະນັກງານຕ່າງໆ. ຜູ້ອອກແຮງງານຊາວໂຊວຽດ ຖືກັນວ່າ ນ້ຳໃຈ ຜູ້ຮັບຜິດຊອບ, ຄວາມຍຶດໝັ້ນໃນຫລັກການຂອງບັນດາສະພາໂຊວຽດເປັນຫຼັກເກັນໜຶ່ງຂອງອຳນາດການປົກຄອງແບບໂຊວຽດ. ບັນດາສະພາໂຊວຽດປະກອບດ້ວຍຜູ້ຄົນຫລາຍ; ອັນນັ້ນກໍສະແດງເຖິງອິດທິພົນຂອງບັນດາສະພາໂຊວຽດ; ນອກຈາກນັ້ນບັນດາສະພາໂຊວຽດກໍ່ມີກຳລັງແຮງ ແລະອິດທິພົນຫລາຍ ຍ້ອນວ່າ ຜູ້ແທນທຸກຄົນພະນັກງານທຸກຄົນຕ່າງກໍເຮັດວຽກ ຫລາຍ.

ທຸກຄົນຕ້ອງຮູ້ໜ້າທີ່ຂອງຕົນ ທີ່ມີຕໍ່ປະຊາຊົນ,ຕ້ອງຮູ້ໜ້າທີ່ທາງດ້ານພັກ, ວຽກງານແລະທາງດ້ານມະນຸດສະທຳ.ຄົນປາສະຈາກການປະຕິບັດໜ້າທີ່ຢ່າງເນື່ອງນິດ ລຽນຕິດ, ປາສະຈາກການເຮັດໃຫ້ສັບຄຳເວົ້າຕິດພັນກັບການກະທຳແລ້ວ ມັນກໍ່ບໍ່ອາດຈະມີພະນັກງານພັກ ຫລືສະພາໂຊວຽດໄດ້. ຄວາມ ດຸໝັ່ນໃນວຽກງານ, ຄວາມຮູ້ລະບຽບວິໄນ, ຄວາມຮູ້ ຮັບຜິດຊອບ, ຄວາມຈິງໃຈເປັນພື້ນຖານຂອງຊື່ສຽງກຽດຍົດຂອງພະນັກງານທີ່ຕ້ອງປ້ອງກັນຊື່ສຽງກຽດຍົດຂອງຕົນໄປ ຕະຫລອດຊີວິດ.

ຊື່ສຽງກຽດຍົດຂອງພະນັກງານ ບໍ່ແມ່ນສິ່ງທີ່ໄດ້ມາຈາກ ຜູ້ຄົນພາຍນອກ. ພະນັກງານຕ້ອງຍາດເອົາຊື່ສຽງກຽດຍົດ ນັ້ນ

ດ້ວຍການອອກແຮງງານ, ດ້ວຍການກະທຳພາກຕົວຈິງ. ອັນນັ້ນເປັນວິທີການດຽວທີ່ຈະຍາດເອົາຄວາມຈົມເຊີຍມາຈາກປະຊາຊົນ.(ຕົບມື.) ອັນນັ້ນກໍເປັນສິ່ງທີ່ສູງສົ່ງກ່ວາໝູ່ສຳລັບຜູ້ແທນສະພາໂຊວຽດ,ແກ່ລັດຖະບູລຸດທຸກຄົນ.(ຕົບມື.)

ບັນດາສະຫາຍ ! ຂ້າພະເຈົ້າຂໍເວົ້າກ່ຽວກັບບັນຫາ ບາງຢ່າງຂອງນະໂຍບາຍຕ່າງປະເທດ ແລະ ສະຖານະການທາງສາກົນໃນປະຈຸບັນນີ້.

ກ່ອນອື່ນໝົດ ມັນຕ້ອງກ່າວເນັ້ນວ່າ ໃນໄລຍະເວລາ ໑໐ ປີທີ່ຜ່ານມານີ້ ການຮ່ວມມືກັນລະຫວ່າງບັນດາປະເທດ ສັງຄົມນິຍົມທັງຫລາຍ ໄດ້ຮັບການຂະຫຍາຍຕົວຕໍ່ໄປ.ການຮ່ວມມືກັນດັ່ງກ່າວ ເປັນກຳລັງດັນທີ່ເຂັ້ມແຂງໃນການພັດທະນາປະເທດສັງຄົມນິຍົມທຸກປະເທດ; ພ້ອມກັນນັ້ນ ມັນກໍເປັນສິ່ງທີ່ຮັບ ປະກັນການເດີນໄປທາງໜ້າຂອງພວກເຮົາໃນໄລຍະເວລາທີ່ສັບສົນແລະບໍ່ສະຫງົບ.

ຄວາມເຂັ້ມແຂງຂອງຄວາມສາມັກຄີກັນ ຂອງບັນດາ ປະເທດສັງຄົມນິຍົມອ້າຍນ້ອງ, ຄວາມເຂັ້ມແຂງຂອງນ້ຳໃຈສາກົນນິຍົມແບບສັງຄົມນິຍົມ ໄດ້ຮັບການສະແດງອອກໄປ ໃນການສະໜັບສະໜູນອັນໃຫຍ່ຫລວງແກ່ປະຊາຊົນຫວຽດນາມທີ່ໄດ້ຕໍ່ສູ້ຕ້ານພວກອາເມລິກາຜູ້ຮຸກຮານ ແລະ ພວກຈີນຜູ້ຮຸກຮານ. ຖ້າຫາກວ່າຜູ້ໃດໄດ້ທ້າທາຍເກາະຜົດສັນຕິພາບແລະຄວາມປອດໄພຂອງປະເທດວິລະຊົນນີ້ ພວກເຮົາ ກໍຈະ ໄດ້ເຮັດແນວນັ້ນອີກເທື່ອໃໝ່(ຕົບມືຢ່າງຍືດຍາວ). ພວກເຮົາ

ສາມັກຄີແລະສະໜັບສະໜູນປະຊາຊົນລາວແລະກຳປູເຈັຍ ທີ່ໄດ້ຕໍ່ສູ້ຢ່າງຍືດຍາວ ເພື່ອຍາດເອົາສິດຕໍ່ຊີວິດແບບໃໝ່.(ຕົບມື.)

ນະໂຍບາຍທີ່ຮັກຫອມສັນຕິພາບ ແຫ່ງບັນດາປະເທດສັງຄົມນິຍົມ, ການຕໍ່ສູ້ລວມຂອງບັນດາປະເທດສັງຄົມນິຍົມເພື່ອຜ່ອນຄາຍຄວາມຕຶງຄຽດ ແລະການສະກັດກັ້ນ ໄພອັນຕະລາຍຂອງສົງຄາມປະລະມານູຂອງໂລກນັ້ນ ມັນໄດ້ກາຍເປັນປັດໄຈ ອັນຕັດສິນຂອງຊີວິດສາກົນ. ການຕໍ່ສູ້ດັ່ງກ່າວໄດ້ກາຍເປັນສັນຍາລັກໃຫ້ແກ່ອະນາຄົດອັນສັນຕິຂອງມວນມະນຸດຊາດ.

ຕາມຄວາມເປັນຈິງແລ້ວ ບັນດາຂໍ້ຕົກລົງທີ່ສຳຄັນທາງດ້ານການປົກປ້ອງສັນຕິພາບແລະການສະກັດກັ້ນການແຂ່ງຂັນສ້າງອາວຸດໃນໄລຍະເວລາ ໑໐ ປີທີ່ຜ່ານມານີ້ ຕ່າງກໍເປັນຜົນງານຂອງການລິເລີ່ມຂອງບັນດາປະເທດສັງຄົມນິຍົມ. ບັນດາຂໍ້ສະເໜີແບບຕົວຈິງກ່ຽວກັບການປົດອາວຸດ ແລະ ການຮ່ວມມືກັນທາງສາກົນ ເປັນໂຄງການຕົວຈິງທີ່ກວ້າງຂວາງ ທີ່ແນໃສ່ຮັບປະກັນສັນຕິພາບໃນຍຸກສະໄໝນີ້. ເພື່ອປະຕິບັດ ໂຄງການນີ້ພວກເຮົາຈະຕໍ່ສູ້ຢ່າງສຸດກົກສຸດປາຍ ແລະບໍ່ຮູ້ອິດເມື່ອຍ.(ຕົບມື).

ໃນປະຈຸບັນນີ້ ໃນເມື່ອບັນດາກຳລັງຈັກກະພັດນິຍົມ ໄດ້ບຸກຈູກການລົດຜ່ອນຄວາມເຄັ່ງຕຶງ, ບຸກຈູກສັນຕິພາບ, ສິດເສລີຂອງບັນດາປະຊາຊາດຕ່າງໆນັ້ນ ຄວາມສາມັກຄີກັນແບບການກະທຳຂອງບັນດາປະເທດສັງຄົມນິຍົມທັງຫລາຍ ເພື່ອປ້ອງກັນ

ສິ່ງອັນດີເລີດເຫລົ່ານັ້ນ ມັນມີຄວາມຫມາຍອັນສຳຄັນກ່ວາຫມູ່. ຂ້າພະເຈົ້າເຊື່ອຫມັ້ນວ່າ ບັນດາປະເທດສັງຄົມນິຍົມ ຈະໄດ້ ປະຕິບັດຫນ້າທີ່ດັ່ງກ່າວຢ່າງເດັດຂາດ. (ຕົບມືຢ່າງຍືດຍາວ).

ນະໂຍບາຍຕ່າງປະເທດຂອງພວກເຮົາ ມີກຳລັງແຮງ ທີ່ເຂັ້ມແຂງ ຍ້ອນວ່າມັນຕອບສະຫນອງຜົນປະໂຫຍດ ທີ່ ແທ້ຈິງຂອງບັນດາປະເທດສັງຄົມນິຍົມ ແລະພົນລະເມືອງສ່ວນຫລວງຫລາຍຂອງໂລກອີກດ້ວຍ. ມັນຕອບສະຫນອງ ຜົນປະໂຫຍດກ່ອນອື່ນຫມົດແມ່ນຂອງບັນດາປະຊາຊາດຕ່າງໆ ທີ່ໄດ້ຫລຸດພົ້ນອອກຈາກແອກແຫ່ງການກົດຂີ່ ແບບລ່າເມືອງຂຶ້ນ, ພວມສ້າງສາຊີວິດເອກະລາດແບບໃຫມ່. ເຫມືອນດັ່ງກັບບັນດາປະເທດສັງຄົມນິຍົມ ພວກເຂົາຕ້ອງການສັນຕິພາບທີ່ຫມັ້ນຄົງ, ການເຄົາລົບອະທິປະໄຕແລະສິດເສລີພາບ,ຕ້ອງການໃຫ້ມີການພົວພັນກັນທາງສາກົນຢ່າງສະເຫມີພາບກັນ.

ພວກເຮົາອີງໃສ່ພື້ນຖານດັ່ງກ່າວ ເພື່ອຂະຫຍາຍ ສາຍສຳພັນກັນເພື່ອນມິດ ແລະການຮ່ວມມືກັນທີ່ກໍ່ໃຫ້ເກີດຜົນ ເຊິ່ງກັນແລະກັນກັບປະເທດອາຊີອາຟະລິກາອາເມລິກາລາຕິນຫຼາຍປະເທດ ບໍ່ວ່າເປັນປະເທດໃຫຍ່ ຄື ອິນເດຍ ຫລື ປະເທດນ້ອຍ ຄື ເບັນນິນ, ສາທາລະນະລັດ ເອັນຈິເລຍ ຫລືຣາຊະອານາຈັກ ຈໍແດນ, ປະເທດຕຸລະກີ ທີ່ເປັນປະເທດເພື່ອນບ້ານຫລືປະເທດ ບະເລຊິນ ທີ່ເປັນປະເທດທີ່ຕັ້ງຢູ່ຫ່າງໄກ.

ພວກເຮົາເອົາໃຈໃສ່ຕໍ່ສາຍສຳພັນກັນກັບປະເທດເຫລົ່ານັ້ນ, ເຄົາລົບສິດເສລີພາບຂອງພວກເຂົາ,ບໍ່ຢາກຍຶດຈັບສົມບັດຂອງ

ປະເທດເຫລົ່ານັ້ນ, ບໍ່ຕ້ອງການສ້າງຕັ້ງຖານທັບ ໃນດິນແດນຂອງປະເທດເຫລົ່ານັ້ນ. ພວກເຮົາຕີລາຄາສູງ ຕໍ່ການທີ່ພວກເຮົາມີທ່າທີທັດສະນະທີ່ຄ້າຍຄືກັນກັບທ່າທີທັດສະນະ ຂອງ ປະເທດເຫລົ່ານັ້ນ; ພ້ອມກັນນັ້ນ ພວກເຮົາບໍ່ໄດ້ພະຍາຍາມ ບີບບັງຄັບໃຫ້ປະເທດເຫລົ່ານັ້ນ ປະຕິບັດນະໂຍບາຍແນວນັ້ນນັ້ນຈັກເທື່ອ.

ພວກເຮົາຮູ້ສຶກພາກພູມໃຈວ່າ ສ.ສ.ສ.ຊ. ໄດ້ປະ ກອບສ່ວນທີ່ສຳຄັນເຂົ້າໃນການປັບປຸງເສດຖະກິດ, ວັດທະນະ ທຳແລະການປ້ອງກັນປະເທດ ຂອງບາງປະເທດ. ໂດຍຍຶດໝັ້ນໃນຄຳສັ່ງສອນຂອງເລນິນ ພວກເຮົາເວລາໃດ ກໍໄດ້ສະໜັບສະໜູນບັນດາປະຊາຊາດຕ່າງໆ ທີ່ຕໍ່ສູ້ເພື່ອເສລີພາບແລະເອກະລາດແຫ່ງຊາດ. ພວກເຮົາບໍ່ໄດ້ໃຊ້ ການສະໜັບສະໜູນດັ່ງກ່າວໃຫ້ເປັນພາຫານະບີບບັງຄັບ.

ອັນນັ້ນພວມສ້າງບັນຍາກາດແຫ່ງຄວາມເຄົາລົບ ເຊິ່ງ ກັນແລະກັນ, ຄວາມເຊື່ອຖືກັນເຊິ່ງຮັບໃຊ້ຜົນປະໂຫຍດຕໍ່ກັນແລະກັນ ແລະສັນຕິພາບຂອງໂລກ.(ຕົບມື.)

ຂ້າພະເຈົ້າຢາກເວົ້າເປັນພິເສດ ກ່ຽວກັບການ ຂະຫຍາຍຕົວຂອງສາຍສຳພັນກັນທີ່ດີກັບປະເທດອິນເດຍ ເຊິ່ງຮັບໃຊ້ຜົນປະໂຫຍດຂອງປະຊາຊົນທັງສອງປະເທດ, ສັນຕິພາບໃນອາຊີແລະສັນຕິພາບຂອງທົ່ວໂລກອີກດ້ວຍ. ໃນມໍ່ໆມານີ້ພວກເຮົາໄດ້ຕົກລົງກັນທີ່ຈະປະສານສົມທົບກັນໃນການບິນໃນອະວະກາດເຊິ່ງໄດ້ກາຍມາເປັນເຄື່ອງໝາຍແຫ່ງມິດຕະພາບ ຂອງພວກ

ເຮົາ.(ຕົບມືຢ່າງຍືດຍາວ.)

ພວກເຮົາຮູ້ສຶກດີໃຈຫລາຍວ່າ ລັດຖະບານຂອງ ອິນເດຍ ການທີ ໄດ້ຮັບຮອງຂໍ້ສະເໜີດັ່ງກ່າວ ຂອງພວກເຮົາແລ້ວ.

ເຖິງເປັນແນວນັ້ນກໍຕາມ ວົງການຈັກກະພັດນິຍົມທີ່ກະຫາຍສົງຄາມ ກ່ອນອື່ນໝົດແມ່ນຂອງສະຫະລັດອາເມລິກາ ບໍ່ພໍໃຈຕໍ່ການປົກປ້ອງສັນຕິພາບ, ບໍ່ພໍໃຈຕໍ່ຜົນສຳເລັດຂອງການຕໍ່ສູ້ປົດປ່ອຍຊາດ ຂອງປະຊາຊາດຕ່າງໆ.ພວກເຂົາໄດ້ຕອບແນວໃດຕໍ່ການຂະຫຍາຍສາຍສຳພັນກັນ ທີ່ກໍ່ໃຫ້ເກີດຜົນເຊິ່ງກັນ ແລະກັນ ລະຫວ່າງບັນດາປະເທດສັງຄົມນິຍົມ ກັບປະເທດທຶນນິຍົມຕ່າງໆ, ຕໍ່ຜົນສຳເລັດຂອງກອງປະຊຸມທົ່ວທະວີບຢູໂລບ ທີ່ເຮັນຊິນກີ, ຕໍ່ໄຊຊະນະຂອງປະຊາຊົນປະຕິວັດຂອງປະເທດອັງໂກລາ ແລະປະເທດເອັດຕີໂອປີ ເໜືອ ພວກຣຸກຮານ ແລະລູກສະໝຸນ? ພວກເຂົາໄດ້ຕອບແນວພິເສດ: ພວກເຂົາ ໄດ້ເລີ່ມຕົ້ນແກ້ດຶງການເຈລະຈາກັນ ກ່ຽວກັບການຈຳກັດອາວຸດຍຸດທະສາດ-໔ ໃຫ້ຍືດຍາວ, ຕໍ່ມານັ້ນ ພວກເຂົາໄດ້ພະຍາຍາມສະກັດກັ້ນການສັດຕະຍາບັນຂໍ້ຕົກລົງດັ່ງກ່າວ; ພວກເຂົາ ໄດ້ຊົມເຊີຍການທໍລະຍົດຂອງສາດັດ ທີ່ໄດ້ທຳລາຍຄວາມສາມັກຄີກັນຂອງແນວໂຮມ ຂອງຊາວອາລັບທີ່ຕໍ່ສູ້ຕ້ານພວກຣຸກຮານ; ພວກເຂົາໄດ້ບັງຄັບໃຫ້ບັນດາປະເທດພາຄີກຸ່ມນາໂຕໄດ້ຕົກລົງໂຄງການສ້າງອາວຸດໄລຍະຍາວ; ພວກເຂົາໄດ້ງົດ ແລະບາງຄັ້ງໄດ້ສະກັດກັ້ນການເຈລະຈາກັນກ່ຽວກັບບັນຫາການປົດອາວຸດ; ສຸດທ້າຍ, ພວກເຂົາໄດ້ຜ່ານຂໍ້ຕົກລົງແບບທ້າທາຍ ເກາະຜິດ

ກ່ຽວກັບການຕັ້ງຈະລວດໃຫ່ມຂອງອາເມລິກາ ໃນດິນແດນ ຢູ ລົບຕາເວັນຕົກ ເຊິ່ງເລັ່ງໃສ່ ສ.ສ.ສ.ຊ. ແລະປະເທດພົນທະມິດຂອງ ສ.ສ.ສ.ຊ.

ພຸກຄົນກໍເຂົ້າໃຈວ່າ ລັດຖະບານປະຈຸບັນນີ້ ຂອງສະຫະລັດອາເມລິກາໄດ້ມຸ່ງໜ້າໄປສູ່ການທຳລາຍການລົດຜ່ອນ ຄວາມເຄັ່ງຕຶງ, ໄປສູ່ການເຮັດໃຫ້ສະຖານະການສາກົນ ຮ້າຍແຮງຍິ່ງຂຶ້ນ. ມັນໄດ້ພະຍາຍາມທີ່ຈະບີບບັງຄັບບັນດາປະເທດ ສັງຄົມນິຍົມແລະປະເທດຕ່າງໆ ປະຕິບັດການຕາມໃຈມັກຂອງສະຫະລັດອາເມລິກາອີກດ້ວຍ.

ເລື່ອງນີ້ບໍ່ໄດ້ເກີດຂຶ້ນໂດຍບັງເອີນ. ພຸກຄົນຕ່າງກໍເຂົ້າໃຈວ່າ ມີແຕ່ໂດຍຜ່ານການຕໍ່ສູ້ທາງການເມືອງຢ່າງຍືດຍາວທີ່ນັ້ນມັນຈຶ່ງສາມາດຮັບປະກັນສັນຕິພາບ ແລະການລົດຜ່ອນ ຄວາມເຄັ່ງຕຶງໄດ້. ການຜ່ອນຄາຍມັນຮັບໃຊ້ຜົນປະໂຫຍດ ຂອງປະຊາຊາດຕ່າງໆ. ບັນດານັກການເມືອງທີ່ຮູ້ສະພາບຕົວຈິງ, ຮູ້ຄວາມຮັບຜິດຊອບ ຕ່າງກໍເຂົ້າໃຈເຖິງຄວາມຈຳເປັນ ຕ້ອງມີການລົດຜ່ອນຄວາມເຄັ່ງຕຶງ. ແຕ່ວ່າຍັງມີກຳລັງ ທີ່ ຄັດຄ້ານການລົດຜ່ອນຄວາມເຄັ່ງຕຶງນັ້ນ ຄືບັນດາພັກພວກ ໃນປະເທດທຶນນິຍົມທີ່ປະຕິບັດການເພື່ອກຽມສົງຄາມ (ພວກທະຫານ,ບໍລິສັດຕ່າງໆທີ່ກ່ຽວຂ້ອງກັບພວກທະຫານ, ລູກສະໝູນຂອງພວກເອົາກົງຈັກລັດແລະກົນໄຄສະນາການຕ່າງໆ).

ຄວາມສາມາດຂອງພວກຈັກກະພັດນິຍົມ ທີ່ຈະຄອບຄອງປະເທດແລະປະຊາຊາດຕ່າງໆຫລຸດລົງໄວເທົ່າໃດ ຜູ້ຕາງ ໜ້າ

ຂອງ ພວກເຂົາທີ່ນິຍົມ ການຮຸກຮານ ກໍ ປະຕິບັດການ-ປ່າງຮ້າຍແຮງຂຶ້ນ ເທົ່ານັ້ນ. ມີແຕ່ ຄວາມເຂັ້ມແຂງ, ນະໂຍບາຍທີ່ອີງໃສ່ສະພາບຕົວຈິງ ຂອງບັນດາປະເທດ ທີ່ຮັກຫອມສັນຕິພາບ, ຄວາມຕັ້ງໃຈຂອງປະຊາຊາດຕ່າງໆທີ່ຈະທຳລາຍແຜນການອັນເປັນ ອັນຕະລາຍຂອງພັກພວກ ທີ່ຢາກຄອບຄອງໂລກ ເທົ່ານັ້ນ ຈຶ່ງສາມາດສະກັດກັ້ນຄວາມກະຫາຍການຮຸກຮານໄດ້.

ພາຍຫລັງທີ່ສະຫະລັດອາເມລິກາ ໄດ້ບັງຄັບໃຫ້ບັນດາ ປະເທດຢູໂລບຕາເວັນຕົກຮັບຮອງເອົາ "ແຜນການຈະຫລວດ" ແລ້ວ ສະຫະລັດອາເມລິກາ ກໍໄດ້ເອົາໃຈໃສ່ທະວີບອາຊີ ແລະ ຕາເວັນອອກກາງ. ພວກເຂົາໄດ້ສົ່ງກອງເຮືອຮົບເຂົ້າສູ່ນ່ານນ້ຳຂອງປະເທດ ອີລັງ ປະຕິວັດໂດຍອ້າງວ່າ ພວກເຂົາຢາກກູ້ຊີວິດຂອງນັກການທູດອາເມລິກາທີ່ຖືກຈັບ. ໃນເວລາຕໍ່ມາພວກເຂົາກໍໄດ້ເອົາໃຈໃສ່ຕໍ່ເຫດການທີ່ເກີດຂຶ້ນໃນປະເທດ ອາຟະການິສະຖານ ໂດຍເປີດຂັ້ນລົບຕ້ານໂຊວຽດ ພາຍໃນສະຫະລັດອາເມລິກາເອງ ໃນລະດັບສູງທີ່ບໍ່ເຄີຍມີມາກ່ອນ.

ອັນນັ້ນລ້ວນແຕ່ເປັນຂໍ້ອ້າງທີ່ບໍ່ຈິງທັງນັ້ນ. ທ່ານກາເຕີແລະຜູ້ຊ່ວຍ ຕ່າງກໍຮູ້ຢ່າງດີວ່າ ບໍ່ໄດ້ມີ "ການຮຸກຮານລັດເຊຍ " ເຂົ້າໃນອາຟະການິສະຖານຈັກເທື່ອ. ສ.ສ.ສ.ຊ. ໄດ້ປະຕິບັດການໂດຍຖືກຕ້ອງຕາມຂໍ້ຕົກລົງມິດຕະພາບ ອາຟະການິສະຖານ-ໂຊວຽດ. ລັດຖະບານອາຟະການິສະຖານ ມີ ຊຸດ ໄດ້ຂໍໃຫ້ ສ.ສ.ສ.ຊ. ຊ່ວຍປ້ອງກັນອາຟະການິສະຖານ ຈາກ

ການຮຸກຮານຂອງກຳລັງປະຕິການພາຍນອກ.

ວໍຊິງຕັນກໍຮູ້ຢ່າງດີວ່າ ໄດ້ມີການຮຸກຮານເຂົ້າ ອາຟະການິສະຖານຈາກດິນແດນປາກີສະຖານເຊັ່ນດຽວກັນ. ພວກອາເມລິກາປະສານສົມທົບກັບພວກຈີນ ໃນການນຳພາການຮຸກຮານດັ່ງກ່າວ ເຊິ່ງໄດ້ນາບຂູ່ການປະຕິວັດອາຟະການິສະຖານ ແລະນາບຂູ່ຊາຍແດນພາກໃຕ້ຂອງປະເທດອີກດ້ວຍ.

"ທຳນຽບຂາວ" ກໍຮູ້ຢ່າງດີວ່າ ສ.ສ.ສ.ຊ. ຈະໄດ້ຖອນກອງທະຫານຂອງຕົນ ຖ້າຫາກວ່າເຫດຜົນຂອງການສົ່ງທະຫານໂຊວຽດຈະຫມົດສິ້ນໄປ, ຖ້າຫາກວ່າລັດຖະບານອາຟະການິສະຖານຈະໄດ້ຖືວ່າກອງທະຫານໂຊວຽດເປັນສິ່ງ ທີ່ບໍ່ຈຳເປັນຈະຕ້ອງມີແລ້ວ. ສະຫະລັດອາເມລິກາທວງໃຫ້ຖອນກອງທະຫານໂຊວຽດອອກຈາກອາຟະການິສະຖານ. ໃນຂະນະດຽວກັນນັ້ນ ສະຫະລັດອາເມລິກາພວມເຮັດທຸກສິ່ງທຸກຢ່າງເພື່ອແກ່ດຶງການຖອນກອງທະຫານໂຊວຽດໃຫ້ຍືດຍາວຍ້ອນວ່າ ສະຫະລັດອາເມລິກາພວມເສີມຂະຫຍາຍການແຊກແຊງເຂົ້າ ໃນກິດຈະການພາຍໃນຂອງອາຟະການິສະຖານ.

ຂ້າພະເຈົ້າຢາກປະກາດຢ່າງຈະແຈ້ງວ່າ ພວກເຮົາ ຈະກຽມພ້ອມທີ່ຈະຖອນກອງທະຫານຂອງພວກເຮົາ ໃນເມື່ອ ມັນໄດ້ຍຸດຕິການແຊກແຊງຈາກພາຍນອກ ຕ້ານລັດຖະບານ ແລະປະຊາຊົນອາຟະການິສະຖານ.(ຕົບມື.). ຖ້າຫາກວ່າ ສະຫະລັດອາເມລິກາແລະປະເທດເພື່ອນບ້ານຂອງອາຟະການິສະຖານຈະຮັບປະກັນເລື່ອງນີ້ແລ້ວ ມັນກໍຈະບໍ່ມີຄວາມຈຳເປັນ ທີ່

ຈະໃຫ້ການຊ່ວຍເຫລືອທາງທະຫານໂຊວຽດ. ດັ່ງທີ່ຮູ້ກັນແລ້ວວ່າ ລັດຖະບານອາຟະການີສະຖານໄດ້ປະກາດເຖິງຄວາມຕັ້ງໃຈທີ່ຈະສ້າງຕັ້ງສາຍສຳພັນກັນເພື່ອນມິດ ກັບປະເທດ ເພື່ອນບ້ານ ເຊັ່ນ ປະເທດ ອີລັ່ງ ແລະ ປາກິສະຖານ. ບໍ່ຕ້ອງສົງໃສວ່າ ພວກເຮົາຊົມເຊີຍທ່າທີດັ່ງກ່າວນັ້ນ ຂອງ ອາຟະການີສະຖານ.

ບັນດາຜູ້ນຳອາເມລິກາຮູ້ວ່າ ລັດຖະບານ ອາຟະການີສະຖານເຄົາລົບຄວາມເຊື່ອຖືສາດສະໜາຂອງພົນລະເມືອງ, ໄດ້ປົດປ່ອຍພະສົງທີ່ຖືກ ອາມີນ ໄດ້ຈັບກຸມ, ໄດ້ປະກາດ ຕົວວ່າເປັນຜູ້ປ້ອງກັນສາດສະໜາ ມູສະລິມ ດ້ວຍກົດໝາຍ.ເພາະສະນັ້ນ ຄວາມພະຍາຍາມຂອງພັກພວກທີ່ສະໜັບສະໜູນພວກຣູກຣານອິດຊະລະເອັນ ແລະພວກທີ່ກໍການປາບປາມ ປະເທດອີລັງ ທີ່ຈະຕີຕົວວ່າເປັນ "ຜູ້ປ້ອງກັນສາດສະໜາ ມູສະລິມ" ນັ້ນ ມັນເປັນຕາຍາກຫົວແທ້.

ເປັນຫຍັງພວກວໍຊິງຕັນ ຈຶ່ງເປີດຂັ້ນລົບຕ້ານໂຊວຽດໃນທົ່ວໂລກ ! ເປັນຫຍັງພວກເຂົາຈຶ່ງປ່າວຮ້ອງເຖິງ "ສົງຄາມຂອງພວກລັດເຊຍທີ່ຕ້ານປະຊາຊົນອາຟະການີສະຖານ", "ການນາບຂູ່ປາກີສະຖານ ແລະ ອີລັງ ຈາກໂຊວຽດ" ແລະອື່ນໆ?

ພູກຄົນກໍຮູ້ຢ່າງດີວ່າ ວໍຊິງຕັນ ພວມເຮັດແນວນັ້ນ ກໍ ຍ້ອນວ່າຢາກເສກສັນປັ້ນແຕ່ງເຫດຜົນອັນປອມແປງສຳລັບການເພີ່ມທະວີການຂະຫຍາຍອິດທິພົນຂອງຕົນໃນທະວີບອາຊີ.

ຂັ້ນຮົບຕ້ານໂຊວຽດດັ່ງກ່າວ ເປັນສິ່ງທີ່ໜ້າຕ້ອງການ ແກ່

ຜູ້ໃດໜຶ່ງທີ່ຢາກເອົາຊະນະໃນການເລືອກຕັ້ງ ປະທານາທິບໍດີ ຄົນໃໝ່ໃນລະດູໃບໄມ້ຫລົ່ນ. ນອກຈາກນັ້ນ ສະຫະລັດອາເມລິກາຕ້ອງການສ້າງຕັ້ງຕາໜ່າງຂອງຖານທັບອາເມລິກາ ໃນມະຫາສະມຸດ ອິນເດຍ ,ໃນປະເທດຕາເວັນອອກກາງແລະໃກ້, ໃນປະເທດອາຟະລິກາຕ່າງໆ. ສະຫະລັດອາເມລິກາຢາກສ້າງຕັ້ງການຄອບຄອງປະເທດເຫລົ່ານັ້ນ, ຢາກໃຫ້ຊັບພະຍາ ກອນທຳມະຊາດຂອງປະເທດເຫລົ່ານັ້ນ ຕາມໃຈມັກຂອງພວກເຂົາ. ໃນຂະນະດຽວກັນນັ້ນ ສະຫະລັດອາເມລິກາ ຢາກໃຫ້ດິນແດນຂອງປະເທດເຫລົ່ານັ້ນ ເພື່ອຮັບໃຊ້ແຜນການຍຸດທະສາດ ທີ່ຕ້ານໂລກສັງຄົມນິຍົມແລະບັນດາກຳລັງປົດປ່ອຍຊາດ. ອັນນັ້ນເປັນເປົ້າໝາຍຂອງພວກເຂົາ.

ແຕ່ວ່າ ພວກລ່າເມືອງຂຶ້ນ ແບບປະຈຸບັນນີ້ອາດຈະຜິດຫວັງກໍໄດ້. ພວກເຮົາບໍ່ແມ່ນດຳລົງຕົວຢູ່ໃນທົດສະຫວັດທີ ໔ ຫລື ໕ . ປະເທດຕ່າງໆນັບເປັນສິບໆປະເທດ ທີ່ແຕ່ກ່ອນເປັນປະເທດເມືອງຂຶ້ນ ໄດ້ຮັບບົດຮຽນຂອງຊີວິດເອກະລາດແລະການເມືອງແບບເອກະລາດແລ້ວ. ບັນດາປະຊາຊາດຕ່າງໆ ເລີ່ມເຂົ້າໃຈກົນອຸບາຍຂອງພວກຈັກກະພັດ, ຮູ້ໃຜເປັນເພື່ອນມິດໃຜເປັນສັດຕູ. ນອກຈາກນັ້ນ ໃນພາກພື້ນຕ່າງໆແຫ່ງໂລກ ເຊັ່ນໃນຢູໂລບຕາເວັນຕົກ ຫລືໃນປະເທດຍີ່ປຸ່ນປະຊາຊົນໄດ້ເຂົ້າໃຈຜົນຂອງຊີວິດອັນສັນຕິ, ຜົນຂອງການຄ້າ ຂາຍນຳກັນແລ້ວ, ດ້ວຍເຫດນັ້ນ ພວກເຂົາຈຶ່ງບໍ່ຢາກປະຕິບັດການ ຕາມໃຈ ມັກຂອງພັກພວກອາເມລິກາທີ່ໄດ້ວາງແຜນການ ທີ່ຈະຄອບຄອງ

ໂລກ, ແລະສະກັດກັ້ນການລຶດຜ່ອນຄວາມເຄັ່ງຕຶງ. ເຖິງເປັນຢ່າງນັ້ນກໍຕາມ ເໝືອນດັ່ງແຕ່ກ່ອນພວກເຮົາຕ້ອງໜ້າ ທີ່ຈະເສີມຂະຫຍາຍການຮ່ວມມືກັນຢ່າງສັນຕິກັບບັນດາປະເທດເຫຼົ່ານັ້ນນັບລວມສະຫະລັດອາເມລິກາເອງ.

ພວກອໍຊິງຕັນ ມັກເວົ້າເຖິງຄວາມຈຳເປັນ ທີ່ຈະປ້ອງກັນເສັ້ນທາງອຶນສົ່ງນ້ຳມັນກາດ ໃຫ້ແກ່ອາເມລິກາ. ອັນນັ້ນ ມັນເຂົ້າໃຈໄດ້. ແຕ່ວ່າ ການເຮັດໃຫ້ພາກພື້ນນັ້ນຂອງໂລກ ກາຍເປັນບໍ່ເກີດແຫ່ງສົງຄາມ ບໍ່ແມ່ນການປ້ອງກັນເສັ້ນທາງເຫຼົ່ານັ້ນ.

"ທິດສະດີ" ແບບສ່ຽງໄພຂອງພັກພວກ ທີ່ສະໜັບສະໜູນ "ນະໂຍບາຍໃຊ້ກຳລັງແຮງ" ບໍ່ແມ່ນພຽງແຕ່ນາບຂູ່ ປະເທດໃດໜຶ່ງ ຫຼືບາງປະເທດເທົ່ານັ້ນ ຫາກແມ່ນນາບຂູ່ສັນຕິພາບ ແລະຄວາມປອດໄພຂອງບັນດາປະເທດ ແລະ ປະຊາຊາດທັງຫຼາຍຂອງໂລກ. ດ້ວຍເຫດນັ້ນ ການຕໍ່ຕ້ານແຜນການອັນຊົ່ວຮ້າຍເຫຼົ່ານັ້ນ ແມ່ນໜ້າທີ່ຂອງທຸກຄົນ ທີ່ຮັກຫອມ ສັນຕິພາບ. (ຕົບມືຢ່າງຍືດຍາວ.)

ໃຜງກໍບໍ່ສາມາດເຮັດໃຫ້ສະຫະພາບໂຊວຽດຢ້ານກົວ. ກຳລັງແຮງແລະຄວາມອາດສາມາດຂອງພວກເຮົາເຂັ້ມແຂງທີ່ສຸດ. ພວກເຮົາແລະປະເທດພັນທະມິດສາມາດປ້ອງກັນຕົວ ແລະ ຕໍ່ຕ້ານການໂຈມຕີຂອງສັດຕູໄດ້ (ຕົບມືຢ່າງຍືດຍາວ). ໃຜງກໍບໍ່ສາມາດທ້າທາຍເກາະພົດພວກເຮົາໄດ້. ພວກເຮົາໄດ້ນຳເອົາທິດສະດີແຫ່ງການຕໍ່ສູ້ຢ່າງສຸດກຶກສຸດປາຍ ເພື່ອສັນຕິພາບ

ແລະຄວາມປອດໄພຂອງໂລກ ໄປຕໍ່ຕ້ານ "ທິດສະດີ" ແບບກະຫາຍສົງຄາມແລະການແຂ່ງຂັນສ້າງອາວຸດ. (ຕົບມື). ພວກເຮົາຍຶດໝັ້ນໃນໂຄງການສັນຕິພາບຂອງກອງປະຊຸມໃຫຍ່ຄັ້ງທີ XXIV ແລະ XXV ຂອງພັກເຮົາ. ດ້ວຍເຫດນັ້ນ ເໝືອນດັ່ງໃນທົດສະວັດທີ ໗ ນັ້ນ ໃນທົດສະວັດທີ ໘ ນີ້ ພວກເຮົາຕໍ່ສູ້ເພື່ອປັບປຸງການລົດຜ່ອນຄວາມເຄັ່ງຕຶງ, ເພື່ອການລົດຜ່ອນຈຳນວນອາວຸດ, ເພື່ອຄວາມເຂົ້າໃຈ ເຊິ່ງກັນແລະກັນ ລະຫວ່າງປະຊາຊາດຕ່າງໆ ບໍ່ແມ່ນເພື່ອຄວາມເປັນປໍລະປັກກັນ.

ພວກເຮົາຍົກສູງຄົນທຸງຂອງນະໂຍບາຍຕ່າງປະເທດ ແບບເລນິນ ເຊິ່ງເປັນຄົນທຸງແຫ່ງສັນຕິພາບ, ເສລີພາບ, ເອກະລາດຂອງປະຊາຊາດຕ່າງໆ, ຄົນທຸງແຫ່ງຄວາມ ກ້າວໜ້າທາງສັງຄົມ. (ຕົບມືຢ່າງຍືດຍາວ.)

ສຸດທ້າຍ, ບັນດາເພື່ອນມິດທີ່ຮັກແພງ, ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈຢ່າງບໍລິສຸດໃຈ ຕໍ່ບັນດາຄະນະ ລວມໝູ່ຂອງຜູ້ອອກແຮງງານທີ່ໄດ້ສະເໜີແລະສະໜັບສະໜູນຂ້າພະເຈົ້າໃນຖານະເປັນຜູ້ສະໝັກຮັບເລືອກຕັ້ງໃຫ້ເປັນຜູ້ແທນຂອງສະພາໂຊວຽດສູງສຸດແຫ່ງສະຫະພັນລັດເຊຍ. ຂອບໃຈຫລາຍຫລາຍຕໍ່ບັນດາຄຳເວົ້າທີ່ອົບອຸ່ນໃນມື້ນີ້ (ຕົບມືຢ່າງຍືດຍາວ). ຂ້າພະເຈົ້າຖືຄວາມໄວ້ເນື້ອເຊື່ອໃຈ ຂອງຊາວກອມມູນິດແລະຊາວໂຊວຽດທີ່ບໍ່ແມ່ນຊາວກອມມູນິດວ່າເປັນຄວາມເຫັນດີ ນຳນະໂຍບາຍພາຍໃນແລະພາຍນອກຂອງພັກເລນິນ ອັນສະຫງ່າງາມຂອງພວກເຮົາ , ການຕີລາຄາສູງຕໍ່ວຽກການແບບລວມ

ຫມູ່ຂອງສູນກາງພັກ, ກົມການເມືອງຂອງສູນກາງພັກ ກອມມູນິດແຫ່ງ ສ.ສ.ສ.ຊ. (ຕົບມືຢ່າງຍືດຍາວ.)

ຂ້າພະເຈົ້າຢາກກ່າວເນັ້ນວ່າ ເຫມືອນກັບແຕ່ກ່ອນ ຂ້າພະເຈົ້າຈະໄດ້ພະຍາຍາມທີ່ຈະຕອບສະຫນອງຄວາມໄວ້ເນື້ອເຊື່ອໃຈຂອງພວກເຈົ້າ. ບັນດາຊາວກອມມູນິດ ດຳລົງຊີວິດຢູ່ແລະຕໍ່ສູ້ເພື່ອຊີວິດອັນສັນຕິ, ເພື່ອການອອກແຮງງານແບບມີຫົວຄິດປະດິດສ້າງ, ເພື່ອສະຫວັດດີພາບທາງດ້ານວັດຖຸ ແລະຈິດໃຈຂອງມະນຸດ.(ຕົບມືຢ່າງຍືດຍາວ). ພວກເຮົາ ຊາວໂຊວຽດຈະລົງຄະແນນສຽງ ເພື່ອເຮັດແນວນັ້ນ.(ຕົບມືຢ່າງຍືດຍາວ ແລະດັງສະຫນັ່ນ; ທຸກຄົນລຸກຂຶ້ນຢືນ ແລະຮ້ອງຄຳຂວັນວ່າ : "ພັກກອມມູນິດເລນິນ ຈົ່ງຫມັ້ນຍືນ !")

ຫນັງສືພິມ"ປະລາວະດາ"
ວັນທີ 8ມີ ເດືອນກຸມພາ
ປີ ໑໙໘໐

ສານເຖິງນັກວິດທະຍະສາດອາເມລິກາຜູ້ແຕ່ງຄຳປະກາດ ທີ່ວ່າ "ໄພອັນຕະລາຍແຫ່ງສົງຄາມປະລະມະນູ"

ທ່ານທີ່ເຄົາລົບ,

ຂ້າພະເຈົ້າໄດ້ອ່ານຄຳປະກາດ "ໄພອັນຕະລາຍ - ສົງຄາມປະລະມານູ" ແລະຮ່ວມຄວາມຮູ້ສຶກ ແຫ່ງຄວາມເປັນຫ່ວງໄຍຂອງບັນດານັກວິດທະຍາສາດຕໍ່ໄພອັນຕະລາຍຂອງສົງຄາມປະລະມານູ. ນັບຕັ້ງແຕ່ວັນເວລາທີ່ພະລັງງານປະລະມານູໄດ້ຖືກໃຊ້ເພື່ອຈຸດປະສົງ ທາງການທະຫານ ເປັນເທື່ອທຳອິດນັ້ນ ສ.ສ.ສ.ຊ. ໄດ້ຕໍ່ສູ້ຢ່າງສຸດກຶກ ສຸດປາຍເພື່ອຫ້າມໃຊ້ອາວຸດສັງຫານຊີວິດແລະການທຳລາຍໃນຂອບເຂດທີ່ກວ້າງຂວາງທຸກປະເພດ.

ບັນດານັກວິດທະຍາສາດອາເມລິກາ ມີຄວາມສາມາດທີ່ຈະປະກອບສ່ວນທີ່ສຳຄັນເຂົ້າໃນການເປີດເຜີຍຄວາມເສຍຫາຍອັນໃຫ່ຍຫລວງຂອງກໍລະນີພິພາດ ແບບປະລະມານູລະຫວ່າງ ສ.ສ.ສ.ຊ. ກັບອາເມລິກາ ເຊິ່ງຈະໄດ້ ແຜ່ຂະຫຍາຍໄປໃນຂອບເຂດທົ່ວໂລກ ຢ່າງຫລີກລຽງບໍ່ໄດ້ . ການກະທຳເຫລົ່ານັ້ນ ຈະໄດ້ສົ່ງເສີມການປັບປຸງຄວາມຕັ້ງ

ໃຈແລະຄວາມເອົາຈິງເອົາຈັງຂອງບັນດາຜູ້ດີນ ທີ່ຕໍ່ສູ້ເພື່ອສະກັດກັ້ນການແຂ່ງຂັນສ້າງອາວຸດ, ເພື່ອສ້າງສາຍສຳພັນກັນອັນເປັນປົກກະຕິລະຫວ່າງບັນດາປະເທດຕ່າງໆ ນັບລວມທັງລະຫວ່າງອາເມລິກາກັບ ສ.ສ.ສ.ຊ.

ພວກທ່ານຕ້ອງເຊື່ອໝັ້ນວ່າ ກິດຈະການອັນສູງສົ່ງ ທີ່ມີລັກສະນະມະນຸດຊະທຳຂອງພວກທ່ານ ເຊິ່ງແນໃສ່ຂັດຂວາງບໍ່ໃຫ້ເກີດສົງຄາມປະລະມານູນັ້ນ ມັນຈະໄດ້ຮັບຄວາມເຂົ້າໃຈແລະຄວາມສະໜັບສະໜູນໃນ ສ.ສ.ສ.ຊ.

ຂໍອວຍພອນໃຫ້ພວກທ່ານ ຈົ່ງໄດ້ຮັບຜົນສຳເລັດທຸກປະການ

ລ.ບະເລັດຊະເນັບ.

ໜັງສືພິມ "ປະລາວະດາ"
ວັນທີ ໒໒ ເດືອນມີນາ
ປີ ໑໙໘໐